ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງ ທີ IX (2021-2025)

*(ຮັບຮອງໂດຍກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ IX
ໃນລະຫວ່າງວັນທີ 22-26 ມີນາ 2021 ຕາມມະຕິເລກທີ 20/ສພຊ, ລົງວັນທີ 26 ມີນາ 2021)*

ນະຄອນຫຼວງວຽງຈັນ
ມີນາ 2021

# ອະລຳພະບົດ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ເປັນແຜນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ເປັນແຜນສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແລະ ວິໄສທັດຂອງການພັດທະນາ ຮອດປີ 2030. ແຜນດັ່ງກ່າວ ໄດ້ກຳນົດທິດທາງພື້ນຖານໃນການສ້າງບາດລ້ຽວໃໝ່ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມໃນຊຸມປີຕໍ່ໜ້າ ຄື: ເຮັດໃຫ້ບັນດາປະຖົມປັດໄຈທາງດ້ານການເມືອງ-ແນວຄິດ, ລະບົບເສດຖະກິດ, ພື້ນຖານວັດຖຸ-ເຕັກນິກ ໄດ້ຮັບການພັດທະນາຢ່າງມີຄຸນນະພາບ, ສືບຕໍ່ຖືເອົາການພັດທະນາເສດຖະກິດ ເປັນໜ້າທີ່ໃຈກາງຂອງທົ່ວພັກ ແລະ ທົ່ວປວງຊົນ ຄຽງຄູ່ກັບການພັດທະນາວັດທະນະທຳ-ສັງຄົມ ລວມທັງການພັດທະນາຊັບພະຍາກອນມະນຸດ, ການບໍລິຫານ-ການປົກຄອງລັດ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານການຕ່າງປະເທດທີ່ມີແລ້ວ ໃຫ້ໄດ້ຮັບການປັບປຸງຍົກລະດັບໃຫ້ມີຄວາມເຂັ້ມແຂງ, ທຸກຄວາມອາດສາມາດບົ່ມຊ້ອນຂອງຊາດໄດ້ຮັບການພັດທະນາໃຫ້ກາຍເປັນບັນດາຂະແໜງການຜະລິດ ແລະ ບໍລິການທີ່ເປັນປາຍແຫຼມ, ມີການພັດທະນາຕາມທິດສີຂຽວ ແລະ ຍືນຍົງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ, ການຄ້າ ແລະ ການຊຳລະສະສາງສາກົນມີຄວາມສົມດູນໝັ້ນຄົງ ແລະ ກະກຽມຄວາມພ້ອມຮອບ ດ້ານເພື່ອພັດທະນາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາຢ່າງໜັກແໜ້ນໃນອະນາຄົດ.

ແຜນການ 5 ປີ ຄັ້ງນີ້ ເປັນແຜນສືບຕໍ່ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຍັງສືບຕໍ່ຈັດຕັ້ງປະຕິບັດ 4 ບຸກທະລຸ: ດ້ານຈິນຕະນາການ, ດ້ານການພັດທະນາຊັບພະຍາກອນມະນຸດ, ດ້ານກົນໄກລະບອບລະບຽບການ ແລະ ດ້ານແກ້ໄຂຄວາມທຸກຍາກຂອງປະຊາຊົນ ຢ່າງຕັ້ງໜ້າ, ແຂງແຮງ ແລະ ເຂົ້າສູ່ລວງເລິກກວ່າເກົ່າ ເພື່ອໃຫ້ສາມາດຜ່ານຜ່າອຸປະສັກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆ ເປັນຕົ້ນ: ຄວາມສ່ຽງທາງດ້ານເສດຖະກິດມະຫາພາກ, ບັນຫາໜີ້ສິນ, ການເກັບລາຍຮັບງົບປະມານຂອງລັດ, ການຄຸ້ມຄອງລາຍຈ່າຍ ແລະ ການລົງທຶນ, ການຄຸ້ມຄອງອັດຕາແລກປ່ຽນ, ການຄຸ້ມຄອງອັດຕາເງິນເຟີ້, ຄັງສຳຮອງເງິນຕາຕ່າງປະເທດ, ການຜະລິດເປັນສິນຄ້າ ແລະ ການແກ້ໄຂບັນຫາການຫວ່າງງານ ເພື່ອບໍ່ໃຫ້ຕົກໃນສະພາວະວິກິດ, ຮັບປະກັນໃຫ້ມີການຫັນປ່ຽນຢ່າງຮອບດ້ານ ດ້ວຍການປະຕິຮູບໂຄງສ້າງເສດຖະກິດຢ່າງເຖິງຖອງ, ເສີມຂະຫຍາຍ ແລະ ນຳໃຊ້ທ່າແຮງບົ່ມຊ້ອນຂອງຊາດຢ່າງມີປະສິດທິຜົນ, ຫັນການພັດທະນາໄປຕາມທິດທີ່ມີຄຸນນະພາບ, ມີຈຸດສຸມ, ສີຂຽວ ແລະ ຍືນຍົງ.

- ***<u>ຄຸນນະພາບ</u>*** ການຫັນໄປສູ່ຄຸນນະພາບໃໝ່ ດ້ານການລົງທຶນຂອງລັດ, ການລົງທຶນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ, ການລົງທຶນຂອງພາກເອກະຊົນພາຍໃນ ແລະ ການລົງທຶນໂດຍກົງຈາກຕ່າງປະເທດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ, ສອດຄ່ອງກັບທິດທາງເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ, ມີການປະເມີນ, ມີການຈັດລຽງບູລິມະສິດ, ມີການປະມູນເພື່ອຄັດເລືອກເອົາຜູ້ປະກອບການທີ່ມີຄຸນນະພາບ ແລະ ມີການຕິດຕາມການຈັດຕັ້ງປະຕິບັດ ແລະ ສະຫຼຸບຖອດຖອນບົດຮຽນຢ່າງເປັນລະບົບຕໍ່ເນື່ອງ; ຫັນການຜະລິດສິນຄ້າ ແລະ ການບໍລິການ ໄປສູ່ມາດຕະຖານສາກົນ ແລະ ສາມາດແຂ່ງຂັນໄດ້; ສ້າງກຳລັງແຮງງານທີ່ມີສີມື, ມີລະບຽບວິໄນ, ມີສຸຂະພາບແຂງແຮງ ແລະ ສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດ; ສາມາດຄົ້ນຄ້ວາ ແລະ ໝູນໃຊ້ຜົນການຄົ້ນຄວ້າດ້ານວິທະຍາສາດເຕັກໂນໂລຊີທີ່ທັນສະໄໝ ເພື່ອເປັນປັດໄຈຂັບເຄື່ອນການພັດທະນາທີ່ຍືນຍົງໃນຍຸກສະໄໝອຸດສະຫະກຳ 4.0.
- ***<u>ມີຈຸດສຸມ:</u>*** ການພັດທະນາຢ່າງມີຈຸດສຸມ ໂດຍສຸມໃສ່ພັດທະນາບັນດາທ່າແຮງໄດ້ປຽບໃນຂົງເຂດ ແລະ ບໍລິ ເວນທີ່ມີຄວາມສຳຄັນ ແລະ ເປັນບູລິມະສິດເພື່ອເປັນຫົວຈັກໃນການພັດທະນາຂອງຊາດ. ສຸມການລົງທຶນຂອງລັດ ໃສ່ບັນດາແຂວງທີ່ມີທ່າແຮງໄດ້ປຽບ ແລະ ແຂວງທີ່ຍັງຫຍຸ້ງຍາກຫຼາຍ, ສືບຕໍ່ປັບປຸງ ແລະ ສ້າງໂຄງລ່າງພື້ນຖານທີ່ຈຳເປັນເພື່ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນຂອງພາກເອກະຊົນ ແລະ ການແກ້ໄຂຄວາມທຸກຍາກ, ຊຸກຍູ້ສົ່ງເສີມການລົງທຶນພາກເອກະຊົນ ເຂົ້າໃນການຜະລິດເປັນສິນຄ້າທີ່ເປັນທ່າແຮງ ເປັນຕົ້ນ ດ້ານກະສິກຳ ແລະໂຮງງານປຸງແຕ່ງຜະລິດຕະພັນກະສິກຳ, ຫັດຖະກຳ, ການທ່ອງທ່ຽວ, ການບໍລິການໂລຊິສຕິກ ເປັນຕົ້ນ: ທ່າບົກ ແລະ ອື່ນໆ ຢູ່ບັນດາແຂວງທີ່ມີທ່າແຮງໂດຍສະເພາະ

ແມ່ນບັນດາແຂວງທີ່ມີທາງລົດໄຟຜ່ານ, ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາຢ່າງມີເປົ້າໝາຍ, ສາມາດກວດສອບໄດ້ ແລະ ໄປຮອດໄປເຖິງປະຊາຊົນ ຢ່າງກວ້າງຂວາງ.

- ***<u>ສີຂຽວ</u>*** ປົກປັກຮັກສາສະພາບແວດລ້ອມ, ຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດ ໃຫ້ເກີດຜົນປະໂຫຍດສູງສຸດໃນຂົງເຂດເສດຖະກິດໃຫ້ມີປະສິດທິພາບ, ມີປະສິດທິຜົນ, ມີຄວາມຍືນຍົງ; ຫຼຸດຜ່ອນຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນຢ່າງກ້ວາງຂວາງ, ທົ່ວເຖິງ ແລະ ເປັນທຳ; ຫຼຸດຜ່ອນມົນລະພິດ, ສິ່ງເສດເຫຼືອ ແລະ ການປ່ອຍທາດອາຍເຮືອນແກ້ວກໍ່ຄືການຫຼຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຂອງເສດຖະກິດຕໍ່ການປ່ຽນແປງດິນຟ້າອາກາດ, ໄພພິບັດທຳມະຊາດ ແລະ ສະພາບການເໜັງຕີງຂອງເສດຖະກິດ.
- ***<u>ຍືນຍົງ</u>*** ການພັດທະນາດ້ານເສດຖະກິດໄປຄຽງຄູ່ກັບການພັດທະນາດ້ານວັດທະນະທຳ-ສັງຄົມ ແລະ ການປົກປັກຮັກສາສະພາບແວດລ້ອມ ເພື່ອເຮັດໃຫ້ເສດຖະກິດມະຫາພາກມີສະຖຽນລະພາບ ແລະ ໝັ້ນທ່ຽງ, ການຜະລິດມີຄວາມຫຼາກຫຼາຍ ແລະ ສາມາດຕອບສະໜອງຄວາມຕ້ອງການຂອງສັງຄົມ ທັງສາມາດທົດແທນການນຳເຂົ້າທີ່ບໍ່ຈຳເປັນ ແລະ ເພີ່ມການສົ່ງອອກ ເພື່ອສ້າງລາຍຮັບເງິນຕາເຂົ້າປະເທດ ໃຫ້ສົມຄູ່ກັບທ່າແຮງທີ່ໄດ້ປຽບ. ຄວາມທຸກຍາກໄດ້ຮັບການແກ້ໄຂ, ຂົງເຂດສັງຄົມໄດ້ຮັບການພັດທະນາຢ່າງມີຄຸນນະພາບ ແລະ ຕໍ່ເນື່ອງ, ຊັບພະຍາກອນທຳມະຊາດໄດ້ຮັບການພັດທະນາ ແລະ ນຳໃຊ້ຢ່າງລະມັດລະວັງ ແລະ ທັງຮັບປະກັນໃຫ້ເກີດປະໂຫຍດສູງສຸດໃຫ້ແກ່ປະເທດຊາດ, ສິ່ງແວດລ້ອມໄດ້ຮັບການປົກປັກຮັກສາໂດຍຮັບປະກັນການມີສ່ວນຮ່ວມ ແລະ ການປະກອບສ່ວນຢ່າງຕັ້ງໜ້າຂອງທຸກພາກສ່ວນໃນສັງຄົມ, ຮັບປະກັນສິດຜົນປະໂຫຍດທີ່ທົ່ວເຖິງ, ສະເໝີພາບ ແລະ ທ່ຽງທຳ ແລະ ກ້າວໄປເຖິງຈຸດໝາຍກຸ້ມຕົນເອງ ແລະ ເພິ່ງຕົນເອງໄດ້.

ແຜນການດັ່ງກ່າວ ໄດ້ຜ່ານຂະບວນການຄົ້ນຄວ້າສຳມະນາ, ການທາບທາມປະກອບຄຳເຫັນຢ່າງກວ້າງຂວາງຈາກຮາກຖານຂຶ້ນມາ, ແລກປ່ຽນກັບບັນດາຂະແໜງການ, ນັກຄົ້ນຄ້ວາ-ນັກວິທະຍາສາດ, ບັນດາຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ, ໄດ້ນຳສະເໜີ ແລະ ຂໍທິດຊີ້ນຳຈາກກອງປະຊຸມສູນກາງ, ກອງປະຊຸມກົມການເມືອງຫຼາຍຄັ້ງ, ໄດ້ທາບທາມຢູ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດຊຸດທີ VIII, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກ ແລະ ໄດ້ນຳສະເໜີ ແລະ ຮັບຮອງຈາກກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ຕາມມະຕິ ເລກທີ 20/ສພຊ, ລົງວັນທີ 26 ມີນາ 2021.

ຂ້າພະເຈົ້າຂໍຖືໂອກາດນີ້, ຕາງໜ້າໃຫ້ພັກ ແລະ ລັດຖະບານ ຂໍສະແດງຄວາມຂອບໃຈຢ່າງຍິ່ງ ຕໍ່ຄະນະຊີ້ນຳ ແລະ ກອງເລຂາຄະນະຮັບຜິດຊອບສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ທີ່ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບຢ່າງສູງຈົນເຮັດໃຫ້ການສ້າງແຜນການ 5 ປີ ໃນຄັ້ງນີ້ ມີຄວາມສຳເລັດຢ່າງຈົບງາມ. ຂໍສະແດງຄວາມຂອບໃຈເປັນພິເສດມາຍັງ ອົງການສະຫະປະຊາຊາດ ປະຈຳ ສປປ ລາວ ທີ່ໄດ້ໃຫ້ການສະໜັບສະໜູນທາງດ້ານວິຊາການ ແລະ ທຶນຮອນໃນການສ້າງແຜນຄັ້ງນີ້ສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້. ຂໍສະແດງຄວາມຂອບໃຈບັນດາຂະແໜງການ, ທ້ອງຖິ່ນ, ບັນດາຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າໃນການສ້າງແຜນດັ່ງກ່າວມີຜົນສຳເລັດ ແລະ ຖືໄດ້ວ່າແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແມ່ນຜົນສຳເລັດຂອງການຮ່ວມມືກັນຂອງພວກເຮົາໝົດທຸກຄົນ. ຂ້າພະເຈົ້າ, ຫວັງຢ່າງຍິ່ງວ່າ ບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າທາງດ້ານວິຊາການ ແລະ ທຶນຮອນເຂົ້າໃນການຈັດຕັ້ງປະຕິບັດບັນດາທິດທາງ, ຄາດໝາຍທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ສະບັບນີ້ ຢ່າງມີຜົນສຳເລັດອັນຈົບງາມ.

ນະຄອນຫຼວງວຽງຈັນ, ວັນທີ 14 MAY 2021

**ຮອງນາຍົກລັດຖະມົນຕີ**

**ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ**

**ສອນໄຊ ສີພັນດອນ**

## ສາລະບານ

**ພາກທີ I: ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ........................................2**

**I. ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ...........................................................2**

**1. ສະພາບການລວມ ..................................................................................... 2**

*1.1. ສະພາບສາກົນ ......................................................................................2*

*1.2. ສະພາບພາຍໃນ: ....................................................................................2*

**2. ຜົນສຳເລັດການຈັດຕັ້ງປະຕິບັດແຜນວຽກຈຸດສຸມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)........................................ 3**

***2.1. ເປົ້າໝາຍ 1: ເສດຖະກິດມີການເຕີບໂຕຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ສ້າງໄດ້ຄວາມສົມດຸນຂອງການເຕີບໂຕໂດຍການສຸມໃສ່ສ້າງພື້ນຖານເສດຖະກິດໃຫ້ເຂັ້ມແຂງ, ຫຼຸດຜ່ອນຄວາມບອບບາງທາງດ້ານເສດຖະກິດ .............................................4***

(1) ແຜນວຽກຈຸດສຸມ 1: ຮັບປະກັນໃຫ້ເສດຖະກິດແຫ່ງຊາດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ສົມດຸນ ..........................................................................................4

(2) ແຜນວຽກຈຸດສຸມ 2: ຮັບປະກັນໃຫ້ເສດຖະກິດມະຫາພາກມີສະຖຽນລະພາບ .........................6

(3) ແຜນວຽກຈຸດສຸມ 3: ຮັບປະກັນຄວາມສອດຄ່ອງ ແລະ ກົມກຽວລະຫວ່າງຄວາມສາມາດສະໜອງແຫຼ່ງທຶນກັບການວາງແຜນພັດທະນາ......................................................................8

(4) ແຜນວຽກຈຸດສຸມ 4: ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນຢ່າງມີຄວາມສອດຄ່ອງ ແລະ ສົມດຸນ 9

(5) ແຜນວຽກຈຸດສຸມ 5: ພັດທະນາກຳລັງແຮງງານໃຫ້ມີຄຸນນະພາບ, ດຸໝັ່ນ ແລະ ອົດທົນ..............11

(6) ແຜນວຽກຈຸດສຸມ 6: ພັດທະນາຜູ້ປະກອບການ, ສ້າງວິຊາການ ແລະ ຜູ້ຊໍານານງານ..................11

(7) ແຜນວຽກຈຸດສຸມ 7: ເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ................12

***2.2. ເປົ້າໝາຍ 2: ພັດທະນາຊັບພະຍາກອນມະນຸດ ແລະ ຍົກລະດັບຄວາມອາດສາມາດຂອງບຸກຄະລາກອນຈາກພາກລັດ ແລະ ກຳລັງແຮງງານຈາກພາກເອກະຊົນ; ຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໄດ້ຮັບການແກ້ໄຂ, ທຸກເຜົ່າຊົນ ແລະ ທຸກເພດໄວສາມາດເຂົ້າເຖິງການສຶກສາ ແລະ ການບໍລິການສາທາລະນະສຸກຢ່າງທົ່ວເຖິງ ແລະ ມີຄຸນນະພາບ, ສົ່ງເສີມການປົກປັກຮັກສາ ແລະ ພັດທະນາເອກະລັກວັດທະນະທຳອັນດີງາມຂອງຊາດ, ຮັບປະກັນສະຖຽນລະພາບດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ໂປ່ງໃສ. 15***

(1) ແຜນວຽກຈຸດສຸມ 1: ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໜັກແໜ້ນ ແລະ ກວ້າງຂວາງຕາມທິດ 3 ສ້າງ..............................................................15

(2) ແຜນວຽກຈຸດສຸມ 2: ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ..............................16

(3) ແຜນວຽກຈຸດສຸມ 3: ທຸກຄົນເຂົ້າເຖິງການສຶກສາໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ.................17
(4) ແຜນວຽກຈຸດສຸມ 4: ຮັບປະກັນການບໍລິການດ້ານສາທາລະນະສຸກໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ 18
(5) ແຜນວຽກຈຸດສຸມ 5: ການບໍລິການທາງດ້ານສະຫວັດດີການສັງຄົມໄດ້ຮັບການຍົກລະດັບ ແລະ ທຸກຄົນໄດ້ເຂົ້າເຖິງຢ່າງກວ້າງຂວາງ.....................................................................................19
(6) ແຜນວຽກຈຸດສຸມ 6: ພັດທະນາ ແລະ ປົກປັກຮັກສາຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ.....................................................................................20
(7) ແຜນວຽກຈຸດສຸມ 7: ຮັບປະກັນສະຖຽນລະພາບທາງດ້ານການເມືອງຢ່າງໝັກແໜ້ນ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ສີວິໄລ.......................................................20
***2.3. ເປົ້າໝາຍ 3: ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ຮັບການປົກປັກຮັກສາ ແລະ ນຳໃຊ້ຢ່າງມີປະສິດທິຜົນ ແລະ ຮັບປະກັນຄວາມຍືນຍົງ, ກຽມພ້ອມຮັບມືກັບໄພພິບັດຢ່າງທັນການ ແລະ ກໍ່ສ້າງຄືນສິ່ງທີ່ຖືກກະທົບຈາກທຳມະຊາດໃຫ້ດີກວ່າເກົ່າ ........................................................................................21***
(1) ແຜນວຽກຈຸດສຸມ 1: ການປົກປັກຮັກສາສະພາບແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ.....................................................................................21
(2) ແຜນວຽກຈຸດສຸມ 2: ກະກຽມຄວາມພ້ອມໃນການຮັບມືກັບຜົນກະທົບພ້ອມທັງຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ ແລະ ການປ່ຽນແປງດິນຟ້າອາກາດ ....................................................23
(3) ແຜນວຽກຈຸດສຸມ 3: ຫຼຸດຜ່ອນຄວາມບໍ່ມີສະຖຽນລະພາບຂອງຜົນຜະລິດກະສິກຳທີ່ເກີດຈາກຜົນກະທົບຂອງໄພພິບັດ (ຮັບປະກັນໄດ້ທາງດ້ານຕະຫຼາດ ແລະ ລາຄາຜົນຜະລິດກະສິກຳ)...............23
***2.4. ບັນດາວຽກຈຸດສຸມປິ່ນອ້ອມທີ່ພົວພັນກັບຫຼາຍຂະແໜງການ.....................24***
(1) ແຜນວຽກຈຸດສຸມ 1: ເພີ່ມທະວີປະສິດທິພາບຂອງການຄຸ້ມຄອງ ແລະ ບໍລິຫານລັດ ..................24
(2) ແຜນວຽກຈຸດສຸມ 2: ສົ່ງເສີມຄວາມຮູ້ພູມປັນຍາໃນການຄົ້ນຄວ້າ, ຄຸ້ມຄອງ ແລະ ນຳໃຊ້ວິທະຍາສາດ, ເຕັກໂນໂລຊີ ແລະ ການສື່ສານ ..........................................................................25
(3) ແຜນວຽກຈຸດສຸມ 3: ສົ່ງເສີມ ແລະ ພັດທະນາບົດບາດຍິງ-ຊາຍ, ເຍົາວະຊົນ ແລະ ໄວໜຸ່ມ.........26
**3. ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ:.......................28**
**4. ການຈັດຕັ້ງປະຕິບັດເງື່ອນໄຂການອອກຈາກສະຖານະພາບຄວາມດ້ອຍພັດທະນາ ..................................................................29**
**5. ການເຕີບໂຕສີຂຽວ..........................................................................30**
**II. ຕີລາຄາລວມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)............................................. 32**
**1. ຜົນສຳເລັດ..........................................................................32**
**2. ສາເຫດທີ່ພາໃຫ້ໄດ້ຮັບຜົນສຳເລັດ ................................................33**
**3. ຂໍ້ຄົງຄ້າງ, ອຸປະສັກ ແລະ ສິ່ງທ້າທາຍ:..........................................34**
**4. ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ ..........................................................35**
**5. ບົດຮຽນທີ່ຖອດຖອນໄດ້ ...............................................................36**

**6. ສັງລວມບາງບັນຫາສຳຄັນຕົ້ນຕໍທີ່ຄວນເອົາໃຈໃສ່ແກ້ໄຂຢ່າງຮີບດ່ວນໃນ 5 ປີ ຕໍ່ ໜ້າມີດັ່ງນີ້: ....................................................................................36**

**ພາກທີ II: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)**..........................................................................................................39

**I. ສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ສິ່ງທ້າທາຍ........................... 39**

**1. ສະພາບພາກພື້ນ ແລະ ສາກົນ ...........................................................39**

**2. ສະພາບພາຍໃນ ...........................................................................40**

**3. ທ່າແຮງດ້ານການພັດທະນາເສດຖະກິດ-ສັງຄົມ .....................................41**

*3.1 ປະຊາກອນໜຸ່ມ ແລະ ຂະບວນການພັດທະນາທີ່ທັນສະໄໝ ........................................42*

*3.2 ຄວາມອຸດົມຮັ່ງມີຂອງຊັບພະຍາກອນທຳມະຊາດ ແລະ ຄວາມຫຼາກຫຼາຍຂອງຊັບສິນຂອງຊາດ (ຊັບພະຍາກອນທຳມະຊາດ, ໂຄງລ່າງພື້ນຖານ ແລະ ສະຖາບັນ).....................................42*

*3.3 ທີ່ຕັ້ງພູມສັນຖານຂອງ ສປປ ລາວ ແລະ ການຂະຫຍາຍຕົວຂອງບັນດາປະເທດໃນອາຊີ ແລະ ປະເທດອ້ອມຂ້າງ.........................................................................................43*

*3.4 ການນຳໃຊ້ວິທະຍາສາດເຕັກໂນໂລຊີທີ່ທັນສະໄໝ....................................................44*

**4. ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ..................44**

**5. ການເປັນປະເທດທີ່ມີລາຍຮັບປານກາງສູງ ............................................45**

**6. ເປົ້າໝາຍການພັດທະນາແບບຍືນຍົງ ..................................................45**

**7. ການເຕີບໂຕສີຂຽວ.........................................................................46**

**II. ທິດທາງລວມ, ເປົ້າໝາຍ ແລະ ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) .................................. 46**

**1. ທິດທາງລວມ...............................................................................46**

**2. ເປົ້າໝາຍໃຫຍ່...............................................................................47**

**3. ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ...........................................................................................47**

***ເປົ້າໝາຍທີ 1: ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ..................................................................................... 47***

1. ແຜນວຽກຈຸດສຸມທີ 1: ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ. ......................48
2. ແຜນວຽກຈຸດສຸມທີ 2: ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ....................53
3. ແຜນວຽກຈຸດສຸມທີ 3: ຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນນະພາບ ແລະ ປະສິດທິຜົນສູງ...55
4. ແຜນວຽກຈຸດສຸມທີ 4: ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໄປສູ່ຄຸນນະພາບໃໝ່ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ..................59
5. ແຜນວຽກຈຸດສຸມທີ 5: ພັດທະນາວິສາຫະກິດຂອງລັດ ແລະ ເສດຖະກິດຣວມໝູ່ຂອງປະຊາຊົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ .........................................................................61
6. ທິດທາງການປະຕິຮູບໂຄງສ້າງເສດຖະກິດເພື່ອສ້າງຄວາມເຂັ້ມແຂງພາຍໃນ:...........................62

7. ບາງໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດສະໜັບສະໜຸນເປົ້າໝາຍ 1 (ລາຍລະອຽດມີໃນເອກະສານຊ້ອນທ້າຍ): .......... 64

***ເປົ້າໝາຍທີ 2: ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ.......... 66***

1. ແຜນວຽກຈຸດສຸມທີ 1: ການປັບປຸງການບໍລິການດ້ານສາທາລະນະສຸກ ແລະ ໂພຊະນາການຢ່າງທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ.......... 66
2. ແຜນວຽກຈຸດສຸມທີ 2: ປັບປຸງຄຸນນະພາບການສຶກສາໃນທຸກລະດັບໃຫ້ສູງຂຶ້ນ ພ້ອມທັງ ສ້າງເງື່ອນໄຂການເຂົ້າເຖິງການສຶກສາເພື່ອໃຫ້ມີຄວາມພ້ອມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນທັງເປັນການຮອງຮັບອຸດສາຫະກຳຍຸກ 4.0 .......... 68
3. ແຜນວຽກຈຸດສຸມທີ 3: ກຳລັງແຮງງານໄດ້ຮັບການພັດທະນາດ້ານສີມື, ຄວາມຊຳນານງານ ແລະ ມີລະບຽບວິໄນສູງຂຶ້ນ ທັງມີຄວາມຫຼາກຫຼາຍວິຊາຊີບ ແລະ ມີວຽກເຮັດງານທຳທີ່ໝັ້ນຄົງ ແລະ ມີລາຍໄດ້ສູງຂຶ້ນ, ສາມາດຕອບສະໜອງຕາມຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ .......... 71
4. ແຜນວຽກຈຸດສຸມທີ 4: ສົ່ງເສີມການຄົ້ນຄວ້າ ແລະ ນຳໃຊ້ຜົນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ເຕັກນິກວິຊາການ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເຂົ້າໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ. .......... 74
5. ບາງໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດ ສະໜັບສະໜຸນເປົ້າໝາຍ 2 (ລາຍລະອຽດມີໃນເອກະສານຊ້ອນທ້າຍ): .......... 75

***ເປົ້າໝາຍທີ 3: ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ.......... 77***

1. ແຜນວຽກຈຸດສຸມທີ 1: ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກທີ່ຍັງທຸກຍາກ ໄດ້ຮັບການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນ, ຄຸນຄ່າດ້ານວັດທະນະທຳ ແລະ ວຽກງານສີ່ມອບຊົນ ໄດ້ຮັບການປັບປຸງດີຂຶ້ນ. .......... 78
2. ແຜນວຽກຈຸດສຸມທີ 2: ໂຄງລ່າງພື້ນຖານການບໍລິການດ້ານສາທາລະນຸປະໂພກໄດ້ຮັບການປັບປຸງ ແລະ ສະໜອງໃຫ້ປະຊາຊົນຢ່າງທົ່ວເຖິງ ເພື່ອຫຼຸດຜ່ອນຄວາມແຕກໂຕນດ້ານການເຂົ້າເຖິງໂຄງລ່າງພື້ນຖານ ແລະ ການບໍລິການຕ່າງໆ. .......... 80
3. ແຜນວຽກຈຸດສຸມທີ 3: ສົ່ງເສີມໃຫ້ແມ່ຍິງ ແລະ ເດັກ ໄດ້ເຂົ້າເຖິງການພັດທະນາ, ມີຄວາມສະເໝີພາບຍິງ-ຊາຍ ແລະ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຢ່າງເຕັມສ່ວນຈາກການພັດທະນາເສດຖະກິດ-ສັງຄົມ. .......... 81
4. ແຜນວຽກຈຸດສຸມທີ 4: ສົ່ງເສີມ ແລະ ພັດທະນາຊັບພະຍາກອນໜຸ່ມໃຫ້ມີຄຸນນະພາບ ແລະ ມີວຽກເຮັດງານທຳຫຼາຍຂຶ້ນ. .......... 83
5. ແຜນວຽກຈຸດສຸມທີ 5: ປະຊາຊົນ ແລະ ຜູ້ອອກແຮງງານພາກວິສາຫະກິດ, ຜູ້ປະກອບອາຊີບອິດສະຫຼະເຂົ້າເຖິງການບໍລິການປົກປ້ອງສັງຄົມທີ່ມີປະສິດທິຜົນດີຂຶ້ນ.......... 84
6. ແຜນວຽກຈຸດສຸມທີ 6: ການກວດກູ້ລະເບີດບໍ່ທັນແຕກ ແລະ ຊີວິດຂອງປະຊາຊົນມີຄວາມປອດໄພຈາກລະເບີດບໍ່ທັນແຕກເພີ່ມຂຶ້ນເທື່ອລະກ້າວ. .......... 87

7. ບາງໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດສະໜັບສະໜູນ ເປົ້າໝາຍ 3 (ລາຍລະອຽດມີໃນເອກະສານຊ້ອນທ້າຍ): ........ 88

***ເປົ້າໝາຍທີ 4: ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດູນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ........ 88***

1. ແຜນວຽກຈຸດສຸມທີ 1: ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ.. 89
2. ແຜນວຽກຈຸດສຸມທີ 2: ການເຕີບໂຕສີຂຽວ ແລະ ການແກ້ໄຂບັນຫາຕໍ່ກັບການປ່ຽນແປງດິນຟ້າອາກາດ 91
3. ແຜນວຽກຈຸດສຸມທີ 3: ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ 94
4. ໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດສະໜັບສະໜູນ ເປົ້າໝາຍ 4 (ລາຍລະອຽດມີໃນເອກະສານຊ້ອນທ້າຍ): ........ 95

***ເປົ້າໝາຍທີ 5: ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ........ 96***

1. ແຜນວຽກຈຸດສຸມທີ 1: ໂຄງລ່າງພື້ນຖານໄດ້ຮັບການພັດທະນາທີ່ສາມາດເຊື່ອມຈອດ-ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ ........ 96
2. ແຜນວຽກຈຸດສຸມທີ 2: ການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນ ກັບພາກພື້ນ ແລະ ສາກົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ ........ 99
3. ແຜນວຽກຈຸດສຸມທີ 3: ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ ........ 101
4. ແຜນວຽກຈຸດສຸມທີ 4: ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ.... 102
5. ບາງໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດສະໜັບສະໜູນ ເປົ້າໝາຍ 5 (ລາຍລະ ອຽດມີໃນເອກະສານຊ້ອນທ້າຍ): ........ 104

***ເປົ້າໝາຍທີ 6: ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ. ........107***

1. ແຜນວຽກຈຸດສຸມ 1: ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ວຽກງານສາມສ້າງໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ ........ 107
2. ແຜນວຽກຈຸດສຸມ 2: ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນ ໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ........ 109
3. ແຜນວຽກຈຸດສຸມທີ 3: ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ ........ 110
4. ບາງໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດສະໜັບສະໜູນ ເປົ້າໝາຍ 6 (ລາຍລະ ອຽດມີໃນເອກະສານຊ້ອນທ້າຍ): ........ 112

**ພາກທີ III: ມາດຕະການ ແລະ ກົນໄກໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)** .................................. 115

**I. ມາດຕະການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ............................................115**

*1. ເພີ່ມທະວີການຄຸ້ມຄອງໃຫ້ເສດຖະກິດມະຫາພາກມີຄວາມເຂັ້ມແຂງ, ຍືນຍົງ ແລະ ມີຄວາມຫຼາກຫຼາຍ: ........................................................................................ 115*

*2. ການພັດທະນາຊັບພະຍາກອນມະນຸດ ແລະ ກຳລັງແຮງງານ ........................................ 116*

*3. ສົ່ງເສີມຊີວິດການເປັນຢູ່ທີ່ດີ, ສັງຄົມທີ່ໜ້າຢູ່ ແລະ ສັງຄົມຍຸຕິທຳ.................................. 117*

*4. ປົກປັກຮັກສາສິ່ງແວດລ້ອມ ແລະ ຫຼຸດຜ່ອນຄວາມສ່ຽງຈາກພົນກະທົບຕ່າງໆ .................... 117*

*5. ສ້າງໂຄງລ່າງທີ່ມີຄວາມທັນທານ ເພື່ອເຊື່ອມຈອດ-ເຊື່ອມໂຍງໃນທຸກລະດັບ...................... 118*

*6. ປັບປຸງການຄຸ້ມຄອງບໍລິຫານພາກລັດ .................................................................. 118*

**II. ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ...........................................................119**

**III. ການແບ່ງຄວາມຮັບຜິດຊອບຈຳນວນໜຶ່ງໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ:......................................................................120**

**IV. ການຕິດຕາມ ແລະ ປະເມີນຜົນ..................................................122**

**ເອກະສານຊ້ອນທ້າຍ** ........................................................................... **123**

# ພາກທີໜຶ່ງ: ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)

# ພາກທີ I: ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)

## I. ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)

### 1. ສະພາບການລວມ

#### *1.1. ສະພາບສາກົນ*

ການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ VIII ແມ່ນຢູ່ໃນໄລຍະທີ່ມີຄວາມທ້າທາຍຫຼາຍຢ່າງໃນລະດັບພາກພື້ນ ແລະ ສາກົນ ເປັນຕົ້ນ: 1) ຄວາມບໍ່ມີສະຖຽນລະພາບດ້ານເສດຖະກິດ ແລະ ການເມືອງຂອງຫຼາຍປະເທດ; 2) ການປ່ຽນແປງລາຄານ້ຳມັນ ແລະ ລາຄາອາຫານໃນທົ່ວໂລກ; 3) ການຂັດແຍ່ງຜົນປະໂຫຍດດ້ານການຄ້າລະຫວ່າງບັນດາປະເທດມະຫາອຳນາດ ແລະ 4) ການເພີ່ມຂຶ້ນຂອງໄພພິບັດທຳມະຊາດໃນພາກພື້ນ ແລະ ການລະບາດຂອງເຊື້ອພະຍາດຕ່າງໆ. ບັນຫາດັ່ງກ່າວໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງຫຼາຍປະເທດ ເຊິ່ງສະແດງອອກດັ່ງນີ້:

ການເຕີບໂຕຂອງເສດຖະກິດໂລກ ໃນລະຫວ່າງປີ 2015-2017 ແມ່ນຢູ່ໃນລະດັບ 3,2%-3,6% ກ່ອນທີ່ຈະຫຼຸດລົງມາຢູ່ໃນລະດັບ 2,8% ໃນປີ 2018. ສະພາບການຂອງໂລກ ຍັງສືບຕໍ່ຢູ່ໃນພາວະຜັນປ່ຽນຢ່າງໄວວາ ແລະ ສະຫຼັບຊັບຊ້ອນ ຈາກຄວາມຂັດແຍ່ງຂອງສົງຄາມ ISIS ຢູ່ຕາເວັນອອກກາງ, ບັນຫາຜູ້ອົບພະຍົບ, ຂໍ້ຂັດແຍ່ງໃນແຫຼມເກົາຫຼີ, ທະເລຈີນໃຕ້ ແລະ ອື່ນໆ. ນອກຈາກນັ້ນ, ໄດ້ມີການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ແຜ່ຂະຫຍາຍເປັນວົງກວ້າງໄປທົ່ວໂລກ. ອົງການອະນາໄມໂລກ (WHO) ໄດ້ປະກາດຍົກລະດັບເປັນ “ສະພາວະລະບາດຂະໜາດໃຫຍ່ທົ່ວໂລກ” ເຊິ່ງໄດ້ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ເສດຖະກິດຂອງຫຼາຍປະເທດ. ຍ້ອນຜົນກະທົບຂອງການແຜ່ລະບາດຂອງພະຍາດດັ່ງກ່າວ ເຮັດໃຫ້ເສດຖະກິດໂລກໃນປີ 2019 ຫຼຸດລົງຢູ່ໃນລະດັບ -3,2%. ສະຖາບັນການເງິນສາກົນ (IMF) ໄດ້ຄາດຄະເນວ່າເສດຖະກິດໂລກ ຈະຢູ່ໃນລະດັບ 6% ໃນປີ 2020. ແຕ່ເຖິງຢ່າງໃດກໍຕາມການຟື້ນຕົວເສດຖະກິດຂອງຫຼາຍປະເທດ ແມ່ນບໍ່ເທົ່າທຽມກັນ ແລະ ຍັງຢູ່ໃນສະພາວະທີ່ມີຄວາມສ່ຽງລະດັບສູງ.

ໃນໄລຍະຕົ້ນສະໄໝຂອງແຜນການ 5 ປີ ຄັ້ງທີ VIII ເຫັນວ່າລາຄາສິນຄ້າໂລກຫຼຸດລົງຫຼາຍພໍສົມຄວນ, ແຕ່ມີການເພີ່ມຂຶ້ນຄືນໃນໄລຍະປີ 2017 ແລະ ປີ 2018 ຕົວຢ່າງ: ລາຄາທອງແດງຫຼຸດລົງໃນອັດຕາ 30% ຈາກ 6.863 ໂດລາສະຫະລັດ ຕໍ່ໂຕນ ໃນປີ 2014 ມາເປັນ 4.808 ໂດລາສະຫະລັດ ຕໍ່ໂຕນ ໃນປີ 2018 ເກືອບມາຢູ່ລະດັບດຽວກັນກັບປີ 2014. ພ້ອມກັນນີ້, ທະນາຄານໂລກຄາດຄະເນໄວ້ວ່າ ລາຄາທອງແດງຈະຢູ່ໃນລະດັບປະມານ 6.816 ໂດລາສະຫະລັດ ຕໍ່ໂຕນ ໃນປີ 2019 ແລະ 6.833 ໂດລາສະຫະລັດ ຕໍ່ໂຕນ ໃນປີ 2020. ເຊັ່ນດຽວກັນກັບລາຄານ້ຳມັນທີ່ເຫັນວ່າ ຫຼຸດລົງຫຼາຍພໍສົມຄວນໃນໄລຍະຕົ້ນສະໄໝຂອງແຜນການ 5 ປີ ເຫັນໄດ້ລາຄານ້ຳມັນຫຼຸດລົງຈາກ 96 ໂດລາສະຫະລັດ ຕໍ່ບາເຣວ ໃນປີ 2014 ມາເປັນ 43 ໂດລາສະຫະລັດ ຕໍ່ບາເຣວ ໃນປີ 2016, ມາຮອດປີ 2018 ລາຄານ້ຳມັນປັບຕົວຂຶ້ນຄືນມາເປັນ 65 ໂດລາສະຫະລັດ ຕໍ່ ບາເຣວ ແລະ ຄາດວ່າຈະຢູ່ໃນລະດັບນີ້ ຫຼື ຫຼຸດລົງເລັກນ້ອຍໃນປີ 2020 ຍ້ອນຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19.

#### *1.2. ສະພາບພາຍໃນ:*

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ໄດ້ດຳເນີນໄປໃນສະພາບທີ່ປະເທດເຮົາມີຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງ ເປັນຕົ້ນ: ດ້ານການເງິນ-ເງິນຕາ, ໄພພິບັດນ້ຳຖ້ວມ ແລະ ໄພແຫ້ງແລ້ງຢູ່ບາງເຂດ ເຊິ່ງໄດ້ສົ່ງຜົນກະທົບໃຫ້ອັດຕາການຂະຫຍາຍຕົວຂອງເສດຖະກິດ ໃນປີທຳອິດ

ຂອງແຜນ (2016) ບັນລຸໄດ້ພຽງ 7% ຫຼຸດຄາດໝາຍແຜນການວາງໄວ້ (ແຜນການ: 7,5%). ດັ່ງນັ້ນ, ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ, ລັດຖະບານ ຈຶ່ງໄດ້ສະເໜີສະພາແຫ່ງຊາດດັດແກ້ຕົວເລກມະຫາພາກ ໄລຍະ 4 ປີ ທີ່ຍັງເຫຼືອ (2017-2020), ເຊິ່ງດັດແກ້ຕົວເລກອັດຕາການເຕີບໂຕເສດຖະກິດ ຈາກສະເລ່ຍ 7,5% ຫຼຸດລົງເປັນ 7,2%. ໃນໄລຍະ 2017-2020 ເຫັນວ່າ ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ ຍັງສືບຕໍ່ພົບຄວາມຫຍຸ້ງຍາກທາງດ້ານເສດຖະກິດທີ່ສະສົມຜ່ານມາ ເຮັດໃຫ້ເສດຖະກິດມະຫາພາກມີຄວາມບອບບາງ ເປັນຕົ້ນແມ່ນ ບັນຫາໜີ້ສິນຄຸມເຄືອ, ລາຍຮັບບໍ່ກຸ້ມລາຍຈ່າຍ, ອັດຕາການເຕີບໂຕມີທ່າອ່ຽງຫຼຸດລົງໃນແຕ່ລະປີຂອງແຜນການ 5 ປີ ຄັ້ງທີ VIII, ບັນຫາໄພພິບັດທາງທໍາມະຊາດທີ່ເກີດຈາກພະຍຸຊຶນຕິນ (Son-Tinh) ໃນປີ 2018 ແລະ ຄູກັນນໍ້າເຂື່ອນໄຟຟ້າເຊປຽນ-ເຊນໍ້ານ້ອຍແຕກ ຢູ່ແຂວງອັດຕະປື, ພະຍຸເບບິນກາ (Bebinca) ແລະ ໄພນໍ້າຖ້ວມຢ່າງໜັກໜ່ວງ ໃນປີ 2019 ໄດ້ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ. ນອກຈາກນັ້ນ, ໄດ້ເກີດການລະບາດຂອງພະຍາດສັດ ແລະ ສັດຕູພືດໃນຫຼາຍແຂວງ ເປັນຕົ້ນ ການລະບາດຂອງພະຍາດອະຫິວາໝູອາຟຼິກກາ ໃນປີ 2019 ເຊິ່ງໄດ້ສ້າງຄວາມເສຍຫາຍຕໍ່ການຜະລິດ ແລະ ຊັບສິນຂອງປະຊາຊົນຫຼາຍພໍສົມຄວນ. ເລີ່ມແຕ່ທ້າຍປີ 2019 ມາຮອດປັດຈຸບັນ ສປປ ລາວ ກໍໄດ້ຮັບຜົນກະທົບຢ່າງໜັກໜ່ວງ ຈາກການລະບາດຂອງພະຍາດໂຄວິດ-19 ຈຶ່ງໄດ້ດັດປັບຕົວເລກການຂະຫຍາຍຕົວຂອງເສດຖະກິດ ປີ 2020 ລົງຈາກ 6,5% ມາເປັນ 3,3%-3,6% ພ້ອມດ້ວຍຄາດໝາຍທາງດ້ານມະຫາພາກຈໍານວນໜຶ່ງ ເຊິ່ງຄາດວ່າຈະເຮັດໃຫ້ອັດຕາການຂະຫຍາຍຕົວສະເລ່ຍໃນແຜນການ 5 ປີ ຄັ້ງທີ VIII ຈະໄດ້ພຽງ 5,8% ຫຼຸດແຜນທີ່ວາງໄວ້ 7,2%.

ແຕ່ເຖິງຢ່າງໃດກໍ່ຕາມ, ໃນໄລຍະ 5 ປີ ຜ່ານມາ ໂດຍພາຍໃຕ້ການຊີ້ນໍາ-ນໍາພາຢ່າງໃກ້ສິດຂອງລັດຖະບານບວກກັບຄວາມບຸກບືນສູງຂອງບັນດາຂະແໜງການ, ອໍານາດການປົກຄອງທ້ອງຖິ່ນ ແລະ ຂອງປະຊາຊົນ ລວມທັງການສະ ໜັບສະໜູນຂອງບັນດາປະເທດເພື່ອນມິດຍຸດທະສາດ ແລະ ຄູ່ຮ່ວມພັດທະນາ ໄດ້ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມເຖິງຈະປະເຊີນກັບບັນຫາຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆ ອັນໜັກໜ່ວງກໍຕາມ ແຕ່ກໍ່ຍັງສາມາດປະຄອງຕົວ ຜ່ານພົ້ນຈຸດມໍລະສຸມຕ່າງໆ ແລະ ຫຼີກລ້ຽງໄດ້ການຖົດຖອຍດ້ານເສດຖະກິດ, ຮັບປະກັນການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ. ໂຄງການລົງທຶນຂະໜາດໃຫຍ່ໃນຫຼາຍຂົງເຂດ ຍັງສືບຕໍ່ໄດ້ຮັບການຈັດຕັ້ງປະຕິບັດ ເປັນຕົ້ນ: ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ, ໂຄງການກໍ່ສ້າງທາງດ່ວນແຕ່ນະຄອນຫຼວງວຽງຈັນ-ວັງວຽງ, ໂຄງການພະລັງງານ-ບໍ່ແຮ່, ໂຄງການພັດທະນາເຂດເສດຖະກິດພິເສດ, ໂຄງການພັດທະນາການທ່ອງທ່ຽວ. ສິ່ງເຫຼົ່ານີ້ ໄດ້ສ້າງຈຸດເລີ່ມຕົ້ນອັນສໍາຄັນໃຫ້ແກ່ການຫັນປ່ຽນຈາກການເພິ່ງພາການຂຸດຄົ້ນຊັບພະຍາກອນທໍາມະຊາດຢ່າງດຽວ ໄປສູ່ການເສີມຂະຫຍາຍທຸກທ່າແຮງຂອງຊາດ ດ້ວຍການພັດທະນາຕາມທິດສີຂຽວ ແລະ ຍືນຍົງ, ການຫັນໄປສູ່ທັນສະໄໝ ແລະ ນໍາໃຊ້ຜົນສໍາເລັດທາງດ້ານເຕັກໂນໂລຊີໃໝ່ ໄດ້ມີບັນຍາກາດອັນໃໝ່. ຜົນສໍາເລັດອັນພົ້ນເດັ່ນແມ່ນ ພວກເຮົາສາມາດບັນລຸ 2 ໃນ 3 ເງື່ອນໄຂ ໃນການນໍາພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ຄື: ລາຍໄດ້ແຫ່ງຊາດ (GNI) ແລະ ດັດຊະນີຊັບສິນມະນຸດ (HAI) ອີງຕາມການປະເມີນຂອງອົງການສະຫະປະຊາຊາດ ປີ 2018; ສັງຄົມມີຄວາມສະຫງົບ ແລະ ມີສະຖຽນລະພາບຢ່າງໜັກແໜ້ນ, ອັດຕາຄວາມທຸກຍາກມີທ່າອ່ຽງຫຼຸດລົງ, ສະແດງອອກແຕ່ລະດ້ານດັ່ງນີ້:

## 2. ຜົນສໍາເລັດການຈັດຕັ້ງປະຕິບັດແຜນວຽກຈຸດສຸມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)

ການຕີລາຄາຜົນສໍາເລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ຕົ້ນຕໍໄດ້ອີງໃສ່ຕົວເລກຄາດໝາຍທີ່ໄດ້ກໍານົດໄວ້ໃນມະຕິ ເລກທີ 014/ສພຊ ວ່າດ້ວຍການຮັບຮອງເອົາການດັດແກ້ຕົວເລກມະຫາພາກແຜນ ໄລຍະ 4 ປີ (2017-2020) ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 5 ປີ ຄັ້ງທີ VIII (2016-2020), ຂອບຕິດຕາມ ແລະ ປະເມີນຜົນຂອງແຜນການ 5 ປີ ຄັ້ງທີ VIII ເພື່ອຕີລາຄາຢ່າງພາວະວິໄສໃຫ້ເຫັນຜົນສໍາເລັດ, ຈຸດອ່ອນ-ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້.

## 2.1. ເປົ້າໝາຍ 1: ເສດຖະກິດມີການເຕີບໂຕຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ສ້າງໄດ້ຄວາມສົມດຸນຂອງການເຕີບໂຕ ໂດຍການສຸມໃສ່ສ້າງພື້ນຖານເສດຖະກິດໃຫ້ເຂັ້ມແຂງ, ຫຼຸດຜ່ອນຄວາມບອບບາງທາງດ້ານເສດຖະກິດ

### (1) ແຜນວຽກຈຸດສຸມ 1: ຮັບປະກັນໃຫ້ເສດຖະກິດແຫ່ງຊາດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ສົມດຸນ

ໃນໄລຍະ 5 ປີ (2016-2020) ເສດຖະກິດແຫ່ງຊາດ ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ສະເລ່ຍຢູ່ໃນລະດັບ 5,8% ຕໍ່ປີ (ປີ 2016: 7,02%, ປີ 2017: 6,9%, ປີ 2018: 6,3%, ປີ 2019: 5,5% ແລະ ໃນປີ 2020 ຄາດວ່າຈະຂະຫຍາຍຕົວປະມານ 3,3%), ເຫັນວ່າອັດຕາການຂະຫຍາຍຕົວມີທ່າອ່ຽງຫຼຸດລົງຢ່າງຕໍ່ເນື່ອງ ແລະ ຫຼຸດແຜນການວາງໄວ້ (ແຜນການ: 7,2%), ໃນນີ້: ຂະແໜງກະສິກຳ ຂະຫຍາຍຕົວສະເລ່ຍ 2,1% (ແຜນການ: 3,4%), ຂະແໜງອຸດສາຫະກຳ ຂະຫຍາຍຕົວສະເລ່ຍ 9,1% (ແຜນການ: 9,3%), ຂະແໜງການບໍລິການຂະຫຍາຍຕົວສະເລ່ຍ 4,8% (ແຜນການ: 8,1%) ແລະ ພາສີ-ອາກອນ ຂະຫຍາຍຕົວສະເລ່ຍ 5,2% (ແຜນການ: 5%). ປັດໄຈທີ່ຊຸກຍູ້ການຂະຫຍາຍຕົວເສດຖະກິດສ່ວນໃຫຍ່ມາຈາກຂະແໜງອຸດສາຫະກຳ ໂດຍສະເພາະ ຂະແໜງພະລັງງານໄຟຟ້າ ແລະ ການກໍ່ສ້າງ, ສຳລັບຂະແໜງການຂາຍຍົກ-ຂາຍຍ່ອຍ, ການເງິນ ແລະ ປະກັນໄພມີການຂະຫຍາຍຕົວດີ ແຕ່ການປະກອບສ່ວນຕໍ່ເສດຖະກິດບໍ່ສູງ.

ສາເຫດຕົ້ນຕໍທີ່ອັດຕາການຂະຫຍາຍຕົວຂອງເສດຖະກິດຊ້າລົງ ແລະ ບໍ່ບັນລຸແຜນການວາງໄວ້ ຍ້ອນການຂະຫຍາຍຕົວຂອງຂະແໜງກະສິກຳມີທ່າອ່ຽງຫຼຸດລົງ ແລະ ຖືກຜົນກະທົບຈາກໄພທຳມະຊາດ; ຂະແໜງບໍ່ແຮ່ ແລະ ການຂຸດຄົ້ນມີທ່າອ່ຽງຫຼຸດລົງຈົນຕິດລົບ ນັບແຕ່ໄລຍະປີ 2017-2019 ແລະ ການຂະຫຍາຍຕົວຂອງອຸດສາຫະກຳປຸງແຕ່ງຍັງຊັກຊ້າ; ນອກຈາກນັ້ນ, ການຂະຫຍາຍຕົວຂອງຂະແໜງບໍລິການກໍ່ມີທ່າອ່ຽງຫຼຸດລົງໂດຍສະເພາະແມ່ນຂະແໜງການບໍລິການທີ່ພັກອາໄສ ແລະ ຮ້ານອາຫານ ທີ່ຕິດພັນກັບການທ່ອງທ່ຽວ. ນອກຈາກນັ້ນ, ການຂະຫຍາຍຕົວເສດຖະກິດແມ່ນຫຼຸດລົງຕາມກະແສລວມຂອງເສດຖະກິດພາກພື້ນ ແລະ ສາກົນ ທີ່ມີແນວໂນ້ມຫຼຸດລົງ ໂດຍສະເພາະບັນດາປະເທດຄູ່ຄ້າທີ່ສຳຄັນ; ສາເຫດຕໍ່ມາແມ່ນຜົນກະທົບຈາກໄພພິບັດທຳມະຊາດ (ໄພນ້ຳຖ້ວມ), ການລະບາດພະຍາດໂຄວິດ-19; ການຫັນມາອາໄສການຜະລິດ ແລະ ການສົ່ງອອກສິນຄ້ານອກຂະແໜງຊັບພະຍາກອນທຳມະຊາດຫຼາຍຂຶ້ນ ດ້ວຍການສົ່ງເສີມການຜະລິດອຸດສາຫະກຳປຸງແຕ່ງກະສິກຳ, ສິ້ນສ່ວນເຄື່ອງເອເລັກໂທຣນິກ, ເຄື່ອງໄຟຟ້າ ແລະ ການບໍລິການທີ່ຕິດພັນກັບການທ່ອງທ່ຽວຫຼາຍຂຶ້ນ; ຄຽງຄູ່ກັນນັ້ນ, ລັດຖະບານໄດ້ເຂັ້ມງວດການປະຕິບັດລະບຽບກົດໝາຍ ເປັນຕົ້ນ: ເຂັ້ມງວດການສົ່ງອອກໄມ້ເຖື່ອນ, ເຊິ່ງເຮັດໃຫ້ເສດຖະກິດຂອງລາວມີການຂະຫຍາຍຕົວຊ້າລົງເລັກນ້ອຍ ແຕ່ເປັນການເຕີບໂຕທີ່ມີຄຸນນະພາບຫຼາຍຂຶ້ນ ແລະ ເປັນການຫັນເຂົ້າສູ່ຖານການຜະລິດຈິງ ເພື່ອສ້າງພື້ນຖານທີ່ໜັກແໜ້ນໃຫ້ແກ່ການເຕີບໂຕໃນຕໍ່ໜ້າ.

ໂດຍລວມແລ້ວ, ການຂະຫຍາຍຕົວເສດຖະກິດຜ່ານມາ ແມ່ນອາໄສຂະແໜງຊັບພະຍາກອນທຳມະຊາດເປັນສ່ວນໃຫຍ່ເພື່ອຂັບເຄື່ອນການເຕີບໂຕ ເຊິ່ງການຂະຫຍາຍຕົວໃນລັກສະນະດັ່ງກ່າວຈະບໍ່ມີຄວາມຍືນຍົງ, ແຕ່ເຖິງແນວໃດກໍ່ຕາມ ເຫັນວ່າເສດຖະກິດໄດ້ເລີ່ມຫັນໄປສູ່ຂະແໜງອຸດສາຫະກຳປຸງແຕ່ງ ແລະ ການບໍລິການ ທີ່ຕິດພັນກັບການສ້າງວຽກເຮັດງານທຳ ແລະ ລາຍໄດ້ຂອງປະຊາຊົນ ຕາມທິດທີ່ມີຄຸນນະພາບ ແລະ ຍືນຍົງຫຼາຍຂຶ້ນ.

- ລວມຍອດຜະລິດຕະພັນພາຍໃນ (GDP) ສະເລ່ຍຕໍ່ຫົວຄົນ ໄດ້ເພີ່ມຂຶ້ນຈາກ 2.025 ໂດລາສະຫະລັດ ປີ 2016 ມາເປັນ 2.654 ໂດລາສະຫະລັດ ໃນປີ 2019 ແລະ ຄາດວ່າຈະເພີ່ມຂຶ້ນເປັນ 2.664 ໂດລາສະຫະລັດ ໃນປີ 2020 (ແຜນການ: 2.978 ໂດລາສະຫະລັດ), ລວມຍອດລາຍໄດ້ແຫ່ງຊາດ (GNI) ບັນລຸໄດ້ 2.106 ໂດລາສະຫະລັດ ໃນປີ 2020 (ມະຕິສະພາ: 2.354 ໂດລາສະຫະລັດ).

- ໂຄງປະກອບເສດຖະກິດ ຍັງບໍ່ທັນໄປຕາມທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເທົ່າທີ່ຄວນ, ເຊິ່ງສະແດງອອກ ສັດສ່ວນຂອງຂະແໜງກະສິກຳໃນໂຄງປະກອບເສດຖະກິດ ໄດ້ເພີ່ມຂຶ້ນຈາກ 15,8% ໃນປີ 2016 ມາເປັນ

16,60% ໃນປີ 2020 (ແຜນການ: 16,80%); ສັດສ່ວນຂອງຂະແໜງອຸດສາຫະກຳ ຫຼຸດລົງຈາກ 33,7% ໃນປີ 2016 ມາເປັນ 33,00% ໃນປີ 2020 (ແຜນການ: 39,00%) ແລະ ສັດສ່ວນຂອງຂະແໜງບໍລິການ ຫຼຸດລົງຈາກ 40,30% ໃນປີ 2016 ມາເປັນ 39,50% ໃນປີ 2020 (ແຜນການ: 35,40%).

- ການຜະລິດ ແລະ ການບໍລິການສິນຄ້າ ເຫັນວ່າມີທ່າຂະຫຍາຍຕົວ ແລະ ສາມາດຕອບສະໜອງໃຫ້ແກ່ສັງຄົມໄດ້ໂດຍພື້ນຖານ, ໃນນີ້:

- ຂະແໜງກະສິກຳ: ການປູກຝັງ ເຫັນວ່າໄດ້ມີຂະບວນການຟົດຟື້ນພໍສົມຄວນ, ແຕ່ຍ້ອນໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດທີ່ກະທົບຕໍ່ການຜະລິດຂອງປະຊາຊົນ ຈຶ່ງເຮັດຜົນຜະລິດຂອງພືດບາງຊະນິດມີທ່າອ່ຽງຫຼຸດລົງ ເປັນຕົ້ນ: ການຜະລິດເຂົ້າລວມ ສະເລ່ຍ 5 ປີ ປະຕິບັດໄດ້ 3,70 ລ້ານໂຕນຕໍ່ປີ (ໃນປີ 2016: ປະຕິບັດໄດ້ 4,14 ລ້ານໂຕນ, ປີ 2017: 4,05 ລ້ານໂຕນ, ປີ 2018: 3,27 ລ້ານໂຕນ, ປີ 2019: 3,53 ລ້ານໂຕນ ແລະ ປີ 2020: ບັນລຸໄດ້ 3,5 ລ້ານໂຕນ (ແຜນການ: 4,35 ລ້ານໂຕນຕໍ່ປີ) ເຖິງແນວໃດກໍ່ຕາມ ເຫັນວ່າການຜະລິດເຂົ້າຍັງສາມາດຮັບປະກັນການບໍລິໂພກພາຍໃນ, ມີສ່ວນແຮ່ໄວ້ ແລະ ສ່ວນເກີນເພື່ອຂາຍ. ການລ້ຽງສັດ ຍັງເຫັນວ່າມີການຂະຫຍາຍຕົວດີ ໂດຍສະເພາະ ການລ້ຽງງົວ ແມ່ນເພີ່ມຂຶ້ນ ຈາກ 1,92 ລ້ານໂຕ ໃນປີ 2016 ມາເປັນ 2,18 ລ້ານໂຕ ໃນປີ 2020 ແລະ ການລ້ຽງປາ ໄດ້ເພີ່ມຂຶ້ນ ຈາກ 164 ພັນໂຕນ ໃນປີ 2016 ມາເປັນ 200 ພັນໂຕນ ໃນປີ 2020.
- ຂະແໜງອຸດສາຫະກຳ: ແມ່ນເຫັນວ່າຍັງສືບຕໍ່ຂະຫຍາຍຕົວດີ, ເຊິ່ງໃນໄລຍະ 5 ປີ ຜ່ານມາ ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປະຕິບັດໄດ້ 52.728 ຕື້ກີບ ສະເລ່ຍເພີ່ມຂຶ້ນ 9,2% ຕໍ່ປີ (ແຜນການ: 15% ຕໍ່ປີ) ເຊິ່ງເຫັນວ່າການຂະຫຍາຍຕົວມີທ່າອ່ຽງຫຼຸດລົງໃນແຕ່ລະປີ (ປີ 2016: 15,07%, ປີ 2017: 15,38%, ປີ 2018: 10,68%, ປີ 2019: 8,39% ແລະ ປີ 2020: 3%); ອຸດສາຫະກຳປຸງແຕ່ງສ່ວນໃຫຍ່ແມ່ນຜະລິດເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດພາຍໃນ ເຊັ່ນ: ອຸດສາຫະກຳປຸງແຕ່ງອາຫານ, ເຄື່ອງດື່ມ, ວັດສະດຸກໍ່ສ້າງ (ຊີມັງ, ເຫຼັກເສັ້ນ, ເຫຼັກຮູບປະພັນ, ທໍ່ພີວີຊີ, ນໍ້າສີ ແລະ ປລາສະຕິກ); ອຸດສາຫະກຳຜະລິດເພື່ອສົ່ງອອກຕາມສິດທິທາງການຄ້າແມ່ນ ເຄື່ອງນຸ່ງຫົ່ມ ແລະ ເກີບ, ສິ້ນສ່ວນ-ອຸປະກອນເຄື່ອງເອເລັກໂທຣນິກ ແລະ ໂທລະຄົມມະນາຄົມ ເຊິ່ງຜະລິດຕະພັນດັ່ງກ່າວ ແມ່ນຜະລິດຈາກ ບັນດາໂຮງງານຢູ່ເຂດເສດຖະກິດພິເສດ ແລະ ນິຄົມອຸດສາຫະກຳ; ອຸດສາຫະກຳປຸງແຕ່ງຜະລິດຕະພັນຈາກກະສິກຳ ແລະ ປ່າໄມ້ ແມ່ນການຜະລິດແປ້ງມັນຕົ້ນ, ກາເຟ, ນໍ້າຕານ, ຢາງພາລາ ແລະ ເຈ້ຍຈາກໄມ້ປູກ. ການຜະລິດກະແສໄຟຟ້າ (ຕົວເລກສະສົມ 5 ປີ) ຄາດຄະເນປະຕິບັດໄດ້ 161.923 ລ້ານກິໂລວັດໂມງ, ສະເລ່ຍເພີ່ມຂຶ້ນ 19% ຕໍ່ປີ ຍ້ອນສຳເລັດໂຄງການຜະລິດໄຟຟ້າ ທັງໝົດ 52 ແຫ່ງ, ລວມກຳລັງຕິດຕັ້ງ 4.718 MW, ສາມາດຜະລິດພະລັງງານ 22.933 Gwh, ໃນນີ້ ໂຄງການຜະລິດໄຟຟ້າທີ່ພົ້ນເດັ່ນ ເຂື່ອນນໍ້າຂອງໄຊຍະບູລີ, ໂຮງຜະລິດໄຟຟ້າຫົງສາລິກໄນ, ເຂື່ອນດອນສະໂຮງ ແລະ ເຂື່ອນນໍ້າອູ 5; ການຜະລິດແຮ່ທາດ ປະຕິບັດໄດ້ 7.526,56 ລ້ານໂດລາສະຫະລັດ ແລະ ຄາດວ່າມູນຄ່າສົ່ງອອກແຮ່ທາດ ປະຕິບັດໄດ້ 6,66 ຕື້ໂດລາສະຫະລັດ ແຕ່ເຫັນວ່າການຜະລິດມີທ່າອ່ຽງຫຼຸດລົງຍ້ອນປະລິມານການຜະລິດແຮ່ທາດໃນບາງໂຄງການຫຼຸດລົງ, ລັດຖະບານໄດ້ຢຸດການສຳປະທານດ້ານບໍ່ແຮ່ຊົ່ວຄາວເພື່ອປັບປຸງນະໂຍບາຍ ແລະ ລະບຽບການ ເພື່ອຮັບປະກັນຜົນປະ ໂຫຍດຕໍ່ປະເທດຊາດ ແລະ ຜົນກະທົບດ້ານສິ່ງແວດລ້ອມ ແລະ ປັດໄຈໜຶ່ງຍ້ອນລາຄາແຮ່ທາດຫຼຸດລົງ ເຊິ່ງບໍ່ເປັນສິ່ງຈູງໃຈຕໍ່ການຜະລິດ; ມູນຄ່າການສົ່ງອອກສິນຄ້າ ປະຕິບັດໄດ້ 26.429 ລ້ານໂດລາສະຫາລັດ ສະເລ່ຍເພີ່ມຂຶ້ນ 10,4% ຕໍ່ປີ ຫຼຸດແຜນການວາງໄວ້ (ແຜນການ: 15% ຕໍ່ປີ), ໃນນັ້ນ ການສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງ ກວມເອົາ 43% ຂອງມູນຄ່າການສົ່ງອອກສິນຄ້າທັງໝົດ. ມູນຄ່າສົ່ງອອກໃນເຂດເສດຖະກິດພິເສດ ຄາດວ່າປະຕິບັດໄດ້ 1,81 ຕື້ໂດລາສະຫະລັດ (ໃນນີ້ ພົ້ນເດັ່ນແມ່ນເຂດເສດຖະກິດພິເສດສະຫວັນ-ເຊໂນ ແລະ ເຂດພັດທະນາກວມລວມໄຊເຊດຖາ), ລະດັບການເປີດຕົວຂອງການຄ້າສິນຄ້າກັບສາກົນ (ບໍ່ລວມບໍລິການ) ບັນລຸໄດ້ 61,5% (ຄາດໝາຍ: 70%).

- ຂະແໜງການບໍລິການ: ເປັນຂະແໜງການທີ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ກວມເອົາສັດສ່ວນທີ່ຫຼາຍກວ່າໝູ່ໃນ GDP. ໃນນີ້, ມູນຄ່າການຈໍລະຈອນສິນຄ້າ ປະຕິບັດໄດ້ 285.153 ຕື້ກີບ ສະເລ່ຍເພີ່ມຂຶ້ນ 10,2% ຕໍ່ປີ ຫຼຸດແຜນການວາງໄວ້ (ແຜນການ: 12% ຕໍ່ປີ); ຈຳນວນນັກທ່ອງທ່ຽວເຂົ້າມາລາວ ສະເລ່ຍ 2,64 ລ້ານເທື່ອຄົນຕໍ່ປີ (ມະຕິສະພາ: ໃຫ້ໄດ້ 6 ລ້ານເທື່ອຄົນຕໍ່ປີ), ໃນນີ້: ປີ 2016 ປະຕິບັດໄດ້ 4,23 ລ້ານເທື່ອຄົນ, ໃນປີ 2017 ປະຕິບັດໄດ້ 3,86 ລ້ານເທື່ອຄົນ, ໃນປີ 2018 ປະຕິບັດໄດ້ 4,18 ລ້ານເທື່ອຄົນ, ໃນປີ 2019 ປະຕິບັດໄດ້ 4,79 ລ້ານເທື່ອຄົນ ແລະ ໃນປີ 2020 ປະຕິບັດໄດ້ 0,88 ລ້ານເທື່ອຄົນ ເຊິ່ງເຫັນວ່າຫຼຸດລົງ 81,49% ທຽບໃສ່ປີ 2019, ສາມາດສ້າງລາຍຮັບຈາກການທ່ອງທ່ຽວ ສະເລ່ຍ 673 ລ້ານໂດລາສະຫະລັດ (ມະຕິສະພາ: ໃຫ້ໄດ້ 953 ລ້ານໂດລາສະຫະລັດ) ສາເຫດຍ້ອນ ຜົນກະທົບຂອງການລະບາດຂອງພະຍາດໂຄວິດ-19 ເຊິ່ງໄດ້ເຮັດໃຫ້ນັກທ່ອງທ່ຽວ, ຜູ້ເດີນທາງ ແລະ ສາຍການບິນທົ່ວໂລກຢຸດຕິການໃຫ້ບໍລິການ ແລະ ການເດີນທາງ ໂດຍອີງຕາມການຄາດຄະເນ ຂອງອົງການສະຫະປະຊາຊາດເພື່ອການທ່ອງທ່ຽວໂລກ (UNWTO) ໃນປີ 2020 ຈຳນວນນັກທ່ອງທ່ຽວໃນທົ່ວໂລກ ຫຼຸດລົງຢູ່ໃນລະດັບ -74% ຫຼື ຫຼຸດລົງຈາກ 1,5 ຕື້ເທື່ອຄົນໃນປີ 2019 ມາເປັນ 381 ລ້ານເທື່ອຄົນ ແລະ ສູນເສຍລາຍຮັບຈາກການທ່ອງທ່ຽວປະມານ 1,3 ພັນຕື້ໂດລາສະຫະລັດ, ໃນນີ້ ອາຊີປາຊີຟິກ ຫຼຸດລົງ 84% ຫຼື ຫຼຸດລົງຈາກ 630 ລ້ານເທື່ອຄົນ ມາເປັນ 57 ລ້ານເທື່ອຄົນ ແລະ ຄາດວ່າຈະມີຜູ້ຫວ່າງງານ ສູງເຖິງ 114 ລ້ານຄົນ ໃນທົ່ວໂລກ ແລະ ສປປ ລາວ ກຳລັງປະເຊີນໜ້າກັບບັນຫາການຢຸດຈ້າງງານໃນຂະແໜງການນີ້ ເຊິ່ງມີປະມານ 22% ຂອງແຮງງານໃນຕົວເມືອງແມ່ນຢູ່ຂະແໜງທ່ອງທ່ຽວ. ນອກຈາກນັ້ນ, ລາຍຮັບທີ່ໄດ້ຈາກຂະແໜງການທ່ອງທ່ຽວກໍ່ຈະຫຼຸດລົງຢ່າງຫຼວງຫຼາຍ ເຊິ່ງເຮັດໃຫ້ຜູ້ປະກອບການທຸລະກິດການທ່ອງທ່ຽວ, ໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ ບໍ່ສາມາດດຳເນີນທຸລະກິດ ແລະ ຢຸດຕິການໃຫ້ບໍລິການເປັນຈຳນວນຫຼາຍ.

**(2) ແຜນວຽກຈຸດສຸມ 2: ຮັບປະກັນໃຫ້ເສດຖະກິດມະຫາພາກມີສະຖຽນລະພາບ**

- ດ້ານການເງິນ: ລັດຖະບານ ສຸມໃສ່ປະຕິຮູບລະບົບການຄຸ້ມຄອງການເງິນແຫ່ງລັດ ດ້ວຍການສ້າງວິໄສທັດ 2030 ແລະ ຍຸດທະສາດພັດທະນາການເງິນແຫ່ງລັດ ຮອດປີ 2025 ໂດຍການປັບປຸງນະໂຍບາຍການເງິນ, ການສ້າງ ແລະ ປັບປຸງນິຕິກຳຂະແໜງການເງິນ, ການປະຕິຮູບລະບົບການຄຸ້ມຄອງການເກັບລາຍຮັບ, ການປະຕິຮູບລະບົບຄຸ້ມຄອງລາຍຈ່າຍ, ພັດທະນາຂະແໜງການເງິນເປັນທັນສະໄໝ, ການຄຸ້ມຄອງ ແລະ ພັດທະນາການຈັດຕັ້ງ-ບຸກຄະລາກອນ ແລະ ການເຂັ້ມງວດປະຕິບັດມາດຕະການການປະຢັດງົບປະມານ ຕາມຄຳສັ່ງ ເລກທີ 09/ນຍ ເຮັດໃຫ້ການເກັບລາຍຮັບມີທ່າອ່ຽງເພີ່ມຂຶ້ນໃນແຕ່ລະປີ, ສາມາດເກັບລາຍຮັບທັງໝົດໄດ້ 120.672 ຕື້ກີບ ເທົ່າກັບ 98,4% ຂອງແຜນການ (ທີ່ໄດ້ຮັບການດັດແກ້ໃນແຕ່ລະປີ), ສະເລ່ຍເທົ່າກັບ 15,9% ຂອງ GDP (ມະຕິດັດແກ້ 4 ປີ: 18,6% ຂອງ GDP), ລາຍຈ່າຍທັງໝົດປະຕິບັດໄດ້ 150.633 ຕື້ກີບ ເທົ່າກັບ 95,0% ຂອງແຜນການ (ທີ່ໄດ້ຮັບການດັດແກ້ໃນແຕ່ລະປີ), ສະເລ່ຍເທົ່າກັບ 19,8% ຂອງ GDP (ມະຕິດັດແກ້ 4 ປີ: 23,3% ຂອງ GDP), ຂາດດຸນງົບປະມານສະເລ່ຍໄລຍະ 5 ປີ ຢູ່ໃນລະດັບ 3,9% ຂອງ GDP (ມະຕິດັດແກ້ 4 ປີ: ບໍ່ເກີນ 4,23% ຂອງ GDP). ສາເຫດດ້ານເກັບລາຍຮັບບໍ່ໄດ້ຕາມແຜນ ຍ້ອນການເກັບລາຍຮັບຈາກຂະແໜງຊັບພະຍາກອນທຳມະຊາດບໍ່ໄດ້ຕາມແຜນ ເນື່ອງມາຈາກລາຄາແຮ່ທາດ ແລະ ນ້ຳມັນດິບໃນຕະຫຼາດໂລກຫຼຸດລົງຫຼາຍ, ມີຫຼາຍຫົວໜ່ວຍທຸລະກິດຍັງບໍ່ທັນຈັດຕັ້ງປະຕິບັດລະບົບອາກອນມູນຄ່າເພີ່ມ, ໃນນີ້ ຈຳນວນທີ່ເຂົ້າແລ້ວ ແຕ່ຍັງບໍ່ທັນປະຕິບັດລະບອບການແຈ້ງອາກອນມູນຄ່າເພີ່ມຢ່າງຖືກຕ້ອງຄົບຖ້ວນ ຕາມລະບຽບກົດໝາຍກຳນົດ, ບັນດາຂະແໜງການ ແລະ ທ້ອງຖິ່ນຈຳນວນໜຶ່ງ ຍັງບໍ່ທັນເອົາໃຈໃສ່ຄຸ້ມຄອງການເກັບລາຍຮັບໄດ້ດີເທົ່າທີ່ຄວນ ໂດຍສະເພາະ ແມ່ນລາຍຮັບຄ່າທຳນຽມ, ຄ່າບໍລິການ, ການຄຸ້ມຄອງລາຍຮັບ-ລາຍຈ່າຍວິຊາການ ແລະ ກອງທຶນຕ່າງໆ ຍັງຕ້ອງໄດ້ປັບປຸງຕື່ມ. ບັນຫາສຳຄັນແມ່ນ ສະຕິການປະຕິບັດກົດໝາຍ ແລະ ວິໄນການເງິນຂອງພະນັກງານການເງິນຈຳນວນໜຶ່ງ, ລວມໄປເຖິງບາງຂະແໜງການ ແລະ ທ້ອງຖິ່ນ ຍັງບໍ່ສູງເທົ່າທີ່ຄວນ. ນອກນັ້ນ, ຍັງບໍ່ທັນມີການເປີດກ້ວາງ ແລະ ຂະຫຍາຍຖານລາຍຮັບໃໝ່ໄດ້ຫຼາຍ, ຕົ້ນຕໍຍັງແມ່ນການຄຸ້ມຄອງ

ແລະ ຂຸດຄົ້ນເກັບຈາກແຫຼ່ງລາຍຮັບທີ່ມີແລ້ວໃຫ້ໄດ້ຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ. ດ້ານລາຍຈ່າຍ ເຫັນວ່າ ການບໍລິຫານ ແລະ ການຄຸ້ມຄອງລາຍຈ່າຍຍັງບໍ່ທັນມີປະສິດທິຜົນ, ຍັງບໍ່ທັນເຂັ້ມງວດການປະຕິບັດນະໂຍບາຍປະຢັດຂອງລັດຖະ ບານ ແລະ ກົດໝາຍວ່າດ້ວຍການຈັດຊື້ຈັດຈ້າງດ້ວຍທຶນຂອງລັດ ແລະ ກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ ແລະ ການຈັດສັນງົບປະມານການລົງທຶນຂອງລັດ ຍັງບໍ່ມີຈຸດສຸມ ແລະ ການລົງທຶນຂອງລັດຍັງບໍ່ທັນປະຢັດມັດທະຍັດ.

- ດ້ານເງິນຕາ: ທະນາຄານແຫ່ງ ສປປ ລາວ(ທຫລ) ໄດ້ປະຕິບັດນະໂຍບາຍເງິນຕາ ໂດຍການນໍາໃຊ້ເຄື່ອງມືທາງອ້ອມ ຄື: ອັດຕາດອກເບ້ຍພື້ນຖານຂອງ ທຫລ, ອັດຕາສ່ວນເງິນແຮຝາກບັງຄັບ ແລະ ເຄື່ອງມືຕະຫຼາດເປີດ ໄປຄຽງຄູ່ກັບການປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ. ພ້ອມກັນນັ້ນ, ໄດ້ເອົາໃຈໃສ່ຄຸ້ມຄອງເງິນຕາຕ່າງປະເທດ ຕາມລະບຽບການຢ່າງເຂັ້ມງວດ ເປັນຕົ້ນ ການຄຸ້ມຄອງກະແສເງິນເຂົ້າ-ອອກປະເທດ ຜ່ານລະບົບທະນາຄານຢ່າງເປັນປົກກະຕິ, ກວດກາຕິດຕາມການເຄື່ອນໄຫວຂອງຮ້ານແລກປ່ຽນເງິນຕາ ທີ່ຢູ່ພາຍໃຕ້ການຄຸ້ມຄອງ, ປະສານກັບພາກສ່ວນກ່ຽວຂ້ອງເພື່ອຈໍາກັດ ແລະ ສະກັດກັ້ນ ການເຄື່ອນໄຫວດໍາເນີນທຸລະກິດແລກປ່ຽນເງິນຕາທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ ແລະ ຊຸກຍູ້ທະນາຄານທຸລະກິດຂະຫຍາຍຕາໜ່າງບໍລິການໃຫ້ທົ່ວເຖິງ, ສ້າງຜະລິດຕະພັນໃໝ່ ແລະ ຫັນການບໍລິການເປັນທັນສະໄໝ ເພື່ອສົ່ງເສີມການຊໍາລະຜ່ານລະບົບທະນາຄານ ແລະ ຫຼຸດ ຜ່ອນການນໍາໃຊ້ເງິນສົດ.

- ອັດຕາເງິນເຟີ້: ໃນໄລຍະ 5 ປີຜ່ານມາ ສະເລ່ຍເພີ່ມຂຶ້ນໃນລະດັບ 2,57% ຕໍ່ປີ, ເຊິ່ງຢູ່ຂອບຂອງແຜນການວາງໄວ້ (ມະຕິສະພາ: ຕໍ່າກວ່າອັດຕາການຂະຫຍາຍຕົວຂອງເສດຖະກິດ), ໃນນີ້ ນັບແຕ່ກາງປີ 2019 ເປັນຕົ້ນມາ ອັດຕາເງິນເຟີ້ມີທ່າອ່ຽງເພີ່ມສູງຂຶ້ນຫຼາຍ ຈາກ 3% ໃນເດືອນ 7/2019 ມາເປັນ 6,94% ໃນເດືອນ 1/2020, 6,21% ໃນເດືອນ 2/2020, 6,14% ໃນເດືອນ 3/2020, 5,28% ໃນເດືອນ 6/2020, 5,12% ໃນເດືອນ 7/2020, 5,84% ໃນເດືອນ 8/2020 ແລະ ມີທ່າອ່ຽງຫຼຸດລົງມາ 4,63% ໃນເດືອນ 9/2020, 3,63% ໃນເດືອນ 10/2020, 2,84% ໃນເດືອນ 11/2020 ແລະ 3,19% ໃນເດືອນ 12/2020. ໃນໄລຍະ 2016-2020 ລາຄາໝວດສິນຄ້າທີ່ເພີ່ມຂຶ້ນສູງກວ່າໝູ່ ແມ່ນໝວດອາຫານ ແລະ ເຄື່ອງດື່ມທີ່ບໍ່ມີທາດເຫຼົ້າ ສະເລ່ຍເພີ່ມຂຶ້ນ 3,73%, ໝວດເຄື່ອງນຸ່ງ ແລະ ເກີບ ສະເລ່ຍເພີ່ມຂຶ້ນ 3,61%, ໝວດການຮັກສາສຸຂະພາບ ເພີ່ມຂຶ້ນ 2,25%, ໝວດເຄື່ອງໃຊ້ໃນເຮືອນ ເພີ່ມຂຶ້ນ 1,99% ແລະ ໝວດໄປສະນີ ແລະ ໂທລະຄົມມະນາຄົມ ເພີ່ມຂຶ້ນ 1,42%. ປັດໄຈຕົ້ນຕໍ ທີ່ເປັນສາເຫດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນແມ່ນຍ້ອນໄດ້ຮັບຜົນກະທົບຈາກໄພພິບັດທໍາມະຊາດ ທີ່ກະທົບຕໍ່ການຜະລິດ ແລະ ການບໍລິການເສຍຫາຍ ເຊິ່ງພາໃຫ້ລາຄາສິນຄ້າປະເພດພືດຜັກ ແລະ ຊີ້ນເພີ່ມສູງຂຶ້ນ. ນອກຈາກນີ້, ການຜະລິດພາຍໃນຍັງບໍ່ທັນຕອບສະໜອງຄວາມຕ້ອງການຂອງສັງຄົມ; ສິນຄ້າອຸປະໂພກ ແລະ ບໍລິໂພກສ່ວນໃຫຍ່ແມ່ນນໍາເຂົ້າຈາກຕ່າງປະເທດ ແລະ ລາຄາສິນຄ້າມີທ່າອ່ຽງເພີ່ມສູງຂຶ້ນຈາກສະພາບການອ່ອນຄ່າຂອງເງິນກີບ.

- ອັດຕາແລກປ່ຽນ: ເງິນກີບທຽບໃສ່ເງິນຕາຕ່າງປະເທດສະກຸນເງິນຫຼັກ ເໜັງຕີງຢູ່ໃນຂອບທີ່ກໍານົດໄວ້ (ແຜນການ: ມີຄວາມສະຫງົບປົກກະຕິ ± 5%) ຄື: ເງິນກີບທຽບໃສ່ເງິນໂດລາສະຫະລັດ ໃນໄລຍະ 2016-2020 ສະເລ່ຍອ່ອນຄ່າ 2,75% (ໃນນີ້: ປີ 2016 ອ່ອນຄ່າ 0,36%, ປີ 2017 ອ່ອນຄ່າ 2,03%, ປີ 2018 ອ່ອນຄ່າ 1,56%, ປີ 2019 ອ່ອນຄ່າ 3,59% ແລະ ປີ 2020 ອ່ອນຄ່າ 6,23%). ສໍາລັບເງິນກີບທຽບໃສ່ເງິນບາດ ແມ່ນມີແນວໂນ້ມອ່ອນຄ່າລົງສະເລ່ຍ 5,0% (ໃນນີ້: ປີ 2016 ແຂງຄ່າ 3,27% ແລະ ປີ 2017 ກັບມາອ່ອນຄ່າ 5,68%, ປີ 2018 ອ່ອນຄ່າ 6,86%, ປີ 2019 ອ່ອນຄ່າ 7,59% ແລະ ປີ 2020 ອ່ອນຄ່າ 8,15%). ສາເຫດທີ່ເງິນກີບມີການອ່ອນຄ່າ ຍ້ອນ ສປປ ລາວ ມີການຂາດດຸນການຄ້າກັບຕ່າງປະເທດຢ່າງຕໍ່ເນື່ອງ, ການຜະລິດສິນຄ້າພາຍໃນຍັງອ່ອນນ້ອຍ ແລະ ບໍ່ພຽງພໍກັບຄວາມຕ້ອງການ ບວກກັບປັດໄຈພາຍນອກທີ່ສະກຸນເງິນໂດລາສະຫະລັດ ແລະ ເງິນບາດໄທແຂງຄ່າຂຶ້ນໃນຕະຫຼາດສາກົນ.

- ປະລິມານເງິນ ($M_2$): ເພີ່ມຂຶ້ນຕາມຈັງຫວະການຂະຫຍາຍຕົວຂອງເສດຖະກິດ ສະເລ່ຍໃນລະດັບ 13,48% ຕໍ່ປີ (ມະຕິສະພາ: ສະເລ່ຍບໍ່ເກີນ 24%), ສາເຫດຍ້ອນການຂະຫຍາຍຕົວຂອງສິນເຊື່ອໃນຈັງຫວະທີ່ຊ້າລົງ ຕາມສະພາບບັນຍາກາດການດຳເນີນທຸລະກິດໂດຍລວມໃນບາງໄລຍະບວກກັບຜົນກະທົບຈາກໜີ້ສິນຄຸມເຄືອຂອງລັດຖະບານ.

- ຄັງສຳຮອງເງິນຕາຕ່າງປະເທດ: ສາມາດກຸ້ມການນຳເຂົ້າໄດ້ ສະເລ່ຍ 4,26 ເດືອນ (ມະຕິສະພາ: ໃຫ້ໄດ້ຫຼາຍກວ່າ 5 ເດືອນຂຶ້ນໄປ), ໃນນີ້: ສາມາດກຸ້ມການນຳເຂົ້າ 5,26 ເດືອນ ໃນປີ 2016; 4,39 ເດືອນ ໃນປີ 2017; 3,23 ເດືອນ ໃນປີ 2018; 3,59 ເດືອນ ໃນປີ 2019 ແລະ 4,81 ເດືອນ ປີ 2020.

- ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPL): ໃນໄລຍະປີ 2016-2020 ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ ສະເລ່ຍ 3,08% ຂອງຍອດເຫຼືອສິນເຊື່ອທັງໝົດ (ແຜນການ: ບໍ່ເກີນ 3%), ໃນນັ້ນ, ໜີ້ບໍ່ເກີດດອກອອກຜົນສ່ວນໃຫຍ່ແມ່ນຕິດພັນກັບໂຄງການລົງທຶນຂອງລັດຖະບານ.

- ອັດຕາສ່ວນຍອດເຫຼືອເງິນຝາກຂອງທະນາຄານທຸລະກິດຕໍ່ລວມຍອດມູນຄ່າຜະລິດຕະພັນພາຍໃນ ຕາມລາຄາໃນປີ (GDP) ຢູ່ໃນລະດັບ 50,67% ໃນປີ 2016, 52,16% ໃນປີ 2017, 51,99% ໃນປີ 2018, 57,43% ໃນປີ 2019 ແລະ ມາຮອດທ້າຍເດືອນ 12/2020 ກວມເອົາ 64,43%.

- ຍອດເຫຼືອສິນເຊື່ອຂອງຂະແໜງທະນາຄານ ຮອດເດືອນ 12/2020 ຢູ່ໃນລະດັບ 48,76% ຂອງ GDP, ໃນນີ້ ທະນາຄານທຸລະກິດໄດ້ສະໜອງສິນເຊື່ອແຍກຕາມຂະແໜງການ ຄື: ອຸດສາຫະກຳ 27,42%, ກໍ່ສ້າງ 14,34%, ປະກອບວັດຖຸເຕັກນິກ 1,13%, ກະສິກຳ ແລະ ປ່າໄມ້ 7,65%, ການຄ້າ 19,12%, ຂົນສົ່ງ-ໄປສະນີ 1,87%, ບໍລິການ 13,26%, ຫັດຖະກຳ 1,34% ແລະ ຂະແໜງອື່ນໆ 13,87%.

- ການນຳເຂົ້າ-ສົ່ງອອກ: ຄາດວ່າປະຕິບັດໄດ້ 52.976 ລ້ານໂດລາສະຫະລັດ. ໃນນັ້ນ, ມູນຄ່າການສົ່ງອອກປະຕິບັດໄດ້ 26.429 ລ້ານໂດລາສະຫະລັດ ແລະ ມູນຄ່າການນຳເຂົ້າ ປະຕິບັດໄດ້ 26.547 ລ້ານໂດລາສະຫະລັດ, ຂາດດຸນການຄ້າ 118 ລ້ານໂດລາສະຫະລັດ.

**(3) ແຜນວຽກຈຸດສຸມ 3: ຮັບປະກັນຄວາມສອດຄ່ອງ ແລະ ກົມກຽວລະຫວ່າງຄວາມສາມາດສະໜອງແຫຼ່ງທຶນກັບການວາງແຜນພັດທະນາ**

ການລະດົມການລົງທຶນທົ່ວສັງຄົມ ຄາດວ່າຈະປະຕິບັດໄດ້ 169.744,6 ຕື້ກີບ ເທົ່າກັບ 97,9% ຂອງແຜນການ (ມະຕິສະພາ: 173.329 ຕື້ກີບ) ຫຼື ເທົ່າກັບ 26,9% ຂອງ GDP, ໃນນີ້:

+ ການລົງທຶນຈາກງົບປະມານລັດ: ຄາດວ່າຈະປະຕິບັດໄດ້ 17.099,9 ຕື້ກີບ ເທົ່າກັບ 10,1% ຂອງການລົງທຶນທັງໝົດ (ມະຕິສະພາ: 12-15%).
+ ການລົງທຶນຈາກການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA): ຄາດວ່າປະຕິບັດໄດ້ 29.666,1 ຕື້ກີບ ເທົ່າກັບ 17,5% ຂອງການລົງທຶນທັງໝົດ (ມະຕິສະພາ: 15-24%)
+ ການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ: ຄາດວ່າຈະປະຕິບັດໄດ້ 86.127,6 ຕື້ກີບ ເທົ່າກັບ 50,7% ຂອງການລົງທຶນທັງໝົດ (ມະຕິສະພາ: 40-49%)
+ ການລົງທຶນຈາກລະບົບການເງິນ-ເງິນຕາ: ຄາດວ່າປະຕິບັດໄດ້ 36.851 ຕື້ກີບ ເທົ່າກັບ 21,7% ຂອງການລົງທຶນທັງໝົດ (ມະຕິສະພາ: 21-23%), ໃນນີ້: 10.876 ຕື້ກີບ ໃນປີ 2016, 7.800 ຕື້ກີບ ໃນປີ 2017, 8.763 ຕື້ກີບ ໃນປີ 2018, 9.788 ຕື້ກີບ ໃນປີ 2019 ແລະ ປີ 2020 ແມ່ນ 10.500 ຕື້ກີບ.

ການສະໜອງທຶນເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຄັ້ງນີ້ ຄາດວ່າຈະບໍ່ສາມາດບັນລຸຕາມແຜນການ ເນື່ອງຈາກມີສິ່ງທ້າທາຍຫຼາຍ ເປັນຕົ້ນ: ການລົງທຶນຈາກງົບປະມານລັດມີທ່າອ່ຽງຫຼຸດລົງໃນແຕ່ລະປີ; ຄວາມຕ້ອງການພັດທະນາແມ່ນສູງກວ່າຄວາມສາມາດໃນການສະໜອງທຶນ; ການປະຕິບັດການລົງທຶນຕົວຈິງຍັງບໍ່ທັນມີຈຸດສຸມເທົ່າທີ່ຄວນ ແລະ ມີການລະເມີດວິໄນແຜນການ-ການເງິນ ເຊິ່ງພາໃຫ້ເກີດມີໜີ້ສິນຄຸ້ມເຄືອ. ໃນຕໍ່ໜ້າຕ້ອງໄດ້ສຸມໃສ່ໃຫ້ມີການເຊື່ອມໂຍງລະຫວ່າງການວາງແຜນ, ການເງິນ-ງົບປະມານ ແລະ ການຕິດຕາມ ແລະ ການປະເມີນຜົນ, ການປະຕິ

ຮູບການຄຸ້ມຄອງການເງິນພາກລັດ (PFM) ຢ່າງເປັນລະບົບ ແລະ ຕໍ່ເນື່ອງ, ຮັບປະກັນວ່າການຈັດສັນງົບປະມານໄປຕາມທິດທາງບູລິມະສິດຂອງການພັດທະນາ, ການຂຶ້ນແຜນໃຊ້ຈ່າຍຕ້ອງຢູ່ບົນພື້ນຖານລາຍຮັບທີ່ມີ ແລະ ສອດຄ່ອງກັບງົບປະມານທີ່ໄດ້ຮັບການອະນຸມັດ ແລະ ມີການຕິດຕາມປະເມີນຜົນຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ.

ໃນໄລຍະຜ່ານມາ ລັດຖະບານໄດ້ມີຄວາມພະຍາຍາມສູງ ເພື່ອປັບປຸງບັນຍາກາດການລົງທຶນ ໂດຍອອກຄໍາສັ່ງເລກທີ 02/ນຍ ກ່ຽວກັບການປັບປຸງລະບຽບການ ແລະ ກົນໄກການປະສານງານໃນການດໍາເນີນທຸລະກິດຢູ່ ສປປ ລາວ, ຄໍາສັ່ງເລກທີ 12/ນຍ ວ່າດ້ວຍການອໍານວຍຄວາມສະດວກໃຫ້ແກ່ການນໍາເຂົ້າ-ສົ່ງອອກ, ການຜ່ານແດນ, ການນໍາເຂົ້າຊົ່ວຄາວ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ, ຄໍາສັ່ງເລກທີ 03/ນຍ ວ່າດ້ວຍການປັບປຸງວຽກງານບໍລິການ ການອອກໃບອະນຸຍາດການລົງທຶນ ແລະ ໃບອະນຸຍາດດໍາເນີນທຸລະກິດ, ແຕ່ເຫັນວ່າ ລໍາດັບຄວາມສະດວກໃນການດໍາເນີນທຸລະກິດແມ່ນຢູ່ໃນທ່າອ່ຽງຖົດຖອຍໃນແຕ່ລະປີ ເປັນຕົ້ນ ປີ 2016 ຢູ່ລໍາດັບ 134 ມາເປັນລໍາດັບທີ 154 ໃນປີ 2020. ການປັບປຸງ 10 ຕົວຊີ້ບອກ ບາງອັນແມ່ນມີຄວາມຊັກຊ້າ ເຊັ່ນ: ການຂໍອະນຸຍາດການລົງທຶນຍັງຊັກຊ້າ ແລະ ເກີນເວລາທີ່ກົດໝາຍກໍານົດ ສະເລ່ຍຫຼາຍກວ່າ 3 ເດືອນ ໃນກິດຈະກໍາຄວບຄຸມ (ອີງຕາມກົດໝາຍ 8 ວັນລັດຖະການ) ແລະ ຫຼາຍກວ່າ 6 ເດືອນໃນກິດຈະກໍາສໍາປະທານ (ອີງຕາມກົດໝາຍ 30 ວັນລັດຖະການ); ຕົ້ນທຶນ ແລະ ຂັ້ນຕອນໃນການເລີ່ມຕົ້ນທຸລະກິດຍັງເຫັນວ່າຢູ່ໃນລໍາດັບທີ່ສູງ (ຢູ່ໃນລໍາດັບ 181 ໃນ 190 ປະເທດ) ເຊິ່ງເປັນສິ່ງກີດຂວາງການສົ່ງເສີມການພັດທະນາ ແລະ ຂະຫຍາຍຕົວຂອງການລົງທຶນເອກະຊົນໃຫ້ສາມາດແຂ່ງຂັນ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງມີປະສິດທິພາບ; ການພິຈາລະນາອອກໃບອະນຸຍາດດໍາເນີນທຸລະກິດ, ການໃຫ້ນະໂຍບາຍຍົກເວັ້ນພາສີ ແລະ ອາກອນສໍາລັບແຜນການນໍາເຂົ້າຂອງວິສາຫະກິດ, ການຂໍຕິດຕັ້ງໄຟຟ້າ, ການຂໍອະນຸຍາດປຸກສ້າງ ແລະ ອື່ນໆ. ຕົວຊີ້ບອກທີ່ຕ້ອງຮີບຮ້ອນແກ້ໄຂລວມມີ: ການບັງຄັບໃຊ້ນິຕິກໍາ ແລະ ສັນຍາ (ຈໍານວນເວລາທີ່ໃຊ້ໃນການໄກ່ເກ່ຍຄະດີ ແລະ ຄຸນນະພາບຂອງຂະບວນການຍຸຕິທໍາ); ການປົກປ້ອງນັກລົງທຶນ (ຄວາມໂປ່ງໃສໃນການດໍາເນີນທຸລະກໍາ) ແລະ ຂັ້ນຕອນການຈ່າຍອາກອນ.

**(4) ແຜນວຽກຈຸດສຸມ 4: ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນຢ່າງມີຄວາມສອດຄ່ອງ ແລະ ສົມດຸນ**

ໃນໄລຍະຜ່ານມາ ພັກ ແລະ ລັດຖະບານ ໄດ້ໃຫ້ຄວາມສໍາຄັນສູງຕໍ່ການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ດ້ວຍການຊຸກຍູ້ສົ່ງເສີມດ້ານນະໂຍບາຍ, ວິຊາການ ແລະ ທຶນຮອນ ເພື່ອຈັດຕັ້ງປະຕິບັດບັນດາເປົ້າໝາຍ ແລະ ຄາດໝາຍບູລິມະສິດຂອງບັນດາແຂວງ ຕາມທ່າແຮງຂອງແຕ່ລະບ່ອນ ເຊິ່ງເຮັດໃຫ້ເສດຖະກິດໄດ້ສືບຕໍ່ຂະຫຍາຍຕົວ ແລະ ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ ເຊິ່ງສະແດງອອກ ດັ່ງນີ້:

- ພາກເໜືອ: ເສດຖະກິດຍັງສືບຕໍ່ຂະຫຍາຍຕົວດີ, ອັດຕາການຂະຫຍາຍຕົວເພີ່ມຂຶ້ນ ໂດຍສະເລ່ຍ 7,95%, ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ ປີ 2020 ປະມານ 15,11 ລ້ານກີບ; ໄດ້ເອົາໃຈໃສ່ຊຸກຍູ້ການຜະລິດກະສິກໍາໃນເຂດທີ່ມີທ່າແຮງ ອັນພົ້ນເດັ່ນ ການປູກເຂົ້າ ຢູ່ແຂວງຫຼວງນໍ້າທາ, ບໍ່ແກ້ວ, ໄຊຍະບູລີ ແລະ ວຽງຈັນ, ປູກຊາຕົ້ນນໍ້າ ຢູ່ແຂວງຜົ້ງສາລີ, ປູກກ້ວຍ, ມັນຕົ້ນ, ສາລີ ຢູ່ແຂວງອຸດົມໄຊ, ຫົວພັນ, ໄຊຍະບູລີ ແລະ ແຂວງວຽງຈັນ; ໄດ້ສົ່ງເສີມການລ້ຽງສັດໃຫຍ່ ແລະ ປູກຫຍ້າ ຢູ່ແຂວງຊຽງຂວາງ. ດ້ານອຸດສາຫະກໍາ ອັນພົ້ນເດັ່ນແມ່ນ: ສໍາເລັດໂຄງການຜະລິດກະແສໄຟຟ້າຫົງສາລິກໄນ, ເຂື່ອນໄຟຟ້ານໍ້າຂອງໄຊຍະບູລີ; ຂະແໜງອຸດສາຫະກໍາປຸງແຕ່ງ ໄດ້ເລີ່ມມີໜໍ່ແໜງຫຼາຍຂຶ້ນ ເປັນຕົ້ນ ໄດ້ມີການສ້າງໂຮງງານປຸງແຕ່ງຊາຕົ້ນນໍ້າ ຢູ່ແຂວງຜົ້ງສາລີ, ໂຮງງານປຸງແຕ່ງຢາງພາລາຢູ່ແຂວງຫຼວງນໍ້າທາ, ອຸດົມໄຊ, ໂຮງງານການປຸງແຕ່ງຜະລິດຕະພັນໄມ້ ຢູ່ແຂວງຫຼວງພະບາງ, ໄຊຍະບູລີ ແລະ ຊຽງຂວາງ; ມີກຸ່ມການຜະລິດສິນຄ້າ ODOP ຢູ່ຫຼາຍຈຸດ, ເຊິ່ງຜະລິດຕະພັນທີ່ພົ້ນເດັ່ນແມ່ນ ກ້ວຍອົບເນີຍ ເມືອງຊະນະຄາມ, ຢາປະສົມຂີ້ໝິ້ນ ເມືອງໂຫລະຄົມ, ໜັງເຄັມ ແຂວງໄຊຍະບູລີ ແລະ ອື່ນໆ. ດ້ານການບໍລິການ ໂດຍສະເພາະການທ່ອງທ່ຽວ ໄດ້ມີບັນຍາກາດດີຂຶ້ນ ຍ້ອນມີແຫຼ່ງທ່ອງທ່ຽວມໍລະດົກໂລກ 2 ແຫ່ງ ຄື: ເມືອງຫຼວງພະບາງ ແລະ ທົ່ງໄຫຫີນ ລວມເຖິງແຫຼ່ງທ່ອງທ່ຽວທໍາມະຊາດທີ່ມີຊື່ສຽງ ນໍ້າກັດຢໍລະປາ ແຂວງອຸດົມໄຊ. ດ້ານໂຄງລ່າງພື້ນຖານກໍ່ໄດ້ຮັບການກໍ່ສ້າງ ແລະ ປັບປຸງໃໝ່ຫຼາຍສົມຄວນ ເປັນຕົ້ນ: ການປັບປຸງ ແລະ ຍົກລະດັບເສັ້ນທາງ R3,

ທາງກາສີ-ເມືອງນານ,ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ, ໂຄງການທາງດ່ວນວຽງຈັນ-ວັງວຽງໄດ້ສຳເລັດແລ້ວ; ການພັດທະນາເມືອງບຸນເໜືອ ແຂວງຜົ້ງສາລີ, ການພັດທະນາເມືອງກວັນ ແຂວງຫົວພັນ; ໂຄງການກໍ່ສ້າງທາງປູລີມະສິດ 3 ເສັ້ນ ແຂວງໄຊສົມບູນ, ໂຄງການກໍ່ສ້າງເສັ້ນທາງ ຫົງສາ-ເມືອງຈອມເພັດ, ເສັ້ນທາງປາກລາຍ-ເມືອງທົ່ງມີໄຊ, ໂຄງການກໍ່ສ້າງທາງຊຽງຮອນ-ເມືອງເງິນ, ກໍ່ສ້າງເສັ້ນທາງຍຸດທະສາດ ຫີນເຫີບ-ຊະນະຄາມ ແລະ ອື່ນໆ.

- ພາກກາງ: ເປັນເຂດສູນກາງທາງດ້ານເສດຖະກິດ, ການເມືອງ ແລະ ວັດທະນະທຳ-ສັງຄົມທີ່ເປັນປັດໄຈສຳຄັນຊຸກຍູ້ໃຫ້ເສດຖະກິດສືບຕໍ່ການຂະຫຍາຍຕົວ, ເຊິ່ງໃນໄລຍະ 5 ປີ ຜ່ານມາ ອັດຕາການຂະຫຍາຍຕົວເພີ່ມຂຶ້ນສະເລ່ຍ 8,39%, ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ ປີ 2020 ປະມານ 28,70 ລ້ານກີບ. ການຜະລິດກະສິກຳມີທ່າຂະຫຍາຍຕົວດີ ເດັ່ນກວ່າໝູ່ ການປູກເຂົ້າຈ້າວຫອມສະຫວັນ, ເຂົ້າອິນຊີເພື່ອເປັນສິນຄ້າສົ່ງອອກຂາຍຕ່າງປະເທດ, ສາລີຫວານ, ອ້ອຍ ແລະ ມັນຕົ້ນ ຢູ່ແຂວງສະຫວັນນະເຂດ, ຄຳມ່ວນ ແລະ ບໍລິຄຳໄຊ ແລະ ການປູກພືດ-ຜັກປອດສານພິດ ຢູ່ນະຄອນຫຼວງວຽງຈັນ. ດ້ານອຸດສະຫາກຳ ໄດ້ມີໂຮງງານປຸງແຕ່ງເພີ່ມຂຶ້ນ ເປັນຕົ້ນ ໂຮງງານຜະລິດແປ້ງມັນຕົ້ນ ຢູ່ແຂວງບໍລິຄຳໄຊ, ໂຮງສີເຂົ້າທັນສະໄໝ ຢູ່ແຂວງສະຫວັນນະເຂດ; ໄດ້ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ເຊັ່ນ: ເຫຼັກ, ກົ່ວ, ຊືນ, ຫີນປູນ, ເກືອກາລີ, ແຮ່ບາລິດ, ແຜ່ນຢິບຊຳ, ສັງກະສີ, ບີສະມຸດ, ເລລູລຽມ ແລະ ອື່ນໆ ຢູ່ແຂວງຄຳມ່ວນ ແລະ ນະຄອນຫຼວງວຽງຈັນ ເພື່ອສະໜອງພາຍໃນ ແລະ ສົ່ງອອກຕ່າງປະເທດ. ດ້ານໂຄງລ່າງພື້ນຖານກໍ່ໄດ້ຮັບການກໍ່ສ້າງ ແລະ ປັບປຸງໃໝ່ເປັນຈຳນວນຫຼວງຫຼາຍ ອັນພົ້ນເດັ່ນແມ່ນ ໂຄງການກໍ່ສ້າງ ແລະ ປັບປຸງລະບົບຊົນລະປະທານເຂດທົ່ງຮາບເຊບັ້ງໄຟ, ຊົນລະປະທານຫ້ວຍທ່າຮາວ, ສຳເລັດການກໍ່ສ້າງເສັ້ນທາງເບຕົງ ສີເກີດ-ຕານມີໄຊ, ພັດທະນາເສັ້ນທາງແຕ່ເມືອງໄຊຈຳພອນ-ຊາຍແດນແຫ່ງທຸຍ ສສ ຫວຽດນາມ, ກໍ່ສ້າງເສັ້ນທາງເທດສະບານເມືອງປາກຊັນ (ເບີ 1, 2, 3, 4), ກໍ່ສ້າງເສັ້ນທາງເບຕົງນະຄອນໄກສອນ ພົມວິຫານ, ໂຄງການກໍ່ສ້າງທາງປູຢາງ 2 ຊັ້ນ ເສັ້ນທາງຫຼວງແຫ່ງຊາດ 1G ຫາ ຊາຍແດນແຂວງສາລະວັນ, ຍົກລະດັບ ແລະ ສ້ອມແປງທາງຫຼວງແຫ່ງຊາດ (ເສັ້ນທາງເລກ 9) ເພື່ອຂົນສົ່ງ ແລະ ຈໍລະຈອນສິນຄ້າ.

- ພາກໃຕ້: ແມ່ນມີທ່າແຮງໃນການຜະລິດກະສິກຳ, ໃນໄລຍະ 5 ປີຜ່ານມາ ອັດຕາການຂະຫຍາຍຕົວເສດຖະກິດ ສະເລ່ຍເພີ່ມຂຶ້ນ 7,13 %, ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນປີ 2020 ປະມານ 18,47 ລ້ານກີບ. ດ້ານກະສິກຳ ໄດ້ສຸມໃສ່ການປູກພືດທີ່ເປັນທ່າແຮງ ເພື່ອຜະລິດສະບຽງອາຫານ ແລະ ສິນຄ້າ ເດັ່ນກວ່າໝູ່ການປູກກາເຟ , ມັນຕົ້ນ, ໝາກມ່ວງຫິມະພານ, ໝາກນອດ; ໄດ້ສົ່ງເສີມການຜະລິດກະສິກຳ ແບບສັນຍາ ຫຼື Contract Farmming ປູກກະຫຼ່ຳ, ກ້ວຍ, ສາລີ ແລະ ໝາກນອດ ຢູ່ແຂວງຈຳປາສັກ, ປູກອ້ອຍ ແລະ ໝາກເຜັດ ຢູ່ເມືອງພູວົງ, ປູກໜໍ່ບົ່ງຫວານເພື່ອສົ່ງອອກ ສສ ຫວຽດນາມ ຢູ່ເມືອງທ່າແຕງ ແລະ ປູກເຂົ້າ ຢູ່ແຂວງສາລະວັນ. ດ້ານອຸດສາຫະກຳ ໄດ້ສ້າງຕັ້ງເຂດເສດຖະກິດພິເສດ ແຂວງຈຳປາສັກ, ປັດຈຸບັນ ສາມາດອະນຸມັດການລົງທຶນ ໃນເຂດອຸດສາຫະກຳປາກເຊ-ຍີ່ປຸ່ນ ແລະ ເຂດເສດຖະກິດໃໝ່ສີທັນດອນ ແລະ ເຂດເສດຖະກິດວັງເຕົ່າ-ໂພນທອງ ເຊິ່ງສາມາດສ້າງວຽກເຮັດງານທຳ ແລະ ຍູ້ການຜະລິດເພີ່ມຂຶ້ນ. ການຜະລິດອຸດສາຫະກຳປຸງແຕ່ງ ທີ່ເດັ່ນກວ່າໝູ່ແມ່ນອຸດສາຫະກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ, ປຸງແຕ່ງໄມ້, ແຮ່ທາດ, ເຄມີ ແລະ ເຄື່ອງກໍ່ສ້າງ ແລະ ຮັບໃຊ້ຫ້ອງການ. ດ້ານໂຄງລ່າງພື້ນຖານກໍ່ໄດ້ມີການພັດທະນາຫຼາຍພໍສົມຄວນ ເປັນຕົ້ນ: ໂຄງການກໍ່ສ້າງຂົວເບຕົງເຊໂດນ 3, ໂຄງການກໍ່ສ້າງຂະຫຍາຍທາງເບຕົງ 9 ເໜືອ ຫາ 9 ໃຕ້, ໂຄງການກໍ່ສ້າງທາງປູອັດສຟານ 14 ກໍ (ແຕ່ທາງຄົບ-ດອນຕະລາດ ເມືອງສຸຂຸມາ), ກໍ່ສ້າງດ່ານສາກົນວັງເຕົ່າ ເມືອງໂພນທອງ (ຊາຍແດນລາວ-ໄທ), ໂຄງການເສັ້ນທາງລຽບຊາຍແດນເບື້ອງຕາເວັນອອກ ຊາຍແດນສະຫວັນນະເຂດ-ສາລະວັນ-ເຊກອງ, ໂຄງການກໍ່ສ້າງທາງດິນແດງປະສົມ ແຕ່ ບ້ານປະໂສມ ຫາ ບ້ານທົ່ງສະ ເມືອງຕະໂອ້ຍ; ໂຄງການກໍ່ສ້າງເສັ້ນທາງເຂົ້າແຫຼ່ງທ່ອງທ່ຽວພູຜາສຸກ ແຂວງສາລະວັນ, ໂຄງການກໍ່ສ້າງຂົວຂ້າມນ້ຳເຊກອງ; ໂຄງການກໍ່ສ້າງຕະຝັ່ງເຈື່ອນ ບ້ານເຊກອງ ເມືອງສາມັກຄີໄຊ, ກໍ່ສ້າງທາງປູຢາງ 2 ຊັ້ນທາງເລກທີ 1J ແຂວງອັດຕະປື, ສຳເລັດກໍ່ສ້າງທາງ 15A, ທາງ 16B (ເຊກອງ-ດາກຈຶງ) ເຊິ່ງໄດ້ອຳນວຍໃຫ້ແກ່ປະຊາຊົນໃນການໄປມາຫາສູ່ກັນ, ແລກປ່ຽນຊື້-ຂາຍສິນຄ້າ ມີຄວາມສະດວກຫຼາຍຂຶ້ນ.

ໂດຍລວມແລ້ວ ເຖິງວ່າການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນມີຄວາມຄືບໜ້າດີ ແລະ ມີຜົນສຳເລັດຫຼາຍດ້ານກໍຕາມ ແຕ່ຍັງເຫັນວ່າ ສຳພັນເສດຖະກິດຍັງບໍ່ເປັນລະບົບເທົ່າທີ່ຄວນ ເປັນຕົ້ນແມ່ນການຜະລິດ, ການບໍລິການ ແລະ

ການຊື້-ຂາຍແລກປ່ຽນສິນຄ້າກະສິກຳ ແລະ ສິນຄ້າຕ່າງໆ ຍັງບໍ່ທັນເປັນລະບົບຕ່ອງໂສ້ ໃນການແລກປ່ຽນ ແລະ ອູ້ມຊູຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງບ້ານ, ເມືອງ ແລະ ແຂວງ, ນະຄອນຫຼວງ.

**(5) ແຜນວຽກຈຸດສຸມ 5: ພັດທະນາກຳລັງແຮງງານໃຫ້ມີຄຸນນະພາບ, ດຸໝັ່ນ ແລະ ອົດທົນ**

ລັດຖະບານ ໄດ້ພະຍາຍາມສູງໃນການພັດທະນາສີມືແຮງງານໃຫ້ມີຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ ດ້ວຍການດຳເນີນຫຼາຍກິດຈະກຳ ເປັນຕົ້ນ: ໄດ້ສຳເລັດສ້າງມາດຕະຖານສີມືແຮງງານແຫ່ງຊາດ 5 ສາຂາອາຊີບ (ແຜນການ: 25 ສາຂາອາຊີບ); ທົດສອບ ແລະ ອອກໃບຢັ້ງຢືນສີມືແຮງງານຕາມມາດຕະຖານສີມືແຮງງານແຫ່ງຊາດ ໃນ 3 ຂະແໜງ ຄື: ກະສິກຳ, ອຸດສາຫະກຳ ແລະ ບໍລິການ ຈຳນວນ 9.582 ຄົນ, ເປັນຍິງ 3.147 ຄົນ ເທົ່າກັບ 76,66% ຂອງແຜນການ (ແຜນການ: 12.500 ຄົນ), ໄດ້ຈັດການແຂ່ງຂັນສີມືແຮງງານລະດັບຊາດຈຳນວນ 2 ຄັ້ງ ໃນ 7 ສາຂາຊ່າງ, ມີຜູ້ເຂົ້າຮ່ວມທັງໝົດ 131 ຄົນ ເທົ່າກັບ 40% ຂອງແຜນການ. ສົ່ງເສີມສະຖາບັນພັດທະນາສີມືແຮງງານ, ບັນດາໂຮງຮຽນ, ສູນຝຶກວິຊາຊີບ ທັງພາກລັດ ແລະ ເອກະຊົນ, ຫົວໜ່ວຍແຮງງານ ແລະພາກສ່ວນທີ່ກ່ຽວຂ້ອງຝຶກ ແລະ ພັດທະນາສີມືແຮງງານ ໄດ້ທັງໝົດ 419.264 ຄົນ, ເປັນຍິງ 184.556 ຄົນ ເທົ່າກັບ 64% ຂອງແຜນການ (ແຜນການ: 658.000 ຄົນ); ສົ່ງເສີມ ແລະ ປະສານສົມທົບກັບບັນດາຫົວໜ່ວຍຈັດຫາງານທັງພາກລັດ ແລະ ພາກເອກະຊົນໃນການສະໜອງແຮງງານເຂົ້າສູ່ຕະຫຼາດແຮງງານເຮັດວຽກຢູ່ພາຍໃນ ແລະ ຕ່າງປະເທດໄດ້ທັງໝົດ 559.533 ຄົນ, ເປັນຍິງ 243.120 ຄົນ ເທົ່າກັບ 78% ຂອງແຜນການ (ແຜນການ: 716.193 ຄົນ), ໃນນີ້: ໄດ້ສະໜອງຢູ່ພາຍໃນ 251.974 ຄົນ, ເປັນຍິງ 82.966 ຄົນ ແລະ ຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ ລວມທັງປັບສະຖານະພາບແຮງງານລາວ ຢູ່ໄທ ໄດ້ 307.559 ຄົນ, ເປັນຍິງ 160.154 ຄົນ.

ຜົນການສຳຫຼວດແຮງງານໃນປີ 2017 ເຫັນວ່າ ປະຊາກອນທີ່ຢູ່ໃນເກນອອກແຮງງານມີ 4,7 ລ້ານຄົນ (ຄາດຄະເນປະຊາກອນ 6,9 ລ້ານຄົນ), ໃນນີ້ ຜູ້ອອກແຮງງານທີ່ມີຜົນຕໍ່ເສດຖະກິດມີ 1,95 ລ້ານຄົນ ກວມ 40,8% ຂອງປະຊາກອນໃນເກນອາຍຸອອກແຮງງານ, ໃນນີ້ ມີວຽກເຮັດງານທຳແລ້ວ 1,75 ລ້ານຄົນ; ອັດຕາການຫວ່າງງານ 9,4% ແລະ ໃນປີ 2020 ບັນດາຫົວໜ່ວຍທຸລະກິດ ແລະ ໂຮງງານທີ່ຢູ່ຕ່າງປະເທດ ແລະ ພາຍໃນ ໄດ້ຮັບຜົນກະທົບຈາກພະຍາດ ໂຄວິດ-19 ເຮັດໃຫ້ແຮງງານລາວກັບຄືນ ແລະ ແຮງງານພາຍໃນກໍຖືກເລີກຈ້າງ ຈຶ່ງເຮັດໃຫ້ອັດຕາຫວ່າງງານສູງເຖິງ 20%.

ອັດຕາສ່ວນການຈ້າງງານແບ່ງຕາມຂະແໜງການ (ມີວຽກເຮັດງານທຳ 1,75 ລ້ານຄົນ): ຂະແໜງກະສິກຳ, ປ່າໄມ້ ແລະ ການປະມົງ ກວມເອົາ 35,8%, ການຄ້າຂາຍ (ຂາຍຍົກ ແລະ ຂາຍຍ່ອຍ) ກວມເອົາ 21,4%, ຂະແໜງການຜະລິດກວມເອົາ 9% ຂອງການຈ້າງງານທັງໝົດ, ຂະແໜງການໄຟຟ້າ ແລະ ບໍ່ແຮ່ ກວມເອົາ 0,7% ແລະ 0,5% ແລະ ຂະແໜງການອື່ນໆ ກວມເອົາ 32,6%.

ສັງລວມແລ້ວ, ເຖິງແມ່ນວ່າ ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳຈະມີການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ, ແຕ່ປະສິດທິພາບຂອງແຮງງານຍັງບໍ່ມີການປ່ຽນແປງຫຼາຍ, ການຝຶກອົບຮົມ ແລະ ການນຳໃຊ້ຫຼັກສູດໃນວຽກງານຕົວຈິງແມ່ນຍັງມີຄວາມຈຳກັດຢູ່, ການລົງທຶນຂອງລັດ ແລະ ເອກະຊົນ ເຂົ້າສູ່ວຽກງານພັດທະນາສີມືແຮງງານຍັງຈຳກັດ ແລະ ບໍ່ມີຈຸດສຸມດ້ານສາຂາອາຊີບ. ນອກຈາກນັ້ນ, ການພັດທະນາສີມື ແລະ ສະໜອງກຳລັງແຮງງານຍັງບໍ່ສາມາດຕອບສະໜອງໄດ້ກັບຄວາມຕ້ອງການໃນຂະແໜງການທີ່ສຳຄັນ ແລະ ໂຄງການລົງທຶນຂະໜາດໃຫຍ່. ຂະແໜງໄຟຟ້າ ແລະ ບໍ່ແຮ່ ເປັນຂະແໜງການທີ່ປະກອບສ່ວນຫຼາຍຕໍ່ການເຕີບໂຕຂອງເສດຖະກິດ, ແຕ່ການສ້າງວຽກເຮັດງານທຳໃນຂະແໜງການດັ່ງກ່າວຍັງມີໜ້ອຍ; ຜູ້ຢູ່ນອກກຳລັງແຮງງານຍັງກວມສ່ວນຫຼາຍ ໂດຍສະເພາະແຮງງານໃນຊົນນະບົດ ຍັງບໍ່ທັນປ່ຽນແປງອາຊີບ ແລະ ບໍ່ທັນປະກອບການໃຫ້ຫຼາຍເທົ່າທີ່ຄວນ.

**(6) ແຜນວຽກຈຸດສຸມ 6: ພັດທະນາຜູ້ປະກອບການ, ສ້າງວິຊາການ ແລະ ຜູ້ຊຳນານງານ**

ລັດຖະບານ ຖືສຳຄັນໃນການພັດທະນາຄົນໃຫ້ມີຄວາມຮູ້ ແລະ ຄວາມສາມາດທີ່ຫຼາກຫຼາຍສາຂາວິຊາຊີບ ເພື່ອປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໂດຍສຸມໃສ່ປັບປຸງຫຼັກສູດ

ແລະ ສ້າງໂອກາດການເຂົ້າຮຽນອາຊີວະສຶກສາ ເປັນຕົ້ນ: ໄດ້ປັບປຸງຫຼັກສູດຄູອາຊີວະສຶກສາ ລະດັບປະລິນຍາຕີ 3 ສາຂາ ຄື: ເຕັກໂນໂລຊີໄຟຟ້າ, ເຕັກໂນໂລຊີກົນຈັກ ແລະ ວິສະວະກຳໂຍທາ ແລະ ໄດ້ມີການພັດທະນາ ແລະ ປັບປຸງຫຼັກສູດສາຂາວິຊາຕ່າງໆ ເປັນຕົ້ນ: ກົນຈັກໂຮງງານ, ຊ່າງສ້ອມແປງກົນຈັກຂະໜາດນ້ອຍ, ຊ່າງກໍ່ສ້າງ, ຊ່າງໄມ້, ປູກຝັງ ແລະ ລ້ຽງສັດ. ມາຮອດປັດຈຸບັນທົ່ວປະເທດ ມີການຈັດຕັ້ງປະຕິບັດການຮຽນ-ການສອນ ຢູ່ສະຖານອາຊີວະສຶກສາພາກລັດ ໃນຂອບເຂດທົ່ວປະເທດ ທັງໝົດ 25 ແຫ່ງ ໃນນີ້ ມີສະຖາບັນ 1 ແຫ່ງ, ສູນພັດທະນາ 1 ແຫ່ງ, ວິທະຍາໄລ 11 ແຫ່ງ, ໂຮງຮຽນເຕັກນິກ-ວິຊາຊີບແບບປະສົມ 8 ແຫ່ງ ແລະ ໂຮງຮຽນເຕັກນິກ-ວິຊາຊີບ 3 ແຫ່ງ ແລະ ໂຮງຮຽນວິຊາຊີບ 1 ແຫ່ງ, ສາມາດປະຕິບັດສຳເລັດຕາມຄາດໝາຍຂອງແຜນການ 5 ປີ ທີ່ວາງໄວ້; ພ້ອມກັນນັ້ນ, ໄດ້ມີນະໂຍບາຍເບ້ຍລ້ຽງ ແລະ ນະໂຍບາຍອື່ນໆ ເພື່ອຊຸກຍູ້ສົ່ງເສີມນັກຮຽນທີ່ຈົບສາມັນສຶກສາເຂົ້າຮຽນໃນສາຍອາຊີວະສຶກສາ ເຊິ່ງໄດ້ເຮັດໃຫ້ມີນັກຮຽນເຂົ້າຮຽນອະຊີວະສຶກສາເພີ່ມຂຶ້ນທຸກໆປີ. ໃນສົກປີ 2019-2020 ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ 3,8% ໄດ້ເຂົ້າຮຽນອາຊີວະສຶກສາ ແລະ ນັກຮຽນທີ່ຈົບມັດທະຍົມຕອນປາຍ 18,04% ເຂົ້າຮຽນອາຊີວະສຶກສາ.

ຄຽງຄູ່ກັນນັ້ນ, ລັດຖະບານ ຍັງໄດ້ເອົາໃຈໃສ່ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງ ໂດຍສຸມໃສ່ປະຕິບັດ 7 ນະໂຍບາຍ, 43 ມາດຕະການ, ໂຄງການ ແລະ ກິດຈະກຳ ຂອງແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຄື: (1) ນະໂຍບາຍສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ, (2) ນະໂຍບາຍສົ່ງເສີມການເຂົ້າເຖິງແຫຼ່ງທຶນ, (3) ນະໂຍບາຍການສົ່ງເສີມການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ, (4) ນະໂຍບາຍເຂົ້າເຖິງ ແລະ ຂະຫຍາຍການຕະຫຼາດ, (5) ນະໂຍບາຍສ້າງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່, (6) ນະໂຍບາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງ ແລະ ດຳເນີນທຸລະກິດ ແລະ (7) ນະໂຍບາຍພາສີ-ອາກອນ ແລະ ດ້ານການເງິນ. ອັນພົ້ນເດັ່ນ: ໄດ້ໃຫ້ຄຳປຶກສາ, ຝຶກອົບຮົມ ແລະ ຕິດຕາມປະເມີນຜົນ ກ່ຽວກັບການຜະລິດທີ່ດີ (Good Manufacturing Practice: GPM) ໃຫ້ກຸ່ມໂຮງສີເຂົ້າ, ໄດ້ຢັ້ງຢືນລະບົບບໍລິຫານຄຸນນະພາບ (ISO 9001) ແລະ ລະບົບຄວາມປອດໄພດ້ານອາຫານໃຫ້ໂຮງງານເກືອເວີນຄຳ; ໄດ້ສ້າງໂອກາດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ເຂົ້າເຖິງສິນເຊື່ອທະນາຄານ ດ້ວຍກອງທຶນ SMEs ແລະ ເງິນກູ້ຈາກ ສປ ຈີນ ຜ່ານທະນາຄານທຸລະກິດ; ໄດ້ສ້າງສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ 4 ສູນ ຢູ່ 4 ແຂວງ ຄື: ນະຄອນຫຼວງວຽງຈັນ, ຫຼວງພະບາງ, ສະຫວັນນະເຂດ, ຈໍາປາສັກ ເພື່ອສະໜອງການບໍລິການຕ່າງໆ; ໄດ້ສຳເລັດການສ້າງເວັບໄຊ (www.plaosme.com) ເພື່ອຍົກລະດັບການເຂົ້າເຖິງຕະຫຼາດໂດຍຜ່ານລະບົບການຊື້-ຂາຍອອນລາຍ. ຜ່ານການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ເຫັນວ່າ ຫຼາຍຫົວໜ່ວຍວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດປັບປຸງທຸລະກິດຂອງຕົນໃຫ້ມີຄຸນນະພາບສູງຂຶ້ນ ແລະ ສາມາດເຂົ້າເຖິງຕະຫຼາດພາຍໃນ ແລະ ຕ່າງປະເທດຫຼາຍຂຶ້ນ.

ສັງລວມແລ້ວ, ເຖິງແມ່ນວ່າລັດຖະບານໄດ້ດຳເນີນນະໂຍບາຍສຳຄັນຕ່າງໆ ເພື່ອສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜູ້ປະກອບການ ໃຫ້ມີຄວາມເຂັ້ມແຂງ, ແຕ່ເຫັນວ່າຍັງມີອຸປະສັກຕໍ່ການເຂົ້າເຖິງການບໍລິການດ້ານທຸລະກິດ, ເຕັກໂນໂລຊີ ແລະ ການເງິນ ໂດຍສະເພາະການເຂົ້າເຖິງສິນເຊື່ອແບບທີ່ບໍ່ມີຊັບສິນຄົງທີ່ຄໍ້າປະກັນ. ຄຽງຄູ່ກັນນັ້ນ, ຫົວໜ່ວຍທຸລະກິດເອງຕ້ອງໄດ້ປັບປຸງຫຼາຍດ້ານ ເປັນຕົ້ນ ຕ້ອງມີແຜນທຸລະກິດທີ່ເປັນໄປໄດ້ ແລະ ໜ້າເຊື່ອຖື, ການຄຸ້ມຄອງບໍລິຫານ ແລະ ການປັບປຸງລະບົບການລາຍງານບັນຊີ ແລະ ການເງິນ ເພື່ອໃຫ້ສາມາດເຂົ້າເຖິງແຫຼ່ງທຶນຫຼາຍຂຶ້ນ. ນອກຈາກນັ້ນ, ຕ້ອງສົ່ງເສີມ ແລະ ສະໜັບສະໜູນຫົວໜ່ວຍທຸລະກິດຂອງລາວ ນຳໃຊ້ໂອກາດຈາກການເປີດກວ້າງ ແລະ ການເຊື່ອມໂຍງໃນພາກພື້ນ ແລະ ສາກົນໃຫ້ມີປະສິດທິຜົນສູງກວ່າເກົ່າ.

**(7) ແຜນວຽກຈຸດສຸມ 7: ເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ**

- ການພົວພັນຮ່ວມມືສາກົນ ຂອງ ສປປ ລາວ ໄດ້ມີບາດກ້າວຂະຫຍາຍຕົວດີສົມຄວນ ໂດຍສະເພາະ ການຮ່ວມມືສອງຝ່າຍກັບ ສສ ຫວຽດນາມ, ສປ ຈີນ, ລຸກຊຳບວກ, ຝຣັ່ງ, ໄທ, ອິດສະຕາລີ, ສະວິດເຊີແລນ, ສ.ເກົາຫຼີ ແລະ ຍີ່ປຸ່ນ ອັນພົ້ນເດັ່ນ ມີການແລກປ່ຽນຢ້ຽມຢາມເຊິ່ງກັນ ແລະ ກັນ ໃນທຸກລະດັບກັບ ສສ ຫວຽດນາມ, ການລົງນາມແຜນແມ່ບົດການຮ່ວມມື ໜຶ່ງແລວ ໜຶ່ງເສັ້ນທາງ ລະຫວ່າງ ສປປ ລາວ ກັບ ສປ ຈີນ ແລະ ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ, ການ

ລົງນາມເຊັນສັນຍາຂອບການຮ່ວມມືທາງດ້ານການເງິນລະຫວ່າງລັດຖະບານລາວ ແລະ ສະວິດເຊີແລນ. ການຮ່ວມມືຫຼາຍຝ່າຍ ໂດຍລວມແມ່ນສາມາດປະຕິບັດໄປຕາມຂອບແຜນການຮ່ວມມືຕ່າງໆ ເປັນຕົ້ນ ໄດ້ເຊັນສັນຍາຮ່ວມມືລະຫວ່າງລັດຖະບານລາວກັບອົງການອາຫານ ແລະ ການກະສິກຳ, ໄດ້ທົບທວນແຜນງານດ້ານການຮ່ວມມືລະຫວ່າງລັດຖະບານລາວກັບອົງການສະຫະປະຊາຊາດເພື່ອການພັດທະນາ, ອົງການສະຫະປະຊາຊາດກອງທຶນສຳລັບເດັກ ແລະ ອົງການສະຫະປະຊາຊາດກອງທຶນປະຊາກອນ ແລະ ອົງການອື່ນໆ. ການຮ່ວມມືກັບສະຖາບັນການເງິນສາກົນຕ່າງໆ ຍັງສືບຕໍ່ດຳເນີນໄປດ້ວຍດີ ແລະ ໄດ້ປັບປຸງນະໂຍບາຍການຮ່ວມມືນຳກັນ ເພື່ອຮັບປະກັນໄດ້ການພັດທະນາທີ່ຍືນຍົງ. (ປະສານກົມຮ່ວມມືສາກົນ ເພື່ອຂໍຂໍ້ມູນກ່ຽວກັບ ລາຍຊື່ກອບການຮ່ວມມື ຮ່ວມກັບ ບັນດາ ອົງການຈັດຕັ້ງສາກົນຢູ່ ສປປ ລາວ)

- ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ມີຄວາມຄືບໜ້າ ແລະ ໄດ້ຮັບຜົນສຳເລັດເປັນຢ່າງດີ:

- ຂອບການຮ່ວມມືການຄ້າສອງຝ່າຍ: ສປປ ລາວ ໄດ້ມີການພົວພັນການຄ້າກັບປະເທດຄູ່ຄ້າຫຼາຍກວ່າ 60 ປະເທດໃນທົ່ວໂລກ ແລະ ໄດ້ລົງນາມໃນສັນຍາການຄ້າສອງຝ່າຍກັບ 15 ປະເທດ. ໃນນີ້, ມີ 2 ສັນຍາທີ່ເປັນສັນຍາເປີດຕະຫຼາດ (FTA) ຄື: ສັນຍາການຄ້າລະຫວ່າງ ສປປ ລາວ ກັບ ສສ ຫວຽດນາມ ແລະ ສັນຍາການຄ້າລະຫວ່າງ ສປປ ລາວ ກັບ ສະຫະລັດອາເມລິກາ. ບົນພື້ນຖານໃນການເສີມຂະຫຍາຍ ແລະ ຮັດແໜ້ນການພົວພັນການຄ້າກັບປະເທດຄູ່ຄ້າເພື່ອນຍຸດທະສາດທີ່ມີແລ້ວນັ້ນ ຍັງເປີດກວ້າງການພົວພັນການຄ້າກັບປະເທດຄູ່ຄ້າທີ່ມີທ່າແຮງຕື່ມອີກ.

- ຂອບການຮ່ວມມືພາຍໃຕ້ການຄ້າຫຼາຍຝ່າຍ: ໄດ້ປັບປຸງ ແລະ ຮ່າງນິຕິກຳຫຼາຍກ່ວາ 100 ສະບັບ, ຫຼຸດອັດຕາພາສີໄດ້ ຈຳນວນ 1.032 ລາຍການ (ໃນທັງໝົດ 10.600 ລາຍການທີ່ໄດ້ເຈລະຈາ); ສ້າງຕັ້ງຈຸດສອບຖາມການຄ້າດ້ານການບໍລິການ ເຊິ່ງເປັນສູນຂໍ້ມູນຂ່າວສານການຄ້າດ້ານການບໍລິການຂອງ ສປປ ລາວ (Laos Services Portal); ສຳເລັດການປະກາດໃຊ້ກົດໝາຍວ່າດ້ວຍການປົກປ້ອງຜົນກະທົບຈາກການນຳເຂົ້າ ພາຍໃຕ້ພັນທະສັນຍາອົງການການຄ້າໂລກ, ໄດ້ສຳເລັດຂັ້ນຕອນການໃຫ້ສັດຕະຍາບັນຮັບຮອງເອົາສັນຍາວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ (TFA) ແລະ ອະນຸສັນຍາດັດແກ້ສັນຍາວ່າດ້ວຍສິດທາງດ້ານຊັບສິນທາງປັນຍາ ທີ່ຕິດພັນກັບການຄ້າ (TRIPS), ແຈ້ງການໃຫ້ກອງເລຂາອົງການການຄ້າໂລກ ໄດ້ຮັບຊາບກ່ຽວກັບຫຼັກການປະຕິບັດທີ່ດີ (Code of Good Practice) ພາຍໃຕ້ສັນຍາວ່າດ້ວຍເຕັກນິກ ທີ່ເປັນອຸປະສັກຕໍ່ການຄ້າ (TBT); ສຳເລັດຮ່າງຂໍ້ຕົກລົງວ່າດ້ວຍການນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຜູ້ຄ້າຕ່າງປະເທດ; ສຳເລັດການກຳນົດມາດຕະການທີ່ນອນໃນໝວດ B ແລະ ໝວດ C ຂອງສັນຍາວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ ໃນຂອບອົງການການຄ້າໂລກ ແລະ ອື່ນໆ.

- ຂອບການຮ່ວມມືອາຊຽນ: ໄດ້ສຳເລັດເຊັນສັນຍາການຄ້າເສລີກັບ 6 ຄູ່ຮ່ວມເຈລະຈາ ຄື: ສປ ຈີນ, ສ.ເກົາຫຼີ, ຍີ່ປຸ່ນ, ອົດສະຕາລີ-ນີວຊີແລນ ແລະ ອິນເດຍ ວ່າດ້ວຍການເຊື່ອມໂຍງດ້ານການຄ້າເຂົ້າກັບຕະຫຼາດສາກົນ ດ້ວຍການສ້າງເຂດເສລີລະຫວ່າງອາຊຽນ ກັບຄູ່ເຈລະຈາບົນພື້ນຖານຄວາມເປັນແກນກາງ; ສຳເລັດການໃຫ້ສັດຕະຍາບັນແກ່ສັນຍາລົງທຶນອາຊຽນ-ອິນເດຍ; ໄດ້ລົງນາມອານຸສັນຍາເພື່ອຈັດຕັ້ງປະຕິບັດລະບົບການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງອາຊຽນ, ຂອບສັນຍາການຄ້າການບໍລິການອາຊຽນ (AFAS 10), ການຄ້າທາງອີເລັກໂທຣນິກຂອງອາຊຽນ ແລະ ການເຈລະຈາຄູ່ຮ່ວມມືເສດຖະກິດຮອບດ້ານລະດັບພາກພື້ນ (RCEP) ສາມາດປະຕິບັດໄດ້ 7 ສະບັບ ແລະ ຍັງ 13 ສະບັບ; ສຳເລັດການລົງນາມໃນສັນຍາການຄ້າດ້ານການບໍລິການໃນອາຊຽນ (ATISA ), ອະນຸສັນຍາສະບັບທີ 4 ກ່ຽວກັບການປັບປຸງສັນຍາວ່າດ້ວຍການລົງທຶນຮອບດ້ານອາຊຽນ ແລະ ອື່ນໆ.

- ຂອບການຮ່ວມມືກັບອະນຸພາກພື້ນ ມີຄວາມຄືບໜ້າດີ ເປັນຕົ້ນ: ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA) ແມ່ນໄດ້ສຳເລັດການເຈລະຈາເປີດຕະຫຼາດການຄ້າສິນຄ້າຮອບທີ 4 ແລະ ສືບຕໍ່ເຈລະຈາເປີດຕະຫຼາດ ດ້ານບໍລິການ, ການລົງທຶນ ແລະ ການອຳນວຍຄວາມສະດວກການຄ້າ; ການຮ່ວມມືເຂດສາມຫຼ່ຽມພັດທະນາກຳປູເຈຍ-ລາວ-ຫວຽດນາມ (CLV-DTA) ໄດ້ມີການເຈລະຈາສັນຍາວ່າດ້ວຍການສົ່ງເສີມ ແລະ ອຳນວຍຄວາມສະດວກດ້ານການຄ້າ

ແລະ ຮ່າງແຜນດຳເນີນງານຂອງສັນຍາດັ່ງກ່າວ; ການຮ່ວມມືແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ແລະ ຂອບຮ່ວມມືອື່ນໆ ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ.

- ດ້ານການເຊື່ອມໂຍງ-ເຊື່ອມຈອດໂຄງລ່າງພື້ນຖານຄົມມະນາຄົມ ເຫັນວ່າມີຄວາມຄືບໜ້າ ແລະ ມີຜົນສຳເລັດດີພໍສົມຄວນ ເປັນຕົ້ນ ແມ່ນໄດ້ສຳເລັດໂຄງການກໍ່ສ້າງທາງ 6A ທາງລ້ອງ-ສົບເບົາ, ໂຄງການກໍ່ສ້າງທາງ 6B ສົບເບົາ-ປ່າຮ່າງ, ໂຄງການກໍ່ສ້າງທາງບ້ານຮອກ-ເມືອງຄອບ-ປາກຄອບ-ກ້ອນຕື້ນ, ໂຄງການກໍ່ສ້າງທາງທົ່ງສາ-ຊຽງແມນ, ໂຄງການສ້ອມແປງທາງເລກ 9 ແຕ່ສະຫວັນນະເຂດ ຫາຊາຍແດນຫວຽດນາມ, ໂຄງການຂະຫຍາຍອາຄານຜູ້ໂດຍສານສະໜາມບິນສາກົນວັດໄຕ, ໂຄງການກໍ່ສ້າງທາງທ່າເຫຼົ່າ-ຊຳໃຕ້, ໂຄງການກໍ່ສ້າງທາງ ສາມແຍກນາຊາງ-ທົ່ງຫູ້, ໂຄງການກໍ່ສ້າງທາງ 16B ເມືອງດາກຈຶງ ຫາ ຊາຍແດນລາວ-ຫວຽດນາມ, ໂຄງການກໍ່ສ້າງທາງດ່ວນວຽງຈັນ-ວັງວຽງ ເປີດນຳໃຊ້ຢ່າງເປັນທາງການ ໃນວັນທີ 20 ທັນວາ 2020 ແລະ ພວມຈັດຕັ້ງປະຕິບັດບັນດາໂຄງການທີ່ສຳຄັນ ເຊັ່ນ: ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ຊ່ວງທີ 1 (ນະຄອນຫຼວງວຽງຈັນ-ບໍ່ເຕັນ) ປັດຈຸບັນມີຄວາມຄືບໜ້າປະມານ 94,49% ຂອງການກໍ່ສ້າງທັງໝົດ, ໃນນີ້ ຊີເຈາະອຸໂມງສຳເລັດ 71 ແຫ່ງ (ທັງໝົດ 75 ແຫ່ງ) ມີຄວາມຍາວ 225.838 ແມັດ, ກໍ່ສ້າງຂົວໄດ້ 165 ແຫ່ງ, ການວາງລາງທາງລົດໄຟ ໄດ້ 202,80 ກິໂລແມັດ (ແຕ່ນະຄອນຫຼວງວຽງຈັນ ຫາ ແຂວງຫຼວງພະບາງ); ໂຄງການກໍ່ສ້າງເລກທີ 11 ແຕ່ ນາສັງ-ໂຄກເຂົ້າດໍ ມີຄວາມຄືບໜ້າ 24,40%, ໂຄງການປັບປຸງຂະຫຍາຍທາງ 13 ເໜືອວຽງຈັນ-ໂພນໂຮງ ມີຄວາມຄືບໜ້າ 8,36% ຂອງມູນຄ່າທັງໝົດ, ໂຄງການກໍ່ສ້າງຂົວຂ້າມນ້ຳຂອງມິດຕະພາບລາວ-ໄທແຫ່ງທີ V (ປາກຊັນ-ບຶງການ) ສຳເລັດການເຊັນສັນຍາ ແລະ ກຳລັງດຳເນີນການໄກ່ເກ່ຍພື້ນທີ່ກໍ່ສ້າງ ໃນເນື້ອທີ່ 52 ເຮັກຕາ, ໂຄງການກໍ່ສ້າງສະໜາມບິນສາກົນໜອງຄ້າງ ແຂວງຫົວພັນ ຄືບໜ້າ 92,34%, ໂຄງການປັບປຸງສະໜາມບິນຫ້ວຍຊາຍ ສຳເລັດ 58,88% ແລະ ການກະກຽມພັດທະນາທ່າທຽບເຮືອ 1,2,3 ທ່າເຮືອຫວຸ້ງອ່າງ.
- ການເຊື່ອມໂຍງໂທລະຄົມມະນາຄົມ ແລະ ການສື່ສານ ມີຜົນສຳເລັດຫຼາຍດ້ານ ເຊິ່ງສະແດງອອກຄື:

ດ້ານໂທລະຄົມ: ສຳເລັດການສົ່ງດາວທຽມລາວແຊັດ-1 ຂຶ້ນສູ່ວົງໂຄຈອນທີ່ຕຳແໜ່ງ 128.5 ອົງສາຕາເວັນອອກ ແລະ ມີສະຖານີພາກພື້ນດິນທີ່ມີລະບົບບັນຊາ, ລະບົບໂທລະພາບ ແລະ ໂທລະຄົມມະນາຄົມ; ສຳເລັດສ້າງສະຖານີກວດຄົ້ນຄວາມຖີ່ວິທະຍຸສື່ສານແບບບໍ່ມີຄົນປະຈຳ (Remote Monitoring Station) ຈຳນວນ 3 ແຫ່ງ ໃນນະຄອນຫຼວງວຽງຈັນ; ໄດ້ຂະຫຍາຍເຄືອຂ່າຍສາຍສົ່ງດ້ວຍສາຍກາບໃຍແກ້ວ (Obtic Fiber) ທາງອາກາດ ແລະ ຝັງດິນໄດ້ 29.445 ກິໂລແມັດ ເຊິ່ງປັດຈຸບັນລວມມີທັງໝົດ 90.258 ກິໂລແມັດ ສາມາດເຊື່ອມໂຍງການສື່ສານ ແຕ່ສູນກາງຮອດເທດສະ ບານແຂວງ ແລະ ເມືອງ; ຂະຫຍາຍສະຖານີຮັບສົ່ງສັນຍານໂທລະສັບມືຖື ໄດ້ 1.106 ສະຖານີ ລວມທັງໝົດ 7.882 ສະຖານີ ເຮັດໃຫ້ເຄືອຄ່າຍສັນຍານໂທລະສັບມືຖື ແຍກຕາມລະບົບ 2G, 3G ແລະ 4G ຄວບຄຸມ 95%, 81% ແລະ 53% ຕາມລຳດັບ ຂອງບ້ານທັງໝົດໃນຂອບເຂດທົ່ວປະເທດ. ລົງທະບຽນນຳໃຊ້ໂທລະສັບຕັ້ງໂຕະມີສາຍ ແລະ ບໍ່ມີສາຍ ທັງໝົດ 1.453.262 ເລກໝາຍ, ໂທລະສັບມືຖື 4.362.183 ເລກໝາຍ, ລວມໂທລະສັບຕັ້ງໂຕະ ແລະ ມືຖືທີ່ໄດ້ລົງທະບຽນແລ້ວ 6.090.188 ເລກໝາຍ ຄິດເປັນ 87 ເລກໝາຍຕໍ່ປະຊາກອນ 100 ຄົນ, ລົງທະບຽນນຳໃຊ້ອິນເຕີເນັດ (ລະບົບມີສາຍ ແລະ ຜ່ານຊິມ 3G) ທັງໝົດ 3.540.020 ບັນຊີ, ມີອັດຕາການຊົມໃຊ້ອິນເຕີເນັດ ກວມເອົາ 51% ຂອງປະຊາກອນທັງໝົດ (ປະຊາກອນ 7 ລ້ານຄົນ).

ດ້ານອິນເຕີເນັດ: ສຳເລັດການລວມສູນລະບົບສື່ສານຜ່ານປະຕູດຽວ, ສຳເລັດການຍົກຍ້າຍລະຫັດຊື່ອິນເຕີເນັດສູງສຸດ ດອດແອວເອ (.LA) ຈາກຕ່າງປະເທດມາຄຸ້ມຄອງຢູ່ລາວ; ໄດ້ຂະຫຍາຍ ແລະ ຍົກລະດັບ ສູນອິນເຕີເນັດແຫ່ງຊາດເປັນສູນກາງເຊື່ອມຕໍ່ພາຍໃນປະເທດ ແລະ ເປັນປະຕູລວມສູນຂາອອກ-ຂາເຂົ້າ ກັບຕ່າງປະເທດ ເປັນຕົ້ນໄດ້ສຳເລັດຂະຫຍາຍລະບົບສູນກາງໂທລະສັບ ແລະ ອິນເຕີເນັດລະຫວ່າງປະເທດສາມາດຮອງຮັບບໍລິມາດການເຊື່ອມຕໍ່ພາຍໃນ ແລະ ຕ່າງປະເທດ, ໄດ້ຂະຫຍາຍລະບົບເຊີເວີທີ່ສາມາດໃຊ້ຮ່ວມກັນໄດ້ ຫຼື ຄລາວ (Cloud) ໃໝ່ ສາມາດຮອງຮັບໄດ້ເຖິງ 1.400 ເຊີເວີ, ໄດ້ໃຫ້ບໍລິການຝາກເວັບໄຊຈາກພາກລັດ ຫຼື ສຳນັກງານ ແລະ ອົງການຕ່າງໆຫຼາຍກວ່າ 1.900 ເວັບໄຊ.

ມາຮອດປັດຈຸບັນ ສປປ ລາວ ມີຈຸດເຊື່ອມຕໍ່ສາຍສົ່ງ ຈໍານວນ 18 ຈຸດ; ໃນນີ້, ໄທ ມີ 6 ຈຸດ, ຫວຽດນາມ ມີ 5 ຈຸດ, ກໍາປູເຈຍ ມີ 2 ຈຸດ, ມຽນມ້າ ມີ 2 ຈຸດ ແລະ ສປ ຈີນ ມີ 3 ຈຸດ ເພື່ອສະດວກໃນການເຊື່ອມຕໍ່ໂທລະຄົມມະນາຄົມ ແລະ ການສື່ສານຂໍ້ມູນຂ່າວສານ.

ການເຊື່ອມໂຍງທາງດ້ານພະລັງງານ: ໃນໄລຍະ 5 ປີ ຜ່ານມາ ສາມາດສົ່ງອອກການສົ່ງອອກກະແສໄຟຟ້າ ໃຫ້ 5 ປະເທດ (ໄທ 123.384 ລ້ານkwh ມູນຄ່າ 6.877 ລ້ານໂດລາສະຫະລັດ, ຫວຽດນາມ 4.926 ລ້ານ kwh ມູນຄ່າ 266 ລ້ານໂດລາສະຫະລັດ, ກໍາປູເຈຍ 1.160 ລ້ານ kwh ມູນຄ່າ 51 ລ້ານໂດລາສະຫະລັດ, ມຽນມ້າ 4 ລ້ານ kwh ມູນຄ່າ 3,8 ແສນໂດລາສະຫະລັດ ແລະ ມາເລເຊຍ 130 ລ້ານ kwh ມູນຄ່າ 8 ລ້ານໂດລາສະຫະລັດ), ເຊິ່ງໃນໄລຍະແຜນການ 5 ປີ ຄັ້ງທີ VIII, ຄາດຄະເນສົ່ງອອກກະແສໄຟຟ້າ 129.605 ລ້ານ kWh (ຕົວເລກສະສົມ 5 ປີ), ມູນຄ່າ 7.203 ລ້ານ ໂດລາສະຫະລັດ, ທຽບໃສ່ຕົວເລກສົ່ງອອກຂອງແຜນການ 5 ປີຄັ້ງທີ VII ເພີ່ມຂຶ້ນ 164%.

ສັງລວມແລ້ວ, ໄລຍະຜ່ານມາ ສປປ ລາວ ໄດ້ຮັບສິດທາງການຄ້າພາຍໃຕ້ບັນດາສັນຍາການຮ່ວມມືຫຼາຍສະບັບ ເປັນຕົ້ນ ໂກຕ້າການສົ່ງອອກສິນຄ້າກະສິກໍາໄປ ສປ ຈີນ ແລະ ການສົ່ງອອກສິນຄ້າໄປເອີຣົບ ແບບບໍ່ມີໂກຕ້າ ແລະ ບໍ່ໄດ້ເສຍພາສີນໍາເຂົ້າ. ແຕ່ເຖິງແນວໃດກໍ່ຕາມ, ຍ້ອນຄວາມຈໍາກັດດ້ານຜະລິດຕະພາບ, ສະມັດຕະພາບຂອງການຜະລິດບໍ່ສູງ, ໄດ້ຮັບຜົນກະທົບຈາກໄພທໍາມະຊາດໜັກໜ່ວງ, ງົບປະມານ ແລະ ເຕັກໂນໂລຊີທີ່ມີຈໍາກັດ ເຮັດໃຫ້ການຜະລິດກະສິກໍາມີຄວາມບອບບາງ ບໍ່ສາມາດສົ່ງອອກສິນຄ້າໄດ້ຕາມປະລິມານ ແລະ ຄຸນນະພາບທີ່ໄດ້ກໍານົດໄວ້.

## 2.2. *ເປົ້າໝາຍ 2: ພັດທະນາຊັບພະຍາກອນມະນຸດ ແລະ ຍົກລະດັບຄວາມອາດສາມາດຂອງບຸກຄະລາກອນຈາກພາກລັດ ແລະ ກໍາລັງແຮງງານຈາກພາກເອກະຊົນ; ຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໄດ້ຮັບການແກ້ໄຂ, ທຸກເຜົ່າຊົນ ແລະ ທຸກເພດໄວສາມາດເຂົ້າເຖິງການສຶກສາ ແລະ ການບໍລິການສາທາລະນະສຸກຢ່າງທົ່ວເຖິງ ແລະ ມີຄຸນນະພາບ, ສົ່ງເສີມການປົກປັກຮັກສາ ແລະ ພັດທະນາເອກະລັກວັດທະນະທໍາອັນດີງາມຂອງຊາດ, ຮັບປະກັນສະຖຽນລະພາບດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຍຸຕິທໍາ ແລະ ໂປ່ງໃສ.*

### (1) ແຜນວຽກຈຸດສຸມ 1: ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໜັກ ແໜ້ນ ແລະ ກວ້າງຂວາງຕາມທິດ 3 ສ້າງ

ບັນດາຂະແໜງການ ແລະ ທ້ອງຖິ່ນ ໄດ້ສືບຕໍ່ປະຕິບັດມະຕິ 03/ກມສພ, ມະຕິ 25/ກມສພ ຂອງກົມການເມືອງສູນກາງພັກ ແລະ ຄໍາສັ່ງເລກທີ 34/ນຍ ຂອງລັດຖະບານ ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ໂດຍເລັ່ງໃສ່ການຈັດສັນບ່ອນທໍາມາຫາກິນ, ການສ້າງບ້ານໃຫຍ່ກາຍເປັນຕົວເມືອງນ້ອຍ, ສະໜອງໂຄງລ່າງພື້ນຖານທີ່ຈໍາເປັນ ພ້ອມທັງ ສົ່ງເສີມດ້ານວິຊາການ ແລະ ການສະໜອງສິນເຊື່ອຜ່ານທະນາຄານນະໂຍບາຍ ໃນປີ 2016-04/2020 ໄດ້ສະໜອງສິນເຊື່ອທັງໝົດ 1.697,55 ຕື້ກີບ. ໃນນັ້ນ, ໄດ້ປ່ອຍກູ້ຢູ່ເມືອງເປົ້າໝາຍທຸກຍາກ 1.286,10 ຕື້ກີບ, ຈຸດສຸມລັດຖະບານ ແລະ ທ້ອງຖິ່ນ 214,88 ຕື້ກີບ, ວຽກງານ 3 ສ້າງມີທັງໝົດ 196,57 ຕື້ກີບ ເພື່ອຊຸກຍູ້ການຜະລິດຂອງປະຊາຊົນ ເຊິ່ງເຮັດໃຫ້ການເຂົ້າເຖິງການບໍລິການຂັ້ນພື້ນຖານ, ລາຍໄດ້ ແລະ ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ.

ອີງຕາມຜົນການສໍາຫຼວດຕາມມາດຖານ 309/ນຍ ຂອງລັດຖະບານ ໃນປີ 2019 ຄອບຄົວທຸກຍາກຍັງເຫຼືອ 62.384 ຄອບຄົວ ຫຼື ເທົ່າກັບ 5,16% ຂອງຄອບຄົວທັງໝົດ.

ອີງຕາມຜົນການສໍາຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຄົວເຮືອນ ຄັ້ງທີ 6 (LECS6) ໂດຍສູນສະຖິຕິແຫ່ງຊາດ ທີ່ໄດ້ໃນປີ 2018-2019 ເຫັນວ່າອັດຕາຄວາມທຸກຍາກ ຍັງເຫຼືອປະມານ 18,3% ຂອງຈໍານວນປະຊາກອນທັງໝົດ (ຫຼຸດລົງຈາກ 23,2% ອີງຕາມຜົນການສໍາຫຼວດ LECS5 ໃນປີ 2012-2013) ຫຼື ເທົ່າກັບ 13,5% ຂອງຈໍານວນຄົວເຮືອນທັງໝົດ (ມະຕິສະພາ: ອັດຕາຄອບຄົວທຸກຍາກໃຫ້ຕໍ່າກວ່າ 10% ໃນປີ 2020).

ໄດ້ສົມທົບກະຊວງສຶກສາທິການ ແລະ ກິລາ ສ້າງ ແລະ ດຳເນີນການສິດສອນຫຼັກສູດການຮຽນວິຊາລະເບີດບໍ່ທັນແຕກຕົກຄ້າງ ຊັ້ນປະຖົມຢູ່ 9 ແຂວງເປົ້າໝາຍ, ໂຄສະນາທີ່ມາ ແລະ ຜົນຮ້າຍຂອງລະເບີດບໍ່ທັນແຕກ ເພື່ອຫຼຸດຜ່ອນຈຳນວນຜູ້ຖືກບາດເຈັບ ໄດ້ 2.203 ບ້ານ, ສຳຫຼວດບໍ່ແມ່ນວິຊາການ ເພື່ອຊອກຫາຈຸດຫຼັກຖານລະເບີດບໍ່ທັນແຕກ ໄດ້ 2.495 ບ້ານ ເທົ່າກັບ 64,62% ຂອງແຜນການ ແລະ ສຳຫຼວດວິຊາການຕາມຈຸດຫຼັກຖານລະເບີດບໍ່ທັນແຕກ ໄດ້ 54.999 ເຮັກຕາ ເທົ່າກັບ 22,35% ຂອງແຜນການ ແລະ ສາມາດກວດກູ້ລະເບີດບໍ່ທັນແຕກທີ່ພົບເຫັນອອກຈາກພື້ນທີ່ໄດ້ 17.805 ເຮັກຕາ ລື່ນແຜນການວາງໄວ້ (ມະຕິສະພາ: 16.000 ເຮັກຕາ), ເກີດອຸປະຕິເຫດຈາກລະເບີດບໍ່ທັນແຕກຕົກຄ້າງ 55 ຄັ້ງ ມີຜູ້ໄດ້ຮັບເຄາະຮ້າຍ 101 ຄົນ,ໃນນີ້ ບາດເຈັບ 87 ຄົນ ແລະ ເສຍຊີວິດ 14 ຄົນ, ໃຫ້ການຊ່ວຍເຫຼືອດ້ານຕ່າງໆ ແກ່ຜູ້ທີ່ໄດ້ຮັບເຄາະຮ້າຍຈາກລະເບີດ 1.583 ຄົນ ລື່ນແຜນການວາງໄວ້ (ມະຕິສະພາ: 1.500 ຄົນ); ໃນນີ້, ການປິ່ນປົວ, ຟື້ນຟູສຸຂະພາບ, ປະກອບອົງຄະທຽມ ຈຳນວນ 1.156 ຄົນ ແລະ ຝຶກວິຊາຊີບ ແລະ ສ້າງເສດຖະກິດຄອບຄົວ 327 ຄົນ.

ເຖິງວ່າມີຜົນສຳເລັດ ແລະ ມີຄວາມຄືບໜ້າຫຼາຍດ້ານໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກກໍຕາມ ແຕ່ກໍມີສິ່ງທ້າທາຍຫຼາຍດ້ານເປັນຕົ້ນ ແມ່ນຄວາມແຕກໂຕນລະຫວ່າງຊົນນະບົດ ແລະ ຕົວເມືອງ, ຄວາມບໍ່ເທົ່າທຽມເພີ່ມຂຶ້ນ ແລະ ການຂາດຊັບພະຍາກອນ, ຄວາມສາມາດໃນການເກັບກູ້ ແລະ ຮັບມືກັບຜົນກະທົບຂອງລະເບີດບໍ່ທັນແຕກ, ຄວາມກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ.

**(2) ແຜນວຽກຈຸດສຸມ 2: ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ**

ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການບໍລິໂພກທີ່ມີໂພຊະນາການ ແລະ ມີຄວາມປອດໄພ. ໃນໄລຍະ 5 ປີ ຜ່ານມາ ລັດຖະບານ ໄດ້ສຸມໃສ່ຈັດຕັ້ງປະຕິບັດໂຄງການຄໍ້າປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ວຽກງານໂພຊະນາການ, ນະໂຍບາຍຊ່ວຍເກີດລູກ ແລະ ປິ່ນປົວເດັກອາຍຸຕໍ່າກວ່າ 5 ປີ ໂດຍບໍ່ເສຍຄ່າ ແລະ ປະຕິບັດກິດຈະກຳການເຊື່ອມສານວຽກງານສົ່ງເສີມໂພຊະນາການໃນຊຸມຊົນ ແລະ ວຽກງານຮັກສາສຸຂະພາບຂັ້ນຕົ້ນດ້ານໂພຊະນາການ ເພື່ອຫຼຸດຜ່ອນສະພາບຂາດສານອາຫານຊໍາເຮື້ອ ໂດຍສະໜອງອາຫານເສີມສຳເລັດຮູບໃຫ້ແມ່ຍິງໃນໄລຍະຖືພາ, ເດັກອາຍຸຕໍ່າກວ່າ 2 ປີ ແລະ ເດັກອາຍຸ 6-23 ເດືອນ ເພື່ອປ້ອງກັນການຂາດສານອາຫານ ໃນໄລຍະ 1.000 ວັນທຳອິດຂອງຊີວິດ ກວມເອົາ 1.110 ບ້ານ ເທົ່າກັບ 95% ຂອງຈຳນວນບ້ານທັງໝົດ ທີ່ນອນໃນທຸກເມືອງ ຂອງ 3 ແຂວງ: ຫຼວງນໍ້າທາ, ອຸດົມໄຊ ແລະ ເຊກອງ, ສະໜອງອຸປະກອນດ້ານໂພຊະນາການ ແລະ ອາຫານໃຫ້ເດັກທີ່ຂາດສານອາຫານ ກວມ 8 ເມືອງ ຢູ່ແຂວງຈຳປາສັກ ແລະ ແຂວງເຊກອງ. ຜ່ານການຈັດຕັ້ງປະຕິບັດຕົວຈິງ ເຫັນວ່າມີຫຼາຍຄາດໝາຍມີຄວາມຄືບໜ້າດີພໍສົມຄວນ ຄື:

- ການຜະລິດສະບຽງອາຫານ ປະເພດຊີ້ນ, ໄຂ່ ແລະ ປາ ມີທ່າອ່ຽງເພີ່ມຂຶ້ນ, ອັດຕາການບໍລິໂພກປະເພດຊີ້ນ, ໄຂ່ ແລະ ປາ ສະເລ່ຍເພີ່ມຂຶ້ນ ຈາກ 55 ກິໂລ/ຄົນ/ປີ ໃນປີ 2016 ມາເປັນ 63 ກິໂລ/ຄົນ/ປີ ໃນປີ 2019 ແລະ ປີ 2020 ຄາດວ່າຈະບັນລຸໄດ້ 65 ກິໂລ/ຄົນ/ປີ.

- ອັດຕາສ່ວນການຂາດສານອາຫານໃນປະຊາກອນໄດ້ຫຼຸດລົງ ຈາກ 42,8% ໃນປີ 1990 ຍັງເຫຼືອ 18,5% ໃນປີ 2015, ເຊິ່ງແມ່ນໜຶ່ງໃນຕົວຊີ້ບອກຂອງດັດຊະນີຊັບສິນມະນຸດ (HAI) ໃນເງື່ອນໄຂການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC).

- ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ ໄດ້ຫຼຸດລົງຈາກ 26,6% ໃນປີ 2012 (LSIS1) ຍັງເຫຼືອ 21,1% ໃນປີ 2017 (LSIS2) ມາເປັນ 20,8% ໃນປີ 2019 ແລະ ປີ 2020 ຄາດວ່າຈະຫຼຸດລົງເຫຼືອ 20,3% (ມະຕິສະພາ: 20%). ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີລວງສູງຕໍ່າກວ່າມາດຕະຖານ ຫຼຸດລົງຈາກ 44,2% ໃນປີ 2012 (LSIS1) ຍັງເຫຼືອ 33% ໃນປີ 2017 (LSIS2), 32,7% ໃນປີ 2019 ແລະ ປີ 2020 ຍັງເຫຼືອ 32,3% (ມະຕິສະພາ: 32%).

ເຖິງຢ່າງໃດກໍ່ຕາມ, ຜົນຜະລິດດ້ານສະບຽງອາຫານຍັງບໍ່ຮັບປະກັນໄດ້ຄວາມຕ້ອງການ ເນື່ອງຈາກການເຊື່ອມໂຊມຂອງດິນ, ບັນຫາການນຳໃຊ້ທີ່ດິນ ແລະ ໂຄງການລົງທຶນຂະໜາດໃຫຍ່ຈຳນວນໜຶ່ງທີ່ກະທົບຕໍ່ເນື້ອທີ່ການຜະລິດຂອງປະຊາຊົນ. ສຳລັບວຽກງານໂພຊະນາການ ເຫັນວ່າ ການລ້ຽງເດັກອ່ອນ, ການປະຕິບັດຫຼັກການດ້ານໂພຊະນາການຍັງບໍ່ທັນໄດ້ດີ ເນື່ອງຈາກ ບາງຄອບຄົວຍັງປະຕິບັດຕາມປະເພນີດັ້ງເດີມ.

**(3) ແຜນວຽກຈຸດສຸມ 3: ທຸກຄົນເຂົ້າເຖິງການສຶກສາໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ**

ໃນໄລຍະ 5 ປີຜ່ານມາ, ໄດ້ເອົາໃຈໃສ່ປະຕິບັດບັນດາວຽກງານຈຸດສຸມຂອງແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ ແລະ ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ເພື່ອສົ່ງເສີມໃຫ້ເດັກທຸກຄົນໃນເກນອາຍຸໄດ້ເຂົ້າເຖິງການສຶກສາທີ່ມີຄຸນນະພາບ ແນໃສ່ເພື່ອພັດທະນາຊັບພະຍາກອນມະນຸດຂອງຊາດ ໃຫ້ມີຄວາມຮູ້ຄວາມສາມາດ ຕາມ 3 ທັດສະນະ ແລະ 5 ຫຼັກມູນຂອງການສຶກສາແຫ່ງຊາດ ນັບແຕ່ການສຶກສາກ່ອນໄວຮຽນຈົນຮອດການສຶກສາລະດັບມະຫາວິທະຍາໄລ ໂດຍເອົາໃຈໃສ່ປັບປຸງຫຼັກສູດການຮຽນໃນທຸກລະດັບ, ສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ, ສະໜອງເງິນບໍລິຫານໂຮງຮຽນໃຫ້ແກ່ໂຮງຮຽນໃນທົ່ວປະເທດ, ສະໜອງສິ່ງຈູງໃຈ ແລະ ນະໂຍບາຍທີ່ຈຳເປັນໃຫ້ແກ່ຄູສອນ ແລະ ນັກຮຽນ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ; ປັບປຸງ ແລະ ກໍ່ສ້າງໂຄງລ່າງພື້ນຖານຈຳນວນໜຶ່ງ ເຊິ່ງເຮັດໃຫ້ວຽກງານການສຶກສາປະຕິບັດໄດ້ດັ່ງນີ້:

+ **ຄາດໝາຍທີ່ສາມາດບັນລຸໄດ້ຕາມແຜນວາງໄວ້ມີຄື:**
  - ອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີ ໄດ້ເພີ່ມຂຶ້ນ ຈາກ 70,9% ໃນສົກຮຽນ 2015-2016 ມາເປັນ 82,7% ໃນປີ 2020 ລື່ນແຜນການວາງໄວ້ (ແຜນການ: ໃຫ້ໄດ້ 80%).
  - ອັດຕາການເຂົ້າຮຽນສຸດທິຂອງຊັ້ນປະຖົມໄດ້ເພີ່ມຂຶ້ນ ຈາກ 98,8% ໃນສົກຮຽນ 2015-2016 ມາເປັນ 99% ໃນປີ 2020 ລື່ນຄາດໝາຍວາງໄວ້ (ແຜນການ: ໃຫ້ໄດ້ 98%).
  - ສັດສ່ວນມວນຊົນທຸກເພດ, ທຸກໄວ ໄດ້ເຂົ້າຮ່ວມການຫັດກາຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາ-ກາຍະກຳ ບັນລຸໄດ້ 30% ຂອງພົນລະເມືອງທັງໝົດ (ແຜນການ: ໃຫ້ໄດ້ 30% ຂອງພົນລະເມືອງທັງໝົດ).
+ **ຄາດໝາຍປະຕິບັດໄດ້ດີຂຶ້ນເມື່ອທຽບໃສ່ສົກຮຽນ 2015-2016 ແຕ່ບໍ່ບັນລຸຄາດໝາຍວາງໄວ້ມີຄື:**
  - ອັດຕາການຄ້າງຫ້ອງຂອງນັກຮຽນ ຂັ້ນປໍ 1 ຫຼຸດລົງ ຈາກ 11,5% ມາເປັນ 6,3% (ແຜນການ: 5%).
  - ອັດຕາການປະລະການຮຽນຂອງນັກຮຽນຊັ້ນປໍ 1 ຫຼຸດລົງຈາກ 7,2% ມາເປັນ 6,4% (ແຜນການ: 5%).
  - ອັດຕາການຄ້າງຫ້ອງຂອງນັກຮຽນຊັ້ນປະຖົມ ຫຼຸດລົງຈາກ 4,8% ມາເປັນ 3,1% (ແຜນການ: 2%).
  - ອັດຕາການປະລະການຮຽນຂອງນັກຮຽນຊັ້ນປະຖົມ ຫຼຸດລົງຈາກ 4,7% ມາເປັນ 4,3% (ມະຕິສະພາ: ໃຫ້ຢູ່ໃນລະດັບ 2%).
  - ອັດຕາການລອດເຫຼືອຮອດ ຂັ້ນ ປ.5 ໄດ້ເພີ່ມຂຶ້ນ ຈາກ 79,6% ມາເປັນ 82,1% ໃນປີ 2020 (ມະຕິສະພາ: ໃຫ້ເພີ່ມຂຶ້ນເປັນ 90%).
  - ອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ໄດ້ເພີ່ມຂຶ້ນຈາກ 82,2% ມາເປັນ 83,3% (ມະຕິສະພາ: ໃຫ້ໄດ້ 85%).
  - ອັດຕາການເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນປາຍ ໄດ້ເພີ່ມຂຶ້ນຈາກ 47,8% ມາເປັນ 54,8% (ມະຕິສະພາ: ໃຫ້ໄດ້ 60%).
  - ອັດຕານັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ສາຍອາຊີວະສຶກສາ ເພີ່ມຂຶ້ນຈາກ 3% ມາເປັນ 3,8% (ແຜນການ: ໃຫ້ໄດ້ 5%).
+ **ຄາດໝາຍທີ່ມີແນວໂນ້ມຖົດຖອຍທຽບໃສ່ປີ 2015 ມີຄື:**
  - ອັດຕາການປະລະການຮຽນໃນຊັ້ນມັດທະຍົມຕອນຕົ້ນ ໄດ້ເພີ່ມຂຶ້ນຈາກ 8,1% ມາເປັນ 10,3% ໃນປີ 2020 (ມະຕິສະພາ: ຢູ່ໃນລະດັບ 2%).

- ອັດຕາການປະລະການຮຽນຊັ້ນມັດທະຍົມຕອນປາຍ ໄດ້ເພີ່ມຂຶ້ນຈາກ 5,4% ມາເປັນ 8,8% ໃນປີ 2020 (ມະຕິສະພາ: ຢູ່ໃນລະດັບ 2%).

ສາເຫດທີ່ບາງຄາດໝາຍບໍ່ບັນລຸໄດ້ແຜນການແມ່ນຍ້ອນ: ໂຄງລ່າງພື້ນຖານການສຶກສາຈຳນວນໜຶ່ງໄດ້ຮັບຜົນກະທົບຈາກໄພພິບັດນ້ຳຖ້ວມ ໃນໄລຍະ 2-3 ປີ ຜ່ານມາ ເຮັດໂຮງຮຽນຫຼາຍແຫ່ງບໍ່ສາມາດເປີດການຮຽນການສອນທັນກຳນົດເວລາ; ຄອບຄົວທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດ ຈຳເປັນຕ້ອງຍົກຍ້າຍບ່ອນທຳມາຫາກິນ ເຮັດໃຫ້ລູກຫຼານເຂົາເຈົ້າຕ້ອງປະລະການຮຽນ; ຂາດການລົງຕິດຕາມ, ຊຸກຍູ້ການຮຽນ-ການສອນ ແລະ ການຄຸ້ມຄອງໂຮງຮຽນເປັນອີກສິ່ງທ້າທາຍໜຶ່ງໃນການພັດທະນາການສຶກສາ; ຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ຂອງຜູ້ອຳນວຍການໂຮງຮຽນ ແລະ ຄູສອນ ຈຳນວນໜຶ່ງຍັງບໍ່ທັນສູງ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ; ການແກ້ໄຂບັນຫາການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາ ແມ່ນຍັງບໍ່ທັນໄດ້ຮັບການເອົາໃຈໃສ່ຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ຍັງບໍ່ທັນໄດ້ຮັບການສຶກສາເຖິງສາເຫດ; ຍັງບໍ່ທັນລົງທຶນເຂົ້າໃສ່ການສະໜອງເຄື່ອງທົດລອງຫ້ອງປະຕິບັດການ, ເຄື່ອງໄອທີ ແລະ ປຶ້ມແບບຮຽນຕ່າງໆໃຫ້ພຽງພໍຢູ່ໃນຊັ້ນຮຽນຕ່າງໆ.

**(4) ແຜນວຽກຈຸດສຸມ 4: ຮັບປະກັນການບໍລິການດ້ານສາທາລະນະສຸກໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ**

ວຽກງານສາທາລະນະສຸກໄດ້ຮັບການຂະຫຍາຍຕົວ ແລະ ພັດທະນາຢ່າງຕໍ່ເນື່ອງ ແລະ ທົ່ວເຖິງໂດຍພື້ນຖານ ທັງດ້ານໂຄງລ່າງພື້ນຖານ, ອຸປະກອນການແພດ, ຄຸນນະພາບຂອງການບໍລິການ ແລະ ການປິ່ນປົວ ຂອງແພດໝໍ ນັບແຕ່ສູນກາງຈົນຮອດທ້ອງຖິ່ນ, ໂຮງໝໍແຕ່ລະຂັ້ນໄດ້ຮັບການກໍ່ສ້າງ ແລະ ປັບປຸງໃຫ້ມີຄຸນນະພາບດີກວ່າເກົ່າ ເປັນຕົ້ນ ໂຮງໝໍມິດຕະພາບພາກຂະຫຍາຍຫຼັງໃໝ່, ໂຮງໝໍເສດຖາທິລາດ, ໂຮງໝໍ 103 ຫຼັງໃໝ່, ໂຮງໝໍແມ່ ແລະ ເດັກ ແລະ ກຳລັງກໍ່ສ້າງໂຮງໝໍມະໂຫສົດຫຼັງໃໝ່, ພ້ອມກັນນີ້, ໂຮງໝໍແຂວງ ແລະ ໂຮງໝໍຊຸມຊົນບາງແຫ່ງ ໄດ້ຮັບການປັບປຸງ ແລະ ກໍ່ສ້າງໃໝ່ ເຊັ່ນ: ໂຮງໝໍແຂວງຫົວພັນ ແລະ ໂຮງໝໍແຂວງຊຽງຂວາງ, ໂຮງໝໍນ້ອຍໄດ້ເພີ່ມຈາກ 985 ເປັນ 1.066 ແຫ່ງ. ລະບົບການບໍລິການປິ່ນປົວ ໄດ້ສຸມໃສ່ຍົກລະດັບຄວາມຮູ້ຄວາມສາມາດດ້ານວິຊາການ, ຈັນຍາບັນ-ຈັນຍາທຳຂອງແພດໝໍ ແລະ ເສີມຂະຫຍາຍການຈັດຕັ້ງປະຕິບັດນະໂຍບາຍ 5 ດີ 1 ພໍໃຈ ໃນຂອບເຂດທົ່ວປະເທດ. ນະໂຍບາຍສາທາລະນະສຸກທົ່ວປວງຊົນໄດ້ຮັບການຈັດຕັ້ງປະຕິບັດຢ່າງແຂງແຮງ ເປັນຕົ້ນ ໄດ້ເອົາໃຈໃສ່ວຽກງານຮັກສາສຸຂະພາບຂັ້ນຕົ້ນ, ເຝົ້າລະວັງ ແລະ ຕອບໂຕ້ ລວມທັງຄວບຄຸມພະຍາດຕິດຕໍ່ຕາມແນວຊາຍແດນ ໂດຍສະເພາະຄວບຄຸມ ແລະ ແກ້ໄຂສະພາບພະຍາດໂຄວິດ-19, ໄຂ້ເລືອດອອກ ແລະ ພະຍາດອື່ນໆ, ໂພຊະນາການ, ຄຸນນະພາບ ແລະ ຄວາມປອດໄພອາຫານ ແລະ ຢາ. ລະບົບການປົກປ້ອງສັງຄົມທາງດ້ານສຸຂະພາບ ໄດ້ຂະຫຍາຍໄປໃນທຸກແຂວງເຮັດໃຫ້ປະຊາຊົນລາວ ລວມທັງແມ່ ແລະ ເດັກ ແລະ ຜູ້ທຸກຍາກໄດ້ເຂົ້າເຖິງການບໍລິການສຸຂະພາບໂດຍບໍ່ເສຍຄ່າ ອັນໄດ້ເປັນເງື່ອນໄຂພື້ນຖານເພື່ອກ້າວເຖິງການບັນລຸການປົກຄຸມສຸຂະພາບທົ່ວປວງຊົນ ໃນປີ 2025. ຜ່ານການຈັດຕັ້ງປະຕິບັດເຫັນວ່າ ບັນດາຄາດໝາຍຕ່າງໆທີ່ຄາດວ່າຈະສາມາດບັນລຸໄດ້ ຄື:

+ **ຄາດໝາຍທີ່ບັນລຸແຜນ:**
  - ອັດຕາສ່ວນການຕາຍຂອງເດັກນ້ອຍລຸ່ມ 1 ປີ ໄດ້ຫຼຸດລົງຈາກ 68/1.000 ເດັກເກີດມີຊີວິດ ໃນປີ 2012 (LSIS1) ມາເປັນ 40/1.000 ເດັກເກີດມີຊີວິດ ໃນປີ 2017 (LSIS2), 14,4/1.000 ເດັກເກີດມີຊີວິດ ໃນປີ 2019 ແລະ ປີ 2020 ບັນລຸໄດ້ 12/1.000 ເດັກເກີດມີຊີວິດ (ມະຕິສະພາ: 30/1.000 ເດັກເກີດມີຊີວິດ).
  - ອັດຕາສ່ວນການຕາຍຂອງເດັກລຸ່ມ 5 ປີ ໄດ້ຫຼຸດລົງຈາກ 79/1.000 ເດັກເກີດມີຊີວິດ ໃນປີ 2012 (LSIS1) ມາເປັນ 46/1.000 ເດັກເກີດມີຊີວິດ ໃນປີ 2017(LSIS2), 16,6/1.000 ເດັກເກີດມີຊີວິດ ໃນປີ 2019 ແລະ ປີ 2020 ບັນລຸໄດ້ 15,3/1.000 ເດັກເກີດມີຊີວິດ (ມະຕິສະພາ: 40/1.000 ເດັກເກີດມີຊີວິດ).

- ອັດຕາສ່ວນການຕາຍຂອງແມ່ໄດ້ຫຼຸດລົງຈາກ 206/100.000 ເດັກເກີດມີຊີວິດ ໃນປີ 2015 (Census 2015) ມາເປັນ 68,4/100.000 ເດັກເກີດມີຊີວິດ ໃນປີ 2019 ແລະ ປີ 2020 ບັນລຸໄດ້ 66,4/100.000 ຂອງເດັກເກີດມີຊີວິດ (ມະຕິສະພາ: 160/100.000 ຂອງເດັກເກີດມີຊີວິດ).
- ອັດຕາການຊົມໃຊ້ວິດຖ່າຍຄອບຄົວ ໄດ້ເພີ່ມຂຶ້ນຈາກ 67,92% ໃນປີ 2014 ມາເປັນ 75,9% ໃນປີ 2019 ແລະ ປີ 2020 ບັນລຸໄດ້ 79,6% (ມະຕິສະພາ: 80%).
- ອັດຕາການປົກຄຸມປະກັນສຸຂະພາບທົ່ວປວງຊົນ ໄດ້ເພີ່ມຂຶ້ນຈາກ 71% ໃນປີ 2017 (MoH, 2017) ມາເປັນ 80% ໃນປີ 2019 ແລະ ປີ 2020 ບັນລຸໄດ້ 94% (ມະຕິສະພາ: 80% ຂອງຈຳນວນພົນລະເມືອງທົ່ວປະເທດ).

\+ **ຄາດໝາຍທີ່ມີຄວາມສ່ຽງຈະບໍ່ບັນລຸແຜນ:**

- ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ ໄດ້ຫຼຸດລົງຈາກ 26,6% ໃນປີ 2012 (LSIS1) ຍັງເຫຼືອ 21,1% ໃນປີ 2017 (LISIS2) ມາເປັນ 20,8% ໃນປີ 2019 ແລະ ປີ 2020 ຫຼຸດລົງເຫຼືອ 20,3% (ມະຕິສະພາ: 20%).
- ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີລວງສູງຕ່ຳກວ່າມາດຕະຖານ ຫຼຸດລົງຈາກ 44,2% ໃນປີ 2012 (LSIS1) ຍັງເຫຼືອ 33% ໃນປີ 2017 (LSIS2), 32,7% ໃນປີ 2019 ແລະ ປີ 2020 ຫຼຸດລົງເຫຼືອ 32,34% (ມະຕິສະພາ: 32%).
- ອັດຕາການເກີດລູກມີແພດຊ່ວຍ ໃຫ້ເພີ່ມຂຶ້ນຈາກ 42% ໃນປີ 2012 (LSIS1), ມາເປັນ 64,4% ໃນປີ 2017 (LSIS2), 79,1% ໃນປີ 2019 ແລະ ປີ 2020 ປະຕິບັດໄດ້ 72,8% ຂອງປະຊາກອນກຸ່ມເປົ້າໝາຍ (ແຜນການ: 80%).
- ອັດຕາການໃຫ້ວັກຊີນກັນພະຍາດເດັກນ້ອຍລຸ່ມ 1 ປີ ໄດ້ເພີ່ມຂຶ້ນ 63,7% ໃນປີ 2012 (LSIS1) ມາເປັນ 66,0% ໃນປີ 2017 (LSIS2), 92,5% ໃນປີ 2019 ແລະ ປີ 2020 ບັນລຸໄດ້ 89,8% ຂອງປະຊາກອນກຸ່ມເປົ້າໝາຍ (ແຜນການ: 90%).
- ອັດຕາການຊົມໃຊ້ນ້ຳສະອາດຂອງປະຊາຊົນ ໄດ້ເພີ່ມຂຶ້ນຈາກ 69,9% ໃນປີ 2012 (LSIS1), ມາເປັນ 83,9% ໃນປີ 2017 (LSIS2), 85,9% ໃນປີ 2019 ແລະ ປີ 2020 ບັນລຸໄດ້ 88,5% (ມະຕິສະພາ: 90%).
- ອັດຕາການປະກາດຮັບຮອງເປັນບ້ານສາທາລະນະສຸກແບບຢ່າງ ໄດ້ເພີ່ມຂຶ້ນຈາກ 71,4% ໃນປີ 2017 (MoH, 2017) ແລະ ມາເປັນ 78,9% ໃນປີ 2020 (ມະຕິສະພາ: 80% ຂອງຈຳນວນບ້ານທັງໝົດ).

ສາເຫດທີ່ຄາດວ່າຈະບໍ່ບັນລຸແຜນການ ຍ້ອນວ່າພະນັກງານບໍ່ທັນພຽງພໍ ທາງດ້ານປະລິມານ ແລະ ຄຸນນະພາບ, ພື້ນຖານໂຄງລ່າງສາທາລະນະສຸກຍັງບໍ່ທັນໄດ້ມາດຕະຖານ, ການສະໜອງອຸປະກອນການແພດບໍ່ພຽງພໍ ໂດຍສະເພາະຂັ້ນເມືອງ ແລະ ສຸກສາລາທີ່ຢູ່ຫ່າງໄກສອກຫຼີກ ຍັງຂາດພະນັກງານແພດ, ແບບແຜນການດຳລົງຊີວິດທີ່ຍັງຕິດພັນກັບຮີດຄອງປະເພນີດັ່ງເດີມ, ປະຊາຊົນຈຳນວນໜຶ່ງຍັງບໍ່ສາມາດຫັນປ່ຽນຈິນຕະນາການໄດ້.

**(5) ແຜນວຽກຈຸດສຸມ 5: ການບໍລິການທາງດ້ານສະຫວັດດີການສັງຄົມໄດ້ຮັບການຍົກລະດັບ ແລະ ທຸກຄົນໄດ້ເຂົ້າເຖິງຢ່າງກວ້າງຂວາງ**

ວຽກງານສະຫວັດດີການສັງຄົມ ມີການຂະຫຍາຍຕົວດີພໍສົມຄວນ ເຊິ່ງສະແດງອອກອັດຕາການປົກຄຸມລະບົບປະກັນສັງຄົມ ແລະ ປະກັນສຸຂະພາບ ໄດ້ເພີ່ມຂຶ້ນຈາກ 30,36% ໃນປີ 2015 ມາເປັນ 89,11% ໃນປີ 2019 ແລະ ປີ 2020 ຄາດວ່າບັນລຸໄດ້ 94% ຂອງພົນລະເມືອງທັງໝົດ (ມະຕິສະພາ: 80% ຂອງຈຳນວນພົນລະເມືອງທັງໝົດ), ໄດ້ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານຄຸນງາມຄວາມດີຕໍ່ການປະຕິວັດປະຊາທິປະໄຕ ໄດ້ 17.478 ທ່ານ ເທົ່າກັບ 54,31% ຂອງແຜນການ (ມະຕິສະພາ: 32.204 ທ່ານ), ໃນນີ້: ປີ 2016: 3.026 ທ່ານ, ເປັນເງິນ 53 ຕື້ກີບ, ປີ 2017: 3.304 ຄົນ ເປັນເງິນ 56,99 ຕື້ກີບ, ປີ 2018: 3.452 ທ່ານ, ເປັນເງິນ 55,99 ຕື້ກີບ, ປີ 2019: 2.921 ທ່ານ ເປັນເງິນ 51,15 ຕື້ກີບ ແລະ ປີ 2020: 4.775 ທ່ານ ເປັນເງິນ 88,26 ຕື້ກີບ. ສ້າງຕາໜ່າງປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນບ້ານໄດ້ 1.117 ບ້ານ

ເທົ່າກັບ 139,62% ຂອງແຜນການ (ແຜນການ: 800 ບ້ານ), ສ້າງຕັ້ງກອງທຶນສັງຄົມສົງເຄາະ ໄດ້ 13 ແຂວງ ເທົ່າກັບ 72,22% ຂອງແຜນການ (ແຜນການ: 18 ແຂວງ). ໄດ້ຕັ້ງໜ້າລະດົມການບໍລິຈາກຈາກພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຊ່ວຍເຫຼືອບັນເທົາທຸກແກ່ຜູ້ທຸກຍາກດ້ອຍໂອກາດ ແລະ ຜູ້ເຄາະຮ້າຍທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດຕ່າງໆ ໄດ້ຮັບເປັນເງິນສົດສະກຸນເງິນກີບຈຳນວນ 22,12 ຕື້ກີບ, ສະກຸນເງິນໂດລາ 14,38 ລ້ານໂດລາສະຫະລັດ ແລະ ສະກຸນເງິນບາດ 202,23 ລ້ານບາດ. ນອກຈາກນີ້, ຍັງໄດ້ຮັບການຊ່ວຍເຫຼືອເປັນວັດຖຸ-ອຸປະກອນ ແລະ ເຄື່ອງອຸປະໂພກ ແລະ ບໍລິໂພກເປັນຈຳນວນຫຼວງຫຼາຍ.

**(6) ແຜນວຽກຈຸດສຸມ 6: ພັດທະນາ ແລະ ປົກປັກຮັກສາຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ**

ວຽກງານຖະແຫຼງຂ່າວ ແລະ ວັດທະນະທຳ ໄດ້ຮັບການພັດທະນາທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ. ດ້ານຖະແຫຼງຂ່າວ ໄດ້ມີຄວາມເປັນທັນສະໄໝ ແລະ ມີຄຸນນະພາບສູງຂຶ້ນ, ໂດຍໄດ້ຫັນປ່ຽນຈາກລະບົບອານາລ໋ອກໄປສູ່ລະບົບດີຈີຕອນ, ໄດ້ປັບປຸງດ້ານເນື້ອໃນ ແລະ ຮູບແບບລາຍການ ເພື່ອໂຄສະນາເຜີຍແຜ່ກ່ຽວກັບນະໂຍບາຍຂອງພັກ-ລັດ, ວັນສຳຄັນ, ວັດທະນະທຳ-ງານບຸນປະເພນີຕ່າງໆ ແລະ ສະພາບການທີ່ເກີດຂຶ້ນ ໄດ້ດີຂຶ້ນ ແລະ ມີຄວາມວ່ອງໄວກວ່າເກົ່າ ດ້ວຍການນຳໃຊ້ສື່ສິ່ງພິມ, ສື່ເອເລັກໂທຣນິກ ແລະ ສື່ອອນລາຍຕ່າງໆ. ນອກຈາກນີ້, ໄດ້ມີການຂະຫຍາຍຕາໜ່າງໂທລະໂຄ່ງໄປສູ່ບ້ານ ແລະ ເຂດຫ່າງໄກສອກຫຼີກໄດ້ 5.840 ບ້ານ ກວມເອົາ 69,16% ຂອງຈຳນວນບ້ານທັງໝົດ (ຈຳນວນບ້ານທັງໝົດ 8.443 ບ້ານ). ວຽກງານວັດທະນະທຳ: ມີການຂະຫຍາຍຕົວທັງດ້ານປະລິມານ ແລະ ຄຸນນະພາບ, ໃນໄລຍະ 5 ປີ ສາມາດສ້າງຄອບຄົວວັດທະນະທຳໄດ້ 197.635 ຄອບຄົວ ເຊິ່ງມາຮອດປັດຈຸບັນ ມີຄອບຄົວວັດທະນະທຳທັງໝົດ 970.369 ຄອບຄົວ ກວມເອົາ 76,97% ຂອງຄອບຄົວທົ່ວປະເທດ (ມະຕິສະພາ: ໃຫ້ກວມເອົາ 80% ຂອງຄອບຄົວທົ່ວປະເທດ), ສ້າງບ້ານວັດທະນະທຳ ໄດ້ 1.703 ບ້ານ ມາຮອດປັດຈຸບັນມີບ້ານວັດທະນະທຳທັງໝົດ 6.548 ບ້ານ ກວມເອົາ 77,68% ຂອງຈຳນວນບ້ານທັງໝົດ (ແຜນການ: ໃຫ້ກວມເອົາ 65%). ໄດ້ມີການໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວລາວ ພົ້ນເດັ່ນແມ່ນໄດ້ເປີດປີທ່ອງທ່ຽວລາວ ໃນປີ 2018, ເປີດປີທ່ອງທ່ຽວລາວ-ຈີນ ໃນປີ 2019 ແລະ ສຽງແຄນເຊື້ອຊາດລາວຖືກຮັບຮອງເປັນມໍລະດົກໂລກທາງດ້ານວັດທະນະທຳນາມມະທຳ ໃນທ້າຍປີ 2017, ທົ່ງໄຫຫີນ ແຂວງຊຽງຂວາງ ໄດ້ຖືກຮັບຮອງເປັນມໍລະດົກໂລກແຫ່ງທີ 3 ໃນທ້າຍປີ 2018 (ມະຕິສະພາ: ສູ້ຊົນເອົາແຫຼ່ງທ່ອງທ່ຽວທົ່ງໄຫຫີນ ແຂວງຊຽງຂວາງ ແລະ ພູຫີນໜາມໜໍ່ ແຂວງຄຳມ່ວນ ເຂົ້າເປັນມໍລະດົກໂລກ).

ໄດ້ເອົາໃຈໃສ່ຟື້ນຟູ, ອະນຸລັກ ແລະ ສົ່ງເສີມວັດທະນະທຳທາງດ້ານວັດຖຸ ແລະ ບໍ່ເປັນວັດຖຸທີ່ເປັນເອກະລັກ ພົ້ນເດັ່ນແມ່ນ ສຳເລັດການຈັດຕັ້ງປະຕິບັດໂຄງການປະຕິສັງຂອນຮູບແຕ້ມຝາພະໜັງໃນພິພິທະພັນສະຖານບູຮານວັດສີສະເກດໃນໄລຍະ 4, ສຳເລັດການຈັດການແຂ່ງຂັນສ້າງຮູບເງົາເລື່ອງສັ້ນ ແລະ ຮູບເງົາສາລະຄະດີເນື່ອງໃນໂອກາດສະເຫຼີມສະຫຼອງ 2 ວັນປະຫວັດສາດ ພາຍໃຕ້ຫົວຂໍ້ 40 ປີ ແຜນດິນແມ່ທີ່ແສນຮັກ ແລະ ເນື່ອງໃນໂອກາດສະເຫຼີມສະຫຼອງວັນມໍລະດົກພາບ-ສຽງໂລກ ຄົບຮອບ 10 ປີ. ໄດ້ສຳເລັດການເກັບກຳຂໍ້ມູນມໍລະດົກບໍ່ເປັນວັດຖຸ 6 ຫົວຂໍ້ຄື: ຫຸ່ນຕຸກກະຕາອີ່ປ໋ອກ, ອາຫານພື້ນເມືອງ, ຫັດຖະກຳນໍ້າກ້ຽງ, ຂັບທຸ້ມຫຼວງພະບາງ, ຫັດຖະກຳເຈ້ຍປໍສາ ແລະ ຫັດຖະກຳປັກດິ້ງ ຢູ່ແຂວງຫຼວງພະບາງ.

**(7) ແຜນວຽກຈຸດສຸມ 7: ຮັບປະກັນສະຖຽນລະພາບທາງດ້ານການເມືອງຢ່າງໝັກແໜ້ນ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ສີວິໄລ**

ສາມາດຮັກສາສະຖຽນລະພາບດ້ານການເມືອງຢ່າງໝັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ ເຊິ່ງເປັນເງື່ອນໄຂອຳນວຍຄວາມສະດວກໃນການພັດທະນາເສດຖະກິດ-ສັງຄົມ ໂດຍໄດ້ສຸມໃສ່ແກ້ໄຂບັນຫາເສບຕິດ, ອຸບັດຕິເຫດບົນທ້ອງຖະໜົນ ແລະ ປະກົດການຫຍໍ້ທໍ້ທາງສັງຄົມຢ່າງຮອບດ້ານ, ພ້ອມທັງໄດ້ເຜີຍແຜ່ ແລະ ສຶກສາອົບຮົມໃຫ້ແກ່ພໍ່ແມ່ປະຊາຊົນ ເຂົ້າໃຈກ່ຽວກັບລະບຽບກົດໝາຍ, ບັນຫາຕ່າງໆທາງສັງຄົມ. ໃນໄລຍະ 5 ຜ່ານມາ ໄດ້ສ້າງ ແລະ ປັບປຸງກົດໝາຍ ທັງໝົດ 81 ສະບັບ, ໃນນັ້ນ ສ້າງໃໝ່ 34 ສະບັບ ແລະ ປັບປຸງ 47 ສະບັບ; ໄດ້ໂຄສະນາ ແລະ ເຜີຍແຜ່ກົດໝາຍດ້ວຍຫຼາຍຮູບແບບ ແລະ ຫຼາຍລະດັບນັບທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍເຜີຍແຜ່

ຜ່ານທາງຈັດປະຊຸມ ໄດ້ທັງໝົດ 21.399 ຄັ້ງ ແລະ ໂຄສະນາຜ່ານສື່ຕ່າງໆ ໄດ້ທັງໝົດ 14.635 ຄັ້ງ. ໄດ້ຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ທັງໝົດ 45.825 ເລື່ອງ (ຄະດີແພ່ງ 13.165 ເລື່ອງ ແລະ ຄະດີອາຍາ 32.660 ເລື່ອງ), ສາມາດປະຕິບັດຄໍາຕັດສິນສໍາເລັດ 9.043 ເລື່ອງ (ຄະດີແພ່ງ 4.079 ເລື່ອງ ແລະ ຄະດີອາຍາ 4.964 ເລື່ອງ). ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 279 ຂໍ້ຂັດແຍ່ງ ໃນນີ້ ສໍາເລັດ 237 ຂໍ້ຂັດແຍ່ງ. ມາຮອດປັດຈຸບັນ ມີບ້ານແບບຢ່າງປະຕິບັດກົດໝາຍ 6.604 ບ້ານ ແລະ ຄອບຄົວແບບຢ່າງ ປະຕິບັດກົດໝາຍ 921.650 ຄອບຄົວ. ຈໍານວນອຸບັດຕິເຫດເກີດຂຶ້ນທັງໝົດ 29.655 ຄັ້ງ, ພາຫະນະເປ່ເພ 50.316 ຄັນ, ຄົນໄດ້ຮັບບາດເຈັບ 47.245 ຄົນ, ເສຍຊີວິດ 5.263 ແລະ ມູນຄ່າເສຍຫາຍ 443,44 ຕື້ກີບ.

ໄດ້ເອົາໃຈໃສ່ຊຸກຍູ້, ຕິດຕາມການປະຕິບັດກົດໝາຍຂອງສານໃຫ້ມີຄວາມຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ. ໄດ້ກວດກາຄໍາຕັດສິນ, ຄໍາພິພາກສາຂອງສານແຕ່ລະຂັ້ນ ໄດ້ທັງໝົດ 9.503 ສະບັບ. ໃນໄລຍະຜ່ານມາສານປະຊາຊົນແຕ່ລະຂັ້ນ ໄດ້ສຸມໃສ່ການຄົ້ນຄວ້າຄະດີ ແລະ ຄົ້ນຄວ້າພິຈາລະນາຕັດສິນຄະດີ ໃຫ້ມີຄວາມວ່ອງໄວ, ມີຄຸນນະພາບ, ມີຄວາມລະອຽດ, ຮອບຄອບ ແລະ ຮັບປະກັນຄວາມຖືກຕ້ອງຕາມຂັ້ນຕອນຂອງກົດໝາຍກໍານົດໄວ້. ການພິຈາລະນາຕັດສິນຄະດີຂອງສານ ແມ່ນມີຄຸນນະພາບເຮັດໃຫ້ຄູ່ຄວາມຍອມຮັບ ແລະ ພໍໃຈຕໍ່ກັບການພິຈາລະນາຕັດສິນຂອງສານດີຂຶ້ນເທື່ອລະກ້າວ ເຊິ່ງສະແດງໃຫ້ເຫັນມີຄະດີທັງໝົດຢູ່ສານທຸກຂັ້ນ (ຂັ້ນຕົ້ນ, ອຸທອນ ແລະ ລົບລ້າງ) 41.699 ເລື່ອງ ແກ້ໄຂແລ້ວ 38.497 ເລື່ອງ ກວມເອົາ 92,32%.

ເຖິງຢ່າງໃດກໍຕາມ ເຫັນວ່າສະຕິຄວາມເປັນເຈົ້າການຂອງປະຊາຊົນຈໍານວນໜຶ່ງ ໃນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຍັງບໍ່ທັນສູງ ເຮັດໃຫ້ຍັງມີສະພາບຢາເສບຕິດ ແລະ ອຸບັດຕິເຫດທ້ອງຖະໜົນຫຼາຍສົມຄວນ.

### 2.3. *ເປົ້າໝາຍ 3: ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມໄດ້ຮັບການປົກປັກຮັກສາ ແລະ ນໍາໃຊ້ຢ່າງມີປະສິດທິຜົນ ແລະ ຮັບປະກັນຄວາມຍືນຍົງ, ກຽມພ້ອມຮັບມືກັບໄພພິບັດຢ່າງທັນການ ແລະ ກໍ່ສ້າງຄືນສິ່ງທີ່ຖືກກະທົບຈາກທໍາມະຊາດໃຫ້ດີກວ່າເກົ່າ*

#### (1) ແຜນວຽກຈຸດສຸມ 1: ການປົກປັກຮັກສາສະພາບແວດລ້ອມ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດໃຫ້ມີຄວາມຍືນຍົງ

ລັດຖະບານ ໄດ້ສຸມໃສ່ສ້າງ ແລະ ປັບປຸງກົດໝາຍ ແລະ ລະບຽບການຕ່າງໆເພື່ອຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ເປັນຕົ້ນ: ກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ (ສະບັບປັບປຸງ) ເລກທີ 23/ສພຊ, ກົດໝາຍວ່າດ້ວຍອຸຕຸນິຍົມ ແລະ ອຸທົກກະສາດ ເລກທີ 36/ສພຊ, ມະຕິຂອງຄະນະບໍລິຫານງານສູນກາງພັກວ່າດ້ວຍການເພີ່ມທະວີວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ໃນໄລຍະໃໝ່ ເລກທີ 26/ຄບສພ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030, ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ເລກທີ 70/ສພຊ, ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ດໍາລັດວ່າດ້ວຍການສົ່ງເສີມການປູກໄມ້ເປັນສິນຄ້າ ເລກທີ 247/ລບ, ດໍາລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເລກທີ 21/ລບ, ດໍາລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ ເລກທີ 84/ລບ, ດໍາລັດວ່າດ້ວຍການປ່ຽນແປງດິນຟ້າອາກາດ ເລກທີ 321/ລບ, ດໍາລັດວ່າດ້ວຍການສ້າງຕັ້ງປ່າປ້ອງກັນແຫຼ່ງນໍ້າ ຍອດນໍ້າຊັນ ເລກທີ 06/ນຍ, ດໍາລັດວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ດໍາລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ມາດຕະຖານສິ່ງແວດລ້ອມແຫ່ງຊາດ, ຄໍາສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ເລກທີ 15/ນຍ, ຄໍາສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາສັດປ່າ ແລະ ພືດປ່າປະເພດຫວງຫ້າມ ເລກທີ 05/ນຍ; ນອກຈາກນັ້ນ, ໄດ້ປະກາດໃຊ້ນະໂຍບາຍແຫ່ງຊາດວ່າດ້ວຍການປະຢັດ ແລະ ອະນຸລັກພະລັງງານ, ຍຸດທະສາດການເຕີບໂຕສີຂຽວຂອງ ສປປ ລາວ ເຖິງປີ 2030. ທັງໝົດເຫຼົ່ານີ້, ໄດ້ເຮັດໃຫ້ວຽກງານຄຸ້ມຄອງ ແລະ ປົກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ມີຜົນສໍາເລັດທີ່ໜ້າພໍໃຈຫຼາຍດ້ານ.

ດ້ານການຄຸ້ມຄອງທີ່ດິນ: ໄດ້ສໍາເລັດການສ້າງແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030 ພ້ອມທັງເຜີຍແຜ່ ແລະ ແບ່ງຄວາມຮັບຜິດຊອບໃຫ້ກະຊວງ, ຂະແໜງການທີ່ກ່ຽວຂ້ອງ; ການຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ປັດຈຸບັນສໍາເລັດການຮັບຮອງ 13 ແຂວງ, ສ່ວນອີກ 5 ແຂວງ ຈະໃຫ້ສໍາເລັດໃນປີ 2021; ໄດ້ປັບປຸງລະບົບການຂຶ້ນທະບຽນ, ອອກໃບຕາດິນທີ່ທັນສະໄໝ ໃນໄລຍະ 5 ປີ ຜ່ານມາ ອອກໃບຕາດິນໄດ້ 589.262 ຕອນ ໃນຂອບເຂດທົ່ວປະເທດ ເຊິ່ງລື່ນແຜນການວາງໄວ້ (ມະຕິສະພາ: 460.000 ຕອນ), ໃນນີ້: ປີ 2016 ໄດ້ 78.729 ຕອນ, ປີ 2017 ໄດ້ 117.772 ຕອນ, ປີ 2018 ໄດ້ 132.286 ຕອນ, ປີ 2019 ໄດ້ 153.020 ຕອນ ແລະ ປີ 2020 ໄດ້ 107.455 ຕອນ.

ດ້ານການຄຸ້ມຄອງປ່າໄມ້: ໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມຍືນຍົງ ມາຮອດປັດຈຸບັນສະຖານະພາບຂອງປ່າໄມ້ ມີອັດຕາຄວາມປົກຫຸ້ມຂອງປ່າໄມ້ 62% ເພີ່ມຂຶ້ນ 4% ພາຍໃນໄລຍະເວລາ 4 ປີ (2015-2019) (ມະຕິສະພາ: ໃຫ້ໄດ້ 70%). ການຈັດສັນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ແມ່ນສໍາເລັດໂດຍພື້ນຖານ ເປັນຕົ້ນ: ການກໍານົດທີ່ຕັ້ງ ແລະ ຂອບເຂດຂອງປ່າສະຫງວນ 172 ແຫ່ງ, ເນື້ອທີ່ 4,8 ລ້ານເຮັກຕາ (ປ່າສະຫງວນແຫ່ງຊາດ 25 ແຫ່ງ, ປ່າສະຫງວນແຂວງ 54 ແຫ່ງ ແລະ ປ່າສະຫງວນເມືອງ 95 ແຫ່ງ); ປ່າປ້ອງກັນ 139 ແຫ່ງ, ເນື້ອທີ່ 7,98 ລ້ານເຮັກຕາ ແລະ ປ່າຜະລິດ 51 ແຫ່ງ, ເນື້ອທີ່ 3,1 ລ້ານເຮັກຕາ. ຈັດສັນປ່າໄມ້ຂັ້ນບ້ານໄດ້ທັງໝົດ 1.366 ບ້ານ ເທົ່າກັບ 91% ຂອງຄາດໝາຍທີ່ວາງໄວ້. ພ້ອມດຽວກັນນັ້ນ, ຍັງໄດ້ສໍາເລັດການຍົກລະດັບປ່າສະຫງວນແຫ່ງຊາດ ຂຶ້ນເປັນອຸທິຍານແຫ່ງຊາດທາງທໍາມະຊາດ ຈໍານວນ 3 ແຫ່ງ ເຊັ່ນ: ນໍ້າແອດ-ພູເລີຍ, ນາກາຍ-ນໍ້າເທີນ ແລະ ພູຫີນໜາມໜໍ່. ສ້າງເຂດຮັກສາພັນສັດປ່າແຫ່ງຊາດສໍາເລັດ 1 ແຫ່ງ (ເຂດອະນຸລັກປ່າໂຄກ ໂອງມັ່ງ) ພ້ອມທັງນໍາສະເໜີ ອຸທິຍານແຫ່ງຊາດ ພູຫີນໜາມໜໍ່ ເປັນມໍຣະດົກໂລກທາງທໍາມະຊາດ ແລະ ສະເໜີປ່າສະຫງວນແຫ່ງຊາດພູຊຽງທອງ ເປັນມໍຣະດົກອາຊຽນ.

ດ້ານການຄຸ້ມຄອງຊັບພະຍາກອນແຮ່ທາດ: ປີ 2016 ໄດ້ສໍາຫຼວດ, ເກັບກໍາຂໍ້ມູນ ແລະ ສ້າງແຜນທີ່ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1/200.000 ຂອງຂອບເຂດທົ່ວປະເທດ ແມ່ນສາມາດປະຕິບັດໄດ້ 66,42% ຂອງເນື້ອທີ່ທົ່ວປະເທດ, ໃນນັ້ນ ຢູ່ເຂດເໜືອວຽງຈັນ-ໃຕ້ຫຼວງພະບາງ (ເນື້ອທີ່ປະມານ 15.870 ກມ$^2$) ແລະ ຢູ່ເຂດໄຊຍະບູລີ-ຫຼວງພະບາງ (ເນື້ອທີ່ປະມານ 16.309 ກມ$^2$).

ດ້ານປົກປັກຮັກສາສິ່ງແວດລ້ອມ: ໄດ້ເອົາໃຈໃສ່ຕິດຕາມກວດກາ ແລະ ແກ້ໄຂບັນຫາສິ່ງແວດລ້ອມຈາກໂຄງການພັດທະນາ; ໄດ້ປະຕິບັດພັນທະສິ່ງແວດລ້ອມ ແລະ ສັງຄົມ ໃນແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງບັນດາໂຄງການພັດທະນາຕ່າງໆ; ໄດ້ດໍາເນີນການຕິດຕາມກວດກາຄຸນນະພາບອາກາດ; ໄດ້ຊຸກຍູ້ຜັນຂະຫຍາຍມາດຕະຖານຄຸນນະພາບສິ່ງແວດລ້ອມ ແລະ ຂະບວນການວຽກງານສີຂຽວ, ສະອາດ ແລະ ງາມຕາ. ໄດ້ສ້າງແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານຢູ່ 5 ແຂວງ (ຫົວພັນ, ຊຽງຂວາງ, ບໍລິຄໍາໄຊ, ວຽງຈັນ, ສາລະວັນ) (ມະຕິສະພາ: ໃຫ້ໄດ້ຢ່າງໜ້ອຍ 50% ຂອງແຂວງທີ່ໄດ້ຮັບຮອງແລ້ວ). ສໍາເລັດການສ້າງຫ້ອງທົດລອງຄຸນນະພາບສິ່ງແວດລ້ອມແຫ່ງຊາດ ຕາມມາດຕະຖານສາກົນ ISO17025 ຈໍານວນ 1 ແຫ່ງ ແລະ ສະໜອງອຸປະກອນຂັ້ນພື້ນຖານໃຫ້ແກ່ຫ້ອງທົດລອງຄຸນນະພາບສິ່ງແວດລ້ອມປະຈໍາພາກ ຈໍານວນ 3 ແຫ່ງ (ຫຼວງພະບາງ, ຊຽງຂວາງ ແລະ ຈໍາປາສັກ) ແລະ ປະກອບເຄື່ອງກວດກາວັດແທກຄຸນນະພາບສິ່ງແວດລ້ອມຂະໜາດນ້ອຍໃຫ້ບັນດາແຂວງໃນຂອບເຂດທົ່ວປະເທດ; ສໍາເລັດການລົງເກັບກໍາຂໍ້ມູນມົນລະພິດສິ່ງເສດເຫຼືອອັນຕະລາຍຢູ່ສະໜາມຂີ້ເຫຍື້ອ ໃນ 5 ແຂວງ: ນະຄອນຫຼວງວຽງຈັນ, ບໍ່ແກ້ວ, ຫຼວງນໍ້າທາ, ຫົວພັນ ແລະ ຊຽງຂວາງ; ໄດ້ຊຸກຍູ້ການນໍາໃຊ້ກົນໄກຄວບຄຸມ, ກໍາຈັດ ແລະ ຫຼຸດຜ່ອນປະລິມານສິ່ງເສດເຫຼືອ 3Rs ຢູ່ 2 ແຂວງ: ນະຄອນໄກສອນພົມວິຫານ ແລະ ນະຄອນປາກເຊ.

ດ້ານການຄຸ້ມຄອງຊັບພະຍາກອນນໍ້າ: ໄດ້ເລີ່ມຮ່າງຍຸດທະສາດການຄຸ້ມຄອງ, ການບໍລິຫານ ແລະ ການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ, ຮ່າງດໍາລັດວ່າດ້ວຍການຄຸ້ມຄອງອ່າງຮັບນໍ້າ ແລະ ກະກຽມແຜນຄຸ້ມຄອງອ່າງຮັບນໍ້າ; ໄດ້ຕິດຕາມກວດກາຄຸນນະພາບນໍ້າ ໃນ 10 ອ່າງຮັບນໍ້າບຸລິມະສິດ ຢ່າງເປັນປົກກະຕິ ຄື: ອ່າງຮັບນໍ້າອູ, ນໍ້າງື່ມ, ເຊບັ້ງຫຽງ, ເຊ

ບັ້ງໄຟ, ເຊໂດນ, ເຊກອງ, ນໍ້າງຽບ, ນໍ້າເທີນ-ນໍ້າກະດິງ, ນໍ້າຊໍາ ແລະ ນໍ້າມ້າ (ມະຕິສະພາ: 10 ອ່າງຮັບນໍ້າບູລິມະສິດ); ສາມາດກໍານົດຈຸດຕິດຕາມກວດກາຄຸນນະພາບນໍ້າ ໄດ້ 312 ຈຸດ (ມະຕິສະພາ: 200 ຈຸດ).

ເຖິງວ່າມີຜົນສໍາເລັດ ແລະ ມີຄວາມຄືບໜ້າຫຼາຍດ້ານ ແຕ່ໂດຍລວມແລ້ວເຫັນວ່າການປົກປັກຮັກສາສະພາບແວດລ້ອມ, ການຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດຍັງບໍ່ທັນໄດ້ດີເທົ່າທີ່ຄວນ ເປັນຕົ້ນ ຍັງມີການລັກລອບຕັດໄມ້, ຈູດໄຮ່ ແລະ ຈໍານວນຂອງສາຍພັນພືດ-ສັດທີ່ມີຄວາມສ່ຽງສູນພັນໄດ້ເພີ່ມຂຶ້ນຈາກ 115 ໃນປີ 2008 ເປັນ 210 ໃນປີ 2017. ໂດຍລວມແລ້ວມີສິ່ງທ້າທາຍຫຼາຍດ້ານ ເປັນຕົ້ນ: ຂາດງົບປະມານໃນການບໍລິຫານຈັດການເຂດປ່າສະຫງວນ ແລະ ອ່າງໂຕ່ງຕ່າງໆ.

**(2) ແຜນວຽກຈຸດສຸມ 2: ກະກຽມຄວາມພ້ອມໃນການຮັບມືກັບຜົນກະທົບພ້ອມທັງຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ ແລະ ການປ່ຽນແປງດິນຟ້າອາກາດ**

ໃນໄລຍະຜ່ານມາ ເຫັນວ່າ ສປປ ລາວ ໄດ້ເກີດໄພພິບັດທໍາມະຊາດຖີ່ຂຶ້ນ ຕໍ່ບັນຫາດັ່ງກ່າວ, ລັດຖະບານຈຶ່ງໄດ້ສຸມໃສ່ກະກຽມຄວາມພ້ອມເພື່ອຮັບມື ແລະ ຫຼຸດຜ່ອນຜົນກະທົບທີ່ເກີດຂຶ້ນຈາກໄພພິບັດທໍາມະຊາດ ເປັນຕົ້ນ ໄດ້ສໍາເລັດການສ້າງຕັ້ງສູນຂໍ້ມູນຂ່າວສານຊັບພະຍາກອນນໍ້າແຫ່ງຊາດ; ສໍາເລັດການປັບປຸງສະຖານີອຸຕຸນິຍົມໃຫ້ເປັນລະບົບທັນສະໄໝ 28 ສະຖານີ ແລະ ສ້າງໃໝ່ 10 ສະຖານີ; ສໍາເລັດການປັບປຸງສະຖານີອຸທົກກະສາດ ເປັນລະບົບທັນສະໄໝ 33 ສະຖານີ ແລະ ສ້າງໃໝ່ 15 ສະຖານີ; ພ້ອມນັ້ນ, ກໍ່ໄດ້ສໍາເລັດການກໍ່ສ້າງສູນຂໍ້ມູນແຜ່ນດິນໄຫວແຫ່ງຊາດ ແລະ ບັນດາສະຖານີໃນຂອບເຂດທົ່ວປະເທດໄດ້ 15 ແຫ່ງ ເຊິ່ງລື່ນຄາດໝາຍວາງໄວ້ (ມະຕິສະພາ: 5 ແຫ່ງ), ໃນນີ້ ລວມທັງການປັບປຸງ 2 ສະຖານີ ຄື: ສະຖານີຫຼັກ 20 ແລະ ສະຖານີຫຼວງພະບາງ (ມະຕິສະພາ: 2 ແຫ່ງ); ໄດ້ປັບປຸງວິທີການ, ກົນໄກ ແລະ ການລາຍງານການພະຍາກອນສະພາບອາກາດໃຫ້ທັນສະໄໝ; ສໍາເລັດການສ້າງແຜນກຽມພ້ອມຕອບໂຕ້ໄພພິບັດ ແລະ ແຜນຫຼຸດຜ່ອນຄວາມສ່ຽງໄພພິບັດ ຂັ້ນແຂວງ ໄດ້ 6 ແຂວງ; ພັດທະນາເຄື່ອງມືປະເມີນຄວາມຕ້ອງການໃນການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ຫຼັງໄພພິບັດ ໃນ 15 ຂະແໜງການ ພ້ອມທັງໄດ້ຈັດຝຶກອົບຮົມວິທີການນໍາໃຊ້ແບບຟອມດັ່ງກ່າວ. ໄດ້ສ້າງຕັ້ງ ແລະ ປັບປຸງຄະນະກໍາມະການປ້ອງກັນ ແລະ ຄວບຄຸມໄພພິບັດ ໄດ້ 12 ກະຊວງ, 18 ແຂວງ ແລະ 54 ເມືອງ ຢູ່ໃນ 8 ແຂວງ ທີ່ຢູ່ໃນເຂດທີ່ມີຄວາມສ່ຽງ. ໄດ້ລິເລີ່ມການເຊື່ອມສານວຽກງານຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ພາຍໃຕ້ຂອບການພັດທະນາແບບຍືນຍົງ ແລະ ຫຼຸດຜ່ອນຄວາມທຸກຍາກ ເຂົ້າໃນຂະແໜງໂຍທາທິການ ແລະ ຂົນສົ່ງ (ວຽກງານຂົວທາງ ແລະ ໂຍທາທິການທາງນໍ້າ).

ຄຽງຄູ່ກັນນີ້, ໄດ້ສໍາເລັດການປັບປຸງຄູ່ມືໃນການພັດທະນາກົນໄກຮ່ວມມືສອງຝ່າຍ ດ້ານການຫຼຸດຜ່ອນທາດອາຍເຮືອນແກ້ວ ສະບັບທີ 3 (Joint Credit Machanism) ແລະ ການປ່ອຍທາດອາຍເຮືອນແກ້ວຈາກການທໍາລາຍປ່າໄມ້ (REED+), ໄດ້ລິເລີ່ມຂະບວນການສ້າງແຜນດໍາເນີນງານແຫ່ງຊາດ ໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (National Adaptation Plan).

**(3) ແຜນວຽກຈຸດສຸມ 3: ຫຼຸດຜ່ອນຄວາມບໍ່ມີສະຖຽນລະພາບຂອງຜົນຜະລິດກະສິກໍາທີ່ເກີດຈາກຜົນກະທົບຂອງໄພພິບັດ (ຮັບປະກັນໄດ້ທາງດ້ານຕະຫຼາດ ແລະ ລາຄາຜົນຜະລິດກະສິກໍາ)**

ສປປ ລາວ ໄດ້ສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແລະ ຍຸດທະສາດຈໍານວນໜຶ່ງ ເພື່ອຮັບປະກັນຄວາມໝັ້ນຄົງດ້ານອາຫານ ເປັນຕົ້ນ ໂຄງການສົ່ງເສີມຜະລິດເປັນສິນຄ້າ ແລະ ຄໍ້າປະກັນຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ, ສົ່ງເສີມການຜະລິດກະສິກໍາທີ່ມີຄວາມທົນທານຕໍ່ການປ່ຽນແປງສະພາບອາກາດ, ການພັດທະນາຄວາມສາມາດດ້ານການເກັບຮັກສາຜົນຜະລິດກະສິກໍາ. ນອກຈາກນັ້ນ, ໄດ້ຕິດຕາມ ແລະ ກະກຽມຄວາມພ້ອມໃນການຮັບມືກັບການແຜ່ລະບາດຂອງສັດຕູພືດ ແລະ ສັດ; ໄດ້ສ້າງແຜນການຕ້ານແລ້ງ ແລະ ຕ້ານຖ້ວມ ໃນແຕ່ລະປີ ເພື່ອສາມາດແກ້ໄຂຜົນກະທົບຢ່າງທັນການ.

ເຖິງຢ່າງໃດກໍຕາມເຫັນວ່າຍັງມີຂໍ້ຄົງຄ້າງ, ຂໍ້ຈໍາກັດ ແລະ ສິ່ງທ້າທາຍຫຼາຍດ້ານໃນການຊຸກຍູ້ສົ່ງເສີມການຜະລິດເພື່ອຄໍ້າປະກັນສະບຽງອາຫານ ແລະ ການຜະລິດເປັນສິນຄ້າ ເນື່ອງຈາກຜົນຜະລິດກະສິກໍາໂດຍລວມຍັງບໍ່ທັນມີສະຖຽນລະພາບເທົ່າທີ່ຄວນ.

### 2.4. *ບັນດາວຽກຈຸດສຸມປິ່ນອ້ອມທີ່ພົວພັນກັບຫຼາຍຂະແໜງການ*

**(1) ແຜນວຽກຈຸດສຸມ 1: ເພີ່ມທະວີປະສິດທິພາບຂອງການຄຸ້ມຄອງ ແລະ ບໍລິຫານລັດ**

ລັດຖະບານໄດ້ເອົາໃຈໃສ່ປັບປຸງວຽກງານການຄຸ້ມຄອງ ແລະ ບໍລິຫານໃຫ້ມີຄວາມກະທັດຮັດ, ສອດຄ່ອງ ແລະ ມີປະສິດທິພາບສູງຂຶ້ນກວ່າເກົ່າ, ໄດ້ສຳເລັດການສ້າງລະບົບ e-Government portal ເພື່ອໃຫ້ການບໍລິຫານລັດກ້າວໄປສູ່ທັນສະໄໝດ້ານດີຈີຕອນ ເຊິ່ງລະບົບໃນປັດຈຸບັນສາມາດເຊື່ອມໂຍງຂໍ້ມູນ ແລະ ການບໍລິການ ຂອງພາກສ່ວນກະຊວງ ແລະ ຫ້ອງການຂອງລັດ ໃນຂະແໜງການຕ່າງໆໄດ້ໃນຂັ້ນພື້ນຖານ. ວຽກງານກົງຈັກ ແລະ ບໍລິຫານລັດ: ໄດ້ປັບປຸງກົງຈັກຂອງລັດຖະບານໃຫ້ມີຄວາມສອດຄ່ອງກັບພາລະບົດບາດ ແລະ ໜ້າທີ່ຕົວຈິງຫຼາຍຂຶ້ນ ເພື່ອຍົກສູງພາລະບົດບາດຄຸ້ມຄອງມະຫາພາກ ຫຼາຍກວ່າ 20 ຫົວໜ່ວຍ ໂດຍໄດ້ເອົາຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງໄປຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້; ອົງການກາແດງລາວ ແລະ ອົງການເກັບກູ້ລະເບີດແຫ່ງຊາດໄປຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ; ກອງເລຂາຄະນະກຳມະການແຫ່ງຊາດເພື່ອຄຸ້ມຄອງເຂດເສດຖະກິດພິເສດ ມາຂຶ້ນກັບກະຊວງແຜນການ ແລະ ການລົງທຶນ; ໄດ້ສ້າງ ແລະ ປັບປຸງກົງຈັກການຈັດຕັ້ງຈຳນວນໜຶ່ງທີ່ຂຶ້ນກັບກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ; ເອົາຫ້ອງການກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່ ແລະ ເດັກ ໄປຂຶ້ນກັບສູນກາງສະຫະພັນແມ່ຍິງລາວ. ພ້ອມກັນນັ້ນ, ປັບປຸງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ຈຳນວນໜຶ່ງ ເຊັ່ນ: ກະຊວງຍຸຕິທຳ, ກະຊວງສຶກສາທິການ ແລະ ກິລາ, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງການເງິນ ແລະ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ. ການປົກຄອງທ້ອງຖິ່ນ: ໄດ້ປັບປຸງພາລະບົດບາດຂອບເຂດສິດໜ້າທີ່ຂອງພະແນກ-ອົງການປົກຄອງຂັ້ນເມືອງຈຳນວນໜຶ່ງ ໃຫ້ແທດເໝາະກັບສະພາບເງື່ອນໄຂ ແລະ ໄປຕາມທິດ 3 ສ້າງ, ໄດ້ສ້າງຕັ້ງນະຄອນຫຼວງພະບາງ, ນະຄອນໄກສອນພົມວິຫານ ແລະ ນະຄອນປາກເຊ, ນອກຈາກນັ້ນ ຍັງກະກຽມການສ້າງຕັ້ງເທດສະບານເມືອງທີ່ເປັນທີ່ຕັ້ງສຳນັກງານປົກຄອງແຂວງຢູ່ 4 ແຂວງ (ບໍລິຄຳໄຊ, ຄຳມ່ວນ, ຫົວພັນ ແລະ ຫຼວງນ້ຳທາ). ມາຮອດປີ 2019 ກົງຈັກໃນລະບົບການເມືອງຂັ້ນສູນກາງມີທັງໝົດ 38 ພາກສ່ວນ, ໃນນັ້ນ, ມີ 509 ກົມ, ຂັ້ນແຂວງມີ 572 ພະແນກ ແລະ ຂັ້ນເມືອງມີ 3.550 ຫ້ອງການ.

ວຽກງານການສ້າງຕັ້ງກົນໄກຜ່ານປະຕູດຽວ: ໄດ້ມີຄວາມຄືບໜ້າດີ ໂດຍໄດ້ກວດກາຄືນບັນດານິຕິກຳ ແລະ ລະບຽບການທີ່ກ່ຽວຂ້ອງການສ້າງຕັ້ງສູນຜ່ານປະຕູດຽວ, ປະເມີນຄືນການຈັດຕັ້ງປະຕິບັດສູນການບໍລິການຜ່ານປະຕູດຽວໃນທົ່ວປະເທດ, ພ້ອມທັງ ຄົ້ນຄວ້າຮູບແບບກົນໄກ, ລະບຽບການ ແລະ ມາດຖານຂອງສູນບໍລິການປະຕູດຽວໃໝ່ທີ່ທັນສະໄໝ ເຊິ່ງກຳນົດເອົາເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ເປັນຕົວແບບທົດລອງ.

ວຽກງານຄຸ້ມຄອງລັດຖະກອນ: ໄດ້ຈັດຕັ້ງປະຕິບັດການກວດກາ, ບັນຈຸລັດຖະກອນ, ການເລື່ອນຊັ້ນ-ຂັ້ນ, ການດັດແກ້ຂໍ້ມູນລັດຖະກອນ ແລະ ປະຕິບັດນະໂຍບາຍບຳນານ ແລະ ອຸດໜູນໃນຮູບການຕ່າງໆ; ໄດ້ອອກບັດພະນັກງານ-ລັດຖະກອນຢູ່ບັນດາກະຊວງ-ອົງການຂັ້ນສູນກາງ ຈຳນວນ 10.459 ບັດ ຂອງ 37 ພາກສ່ວນ (ທັງໝົດ 46 ພາກສ່ວນ). ຂະຫຍາຍການນຳໃຊ້ລະບົບຄຸ້ມຄອງລັດຖະກອນແບບທັນສະໄໝ PIMS ຢູ່ຂັ້ນແຂວງ ແລະ ຂັ້ນເມືອງ; ໄດ້ເຊື່ອມຕໍ່ລະບົບບັນຊີຈຳນວນພົນ ກັບບັນຊີເງິນເດືອນ ໃຫ້ເປັນບັນຊີດຽວກັນ ເພື່ອຄຸ້ມຄອງຂໍ້ມູນຖືກຕ້ອງຊັດເຈນ.

ວຽກງານການຄຸ້ມຄອງເອກະສານ: ໄດ້ອອກຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດດຳລັດວ່າດ້ວຍເອກະສານທາງການ ແລະ ລະບຽບກ່ຽວກັບການຮ່າງເອກະສານທາງລັດຖະການ; ສຳເລັດການຄົ້ນຄວ້າຮຽບຮຽງກົດລະບຽບການຄຸ້ມຄອງເອກະສານ.

ໄດ້ປັບປຸງນິຕິກຳຈຳນວນໜຶ່ງ ເປັນຕົ້ນ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ກົດໝາຍວ່າດ້ວຍລັດຖະບານ, ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ, ດຳລັດວ່າການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ.

ເຖິງຢ່າງໃດກໍຕາມ ຍັງເຫັນວ່າມີຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ ຈຳນວນໜຶ່ງ ເປັນຕົ້ນ ການປັບປຸງກົງຈັກການຈັດຕັ້ງຂອງກະຊວງ-ອົງການຍັງບໍ່ທັນໄປຕາມທິດກະທັດຮັດສົມເຫດສົມຜົນ, ກຳນົດຕຳແໜ່ງງານບໍ່ຊັດເຈນ ເຮັດໃຫ້ກົງຈັກຂັ້ນກົມ ແລະ ຂັ້ນພະແນກເພີ່ມຂຶ້ນ; ການຄຸ້ມຄອງ ແລະ ບໍລິຫານລັດ ຢູ່ທ້ອງຖິ່ນຍັງບໍ່ໄປຕາມທິດ 3 ສ້າງ ໂດຍສະເພາະການມອບສິດ ແລະ ຄວາມຮັບຜິດຊອບ ຢູ່ແຕ່ລະຂັ້ນໃນທ້ອງຖິ່ນ; ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການຕ່າງໆ ລວມທັງລະບຽບການກ່ຽວກັບລັດຖະກອນຍັງບໍ່ທັນສັກສິດ ແລະ ບໍ່ທັນເຂັ້ມງວດເທົ່າທີ່ຄວນ.

**(2) ແຜນວຽກຈຸດສຸມ 2: ສົ່ງເສີມຄວາມຮູ້ພູມປັນຍາໃນການຄົ້ນຄວ້າ, ຄຸ້ມຄອງ ແລະ ນຳໃຊ້ວິທະຍາສາດ, ເຕັກໂນໂລຊີ ແລະ ການສື່ສານ**

ໃນໄລຍະ 5 ປີ ຜ່ານມາ ລັດຖະບານໄດ້ເອົາໃຈໃສ່ສົ່ງເສີມສະຖາບັນຄົ້ນຄວ້າຕ່າງໆ ສຸມໃສ່ການຄົ້ນຄວ້າ ພ້ອມທັງນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ອັນພົ້ນເດັ່ນແມ່ນການສະກັດ-ຖອດຣິດສານເຄມີຈາກພືດເປັນຢາທີ່ມີສານຕ້ານມະເຮັງ, ສານບຳລຸງສຸຂະພາບ ແລະ ພັນພືດຊະນິດໃໝ່ຫຼາຍກວ່າ 102 ຊະນິດ, ໄດ້ຄົ້ນພົບເຊື້ອຣາສາຍພັນໃໝ່ຈາກແມງໄມ້ຢູ່ປ່າສະຫງວນຫ້ວຍຍາງທີ່ສາມາດປຸງແຕ່ງເປັນຢາຕ້ານມະເຮັງເຊິ່ງກຳລັງຄົ້ນຄວ້າຕັ້ງຊື່ສາຍພັນ ແລະ ຕີພິມເຜີຍແຜ່ໃນວາລະສານສາກົນ, ຄົ້ນຄວ້າການຜະລິດເຊື້ອແລັກຕິກອາຊິດແບັກທີເລຍ ໄດ້ 34 ເຊື້ອ ແລະ ເຊື້ອຢີດສ໌ 39 ເຊື້ອ ເພື່ອເປັນຫົວເຊື້ອປຸງແຕ່ງຜະລິດຕະພັນອາຫານ, ຄົ້ນຄວ້າປັບປຸງຄຸນນະພາບ ແລະ ສະມັດຕະພາບເຂົ້າໄກ່ນ້ອຍແຂວງຊຽງຂວາງ, ຄົ້ນຄວ້ານຳໃຊ້ເສັ້ນໄຍກ້ວຍຜະລິດເປັນວັດສະດຸຫຸ້ມຫໍ່ສິນຄ້າ, ຄົ້ນຄວ້າເຮືອບິນບໍ່ມີຄົນຂັບ, ຄົ້ນຄວ້າສ້າງຫຸ່ນຍົນເກັບກູ້ລະເບີດ. ໃນປີ 2019 ນັກວິທະຍາສາດ 2 ທ່ານ ໄດ້ຮັບຄັດເລືອກເປັນສະມາຊິກ ຂອງສະພາບັນດິດວິທະຍາສາດສາກົນ, ສ້າງນັກຄົ້ນຄວ້າປະລິນຍາເອກໄດ້ 13 ທ່ານ. ໂຄງລ່າງພື້ນຖານທີ່ສຳຄັນຈຳນວນໜຶ່ງໄດ້ຮັບການພັດທະນາ ເປັນຕົ້ນ ສຳເລັດການກໍ່ສ້າງສະຖາບັນນິຕິເວດວິທະຍາ ແລະ ເຕັກໂນໂລຊີວະພາບເຊິ່ງມີຫ້ອງທົດລອງທີ່ທັນສະໄໝ, ສຳເລັດການກໍ່ສ້າງເຂດພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ 1 ແຫ່ງ; ສຳເລັດການປັບປຸງ ແລະ ຍົກລະດັບສະຖາບັນຄົ້ນຄວ້າວິທະຍາສາດ ໄດ້ລະດັບສາກົນ 1 ແຫ່ງ; ໄດ້ພັດທະນາຊອບແວຣການຄຸ້ມຄອງເອກະສານ, ຄຸ້ມຄອງພະນັກງານ, ຄຸ້ມຄອງຊັບສິນ; ສຳເລັດການກໍ່ສ້າງສູນຂໍ້ມູນທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດໄດ້ 1 ແຫ່ງ, ສຳເລັດການກໍ່ສ້າງສູນຂໍ້ມູນ (DATA CENTER) ທີ່ນຳໃຊ້ເຕັກໂນໂລຊີທັນສະໄໝ, ປະຢັດພະລັງງານ ແລະ ສາມາດບັນຈຸຂໍ້ມູນໄດ້ເຖິງ 400 TB, ການບໍລິຫານລັດດ້ວຍເອເລັກໂທຣນິກເພື່ອຫັນເປັນລັດຖະບານທີ່ທັນສະໄໝດ້ານດິຈິຕອນ, ໄດ້ສຳເລັດການສ້າງລະບົບ e-Government portal ເຊິ່ງລະບົບໃນປັດຈຸບັນສາມາດເຊື່ອມໂຍງຂໍ້ມູນ ແລະ ການບໍລິການຫາພາກສ່ວນກະຊວງ ແລະ ຫ້ອງການຂອງລັດໃນຂະແໜງການຕ່າງໆໄດ້ໃນຂັ້ນພື້ນຖານ; ສຳເລັດຕິດຕັ້ງລະບົບກອງປະຊຸມທາງໄກໃຫ້ແກ່ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາ ຊົນ ແລະ 18 ແຂວງທົ່ວປະເທດລວມທັງໝົດ 49 ພາກສ່ວນ (ຂັ້ນສູນກາງ 17 ພາກສ່ວນ ແລະ ຂັ້ນທ້ອງຖິ່ນ 32 ພາກສ່ວນ) ແລະ ສ້າງລາຍຊື່ນຳໃຊ້ຈຳນວນ 1.115 ລາຍຊື່ (ໂດຍສະເພາະໄດ້ສຸມໃສ່ຕິດຕັ້ງໃຫ້ຫ້ອງວ່າການສູນກາງພັກ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ສະພາແຫ່ງຊາດ ເພື່ອນຳໃຊ້ປະຊຸມຮ່ວມກັບບັນດາ 18 ແຂວງ ໃນຊ່ວງການສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19); ສຳເລັດການສ້າງສູນຮຽນຮູ້ນຳໃຊ້ເຕັກໂນໂລຊີການສື່ສານຂໍ້ມູນ-ຂ່າວສານ ຈຳນວນ 1 ແຫ່ງ ຢູ່ແຂວງໄຊສົມບູນ; ສຳເລັດການພັດທະນາ ແລະ ນຳໃຊ້ຟອນພາສາລາວ (Phetsarath OT) ເປັນທາງການ; ສຳເລັດການພັດທະນາລະບົບການແປພາສາ ໄມໂຄຊອບ (Microsoft Translator) ໃນຂັ້ນພື້ນຖານ ໂດຍມີປະໂຫຍກພາສາອັງກິດແປມາເປັນພາສາລາວເອົາເຂົ້າໃນລະບົບທັງໝົດຈຳນວນ 5.000 ປະໂຫຍກ; ສຳເລັດການສ້າງລະບົບຫ້ອງການທັນສະໄໝ (e-Office) ນຳໃຊ້ຢູ່ພາຍໃນກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ (ປທສ), ຫ້ອງວ່າການສຳນັກງານນາຍົກ ແລະ ຂະຫຍາຍການນຳໃຊ້ໃຫ້ພະແນກ ປທສ ໃນ 3 ແຂວງ. ຕິດຕັ້ງ ແລະ ຂະຫຍາຍລະບົບ e-mail ຮອງຮັບໄດ້ 2.000 Users, ສ້າງລາຍຊື່ອີເມວພາກລັດ ໄດ້ 34 ພາກສ່ວນ; ສຳເລັດການພັດທະນາເວັບໄຊຂອງພາກລັດຖະບານໃຫ້ເປັນມາດຕະຖານດຽວກັນ (G-Web Platform) ຢູ່ລະບົບ Cloud ຂອງສູນອິນເຕີເນັດແຫ່ງຊາດ ແລະ ໄດ້ນຳໃຊ້ເພື່ອສ້າງໃຫ້ຫຼາຍພາກສ່ວນພາຍໃນຂະແໜງ ປທສ ແລະ ບັນດາກະຊວງຕ່າງໆ ໂດຍສະເພາະໄດ້ນຳໃຊ້ເພື່ອສ້າງເວັບໄຊ

www.covid19.gov.la ເພື່ອຮັບໃຊ້ວຽກງານຕ້ານ ແລະ ສະກັດກັ້ນພະຍາດ ໂຄວິດ-19; ສໍາເລັດການສ້າງໂປຣແກຣມສື່ສານພາກລັດ (G-Chat) ເພື່ອໃຊ້ໃນການສື່ສານ ແລະ ສົ່ງ-ຮັບຂໍ້ມູນພາກລັດ ໃຫ້ວ່ອງໄວ ແລະ ມີຄວາມປອດໄພ. ໄດ້ຕິດຕັ້ງເຄື່ອງອໍານວຍຄວາມສະດວກ ICT ແລະ ອຸປະກອນເຕັກໂນໂລຊີໃນຫຼາຍໆຂະແໜງການ ພ້ອມທັງ ສືບຕໍ່ການຮ່ວມມືໃຕ້-ໃຕ້ ແລະ ແຜນງານການຮ່ວມກັບສາກົນ ທີ່ສະໜັບສະໜູນການພັດທະນາວຽກງານ ICT ແລະ ເຕັກໂນໂລຊີ. ດ້ານນິຕິກໍາ: ໄດ້ກໍານົດນະໂຍບາຍ ແລະ ຂອບນິຕິກໍາ ເພື່ອປັບປຸງວຽກງານນະວັດຕະກໍາ ເປັນຕົ້ນ ກົດໝາຍວ່າດ້ວຍຊັບສິນທາງປັນຍາ, ການຂຶ້ນເຄື່ອງໝາຍການຄ້າ, ລິຂະສິດ ແລະ ສິດທິບັດອຸດສາຫະກໍາ ແລະ ໄດ້ຄົ້ນຄວ້າກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອນໍາສະເໜີຕໍ່ສະພາແຫ່ງຊາດຮັບຮອງ.

ດ້ານຄວາມປອດໄພໂທລະຄົມມະນາຄົມ ແລະ ຂໍ້ມູນຂ່າວສານ: ສໍາເລັດການສ້າງສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ (LaoCERT) ເພື່ອຄຸ້ມຄອງ ແລະ ປ້ອງກັນເຫດອາສະຍາກໍາທາງລະບົບຄອມພິວເຕີ ແລະ ພ້ອມທັງໄດ້ເຂົ້າເປັນສະມະຊິກຂອງອົງການຂົງເຂດອາຊີ-ປາຊີຟິກ (APCERT); ໄດ້ເຊັນສັນຍາຮ່ວມມືກັບສາກົນເພື່ອຕິດຕັ້ງລະບົບປ້ອງກັນຂໍ້ມູນການສື່ສານຂ່າວສານຜ່ານເຄືອຂ່າຍອິນເຕີເນັດ (Public Key Infrastructure-PKI); ສໍາເລັດການສ້າງລະບົບຕິດຕາມກວດກາໄພຄຸກຄາມທາງໄຊເບີ (Cyber attack Monitoring System); ຕິດຕັ້ງລະບົບຕິດຕາມ ແລະ ກວດຈັບການໂຈມຕີລະບົບເຄືອຄາຍ (Tsubame Sensor); ປັບປຸງລະບົບຄວາມປອດໄພຂໍ້ມູນຂ່າວສານຂອງສູນອິນເຕີເນັດແຫ່ງຊາດ ໄດ້ຕາມມາດຖານ ISO27001.

ດ້ານໄປສະນີ: ໄດ້ຮັບການປັບປຸງ ແລະ ຫັນໄປສູ່ການຄຸ້ມຄອງແບບເອເລັກໂທຣນິກຫຼາຍຂຶ້ນ ໂດຍການນໍາໃຊ້ເທັກໂນໂລຊີທີ່ທັນສະໄໝເຂົ້າຊ່ວຍໃນຮູບແບບຕ່າງໆ ເປັນຕົ້ນ: ບໍລິການ e-post, e-logistic, e-Finance Service ແລະ e-Commerce; ໄດ້ມີລະບົບປະຕູຖານຂໍ້ມູນໄປສະນີແຫ່ງຊາດ ທີ່ເປັນຊ່ອງທາງໃນການໃຫ້ບໍລິການແກ່ສັງຄົມ; ປັບປຸງການບໍລິການໃຫ້ມີມາດຖານ, ມີຄຸນນະພາບ, ມີຄວາມປອດໄພ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ເຖິງວ່າມີຜົນສໍາເລັດຫຼາຍດ້ານ ແຕ່ຍັງເຫັນວ່າການຄົ້ນຄວ້າ, ຄຸ້ມຄອງ ແລະ ນໍາໃຊ້ຜົນການຄົ້ນຄວ້າເຂົ້າໃນການພັດທະນາຍັງບໍ່ທັນກວ້າງຂວາງເທົ່າທີ່ຄວນ, ຄວາມເປັນເຈົ້າການໃນການຄົ້ນຄວ້າ ແລະ ພັດທະນາຂອງບາງພາກສ່ວນບໍ່ທັນສູງ.

**(3) ແຜນວຽກຈຸດສຸມ 3: ສົ່ງເສີມ ແລະ ພັດທະນາບົດບາດຍິງ-ຊາຍ, ເຍົາວະຊົນ ແລະ ໄວໜຸ່ມ**

ວຽກງານສົ່ງເສີມ ແລະ ພັດທະນາຄວາມສະເໝີພາຍຍິງ-ຊາຍ, ເຍົາວະຊົນ ແລະ ໄວໜຸ່ມ ໄດ້ຮັບການເອົາໃຈໃສ່ ແລະ ພັດທະນາຫຼາຍຂຶ້ນ ເຊິ່ງສະແດງອອກ:

ວຽກງານການສົ່ງເສີມ ແລະ ພັດທະນາຄວາມສະເໝີພາບຍິງ-ຊາຍ: ໄດ້ມີການໂຄສະນາ ແລະ ເຜີຍແຜ່ນິຕິກໍາ, ນະໂຍບາຍ, ຍຸດທະສາດ ແລະ ສົນທິສັນຍາຕ່າງໆ ກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງ ແລະ ສົ່ງເສີມສິດທິເດັກ ແລະ ການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຢູ່ບັນດາສະຖາບັນການສຶກສາ, ກະຊວງ-ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ຕິດພັນກັບຂະບວນການລະນຶກວັນສາກົນເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ວັນເດັກສາກົນໃນແຕ່ລະປີ ເພື່ອປ່ຽນແປງທັດສະນະຄະຕິແບບຄອງເດີມ ແລະ ຮີດຄອງປະເພນີເກົ່າແກ່ຫຼ້າຫຼັງ ທີ່ເປັນອຸປະສັກກີດຂວາງການພັດທະນາແມ່ຍິງ ກໍຄືເພື່ອການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ຄວາມຮຸນແຮງຕໍ່ເດັກ ແລະ ສົ່ງເສີມຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງ ແລະ ສົ່ງເສີມສິດທິເດັກ, ສະເຫຼີມສະຫຼອງວັນຄົບຮອບສົນທິສັນຍາສິດທິເດັກ 30 ປີ (1989-2019).

ຈັດຕັ້ງປະຕິບັດແຜນດໍາເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ, ແຜນດໍາເນີນງານແຫ່ງຊາດ ວຽກແມ່ ແລະ ເດັກ, ແຜນດໍາເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ, ຄູ່ມືກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນໃນການປ້ອງກັນ ແລະ ແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເຮັດໃຫ້ດັດຊະນີຄວາມສະເໝີພາບຍິງ-ຊາຍ ຈາກ 0,713 ໃນປີ 2015 ເປັນ 0,731 ໃນປີ 2020 ຈາກອັນດັບ 52

ມາເປັນອັນດັບ 43 ໃນລະດັບໂລກ ແລະ ອັນດັບ 2 ໃນປະເທດອາຊຽນ. ແມ່ຍິງໃນຕຳແໜ່ງນຳພາ-ຄຸ້ມຄອງຂັ້ນລັດຖະມົນຕີປະຕິບັດໄດ້ 18,18% ໃນປີ 2019; ຂັ້ນກົມ ປະຕິບັດ 22,38%, ຂັ້ນເຈົ້າແຂວງ ແລະ ຮອງເຈົ້າແຂວງປະຕິບັດ 4,76%, ຂັ້ນເຈົ້າເມືອງ ແລະ ຮອງເຈົ້າເມືອງ ປະຕິບັດໄດ້ 6,72% ໃນປີ 2019. ເດັກໃນເກນອາຍຸ 0-17 ປີ ມີຊີວິດການເປັນຢູ່ຄົບໃນ 7 ມິຕິ ບັນລຸ 12%, ແຕ່ກໍຍັງມີສິ່ງທ້າທາຍຄືເດັກຍັງຂາດເຂີນ ໂດຍສະເພາະຂາດເຂີນໃນ 3 ມິຕິ ຢູ່ 50,4%.

ອັນທີ່ພົ້ນເດັ່ນແມ່ນ ລັດຖະບານລາວໄດ້ສຳເລັດການສ້າງກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ ຖືກຮັບຮອງຕາມມະຕິສະພາແຫ່ງຊາດໃນປີ 2019 ແລະ ລັດຖະດຳລັດຂອງປະທານປະເທດ ປະກາດໃຊ້ ໃນປີ 2020. ສຳເລັດຄວາມໝາຍໝັ້ນຂອງ ສປປ ລາວ ໃນການສົ່ງເສີມສິດທິເດັກພາຍໃຕ້ຄຳຂວັນ “ຄວາມອາດສາມາດບໍ່ມຊ້ອນທີ່ບໍ່ຈຳກັດຂອງຄົນລາວລຸ້ນປີ 2030” ໂດຍການລົງນາມຮ່ວມຂອງ ລັດຖະບານ, ຮອງເຈົ້າແຂວງ, ພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ອົງການສະຫະປະຊາຊາດ ແລະ ສະຖານທູດ ປະຈຳ ສປປ ລາວ.

ວຽກງານຊາວໜຸ່ມ: ອົງການຈັດຕັ້ງຊາວໜຸ່ມ ນັບແຕ່ຂັ້ນສູນກາງຈົນຮອດຂັ້ນທ້ອງຖິ່ນ-ຂັ້ນຮາກຖານ ໄດ້ເອົາໃຈໃສ່ສຶກສາອົບຮົມ ແລະ ໂຄສະນາແນວທາງນະໂຍບາຍ, ມະຕິຄຳສັ່ງ ແລະ ລະບຽບການຕ່າງໆຂອງພັກ-ລັດ; ພ້ອມທັງ, ໄດ້ສ້າງ ແລະ ສົ່ງເສີມວິຊາຊີບໃຫ້ແກ່ຊາວໜຸ່ມ ເພື່ອໃຫ້ເຂົາເຈົ້າມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ມີຄຸນສົມບັດ, ສິນທຳປະຕິວັດ, ມີຄວາມຮູ້ຄວາມສາມາດ ເພື່ອກາຍເປັນກຳລັງແຮງໃນການພັດທະນາປະເທດໃນອະນາຄົດ, ເຊິ່ງສະແດງອອກ: ໄດ້ສາເລັດການສ້າງກົດໝາຍວ່າດ້ວຍຊາວໜຸ່ມລາວ, ສຳເລັດການອອກດຳລັດຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊາວໜຸ່ມ-ເຍົາວະຊົນ ໄລຍະ 2021-2030 ແລະ ສຳເລັດການສ້າງວັງເຍົາວະຊົນ ແລະ ຫໍມູນເຊື້ອຊາວໜຸ່ມລາວ; ໄດ້ຝຶກອົບຮົມວິຊາຊີບ ແລະ ສ້າງວຽກເຮັດງານທຳໃຫ້ແກ່ ໄວໜຸ່ມ ໂດຍສະເພາະ ໄວໜຸ່ມ ຢູ່ຊົນນະບົດຫ່າງໄກສອກຫຼີກ, ຜູ້ທຸກຍາກ ແລະ ດ້ອຍໂອກາດ ເຊັ່ນ: ວິຊາສ້າງສ້ອມແປງລົດຈັກ, ລົດໃຫຍ່, ຊ່າງໄຟຟ້າ, ຕັດຫຍິບ, ເສີມສວຍ ແລະ ອື່ນໆໄດ້ 4.475 ຄົນ ໃນປີ 2017 ແລະ ໄດ້ສະໜອງທຶນກູ້ຢືມໂດຍບໍ່ມີດອກເບ້ຍໃຫ້ຊາວໜຸ່ມຕັ້ງຮ້ານເປີດບໍລິການສ້ອມແປງລົດຈັກ, ຕັດຫຍິບ 5 ແຂວງ ຄື: ແຂວງບໍ່ແກ້ວ, ວຽງຈັນ, ຄຳມ່ວນ, ອັດຕະປືແລະ ນະຄອນຫຼວງວຽງຈັນ ເປັນມູນຄ່າ 49.228.000 ກີບ, ການລ້ຽງສັດ (ແບ້, ໝູ, ໄກ່) ຢູ່ 3 ແຂວງ (ໄຊຍະບູລີ, ຊຽງຂວາງ ແລະ ໄຊສົມບູນ) ເປັນມູນຄ່າ 50.000.000 ກີບ; ໄດ້ໃຫ້ຄຳປຶກສາໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍ ຈຳນວນ 480 ຄົນ.

ເຖິງແນວໃດກໍ່ຕາມ ເຫັນວ່າຊາວໜຸ່ມໃນເກນອາຍຸສະເລ່ຍ 18-30 ບໍ່ໄດ້ຖືກຈ້າງງານ, ຮັບການສຶກສາ ຫຼື ຝຶກອົບຮົມ (NEET) ປະມານ 39%; ໃນນີ້, ແມ່ຍິງ ກວມປະມານ 45%. ອັດຕາການຫວ່າງງານຂອງຊາວໜຸ່ມແມ່ນຍັງສູງທຽບໃສ່ຄ່າສະເລ່ຍແຫ່ງຊາດ ເຊິ່ງເພີ່ມຂຶ້ນຈາກ 4,1% ໃນສົກປີ 2012-2013 ມາເປັນ 15,7% ໃນສົກປີ 2018-2019 ແຕ່ການຫວ່າງງານໃນຊາວໜຸ່ມຫາກເພີ່ມຂຶ້ນເຖິງ 21,8% ຈະເຮັດໃຫ້ການປະກອບສ່ວນຂອງກຳລັງແຮງງານຫຼຸດລົງ. ກຳລັງແຮງງານຄາດວ່າຈະເພີ່ມຂຶ້ນຈາກ 4,1 ລ້ານຄົນ ໃນປີ 2015 ມາເປັນ 5,5 ລ້ານຄົນ ໃນປີ 2030, ການປັບປຸງນະໂຍບາຍການພັດທະນາ ແລະ ຕະຫຼາດແຮງງານໃຫ້ສອດຄ່ອງກັບການປ່ຽນແປງທາງດ້ານປະຊາກອນຍັງເປັນສິ່ງທ້າທາຍ ເພື່ອຮັບປະກັນການສ້າງໂອກາດການຈ້າງງານພາຍໃນ.

ຊາວໜຸ່ມໃນຕົວເມືອງສ່ວນໃຫຍ່ແມ່ນມີຄວາມຕ້ອງການເຮັດທຸລະກິດສ່ວນຕົວ ໃນຂະນະດຽວກັນ ຊາວໜຸ່ມຢູ່ຊົນນະບົດສ່ວນຫຼາຍແມ່ນຕ້ອງການຈະເຮັດວຽກນຳລັດ, ວິສາຫະກິດຂະໜາດນ້ອຍເຄິ່ງໜຶ່ງ ແມ່ນໄດ້ຮັບການບໍລິຫານຈາກເພດຍິງ. ຄວາມຕື່ນໂຕຂອງຊາວໜຸ່ມໃນການປະກອບຄຳຄິດຄຳເຫັນ ແລະ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມມີໜ້ອຍ.

ດັດຊະນີການພັດທະນາຂອງຊາວໜຸ່ມອາຊຽນ (YDI) ປີ 2015 ຈັດລຳດັບ ສປປ ລາວ ຢູ່ໃນລຳດັບຕ່ຳທີ່ສຸດໃນກຸ່ມປະເທດອາຊຽນ ເຊິ່ງມີດັດຊະນີ 0.365 (ຕົວເລກ ‘0’ ຖືວ່າຮ້າຍທີ່ສຸດ ແລະ ‘1’ ຖືວ່າດີທີ່ສຸດ). ຄະນະຊາວໜຸ່ມ

ປະຊາຊົນປະຕິວັດລາວ (ຄຊປປລ) ໄດ້ມີການຄົ້ນຄວ້າສ້າງຍຸດທະສາດກ່ຽວກັບຊາວໜຸ່ມ ແລະ ເຍົາວະຊົນ ສະບັບທຳອິດຂອງ ສປປ ລາວ ເພື່ອແກ້ໄຂບັນຫາໃນໄວໜຸ່ມ.

ກຸ່ມຊາວໜຸ່ມທີ່ຕ້ອງການຄວາມເອົາໃຈໃສ່ແມ່ນ ຊາວໜຸ່ມທີ່ຫວ່າງງານ, ແມ່ຍິງໜຸ່ມ, ຊາວໜຸ່ມເສຍອົງຄະ ແລະ ກຸ່ມຄົນໄວໜຸ່ມທີ່ມີຄວາມສ່ຽງກັບພະຍາດ HIV, ຊາວໜຸ່ມທີ່ພົວພັນກັບຢາເສບຕິດ ແລະ ການດື່ມສິ່ງມຶນເມົາ, ກຸ່ມຄົນຂາຍບໍລິການທາງເພດ, ຄົນໄວໜຸ່ມທີ່ຖືກຄ້າມະນຸດ, ການປະລະການຮຽນ, ຊາວໜຸ່ມທີ່ບໍ່ປະຕິບັດຕາມກົດໝາຍ, ຊາວໜຸ່ມທີ່ຖືກເອົາປຽບດ້ານແຮງງານ, ຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ຈິດໃຈ, ການເຄື່ອນຍ້າຍຂອງຊາວໜຸ່ມ, ຄວາມຫຼາກຫຼາຍທາງເພດຂອງຊາວໜຸ່ມ ແລະ ຊາວໜຸ່ມຊົນເຜົ່າຜູ້ຖືກຈຳແນກ.

ອີງຕາມຜົນສຳຫຼວດພົນລະເມືອງປີ 2015 ມີຜູ້ເສຍອົງຄະຈຳນວນ 160.881 ຄົນ ກວມ 2,8% ຂອງປະຊາກອນ; ໃນນັ້ນ ມີແມ່ຍິງເຄິ່ງໜຶ່ງ. ຂໍ້ມູນກ່ຽວກັບບຸກຄົນເສຍອົງຄະໃນດ້ານເສດຖະກິດ-ສັງຄົມ, ຄວາມຮ້າຍແຮງຂອງການເສຍອົງຄະ ແລະ ສະພາບຊີວິດການເປັນຢູ່ ແມ່ນມີຈຳກັດ. ຕົວຢ່າງ: ຍັງບໍ່ສາມາດຮັບຮູ້ໄດ້ວ່າຈຳນວນຂອງບຸກຄົນເສຍອົງຄະທີ່ເປັນໄວໜຸ່ມ ທີ່ບໍ່ໄດ້ຮັບການສຶກສາ, ການຈ້າງງານ ຫຼື ການຝຶກອົບຮົມ (NEET) ແລະ ອັດຕາການປະກອບສ່ວນໃນບຸກຄະລາກອນແຮງງານ.

ສປປ ລາວ ໄດ້ໃຫ້ສັດຕະຍາບັນ ໃນສົນທິສັນຍາວ່າດ້ວຍສິດຂອງບຸກຄົນເສຍອົງຄະ (Convention on the Rights of the Persons with Disabilities) ແລະ ໄດ້ຮັບຮອງກົດໝາຍວ່າດ້ວຍສິດຂອງບຸກຄົນເສຍອົງຄະສະບັບປີ 2019, ໄດ້ສົ່ງບົດລາຍງານແຫ່ງຊາດສະບັບທຳອິດໃຫ້ແກ່ ຄະນະກຳມະການດ້ານສິດຂອງບຸກຄົນເສຍອົງຄະ ໃນປີ 2016, ໄດ້ຮ່າງແຜນປະຕິບັດງານກ່ຽວກັບສິດຂອງບຸກຄົນເສຍອົງຄະ ໄລຍະປີ 2021-2025, ລັດຖະທຳມະນູນ ແລະ ນິຕິກຳໃນສະບັບປັດຈຸບັນແມ່ນຍັງບໍ່ທັນໄດ້ລະບຸຈະແຈ້ງກ່ຽວກັບການຫ້າມບໍ່ໃຫ້ຈຳແນກບຸກຄົນເສຍອົງຄະໃນທຸກຮູບແບບ.

ເຖິງຢ່າງໃດກໍຕາມ ເຫັນວ່າຍັງມີຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຈຳນວນໜຶ່ງ ເປັນຕົ້ນ: ທັດສະນະຄະຕິທີ່ຫຼ້າຫຼັງ, ຄອງເດີມ ທີ່ເປັນຜົນກະທົບຕໍ່ການດຳລົງຊີວິດ ແລະ ການພັດທະນາຂອງແມ່ຍິງ ແລະ ເດັກ, ແມ່ຍິງ ແລະ ເດັກຍັງປະເຊີນກັບ ຄວາມທຸກຍາກ, ບໍ່ຮູ້ສິດທິຂັ້ນພື້ນຖານຂອງຕົນເອງ, ອັດຕາສ່ວນແມ່ຍິງໃນການປະກອບອາຊີບ ແລະ ບົດບາດໃນການຕັດສິນໃຈ ຫຼື ໃນຕຳແໜ່ງນຳພາຄຸ້ມຄອງຍັງໜ້ອຍເມື່ອທຽບກັບເພດຊາຍ. ເດັກຍັງມີການແຕ່ງດອງ ແລະ ເກີດລູກກ່ອນໄວ.

ການກົນໄກການຈັດຕັ້ງປະຕິບັດກ່ຽວກັບວຽກງານຜູ້ເສຍອົງຄະແມ່ນຍັງບໍ່ທັນເຂັ້ມແຂງ ແລະ ຜູ້ເສຍອົງຄະຍັງຖືກ ຈຳແນກໃນການເຂົ້າເຖິງສາທາລະນະສຸກ, ການສຶກສາ, ການຈ້າງງານ ແລະ ອາຄານສາທາລະນະ ແລະ ການຂົນສົ່ງຕ່າງໆ. ການຝຶກອົບຮົມທາງດ້ານວິຊາອາຊີບ ແລະ ທັກສະ ຍັງບໍ່ທັນຖືກອອກແບບໃຫ້ແທດເໝາະກັບກຸ່ມຄົນຜູ້ເສຍອົງຄະທີ່ມີຄວາມຕ້ອງການຂອງຕະຫຼາດ. ເດັກທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການ ແລະ ຄວາມບໍ່ຄົບຖ້ວນທາງດ້ານສະຕິປັນຍາ ແມ່ນຍັງບໍ່ທັນເປັນທີ່ຍອມຮັບໃນລະບົບການສຶກສາ.

## 3. ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ:

ເປົ້າໝາຍການພັດທະນາແບບຍືນຍົງ (ປພຍ) ຮອດປີ 2030 ໄດ້ຮັບຮອງເອົາ ໃນປີ 2015 ຢູ່ທີ່ສຳນັກງານໃຫຍ່ຂອງອົງການສະຫະປະຊາຊາດເພື່ອການພັດທະນາ, ນິວຢອກ ສະຫາລັດອາເມລິກາ ເຊິ່ງປະກອບມີ 17 ເປົ້າໝາຍ ແລະ 169 ຄາດໝາຍສູ້ຊົນ ແລະ ສປປ ລາວ ໄດ້ສະເໜີເອົາການແກ້ໄຂບັນຫາການເກັບກູ້ລູກລະເບີດບໍ່ທັນແຕກ ເຊິ່ງເປັນໜຶ່ງໃນສິ່ງທ້າທາຍທີ່ຖ່ວງດຶງການພັດທະນາ ເຂົ້າໃນເປົ້າໝາຍການພັດທະນາແບບຍືນຍົງຂອງ ສປປ ລາວ ຕື່ມອີກເປົ້າໝາຍໜຶ່ງເປັນເປົ້າໝາຍທີ 18 (SDG 18) "ຊີວິດປອດໄພຈາກລູກລະເບີດທີ່ບໍ່ທັນແຕກ" ແລະ ກໍ່ໄດ້ຖືກຮັບຮອງ ໃນວັນທີ 7 ກັນຍາ 2016 ທີ່ ນະຄອນຫຼວງວຽງຈັນ.

ການຈັດຕັ້ງປະຕິບັດ ປພຍ ຂອງ ສປປ ລາວ ເຫັນວ່າມີຄວາມຄືບໜ້າໃນຫຼາຍດ້ານພໍສົມຄວນ ເປັນຕົ້ນ ປະທານປະເທດແຫ່ງ ສປປ ລາວ ໄດ້ແຕ່ງຕັ້ງຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ເຊິ່ງ

ມອບໃຫ້ທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ເປັນປະທານ ແລະ ປະກອບມີຄະນະລັດຖະມົນຕີ ຈາກພາກສ່ວນທີ່ກ່ຽວຂ້ອງ ເປັນສະມາຊິກ ເພື່ອເຮັດໜ້າທີ່ການຊີ້ນໍາລວມກ່ຽວກັບການປະສານງານ ແລະ ຈັດຕັ້ງປະຕິບັດ ປພຍ ຜ່ານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ, ເຊິ່ງກໍ່ໄດ້ເຊື່ອມສານ ປພຍ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ທັງໝົດ 92 ຕົວຊີ້ບອກ. ສິ່ງພົ້ນເດັ່ນ ໃນປີ 2018 ສປປ ລາວ ໄດ້ສະເໜີບົດລາຍງານສະໝັກໃຈແຫ່ງຊາດ (Voluntary National Report: VNR) ເປັນຄັ້ງທໍາອິດກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ປພຍ ໃນເດືອນ ກໍລະກົດ 2018 ຢູ່ທີ່ລັດນິວຢອກ ປະເທດອາເມລິກາ ເຊິ່ງຈະສາມາດລາຍງານຄວາມຄືບໜ້າໄດ້ 124 ຕົວຊີ້ບອກ ໃນທັງໝົດ 242 ຕົວຊີ້ບອກຂອງສາກົນ. ປັດຈຸບັນ ຂະແໜງການ ແລະ ທ້ອງຖິ່ນກໍາລັງສືບຕໍ່ຈັດຕັ້ງປະຕິບັດ ປພຍ ຢ່າງຕັ້ງໜ້າ.

ເຖິງຢ່າງໃດກໍຕາມ ເຫັນວ່າຍັງມີສິ່ງທ້າທາຍຫຼາຍສົມຄວນ ໃນການຈັດຕັ້ງປະຕິບັດຕົວຈິງ ເນື່ອງຈາກຂາດທຶນຮອນ, ບາງພາກສ່ວນ ແລະ ປະຊາຊົນຈໍານວນໜຶ່ງ ຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງ ແລະ ບໍ່ທັນເປັນເຈົ້າການໃນການຈັດຕັ້ງປະຕິບັດ.

## 4. ການຈັດຕັ້ງປະຕິບັດເງື່ອນໄຂການອອກຈາກສະຖານະພາບຄວາມດ້ອຍພັດທະນາ

+ **ການປະເມີນ LDC ປີ 2018:** ອີງຕາມຜົນຂອງການປະເມີນປີ 2018 ຂອງອົງການ CDP ເຫັນວ່າ ສປປ ລາວ ສາມາດບັນລຸ 2 ໃນ 3 ເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC). ເຖິງວ່າ ສປປ ລາວ ຈະສາມາດບັນລຸເງື່ອນໄຂກໍຕາມ ແຕ່ຍັງຕ້ອງສືບຕໍ່ເອົາໃຈໃສ່ການສ້າງຄວາມສາມາດໃນການແຂ່ງຂັນທັງພາຍໃນ ແລະ ຕ່າງປະເທດດ້ວຍການສົ່ງເສີມການສ້າງມູນຄ່າເພີ່ມໃນຂະບວນການຜະລິດ ແລະ ຫຼຸດຜ່ອນການນໍາໃຊ້ຊັບພະຍາກອນ ທໍາມະຊາດຈະສາມາດຫຼຸດຜ່ອນຄວາມບອບບາງຈາກຜົນກະທົບດ້ານເສດຖະກິດພາຍນອກ ແລະ ຮັບປະກັນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາແບບຍືນຍົງ. ເຖິງຢ່າງໃດກໍຕາມ ການຫຼຸດພົ້ນຈາກກຸ່ມບັນດາປະເທດດ້ອຍພັດທະນາ ບໍ່ໄດ້ໝາຍຄວາມວ່າ ປະເທດຈະຢູ່ໃນເສັ້ນທາງການພັດທະນາແບບຍືນຍົງ ໂດຍສະເພາະຖ້າຫາກວ່າ ເຮົາສາມາດຫຼຸດພົ້ນໄດ້ ພຽງແຕ່ 2 ເງື່ອນໄຂ GNI ແລະ HAI ໂດຍທີ່ EVI ບໍ່ຜ່ານ. ສະນັ້ນ, ເພື່ອໃຫ້ການພັດທະນາເປັນໄປຢ່າງສະໝໍ່າສະເໝີ, ສາມາດຍົກລະດັບການພັດທະນາໃຫ້ສູງຂຶ້ນອີກ ແລະ ໃຫ້ທົ່ວເຖິງ, ສປປ ລາວ ຕ້ອງສຸມໃສ່ການປ່ຽນແປງໂຄງສ້າງ ທີ່ໄດ້ກໍານົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII, ໃນນັ້ນ ລວມເຖິງການເພີ່ມກໍາລັງ ແລະ ສະມັດຕະພາບການຜະລິດ, ການກະຈາຍຂອງເສດຖະກິດ ແລະ ການກະກຽມຄວາມພ້ອມການຮັບມື ໃນຍາມສຸກເສີນ.

+ **ຄວາມຄືບໜ້າຕາມເງື່ອນໄຂ LDC**

– **ຄ່າດັດຊະນີ GNI:** ເຫັນວ່າທີ່ຢູ່ໃນທ່າອ່ຽງສະເໝີຕົ້ນສະເໝີປາຍ ໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນລາວມີການປ່ຽນແປງທີ່ດີຂຶ້ນ. ຄ່າມາດຖານ GNI ໃນປີ 2018 ຂອງ ສປປ ລາວ ສາມາດປະຕິບັດໄດ້ 1.996 ໂດລາສະຫະລັດ ເຫັນວ່າລື່ນຄາດໝາຍ 1.230 ໂດລາສະຫະລັດ ແລະ ສູງກວ່າ GNI ໃນປີ 2009 ທີ່ ສປປ ລາວ ປະຕິບັດໄດ້ພຽງແຕ່ 510 ໂດລາສະຫະລັດ ເຫັນວ່າເພີ່ມຂຶ້ນ 1.486 ໂດລາສະຫະລັດ. ຖ້າຫາກວ່າອັດຕາການເຕີບໂຕ GDP ຂອງ ສປປ ລາວ ຍັງສືບຕໍ່ເຕີບໂຕຢູ່ໃນລະດັບ 6,5-7% ຄາດວ່າ ສປປ ລາວ ຈະສາມາດບັນລຸເງື່ອນໄຂ GNI ໄດ້ໃນປີ 2021.

– **ຄ່າດັດຊະນີ HAI:** ຕົວຊີ້ບອກ HAI ແມ່ນໃຊ້ໄວ້ເພື່ອວັດແທກຄວາມສາມາດໃນການສ້າງຊັບພະຍາກອນມະນຸດທີ່ຈະເປັນກໍາລັງໃນການພັດທະນາປະເທດ ເຊິ່ງລວມມີໂພຊະນາການ, ອັດຕາການເກີດ, ອັດຕາການຕາຍ, ອັດຕາຮູ້ໜັງສື ແລະ ອັດຕາເຂົ້າຮຽນຊັ້ນມັດທະຍົມ. ການປະເມີນຄ່າດັດຊະນີ HAI ຂອງ ສປປ ລາວ ໃນປີ 2018 ນີ້ເຫັນວ່າ ມີຄວາມຄືບໜ້າຂຶ້ນຫຼາຍ ໂດຍເພີ່ມຂຶ້ນຈາກລະດັບ 60,8 ໃນການປະເມີນປີ 2015 ມາເປັນ 72,8 ໃນການປະເມີນປີ 2018 ເຫັນວ່າເກີນຄາດໝາຍ ຄາດໝາຍແມ່ນຕ້ອງຢູ່ໃນລະດັບ 66 ຫຼື ສູງກວ່ານັ້ນ. ສາເຫດຕົ້ນຕໍທີ່ພາໃຫ້ຄ່າດັດຊະນີ HAI ມີການກ້າວກະໂດດແມ່ນມາຈາກ ❶ ຄ່າດັດຊະນີຍ່ອຍຂອງການຮູ້ໜັງສືຂອງຜູ້ໃຫຍ່ ທີ່ສາມາດບັນລຸໄດ້ 84,7% ເພີ່ມຂຶ້ນຈາກລະດັບ 72,7% ໃນປີ 2015, ❷ ດັດຊະນີອັດຕາການຕາຍຂອງເດັກນ້ອຍລຸ່ມ 5 ປີ ກໍ່ມີທ່າອ່ຽງດີຂຶ້ນຈາກ

71/1.000 ຂອງເດັກເກີດມີຊີວິດ ໃນປີ 2015 ມາເປັນ 63,9 ຄົນ 1.000 ຂອງເດັກນ້ອຍເກີດມີຊີວິດ ໃນປີ 2017, ❸ ໃນປີ 2018 ອີງການ CDP ໄດ້ເພີ່ມດັດຊະນີຍ່ອຍກ່ຽວກັບອັດຕາການຕາຍຂອງແມ່ເຂົ້າໃນ HAI ເຊິ່ງແມ່ນ 197 ຄົນ ຕໍ່ການເກີດ 100.000 ຊີວິດ. ສໍາລັບຄ່າດັດຊະນີຍ່ອຍກ່ຽວກັບອັດຕາການເຂົ້າໂຮງຮຽນຊັ້ນມັດທະຍົມກໍ່ມີຄ່າເພີ່ມຂຶ້ນຈາກ 50,5 ໃນປີ 2015 ມາເປັນ 61,7 ໃນປີ 2018.

ສິ່ງທ້າທາຍ, ອັດຕາສ່ວນຂອງປະຊາກອນລາວທີ່ຂາດໂພຊະນາການ ແລະ ອັດຕາການຕາຍຂອງແມ່ ແລະ ເດັກ ແມ່ນຍັງສູງເມື່ອທຽບກັບບັນດາປະເທດໃນອາຊຽນ.

- **ຄ່າດັດຊະນີ EVI:** ສະແດງໃຫ້ເຫັນເຖິງ ຄວາມບອບບາງ ຈາກຜົນກະທົບພາຍນອກ ແລະ ຄວາມສາມາດໃນການຮັບມືບັນດາຜົນກະທົບຕ່າງໆ. ສປປ ລາວ ບໍ່ສາມາດບັນລຸເງື່ອນໄຂ EVI ໃນການປະເມີນປີ 2018. ສະນັ້ນ ຕ້ອງໄດ້ເອົາໃຈໃສ່ເປັນພິເສດຕື່ມໃນການສ້າງຄວາມເຂັ້ມແຂງດ້ານເສດຖະກິດ ແລະ ຫຼຸດຜ່ອນຄວາມບອບບາງ.

**ການປະເມີນຄ່າດັດຊະນີຄວາມບອບບາງທາງດ້ານເສດຖະກິດ EVI:** ແຕ່ເຖິງແນວໃດກໍຕາມບາງເງື່ອນໄຂຂອງ EVI ກໍບໍ່ສາມາດຄວບຄຸມໄດ້. ຕົວຢ່າງ: ປະເທດໃດໜຶ່ງບໍ່ສາມາດ ຄຸ້ມຄອງຄວາມສາມາດໃນການເຂົ້າເຖິງຕະຫຼາດ ຍ້ອນທີ່ຕັ້ງພູມສັນຖານທີ່ຫ່າງໄກສອກຫຼີກ; ໄລຍະທາງລະຫວ່າງ ສປປ ລາວ ແລະ ປະເທດຄູ່ຮ່ວມການຄ້າເປັນປັດໄຈທີ່ສໍາຄັນໃນຂັ້ນຕອນການຕັດສິນໃຈກ່ຽວກັບການລົງທຶນໂຄງລ່າງພື້ນຖານ ຫຼື ການພັດທະນາມູນຄ່າຕ່ອງໂສ້ ຫຼື ເວົ້າອີກຢ່າງໜຶ່ງແມ່ນຕ້ອງໄດ້ຄໍານຶງເຖິງ ການລົງທຶນສ້າງໂຄງລ່າງພື້ນຖານໃກ້ກັບຄູ່ຄ້າ. ພ້ອມກັນນີ້, ຫຼາຍຕົວຊີ້ບອກຂອງ EVI ວັດແທກບັນດາອົງປະກອບຂອງໂຄງປະກອບເສດຖະກິດທີ່ຕິດພັນກັບການກໍານົດນະໂຍບາຍ ແລະ ມີຜົນໃນໄລຍະຍາວ ໂດຍສະເພາະ ການສົ່ງອອກສິນຄ້າ (ທັງດ້ານຄວາມຫຼາກຫຼາຍ ແລະ ຄວາມມີສະຖຽນລະພາບ) ແລະ ຂະແໜງກະສິກໍາ (ສັດສ່ວນ ຕໍ່ GDP ແລະ ຄວາມມີສະຖຽນລະພາບຂອງການຜະລິດ).

ຄ່າດັດຊະນີ EVI ຂອງ ສປປ ລາວ ມີທ່າອ່ຽງທີ່ດີຂຶ້ນພໍສົມຄວນຈາກລະດັບ 36,2 ໃນປີ 2015 ຫຼຸດລົງມາເປັນ 33,7 ໃນປີ 2018. ສາເຫດຕົ້ນຕໍທີ່ພາໃຫ້ຄ່າ EVI ມີຄວາມຄືບໜ້າດີຂຶ້ນ ແມ່ນມາຈາກການປັບປຸງປະສິດທິພາບຂອງດັດຊະນີຄວາມບໍ່ມີສະຖຽນລະພາບທາງດ້ານການສົ່ງອອກ ແລະ ດັດຊະນີຄວາມບໍ່ມີສະຖຽນລະພາບທາງດ້ານກະສິກໍາ.

5 ປະເທດໃນອາຊຽນທີ່ມີຄະແນນຄ່າດັດຊະນີ EVI ສູງກວ່າ ສປປ ລາວ ເຊິ່ງສະແດງໃຫ້ເຫັນເຖິງຄວາມບອບບາງທາງດ້ານເສດຖະກິດຢູ່ໃນລະດັບສູງ.

## 5. ການເຕີບໂຕສີຂຽວ

ຂະບວນການຈັດຕັ້ງປະຕິບັດການເຕີບໂຕສີຂຽວໃນທົ່ວໂລກ: ມີຫຼາຍປະເທດໃນໂລກກໍາລັງຮີບຮ້ອນພັດທະນາເສດຖະກິດຂອງເຂົາເຈົ້າ ໂດຍສະເພາະດ້ວຍການຂຸດຄົ້ນຊັບພະຍາກອນທໍາມະຊາດ, ແຕ່ວິທີການພັດທະນານີ້ກໍ່ໄດ້ທໍາລາຍສິ່ງແວດລ້ອມ ແລະ ສົ່ງຜົນກະທົບເສຍຫາຍຕໍ່ສະພາບການປ່ຽນແປງດິນຟ້າອາກາດ. ຮູບແບບການພັດທະນານີ້ແມ່ນບໍ່ມີຄວາມເໝາະສົມອີກຕໍ່ໄປ ແລະ ກາຍເປັນຫົວຂໍ້ປຶກສາຫາລືບູລິມະສິດໃນເວທີສາກົນ ແລະ ຫຼາຍປະເທດໄດ້ຖືເອົາການເຕີບໂຕສີຂຽວເປັນໃຈກາງຂອງຍຸດທະສາດການພັດທະນາແຫ່ງຊາດ ຄຽງຄູ່ກັບການສຶກສາຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມ.

ສປປ ລາວ ເປັນປະເທດໜຶ່ງທີ່ຖືສໍາຄັນຕໍ່ແນວຄວາມຄິດການເຕີບໂຕສີຂຽວ ເພື່ອເປັນກົນໄກໃນການພັດທະ ນາເສດຖະກິດໃຫ້ມີການຂະຫຍາຍຕົວທີ່ຍືນຍົງ ຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ. ສະນັ້ນ, ລັດຖະບານ ຈຶ່ງໄດ້ແຕ່ງຕັ້ງຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວໂລກ ໃນປີ 2016 ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ມາຮອດວັນທີ 10 ຕຸລາ 2017 ສປປ ລາວ ກໍ່ໄດ້ເຂົ້າເປັນສະມາຊິກສະຖາບັນການເຕີບໂຕສີຂຽວໂລກ (Global Green Growth Institute) ເພື່ອສ້າງໂອກາດໃນການຮັບການຊ່ວຍເຫຼືອດ້ານຊ່ຽວຊານ ເພື່ອສ້າງຄວາມສາມາດກ່ຽວກັບວຽກງານການເຕີບໂຕສີຂຽວ ໃນ ສປປ ລາວ ໃຫ້ມີປະສິດທິຜົນ. ການຈັດຕັ້ງປະຕິບັດວຽກງານການເຕີບໂຕສີຂຽວ ໃນ ສປປ ລາວ ແມ່ນສຸມໃສ 3 ວຽກຕົ້ນຕໍຄື: (1) ການຈັດຕັ້ງປະຕິບັດແຜນງານຂອບນະໂຍບາຍພັດທະນາເພື່ອການເຕີບໂຕສີຂຽວ, (2)

ການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວຂອງ ສປປ ລາວ ຮອດປີ 2030 ແລະ (3) ບັນດາໜ້າວຽກຂອງສະຖາບັນການເຕີບໂຕສີຂຽວໂລກທີ່ຈັດຕັ້ງປະຕິບັດໃນ ສປປ ລາວ. ມີລາຍລະອຽດດັ່ງນີ້:

(1). ແຜນງານຂອບນະໂຍບາຍພັດທະນາເພື່ອການເຕີບໂຕສີຂຽວ (Green Growth Development Policy Operation) ໄດ້ເລີ່ມຈັດຕັ້ງປະຕິບັດແຕ່ປີ 2016 ເຊິ່ງແບ່ງອອກເປັນ 3 ໄລຍະ (ໄລຍະທີ 1: ແຕ່ປີ 2017-2018, ໄລຍະທີ 2: ແຕ່ປີ 2018–2019, ແລະ ໄລຍະທີ 3: ແຕ່ 2019–2020), ເຊິ່ງຈຸດປະສົງຂອງແຜນງານດັ່ງກ່າວ ແມ່ນເພື່ອສະໜັບສະໜູນ ສປປ ລາວ ໃນການປັບປຸງນະໂຍບາຍ, ນິຕິກຳ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ ໂດຍຜ່ານ 3 ອົງປະກອບຫຼັກຄືດັ່ງນີ້:

- ອົງປະກອບທີ 1: ການສ້າງຄວາມເຂັ້ມແຂງໃນການຮັກສາສະຖຽນລະພາບດ້ານການເງິນ-ເງິນຕາໃຫ້ມີຄວາມຍືນຍົງ.
- ອົງປະກອບທີ 2: ການຜັນຂະຫຍາຍວຽກງານການເຕີບໂຕສີຂຽວເຂົ້າໃນແຜນຍຸດທະສາດພັດທະນາແຫ່ງຊາດ.
- ອົງປະກອບທີ 3: ເຊື່ອມສານວຽກງານການເຕີບໂຕສີຂຽວເຂົ້າໃນແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ.

ປັດຈຸບັນ, ທຸກກິດຈະກຳທີ່ຢູ່ໃນຂອບນະໂຍບາຍພັດທະນາເພື່ອການເຕີບໂຕສີຂຽວໄລຍະທີ 1 ແລະ ໄລຍະທີ 2 ແມ່ນມີຜົນສຳເລັດດີ ເຊິ່ງລັດຖະບານ ສປປ ລາວ ແມ່ນໄດ້ຮັບທຶນສະໜັບສະໜູນດ້ານງົບປະມານ ຈຳນວນ 78,6 ລ້ານໂດລາສະຫະລັດ.

ໃນປີ 2019 ໄດ້ມີບັນດານະໂຍບາຍ, ດຳລັດ ແລະ ເຄື່ອງມືດ້ານກົດໝາຍ ທີ່ໄດ້ຖືກຮັບຮອງຈາກລັດຖະບານ ເປັນຕົ້ນ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ, ຄູ່ມືການປະເມີນສິ່ງແວດລ້ອມແບບຍຸດທະສາດ, ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ດຳລັດວ່າດ້ວຍການສ້າງຕັ້ງອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ, ຄູ່ມືແນະນຳກ່ຽວກັບວິທີ ແລະ ມາດຕະຖານການວິໄຈຄຸນນະພາບນ້ຳ ແລະະ ຮ່າງຄູ່ມືແນະນຳກ່ຽວກັບວິທີການວັດແທກຝຸ່ນລະອອງໃນອາກາດ.

(2). ການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວຂອງ ສປປ ລາວ ຮອດປີ 2030: ສຸມໃສ່ຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆທີ່ສະໜັບສະໜູນໃຫ້ແກ່ການເຊື່ອມສານວຽກງານເຕີບໂຕສີຂຽວເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ເຊິ່ງມີຜົນສຳເລັດ ດັ່ງນີ້: ຈັດພິມ ແລະ ເຜີຍແຜ່ຍຸດທະສາດການເຕີບໂຕສີຂຽວ, ໄດ້ຄົ້ນຄວ້າສ້າງຕັ້ງຫ້ອງການສົ່ງເສີມການເຕີບໂຕສີຂຽວ ເຂົ້າໃນກົງຈັກຂອງສູນຄົ້ນຄວ້າວິທະຍາສາດ, ນະໂຍ ບາຍພັດທະນາເສດຖະກິດ ແລະ ສັງຄົມ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ; ໄດ້ຮ່າງບົດແນະນຳ ແລະ ສ້າງຂອບວຽກການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວ; ໄດ້ຮ່າງບົດແນະນຳການເຊື່ອມສານການພັດທະນາສີຂຽວເຂົ້າໃນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂອງຂະແໜງການ ແລະ ຂອງທ້ອງຖິ່ນ; ສຳເລັດການຝຶກອົບຮົມການຕິດຕາມປະເມີນຜົນຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ໃນລະດັບທ້ອງຖິ່ນ.

(3). ບາງໜ້າວຽກທີ່ພົ້ນເດັ່ນ ຂອງສະຖາບັນການເຕີບໂຕສີຂຽວໂລກທີ່ໄດ້ຈັດຕັ້ງປະຕິບັດໃນ ສປປ ລາວ ລວມມີການສະໜັບສະໜູນ ລັດຖະບານລາວ ປັບປຸງນະໂຍບາຍ, ລະດົມ, ດຶງດູດການລົງທຶນ ແລະ ເພີ່ມຄວາມອາດສາມາດໃນຂົງເຂດວຽກງານການເຕີບໂຕສີຂຽວ ແລະ ການພັດທະນາແບບຍືນຍົງ ເຊິ່ງມີຄວາມຄືບໜ້າດັ່ງນີ້:

- ໄດ້ຮ່າງບົດແນະນຳການເຊື່ອມສານຍຸດທະສາດການເຕີບໂຕສີຂຽວແຫ່ງຊາດເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ.
- ສະໜັບສະໜູນກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈັດຕັ້ງປະຕິບັດກິດຈະກຳການສ້າງຄວາມອາດສາມາດໃນການຕິດຕາມ, ກວດກາ, ການລາຍງານ ແລະ ຢັ້ງຢືນໃນການຈັດຕັ້ງປະຕິບັດແຜນງານແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ; ກຳນົດໂຄງການທີ່ເປັນທ່າແຮງ ເພື່ອດຶງດູດທຶນຈາກກອງທຶນສີຂຽວ ແລະ ການມີສ່ວນຮ່ວມຂອງພາກເອກະຊົນ.

- ຊ່ວຍເຫຼືອກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອສົ່ງເສີມການນໍາໃຊ້ລົດທີ່ນໍາໃຊ້ພະລັງງານໄຟຟ້າຫຼາຍຂຶ້ນ, ລວມທັງການປັບປຸງຂອບນະໂຍບາຍ ແລະ ແຜນວຽກເພື່ອດຶງດູດແຫຼ່ງທຶນ; ໄດ້ຈັດຕັ້ງປະຕິບັດແຜນງານພັດທະນາຕົວເມືອງສີຂຽວ ເຊິ່ງໄດ້ທົດລອງໃນຕົວເມືອງນະຄອນຫຼວງວຽງຈັນ ແລະ ນະຄອນປາກເຊ ສຸມໃສ່ວຽກການຄຸ້ມຄອງຂີ້ເຫຍື້ອນະຄອນຫຼວງວຽງຈັນ ແລະ ການບໍາບັດນໍ້າເປື້ອນນະຄອນປາກເຊພາຍໃຕ້ແຫຼ່ງທຶນຂອງອົງການໂກຍກາ (KOICA).
- ສະໜັບສະໜູນກະຊວງພະລັງງານ ແລະ ບໍ່ແຮ່ ໃນການກະກຽມແຜນງານເພື່ອລະດົມການລົງທຶນມາຈັດຕັ້ງປະຕິບັດໂຄງການພະລັງງານແສງອາທິດ 40 ເມກາວັດ.
- ຮ່ວມກັບກະຊວງອຸດສະຫະກໍາ ແລະ ການຄ້າ ຂຽນໂຄງການກ່ຽວກັບປະສິດທິພາບຂອງພະລັງງານໃນຂົງເຂດອຸດສາຫະກໍາ ແລະ ນະໂຍບາຍອຸດສາຫະກໍາສີຂຽວ ເພື່ອດຶງດູດການລົງທຶນທີ່ມີປະສິດທິພາບການນໍາໃຊ້ພະລັງງານ.

# II. ຕີລາຄາລວມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)

ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ສະພາບເສດຖະກິດຂົງເຂດພາກພື້ນ ແລະ ສາກົນ ລວມທັງພາຍໃນຂອງປະເທດເຮົາ ໄດ້ປະເຊີນໜ້າກັບຄວາມຫຍຸ້ງຍາກຫຼາຍປະການ. ເສດຖະກິດໂລກໄດ້ມີການຂະຫຍາຍຕົວຖົດຖອຍ, ມີຄວາມຜັນຜວນທາງດ້ານການເງິນ-ເງິນຕາ ໂດຍສະເພາະໃນເອີຣົບ, ອາເມລິກາ ແລະ ບັນດາປະເທດເສດຖະກິດໃຫຍ່ຈໍານວນໜຶ່ງ; ເກີດສະພາບຄວາມບໍ່ສະຫງົບທາງດ້ານການເມືອງ ແລະ ສັງຄົມຢູ່ຕາເວັນອອກກາງ; ນອກຈາກນັ້ນ ສະພາບຄວາມຫຍຸ້ງຍາກຂອງເສດຖະກິດພາຍໃນ ກໍຍັງມີຫຼາຍບັນຫາທີ່ຊໍາເຮື້ອ, ຫຍຸ້ງຍາກ ເປັນຕົ້ນແມ່ນເສດຖະກິດມະຫາພາກມີຄວາມບອບບາງ, ບັນຫາໜີ້ສິນຄຸມເຄືອແກ່ຍາວມາດົນ, ການເກັບລາຍຮັບຂອງງົບປະມານບໍ່ສາມາດດຸ່ນດ່ຽງກັບລາຍຈ່າຍພາກລັດທີ່ຈໍາເປັນ, ການລະເມີດວິໄນແຜນການ-ການເງິນ ເຖິງວ່າໄດ້ຮັບການປັບປຸງ ແຕ່ກໍຍັງແກ້ໄຂບໍ່ໄດ້ຂາດຕົວ, ບັນຫາໄພພິບັດທາງທໍາມະຊາດ ກໍເກີດຂຶ້ນຢ່າງຕໍ່ເນື່ອງລຽນຕິດ ແລະ ມີລັກສະນະຖີ່ຂຶ້ນ, ບັນຫາເຂື່ອນແຕກ ຢູ່ແຂວງອັດຕະປື ໄດ້ສ້າງຜົນກະທົບໂດຍກົງໃຫ້ແກ່ງົບປະມານຂອງລັດ ແລະ ຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກຜົນກະທົບ. ເລີ່ມແຕ່ທ້າຍປີ 2019 ສປປ ລາວ ໄດ້ຮັບຜົນກະທົບຢ່າງໜັກໜ່ວງພໍສົມຄວນຈາກການແຜ່ລະບາດຂອງພະຍາດໂຄວິດ-19.

ແຕ່ເຖິງຢ່າງໃດກໍຕາມ, ໃນ 5 ປີ ຜ່ານມາ ໂດຍພາຍໃຕ້ການຊີ້ນໍາ-ນໍາພາຢ່າງໃກ້ຊິດຂອງລັດຖະບານ ແລະ ການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ມີຄວາມຮັບຜິດຊອບສູງຂອງຂະແໜງການ ແລະ ອໍານາດການປົກຄອງທ້ອງຖິ່ນ ໂດຍໄດ້ຮັບການສະໜັບສະໜູນເປັນຢ່າງດີຂອງປະຊາຊົນ ແລະ ຄູ່ຮ່ວມພັດທະນາ ຜ່ານການຈັດຕັ້ງປະຕິບັດຕົວຈິງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ຈຶ່ງມີຜົນສໍາເລັດທີ່ພົ້ນເດັ່ນຫຼາຍດ້ານເຊັ່ນ:

## 1. ຜົນສໍາເລັດ

1. ປະເທດເຮົາຍັງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ລະບົບການບໍລິຫານປົກຄອງໄດ້ກ້າວເຂົ້າສູ່ລະບຽບກົດໝາຍ ແລະ ມີຄວາມທັນສະໄໝຫຼາຍຂຶ້ນ, ສັງຄົມນັບມື້ນັບມີຄວາມເທົ່າທຽມ ແລະ ຍຸຕິທໍາເປັນກ້າວໆ.
2. ຜົນສໍາເລັດອັນພົ້ນເດັ່ນແມ່ນ ພວກເຮົາສາມາດບັນລຸຄາດໝາຍທີ່ສໍາຄັນໃນການນໍາພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (ສາມາດບັນລຸໄດ້ 2 ເງື່ອນໄຂ: ລາຍໄດ້ແຫ່ງຊາດ 1.996 ໂດລາສະຫະລັດ/ຫົວຄົນ ແລະ ດັດຊະນີຊັບສິນມະນຸດ ແມ່ນ 72,8).
3. ການຈັດຕັ້ງປະຕິບັດ ປພຍ, ຍຸດທະສາດການເຕີບໂຕສີຂຽວຂອງລັດຖະບານ ໄດ້ຫັນເຂົ້າສູ່ພາກປະຕິບັດຕົວຈິງ ແລະ ໄດ້ຮັບການສະໜັບສະໜູນຈາກສາກົນຢ່າງຕັ້ງໜ້າ, ຫຼາຍປະເທດຍັງສືບຕໍ່ຮັກສາລະດັບການຊ່ວຍເຫຼືອເພື່ອການພັດທະນາຕໍ່ ສປປ ລາວ, ບາງປະເທດຍັງເພີ່ມການຊ່ວຍເຫຼືອຂຶ້ນຕື່ມຈາກລະດັບເດີມ.

4. ການພັດທະນາໂຄງລ່າງພື້ນຖານ, ແລວທາງເສດຖະກິດເພື່ອເຊື່ອມຕໍ່-ເຊື່ອມຈອດກັບພາກພື້ນ ແລະ ສາກົນ ໄດ້ກາຍເປັນຮູບປະທຳຂຶ້ນຢ່າງຕັ້ງໜ້າ ເຊັ່ນ: ໂຄງການທາງລົດໄຟລາວ-ຈີນ, ທາງດ່ວນວຽງຈັນ-ວັງວຽງ ແລະ ອື່ນໆ ມີຄວາມຄືບໜ້າຢ່າງໜ້າພໍໃຈ ເຊິ່ງກາຍເປັນປັດໄຈພື້ນຖານໃຫ້ແກ່ການຜະລິດສິນຄ້າ ແລະ ການບໍລິການຕາມແລວທາງດັ່ງກ່າວນັ້ນ.
5. ການສົ່ງເສີມ ແລະ ດຶງດູດການລົງທຶນຂອງພາກເອກະຊົນໄດ້ມີການປັບປຸງດີຂຶ້ນ. ໂຄງການລົງທຶນຂະໜາດໃຫຍ່ໃນຂົງເຂດໄຟຟ້າ-ບໍ່ແຮ່ ຫຼາຍໂຄງການໄດ້ກ້າວເຂົ້າສູ່ການຜະລິດ ເພື່ອສົ່ງອອກ. ການສ້າງຄວາມເຂັ້ມແຂງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (MSMEs) ໄດ້ມີທ່າກ້າວໃໝ່ທີ່ດີຂຶ້ນ. ອຸດສາຫະກຳປຸງແຕ່ງໄດ້ມີໜໍ່ແໜງເພີ່ມຂຶ້ນ ເປັນຕົ້ນ ການຜະລິດວັດສະດຸກໍ່ສ້າງ, ແຜ່ນແພ, ເຄື່ອງດື່ມ, ຜະລິດຕະພັນແຮ່ທາດ, ຜະລິດຕະພັນໄມ້.
6. ພື້ນຖານຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການແກ້ໄຂ, ຄວາມທຸກຍາກຂອງປະຊາຊົນ ໄດ້ມີທ່າກ້າວຫຼຸດລົງຢ່າງຕໍ່ເນື່ອງ, ການພັດທະນາພື້ນຖານວັດຖຸ-ເຕັກນິກ ໃນຂົງເຂດວັດທະນາທຳ-ສັງຄົມໄດ້ຮັບການເອົາໃຈໃສ່ ເຊັ່ນ: ສ້າງອາຄານ ແລະ ປະກອບວັດຖຸ-ເຕັກນິກຢູ່ໂຮງໝໍໃຫຍ່, ສ້າງໂຮງຮຽນ, ສູນຝຶກວິຊາຊີບ ເພື່ອພັດທະນາຊັບພະຍາກອນມະນຸດໃຫ້ນັບມື້ມີຄຸນນະພາບສູງຂຶ້ນ ແລະ ບົດບາດຍິງ-ຊາຍ ໄດ້ມີທ່າກ້າວທີ່ດີ.
7. ກົງຈັກການຈັດຕັ້ງຂອງລັດ ໄດ້ຮັບການປັບປຸງໃຫ້ກະທັດຮັດ, ສອດຄ່ອງກັບພາລະບົດບາດການເຄື່ອນໄຫວຕົວຈິງ, ພ້ອມທັງການຈັດວາງບຸກຄະລາກອນຂອງແຕ່ລະພາກສ່ວນຄືນໃໝ່.
8. ການນຳໃຊ້ຜົນສຳເລັດດ້ານເຕັກໂນໂລຊີເຂົ້າໃນການບໍລິການສັງຄົມ, ການຫັນໄປສູ່ທັນສະໄໝໃນບາງຂະແໜງຂອງການຜະລິດອຸດສາຫະກຳ, ການບໍລິການດ້ານທະນາຄານ-ການເງິນ ແລະ ການບໍລິການການຄຸ້ມຄອງລັດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງ.
9. ການພົວພັນຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ໄດ້ຂະຫຍາຍຕົວສູ່ລວງເລິກ, ພ້ອມກັນນັ້ນ ກໍໄດ້ເປີດກວ້າງການພົວພັນຮ່ວມມືກັບພາກພື້ນ ແລະ ສາກົນ ຫຼາຍຮູບ ແລະ ຫຼາຍລະດັບ ເຊິ່ງເປັນການປະກອບສ່ວນອັນສຳຄັນໃນການຈັດຕັ້ງປະຕິບັດ ປພຍ, ຍຸດທະສາດການເຕີບໂຕສີຂຽວຂອງລັດຖະບານ ໄດ້ຫັນເຂົ້າສູ່ພາກປະຕິບັດຕົວຈິງ.
10. ວຽກງານອຸຕຸນິຍົມ, ວຽກງານອຸທົກກະສາດ ແລະ ວຽກງານອຸຕຸກະເສດ ໄດ້ຮັບການພັດທະນາ ແລະ ປັບປຸງດີຂຶ້ນໃນຂອບເຂດທົ່ວປະເທດ, ມີລະບົບການພະຍາກອນ ການປ່ຽນແປງດ້ານດິນຟ້າອາກາດ ແລະ ມີການເຝົ້າລະວັງ ຕິດຕາມ ສະພາບແຫ້ງແລ້ງ-ນໍ້າຖ້ວມຂັງ ສາມາດລາຍງານ ແລະ ແກ້ໄຂທັນສະພາບການ, ໄດ້ດຳເນີນການວາງແຜນທົດລອງນຳໃຊ້ລະບົບຂໍ້ມູນ ແລະ ກຽມພ້ອມໃນການປ້ອງກັນພະຍາດສັດ ແລະ ພຶດຕາມລະດູການ.

## 2. ສາເຫດທີ່ພາໃຫ້ໄດ້ຮັບຜົນສຳເລັດ

1. ມີການຊີ້ນຳ-ນຳພາ ຂອງສູນກາງພັກ ຢ່າງເປັນລະບົບ, ໃກ້ສິດ ແລະ ສອດຄ່ອງກັບສະພາບພາຍໃນ ແລະ ສະພາບແວດລ້ອມສາກົນ.
2. ແນວທາງການພັດທະນາທີ່ກຳນົດໄວ້ ໃນມະຕິກອງປະຊຸມໃຫຍ່ຂອງພັກ ຄັ້ງທີ X ແມ່ນຖືກຕ້ອງ ເຊິ່ງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ໄດ້ຜັນຂະຫຍາຍ ເປັນອັນລະອຽດ, ພ້ອມກັນນັ້ນ ກໍໄດ້ຮັບການຊີ້ນຳ ບັນຊາຢ່າງໃກ້ຊິດຂອງລັດຖະບານ, ຂະແໜງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດແຜນພັດທະນາ 5 ປີ ຄັ້ງນີ້.
3. ເພື່ອນມິດສາກົນໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອຢ່າງຕໍ່ເນື່ອງ, ປະຊາຊົນບັນດາເຜົ່າໄດ້ມີສ່ວນຮ່ວມ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາຢ່າງເປັນຂະບວນ.
4. ພາກເອກະຊົນພາຍໃນ ແລະ ຕ່າງປະເທດ ໄດ້ປະກອບສ່ວນໃນການຜະລິດທຸລະກິດ, ສ້າງມູນຄ່າເພີ່ມ ແລະ ສະໜັບສະໜູນສັງຄົມຢ່າງຕັ້ງໜ້າ.

5. ພາຍຫຼັງທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແຜນດັ່ງກ່າວນີ້ແລ້ວ, ລັດຖະບານ, ບັນດາຂະແໜງການ ແລະ ທ້ອງຖິ່ນ ກໍໄດ້ຜັນຂະຫຍາຍເປັນແຜນການ ແລະ ໂຄງການອັນລະອຽດ ໃນການລະດົມທຶນເຂົ້າໃສ່ການຈັດຕັ້ງປະຕິບັດຢ່າງມີຈຸດສຸມ.

ເຖິງຢ່າງໃດກໍຕາມ ຖ້າເບິ່ງບັນຫາຢ່າງພາວະວິໄສ ຈະເຫັນວ່າການເຕີບໂຕຂອງເສດຖະກິດ-ສັງຄົມ ເຮົາຍັງມີຫຼາຍບັນຫາທີ່ມີລັກສະນະບອບບາງ, ບໍ່ທັນຮັບປະກັນຄວາມຍືນຍົງຕາມທິດທາງທີ່ໄດ້ວາງອອກ.

## 3. ຂໍ້ຄົງຄ້າງ, ອຸປະສັກ ແລະ ສິ່ງທ້າທາຍ:

1. ການຂະຫຍາຍຕົວຂອງເສດຖະກິດ ຍັງບໍ່ທັນຕໍ່ເນື່ອງຕາມທິດທີ່ວາງໄວ້, ຄຸນນະພາບຂອງການເຕີບໂຕເສດຖະກິດຍັງບໍ່ສູງ ແລະ ໝັ້ນທ່ຽງ, ຍັງເອື່ອຍອີງໃສ່ຂະແໜງການຊັບພະຍາກອນທຳມະຊາດເປັນຫຼັກໃນການຂັບເຄື່ອນເສດຖະກິດ, ການຜະລິດເປັນສິນຄ້າຍັງບໍ່ຫຼາກຫຼາຍ ບໍ່ທັນກາຍເປັນທ່າແຮງຂອງການສົ່ງອອກ.
2. ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ-ເງິນຕາ ແລະ ບັນຫາໜີ້ສາທາລະນະ ຍັງບໍ່ທັນສາມາດແກ້ໄຂໄດ້ຢ່າງຕັ້ງໜ້າເທື່ອ, ການເກັບລາຍຮັບບໍ່ໄດ້ຕາມແຜນ, ການຂາດດຸນງົບປະມານຂອງລັດຍັງສູງ ແລະ ເພີ່ມຂຶ້ນຕໍ່ເນື່ອງ, ແຫຼ່ງດຸ່ນດ່ຽງຕໍ່ການຂາດດຸນດັ່ງກ່າວ ສ່ວນໃຫຍ່ແມ່ນອາໄສການກູ້ຢືມຈາກຕ່າງປະເທດ, ບັນຫາໜີ້ສິນພາຍໃນ ແລະ ຕ່າງປະເທດສະສົມເພີ່ມຂຶ້ນ ເຮັດໃຫ້ເພີ່ມຄວາມກົດດັນໃຫ້ແກ່ການຄຸ້ມຄອງບໍລິຫານງົບປະມານຢ່າງໜັກໜ່ວງ, ການປະຕິບັດວິໄນແຜນການ-ການເງິນຍັງບໍ່ເຂັ້ມງວດ, ສະຖຽນລະພາບຂອງລະບົບເງິນຕາຍັງບອບບາງ, ຄັງສຳຮອງເງິນຕາຕ່າງປະເທດ ບາງໄລຍະຍັງຕໍ່າກວ່າແຜນການທີ່ວາງໄວ້.
3. ການປັບປຸງສະພາບແວດລ້ອມດ້ານການລົງທຶນ ແລະ ດຳເນີນທຸລະກິດ ຍັງເຮັດບໍ່ທັນໄດ້ດີ ຕາມນະໂຍບາຍ ແລະ ຄຳສັ່ງວາງອອກ, ຍັງມີຫຼາຍຈຸດຂາດຄວາມໂປ່ງໃສ ທີ່ເປັນການກີດໜ່ວງຖ່ວງດຶງຕໍ່ການພັດທະນາ.
4. ການປະຕິບັດມາດຕະການຕົວຈິງ ເພື່ອຊຸກຍູ້ສົ່ງເສີມຜູ້ປະກອບການພາຍໃນ ໂດຍສະເພາະ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME) ຍັງບໍ່ທັນແຂງແຮງ, ບັນດາວິສາຫະກິດພາຍໃນສ່ວນຫຼາຍຍັງບໍ່ທັນເປັນເຈົ້າການພັດທະນາຕົນເອງ ແລະ ຍັງຂາດປະສິດທິພາບໃນການແຂ່ງຂັນ, ລັດວິສາຫະກິດສ່ວນຫຼາຍດຳເນີນທຸລະກິດຂາດທຶນ ແລະ ເຮັດໃຫ້ມີໜີ້ສິນຄຸມເຄືອ.
5. ຄວາມເປັນເຈົ້າການໃນການເສີມຂະຫຍາຍ, ນຳໃຊ້ທ່າແຮງ ແລະ ຄວາມອາດສາມາດບົ່ມຊ້ອນດ້ານຊັບພະຍາກອນທຳມະຊາດ, ທີ່ຕັ້ງພູມສັນຖານ ແລະ ປັດໄຈອື່ນໆຂອງຊາດ ຄຽງຄູ່ກັບການນຳໃຊ້ໂອກາດ, ເງື່ອນໄຂໃໝ່ໆທີ່ເກີດຈາກການຮ່ວມມືສາກົນຍັງບໍ່ທັນແຂງແຮງ ແລະ ບໍ່ສົມຄູ່, ການປົກປັກຮັກສາສິ່ງແວດລ້ອມຈາກການນຳໃຊ້ຊັບພະຍາກອນທຳມະຊາດຍັງບໍ່ຮັດກຸມເທົ່າທີ່ຄວນ.
6. ການຫັນເປັນທັນສະໄໝ ຍັງບໍ່ທັນບຸກທະລຸໄດ້ເທົ່າທີ່ຄວນ, ການກໍ່ສ້າງ ແລະ ຍົກລະດັບດ້ານວິຊາການ-ເຕັກນິກ ໃນຫຼາຍຂົງເຂດຍັງບໍ່ທັນສາມາດຕອບສະໜອງຄວາມຕ້ອງການຂອງບັນດາໂຄງການພັດທະນາໃນແຕ່ລະໄລຍະ.
7. ປະກົດການຫຍໍ້ທໍ້ໃນສັງຄົມ ຍັງບໍ່ທັນແກ້ໄຂໄດ້ຢ່າງເປັນຮູບປະທຳ ເປັນຕົ້ນ ບັນຫາຢາເສບຕິດ, ເຫຍື່ອຂອງການຄ້າມະນຸດ; ການພັດທະນາຊັບພະຍາກອນມະນຸດຍັງມີຄຸນນະພາບຕໍ່າ ເປັນຕົ້ນ ຄຸນນະພາບຂອງການສຶກສາ, ການບໍລິການສາທາລະນະສຸກ, ແຮງງານຍັງຂາດຄວາມຊຳນານງານ, ການປົກປ້ອງຕຳແໜ່ງງານໃຫ້ຄົນລາວ ແລະ ຕະຫຼາດພາຍໃນຍັງບໍ່ທັນໄດ້ຮັບການປະຕິບັດຢ່າງເຂັ້ມແຂງ, ການແກ້ໄຂແຮງງານ ບໍ່ຖືກກົດໝາຍຈາກຕ່າງປະເທດ, ການຄຸ້ມຄອງຄົນລາວໄປອອກແຮງງານຢູ່ຕ່າງປະເທດຍັງບໍ່ທັນຮັດກຸມ ແລະ ໄພຫວ່າງງານ ຍັງຢູ່ໃນລະດັບສູງ; ການຄຸ້ມຄອງດັດສົມ ແລະ ກະຈາຍລາຍໄດ້ບໍ່ທັນທົ່ວເຖິງເທົ່າທີ່ຄວນ ພາໃຫ້ມີສະພາບຄວາມແຕກໂຕນທາງດ້ານສັງຄົມ: ລະຫວ່າງເຂດແຄວ້ນຕ່າງໆ, ລະຫວ່າງຕົວເມືອງກັບຊົນນະບົດ, ລະຫວ່າງກຸ່ມຄົນຮັ່ງ

ແລະ ຄົນທຸກມີທ່າອ່ຽງຫຍັບອອກຫ່າງກັນ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເຖິງວ່າໄດ້ເອົາໃຈໃສ່ ແຕ່ກໍ່ຍັງບໍ່ແທດເຖິງ ແລະ ບໍ່ທັນເຂົ້າສູ່ລວງເລິກເທົ່າທີ່ຄວນ.

8. ການບໍລິຫານລັດ ແລະ ຄຸ້ມຄອງສັງຄົມດ້ວຍກົດໝາຍ ເຖິງວ່າມີຄວາມເອົາໃຈໃສ່ ແຕ່ບໍ່ທັນເຂັ້ມງວດເທົ່າທີ່ຄວນ, ຍັງມີປະກົດການລະເມີດກົດໝາຍ, ລະເມີດສິດທິສ່ວນບຸກຄົນຢູ່ຢ່າງເປັນປະຈໍາ, ການກ້າວກ່າຍຂອງການຈັດຕັ້ງ ຫຼື ບຸກຄົນ ໃນຂະບວນບໍລິຫານລັດ; ການປະຕິບັດຄໍາຕັດສິນຂອງສານບາງກໍລະນີຍັງມີຄວາມຫຍຸ້ງຍາກ, ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ, ບັນຫາຄວາມຍຸຕິທໍາໃນສັງຄົມ ຍັງບໍ່ໄດ້ຮັບການແກ້ໄຂຢ່າງເຖິງຖອງ; ກົນໄກການຄຸ້ມຄອງ, ການແບ່ງຄວາມຮັບຜິດຊອບລະຫວ່າງສາຍຕັ້ງ-ສາຍຂວາງ ຍັງບໍ່ທັນຈະແຈ້ງ, ການປະສານສົມທົບລະຫວ່າງຂະແໜງການສູນກາງດ້ວຍກັນ, ຂະແໜງການສູນກາງກັບທ້ອງຖິ່ນ ຍັງບໍ່ທັນກົມກຽວ, ມີຫຼາຍກໍລະນີກໍ່ກົດໜ່ວງກັນ. ການແບ່ງຂັ້ນຄຸ້ມຄອງຕາມທິດ 3 ສ້າງ ຍັງບໍ່ທັນມີການຫັນປ່ຽນຢ່າງຕັ້ງໜ້າ, ການປັບປຸງກົງຈັກໃຫ້ມີຄວາມກະທັດຮັດ ຍັງເຮັດບໍ່ທັນໄດ້ດີ ແລະ ແຂງແຮງເທົ່າທີ່ຄວນ, ຍັງມີປະກົດການເຮັດວຽກຊໍ້າຊ້ອນກັນ, ການປະຕິບັດກົນໄກປະຕູດຽວຍັງເຮັດບໍ່ທັນໄດ້ດີ, ນັກລົງທຶນຂາດຄວາມໝັ້ນໃຈ.

9. ພະນັກງານຈໍານວນໜຶ່ງ ຍັງຂາດຄວາມຮັບຜິດຊອບ, ຍັງມີປະກົດການສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອຜົນປະໂຫຍດສ່ວນຕົວທາງກົງ ຫຼື ທາງອ້ອມ, ການຊັບຊ້ອນ ແລະ ຈັດວາງພະນັກງານຢູ່ແຕ່ລະຂັ້ນຢູ່ບາງຂົງເຂດວຽກງານ ຍັງບໍ່ທັນສາມາດສ້າງການຫັນປ່ຽນແບບບຸກທະລຸ ແລະ ເລິກເຊິ່ງແທ້.

## 4. ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ

1. ການນໍາພາ-ຊີ້ນໍາຜັນຂະຫຍາຍແຜນການ 5 ປີ ຄັ້ງທີ VIII ຕິດພັນກັບການປະຕິບັດມະຕິຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ໃຫ້ເປັນອັນລະອຽດ ຢູ່ຂະແໜງການ ແລະ ທ້ອງຖິ່ນ ຍັງບໍ່ທັນດໍາເນີນໄດ້ຢ່າງຈິງຈັງ, ເປັນລະບົບຕໍ່ເນື່ອງ, ເຂັ້ມແຂງ ແລະ ແທດຕົວຈິງເທົ່າທີ່ຄວນ ເຮັດໃຫ້ຜົນໄດ້ຮັບ ເມື່ອທຽບໃສ່ທ່າແຮງທີ່ມີຂອງປະເທດບໍ່ທັນສູງ ໂດຍສະເພາະແມ່ນຍັງບໍ່ທັນມີແຜນງານ-ໂຄງການ, ແຜນເງິນ ແລະ ແຜນຄົນ ເພື່ອຮອງຮັບ ແລະ ຈັດຕັ້ງປະຕິບັດໄດ້; ແບບແຜນວິທີເຮັດວຽກ ແລະ ແບບແຜນນໍາພາ ຍັງມີລັກສະນະອາດຍາສິດ, ນັກຮູບການ, ຂາດການຄົ້ນຄວ້າ ເພື່ອກໍານົດບັນຫາຢ່າງຖືກຕ້ອງ, ເລິກເຊິ່ງເຮັດໃຫ້ການກໍານົດບັນດາມາດຕະການແກ້ໄຂບັນຫາເປັນອັນລະອຽດ ບໍ່ຊັດເຈນ, ບໍ່ຮັດກຸມ. ຂາດແບບແຜນນໍາພາ-ຊີ້ນໍາ-ບັນຊາຕົວຈິງ ທີ່ເປັນລະບົບຕໍ່ເນື່ອງ ແລະ ເຂັ້ມແຂງ ແຕ່ສູນກາງຮອດທ້ອງຖິ່ນຮາກຖານ ເຮັດໃຫ້ຜົນໄດ້ຮັບບໍ່ສູງ ແລະ ຈໍາກັດ.
2. ການປະຕິບັດກົດໝາຍ, ລະບຽບການບໍ່ເຄັ່ງຄັດ ກາຍເປັນຊ່ອງຫວ່າງໃຫ້ເກີດມີປະກົດການລະເມີດວິໄນແຜນການ-ການເງິນ, ການສວຍໃຊ້ໜ້າທີ່ຕໍາແໜ່ງທີ່ບໍ່ຖືກຕ້ອງ, ການປະສານສົມທົບລະຫວ່າງຂະແໜງການດ້ວຍກັນ ແລະ ຂະແໜງການກັບທ້ອງຖິ່ນ ຍັງເຮັດບໍ່ທັນໄດ້ດີ, ການຕິດຕາມກວດກາຍັງບໍ່ທັນເຂັ້ມງວດ ແລະ ອື່ນໆ. ຕົວຢ່າງ: ຍັງມີການຈັບຈອງທີ່ດິນ, ປ່າ, ບໍ່ແຮ່ໄວ້ ແຕ່ບໍ່ໄດ້ຮັບການພັດທະນາ ຈຶ່ງບໍ່ສາມາດເຮັດໃຫ້ຊັບພະຍາກອນເຫຼົ່ານັ້ນ ກາຍເປັນການພັດທະນາ ແລະ ເປັນທຶນ ຫຼື ສ້າງລາຍໄດ້ໃຫ້ງົບປະມານຂອງລັດ.
3. ຄວາມຮຽກຮ້ອງຕ້ອງການໃນການພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນຮາກຖານມີສູງ ແຕ່ຄວາມສາມາດໃນການສະໜອງງົບປະມານມີຈໍາກັດ ພາໃຫ້ເກີດມີໜີ້ສິນຄຸມເຄືອ.
4. ເສດຖະກິດມະຫາພາກມີຄວາມບອບບາງ ແລະ ຖືກກະທົບໄດ້ງ່າຍ, ຖານການຜະລິດພາຍໃນຍັງບໍ່ແຂງແຮງ, ບໍ່ມີຈຸດສຸມ, ບໍ່ຕິດພັນກັບອຸດສາຫະກໍາປຸງແຕ່ງ ແລະ ບໍ່ທັນຫຼາກຫຼາຍ; ການສົ່ງອອກ ແລະ ການໄຫຼເຂົ້າຂອງເງິນຕາຕ່າງປະເທດບໍ່ສົມດູ່ ເມື່ອເກີດເຫດການບັງເອີນຕ່າງໆ ກໍ່ບໍ່ມີທຶນຮອນພຽງພໍ ເພື່ອແກ້ໄຂປົວແປງໃຫ້ຄືນສູ່ສະພາບປົກກະຕິໂດຍໄວໄດ້.
5. ສະພາບໄພພິບັດທໍາມະຊາດ (ນໍ້າຖ້ວມ, ແຫ້ງແລ້ງ, ສັດຕູພືດ), ສັນຄູກັນນໍ້າຂອງເຂື່ອນໄຟຟ້າແຕກ, ການລະບາດຂອງພະຍາດໂຄວິດ-19, ສົງຄາມການຄ້າ ແລະ ຄວາມຂັດແຍ່ງກັນ ທີ່ຕໍ່ເນື່ອງໃນດ້ານຕ່າງໆຂອງປະເທດ

ມະຫາອຳນາດ ໄດ້ສົ່ງຜົນກະທົບຕໍ່ການປະຕິບັດຄາດໝາຍຕ່າງໆ ຂອງແຜນການ 5 ປີ ຄັ້ງທີ VIII ຢ່າງຫຼີກລ້ຽງບໍ່ໄດ້.

## 5. ບົດຮຽນທີ່ຖອດຖອນໄດ້

1. ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ ແລະ ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ ຂອງປະຊາຊົນບັນດາເຜົ່າພາຍໃນຊາດ ພາຍໃຕ້ການນຳພາຂອງພັກ ໄດ້ພ້ອມກັນຈັດຕັ້ງຜັນຂະຫຍາຍວຽກງານສາມສ້າງເຂົ້າສູ່ລວງເລິກຕິດພັນກັບ "ຂະບວນການຮັກຊາດ ແລະ ພັດທະນາ" ແມ່ນເງື່ອນໄຂສຳຄັນ ແລະ ຈຳເປັນຂອງຄວາມສຳເລັດ ຫຼື ບໍ່ສຳເລັດ ຂອງແຜນການ.
2. ການຮັບປະກັນຄວາມສອດຄ່ອງລະຫວ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກັບຍຸດທະສາດການພັດທະນາເສດຖະກິດ-ສັງຄົມຮອດປີ 2025, ວິໄສທັດ 2030, ເປົ້າໝາຍການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ, ການເຕີບໂຕສີຂຽວ ແລະ ເປົ້າໝາຍການພັດທະນາແບບຍືນຍົງ ແມ່ນຫຼັກການຂອງການພັດທະນາແບບຕໍ່ເນື່ອງ.
3. ການເພີ່ມປະສິດທິພາບການບໍລິຫານລັດຕາມກົດໝາຍ, ປະຕິບັດກົດໝາຍ ແລະ ລະບຽບການຢ່າງເຄັ່ງຄັດລວມທັງການແກ້ໄຂຄວາມທຸກຍາກ ແລະ ຫຼຸດຜ່ອນຄວາມແຕກໂຕນໃນສັງຄົມ ຢ່າງຕັ້ງໜ້າ ແລະ ເຂົ້າສູ່ລວງເລິກ ແມ່ນປັດໄຈຕັດສິນຄຸນນະພາບຂອງການພັດທະນາ.
4. ການສ້າງສະພາບແວດລ້ອມອັນອຳນວຍ ທີ່ເປັນລະບົບຕໍ່ເນື່ອງ ລວມທັງການວາງນະໂຍບາຍ, ກົນໄກທີ່ສອດຄ່ອງ, ມີຖານຂໍ້ມູນດ້ານຕ່າງໆທີ່ຊັດເຈນ ແລະ ມີໂຄງລ່າງພື້ນຖານເສດຖະກິດທີ່ສະດວກ ແມ່ນປັດໄຈສຳຄັນໃນການດຶງດູດການລົງທຶນເອກະຊົນທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນການພັດທະນາ.
5. ການເພີ່ມທະວີປະຕິບັດຍຸດທະສາດ ຫັນເປັນອຸດສາຫະກຳທັນສະໄໝ ຕາມທິດອຸດສາຫະກຳ 4.0 ຕິດພັນກັບການສ້າງຄວາມເຂັ້ມແຂງໃນການພັດທະນາດ້ານບຸກຄະລາກອນ ທີ່ສອດຄ່ອງກັບໂຄງປະກອບເສດຖະກິດແມ່ນປັດໄຈສຳຄັນ ສຳລັບການຂັບເຄື່ອນການພັດທະນາປະເທດໄປຕາມທິດທີ່ພັກເຮົາວາງໄວ້. ການສຶກສາອົບຮົມຄົນໃນທົ່ວສັງຄົມ ໃຫ້ຮູ້ປະຢັດມັດທະຍັດ ໃຫ້ມີລະບຽບວິໄນເປັນປັດໄຈສຳຄັນໜຶ່ງ ໃນການພັດທະນາປະເທດໃຫ້ມີຄວາມໝັ້ນທ່ຽງ ແລະຍືນຍົງ.

## 6. ສັງລວມບາງບັນຫາສຳຄັນຕົ້ນຕໍທີ່ຄວນເອົາໃຈໃສ່ແກ້ໄຂຢ່າງຮີບດ່ວນໃນ 5 ປີ ຕໍ່ໜ້າມີດັ່ງນີ້:

(1) ແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ການພັດທະນາຕາມທິດ 3 ສ້າງ ຄຽງຄູ່ກັບ ການສ້າງວຽກເຮັດງານທຳ ແລະ ການກະຈາຍລາຍໄດ້ໃຫ້ທົ່ວເຖິງກວ່າເກົ່າ ເພື່ອຫຼຸດຜ່ອນຄວາມແຕກໂຕນທາງດ້ານສັງຄົມ (ລະຫວ່າງຄົນຮັ່ງ ແລະ ຄົນທຸກ, ຕົວເມືອງ ແລະ ຊົນນະບົດ), ສຸມໃສ່ຮັບປະກັນການເຂົ້າເຖິງການບໍລິການສາທາລະນະ (ສຶກສາ, ສາທາ) ຢູ່ເຂດຫ່າງໄກສອກຫຼີກ ໃຫ້ໄດ້ໂດຍພື້ນຖານ;

(2) ແກ້ໄຂຄວາມບອບບາງທາງດ້ານເສດຖະກິດ ເປັນຕົ້ນແມ່ນ: ການເຕີບໂຕສ່ວນໃຫຍ່ທີ່ເອື່ອຍອີງໃສ່ແຕ່ການຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດທີ່ບໍ່ທັນມີປະສິດທິຜົນເທົ່າທີ່ຄວນ, ຄຸນນະພາບຂອງການເຕີບໂຕບໍ່ສູງ, ບໍ່ທັນສາມາດກະຈາຍລາຍໄດ້ຢ່າງທົ່ວເຖິງ, ຖານການຜະລິດຍັງບໍ່ທັນມີພື້ນຖານໜັກແໜ້ນ ແລະ ໝັ້ນຄົງ, ເພີ່ມທະວີການຕິດຕາມການຈັດຕັ້ງປະຕິບັດບັນດາໂຄງການຈຸດສຸມທີ່ຊຸກຍູ້ການຜະລິດ ແລະ ບໍລິການ;

(3) ແກ້ໄຂຄວາມບອບບາງດ້ານການເງິນ, ແກ້ໄຂບັນຫາໜີ້ສິນສາທາລະນະ, ການເກັບລາຍຮັບບໍ່ຄົບຖ້ວນ, ບໍ່ສົມຄູ່ກັບຄວາມສາມາດບົ່ມຊ້ອນ ແລະ ມີການຮົ່ວໄຫຼ, ງົບປະມານບໍ່ພຽງພໍກັບຄວາມຈຳເປັນຂອງການພັດທະນາ (ສ່ວນຫຼາຍແມ່ນສຸມໃສ່ແກ້ໜີ້ສິນ ທີ່ບໍ່ມີລັກສະນະກະຕຸ້ນລະບົບເສດຖະກິດ ແລະ ການພັດທະນາ), ຍົກລະດັບການປະຕິບັດນະໂຍບາຍປະຢັດ ໃຫ້ກາຍເປັນວາລະແຫ່ງຊາດ;

(4) ແກ້ໄຂຄວາມບອບບາງທາງດ້ານເງິນຕາ ໂດຍສຸມໃສ່ການແກ້ໄຂສະພາບການຂາດດຸນຊຳລະກັບຕ່າງປະເທດ, ດັດສົມປະລິມານເງິນ M2 ເພື່ອສ້າງຄວາມຄ່ອງຕົວໃຫ້ແກ່ລະບົບ ແລະ ສະໜອງສິນເຊື່ອໃຫ້ການຜະລິດ ແລະ ການບໍລິການພາຍໃນທີ່ມີປະສິດທິຜົນ ແນໃສ່ຫຼຸດຜ່ອນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກ, ສ້າງຄວາມເຂັ້ມແຂງໃຫ້ຖານະເງິນຕາຕ່າງປະເທດ ເພື່ອຮັບປະກັນໄດ້ສະຖຽນລະພາບຂອງຄ່າເງິນ ແລະ ລາຄາ;

(5) ແກ້ໄຂຜົນກະທົບການລະບາດພະຍາດໂຄວິດ-19 ເລັ່ງໃສ່ການຟື້ນຟູທຸລະກິດທີ່ໄດ້ຮັບຜົນກະທົບຈາກການລະບາດດັ່ງກ່າວ ໃຫ້ຄືນສູ່ສະພາບປົກກະຕິ, ເອົາໃຈໃສ່ເປັນຕົ້ນຕໍແກ້ໄຂບັນຫາຫວ່າງງານ ແລະ ສ້າງສີມືແຮງງານ;

(6) ແກ້ໄຂການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ແລະ ປະກົດການຫຍໍ້ທໍ້ຕ່າງໆ ເປັນຕົ້ນ ບັນຫາຢາເສບຕິດ, ການສໍ້ລາດບັງຫຼວງ, ອຸບັດຕິເຫດຕາມທ້ອງຖະໜົນ ໃຫ້ເຄັ່ງຄັດເຂົ້າສູ່ລວງເລິກ ຫັນເຂົ້າສູ່ການຄຸ້ມຄອງດ້ວຍກົດໝາຍຢ່າງເຂັ້ມງວດ ແລະ ເດັດຂາດ. ປັບປຸງ ແລະ ສ້າງສະພາບແວດລ້ອມເອື້ອອຳນວຍໃຫ້ແກ່ການດຶງດູດການລົງທຶນ , ແກ້ໄຂປະກົດການສວຍໃຊ້ໜ້າທີ່ຂອງພະນັກງານໃນທາງທີ່ບໍ່ຖືກຕ້ອງ;

(7) ສຸມໃສ່ແກ້ໄຂການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ມີຈຸດສຸມ, ສົ່ງເສີມວິຊາຊີບ ແລະ ການຫັນເປັນຊ່ຽວຊານ ຕິດພັນກັບການຫັນເປັນທັນສະໄໝໃນຍຸກ 4.0 ແລະ ວິຖີຊີວິດແບບໃໝ່ (New Normal).

# ພາກທີສອງ:
# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

# ພາກທີ II: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ເປັນແຜນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເຊິ່ງໄດ້ກຳນົດທິດທາງພື້ນຖານໃນການສ້າງບາດລ້ຽວໃໝ່ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມໃນຊຸມປີຕໍ່ໜ້າ: ຕ້ອງເຮັດໃຫ້ບັນດາປະຖົມປັດໃຈທາງດ້ານການເມືອງ-ແນວຄິດ, ລະບົບເສດຖະກິດ, ພື້ນຖານວັດຖຸ-ເຕັກນິກ, ວັດທະນະທຳ-ສັງຄົມ, ນັບທັງການສ້າງຄົນ, ການບໍລິຫານ-ການປົກຄອງລັດ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດທີ່ມີແລ້ວໃຫ້ໄດ້ຮັບການປັບປຸງຍົກລະດັບໃຫ້ມີຄວາມເຂັ້ມແຂງ, ທຸກຄວາມອາດສາມາດບົ່ມຊ້ອນຂອງຊາດໄດ້ຮັບການພັດທະນາເປັນບັນດາຂະແໜງການຜະລິດ ແລະ ບໍລິການທີ່ເປັນປາຍແຫຼມ, ມີການພັດທະນາຕາມທິດສີຂຽວ ແລະ ຍືນຍົງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການຍົກລະດັບດີຂຶ້ນ, ການຄ້າ ແລະ ການຊຳລະສະສາງສາກົນມີຄວາມສົມດຸນໝັ້ນຄົງ ແລະ ປະເທດຊາດຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາຢ່າງໜັກແໜ້ນ, ສືບຕໍ່ຖືເອົາການພັດທະນາເສດຖະກິດ ເປັນໜ້າທີ່ໃຈກາງຂອງທົ່ວພັກ ແລະ ທົ່ວປວງຊົນ.

ແຜນການ 5 ປີ ຄັ້ງນີ້ ຈະສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວໄວໄດ້ຍາກ ເນື່ອງຈາກຄວາມສາມາດຕົວຈິງຂອງງົບປະມານມີຈຳກັດ, ແຕ່ກໍ່ຈະເປັນແຜນສືບຕໍ່ຈັດຕັ້ງປະຕິບັດ 4 ບຸກທະລຸ: ດ້ານຈິນຕະນາການ, ດ້ານການພັດທະນາຊັບພະຍາກອນມະນຸດ, ດ້ານກົນໄກລະບອບລະບຽບການ ແລະ ດ້ານແກ້ໄຂຄວາມທຸກຍາກຂອງ ປະຊາຊົນ ຢ່າງຕັ້ງໜ້າ, ແຂງແຮງ ແລະ ເຂົ້າສູ່ລວງເລິກກວ່າເກົ່າ ເພື່ອໃຫ້ສາມາດຜ່ານຜ່າອຸປະສັກ ແລະ ຂໍ້ຫຍຸ້ງຍາກຕ່າງໆໃນທ້າຍສະໄໝຂອງແຜນການ 5 ປີ ທີ່ຜ່ານມາ ບໍ່ໃຫ້ຕົກໃນສະພາວະວິກິດ, ຄວາມສ່ຽງທາງດ້ານເສດຖະກິດມະຫາພາກ, ໜີ້ສິນໃນລະດັບສູງ, ຄັງສຳຮອງ ຢູ່ໃນລະດັບຕໍ່າ, ຮັບປະກັນໃຫ້ມີການຫັນປ່ຽນຢ່າງຮອບດ້ານ, ດ້ວຍການປະຕິຮູບໂຄງສ້າງເສດຖະກິດຢ່າງເຖິງຖອງ, ເສີມຂະຫຍາຍ ແລະ ນຳໃຊ້ທ່າແຮງບົ່ມຊ້ອນຂອງຊາດຢ່າງມີປະສິດທິຜົນ, ສາມາດຜ່ານຜ່າອຸປະສັກ ແລະ ຂໍ້ຫຍຸ້ງຍາກຕ່າງໆໃນທ້າຍສະໄໝຂອງແຜນການ 5 ປີ ທີ່ຜ່ານມາ ບໍ່ໃຫ້ຕົກໃນສະພາວະວິກິດ. ສະນັ້ນ, ການພັດທະນາຕ້ອງໄດ້ຫັນໄປສູ່ຕາມທິດຫັນເປັນຄຸນນະພາບ, ມີຈຸດສຸມ, ສີຂຽວ ແລະ ຍືນຍົງ.

# I. ສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ສິ່ງທ້າທາຍ

## 1. ສະພາບພາກພື້ນ ແລະ ສາກົນ

**ເສດຖະກິດໂລກ**: ການເຕີບໂຕຂອງເສດຖະກິດໂລກ ແລະ ການພັດທະນາໃນຊຸມປີຕໍ່ໜ້າ ຍັງຈະປະເຊີນໜ້າກັບສະພາບຄວາມບໍ່ແນ່ນອນ ຍ້ອນໄດ້ຮັບຜົນກະທົບຈາກແຜ່ລະບາດຂອງໂຄວິດ-19 ເຮັດໃຫ້ສະພາບໜີ້ສິນເພີ່ມຂຶ້ນຕື່ມ, ຄວາມຂັດແຍ່ງ ຂອງປະເທດມະຫາອຳນາດ ແລະ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ. ອົງການການເງິນສາກົນໄດ້ປະເມີນ ການເຕີບໂຕ ຂອງເສດຖະກິດໂລກຈະຫຼຸດລົງໃນລະດັບ -3,3% ປີ 2020 ແຕ່ຈະກັບມາຂະຫຍາຍຕົວໃນລະດັບ 6% ໃນປີ 2021 ແລະ 4,9% ໃນປີ 2022. ແຕ່ເຖິງແນວໃດກໍ່ຕາມ, ການເຕີບໂຕໃນໄລຍະກາງແມ່ນຂຶ້ນກັບລະດັບຄວາມຮຸນແຮງ ແລະ ໄລຍະເວລາຂອງການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຄວາມສາມາດໃນການຄວບຄຸມການລະບາດ ແລະ ການຜະລິດຢາວັກຊີນ. ເຖິງວ່າເສດຖະກິດໂລກຈະເປີດດຳເນີນຄືນໃນບາງຂົງເຂດ ແລະ ທຸລະກິດຂອງບາງຂະແໜງການກໍ່ຕາມ ແຕ່ການຟື້ນຕົວຄືນແມ່ນຄາດວ່າຈະບໍ່ເທົ່າທຽມກັນ. ເສດຖະກິດ ສປ ຈີນ ເຕີບໂຕໃນຈັງຫວະຊ້າລົງ ແລະ ຄວາມສ່ຽງຈາກໄພທຳມະຊາດທີ່ສົ່ງຜົນກະທົບຕໍ່ການເຕີບໂຕ ແລະ ກະທົບຕໍ່ຈັງຫວະການຫຼຸດລົງຂອງອັດຕາຄວາມທຸກຍາກ. ສັງເກດເຫັນໄດ້ ໃນກາງເດືອນ ພຶດສະພາ 2020 ສປ ຈີນ ໄດ້ປະກາດຈະບໍ່ໄດ້ກຳນົດຄາດໝາຍສູ້ຊົນ GDP ປີ 2020 ຍ້ອນຄວາມບໍ່ແນ່ນອນທີ່ເຮັດໃຫ້ມີຄວາມຫຍຸ້ງຍາກໃນການປະເມີນ. ຕາມການປະເມີນ

ຂອງ IMF ໃນເດືອນຕຸລາ 2020 ການເຕີບໂຕຂອງ ສປ ຈີນ ຈະຢູ່ລະດັບ 2,3% ແລະ ສະຫະລັດອາເມລິກາ ຄາດວ່າຈະຢູ່ໃນລະດັບ -3,5%.

**ການລະບາດຂອງພະຍາດໂຄວິດ-19:** ໃນທົ່ວໂລກ ມີຜູ້ທີ່ຕິດເຊື້ອຈຳນວນຫຼາຍກວ່າ 219 ລ້ານຄົນ ແລະ ເສຍຊີວິດຫຼາຍກວ່າ 4,55 ລ້ານຄົນ. ຍ້ອນການແຜ່ລະບາດໃນຈັງຫວະທີ່ໄວ ແລະ ລັດສະໝີທີ່ກວ້າງ ເຮັດໃຫ້ຫຼາຍປະເທດອອກມາດຕະການເຄັ່ງຄັດໃນການປ້ອງກັນການແຜ່ລະບາດ ເຊັ່ນ: ອອກຄຳສັ່ງໃຫ້ປະຊາຊົນບໍ່ໃຫ້ອອກຈາກບ້ານ , ການຢຸດຕິບໍລິການ ແລະ ການລົ້ມລະລາຍຂອງຫຼາຍສາຍການບິນ, ການຫ້າມເຄື່ອນຍ້າຍພາຍໃນ ແລະ ຕ່າງປະເທດ, ການຢຸດຕິການຜະລິດ ແລະ ອື່ນໆ. ຜົນກະທົບນີ້ ເຫັນວ່າໜັກໜ່ວງທີ່ສຸດ ຖ້າທຽບກັບເຫດການວິກິດເສດຖະກິດຫົດຖອຍໃນປີ 1930, ວິກິດການເງິນຂອງອາຊີຕາເວັນອອກ ໃນປີ 1997 ແລະ ວິກິດການເງິນໂລກ ໃນປີ 2008. ນອກຈາກນີ້ ຜົນກະທົບຂອງໂຄວິດ-19 ຍັງສົ່ງຜົນກະທົບຕໍ່ບັນຫາຄວາມທຸກຍາກ ເຊິ່ງອາດເຮັດໃຫ້ປະຊາກອນໂລກຈຳນວນຫຼາຍກວ່າ 88-150 ລ້ານຄົນ ຕົກຢູ່ສະພາບຄວາມທຸກຍາກ ຫຼື ເຮັດໃຫ້ອັດຕາຄວາມທຸກຍາກສາກົນມາຢູ່ລະດັບ 9,1-9,4% ໃນປີ 2020 ເພີ່ມຈາກ 8,23% ໃນປີ 2019 ຈຶ່ງເຮັດໃຫ້ການພັດທະນາທີ່ບັນລຸໃນປີ 2017 ກັບມາຢູ່ລະດັບຖົດຖອຍ (ທະນາຄານໂລກ, ຕຸລາ 2020). ຄຽງຄູ່ກັບຜົນເສຍຫາຍກໍ່ມີຜົນກະທົບດ້ານບວກ ເຊັ່ນ: ຕໍ່ກັບສະພາບແວດລ້ອມທາງອາກາດ ເນື່ອງຈາກການປ່ອຍອາຍເສຍຈາກໂຮງຈັກໂຮງງານ ແລະ ການສັນຈອນ ເຊິ່ງເປັນສາເຫດເຮັດໃຫ້ມົນລະພິດຫຼຸດລົງຢ່າງຊັດເຈນ ນັບຕັ້ງແຕ່ສົງຄາມໂລກຄັ້ງທີ 2.

**ສົງຄາມການຄ້າລະຫວ່າງປະເທດມະຫາອຳນາດ**: ສົງຄາມການຄ້າຂອງປະເທດມະຫາອຳນາດ ຍັງຈະສືບຕໍ່ແກ່ຍາວເປັນເວລາດົນພໍສົມຄວນ ແລະ ອີງຕາມການຕີລາຄາຂອງສະຖາບັນສາກົນຕ່າງໆ ເຫັນວ່າບັນຫານີ້ຈະສົ່ງຜົນກະທົບຕໍ່ລະບົບເສດຖະກິດ, ການຜະລິດ ແລະ ການຊົມໃຊ້ທົ່ວໂລກ ເຮັດໃຫ້ບັນຍາກາດການລົງທຶນຢູ່ໃນຈັງຫວະຊ້າລົງ ຍ້ອນນັກລົງທຶນຂາດຄວາມໝັ້ນໃຈຕໍ່ສະພາບທີ່ບໍ່ໝັ້ນທ່ຽງດັ່ງກ່າວ. ການລົງທຶນ FDI ໃນຂອບເຂດທົ່ວໂລກຄາດວ່າຈະຫຼຸດລົງໃນລະດັບ 40% ໃນປີ 2020 (ສະຫະປະຊາຊາດ). ຜົນກະທົບສົງຄາມການຄ້າປະເທດມະຫາອຳນາດ ພາໃຫ້ເງິນຢວນອ່ອນຄ່າລົງ ເຮັດໃຫ້ເສດຖະກິດຂອງ ສປ ຈີນ ຂະຫຍາຍຕົວໃນຈັງຫວະທີ່ຊ້າລົງ, ການບໍລິໂພກ ແລະ ຊົມໃຊ້ພາຍໃນຫຼຸດລົງ. ພ້ອມກັນນີ້, ຍັງໄດ້ສົ່ງຜົນກະທົບຕໍ່ການທ່ອງທ່ຽວໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ໂດຍກົງ. ບັນຫາດັ່ງກ່າວອາດສົ່ງຜົນກະທົບຕໍ່ການທ່ອງທ່ຽວ ສປປ ລາວ ລວມທັງການລົງທຶນຂອງ ສປ ຈີນ ໃນ ສປປ ລາວ ເພາະຄາດວ່າເສດຖະກິດ ສປ ຈີນ ຍັງຈະຢູ່ໃນຈັງຫວະຂະຫຍາຍຕົວຊ້າໃນ 2-3 ປີຕໍ່ໜ້າ.

## 2. ສະພາບພາຍໃນ

ເຖິງວ່າສະພາບພາກພື້ນ ແລະ ສາກົນ ມີຄວາມບໍ່ສະຫງົບທາງການເມືອງ ແລະ ມີຄວາມຂັດແຍ່ງທາງການຄ້າລະຫວ່າງ ບັນດາປະເທດມະຫາອຳນາດກໍ່ຕາມ, ແຕ່ປະເທດພວກເຮົາຍັງມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ, ປະຊາຊົນບັນດາເຜົ່າມີຄວາມເຊື່ອໝັ້ນຕໍ່ແນວທາງນະໂຍບາຍ ແລະ ການນຳພາ-ຊີ້ນຳຂອງພັກ-ລັດ, ຕັ້ງໜ້າປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ.

ເຖິງຢ່າງໃດກໍຕາມ, ສປປ ລາວ ຍັງຈະປະເຊີນໜ້າກັບຄວາມຫຍຸ້ງດ້ານງົບປະມານ, ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ ເຊິ່ງໄດ້ສົ່ງຜົນກະທົບຕໍ່ຊີວິດ ແລະ ຊັບສິນ ໃນ 2-3 ປີ ຜ່ານມາ. ນອກນັ້ນ, ຍັງມີການແຜ່ລະບາດຂອງພະຍາດໂຄວິດ-19 ໃນໄລຍະທ້າຍຂອງແຜນການ 5 ປີ ຄັ້ງທີ VIII ທີ່ຈະສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດຂອງປະເທດໃນຕໍ່ໜ້າ ກໍ່ຄືແຜນການ 5 ປີ ຄັ້ງທີ IX. ພ້ອມກັນນີ້, ຄວາມສ່ຽງຂອງເສດຖະກິດ ແລະ ການຄ້າໂລກທີ່ມີການປ່ຽນແປງ ເຊິ່ງຄາດວ່າປະລິມານການຄ້າໂລກໃນປີ 2020 ຈະຫຼຸດລົງ 10-30% ແລະ ຈະຟື້ນຟູໃນລະດັບທີ່ບໍ່ສູງໃນປີ 2021, ຄວາມຂັດແຍ່ງກັນທາງດ້ານການເມືອງ, ການປ່ຽນແປງດິນຟ້າອາກາດ ແລະ ການຊ່ວຍເຫຼືອທາງການເພື່ອການພັດທະນາທີ່ຢູ່ໃນທ່າອ່ຽງຫຼຸດລົງ. ອີກດ້ານໜຶ່ງ, ການລົງທຶນພາກເອກະຊົນອາດຢູ່ໃນຈັງຫວະທີ່ຊ້າລົງ (ອີງການ UNCTAD ລາຍງານການລົງທຶນໂດຍກົງຈາກຕ່າງປະເທດໄດ້ຫຼຸດລົງ 49% ໃນຂອບເຂດທົ່ວ

ໂລກ ໃນ 6 ເດືອນຕົ້ນປີ 2020 ທຽບໃສ່ປີ 2019 ຈຶ່ງເຮັດໃຫ້ຫຼາຍໆປະເທດທົບທວນຄືນ ແລະ ສົ່ງເສີມການລົງທຶນພາຍໃນປະເທດຫຼາຍຂຶ້ນ). ບັນດາປະເທດຄູ່ຄ້າກັບ ສປປ ລາວ ໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກພະຍາດໂຄວິດ-19 ເປັນຕົ້ນ: ສປ ຈີນ, ສສ ຫວຽດນາມ, ໄທ, ຍີ່ປຸ່ນ ແລະ ອາເມລິກາ ເຮັດໃຫ້ຕ່ອງໂສ້ງການຜະລິດ ແລະ ການບໍລິການພາກພື້ນ ແລະ ສາກົນໄດ້ຮັບຜົນກະທົບຢ່າງມະຫາສານພາໃຫ້ລາຄາສິນຄ້າ ແລະ ລະດັບຄວາມຕ້ອງການ ແລະ ການສະໜອງການບໍລິການມີການເໜັງຕີງ, ການຍົກລະດັບມາດຕະການຄວບຄຸມ ແລະ ປ້ອງກັນການລະບາດພະຍາດໂຄວິດ-19 ເຮັດໃຫ້ຕົ້ນທຶນຄ່າໃຊ້ຈ່າຍລຽບຕາມເຂດຊາຍແດນເພີ່ມຂຶ້ນ ສົ່ງຜົນກະທົບໂດຍກົງຕໍ່ການຂົນສົ່ງ ຈຶ່ງຈໍາເປັນຕ້ອງສືບຕໍ່ປັບປຸງນະໂຍບາຍພາຍໃນໃຫ້ມີຄວາມກົມກຽວ ແລະ ສາມາດຮັບມືໃນໄລຍະຍາວ ໂດຍສະເພາະຖ້າເກີດມີໄພພິບັດທາງທໍາມະຊາດ ຫຼື ການແຜ່ລະບາດໂລກພະຍາດໃນອະນາຄົດ. ນອກຈາກນີ້, ສປປ ລາວ ມີສິ່ງທ້າທາຍອີກຫຼາຍໆຢ່າງ ເຊັ່ນ: ບັນຫາການເງິນພາກລັດ, ການກໍານົດແຫຼ່ງການເຕີບໂຕເສດຖະກິດສີຂຽວ ແລະ ການນໍາໃຊ້ທ່າແຮງປົ່ມຊ້ອນ ແລະ ຂໍ້ໄດ້ປຽບດ້ານປະຊາກອນໜຸ່ມເພື່ອເປັນປັດໄຈຂັບເຄື່ອນພາກເອກະຊົນໃຫ້ມີຄວາມເຂັ້ມແຂງ ດ້ວຍການກໍານົດໃຫ້ວຽກງານດັ່ງກ່າວເປັນເປົ້າໝາຍບູລິມະສິດຂອງບັນດານະໂຍບາຍທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງ.

ສປປ ລາວ ໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງມາຮອດປັດຈຸບັນຢູ່ ສປປ ລາວ ມີຜູ້ຕິດເຊື້ອສະສົມທັງໝົດ 5.675 ກໍລະນີ, ເສຍຊີວິດສະສົມ 6 ກໍລະນີ (ວັນທີ 29 ກໍລະກົດ 2021). ການແຜ່ລະບາດດັ່ງກ່າວ ໄດ້ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມຢ່າງໜັກໜ່ວງ. ອີງໃສ່ບົດຮຽນຈາກຜົນກະທົບດັ່ງກ່າວ ໃນຕໍ່ໜ້າ ສປປ ລາວ ຄວນກໍານົດທາງເລືອກດ້ານນະໂຍບາຍເພື່ອຫຼຸດຜ່ອນຜົນກະທົບໃນໄລຍະກາງ ແລະ ຍາວ ແນໃສ່ການຟື້ນຟູການພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມທົນທານ ແລະ ເຂັ້ມແຂງ ໂດຍການເລີ່ມຈາກການຣັດກຸມລາຍຈ່າຍ ການຈັດສັນບູລິມະສິດໃນພາກລາຍຈ່າຍ ແລະ ສືບຕໍ່ລະດົມທຶນຈາກຫຼາຍແຫຼ່ງ ເພື່ອສະໜັບສະໜູນຂະແໜງສັງຄົມຢ່າງມີຈຸດສຸມ ໂດຍສະເພາະຄົວເຮືອນ ແລະ ຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ. ໃນໄລຍະຍາວ ກໍ່ຄືໄລຍະການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ IX ຕ້ອງສົ່ງເສີມຄວາມຫຼາກຫຼາຍຂອງເສດຖະກິດຢ່າງຕັ້ງໜ້າ ຄຽງຄູ່ກັບການສ້າງຄວາມສາມາດໃນການແຂ່ງຂັນຂອງພາກທຸລະກິດ ດ້ວຍການເພີ່ມທະວີການເຊື່ອມຈອດກັບພາກພື້ນ ແລະ ສາກົນ. ຄຽງຄູ່ກັນນັ້ນ ຕ້ອງແນໃສ່ການພັດທະນາຊັບພະຍາກອນມະນຸດ ແລະ ປ້ອງກັນສັງຄົມ ເພື່ອເຮັດໃຫ້ສາມາດຮັບມືຕໍ່ສະພາບການປ່ຽນແປງກະທັນຫັນໄດ້ຖ້າຫາກເກີດຂຶ້ນອີກໃນອະນາຄົດ. ເອົາໃຈໃສ່ຍົກລະດັບຂະແໜງສາທາລະນະສຸກ ໂດຍສະເພາະ ຄວາມພ້ອມຂອງອຸປະກອນການແພດ, ບຸກຄະລາກອນ, ອຸປະກອນໃນການຄົ້ນຫາເຊື້ອໂລກ ແລະ ເສີມຂະຫຍາຍຂີດຄວາມສາມາດຂອງພື້ນຖານການແກ້ໄຂສຸກເສີນໃນຂົງເຂດການປ້ອງກັນ ແລະ ຄວບຄຸມ, ລະບົບການຕິດຕາມ, ເຄືອຂ່າຍຫ້ອງທົດລອງ, ການບໍລິການສາທາລະນະສຸກ ແລະ ການສະໜອງຂໍ້ມູນຂ່າວສານໃຫ້ທັນກັບເວລາ.

## 3. ທ່າແຮງດ້ານການພັດທະນາເສດຖະກິດ-ສັງຄົມ

ການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ IX ແມ່ນຢູ່ໃນໄລຍະທີ່ມີຫຼາຍເຫດການສໍາຄັນທັງພາຍໃນ ແລະ ຕ່າງປະເທດ ເຊິ່ງຈະກາຍເປັນທ່າແຮງ ແລະ ໂອກາດໃນການບັນລຸເປົ້າໝາຍການພັດທະນາຂອງ ສປປ ລາວ. ປັດໄຈທີ່ຈະຜັກດັນການພັດທະນາໃນ 5 ປີ ຕໍ່ໜ້າມີຄື: 1) ປະຊາກອນໜຸ່ມ, 2) ຄວາມອຸດົມຮັ່ງມີຂອງຊັບພະຍາກອນທໍາມະຊາດ ແລະ 3) ທີ່ຕັ້ງພູມສັນຖານຂອງ ສປປ ລາວ ແລະ ການຂະຫຍາຍຕົວຂອງບັນດາປະເທດໃນອາຊີ ແລະ ປະເທດອ້ອມຂ້າງ ແລະ 4) ການນໍາໃຊ້ວິທະຍາສາດເຕັກໂນໂລຊີທີ່ທັນສະໄໝ.

ໂດຍລວມແລ້ວ ສປປ ລາວ ມີທ່າແຮງໄດ້ປຽບດ້ານທີ່ຕັ້ງພູມສັນຖານ ຍ້ອນຢູ່ໃກ້ຄຽງກັບບັນດາປະເທດທີ່ເສດຖະກິດມີການຂະຫຍາຍຕົວດີ ເຊິ່ງຈະກາຍເປັນຖານການພັດທະນາທີ່ໝັ້ນຄົງ ແລະ ສົ່ງເສີມກໍາລັງແຮງງານໜຸ່ມທີ່ມີອາຍຸຕໍ່າກວ່າ 25 ປີ ກວມເຖິງ 60% ຂອງພົນລະເມືອງ ໃຫ້ສາມາດປະກອບສ່ວນເຂົ້າໃນການພັດທະນາໄດ້. ພ້ອມກັນນີ້,

ເສດຖະກິດຂອງ ສປປ ລາວ ໃນໄລຍະຜ່ານມາແມ່ນມີຄວາມໝັ້ນທ່ຽງ, ຂະແໜງພະລັງງານສະອາດຍັງມີທ່າແຮງບົ່ມຊ້ອນຫຼາຍ, ທີ່ດິນມີຄວາມເໝາະສົມໃນການເຮັດກະສິກຳ ແລະ ດິນທີ່ອຸດົມສົມບູນ ແມ່ນເປັນຊັບສິນອັນມີຄ່າທີ່ສາມາດກາຍເປັນແຫຼ່ງພື້ນຖານໃໝ່ຂອງການເຕີບໂຕ ແລະ ສ້າງວຽກເຮັດງານທຳໃນຕໍ່ໜ້າ.

### *3.1 ປະຊາກອນໜຸ່ມ ແລະ ຂະບວນການພັດທະນາທີ່ທັນສະໄໝ*

ປະຊາກອນໜຸ່ມໃນ ສປປ ລາວ ກວມ 60% ຂອງຈຳນວນພົນລະເມືອງ ເຊິ່ງເປັນປັດໄຈ ແລະ ເປັນກຳລັງແຮງໃນການດຶງດູດການລົງທຶນໃນຕໍ່ໜ້າ ບົນພື້ນຖານການສ້າງຄວາມພ້ອມດ້ານສີມືແຮງງານ ດ້ວຍການເພີ່ມທະວີການລົງທຶນໃສ່ການພັດທະນາຊັບພະຍາກອນມະນຸດໃນປັດຈຸບັນໃຫ້ເຕັມທີ່. ອີງຕາມການເຕີບໂຕຂອງປະຊາກອນ, ອັດຕາປະຊາກອນໃນເກນອອກແຮງງານ, ແນວໂນ້ມການປ່ຽນແປງອັດຕາການເກີດ ແລະ ການຕາຍ ເຫັນວ່າໂອກາດ ແລະ ຜົນປະໂຫຍດດ້ານປະຊາກອນຂອງ ສປປ ລາວ ແມ່ນເລີ່ມຕົ້ນນັບຕັ້ງແຕ່ປີ 1996 ແລະ ຄາດວ່າຈະສ້າງຜົນປະໂຫຍດຮອດປີ 2048. ໃນປີ 2018 ຄ່າກາງອາຍຸແມ່ນ 24 ປີ ແລະ ຄາດວ່າປະມານປີ 2038 ສປປ ລາວ ຈະກ້າວເຂົ້າສູ່ສັງຄົມຜູ້ສູງອາຍຸ ແລະ ຮອດປີ 2059 ຈະກາຍເປັນສັງຄົມຜູ້ສູງອາຍຸ. ເຖິງຢ່າງໃດກໍຕາມ, ປະເທດເຮົາ ຍັງມີໂອກາດຫຼາຍໃນການທີ່ຈະໄດ້ຮັບປະໂຫຍດຈາກການມີປະຊາກອນໜຸ່ມນ້ອຍທີ່ມີກຳລັງແຮງ ລວມທັງແຮງງານເຄື່ອນຍ້າຍທີ່ສາມາດປະກອບສ່ວນເຂົ້າໃນການພັດທະນາ ເພື່ອຂັບເຄື່ອນການເຕີບໂຕທີ່ກ້າວກະໂດດ, ແຕ່ຈະບັນລຸໄດ້ຄືແນວນັ້ນ ຮຽກຮ້ອງໃຫ້ມີການລົງທຶນທີ່ພຽງພໍ ແລະ ມີປະສິດທິພາບໃສ່ຂະແໜງສາທາລະນະສຸກ ແລະ ສຶກສາ ໃນທຸກລະດັບໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ໂດຍສະເພາະໃນໄລຍະກ່ອນໄວຮຽນ ເພື່ອສ້າງໂອກາດ ແລະ ການລົງທຶນຢ່າງມີຈຸດສຸມ ແລະ ມີປະສິດທິຜົນສູງ ເພື່ອໃຫ້ເກີດຜົນປະໂຫຍດສູງສຸດ.

### *3.2 ຄວາມອຸດົມຮັ່ງມີຂອງຊັບພະຍາກອນທຳມະຊາດ ແລະ ຄວາມຫຼາກຫຼາຍຂອງຊັບສິນຂອງຊາດ (ຊັບພະຍາກອນທຳມະຊາດ, ໂຄງລ່າງພື້ນຖານ ແລະ ສະຖາບັນ)*

ສປປ ລາວ ເປັນປະເທດທີ່ອຸດົມຮັ່ງມີ ທາງດ້ານຊັບພະຍາກອນທຳມະຊາດທີ່ຫຼາກຫຼາຍ ເຊິ່ງໄດ້ກາຍເປັນປັດໄຈຂັບເຄື່ອນໃນການເຕີບໂຕຕົ້ນຕໍ ແລະ ເປັນກຳລັງແຮງທີ່ມີຜົນປະໂຫຍດສູງສຸດຖ້າຫາກມີການປັບປຸງໂຄງສ້າງເສດຖະກິດເພື່ອສ້າງຄວາມຫຼາກຫຼາຍຂອງສິນຄ້າ, ຕະຫຼາດ, ຊັບສິນ ແລະ ຫັນເປັນດິຈິຕອນ ໃຫ້ນັບມື້ນັບຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມສ່ຽງຕ່າງໆທີ່ກະທົບຕໍ່ການພັດທະນາ. ດັ່ງນັ້ນ, ຈຶ່ງມີຄວາມສຳຄັນ ແລະ ຈຳເປັນໃນການກຳນົດນະໂຍບາຍທີ່ສົ່ງເສີມຄວາມຫຼາກຫຼາຍຂອງການຜະລິດຂອງຂະແໜງເສດຖະກິດ ແລະ ການສົ່ງອອກ ລວມທັງນະໂຍບາຍສົ່ງເສີມຄວາມຫຼາກຫຼາຍຂອງການນຳໃຊ້ຊັບສິນແຫ່ງຊາດ ໃຫ້ກາຍເປັນທຶນທີ່ຈັບຕ້ອງໄດ້ (ຕົວຢ່າງ: ຈຳນວນຕົວເລກໂຮງຮຽນ ແລະ ໂຮງໝໍ) ແລະ ທຶນທີ່ຈັບຕ້ອງບໍ່ໄດ້ ເຊິ່ງຈະມີມູນຄ່າສູງກວ່າທຶນທີ່ຈັບຕ້ອງໄດ້ໃນໄລຍະຍາວ (ຕົວຢ່າງ: ຜົນສຳເລັດຂອງການສຶກສາ ແລະ ຄຸນນະພາບຂອງເສັ້ນທາງ).

ຂະແໜງການທີ່ເປັນທ່າແຮງ: ປະກອບມີ ກະສິກຳ, ທ່ອງທ່ຽວ, ຂົນສົ່ງ ແລະ ພະລັງງານ, ໃນນີ້ ຂະແໜງກະສິກຳ ແລະ ຂະແໜງທ່ອງທ່ຽວ ມີອັດຕາສ່ວນແຮງງານຫຼາຍທີ່ສຸດ. ***<u>ຂະແໜງກະສິກຳ:</u>*** ສປປ ລາວ ເປັນປະເທດອຸດົມສົມບູນທາງດ້ານເນື້ອທີ່ປູກຝັງ ແລະ ມີເນື້ອທີ່ທຳການຜະລິດທີ່ກວ້າງຂວາງ ຍ້ອນອັດຕາຄວາມໜາແໜ້ນຂອງປະຊາກອນທີ່ຢູ່ລະດັບຕ່ຳ ຈຶ່ງເປັນປັດໄຈເອື້ອອຳນວຍໃນການຜະລິດກະສິກຳທີ່ຍັງມີທ່າແຮງບົ່ມຊ້ອນ ໂດຍສະເພາະກະສິກຳສະອາດ, ທັນສະໄໝ ແລະ ຍືນຍົງ ເຊິ່ງນັບມື້ນັບມີຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ສາກົນ. ໄລຍະຜ່ານມາ ສປປ ລາວ ໄດ້ຮັບສິດທາງການຄ້າຫຼາຍສະບັບ ເປັນຕົ້ນ ໂກຕ້າການສົ່ງອອກສິນຄ້າກະສິກຳໄປ ສປ ຈີນ ແລະ ການສົ່ງອອກສິນຄ້າໄປເອີຣົບ ແບບບໍ່ມີໂກຕ້າ ແລະ ບໍ່ໄດ້ເສຍພາສີນຳເຂົ້າ. ແຕ່ເຖິງແນວໃດກໍ່ຕາມ, ຍ້ອນຄວາມຈຳກັດດ້ານຜະລິດຕະພາບ, ຜົນກະທົບຈາກໄພທຳມະຊາດ, ງົບປະມານ ແລະ ເຕັກໂນໂລຊີທີ່ມີຈຳກັດ ໄດ້ເຮັດໃຫ້ການຜະລິດກະສິກຳມີຄວາມບອບບາງ ບໍ່ສາມາດສົ່ງອອກສິນຄ້າໄດ້ຕາມປະລິມານ ແລະ ຄຸນນະພາບທີ່ໄດ້ກຳນົດໄວ້. ***<u>ທ່ອງທ່ຽວ</u>***:

ເປັນອີກຂະແໜງໜຶ່ງທີ່ເຫັນວ່າມີທ່າແຮງຫຼາຍພໍສົມຄວນ ຍ້ອນທີ່ຕັ້ງພູມສັນຖານເຊື່ອມຈອດກັບຫຼາຍປະເທດ ແລະ ຄວາມເປັນເອກະລັກທາງດ້ານວັດທະນະທຳ ແລະ ທຳມະຊາດທີ່ໂດດເດັ່ນ. ອີງຕາມການລາຍງານຂອງ ອົງການສະຫະປະຊາຊາດເພື່ອການທ່ອງທ່ຽວໂລກ (United Nations World Tourism Organization) ເຫັນວ່າ ຈຳນວນນັກທ່ອງທ່ຽວທີ່ເຂົ້າມາ ສປປ ລາວ ໃນປີ 2019 ຈຳນວນ 4,8 ລ້ານເທື່ອຄົນ ເພີ່ມຂຶ້ນ 14,4% ເຊິ່ງເປັນໜຶ່ງໃນປະເທດທີ່ມີອັດຕາການເຕີບໂຕໄວທີ່ສຸດໃນໂລກ, ການທ່ອງທ່ຽວ ກວມ 13% ຂອງ GDP ແລະ 13% ຂອງການຈ້າງງານທັງໝົດຂອງ ສປປ ລາວ, ລາຍຮັບຈາກການທ່ອງທ່ຽວ ໃນປີ 2019 ຫຼາຍກວ່າ 900 ລ້ານໂດລາສະຫະລັດ. ສະນັ້ນ, ຕ້ອງສົ່ງເສີມການທ່ອງທ່ຽວທີ່ຕິດພັນກັບການຜະລິດກະສິກຳ, ຫຼຸດຜ່ອນຄວາມທຸກຍາກ ແລະ ພັດທະນາຊົນນະບົດ ລວມທັງການທ່ອງທ່ຽວແບບການມີສ່ວນຮ່ວມຂອງປະຊາຊົນ (home stay), ອະນຸລັກທຳມະຊາດ ແລະ ຫັດຖະກຳ ເປັນຕົ້ນການນຳໃຊ້ຜະລິດຕະພັນທີ່ຜະລິດພາຍໃນປະເທດ, ວັດສະດຸໃນການກໍ່ສ້າງ, ການຕົບແຕ່ງດ້ວຍຫັດຖະກຳລາວ ແລະ ອື່ນໆ. ***ພະລັງງານ:*** ເພີ່ມທະວີການຜະລິດ ແລະ ການຊົມໃຊ້ພະລັງງານສະອາດ, ສຶກສາຂະແໜງການຜະລິດ ແລະ ການຊົມໃຊ້ດ້ານພະລັງງານຄຽງຄູ່ກັບການສົ່ງອອກ ຍ້ອນ ສປປ ລາວ ມີໜໍ່ແໜງໃນການຜະລິດໄຟຟ້າໃນລະດັບທີ່ສູງ ເປັນຕົ້ນ ການສົ່ງເສີມການນຳໃຊ້ລົດໄຟຟ້າໃນອະນາຄົດ (ຕົວຊີ້ບອກຂອງຍຸດທະສາດການເຕີບໂຕສີຂຽວຂອງ ສປປ ລາວ) ທີ່ສາມາດຫຼຸດຜ່ອນການນຳເຂົ້ານ້ຳມັນເຊື້ອໄຟ ແລະ ຫັນມານຳໃຊ້ໄຟຟ້າແທນ. ແຕ່ເຖິງແນວໃດກໍ່ຕາມ ຕ້ອງມີການສຶກສາຄົ້ນຄວ້າລະອຽດ ລວມທັງສຶກສາຄວາມເປັນໄປໄດ້ຂອງຄວາມຕ້ອງການພະລັງງານຂອງຂະແໜງອື່ນໆ. ***ຂະແໜງຂົນສົ່ງ:*** ເປັນຂະແໜງທີ່ຈະຫັນຂໍ້ຈຳກັດຂອງການເປັນປະເທດທີ່ບໍ່ມີຊາຍແດນຕິດທະເລ ໃຫ້ກາຍເປັນໂອກາດໃນການເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ ໂດຍສະເພາະໂອກາດຈາກການມີເສັ້ນທາງຄົມມະນາຄົມທາງບົກ ແລະ ທາງອາກາດ ເປັນຕົ້ນ ເສັ້ນທາງລົດໄຟລາວ-ຈີນ, ທາງດ່ວນນະຄອນຫຼວງວຽງຈັນ-ວັງວຽງ ເພື່ອຂົນສົ່ງສິນຄ້າທີ່ຜະລິດພາຍໃນ ແລະ ສິນຄ້າຜ່ານແດນປະເທດອອກສູ່ປະເທດເພື່ອນບ້ານ, ສາມາດເກາະຕິດກັບຕ່ອງໂສ້ການຄ້າ ຜ່ານລະບົບຂົນສົ່ງແບບໂລຈິສຕິກສ ທີ່ທັນສະໄໝ, ການຜະລິດດ້ວຍການປັບນະໂຍບາຍໃຫ້ມີຄວາມເໝາະສົມ, ວ່ອງໄວ, ມີຄຸນນະພາບ ແລະ ຕົ້ນທຶນບໍ່ສູງ ແນໃສ່ປະລິມານຈຳນວນຫຼາຍ ແລະ ເປັນມິດກັບສິ່ງແວດລ້ອມ.

## 3.3 ທີ່ຕັ້ງພູມສັນຖານຂອງ ສປປ ລາວ ແລະ ການຂະຫຍາຍຕົວຂອງບັນດາປະເທດໃນອາຊີ ແລະ ປະເທດອ້ອມຂ້າງ

ຍ້ອນທີ່ຕັ້ງພູມສັນຖານທີ່ໄດ້ປຽບຂອງ ສປປ ລາວ ແລະ ຄວາມຮຸ່ງເຮືອງຂອງທະວີບອາຊີ ໂດຍສະເພາະ ສປ ຈີນ ແລະ ກຸ່ມປະເທດອາຊຽນ ຈະເປັນອີກປັດໄຈໜຶ່ງທີ່ສຳຄັນ ເຊິ່ງຈະສ້າງໂອກາດໃຫ້ການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ IX. ໃນປີ 2018 ຜົນຜະລິດຂອງທະວີບອາຊີບ ຢູ່ໃນລະດັບປະມານ 24% ຂອງການຜະລິດທັງໝົດໃນທົ່ວໂລກ ທຽບໃສ່ 4,1% ໃນປີ 1960. ໂດຍສະເພາະ ນັບແຕ່ປີ 2008, ການຂະຫຍາຍຕົວໃນຈັງຫວະກ້າວກະໂດດຂອງ ສປ ຈີນ ແລະ ອາຊີຕາເວັນອອກ ໄດ້ກາຍເປັນແຮງດຶງດູດການລົງທຶນ ແລະ ຂະຫຍາຍຕົວເສດຖະກິດ, ຄາດວ່າການເຕີບໂຕໂລກສ່ວນໃຫຍ່ໃນອະນາຄົດ ແມ່ນຈະເກີດຂຶ້ນຢູ່ຂົງເຂດອາຊີ ເປັນຕົ້ນ ສປ ຈີນ ແລະ ອິນເດຍ ເຊິ່ງຈະກາຍເປັນແຫຼ່ງສະໜອງການເງິນທີ່ມີເງື່ອນໄຂຜ່ອນຜັນສຳລັບໂຄງການໂຄງລ່າງ, ການຫຼັ່ງໄຫຼເຂົ້າມາຂອງນັກທ່ອງທ່ຽວ, ການລົງທຶນຕ່າງປະເທດ ແລະ ຕະຫຼາດສົ່ງອອກທີ່ໃຫ້ສິດພິເສດທາງການຄ້າກັບ ສປປ ລາວ. ພ້ອມກັນນີ້, ອີງຕາມການຄາດຄະເນຂອງ World Economic Forum (ທັນວາ 2019) ພາຍໃນປີ 2020 ທະວີບອາຊີ ຈະກາຍເປັນຂົງເຂດທີ່ກວມອັດຕາລວມຍອດຜະລິດຕະພັນໂລກເກືອບ 60% ແລະ ໃນອາຊີປາຊີຟິກ ຈະມີພົນລະເມືອງທີ່ກາຍເປັນກຸ່ມຄົນທີ່ມີລາຍຮັບປານກາງ 2,4 ຕື້ຄົນ ເຮັດໃຫ້ ສປປ ລາວ ມີທ່າແຮງໄດ້ປຽບດ້ານທີ່ຕັ້ງພູມສັນຖານທີ່ຢູ່ໃຈກາງການເຊື່ອມໂຍງ ແລະ ເຊື່ອມຈອດດ້ານກຳລັງແຮງການໃຊ້ຈ່າຍ, ແຫຼ່ງທຶນ ແລະ ການຮ່ວມມືຕ່າງໆ.

### 3.4 ການນໍາໃຊ້ວິທະຍາສາດເຕັກໂນໂລຊີທີ່ທັນສະໄໝ

ປັດຈຸບັນ, ວິທະຍາສາດ-ເຕັກໂນໂລຊີ ໄດ້ມີການພັດທະນາຢ່າງກ້າວກະໂດດ; ສະນັ້ນ, ສປປ ລາວ ພວກເຮົາ ຄວນນໍາໃຊ້ກາລະໂອກາດນີ້ ເປັນທ່າແຮງອັນສໍາຄັນໃນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນ ການນໍາໃຊ້ວິທະຍາສາດ-ເຕັກໂນໂລຊີ ເຂົ້າໃນການຜະລິດ, ການບໍລິການ ແລະ ການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ, ການປັບປຸງການຄຸ້ມຄອງ ແລະ ບໍລິຫານພາກລັດໃຫ້ມີປະສິດທິພາບສູງຂຶ້ນ ໃນຂະແໜງການເກັບລາຍຮັບ ແລະ ລາຍຈ່າຍ.

## 4. ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ

ແຜນງານ ອິສຕານບູນ 2011 ໄດ້ສະແດງເຖິງເຈດຈໍານົງໃນການຊຸກຍູ້ໃຫ້ປະເທດ LDC ຈໍານວນ 47 ປະເທດ ສາມາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາໃນປີ 2020 ໃຫ້ໄດ້ຢ່າງນ້ອຍເຄິ່ງໜຶ່ງ ແຕ່ຄາດໝາຍດັ່ງກ່າວເຫັນວ່າອາດບໍ່ບັນລຸໃນໄລຍະ 2011-2021 ແມ່ນມີພຽງແຕ່ 14 ປະເທດທີ່ສາມາດບັນລຸເງື່ອນ ແລະ ສາມາດຫຼຸດພົ້ນໃນໄລຍະທີ່ແຕກຕ່າງກັນອອກໄປ.

ປີ 2021 ໄດ້ມີການປະເມີນຄືນລາຍຊື່ປະເທດດ້ອຍພັດທະນາໃນຮອບສາມປີ, ສປປ ລາວ ສາມາດຜ່ານທັງໝົດ 3 ເງື່ອນໄຂ ແລະ ໄດ້ຖືກແນະນໍາໃຫ້ຕໍ່ໄລຍະເວລາອີກ 5 ປີ ເພື່ອກະກຽມທີ່ຈະຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ. ອີງຕາມການປະເມີນຂອງຄະນະກໍາມະການນະໂຍບາຍເພື່ອການພັດທະນາ (CDP) ໃນປີ 2021 ສປປ ລາວ ສາມາດຜ່ານ 3 ເງື່ອນໄຂ ຄື: ລາຍໄດ້ແຫ່ງຊາດ (GNI) ບັນລຸໄດ້ 2.265 ໂດລາສະຫະລັດ ລື່ນຄາດໝາຍ (ຄາດໝາຍ: 1.222 ໂດລາສະຫະລັດ) ແລະ ດັດຊະນີຊັບສິນມະນຸດ (HAI) ບັນລຸໄດ້ 72,2 ລື່ນຄາດໝາຍ (ຄາດໝາຍ: ໃຫ້ຫຼາຍກວ່າ 66) ແລະ ດັດຊະນີຄວາມບອບບາງດ້ານເສດຖະກິດ (EVI) ບັນລຸໄດ້ 26,6 ລື່ນຄາດໝາຍ (ຄາດໝາຍ: ໃຫ້ຕໍ່າກວ່າ 32), ເຊິ່ງຈະເປັນການບັນລຸ 2 ຄັ້ງ ຕິດຕໍ່ກັນ (ຄັ້ງທໍາອິດບັນລຸໃນປີ 2018 ມີພຽງ 2 ເງື່ອນໄຂ ຄື: GNI ແລະ HAI ສ່ວນ EVI ແມ່ນບໍ່ບັນລຸ). ສາເຫດທີ່ ສປປ ລາວ ສາມາດບັນລຸເງື່ອນໄຂຂອງ EVI ໃນປີ 2021 ໄດ້ແມ່ນຍ້ອນ ອີງການ ສປຊ ໄດ້ມີການດັດແກ້ການຄິດໄລ່ຕົວຊີ້ບອກຂອງດັດຊະນີດັ່ງກ່າວ ຈຶ່ງເຮັດໃຫ້ຄ່າດັດຊະນີ EVI ຂອງ ສປປ ລາວ ຫຼຸດລົງ.

ເນື່ອງຈາກສິດ ແລະ ຜົນປະໂຫຍດຂອງການເປັນປະເທດດ້ອຍພັດທະນາ ແມ່ນເຂົ້າເຖິງຕະຫຼາດແບບໄດ້ຮັບສິດທິພິເສດ ແຕ່ຂໍ້ໄດ້ປຽບນີ້ຈະໝົດໄປພາຍຫຼັງທີ່ຫຼຸດພົ້ນອອກຈາກ LDC ລວມທັງການສູນເສຍຜົນປະໂຫຍດຈາກຂອບການຄ້າ (Everything but Arms). ແຕ່ເຖິງແນວໃດກໍ່ຕາມ, ຍ້ອນປະເພດສິນຄ້າ ແລະ ມູນຄ່າສິ່ງອອກພາຍໃຕ້ຂອບ EBA ຂອງ ສປປ ລາວ ບໍ່ໄດ້ຢູ່ໃນລະດັບ ແລະ ມູນຄ່າສູງ ຈຶ່ງບໍ່ແມ່ນເລື່ອງທີ່ໜ້າກັງວົນ ໂດຍສະເພາະ ໃນໄລຍະຍາວ ຜົນປະໂຫຍດທີ່ ສປປ ລາວ ຈະໄດ້ຮັບແມ່ນຈະຄຸ້ມຄ່າກວ່າຜົນປະໂຫຍດຂອງການເປັນ LDC ໃນເວລາທີ່ເສດຖະກິດຂອງປະເທດດ້ອຍພັດທະນາມີການເຕີບໂຕ, ມີຄວາມຫຼາກຫຼາຍເພີ່ມຂຶ້ນ ແລະ ແກ້ໄຂບັນດາສິ່ງທ້າທາຍ ແລະ ປັດໄຈຖ່ວງດຶງການພັດທະນາໄດ້. ສະນັ້ນ, ຈຶ່ງມີຄວາມຈໍາເປັນຕ້ອງມີການວາງແຜນ ແລະ ກໍານົດຍຸດທະສາດໃນການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ. ປັດຈຸບັນ, ບັນດາປະເທດ LDC ໄດ້ຮັບມາດຕະການສະໜັບສະໜູນຈໍານວນ 136 ຂໍ້ ເຊິ່ງ ສປປ ລາວ ກໍ່ໄດ້ຮັບບັນດາສິດຜົນປະໂຫຍດດັ່ງກ່າວໃນໄລຍະຜ່ານມາ ຈຶ່ງມີຄວາມຈໍາເປັນຢ່າງຍິ່ງໃນການຮັບປະກັນການໄດ້ຮັບຜົນປະໂຫຍດທີ່ຕໍ່ເນື່ອງດ້ວຍການມີມາດຕະການທີ່ສອດຄ່ອງໃນໄລຍະຂ້າມຜ່ານ ແລະ ໃນອະນາຄົດພາຍຫຼັງທີ່ຫຼຸດພົ້ນແລ້ວ.

ຜົນປະໂຫຍດຂອງການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາແມ່ນມີ 2 ດ້ານຄື: 1) ຈະຊ່ວຍເພີ່ມທະວີພາບພົດທາງການເມືອງ, ເຮັດໃຫ້ທິດທາງຍຸດທະສາດມີຄວາມຊັດເຈນຍິ່ງຂຶ້ນ ແລະ ຮັບປະກັນການຈັດຕັ້ງປະຕິບັດທີ່ມີປະສິດທິພາບກວ່າເກົ່າ; 2) ຄວາມໜ້າເຊື່ອຖືໃນຕະຫຼາດສາກົນ ເຊິ່ງເຮັດໃຫ້ການເຂົ້າເຖິງແຫຼ່ງທຶນມີຄວາມສະດວກຂຶ້ນ, ເງື່ອນໄຂການກູ້ຢືມກໍ່ຈະເອື້ອອໍານວຍຂຶ້ນ. ແຕ່ຜົນປະໂຫຍດເຫຼົ່ານີ້ອາດບໍ່ຍືນຍົງຖ້າຫາກວ່າຄວາມໜ້າເຊື່ອຖືຂອງປະ ເທດ, ປະຫວັດການກູ້ຢືມ ແລະ ສະພາບແວດລ້ອມການດໍາເນີນທຸລະກິດບໍ່ເອື້ອອໍານວຍເທົ່າທີ່ຄວນ. ແຕ່ກົງກັນຂ້າມຖ້າຫາກມີລະບຽບ

ການທີ່ຊັດເຈນ, ມີການປັບປຸງລະບົບ ແລະ ນະໂຍບາຍຢ່າງຖືກຕ້ອງ ແລະ ສອດຄ່ອງ ກໍ່ຈະເຮັດໃຫ້ການອອກຈາກ LDC ປ່ຽນແນວຄິດຂອງຕະຫຼາດສາກົນຈາກລົບໃຫ້ມາເປັນບວກໄດ້.

ສະນັ້ນ, ລັດຖະບານ ຕ້ອງໄດ້ສືບຕໍ່ເອົາໃຈໃສ່ຕິດຕາມ ແລະ ກະກຽມຄວາມພ້ອມຮອບດ້ານໃນໄລຍະຂ້າມຜ່ານ 5 ປີ ແຕ່ໄລຍະ 2021-2026. ເພື່ອຮັບປະກັນໃຫ້ການອອກຈາກສະຖານະພາບປະເທດດ້ອຍພັດທະນາມີຄວາມຍືນຍົງ ສປປ ລາວ ຕ້ອງມີມາດຕະການສົ່ງເສີມການພັດທະນາທີ່ຍືນຍົງ, ສາມາດກຸ້ມຕົນເອງ ແລະ ຫຼຸດຜ່ອນສິ່ງກີດຂວາງດ້ານເສດຖະກິດ ດ້ວຍການສ້າງຍຸດທະສາດການຂ້າມຜ່ານທີ່ສອດຄ່ອງ ເພື່ອສ້າງຄວາມສາມາດໃນການຮັບມືຈາກຜົນກະທົບຈາກພາຍນອກ ເຊັ່ນ: ການຫຼຸດລົງຂອງການຊ່ວຍເຫຼືອທາງການເພື່ອການພັດທະນາ, ການຫຼຸດລົງການລົງທຶນຕ່າງປະເທດຂະໜາດໃຫຍ່ຍ້ອນສະພາບແວດລ້ອມສາກົນທີ່ບໍ່ໝັ້ນທ່ຽງ ຫຼື ຄວາມຈໍາເປັນໃນການສ້າງຄວາມພ້ອມຂອງປະເທດທີ່ມີຄວາມສ່ຽງພາຍໃຕ້ຂອບການຮ່ວມມືເຊນດາຍວ່າດ້ວຍການຫຼຸດຜ່ອນຄວາມສ່ຽງຂອງໄພພິບັດ (Sendai Framework) ແລະ ສົນທິສັນຍາສະຫະປະຊາຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCC).

## 5. ການເປັນປະເທດທີ່ມີລາຍຮັບປານກາງສູງ

ສປປ ລາວ ຈະສາມາດກາຍເປັນປະເທດທີ່ມີລາຍຮັບປານກາງສູງ ພາຍໃນປີ 2030 ຖ້າຫາກສາມາດຮັກສາລະດັບການເຕີບໂຕຂອງເສດຖະກິດໃຫ້ຢູ່ໃນລະດັບ 6,5%-7% ໃນໄລຍະປີ 2020-2030 ແລະ ໃນເງື່ອນໄຂການເຕີບໂຕຂອງປະຊາກອນ 1,7% ຕໍ່ປີ, ຈະສາມາດບັນລຸລາຍໄດ້ແຫ່ງຊາດສະເລ່ຍຕໍ່ຫົວຄົນ 4.000 ໂດລາສະຫະລັດ ຈາກ 2.445 ໂດລາສະຫະລັດ ໃນປີ 2018 (ຕາມວິທີຄິດໄລ່ Atlas). ເຖິງວ່າຈະສາມາດບັນລຸໄດ້ກໍ່ຕາມ, ສປປ ລາວ ອາດຈະຍັງຖືກຈັດຢູ່ໃນລໍາດັບຕໍ່າສຸດຂອງກຸ່ມປະເທດທີ່ມີລາຍຮັບປານກາງສູງ ຍ້ອນລາຍຮັບສະເລ່ຍຕໍ່ຫົວຄົນຂອງກຸ່ມປະເທດດັ່ງກ່າວແມ່ນນອນຢູ່ໃນລະຫວ່າງ 3.996 ໂດລາສະຫະລັດ ຫາ 12.375 ໂດລາສະຫະລັດ (ອີງຕາມການຈັດເງື່ອນໄຂຂອງທະນາຄານໂລກ ໃນເດືອນກໍລະກົດ 2019). ເຖິງແນວໃດກໍ່ຕາມ, ການເຕີບໂຕຂອງ ສປປ ລາວ ຈະມີຄວາມຍືນຍົງໜັອຍຫຼາຍຊໍ່າໃດ ແມ່ນຂຶ້ນກັບການປ່ຽນແປງດ້ານໂຄງສ້າງເສດຖະກິດທີ່ຕິດພັນກັບຄວາມຫຼາກຫຼາຍຂອງແຫຼ່ງການຜະລິດ ແລະ ການຄ້າ ແລະ ຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຢ່າງຕັ້ງໜ້າ ແລະ ມີປະສິດທິຜົນສູງ.

## 6. ເປົ້າໝາຍການພັດທະນາແບບຍືນຍົງ

ການສໍາຫຼວດຂອງອົງການ UNESCAP ໃນປີ 2019 ໄດ້ມີຂໍ້ແນະນໍາ ແລະ ຮຽກຮ້ອງໃຫ້ມີການສຸມທຶນຮອນໃສ່ການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະປະເທດດ້ອຍພັດທະນາ ແລະ ປະເທດ CLMV ແມ່ນຕ້ອງເພີ່ມທຶນປະມານ 12-16% ຂອງ GDP ເພື່ອແກ້ໄຂຄວາມທຸກຍາກ ແລະ ປັບປຸງການສຶກສາ. ບົດສໍາຫຼວດດັ່ງກ່າວໄດ້ຊີ້ແຈງເພີ່ມເຕີມກ່ຽວກັບຄວາມຈໍາເປັນໃນການເພີ່ມທະວີຄວາມພະຍາຍາມຂອງ ສປປ ລາວ ໃນການປັບປຸງວຽກງານການສຶກສາ, ສາທາລະນະສຸກ ແລະ ວຽກງານປົກປ້ອງສັງຄົມ ເຊິ່ງເຫັນວ່າສອດຄ່ອງກັບທິດທາງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ຕ້ອງໄດ້ເອົາໃຈໃສ່ໃນການລະດົມທຶນ ເພື່ອສືບຕໍ່ຈັດຕັ້ງປະຕິບັດ ເປົ້າໝາຍພັດທະນາແບບຍືນຍົງ (ປພຍ).

ໜຶ່ງໃນວຽກງານບູລິມະສິດສາກົນແມ່ນວຽກງານງົບປະມານໃນການຈັດຕັ້ງປະຕິບັດ ປພຍ ໃນນັ້ນ ມີພັນທະໃນການປະກອບສ່ວນທຶນຂອງຕົນໃນລະດັບ 0,7% ຂອງ GNI ໃນການສະໜອງແຫຼ່ງທຶນໃຫ້ປະເທດດ້ອຍພັດທະນາ ເພື່ອເພີ່ມທະວີການລົງທຶນໃສ່ຂະແໜງທີ່ຮີບດ່ວນ ແລະ ເປັນບູລິມະສິດ ຫຼື ເປົ້າໝາຍທີ່ມີຄວາມສ່ຽງບໍ່ບັນລຸ ເປັນຕົ້ນ: ວຽກງານໂພຊະນາການ ແລະ ການສະໜອງບໍລິການສາທາລະນະສຸກທີ່ມີຄຸນນະພາບ, ການຫຼຸດອັດຕາການຕາຍຂອງແມ່ ໃຫ້ຢູ່ໃນລະດັບຕໍ່າກວ່າ 70 ຄົນ ຕໍ່ການເກີດ 100.000 ຊີວິດ (SDG3.1), ອັດຕາການຕາຍຂອງເດັກລຸ່ມ 5 ປີ ໃຫ້ຢູ່ລະດັບຕໍ່າກວ່າ 25 ຄົນຕໍ່ການເກີດ 1.000 ຄົນ (SDG3.2) ທີ່ເຫັນວ່າຍັງມີຄວາມທ້າທາຍໃນ ສປປ ລາວ.

ການບັນລຸຄາດໝາຍ ປພຍ ແມ່ນມີຄວາມຫຍຸ້ງຍາກ ແລະ ທ້າທາຍຫຼາຍ, ຫຼາຍປະເທດແມ່ນມີຄວາມຄືບໜ້າທີ່ແຕກຕ່າງກັນກັນ. ຍິ່ງໄປກວ່ານັ້ນ, ການລະບາດຂອງພະຍາດໂຄວິດ-19 ໄດ້ຖ່ວງດຶງການພັດທະນາ ແລະ ເຮັດໃຫ້ຄວາມ

ຄືບໜ້າທີ່ສະສົມຜ່ານມາຢູ່ໃນສະພາວະທົດຖອຍຕື່ມ ເຊິ່ງຈະພາໃຫ້ຄວາມມຸ້ງໝັ້ນຂອງການບັນລຸວາລະການພັດທະນາແບບຍືນຍົງ 2030 ໄດ້ຮັບຜົນກະທົບຕື່ມ ໂດຍສະເພາະງົບປະມານການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ການລົງທຶນທີ່ຄາດວ່າຈະຫຼຸດລົງ, ການເພີ່ມຂຶ້ນຂອງອັດຕາຄວາມທຸກຍາກ, ລະບົບສາທາລະນະສຸກ, ການປ່ຽນແປງດິນຟ້າອາກາດທີ່ນັບມື້ນັບຖີ່ຂຶ້ນ. ເວົ້າລວມແລ້ວ ເປົ້າໝາຍທີ່ຈະໄດ້ຮັບຜົນກະທົບສະສົມໜັກໜ່ວງຍ້ອນການລະບາດຂອງພະຍາດໂຄວິດ-19 ລວມມີ ເປົ້າໝາຍ 1, 2, 3, 8 ແລະ 10 ອີງຕາມການປະເມີນໄລຍະສັ້ນຂອງບົດລາຍງານ ປພຍ ປີ 2020 ໂດຍອົງການ SDSN. ເພື່ອຮັບປະກັນການຈັດຕັ້ງປະຕິບັດ ປພຍ ໃຫ້ສຳເລັດໃນຕໍ່ໜ້າ ອົງການ SDSN ສະເໜີໃຫ້ແນໃສ່ 6 ຫຼັກການຕົ້ນຕໍ ຄື: 1) ສົ່ງເສີມການສຶກສາ ແລະ ສິດສະເໝີພາບ; 2) ສົ່ງເສີມສາທາລະນະສຸກ ແລະ ຊີວິດການເປັນຢູ່ທີ່ດີ; 3) ສົ່ງເສີມພະລັງງານສະອາດ ແລະ ອຸດສາຫະກຳຍືນຍົງ; 4) ສົ່ງເສີມອາຫານ, ທີ່ດິນ ແລະ ຊັບພະຍາກອນນ້ຳໃຫ້ມີຄວາມຍືນຍົງ; 5) ສົ່ງເສີມຕົວເມືອງ ແລະ ຊຸມຊົນຍືນຍົງ ແລະ 6) ສົ່ງເສີມການຫັນເປັນດິຈິຕອນເພື່ອການພັດທະນາທີ່ຍືນຍົງ ເຫັນວ່າ 6 ຫຼັກການນີ້ ແມ່ນສອດຄ່ອງກັບທິດທາງ ແລະ ບູລິມະສິດຂອງ ແຜນການ 5 ປີ ຄັ້ງທີ IX.

## 7. ການເຕີບໂຕສີຂຽວ

ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ສປປ ລາວ ຮອດປີ 2030 ເປັນເຄື່ອງມືຕົ້ນຕໍເພື່ອຮັບປະກັນເປົ້າໝາຍການພັດທະນາເສດຖະກິດ-ສັງຄົມໄລຍະຍາວ ໂດຍສະເພາະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ, ເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງ ແລະ ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ (ປພຍ) ໃນປີ 2030 ຕາມທິດສີຂຽວ ແລະ ຍືນຍົງ ໂດຍການປະກອບສ່ວນເຂົ້າໃນການຊຸກຍູ້ (1) ການຂະຫຍາຍຕົວຂອງເສດຖະກິດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນຕົວເມືອງ ແລະ ຊົນນະບົດໃຫ້ດີຂຶ້ນ, ສ້າງວຽກເຮັດງານທຳ ແລະ ກິດຈະກຳສ້າງລາຍໄດ້ໃຫ້ແກ່ປະຊາຊົນ; (2) ການຍົກສູງປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງຂອງການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດຂອງປະເທດໃຫ້ເກີດຜົນປະໂຫຍດສູງສຸດ ໂດຍສະເພາະແມ່ນຊັບພະຍາກອນປ່າໄມ້, ທີ່ດິນ, ແຮ່ທາດ, ຊັບພະຍາກອນນ້ຳ, ແຫຼ່ງນ້ຳ, ຊີວະນາໆພັນ ແລະ ອື່ນໆ; (3) ການຫຼຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຂອງເສດຖະກິດຂອງປະເທດຕໍ່ໄພພິບັດທາງທຳມະຊາດ ແລະ ການເໜັງຕີງຂອງສະພາບເສດຖະກິດໂລກ ທີ່ຈະນັບມື້ນັບຮຸນແຮງຂຶ້ນ ແລະ ຄາດຄະເນລ່ວງໜ້າຍາກ ແລະ (4) ການຫຼຸດຜ່ອນ ຫຼື ຈຳກັດການເພີ່ມຂຶ້ນຂອງການສ້າງມົນລະພິດ, ຄວາມເປິເປື້ອນ, ສິ່ງເສດເຫຼືອ ແລະ ການປ່ອຍທາດອາຍເຮືອນແກ້ວທີ່ເປັນສາເຫດຕົ້ນຕໍຂອງການປ່ຽນແປງຂອງສະພາບດິນຟ້າອາກາດ, ໄພພິບັດທຳມະຊາດ ແລະ ພະຍາດຫຼາຍຊະນິດ.

# II. ທິດທາງລວມ, ເປົ້າໝາຍ ແລະ ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025)

ແຜນການ 5 ປີ ຄັ້ງທີ IX ເປັນແຜນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ເປັນແຜນສືບຕໍ່ປະຕິບັດຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແລະ ວິໄສທັດຂອງການພັດທະນາ ຮອດປີ 2030 ຂອງພັກເຮົາ.

## 1. ທິດທາງລວມ

1) ສືບຕໍ່ກະກຽມຄວາມພ້ອມຮອບດ້ານ ເພື່ອນຳພາປະເທດຊາດອອກຈາກສະຖານະພາບດ້ອຍພັດທະນາ; ປະຊາຊົນມີວຽກເຮັດງານທຳ, ຊີວິດການເປັນຢູ່ໄດ້ຮັບການປັບປຸງດີຂຶ້ນ ແລະ ໄດ້ຮັບຜົນປະໂຫຍດຢ່າງທົ່ວເຖິງ, ມີຄວາມສະເໝີພາບ ແລະ ທ່ຽງທຳ; ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ສ້າງສັງຄົມໃຫ້ມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ; ພັດທະນາເສດຖະກິດ-ສັງຄົມໃຫ້ມີຄວາມສົມດຸນລະຫວ່າງການພັດທະນາເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ,

ສືບຕໍ່ຈັດຕັ້ງຜັນຂະຫຍາຍຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ແລະ ປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ 2030 ໃຫ້ມີປະສິດທິຜົນສູງ;

2) ບຸກທະລຸແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງ, ອຸປະສັກຕ່າງໆ ໃນການພັດທະນາໃນໄລຍະຜ່ານມາ, ແກ້ໄຂຄວາມຫຍຸ້ງຍາກທາງດ້ານການເງິນ-ເງິນຕາ ຢ່າງມີປະສິດທິພາບ, ກຽມຮັບມືກັບສິ່ງທ້າທາຍທີ່ເກີດຂຶ້ນໃນໄລຍະໃໝ່ ເປັນຕົ້ນ ຜົນກະທົບຈາກພະຍາດໂຄວິດ-19, ການປ່ຽນແປງດິນຟ້າອາກາດ ແລະ ສະພາບທີ່ບໍ່ແນ່ນອນໃນພາກພື້ນ ແລະ ສາກົນ;

3) ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ເພື່ອເປັນປັດໄຈທີ່ສຳຄັນໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ, ສ້າງການເຕີບໂຕເສດຖະກິດທີ່ມີຄຸນນະພາບ ດ້ວຍການປະຕິຮູບໂຄງສ້າງເສດຖະກິດໃໝ່ໃນແຕ່ລະຂະແໜງການ ແລະ ທ້ອງຖິ່ນ, ເສີມຂະຫຍາຍປັດໄຈ ແລະ ທ່າແຮງບົ່ມຊ້ອນຂອງຊາດ ໂດຍນຳໃຊ້ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (ICT) ທີ່ເໝາະສົມ ໃຫ້ກາຍເປັນໂອກາດ, ເປັນກຳລັງແຮງ ແລະ ເປັນພື້ນຖານການຜະລິດ ແລະ ການບໍລິການທີ່ເປັນປາຍແຫຼມ, ເປັນຫົວຈັກໃຫ້ແກ່ການເຕີບໂຕ ເພື່ອສ້າງພື້ນຖານໃຫ້ມີຄວາມເຂັ້ມແຂງ ແລະ ເປັນເຈົ້າຕົນເອງ ເພິ່ງຕົນເອງ ທາງດ້ານເສດຖະກິດເປັນກ້າວໆ.

## 2. ເປົ້າໝາຍໃຫຍ່

ເພື່ອໃຫ້ສາມາດບັນລຸທິດທາງລວມຂອງແຜນການ 5 ປີ ຄັ້ງທີ IX ຈະຕ້ອງໄດ້ສຸມໃສ່ 6 ເປົ້າໝາຍໃຫຍ່ ຄື:

1) ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ;
2) ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ທີ່ສາມາດຕອບສະໜອງຄວາມຕ້ອງການຂອງພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທະພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ;
3) ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ;
4) ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ;
5) ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ການະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ;
6) ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ.

## 3. ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025)

### *ເປົ້າໝາຍທີ 1: ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ*

ພັດທະນາເສດຖະກິດແຫ່ງຊາດໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ ແລະ ຍືນຍົງຕິດພັນກັບການຫັນປ່ຽນໂຄງປະກອບເສດຖະກິດໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ປັບປຸງໂຄງປະກອບເສດ ຖະກິດໃຫ້ມີຄວາມຫຼາກຫຼາຍຕາມຂະແໜງການຜະລິດ-ບໍລິການທີ່ມີຜົນໄດ້ຮັບສູງ, ມີປະສິດທິພາບ ແລະ ສ້າງມູນຄ່າເພີ່ມຕາມທ່າແຮງບົ່ມຊ້ອນຂອງປະເທດ; ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຜະລິດໃນຂະແໜງກະສິກຳ, ຍົກລະດັບຄວາມສາມາດໃນການຜະລິດອຸດສາຫະກຳ ແລະ ສົ່ງເສີມອຸດສາຫະກຳການບໍລິການ ເພື່ອເປັນການສ້າງວຽກງານທຳໃຫ້ປະຊາຊົນ, ຮັບປະກັນສະຖຽນລະພາບທາງດ້ານເສດຖະກິດມະຫາພາກໃຫ້ມີຄວາມເຂັ້ມແຂງທາງດ້ານງົບປະມານ ແລະ ດ້ານເງິນຕາ; ສ້າງຄວາມກົມກ່ຽວລະຫວ່າງແຜນນະໂຍບາຍການເງິນ ແລະ ເງິນຕາ ຢ່າງເປັນລະບົບໃຫ້ສອດຄ່ອງກັບ

ສະພາບເສດຖະກິດ-ສັງຄົມໃນໄລຍະໃໝ່, ສຸມໃສ່ປະຕິຮູບການຄຸ້ມຄອງການເງິນພາກລັດຢ່າງມີນະວັດຕະນະກຳ ເປັນລະບົບ ແລະ ຕໍ່ເນື່ອງ, ປັບປຸງການເກັບລາຍຮັບ, ຄວບຄຸມລາຍຈ່າຍ, ຮັບປະກັນສະຖຽນລະພາບເງິນຕາແຫ່ງຊາດໃຫ້ໝັ້ນທ່ຽງ ແລະ ຈັດສັນງົບປະມານໄປຕາມທິດບູລິມະສິດຂອງການພັດທະນາ ແນໃສ່ຟື້ນຟູເສດຖະ ກິດຈາກຜົນກະທົບຂອງພະຍາດໂຄວິດ-19 ຫຼັງປີ 2020; ຫັນປ່ຽນການລົງທຶນໃຫ້ມີຈຸດສຸມ, ຄຸນນະພາບ ແລະ ປະສິດທິຜົນສູງຂຶ້ນ; ສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງລະຫວ່າງແຜນການ ແລະ ງົບປະມານຂອງລັດ ແລະ ດຶງດູດການລົງທຶນຂອງພາກເອກະຊົນ ເພື່ອສະໜັບສະໜູນບັນດາເປົ້າໝາຍພັດທະນາເສດຖະກິດ-ສັງຄົມ; ສ້າງສະພາບແວດລ້ອມການດຳເນີນທຸລະກິດ ແລະ ການລົງທຶນທີ່ເໝາະສົມ ເພື່ອຍົກສູງຄວາມສາມາດໃນການແຂ່ງຂັນ ແລະ ສ້າງຄວາມຫຼາກຫຼາຍຂອງເສດຖະກິດ, ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄປສູ່ຄຸນນະພາບໃໝ່ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ; ຄຸ້ມຄອງວິສາຫະກິດລັດໃຫ້ມີປະສິດທິຜົນສູງຂຶ້ນກວ່າເກົ່າ ແລະ ສາມາດປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຢ່າງເຕັມສ່ວນ.

## 1. ແຜນວຽກຈຸດສຸມທີ 1: ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ.

ພັດທະນາເສດຖະກິດແຫ່ງຊາດໃຫ້ມີຄຸນນະພາບ ດ້ວຍການຫັນໂຄງປະກອບເສດຖະກິດໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ປັບປຸງໂຄງປະກອບເສດຖະກິດໃຫ້ມີຄວາມຫຼາກຫຼາຍຕາມຂະແໜງການຜະລິດ-ບໍລິການ, ມີປະສິດທິພາບ ແລະ ສ້າງມູນຄ່າເພີ່ມຕາມທ່າແຮງບົ່ມຊ້ອນຂອງປະເທດ; ເລັ່ງໃສ່ຂະແໜງການຜະລິດອຸດສາຫະກຳປຸງແຕ່ງທີ່ຕິດພັນກັບຕ່ອງໂສ້ການຜະລິດຂອງພາກພື້ນ ແລະ ສາກົນ, ຂະແໜງການທີ່ມີເປັນທ່າແຮງສາມາດຂຸດຄົ້ນໄດ້ຕື່ມ ຄື: ກະສິກຳ ແລະ ການທ່ອງທ່ຽວ ເພື່ອສ້າງລາຍຮັບງົບປະມານ ແລະ ເງິນຕາຕ່າງປະເທດ, ສ້າງວຽກງານທຳໃຫ້ປະຊາຊົນເປັນຈຳນວນຫຼາຍ ແລະ ທົດແທນການນຳເຂົ້າສິນຄ້າ.

ອີງຕາມທິດການເຕີບໂຕທີ່ມີຄຸນນະພາບ, ສປປ ລາວ ຈະສ້າງຄວາມຫຼາກຫຼາຍທາງດ້ານເສດຖະກິດ ໂດຍຫຼຸດຜ່ອນການເອື່ອຍອີງຊັບພະຍາກອນທຳມະຊາດ ເພື່ອເຮັດໃຫ້ການເຕີບໂຕມີຄວາມຍືນຍົງ, ຫຼຸດຜ່ອນຜົນກະທົບຈາກພາຍນອກ ແລະ ເຮັດໃຫ້ສະມັດຕະພາບການຜະລິດສູງຂຶ້ນ ພ້ອມທັງ ຫັນໄປສູ່ການສົ່ງເສີມຂະແໜງການທີ່ຂັບເຄື່ອນການເຕີບໂຕເສດຖະກິດ, ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ, ສ້າງວຽກເຮັດງານທຳຫຼາຍຂຶ້ນ, ເຊື່ອມຕໍ່ກັບພາກສ່ວນອື່ນໆຂອງເສດຖະກິດ ແລະ ເຊື່ອມໂຍງເຂົ້າໃນຕ່ອງໂສ້ການຜະລິດ ແລະ ໂລຊິດສະຕິກການຂົນສົ່ງໃນລະດັບພາກພື້ນ ແລະ ສາກົນ. ເຖິງຢ່າງໃດກໍ່ຕາມ, ໃນໄລຍະຕໍ່ໜ້າຍັງຈະຕ້ອງໄດ້ນຳໃຊ້ຊັບພະຍາກອນທຳມະຊາດ ເພື່ອການພັດທະນາເສດຖະກິດ ແລະ ສັງຄົມ ແຕ່ຈະຕ້ອງໄດ້ນຳໃຊ້ດ້ວຍຄວາມຮັບຜິດຊອບສູງຕາມທິດສີຂຽວ ແລະ ຍືນຍົງ.

### 1.1. ຄາດໝາຍ ແລະ ຕົວຊີ້ບອກ:

- ສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວເພີ່ມຂຶ້ນສະເລ່ຍ ໃນລະດັບ 4% ຂຶ້ນໄປ ຕໍ່ປີ, ຄິດເປັນມູນຄ່າຕາມລາຄາໃນປີ ລວມ 5 ປີ 1.056.692 ຕື້ກີບ, GDP ຕໍ່ຫົວຄົນ ໃຫ້ໄດ້ 2.880 ໂດລາສະຫາລັດ, GNI ຕໍ່ຫົວຄົນ ໃຫ້ໄດ້ 2.280 ໂດລາສະຫາລັດ ໃນປີ 2025, ໃນນີ້:
    - ຂະແໜງກະສິກຳ ຂະຫຍາຍຕົວ ສະເລ່ຍໃນລະດັບ 2,5%
    - ຂະແໜງອຸດສາຫະກຳ ຂະຫຍາຍຕົວ ສະເລ່ຍໃນລະດັບ 4,1%
    - ຂະແໜງບໍລິການ ຂະຫຍາຍຕົວ ສະເລ່ຍໃນລະດັບ 6%.
    - ພາສີ-ອາກອນ ຂະຫຍາຍຕົວ ສະເລ່ຍໃນລະດັບ 5,8%.
- ສູ້ຊົນຫັນປ່ຽນໂຄງປະກອບເສດຖະກິດໄປຕາມທິດທີ່ມີຄຸນນະພາບ, ສີຂຽວ ແລະ ຍືນຍົງ, ຮອດປີ 2025 ຂະແໜງກະສິກຳ ກວມເອົາ 15,3%, ຂະແໜງອຸດສາຫະກຳ ກວມເອົາ 32,3% ແລະ ຂະແໜງບໍລິການ ກວມເອົາ 40,7% ແລະ ພາສີ-ອາກອນ ກວມເອົາ 11,7% ຂອງລວມຍອດຜະລິດຕະພັນພາຍໃນ (GDP).

- ຂະແໜງກະສິກຳ ແລະ ປ່າໄມ້:
  - ປູກຝັງ: ເພື່ອຄ້ຳປະກັນສະບຽງອາຫານ ແລະ ເປັນສິນຄ້າສົ່ງອອກຈຳນວນໜຶ່ງ ຕ້ອງສູ້ຊົນການຜະລິດເຂົ້າເປືອກລວມໃຫ້ໄດ້ຢູ່ໃນລະດັບ 3,5-4 ລ້ານໂຕນຕໍ່ປີ ທຽບໃສ່ປີ 2020 ເພີ່ມຂຶ້ນ 17.310 ໂຕນ ຫຼື ປະມານ 10,9%; ການປູກພືດເປັນສິນຄ້າສະເລ່ຍຕໍ່ປີ: ກາເຟ 175.500 ໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 17.310 ໂຕນ ຫຼື ປະມານ 10,9%; ສາລີອາຫານສັດ ໃຫ້ໄດ້ 636.900 ໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 118.774 ໂຕນ ຫຼື ປະມານ 22,9%, ມັນຕົ້ນ ໃຫ້ໄດ້ 3,6 ລ້ານໂຕນ, ອ້ອຍ ໃຫ້ໄດ້ 1,6 ລ້ານໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 400.000 ກວ່າໂຕນ ຫຼື ປະມານ 34,3%, ກວຍ ໃຫ້ໄດ້ 753.500 ໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 14.396 ໂຕນ ຫຼື ປະມານ 1,9%, ມັນດ້າງ 131.220 ໂຕນ, ຊາຕົ້ມນໍ້າ 14.000 ໂຕນ ແລະ ພືດປະເພດຖົ່ວ 74.750 ໂຕນ.
  - ລ້ຽງສັດ: ການຂະຫຍາຍຝູງສັດ ໃຫ້ໄດ້ຢູ່ໃນລະດັບ 3-4% ຕໍ່ປີ. ໃນນັ້ນ, ຄວາຍ ຂະຫຍາຍຕົວ 1% ຕໍ່ປີ, ງົວ 3% ຕໍ່ປີ, ໝູ 4%, ແກະ-ແບ້ 5% ແລະ ສັດປີກ 5% ຕໍ່ປີ. ສົ່ງອອກງົວ ໃຫ້ໄດ້ 200.000 ໂຕ ຮອດປີ 2025. ສະໜອງຊີ້ນ ແລະ ໄຂ່ ໃຫ້ໄດ້ 340.000 ໂຕນ ຫຼື ເພີ່ມຂຶ້ນ 7,8% ທຽບໃສ່ປີ 2020.
  - ການປະມົງ: ການລ້ຽງປາ ແລະ ສັດນໍ້າ ຂະຫຍາຍຕົວ 3-4% ຕໍ່ປີ. ສະໜອງປາ ແລະ ສັດນໍ້າ ໃຫ້ບັນລຸ 237.000 ໂຕນ ຫຼື ເພີ່ມຂຶ້ນ 8,4% ທຽບໃສ່ປີ 2020.
  - ປ່າໄມ້ ຂະຫຍາຍຕົວ 1,5% ຕໍ່ປີ.
  - ການສົ່ງອອກສິນຄ້າກະສິກຳ ສະເລ່ຍ 1.200 ລ້ານໂດລາສະຫະລັດ ຕໍ່ປີ ທຽບໃສ່ປີ 2020 ເພີ່ມຂຶ້ນ 400 ລ້ານໂດລາສະຫະລັດ.
- ຂະແໜງອຸດສາຫະກຳ:
  - ສູ້ຊົນມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ໄດ້ 83.079,8 ຕື້ກີບ ຫຼື ໃຫ້ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ.
  - ສູ້ຊົນໃຫ້ມູນຄ່າການສົ່ງອອກສິນຄ້າ ບັນລຸໄດ້ 38.043,5 ລ້ານໂດລາສະຫະລັດ ຫຼື ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ.
  - ມູນຄ່າການນຳເຂົ້າສິນຄ້າ 32.927,3 ລ້ານໂດລາສະຫະລັດ ຫຼື ຂະຫຍາຍຕົວສະເລ່ຍບໍ່ເກີນ 9% ຕໍ ປີ.
  - ສູ້ຊົນຜະລິດກະແສໄຟຟ້າ ໃຫ້ໄດ້ 276.096 ລ້ານ kWh, ເພີ່ມຂຶ້ນສະເລ່ຍ 15,8% ຕໍ່ປີ (ເພີ່ມຂຶ້ນ 70% ທຽບໃສ່ແຜນ 2016-2020), ມູນຄ່າການຜະລິດ 140.879 ຕື້ກີບ (ເພີ່ມຂຶ້ນ 79% ທຽບໃສ່ແຜນ 2016-2020).
  - ຄາດຄະເນຄວາມຕ້ອງການພະລັງງານໄຟຟ້າພາຍໃນປະເທດ ໄລຍະ 2021-2025 ສະເລ່ຍເພີ່ມຂຶ້ນ 8,1%-10,7%/ປີ, ໝາຍຄວາມວ່າຮອດ 2025 ຄວາມຕ້ອງການກຳລັງໄຟຟ້າພາຍໃນປະເທດ ຄາດຄະເນ ໃນກໍລະນີ ຕໍ່າສຸດປະມານ 2.132 MW ແລະ ຄາດຄະເນໃນກໍລະນີສູງສຸດຈະເພີ່ມຂຶ້ນເປັນປະມານ 2.880 MW ແລະ ສົ່ງອອກພະລັງງານໄຟຟ້າ ໃຫ້ໄດ້ປະມານ 5.000 MW.
  - ມູນຄ່າການຜະລິດແຮ່ທາດ (ບໍ່ທັນປຸງແຕ່ງ) ໃຫ້ໄດ້ 7.832,10 ລ້ານໂດລາສະຫະລັດ (ເພີ່ມຂຶ້ນ 4% ທຽບໃສ່ແຜນ 2016-2020) ແລະ ມູນຄ່າການຈຳໜ່າຍແຮ່ທາດ ໃຫ້ໄດ້ 8.336,40 ລ້ານໂດລາສະຫະລັດ. ໃນນີ້, ຈຳໜ່າຍພາຍໃນ 1.974 ລ້ານໂດລາສະຫະລັດ ແລະ ສົ່ງອອກຕ່າງປະເທດ 6.362,40 ລ້ານໂດລາສະຫະລັດ.

- ສຳຫຼວດສ້າງຂໍ້ມູນພື້ນຖານທໍລະນີສາດ ແລະ ແຮ່ທາດ ມາດຕາສ່ວນ 1/200.000 ໃນເຂດທີ່ບໍ່ໄດ້ປະຕິບັດ ຈຳນວນ 74.696 ກິໂລຕາແມັດ (ເທົ່າກັບ 31,5% ຂອງເນື້ອທີ່ທົ່ວປະເທດ).

- ຂະແໜງການບໍລິການ:
  - ສູ້ຊົນເຮັດໃຫ້ມູນຄ່າຈໍລະຈອນສິນຄ້າ ບັນລຸໄດ້ 424.227,5 ຕື້ກີບ ຫຼື ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ.
  - ປະລິມານການຂົນສົ່ງ ຜູ້ໂດຍສານ ໃນຕາໜ່າງການເຊື່ອມໂຍງ-ເຊື່ອມຈອດກັບບັນດາປະເທດໃນພາກພື້ນໃນທຸກຮູບແບບການຂົນສົ່ງ: ທາງບົກ ຂະຫຍາຍຕົວ 7% ຕໍ່ປີ, ທາງນໍ້າ ຂະຫຍາຍຕົວ 5%, ທາງອາກາດ ຂະຫຍາຍຕົວ 12% ແລະ ທາງລົດໄຟ 10%.
  - ປະລິມານການຂົນສົ່ງ ສິນຄ້າ ໃນຕາໜ່າງການເຊື່ອມໂຍງ-ເຊື່ອມຈອດກັບບັນດາປະເທດໃນພາກພື້ນໃນທຸກຮູບແບບການຂົນສົ່ງ: ທາງບົກ ຂະຫຍາຍຕົວ 7% ຕໍ່ປີ, ທາງນໍ້າ ຂະຫຍາຍຕົວ 5%, ທາງອາກາດ ຂະຫຍາຍຕົວ 12%, ທາງລົດໄຟ 7%.
  - ສູ້ຊົນດຶງດູດນັກທ່ອງທ່ຽວເຂົ້າມາລາວໃຫ້ໄດ້ປະມານ 15 ລ້ານເທື່ອຄົນ, ສ້າງລາຍຮັບ ໃຫ້ໄດ້ 3.813 ລ້ານໂດລາສະຫະລັດ (ຕົວເລກສະສົມໃນໄລຍະ 5 ປີ), ໄລຍະການພັກເຊົານັກທ່ອງທ່ຽວສະເລ່ຍ 7 ວັນຕໍ່ຄົນ (ໃນກໍລະນີມີວັກຊິນປ້ອງກັນໂຄວິດ-19 ແລະ ໃນເງື່ອນໄຂທີ່ສາມາດເປີດປະເທດປົກກະຕິ).
  - ສຳຫຼວດ, ຈັດສັນກຳນົດຂອບເຂດ, ປັກຫຼັກໝາຍ ແລະ ອອກໃບຢັ້ງຢືນຂອບເຂດແຫຼ່ງທ່ອງທ່ຽວໃຫ້ໄດ້ 30 ແຫ່ງ.

## 1.2. ວຽກງານຈຸດສຸມ:

- ຂະແໜງກະສິກຳ: ເປັນຂະແໜງທີ່ເປັນທ່າແຮງບົ່ມຊ້ອນສາມາດຂຸດຄົ້ນໄດ້ຕື່ມ ເພື່ອນຳໃຊ້ກາລະໂອກາດສິດທິພິເສດທາງການຄ້າທີ່ ສປປ ລາວ ໄດ້ຮັບໃຫ້ເກີດປະໂຫຍດສູງສຸດ, ເປັນການສ້າງລາຍຮັບ ແລະ ສ້າງວຽກເຮັດງານທຳໃຫ້ກັບປະຊາຊົນຫຼາຍຂຶ້ນ. ຕ້ອງສຸມໃສ່ວຽກງານຈຸດສຸມຄື: (1) ການຜະລິດຂະແໜງກະສິກຳຕ້ອງຕິດພັນສະໜິດແໜ້ນກັບຕ່ອງໂສ້ການຜະລິດຂອງຂະແໜງອຸດສາຫະກຳປຸງແຕ່ງເພື່ອຮັບໃຊ້ພາຍໃນ ແລະ ຄວາມຕ້ອງການຂອງຕ່າງປະເທດ; (2) ສຸມໃສ່ຜະລິດພືດ-ສັດທີ່ມີຕະຫຼາດຮອງຮັບ ແລະມີຄວາມຕ້ອງການຂອງຕະຫຼາດໃໝ່, (3) ຫັນປ່ຽນການຜະລິດກະສິກຳຊະນິດດຽວ ໄປສູ່ການຜະລິດກະສິກຳແບບຫຼາຍຊະນິດ (ປະສົມປະສານ), ໄປປູກພືດທີ່ໃຫ້ຜົນຕອບແທນສູງ; (4) ຊຸກຍູ້ການຜະລິດກະສິກຳທີ່ສະອາດ (GAP) ແລະ ກະສິກຳປອດສານພິດ ເພື່ອຊົມໃຊ້ພາຍໃນ ແລະ ດຶງດູດການທ່ອງທ່ຽວ; (5) ຍົກສູງປະສິດທິພາບການຜະລິດຂະແໜງກະສິກຳດ້ວຍການນຳໃຊ້ເຄື່ອງມືທີ່ທັນສະໄໝ, ນຳໃຊ້ເຕັກນິກ-ວິທະຍາສາດ-ນະວັດຕະກຳໃໝ່ ແລະ ແນວພັນໃໝ່, ຫັນການຜະລິດກະສິກຳແບບດັ້ງເດີມກະແຈກກະຈາຍໄປສູ່ກຸ່ມການຜະລິດ ຫຼື ການຜະລິດແບບສະຫະກອນແບບໃໝ່ທີ່ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ (Smart Farming); (6) ສ້າງໂອກາດການເຂົ້າເຖິງສິນເຊື່ອ ແລະ ຕະຫຼາດ, (7) ໂຄງລ່າງພື້ນຖານກະສິກຳທີ່ມີຄວາມເຂັ້ມແຂງ ແລະ ທົນທານຕໍ່ໄພພິບັດທາງທຳມະຊາດ, (8) ກຳນົດເນື້ອທີ່ ແລະ ປະເພດການປູກຝັງ-ລ້ຽງສັດໃຫ້ຖືກຕ້ອງ ແລະ ເໝາະສົມຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ແລະ ຄວາມຕ້ອງການຕົວຈິງຂອງຕະຫຼາດ ແລະ (9) ກຳນົດມາດຕະຖານຄວາມປອດໄພທາງດ້ານອາຫານໃຫ້ສູງຂຶ້ນ.

● ການຜະລິດເຂົ້າ ແມ່ນສຸມໃສ່ເຂດການຜະລິດໃນ 7 ທົ່ງພຽງໃຫຍ່ ເຊັ່ນ: ເຂດທົ່ງພຽງວຽງຈັນ, ເຂດທົ່ງພຽງບໍລິຄຳໄຊ, ເຂດທົ່ງພຽງເຊບັ້ງໄຟ, ເຂດທົ່ງພຽງເຊບັ້ງຫຽງ, ເຂດທົ່ງພຽງເຊໂດນ, ເຂດທົ່ງພຽງຈຳປາສັກ ແລະ ເຂດທົ່ງພຽງອັດຕະປື. ສ່ວນການຜະລິດພືດສະບຽງອາຫານ ແລະ ພືດອຸດສາຫະກຳອື່ນໆ ແມ່ນອີງຕາມຈຸດພິເສດຂອງພື້ນທີ່ການຜະລິດແຕ່ລະແຂວງທີ່ມີທ່າແຮງ ເປັນຕົ້ນ: ປູກພືດຜັກ ເພື່ອສະໜອງໃຫ້ບັນດາຕົວເມືອງໃຫຍ່ ເຂດການຜະລິດທີ່ມີທ່າແຮງແມ່ນເຂດພູພຽງບໍລິເວນ (ຈຳປາສັກ, ສາລະວັນ ແລະ ເຊກອງ); ປູກສາລີຫວານ ເພື່ອບໍລິໂພກພາຍໃນ ແລະ

ປ້ອນໂຮງງານປຸງແຕ່ງກະສິກຳ ເຂດທີ່ມີທ່າແຮງແມ່ນແຂວງໄຊຍະບູລີ, ວຽງຈັນ, ບໍລິຄຳໄຊ, ປູກມັນຕົ້ນ ເພື່ອປ້ອນໂຮງງານຜະລິດແປ້ງມັນຕົ້ນ ແລະ ສົ່ງອອກເປັນມັນຕົ້ນແຫ້ງໄປປະເທດໄທ ແລະ ສສ ຫວຽດນາມ ເຂດທີ່ມີທ່າແຮງແມ່ນແຂວງໄຊຍະບູລີ, ສາລະວັນ, ຈຳປາສັກ, ສະຫວັນນະເຂດ, ບໍລິຄຳໄຊ, ປູກອ້ອຍ ສະໜອງໃຫ້ໂຮງງານຜະລິດນ້ຳຕານ ເຂດທີ່ມີທ່າແຮງແມ່ນແຂວງສະຫວັນນະເຂດ, ອັດຕະປື, ຜົ້ງສາລີ, ຫຼວງນ້ຳທາ, ປູກໝາກກ້ວຍ ເພື່ອສົ່ງອອກໄປ ສປ ຈີນ ສຸມໃສ່ແຂວງອຸດົມໄຊ, ບໍ່ແກ້ວ, ອັດຕະປື, ປູກໝາກໂມ ເພື່ອສົ່ງອອກໄປປະເທດອ້ອມຂ້າງ ສຸມໃສ່ແຂວງວຽງຈັນ, ສະຫວັນນະເຂດ ແລະ ຫຼວງນ້ຳທາ.

● ການລ້ຽງສັດ ແລະ ການປະມົງ: ສູ້ຊົນສະໜອງສະບຽງອາຫານປະເພດຊີ້ນ, ປາ ແລະ ໄຂ່ ໃຫ້ພຽງພໍກັບຄວາມຕ້ອງການ ແລະ ສ້າງລາຍຮັບໃຫ້ແກ່ປະຊາຊົນ ໂດຍສຸມໃສ່ການລ້ຽງສັດໃຫຍ່ (ງົວ) ເປັນສິນຄ້າສົ່ງອອກ ສປ ຈີນ ໃຫ້ໄດ້ 200.000 ໂຕ (ຕົວເລກສະສົມ 5 ປີ); ເນັ້ນໃສ່ການພັດທະນາແນວພັນຄວາຍພື້ນເມືອງ ແລະ ສົ່ງເສີມເຕັກນິກການລ້ຽງ ເພື່ອຍົກສູງປະສິດທິພາບການຜະລິດ; ສົ່ງເສີມການຫັນໄປສູ່ການລ້ຽງໝູແບບເປັນຟາມຫຼາຍຂຶ້ນ ພ້ອມທັງສົ່ງເສີມການຜະລິດອາຫານໝູ ໃຫ້ພຽງພໍ ແລະ ປັບປຸງຄຸນນະພາບຂອງອາຫານສັດໃຫ້ສູງຂຶ້ນ, ຮັບປະກັນການສັກຢາກັນພະຍາດ ແລະ ຂ້າພະຍາດແມ່ກາຝາກ ເພື່ອຫຼຸດຜ່ອນຄວາມເສຍຫາຍຈາກການເກີດພະຍາດລະບາດ; ສົ່ງເສີມການລ້ຽງສັດປີກພັນພື້ນເມືອງໃນເຂດຊົນນະບົດໃຫ້ເພີ່ມຂຶ້ນ ເພື່ອສະໜອງສະບຽງອາຫານກັບທີ່ ດ້ວຍມາດຕະການສົ່ງເສີມເຕັກນິກການລ້ຽງ ແລະ ປະຕິບັດຫຼັກການຜະລິດໃຫ້ມີຄວາມປອດໄພແກ່ຜູ້ບໍລິໂພກ; ສູ້ຊົນຜະລິດແນວພັນປາພື້ນເມືອງ ແລະ ສັດນ້ຳທຸກຊະນິດ ທີ່ເປັນທ່າແຮງເສດຖະກິດ ໃຫ້ກວມເອົາ 30% ຂອງລູກປາທັງໝົດ ແນ່ໃສ່ສົ່ງເສີມຂະຫຍາຍບ່ອນລ້ຽງ ແລະສູນ, ຖ່າຍທອດເຕັກນິກການລ້ຽງແບບປະສົມປະສານ ຄຽງຄູ່ກັບ ການຮັກສາແຫຼ່ງນ້ຳ ແລະ ການຊົມໃຊ້ຊັບພະຍາກອນສັດນ້ຳຢ່າງຍືນຍົງ.

● ການສົ່ງເສີມເຕັກນິກ ແລະ ຮູບແບບການຜະລິດກະສິກຳ: ຮອດປີ 2025 ໄດ້ກຳນົດພື້ນທີ່ກະສິກຳການຜະລິດແບບສະອາດ, ປອດໄພ ໄດ້ຮັບການຢັ້ງຢືນມາດຖານ ເຊັ່ນ: GAP, OA, SCV, GI ໃນແຕ່ລະເມືອງຢ່າງໜ້ອຍ 1-2 ບ່ອນ ຕໍ່ເມືອງ; ບັນດາພືດສະບຽງອາຫານ ແລະ ເປັນສິນຄ້າ ໃຫ້ມີການຈັດປະເພດ, ມີການຫຸ້ມຫໍ່ທີ່ໄດ້ມາດຕະຖານ, ສ້າງເປັນຜະລິດຕະພັນມູນຄ່າເພີ່ມ ແລະ ປຸງແຕ່ງເປັນຜະລິດຕະພັນຂັ້ນຕົ້ນ ໃຫ້ກວມ 50% ຂອງສິນຄ້າທີ່ຈໍລະຈອນຈຳໜ່າຍເຂົ້າສູ່ຕະຫຼາດ. ສົ່ງເສີມການນຳໃຊ້ກົນຈັກກະສິກຳເຂົ້າໃນຂະບວນການຜະລິດ ເປັນຕົ້ນ ການຄາດໄຖ, ການປັກດຳ ແລະການເກັບກ່ຽວຜົນຜະລິດ ເພື່ອຫຼຸດຜ່ອນຕົ້ນທຶນ, ປະຢັດແຮງງານ ແລະ ໃຫ້ສະມັດຕະພາບການຜະລິດສູງ; ສົ່ງເສີມການຜະລິດແນວພັນເຂົ້າ ແລະ ແນວພັນພືດ ທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ແຮສຳຮອງໄວ້ເພື່ອສະໜອງໃຫ້ແກ່ການຜະລິດລະດູຝົນ ແລະ ການຕ້ານແລ້ງ-ຕ້ານຖ້ວມ; ຍົກລະດັບໂຄງລ່າງພື້ນຖານດ້ານເຕັກນິກ ເປັນຕົ້ນ ກົນຈັກການຜະລິດກະສິກຳ, ໂຮງສີ, ໂຮງອົບ, ໂຮງຄັດເມັດ, ລານຕາກ, ຕະຫຼາດຂາຍຍົກ-ຂາຍຍ່ອຍ, ສາງເຢັນ, ໂຮງງານຜະລິດຝຸ່ນຊີວະພາບ, ໂຮງງານຜະລິດອາຫານສັດ, ໂຮງຂ້າສັດ...ໃຫ້ທັນສະໄໝ ແລະ ໄດ້ມາດຕະຖານສາກົນ; ພັດທະນາສູນສົ່ງເສີມ ແລະ ສະຖານີບໍລິການເຕັກນິກກະສິກຳ ໃຫ້ມີປະສິດທິພາບ ສຸມໃສ່ເຜີຍແຜ່ຄວາມຮູ້ການປູກ-ການລ້ຽງ ແລະເຝິກອົບຮົມໃຫ້ແກ່ຊາວນາ, ຊາວສວນ, ຜູ້ປະກອບການດ້ານກະສິກຳ ໃຫ້ມີຄວາມເຂົ້າໃຈ ແລະ ສ້າງໜ່ວຍບໍລິການດ້ານເຕັກນິກໃຫ້ແກ່ຊາວກະສິກອນ.

- <u>ຂະແໜງອຸດສາຫະກຳ:</u> ຕ້ອງສ້າງໃຫ້ໄດ້ການຫັນປ່ຽນຈາກການເອື່ອຍອີງໃສ່ຂະແໜງການຊັບພະຍາກອນທຳມະຊາດ ໄປສູ່ຂະແໜງການຜະລິດອຸດສາຫະກຳເບົາ ເພື່ອສ້າງຄວາມຫຼາກຫຼາຍ ແລະ ປ່ຽນແປງໂຄງປະກອບເສດຖະກິດ, ສົ່ງເສີມອຸດສາຫະກຳທີ່ສ້າງວຽກເຮັດງານທຳ, ຫຼຸດຜ່ອນການນຳເຂົ້າສິນຄ້າ; ຄ່ຽງຄູ່ກັບ ການສືບຕໍ່ຂະແໜງອຸດສາຫະກຳຈຳນວນໜຶ່ງທີ່ມີຄວາມສຳຄັນໃນການຂັບເຄື່ອນການເຕີບໂຕເສດຖະກິດ ແລະ ສ້າງລາຍຮັບແຫ່ງຊາດ ຕ້ອງສຸມໃສ່:

● ອຸດສາຫະກຳປຸ່ງແຕ່ງທີ່ມີໜໍ່ແໜງ ແລະ ເປັນຕ່ອງໂສ້ກັບເຄືອຄ່າຍການຜະລິດຂອງພາກພື້ນ ແລະ ສາກົນໃຫ້ຂະຫຍາຍຕົວເພີ່ມຂຶ້ນຢ່າງຕໍ່ເນື່ອງ ເປັນຕົ້ນ: ອຸດສາຫະກຳທີ່ມີທ່າແຮງໃນປັດຈຸບັນ ເຊັ່ນ: ອຸດສາຫະກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ, ອຸດສາຫະກຳແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ, ອຸດສາຫະກຳວັດສະດຸກໍ່ສ້າງ, ອຸດສາຫະກຳປຸງແຕ່ງ

ຜະລິດຕະພັນຈາກກະສິກຳ-ປ່າໄມ້, ສຳລັບອຸດສາຫະກຳທີ່ມີທ່າແຮງໃໝ່ ເຊັ່ນ: ອຸດສາຫະກຳປຸງແຕ່ງແຮ່ທາດໂລຫະ, ອະໂລຫະ ແລະ ອຸດສາຫະກຳເຄມີ, ອຸດສາຫະກຳເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂທຣນິກ, ອຸດສາຫະກຳພາຫະນະ ແລະ ເຄື່ອງຮັບໃຊ້ກະສິກຳ, ອຸດສາຫະກຳສິ່ງພິມ ແລະ ເຄື່ອງຫຸ້ມຫໍ່;

- ອຸດສາຫະກຳການຜະລິດສິນຄ້າ ແລະ ການບໍລິການເພື່ອຫຼຸດຜ່ອນການນຳເຂົ້າ ມີໂອກາດຂະຫຍາຍຕົວສູງ;

- ສົ່ງເສີມການຜະລິດສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ, ຜະລິດຕະພັນຫັດຖະກຳທີ່ເປັນມູນເຊື້ອ ແລະ ເອກະລັກດ້ານພູມປັນຍາ ທີ່ຕິດພັນການທ່ອງທ່ຽວ ເປັນຕົ້ນ: ຜ້າໄໝ, ແກະສະຫຼັກໄມ້, ເຄື່ອງປະດັບເອຢ້ອງຂອງທີ່ລະນຶກ, ຈັກສານ, ເຄື່ອງປັ້ນດິນເຜົາ, ອາຫານພື້ນເມືອງ, ຕໍ່າຜ້າພື້ນເມືອງ;

- ສົ່ງເສີມການລົງທຶນໃນເຂດເສດຖະກິດພິເສດ, ເຂດ ແລະ ນິຄົມອຸດສາຫະກຳ ເພື່ອສ້າງໃຫ້ເປັນຖານການຜະລິດສິນຄ້າເພື່ອສົ່ງອອກ ໂດຍສະເພາະຂະແໜງທີ່ເປັນຕ່ອງໂສ້ການຜະລິດທີ່ຕິດພັນກັບຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ເຄືອຂ່າຍການຜະລິດສາກົນ ແລະ ຜູ້ຊື້ໂດຍກົງ; ພ້ອມທັງຮັບປະກັນອ່າກາມຍົກເວັ້ນອາກອນຕ່າງໆ ຈະຕ້ອງອີງໃສ່ທິດທາງການຂະຫຍາຍຖານລາຍຮັບອາກອນ ແລະ ປົກປ້ອງສິດຂອງຜູ້ອອກແຮງງານ.

- ການຫັນເປັນຕົວເມືອງທັນສະໄໝ (Smart City), ສຶກສາ ແລະ ກໍ່ສ້າງທ່າເຮືອບົກ ແລະ ສາງພັກ, ຄ່ຽນຖ່າຍສິນຄ້າ ຕາມແລວທາງລົດໄຟລາວ-ຈີນ ນັບທັງ ຕົວເມືອງທັນສະໄໝຢູ່ຫຼວງນ້ຳທາ, ຕົວເມືອງທັນສະໄໝຢູ່ອຸດົມໄຊ, ຕົວເມືອງທັນສະໄໝຢູ່ຫຼວງພະບາງ ແລະ ຕົວເມືອງທັນສະໄໝຢູ່ແຂວງວຽງຈັນ;

- ສົ່ງເສີມຂະແໜງພະລັງງານ ແລະ ບໍ່ແຮ່ ເປັນຕົ້ນ: ໃຫ້ເລີ່ມກໍ່ສ້າງເຂື່ອນນ້ຳຂອງຫຼວງພະບາງ, ພະລັງງານແສງຕາເວັນ, ພະລັງງານຈາກສິ່ງເສດເຫຼືອ ແລະ ຍົກສູງປະສິດທິຜົນການປຸງແຕ່ງແຮ່ທາດກ່ອນການສົ່ງອອກ ໂດຍຮັບປະກັນຕະຫຼາດຮອງຮັບ ໂດຍການສົ່ງເສີມໃຫ້ມີການສ້າງຕັ້ງໂຮງງານປຸງແຕ່ງ ຫຼື ຫຼໍ່ຫຼອມແຮ່ທາດ ເພື່ອຜະລິດເປັນຜະລິດຕະພັນຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ.

- ສຸມໃສ່ກໍ່ສ້າງໂຄງລ່າງເຊື່ອມຈອດພາຍໃນ, ກັບພາກພື້ນ ແລະ ສາກົນ ແລະ ໂຄງລ່າງທີ່ຈຳເປັນເພື່ອພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເປັນຕົ້ນ ທາງດ່ວນຊ່ວງວັງວຽງ-ຫຼວງພະບາງ, ທາງດ່ວນຊ່ວງຫຼວງພະບາງຫາຫຼວງນ້ຳທາ.

– <u>ຂະແໜງການບໍລິການ</u>: ເປັນຂະແໜງກວມອັດສ່ວນຫຼາຍກວ່າໝູ່ໃນໂຄງປະກອບເສດຖະກິດ ແລະ ການສ້າງວຽກເຮັດງານທຳ. ສະນັ້ນ, ຕ້ອງໄດ້ນຳໃຊ້ກາລະໂອກາດທີ່ເກີດຂຶ້ນໃໝ່ ໂດຍສະເພາະ ເສັ້ນທາງລົດໄຟລາວ-ຈີນ (ຊ່ວງບໍ່ເຕັນ-ນະຄອນຫຼວງວຽງຈັນ), ທາງດ່ວນແຕ່ນະຄອນຫຼວງວຽງຈັນ-ວັງວຽງ ໃຫ້ມີປະສິດທິຜົນສູງ ເພື່ອນຳໃຊ້ທ່າແຮງດ້ານການທ່ອງທ່ຽວ, ການຂົນສົ່ງສິນຄ້າ ແລະ ໂດຍສານ ໃຫ້ມີການຂະຫຍາຍຕົວສູງ ຕ້ອງສຸມໃສ່:

- ຂະແໜງທ່ອງທ່ຽວ: ພັດທະນາ ແລະ ປັບປຸງໂຄງລ່າງພື້ນຖານ, ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ພ້ອມທັງ ຍົກລະດັບການບໍລິການການຂອງສະຖານທີ່ພັກແຮມ, ຮ້ານອາຫານ ແລະ ບໍລິສັດທ່ອງທ່ຽວໃຫ້ມີຄຸນນະພາບສູງ ແລະ ທັນສະໄໝ; ປັບປຸງ ແລະ ພັດທະນາແຫຼ່ງທ່ອງທ່ຽວ ໂດຍສະເພາະສຸມໃສ່ພັດທະນາການທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ກະສິກຳ ຕິດພັນກັບການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ, ສ້າງຜະລິດຕະພັນຮັບໃຊ້ການທ່ອງທ່ຽວໃຫ້ມີຄວາມຫຼາກຫຼາຍ, ເພີ່ມການນຳໃຊ້ຜະລິດຕະພັນທ້ອງຖິ່ນ, ການນຳໃຊ້ວັດຖຸດິບພາຍໃນ, ຜັກປອດສານພິດໃຫ້ຫຼາຍຂຶ້ນ ເພື່ອຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດ. ສ້າງເງື່ອນໄຂອຳນວຍຄວາມສະດວກ ໂດຍນຳໃຊ້ລະບົບເຕັກໂນໂລຊີ ເພື່ອໂຄສະນາດຶງດູດນັກທ່ອງທ່ຽວກຸ່ມເປົ້າໝາຍ ແລະ ເຊື່ອມໂຍງລາຍການທ່ອງທ່ຽວກັບພາກພື້ນ-ສາກົນ, ຈັດຕັ້ງປະຕິບັດແຜນຟື້ນຟູການທ່ອງທ່ຽວ ຂອງ ສປປ ລາວ ໄລຍະ 2021-2025 ໂດຍສະເພາະການສົ່ງເສີມການທ່ອງທ່ຽວພາຍໃນ "ລາວທ່ຽວລາວ" ເພື່ອຊ່ວຍກະຕຸ້ນເສດຖະກິດພາຍໃນປະເທດ ໂດຍມີນະໂຍບາຍສົ່ງເສີມ ແລະ ສະໜັບສະໜູນການທ່ອງທ່ຽວພາຍໃນໃຫ້ຫຼາຍຂຶ້ນ ເປັນຕົ້ນ: ການສ້າງເງື່ອນໄຂໃນການຈອງການບໍລິການທີ່ມີຫຼາຍທາງເລືອກ, ລາຍການທ່ອງທ່ຽວມີສ່ວນຫຼຸດລາຄາຕາມກົນໄກການຕະຫຼາດ, ການຫຼຸດລາຄາຄ່າໂດຍສານ, ຄົ້ນຄວ້ານະໂຍບາຍເຮັດວຽກ 4-4,5 ວັນ/ອາທິດ ຫຼື ທ່ຽວຍາວໃນທ້າຍອາທິດ (Long weekend) ເພື່ອສົ່ງເສີມໃຫ້ນັກທ່ອງທ່ຽວພາຍໃນ ໄດ້ທ່ອງທ່ຽວ

ຫຼື ເດີນທາງພາຍໃນໄດ້ຫຼາຍອັນ ແລະ ທັງເປັນການກະຈາຍລາຍຮັບໃຫ້ກວ້າງຂວາງຂຶ້ນ (ຄືກັບຫຼາຍໆປະເທດກຳລັງຈັດຕັ້ງປະຕິບັດ ເພື່ອສ້າງເງື່ອນໄຂໃຫ້ນັກທ່ອງທ່ຽວມີເວລາທ່ອງທ່ຽວໃຊ້ຈ່າຍຫຼາຍຂຶ້ນ) ໄປຄຽງຄູ່ກັບການຄົ້ນຄວ້າໃນການກະກຽມຄວາມພ້ອມ ເພື່ອຕ້ອນຮັບນັກທ່ອງທ່ຽວສາກົນເປັນກຸ່ມ, ການຮ່ວມມືການທ່ອງທ່ຽວກັບປະເທດໃກ້ຄຽງ ແລະ ປະເທດທີ່ມີຄວາມສ່ຽງບໍ່ສູງຕໍ່ການແຜ່ເຊື້ອພະຍາດ ໂຄວິດ-19 (travel bubbles) ກັບບັນດາປະເທດເພື່ອນບ້ານ. ພາຍຫຼັງພະຍາດໂຄວິດ-19, ຂະແໜງການທ່ອງທ່ຽວ ຕ້ອງໄດ້ສົ່ງເສີມ ແລະ ເພີ່ມທະວີການຜະລິດ ແລະ ການຊົມໃຊ້ພາຍໃນໃຫ້ນັບມື້ນັບຫຼາຍຂຶ້ນ ຄຽງຄູ່ກັບການສ້າງຄວາມປອດໄພ, ຄວາມໝັ້ນໃຈໃຫ້ຜູ້ບໍລິໂພກ ແລະ ນັກເດີນທາງ ແມ່ນເປັນສິ່ງສຳຄັນຍ້ອນການລະບາດໃນຄັ້ງນີ້ໄດ້ປ່ຽນແປງແບບແຜນການດຳລົງຊີວິດ ເປັນຕົ້ນ ຄວາມກັງວົນໃນການທ່ອງທ່ຽວ, ການເດີນທາງທີ່ຕ້ອງເອົາໃຈໃສ່ປະຕິບັດມາດຕະການສຸຂະອະນາໄມ, ການເຮັດວຽກ ແລະ ຮ່ຳຮຽນຢູ່ບ້ານ. ສະນັ້ນ, ການວາງແຜນພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຕ້ອງຄຳນຶງເຖິງ "ຄວາມປົກກະຕິແບບໃໝ່ (new normal)" ເພື່ອເຮັດໃຫ້ນັກເດີນທາງ ແລະ ນັກທ່ອງທ່ຽວມີຄວາມໝັ້ນໃຈໃນມາດຕະຖານ ແລະ ຄວາມປອດໄພຂອງສະຖານທີ່ພັກ, ການຂົນສົ່ງໂດຍສານ, ການບໍລິການອາຫານ, ການທ່ອງທ່ຽວສີຂຽວ ຈົນໄປຮອດການສະໜອງຜະລິດຕະພັນກະສິກຳ ໂດຍສົ່ງເສີມການນຳໃຊ້ວັດຖຸດິບທ້ອງຖິ່ນ, ການປະກັນໄພໃຫ້ມີຄວາມໜ້າເຊື່ອຖື, ໄດ້ມາດຕະຖານ ແລະ ອື່ນໆ. ທ່າອ່ຽງ ແລະ ການປ່ຽນແປງພຶດຕິກຳຂອງນັກທ່ອງທ່ຽວ ໃນຕໍ່ໜ້າ ແມ່ນຈະມີຄວາມສົນໃຈຕໍ່ກິດຈະກຳການທ່ອງທ່ຽວໃນເຂດຊົນນະບົດ ແລະ ທຳມະຊາດຫຼາຍຂຶ້ນ.

- ສົ່ງເສີມການບໍລິການຂາຍຍົກ-ຂາຍຍ່ອຍ ແລະ ສ້ອມແປງທີ່ຕິດພັນກັບການສົ່ງເສີມການຜະລິດພາຍໃນ; ທົບທວນຄືນບັນດານິຕິກຳ, ລະບຽບການຕ່າງໆກ່ຽວກັບການພັດທະນາ ແລະ ສົ່ງເສີມການຄ້າເອເລັກໂທຣນິກ (e-Commerce) ພ້ອມທັງປັບປຸງການປະສານງານລະຫວ່າງພາກສ່ວນກ່ຽວຂ້ອງ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຄ້າເອເລັກໂທຣນິກ.
- ຍົກລະດັບວຽກງານໂທລະຄົມມະນາຄົມ, ການຂົນສົ່ງໂລຊິດສະຕິກທີ່ຄົບວົງຈອນ ແລະ ໄປສະນີ ໃຫ້ມີຄວາມວ່ອງໄວ ແລະ ທັນສະໄໝ ເພື່ອຊຸກຍູ້ການດຳເນີນທຸລະກຳທາງການຄ້າ, ການຊຳລະສະສາງ ແລະ ອື່ນໆ ເຄື່ອນໄຫວຢ່າງມີປະສິດທິພາບ.
- ການບໍລິການໂລຊິດສະຕິກ (Logistic): ສືບຕໍ່ຄຸ້ມຄອງທ່າບົກທີ່ໄດ້ພັດທະນາແລ້ວ ຄື: ທ່າບົກສະຫວັນນະເຂດ ແລະ ທ່າບົກທ່ານາແລ້ງ; ຊຸກຍູ້ຕິດຕາມ ແລະ ຄຸ້ມຄອງການກໍ່ສ້າງບັນດາທ່າບົກທີ່ກຳລັງດຳເນີນການພັດທະນາ ທ່າບົກທ່າແຂກ ແລະ ທ່າບົກຈຳປາສັກ. ນອກນັ້ນ, ກໍ່ພັດທະນາທ່າບົກອື່ນໆ ທີ່ມີທ່າແຮງ ແລະ ເປັນຈຸດໃຈກາງເຊື່ອມຕໍ່ລະຫວ່າງບັນດາປະເທດອາຊຽນ ແລະ ພາກພື້ນ ທີ່ມີຄວາມເໝາະສົມໃນການສ້າງເປັນຈຸດຢຸດພັກ ແລະ ກະຈາຍສິນຄ້າ, ການຂົນສົ່ງຜ່ານແດນ ເປັນຕົ້ນ ທ່າບົກນາເຕີຍ (ຫຼວງນ້ຳທາ), ທ່າບົກຫຼັກຊາວ (ບໍລິຄຳໄຊ), ທ່າບົກຫ້ວຍຊາຍ (ບໍ່ແກ້ວ), ທ່າບົກຫຼວງພະບາງ (ຫຼວງພະບາງ) ແລະ ທ່າບົກເມືອງໄຊ (ອຸດົມໄຊ).

## 2. ແຜນວຽກຈຸດສຸມທີ 2: ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ

ໃນ 5 ປີ ຕໍ່ໜ້າ ການຄຸ້ມຄອງເສດຖະກິດມະຫາພາກ ຕ້ອງສຸມໃສ່ການປະຕິຮູບການຄຸ້ມຄອງການເງິນພາກລັດຢ່າງເປັນລະບົບ ແລະ ຕໍ່ເນື່ອງ ແນ່ໃສ່: (1) ຂະຫຍາຍຖານລາຍຮັບອາກອນໃຫ້ກວ້າງອອກ ເພື່ອເພີ່ມການເກັບລາຍຮັບໃຫ້ຫຼາຍຂຶ້ນ, (2) ຄຸ້ມຄອງລາຍຈ່າຍພາກລັດໃຫ້ມີປະສິດທິພາບ ແລະ ຮັດກຸມກວ່າເກົ່າ, (3) ຄຸ້ມຄອງໜີ້ສິນພາງ ແລະ ໜີ້ສິນສາທາລະນະ ໃຫ້ຢູ່ໃນລະດັບທີ່ສາມາດຊຳລະສະສາງໄດ້ ແລະ (4) ຮັກສາສະຖຽນລະພາບຂອງອັດຕາແລກປ່ຽນ.

### 2.1. ຄາດໝາຍ ແລະ ຕົວຊີ້ບອກ:

- ສືບຕໍ່ຮັກສາສະຖຽນລະພາບດ້ານການເງິນ-ເງິນຕາ ໂດຍສົມທົບແໜ້ນນະໂຍບາຍການເງິນ ແລະ ນະໂຍບາຍເງິນຕາ.
- ສ້າງພື້ນຖານການເງິນແຫ່ງລັດໃຫ້ເຂັ້ມແຂງ, ໂປ່ງໃສ, ທັນສະໄໝ ແລະ ຍຸຕິທຳ:
    - ສູ້ຊົນປະຕິບັດລາຍຮັບງົບປະມານທັງໝົດໃຫ້ໄດ້ ບໍ່ໃຫ້ຫຼຸດ 179.500 ຕື້ກີບ ຫຼື ເທົ່າກັບ 17% ຂອງ GDP, ໃນນີ້ ລາຍຮັບພາຍໃນ ໃຫ້ໄດ້ 166.753 ຕື້ກີບ ຫຼື ເທົ່າກັບ 15,8% ຂອງ GDP.

- ດ້ານລາຍຈ່າຍ ສູ້ຊົນບໍ່ໃຫ້ເກີນ 190.000 ຕື້ກີບ ຫຼື ປະມານ 18,0% ຂອງ GDP, ໃນນີ້ ລາຍຈ່າຍການລົງທຶນ ປະມານ 59.500 ຕື້ກີບ ຫຼື ປະມານ 5,6% ຂອງ GDP.
- ຂາດດຸນງົບປະມານທັງໝົດ ສະເລ່ຍໃນ 5 ປີ 10.500 ຕື້ກີບ ເທົ່າກັບ 1% ຂອງ GDP, ສູ້ຊົນສູງສຸດບໍ່ໃຫ້ຂາດດຸນເກີນ 2% ຂອງ GDP.
- ປັບປຸງໂຄງສ້າງ ແລະ ບໍລິຫານໜີ້ສາທາລະນະ ໃຫ້ສາມາດຄວບຄຸມໄດ້.
- ເພີ່ມຄັງສະສົມແຫ່ງລັດ ແລະ ຄັງແຮສຳຮອງຊຳລະໜີ້ສິນ ຂຶ້ນເທື່ອລະກ້າວ ເພື່ອຮັບປະກັນການບໍລິຫານຄວາມສ່ຽງຈາກໄພພິບັດ ແລະ ວິກິດການອື່ນຕໍ່ເສດຖະກິດ ເທື່ອລະກ້າວ.

- ຮັບປະກັນສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ອັດຕາເງິນເຟີ້ ສະເລ່ຍ ບໍ່ເກີນ 6%, ອັດຕາແລກປ່ຽນມີຄວາມສະຫງົບປົກກະຕິ ເໜັງຕີງໃນກອບ ±5% ຕໍ່ປີ ທຽບໃສ່ເງິນໂດລາສະຫະລັດ, ສູ້ຊົນໃຫ້ຄັງສຳຮອງເງິນຕາຕ່າງປະເທດກຸ້ມການນຳເຂົ້າໄດ້ຢ່າງໜ້ອຍ 3 ເດືອນ ແລະ ຄວບຄຸມປະລິມານເງິນ M2 ຂະຫຍາຍຕົວສະເລ່ຍບໍ່ເກີນ 20% ຕໍ່ປີ.
- ຍອດເຫຼືອເງິນຝາກຂອງທະນາຄານທຸລະກິດໃຫ້ຢູ່ໃນລະດັບ 60% ຂອງ GDP; ຍອດເຫຼືອສິນເຊື່ອຂອງຂະແໜງທະນາຄານໃຫ້ຢູ່ໃນລະດັບ 49% ຂອງ GDP, ລະດົມທຶນຜ່ານຕະຫຼາດທຶນເພີ່ມຂຶ້ນ ກວມເອົາ 15-18% ຂອງ GDP.
- ຄວບຄຸມອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPL) ຂອງທົ່ວລະບົບທະນາຄານ ສະເລ່ຍຢູ່ໃນລະດັບບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ.

**2.2. ວຽກຈຸດສຸມ:**

- **ດ້ານການເງິນ:** ສືບຕໍ່ປະຕິຮູບຂະແໜງການເງິນຢ່າງຮອບດ້ານ ໃຫ້ມີຄວາມເຂັ້ມແຂງ ແລະ ມີການພັດທະນາຢ່າງຍືນຍົງ ໂດຍການຍົກສູງປະສິດທິພາບໃນການຄຸ້ມຄອງລາຍຮັບ ແລະ ປະຕິບັດລາຍຈ່າຍ; ສ້າງນິຕິກຳທີ່ກຳນົດກອບຄວາມໝັ້ນຄົງທາງດ້ານການເງິນ; ສ້າງລະບົບກົນໄກລະບຽບການ ແລະ ນຳໃຊ້ເຄື່ອງມືທັນສະໄໝເຂົ້າໃນການເກັບລາຍຮັບ ແລະ ປະຕິບັດລາຍຈ່າຍຜ່ານລະບົບທະນາຄານ; ເຂັ້ມງວດປະຕິບັດວິໄນການເງິນ ໂດຍບັງຄັບໃຊ້ກົດໝາຍຂອງຂະແໜງການເງິນຢ່າງເຂັ້ມແຂງໃນການປະຕິບັດເກັບລາຍຮັບ ແລະ ລາຍຈ່າຍຕາມກຳນົດໄວ້ໃນກົດໝາຍຢ່າງຄົບຖ້ວນ.

ເອົາໃຈໃສ່ຄຸ້ມຄອງໜີ້ສາທາລະນະຢ່າງມີປະສິດທິພາບ ດ້ວຍການຄົ້ນຄວ້າ ແລະ ອອກມາດຕະການທີ່ເໝາະສົມສອດຄ່ອງຕາມຍຸດທະສາດການຄຸ້ມຄອງໜີ້ສາທາລະນະ ກໍ່ຄືກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ, ຫຼຸດຜ່ອນຄວາມສ່ຽງງົບປະມານທີ່ມາຈາກໜີ້ສິນພາງ (contingent liabilities) ດ້ວຍການກຳນົດມາດຕະການທີ່ສອດຄ່ອງເພື່ອຮອງຮັບ ເຊັ່ນ: ຄ່າໃຊ້ຈ່າຍໃນການຟື້ນຟູພາຍຫຼັງເກີດໄພພິບັດ. ພ້ອມກັນນັ້ນ ຕ້ອງຮັບປະກັນຄວາມກົມກຽວ ແລະ ຄວາມສອດຄ່ອງລະຫວ່າງການວາງແຜນພັດທະນາ ແລະ ແຜນງົບປະມານຢ່າງເປັນລະບົບ ດ້ວຍການຮັດກຸມລາຍຈ່າຍ ແລະ ເພີ່ມລາຍຮັບ ເພື່ອຫຼຸດຜ່ອນຄວາມກົດດັນງົບປະມານ (fiscal space) ແນໃສ່ຈັດສັນທຶນໃຫ້ຂະແໜງສັງຄົມ ແລະ ການພັດທະນາໂຄງລ່າງໃຫ້ເພີ່ມຂຶ້ນ; ສຸມໃສ່ສ້າງຄວາມເຂັ້ມແຂງການຄຸ້ມຄອງການລົງທຶນລັດເພື່ອຫຼຸດຜ່ອນຄວາມສ່ຽງຕ່າງໆທີ່ອາດເກີດຂຶ້ນຍ້ອນການຈັດຕັ້ງປະຕິບັດງົບປະມານໃນໄລຍະຍາວ ດ້ວຍການສ້າງກົນໄກການປະສານງານ ລະຫວ່າງ ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ຢ່າງມີປະສິດທິພາບ, ເພີ່ມທະວີຄວາມມີປະສິດທິພາບໃນການສະເໜີ ແລະ ຕິດຕາມໂຄງການຕາມກຳນົດເວລາ ພ້ອມຮັບປະກັນການລົງທຶນທີ່ມີຄຸນນະພາບ ແລະ ຫຼີກລ້ຽງການສ້າງໜີ້ສິນພາງ.

ຍົກສູງປະສິດທິພາບລາຍຈ່າຍພາກລັດ ແລະ ການຫຼຸດຜ່ອນລາຍຈ່າຍໃຫ້ສອດຄ່ອງກັບຄວາມອາດສາມາດການເກັບລາຍຮັບ ດ້ວຍການຈັດຕັ້ງປະຕິບັດ ຍຸດທະສາດລາຍຮັບໄລຍະກາງ 2021-2025 ຈະສາມາດຊ່ວຍສ້າງສະພາບຄ່ອງໃຫ້ແກ່ການເງິນພາກລັດ. ການຍົກສູງປະສິດທິພາບໃນການເກັບລາຍຮັບຕາມລາຍໄດ້ (progressive revenue) ແມ່ນຈະສືບຕໍ່ເອົາໃຈໃສ່ການຫັນການຄຸ້ມຄອງໄປສູ່ລະບົບທັນສະໄໝ (TaxRIS), ການຊຳລະຜ່ານທະນາຄານ, ການເກັບ

ລາຍຮັບເຂົ້າງົບປະມານຜ່ານອິນເຕີເນັດ, ການຄຸ້ມຄອງຖານຂໍ້ມູນໃຫ້ຖືກຕ້ອງຊັດເຈນ, ໂດຍສະເພາະແມ່ນອາກອນມູນຄ່າເພີ່ມ, ອາກອນລາຍໄດ້ບຸກຄົນ, ອາກອນທີ່ດິນ, ການຍົກເວັ້ນພາສີ-ອາກອນຕ່າງໆ. ໃນໄລຍະກາງ ຕ້ອງຂະຫຍາຍຖານລາຍຮັບອາກອນທີ່ມາຈາກຜູ້ປະກອບການລາຍໃໝ່ ແລະ ທຸລະກິດທີ່ສາມາດເກັບອາກອນນຳໄດ້. ໃນໄລຍະຍາວລັດຖະບານຕ້ອງສຸມໃສ່ການຂະຫຍາຍຖານເກັບລາຍຮັບອາກອນ ດ້ວຍການຫັນຈາກເສດຖະກິດທີ່ເອື່ອຍອີງຂະແໜງຊັບພະຍາກອນທຳມະຊາດ ໄປສູ່ເສດຖະກິດທີ່ມີຄວາມຫຼາກຫຼາຍເທື່ອລະກ້າວ ແນໃສ່ປັບປຸງບັນຍາກາດການດຳເນີນທຸລະກິດ, ກຳນົດນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ-ກາງ ແລະ ຈຸນລະວິສາຫະກິດ ເປັນຕົ້ນ ກົນໄກການເຂົ້າເຖິງການເງິນທີ່ທັນສະໄໝ ແລະ ຫຼາກຫຼາຍ.

- **ດ້ານເງິນຕາ:** ຮັບປະກັນສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ ດ້ວຍການສືບຕໍ່ນຳໃຊ້ ແລະ ພັດທະນາເຄື່ອງມືນະໂຍບາຍເງິນຕາທາງອ້ອມໃຫ້ມີປະສິດທິຜົນຫຼາຍຂຶ້ນ; ນຳໃຊ້ນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ; ຄຸ້ມຄອງເງິນຕາຕ່າງປະເທດຢ່າງມີໄຫວພິບ ໄປຄຽງຄູ່ກັບການພັດທະນາລະບົບການຊຳລະແຫ່ງຊາດໃຫ້ມີຄວາມທັນສະໄໝ, ປອດໄພ ໃນມາດຕະຖານທຽບເທົ່າສາກົນ; ຍົກລະດັບການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໃຫ້ໄດ້ມາດຕະຖານສາກົນຫຼາຍຂຶ້ນ; ສ້າງນິຕິກຳກ່ຽວກັບການຄຸ້ມຄອງຄວາມປອດໄພດ້ານການເງິນ; ສືບຕໍ່ພັດທະນາບັນດາໂຄງລ່າງພື້ນຖານທີ່ຈຳເປັນໃຫ້ແກ່ການພັດ ທະນາລະບົບສະຖາບັນການເງິນ-ເງິນຕາ ໃຫ້ເປັນທັນສະໄໝ ເພື່ອຮອງຮັບການກ້າວໄປສູ່ເສດຖະກິດດິຈິຕອນ ເປັນຕົ້ນ ລະບົບການເກັບກຳ, ຕິດຕາມ, ກວດສອບຂໍ້ມູນທາງການເງິນ ທີ່ທັນສະພາບ ແລະ ຊັດເຈນຫຼາຍຂຶ້ນ, ສົ່ງເສີມອີງການຄຸ້ມຄອງຜູ້ບໍລິໂພກດ້ານການເງິນ, ບໍລິສັດປະເມີນຊັບສິນ, ລະບົບການຄຸ້ມຄອງການຊຳລະທາງເອເລັກໂທຣນິກໃຫ້ກວ້າງ ຂວາງ ປອດໄພ ແລະ ຮັດກຸມຍິ່ງຂຶ້ນ. ສົ່ງເສີມການມີສ່ວນຮ່ວມທາງດ້ານການເງິນຂອງທຸກພາກສ່ວນ ເພື່ອໃຫ້ບຸກຄົນ ແລະ ທຸລະກິດສາມາດເຂົ້າເຖິງຜະລິດຕະພັນ ແລະ ການບໍລິການ ດ້ານການກູ້ຢືມ ແລະ ຝາກເງິນໄດ້ຫຼາຍຂຶ້ນ.

- ການຄຸ້ມຄອງເສດຖະກິດມະຫາພາກ: ສ້າງກົນໄກການປະສານງານລະຫວ່າງຂະແໜງເສດຖະກິດມະຫາພາກໃຫ້ມີຄວາມເຂັ້ມແຂງເປັນເອກະພາບ ແລະ ກົມກຽວກັນຫຼາຍຂຶ້ນ. ສ້າງເຄື່ອງມືໃນການຕິດຕາມ ແລະ ວິໄຈເສດຖະກິດມະຫາພາກ ໃຫ້ເປັນລະບົບຄົບຊຸດ.

- ຮັບປະກັນການຈັດຕັ້ງປະຕິບັດນະໂຍບາຍການເງິນ ແລະ ນະໂຍບາຍເງິນຕາໃຫ້ມີຄວາມສອດຄ່ອງ ແລະ ກົມກຽວ ແນໃສ່ປະກອບສ່ວນຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ຢ່າງຕໍ່ເນື່ອງ ແລະ ຍືນຍົງ.

### 3. ແຜນວຽກຈຸດສຸມທີ 3: ຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນນະພາບ ແລະ ປະສິດທິຜົນສູງ.

ການລົງທຶນລວມ ໃນໄລຍະ 5 ປີຕໍ່ໜ້າ ຕ້ອງມີຈຸດສຸມ ແລະ ຄວາມສອດຄ່ອງກັບບັນດາເປົ້າໝາຍ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ຄື: (1) ລົງທຶນໃສ່ຂະແໜງການຜະລິດ ແລະ ການບໍລິການ ທີ່ສາມາດຂັບເຄື່ອນການເຕີບໂຕຂອງເສດຖະກິດຕາມທິດສີຂຽວ ແລະ ຍືນຍົງ, ການຜະລິດເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກໃຫ້ຫຼາຍຂຶ້ນ, ການສ້າງວຽກເຮັດງານທຳໃຫ້ຫຼາກຫຼາຍ ແລະ ເພີ່ມຂຶ້ນ. (2) ລົງທຶນໃສ່ພັດທະນາຊັບພະຍາກອນມະນຸດ ໂດຍສະເພາະ ປັບປຸງຄຸນນະພາບການສຶກສາ, ສາທາລະນະສຸກ ແລະ ພັດທະນາສີມືແຮງງານ ເພື່ອເປັນປັດໄຈຮອງຮັບເຕັກນິກ-ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່. (3) ລົງທຶນໃສ່ໃນການຄົ້ນຄວ້າ ແລະ ພັດທະນາ ເພື່ອຍົກສູງປະສິດທິຜົນຂອງການຜະລິດ-ການບໍລິການ, ສ້າງມູນຄ່າເພີ່ມ ແລະ ຄວາມຫຼາກຫຼາຍຂອງສິນຄ້າ, ສະໜອງອຸປະກອນການສຶກສາ, ອຸປະກອນການແພດ, ຍົກສະມັດຕະພາບການຜະລິດກະສິກຳ ເພື່ອກ້າວໄປສູ່ອຸດສາຫະກຳທີ່ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີທີ່ທັນສະໄໝ. (4) ລົງທຶນໃສ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕິດພັນກັບການຜະລິດເປັນສິນຄ້າ, ປັບປຸງ-ກໍ່ສ້າງໂຄງລ່າງຊົນນະບົດ ແລະ ໂຄງລ່າງເສດຖະກິດ. (5) ລົງທຶນໃສ່ການປັບປຸງການຄຸ້ມຄອງ-ບໍລິຫານລັດ ໃຫ້ມີ

ຄວາມທັນສະໄໝ, ໂປ່ງໃສ ແລະ ວ່ອງໄວຂຶ້ນ, ສ້າງເງື່ອນໄຂ ແລະ ປັດໄຈເພື່ອຮອງຮັບໃຫ້ແກ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ (6) ລົງທຶນໃສ່ໂຄງລ່າງພື້ນຖານລະດັບຊາດເພື່ອເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ.

ເພື່ອຮັບປະກັນການລົງທຶນໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ ຕ້ອງຮັບປະກັນປະສິດທິພາບຂອງການລົງທຶນຂອງລັດ (ລວມທັງ ODA) ໃຫ້ໄປຕາມບູລິມະສິດ ແລະ ຈຸດສຸມຂອງການລົງທຶນທີ່ໄດ້ກຳນົດໄວ້. ສ້າງນະໂຍບາຍໄລຍະຍາວທີ່ມີຄວາມກົມກຽວລະຫວ່າງແຜນການ ແລະ ແຜນງົບປະມານຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025). ພ້ອມກັນນັ້ນ, ກໍຕ້ອງສ້າງລະບົບການຕິດຕາມ ແລະ ຄຸ້ມຄອງການລົງທຶນຢ່າງມີປະສິດທິພາບ ໃນສະພາບທີ່ທຶນການຊ່ວຍເຫຼືອທາງການພັດທະນາ ມີທ່າອ່ຽງຫຼຸດລົງ. ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຄາດວ່າຈະບໍ່ມີຜົນກະທົບຫຼາຍຕໍ່ກັບການຊ່ວຍເຫຼືອຈາກບັນດາຄູ່ຮ່ວມພັດທະນາ ແຕ່ຕ້ອງໄດ້ມີການຕິດຕາມຢ່າງໃກ້ຊິດ ແລະ ປຶກສາຫາລືຮ່ວມກັບຄູ່ຮ່ວມພັດທະນາຢ່າງເປັນປົກກະຕິ.

### 3.1. ຄາດໝາຍ ແລະ ຕົວຊີ້ບອກ:

- ສູ້ຊົນລະດົມແຫຼ່ງທຶນເພື່ອການພັດທະນາໃນ 5 ປີ ໃຫ້ໄດ້ ປະມານ 204.599 ຕື້ກີບ, ເທົ່າກັບ 19,4% ຂອງ GDP ໃນນີ້:
  - + ການລົງທຶນຈາກງົບປະມານພາຍໃນ ໃຫ້ໄດ້ 22.950 ຕື້ກີບ ເທົ່າກັບ 11% ຂອງການລົງທຶນທັງໝົດ.
  - + ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໃຫ້ໄດ້ 37.344 ຕື້ກີບ ເທົ່າກັບ 18% ຂອງການລົງທຶນທັງໝົດ.
  - + ການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 100.000 ຕື້ກີບ ເທົ່າກັບ 49% ຂອງການລົງທຶນທັງໝົດ.
  - + ການລົງທຶນອື່ນໆ ໃຫ້ໄດ້ 44.305 ຕື້ກີບ ເທົ່າກັບປະມານ 22% ຂອງການລົງທຶນທັງໝົດ.

### 3.2. ວຽກຈຸດສຸມ:

(1). <u>ການລົງທຶນຂອງລັດ:</u> ບັນດາຂະແໜງການ ແລະ ທ້ອງຖິ່ນ ຕ້ອງຄົ້ນຄວ້າ ແລະ ສ້າງແຜນການລົງທຶນຂອງລັດ ໃນໄລຍະ 5 ປີ ຂອງຕົນ ໃຫ້ສອດຄ່ອງກັບຄວາມອາດສາມາດດ້ານງົບປະມານ ແລະ ສະໜັບສະໜູນໂດຍກົງກັບທິດທາງ, ເປົ້າໝາຍ, ຄາດໝາຍ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂອງຂະແໜງການ ແລະ ທ້ອງຖິ່ນ, ພ້ອມທັງຮັບປະກັນປະສິດທິຜົນສູງສຸດຂອງທຸກໂຄງການລົງທຶນ.

ການສ້າງແຜນການລົງທຶນຂອງລັດ 5 ປີ ໃຫ້ສຸມໃສ່ດັ່ງລຸ່ມນີ້:

**+** ໂຄງສ້າງການລົງທຶນຂອງລັດ: ໃຫ້ລົງທຶນໃສ່ໂຄງການໂຄງລ່າງພື້ນຖານທີ່ໄດ້ຈັດຕັ້ງປະຕິບັດຜ່ານມາໃນແຜນການ 5 ປີ ຄັ້ງທີ VIII (2016-2020) ໃຫ້ສຳເລັດ, ບູລະນະ ແລະ ສ້ອມແປງໂຄງລ່າງພື້ນຖານທີ່ມີຢູ່ ໃຫ້ສາມາດຕໍ່ຍອດເກີດປະໂຫຍດ, ສາມາດນຳໃຊ້ເຕັມສະມັດຕະພາບ, ການບໍລິການການເຂົ້າເຖິງຕະຫຼາດ, ເຂດການຜະລິດ ແລະ ການສັນຈອນໃຫ້ເປັນປົກກະຕິ; ສຳລັບໂຄງການໃໝ່ ແມ່ນໃຫ້ສຸມໃສ່ບັນດາໂຄງລ່າງພື້ນຖານໃນເຂດຊົນນະບົດ, ການພັດທະນາຊັບພະຍາກອນມະນຸດ, ການພັດທະນາການຄຸ້ມຄອງ ແລະ ບໍລິຫານລັດເປັນທັນສະໄໝ, ການຄົ້ນຄວ້າເຕັກນິກ-ວິທະຍາສາດ ແລະ ການສະໜອງອຸປະກອນຮັບໃຊ້ດ້ານວິຊາການ, ສ່ວນໂຄງການລະດັບຊາດ ເປັນຕົ້ນ ທາງດ່ວນ, ທາງລົດໄຟ, ສາຍສົ່ງໄຟຟ້າ ແມ່ນນຳໃຊ້ແຫຼ່ງທຶນອື່ນທີ່ບໍ່ແມ່ນງົບປະມານຂອງລັດ. ການລົງທຶນໃສ່ການພັດທະນາຊັບພະຍາກອນມະນຸດ, ການຄົ້ນຄວ້າ, ການສະໜອງອຸປະກອນຕ້ອງມີຄວາມສົມຄູ່ກັບການກໍ່ສ້າງພື້ນຖານໂຄງລ່າງ. ການລົງທຶນຂອງລັດ ຕ້ອງພິຈາລະນາຄວາມສ່ຽງດ້ານຕ່າງໆ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ.

**+** ຮັບປະກັນໃຫ້ແຜນງານ ແລະ ໂຄງການລົງທຶນຂອງລັດ ສ້າງຂຶ້ນບົນພື້ນຖານທິດທາງ, ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ເພື່ອຮັບປະກັນການບັນລຸເປົ້າ

ໝາຍຂອງແຜນດັ່ງກ່າວໂດຍຄຳນຶງເຖິງການເຊື່ອມໂຍງກັນລະຫວ່າງແຕ່ລະເປົ້າໝາຍ, ແຜນງານ ແລະ ໂຄງການລົງທຶນຂອງລັດຢ່າງຈະແຈ້ງ ແລະ ສິ່ງສຳຄັນແມ່ນຕ້ອງດຸ່ນດ່ຽງກັບຄວາມສາມາດຕົວຈິງໃນການສະໜອງທຶນຮອນ.

+ ເພື່ອເຮັດໃຫ້ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ໄດ້ຮັບການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ ແລະ ມີປະສິດທິຜົນຍິ່ງຂຶ້ນ ໃຫ້ຄັດເລືອກເອົາແຜນງານ ແລະ ໂຄງການຢ່າງມີຈຸດສຸມພາຍໃຕ້ຂອບຄາດຄະເນງົບປະມານທີ່ໄດ້ຈັດສັນ.

+ ໃຫ້ຂະແໜງການ ແລະ ທ້ອງຖິ່ນສົມທົບກັນໃຫ້ລະອຽດ ໃນການຄັດເລືອກເອົາແຜນງານ ແລະ ໂຄງການໂດຍແບ່ງຄວາມຮັບຜິດຊອບ ຫຼື ຕາມການແບ່ງຂັ້ນຄຸ້ມຄອງຢ່າງລະອຽດ ຕາມທິດ 3 ສ້າງ ແລະ ສາຍຕັ້ງ-ສາຍຂວາງ ຂອງຂະແໜງການໂດຍຕ້ອງລວມສູນດ້ານວິຊາການຕາມສາຍຕັ້ງຂອງຂະແໜງການຕົນຮັບຮູ້, ຮັບພິຈາລະນາ ແລະ ຮັບຜິດຊອບ ເພື່ອບໍ່ໃຫ້ມີການຂຶ້ນແຜນຊໍ້າຊ້ອນກັນ ແລະ ຮັບປະກັນໃຫ້ການຈັດຕັ້ງປະຕິບັດມີປະສິດທິຜົນດີຂຶ້ນກວ່າເກົ່າ.

+ ແຜນການລົງທຶນຂອງລັດ 5 ປີ ຈະສ້າງຂຶ້ນ ແລະ ຮັບໃຊ້ການສ້າງຂອບງົບປະມານການລົງທຶນຂອງລັດໄລຍະກາງ ສຳລັບ 3 ປີ ເພື່ອໃຫ້ຂະແໜງການ ແລະ ທ້ອງຖິ່ນສາມາດຮູ້ໄດ້ຄວາມສາມາດສະໜອງງົບປະມານປະຈຳປີຂອງໂຄງການ, ບັນດາຂະແໜງການ ແລະ ທ້ອງຖິ່ນເປັນເຈົ້າການ ຄັດເລືອກບັນດາແຜນງານ ແລະ ໂຄງການບູລິມະສິດທີ່ສະໜັບສະໜູນການບັນລຸເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຂອງຂະແໜງການ ແລະ ທ້ອງຖິ່ນຕົນຢ່າງມີປະສິດທິພາບ ແລະ ມີຈຸດສຸມ.

+ ຊຸກຍູ້ໃຫ້ຄູ່ຮ່ວມພັດທະນາ ສ້າງແຜນສະໜັບສະໜູນໃຫ້ສອດຄ່ອງກັບບຸລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ.

+ ສ້າງຍຸດທະສາດການນຳພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC) ແບບຍືນຍົງ ລວມທັງການວິເຄາະ ແລະ ການປຶກສາຫາລືຢ່າງຮອບຄອບ ກ່ຽວກັບຜົນກະທົບທີ່ອາດຈະເກີດຂຶ້ນ ຈາກການຫຼຸດລົງຂອງແຫຼ່ງທຶນໃນເງື່ອນໄຂຜ່ອນຜັນ. ຍຸດທະສາດດັ່ງກ່າວ ຈະກຳນົດມາດຕະການເພື່ອຮັບປະກັນການແກ້ໄຂຄວາມສ່ຽງທີ່ເກີດຈາກການຫຼຸດພົ້ນອອກຈາກ LDC ຢ່າງເໝາະສົມ.

(2). <u>ການລົງທຶນຂອງພາກເອກະຊົນ:</u>

ການລົງທຶນໂດຍກົງຈາກຕ່າງປະເທດ ແມ່ນມີຄວາມສຳຄັນ ແລະ ຈະສືບຕໍ່ເປັນແຫຼ່ງທຶນຕົ້ນຕໍ ໃນການພັດທະນາ ໂດຍສະເພາະການສົ່ງເສີມການລົງທຶນທີ່ມີຄຸນນະພາບໃນເຂດເສດຖະກິດພິເສດ ເພື່ອສ້າງວຽກເຮັດງານທຳ, ການຊົມໃຊ້ພະລັງງານສະອາດ, ຈັດຕັ້ງປະຕິບັດລະບຽບການຂອງພາກລັດ, ສົ່ງເສີມການຖ່າຍທອດເຕັກໂນໂລຊີ ແລະ ການເສີມສ້າງຂີດຄວາມສາມາດ. ເຖິງແນວໃດກໍ່ຕາມ, ແຜນການ 5 ປີ ຄັ້ງທີ IX ນີ້ຕ້ອງມີມາດຕະການດຶງດູດການລົງທຶນຈາກພາກເອກະຊົນຫຼາຍຂຶ້ນ ແລະ ສອດຄ່ອງກັບບູລິມະສິດຂອງແຜນ. ການລົງທຶນພາກເອກະຊົນ ໂດຍສະເພາະການລົງທຶນ FDI ອາດບໍ່ຂະຫຍາຍຕົວສູງເທົ່າທີ່ຄວນ ຍ້ອນບັນດາປະເທດຜູ້ລົງທຶນໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ແລະ ການລົງທຶນໂດຍກົງຈາກຕ່າງປະເທດ (FDI) ໃນທົ່ວໂລກອາດຫຼຸດລົງເຖິງ 40% ໃນປີ 2020. ດ້ວຍເຫດນັ້ນ, ເຮັດໃຫ້ຫຼາຍປະເທດສຸມໃສ່ການລົງທຶນພາຍໃນຫຼາຍຂຶ້ນ ລວມທັງ ສປປ ລາວ.

ເລັ່ງໃສ່ຂະແໜງການບູລິມະສິດຕາມທີ່ກຳນົດໄວ້ໃນກົດໝາຍການສົ່ງເສີມການລົງທຶນ (ສະບັບປັບປຸງ 2016), ລັກສະນະຂອງໂຄງການຕ້ອງເປັນຫົວຈັກແກ່ດຶງໃຫ້ແກ່ການພັດທະນາເສດຖະກິດຂອງປະເທດ, ເປັນການລົງທຶນທີ່ມີຄຸນນະພາບ, ເປັນການລົງທຶນທີ່ຖ່າຍທອດເຕັກໂນໂລຊີ, ນະວັດຕະກຳໃໝ່ ທີ່ຕິດພັນກັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ອຸດສາຫະກຳ 4.0 (ຕາມຂະແໜງການທີ່ມີເງື່ອນໄຂ) ແລະ ການປັບຕົວໃນຍຸກແຫ່ງປັນຍາປະດິດ ແລະ ການສ້າງຕ່ອງໂສ້ມູນຄ່າເພີ່ມການຜະລິດສິນຄ້າ ໃຫ້ມີຄຸນນະພາບ ແລະ ມີຄວາມຫຼາກຫຼາຍ ທັງກ້າວໄປສູ່ມາດຖານສາກົນ ແລະ ການປັບຕົວໃນຍຸກແຫ່ງປັນຍາປະດິດ, ເປັນການລົງທຶນເພື່ອຜະລິດເປັນສິນຄ້າຈຳເປັນຕໍ່ການບໍລິໂພກເພື່ອຫຼຸດ ຜ່ອນການເອື່ອຍອີງການນຳເຂົ້າ ແລະ ສາມາດສ້າງວຽກເຮັດງານທຳໃຫ້ກັບປະຊາຊົນເປັນຈຳນວນຫຼາຍເປັນຕົ້ນ ກະສິກຳສະອາດ ແລະ ປອດສານພິດ, ອຸດສາຫະກຳປຸງແຕ່ງອາຫານ, ອຸດສາຫະກຳຜະລິດເຄື່ອງອຸປະໂພກ-ບໍລິໂພກ, ການພັດທະນາອຸດ

ສາຫະກຳການທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດເປັນມິດກັບສິ່ງແວດລ້ອມ ແລະ ຍືນຍົງ, ການສຶກສາ, ການສ້າງໂຮງໝໍທັນສະໄໝ ແລະ ການຜະລິດຢາ, ການພັດທະນາໂຄງລ່າງພື້ນຖານເສັ້ນທາງ, ການບໍລິການຂົນສົ່ງສິນຄ້າ, ທາງຜ່ານ ແລະ ການເຊື່ອມໂຍງ ແລະ ເຊື່ອມຈອດລະຫວ່າງປະເທດ. ນອກຈາກນັ້ນ, ກໍໃຫ້ເອົາໃຈໃສ່ດຶງດູດການລົງທຶນເຂົ້າໃນການລົງທຶນໃນເຂດເສດຖະກິດພິເສດ, ເຂດ ແລະ ນິຄົມອຸດສາຫະກຳ, ໂຄງການຂະໜາດນ້ອຍ ແລະ ກາງ, ບັນດາໂຄງການທີ່ນຳໃຊ້ເຕັກນິກວິທະຍາສາດທີ່ທັນສະໄໝທີ່ຈຳເປັນ ແລະ ສອດຄ່ອງກັບເງື່ອນໄຂຕົວຈິງຂອງຕົນ.

ສົ່ງເສີມການລົງທຶນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ (PPP) ໃນໂຄງການຂະໜາດໃຫຍ່ທີ່ໃຊ້ທຶນຮອນ, ເຕັກໂນໂລຊີ ແລະ ນະວັດຕະກຳສູງ ເພື່ອຫຼຸດພາລະແບກຫາບດ້ານການເງິນ ແລະ ຄວາມສ່ຽງໃນການລົງທຶນ, ເພີ່ມປະສິດທິພາບ ແລະ ປະສິດທິຜົນ ແລະ ຄວາມໂປ່ງໃສໃນການຄຸ້ມຄອງບໍລິຫານໂຄງການ ແລະ ມີຄວາມຍືນຍົງ ໃນໂຄງການກໍ່ສ້າງໂຄງລ່າງພື້ນຖານ ເຊັ່ນ: ຂົວ, ທາງ, ທ່າເຮືອ, ທ່າບົກ, ໂຄງການພະລັງງານຕ່າງໆ, ສຶກສາ, ສາທາ (ໂຮງໝໍທັນສະໄໝ) ແລະ ອື່ນໆ.

ເພື່ອຊຸກຍູ້ໃຫ້ການລົງທຶນຂອງພາກເອກະຊົນ ບັນລຸຄາດໝາຍ, ຕ້ອງສຸມໃສ່ວຽກງານຕົ້ນຕໍດັ່ງນີ້:

- ສຸມໃສ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຕາມຄຳສັ່ງຂອງທ່ານນາຍົກລັດຖະມົນຕີວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກການປະສານງານການດຳເນີນທຸລະກິດຢູ່ ສປປ ລາວ, ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018. ເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃນການສ້າງ ແລະ ດຳເນີນທຸລະກິດ ໃຫ້ມີຄວາມໂປ່ງໃສ ແລະ ວ່ອງໄວ ໂດຍການສືບຕໍ່ປັບປຸງຂັ້ນຕອນ ແລະ ລະບຽບການໃນການສ້າງ ແລະ ດຳເນີນທຸລະກິດຕາມ 10 ຕົວຊີ້ບອກ ໃຫ້ດີຂຶ້ນຢ່າງເປັນຮູບປະທຳຈະແຈ້ງ ດ້ວຍການປັບປຸງກົດໝາຍວ່າດ້ວຍວິສາຫະກິດໃຫ້ມີຄວາມສອດຄ່ອງ, ສ້າງລະບົບການຂຶ້ນທະບຽນວິສາຫະກິດແບບອອນລາຍ, ທັນເລກປະຈຳຕົວຜູ້ເສຍອາກອນ, ລະຫັດວິສາຫະກິດ ແລະ ເລກປະກັນສັງຄົມ ເປັນຕົວເລກລະຫັດດຽວກັນ ໂດຍການປັບປຸງໂປແກຼມທະບຽນ (ERS) ແລະ ອາກອນ (TaxRis), ປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ເພື່ອແກ້ໄຂຄວາມຫຍຸ້ງຍາກທີ່ຕິດພັນກັບຕົວຊີ້ບອກການກໍ່ຕັ້ງທຸລະກິດ, ປັບປຸງຄວາມອາດສາມາດໃນການແຂ່ງຂັນໃຫ້ພາກທຸລະກິດ ເພື່ອສົ່ງເສີມພາກທຸລະກິດໃນລະດັບຫົວໜ່ວຍວິສາຫະກິດ ແລະ ອື່ນໆ ຕາມຄວາມເໝາະສົມ ແລະ ເງື່ອນໄຂຕົວຈິງ.
- ສຸມໃສ່ການຜັນຂະຫຍາຍການຈັດຕັ້ງປະຕິບັດຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງວຽກງານການບໍລິການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ໃນຂອບເຂດທົ່ວປະເທດສະບັບເລກທີ 03/ນຍ, ລົງວັນທີ 21 ມັງກອນ 2020 ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ເປັນເອກະພາບໃນການສົ່ງເສີມ, ຄຸ້ມຄອງການລົງທຶນ ແລະ ການອຳນວຍຄວາມສະດວກໃນການດຳເນີນທຸລະກິດຂອງເອກະຊົນພາຍໃນ ແລະ ຕ່າງປະເທດ. ໂດຍຖືເອົາຂະແໜງແຜນການ ແລະ ການລົງທຶນ ເປັນຈຸດໃຈກາງປະສານງານກັບບັນດາໜ່ວຍງານປະສານງານບໍລິການການລົງທຶນປະຕູດຽວ ຢູ່ແຕ່ລະຂະແໜງການທີ່ກ່ຽວຂ້ອງ.
- ສຸມໃສ່ສືບຕໍ່ຜັນຂະຫຍາຍເຜີຍແຜ່ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ແລະ ບັນດານິຕິກຳຕ່າງໆທີ່ຕິດພັນວຽກງານການລົງທຶນໃຫ້ສຳເລັດໃນທົ່ວປະເທດ;
- ສຸມໃສ່ສືບຕໍ່ຈັດຕັ້ງປະຕິບັດກົນໄກປະສານງານການບໍລິການການລົງທຶນປະຕູດຽວໃຫ້ສຳເລັດ, ປັບປຸງຮຽບຮຽງຂໍ້ມູນຂ່າວສານໃຫ້ຜູ້ລົງທຶນຢ່າງວອງໄວ ໂດຍຜ່ານການອອກປຶ້ມຄູ່ມືການບໍລິການ ການລົງທຶນປະຕູດຽວ ແລະ ສົ່ງຂໍ້ມູນທາງເວບໄຊ ເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງ;
- ສຸມໃສ່ສືບຕໍ່ຄົ້ນຄວ້າ, ດັດແກ້ ແລະ ປັບປຸງນິຕິກຳທີ່ມີ ລວມທັງນະໂຍບາຍສົ່ງເສີມການລົງທຶນໃຫ້ສອດຄ່ອງກັບສະພາບປັດຈຸບັນໃນ ສປປ ລາວ;
- ສຸມໃສ່ພັດທະນາ ແລະ ນຳໃຊ້ ICT ເຂົ້າໃນວຽກງານບໍລິຫານ ແລະ ບໍລິການລັດ ໃນແຕ່ລະຂະແໜງການ.
- ສຸມໃສ່ສືບຕໍ່ສ້າງຮ່າງນະໂຍບາຍດ້ານພາສີອາກອນ ຂອງຂະແໜງການສົ່ງເສີມການລົງທຶນໃຫ້ສຳເລັດ;

ວຽກງານທີ່ຕ້ອງເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ ແມ່ນເພື່ອກະກຽມຄວາມພ້ອມເຂົ້າໃນວຽກງານດຶງດູດ ແລະ ສົ່ງເສີມການລົງທຶນພາກເອກະຊົນ ໃຫ້ສາມາດດຶງດູດການລົງທຶນເຂົ້າມາລົງທຶນ ໃນ ສປປ ລາວ ໄດ້ຫຼາຍທີ່ສຸດ. ຈາກການຍາດແຍ່ງແຂ່ງຂັນຂອງການດຶງດູດ ແລະ ນະໂຍບາຍສົ່ງເສີມການລົງທຶນຕ່າງໆ ຂອງບັນດາປະເທດເພື່ອນບ້ານ ຫຼື ນາໆປະເທດ. ໂດຍສະເພາະພາຍຫຼັງສະພາບການຍຸຕິການແຜ່ລະບາດພະຍາດໂຄວິດ-19 ເຊິ່ງທຸກໆປະເທດກໍ່ມີຄວາມຈຳເປັນຕ້ອງການແຫຼ່ງທຶນເຂົ້າມາຊ່ວຍຟື້ນຟູເສດຖະກິດແຫ່ງຊາດຂອງຕົນ ໃຫ້ມີສະຖຽນລະພາບທີ່ດີຂຶ້ນ.

ຄຽງຄູ່ກັບການສ້າງແຜນ ແລະ ນະໂຍບາຍການດຶງດູດ ແລະ ສົ່ງເສີມການລົງທຶນພາກເອກະຊົນຕ່າງໆນັ້ນ, ວຽກງານການຄຸ້ມຄອງຕິດຕາມການຈັດຕັ້ງປະຕິບັດວຽກງານຂອງບັນດາໂຄງການທີ່ໄດ້ເຊັນສັນຍາໄປແລ້ວ ກໍ່ຕ້ອງໄດ້ເອົາໃຈໃສ່ຄຸ້ມຄອງຕິດຕາມຄືດັ່ງລຸ່ມນີ້:

- ເອົາໃຈໃສ່ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງເປັນໄລຍະ ເພື່ອຄຸ້ມຄອງກວດກາການປະຕິບັດພັນທະຕ່າງໆ ຂອງບັນດາໂຄງການທີ່ໄດ້ລະບຸໄວ້ໃນສັນຍາ ແລະ ສອດຄ່ອງກັບກົດໝາຍສົ່ງເສີມການລົງທຶນສະບັບປັບປຸງ ປີ 2016;
- ເອົາໃຈໃສ່ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ເພື່ອລົງກວດກາສະພາບການຈັດຕັ້ງປະຕິບັດວຽກງານຂອງບັນດາໂຄງການທີ່ໄດ້ເຊັນສັນຍາໄປແລ້ວ, ໂດຍສະເພາະແມ່ນໂຄງການທີ່ມີບັນຫາເກີດຂຶ້ນເພື່ອຊຸກຍູ້ ແລະ ຊ່ວຍເຫຼືອໃຫ້ບັນດາໂຄງການດັ່ງກ່າວສາມາດປະຕິບັດວຽກງານໄດ້ສຳເລັດຕາມຄາດໝາຍ;
- ເອົາໃຈໃສ່ຕິດຕາມກວດກາບົດລາຍງານຂອງບັນດາໂຄງການຕາມແຕ່ລະໄຕມາດ ແລະ ສະຫຼຸບການຈັດຕັ້ງປະຕິບັດວຽກງານຂອງບັນດາໂຄງການ ເພື່ອລາຍງານໃຫ້ຂັ້ນເທິງຮັບຊາບ;
- ເອົາໃຈໃສ່ຈັດຕັ້ງໜ່ວຍງານສະເພາະກິດປະຈຳປີ ຫຼື ພາຍໃນສອງປີ ທີ່ມີບັນດາຂະແໜງການກ່ຽວຂ້ອງ ແລະ ທ້ອງຖິ່ນ ລົງກວດກາ ແລະ ທົບທວນປະເມີນການປະຕິບັດວຽກງານຕົວຈິງຂອງບັນດາໂຄງການ ເພື່ອລາຍງານໃຫ້ຂັ້ນເທິງຮັບຊາບ, ຖ້າຫາກໂຄງການໃດທີ່ປະຕິບັດໄດ້ດີ ກໍ່ສືບຕໍ່ຊຸກຍູ້ສົ່ງເສີມຊ່ວຍເຫຼືອແກ້ໄຂບັນຫາຕ່າງໆໃຫ້ສຳເລັດຕາມຄາດໝາຍ. ແຕ່ຖ້າຫາກໂຄງການໃດ ທີ່ມີລັກສະນະເຊັນສັນຍາເພື່ອຈັບຈອງໂຄງການ ໂດຍບໍ່ມີຄວາມຄືບໜ້າໃນການປະຕິບັດວຽກງານໃດໆ ກໍ່ສະເໜີລາຍງານຂັ້ນເທິງເພື່ອຍົກເລີກໂຄງການ. ທັງນີ້ກໍ່ເພື່ອບໍ່ໃຫ້ເປັນການຈັບຈອງເພື່ອແກ່ຍາວການສ້າງແຫຼ່ງທຶນເຂົ້າມາຊ່ວຍພັດທະນາເສດຖະກິດແຫ່ງຊາດ;
- ກ່ຽວກັບວຽກງານຄຸ້ມຄອງ ແລະ ຕິດຕາມດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ ກໍ່ແມ່ນເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານຕົວຈິງຂອງບັນດາໂຄງການໃຫ້ສຳເລັດຕາມຄາດໝາຍ ແລະ ເພື່ອຮັບປະກັນໃຫ້ລັດຖະບານໄດ້ຮັບຜົນປະໂຫຍດສູງສຸດຕໍ່ການອະນຸມັດບັນດາໂຄງການຕ່າງໆ, ເຊິ່ງຜົນປະໂຫຍດດັ່ງກ່າວ ສາມາດປະກອບສ່ວນສະໜອງແຫຼ່ງທຶນເຂົ້າມາຊ່ວຍພັດທະນາເສດຖະກິດແຫ່ງຊາດ.

## 4. ແຜນວຽກຈຸດສຸມທີ 4: ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໄປສູ່ຄຸນນະພາບໃໝ່ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ມີບົດບາດສຳຄັນໃນການສ້າງວຽກເຮັດງານທຳ ແລະ ການພັດທະນາເສດຖະກິດ. ເພື່ອສ້າງສະພາບແວດລ້ອມທີ່ດີໃນການແຂ່ງຂັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ, ໃນຕໍ່ໜ້າຄວນສຸມໃສ່ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈວນກ) ທີ່ຕິດພັນກັບຕະຫຼາດ ແລະ ເປັນເຄືອຂ່າຍການຜະລິດຂອງບໍລິສັດໃຫຍ່ທັງພາຍໃນ ແລະ ສາກົນ; ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ; ປັບປຸງການຄຸ້ມຄອງຂໍ້ມູນສິນເຊື່ອ, ສ້າງຜະລິດຕະພັນດ້ານການ

ເງິນໃຫ້ມີຄວາມຫຼາກຫຼາຍ, ຫຼຸດຜ່ອນການກູ້ຢືມນອກລະບົບ ແລະ ສ້າງເງື່ອນໄຂໃນການເຂົ້າເຖິງແຫຼ່ງທຶນ, ມີການຕິດຕາມ ແລະ ລາຍງານການດຳເນີນກິດຈະການຢ່າງເປັນລະບົບ, ວິທະຍາສາດ-ເຕັກໂນໂລຊີ-ນະວັດຕະກຳໃໝ່ ໃຫ້ມີປະສິດທິພາບ; ປັບປຸງຂີດຄວາມສາມາດໃນການວາງແຜນ ແລະ ການດຳເນີນທຸລະກິດທີ່ທັນສະໄໝ; ປັບປຸງນິຕິກຳກ່ຽວກັບການດຳເນີນກິດຈະການຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ຢ່າງເປັນລະບົບ ແລະ ເປັນທຳ; ສຸມໃສ່ສ້າງເງື່ອນໄຂ ແລະ ສົ່ງເສີມການເພີ່ມຜະລິດຕະພາບ ແລະ ຄຸນນະພາບດ້ານແຮງງານການຜະລິດ ແລະ ການບໍລິການໃນພາກລັດ ແລະ ເອກະຊົນ ເພື່ອຍົກສູງຄວາມສາມາດໃນການແຂ່ງຂັນ ແລະ ພັດທະນາແບບຍືນຍົງດ້ວຍການປັບປຸງແບບແຜນວິທີເຮັດວຽກ ແລະ ລະບຽບການອອກແຮງງານໄປສູ່ຮູບແບບອຸດສາຫະກຳທັນສະໄໝ ແລະ ມີລັກສະນະປະດິດສ້າງ.

ໃນໄລຍະທີ່ເສດຖະກິດ ຍັງຖືກກະທົບຈາກພະຍາດໂຄວິດ-19, ຕ້ອງມີການສະໜັບສະໜູນສະເພາະ ສຳລັບທຸລະກິດທີ່ໄດ້ຮັບຜົນກະທົບດັ່ງກ່າວ ເຊິ່ງຈະຕ້ອງພິຈາລະນາໂດຍອີງໃສ່ການຕິດຕາມກວດກາຢ່າງເປັນປະຈຳ ແລະ ຄຳນຶງເຖິງງົບປະມານ.

### 4.1. ຄາດໝາຍ ແລະ ຕົວຊີ້ບອກ:

- ສູ້ຊົນເຮັດໃຫ້ຕົວຊີ້ບອກ 'ການເລີ່ມຕົ້ນທຸລະກິດ' ຂອງປະເທດລາວ ຢູ່ໃນອັນດັບຕໍ່າກວ່າ ອັນດັບ 120 ລົງມາໃນປີ 2025.
- ຈຳນວນຜູ້ປະກອບການຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈວນກ) ໃໝ່ ໃຫ້ເພີ່ມຂຶ້ນ 2% ຕໍ່ປີ.
- ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ປະກອບສ່ວນຕໍ່ GDP 18% ຕໍ່ປີ.
- ສູ້ຊົນເຮັດໃຫ້ຫົວໜ່ວຍທຸລະກິດ ໄດ້ຮັບໂອດ໊ອບ (ODOP) ເພີ່ມຂຶ້ນ 20 ຫົວໜ່ວຍຕໍ່ປີ ແລະ ຢ່າງໜ້ອຍໃຫ້ໄດ້ 20 ຜະລິດຕະພັນໂອດ໊ອບ ຕໍ່ປີ.
- ສູ້ຊົນເຮັດໃຫ້ ຈວນກ ໃຫ້ໄດ້ຮັບລາງວັນທຸລະກິດດີເດັ່ນ ຢ່າງໜ້ອຍ 5 ຫົວໜ່ວຍ ຕໍ່ປີ.
- ຮອດປີ 2025 ຂະຫຍາຍຕະຫຼາດທັນສະໄໝ (ຊຸບເປີມາກເກັດ, ຮ້ານຊຸບພະສິນຄ້າ, ສູນການຄ້າ...) ໃຫ້ໄດ້ຢ່າງໜ້ອຍ 18 ແຫ່ງ ໃນທົ່ວປະເທດ.

### 4.2. ວຽກງານຈຸດສຸມ:

ສືບຕໍ່ຈັດຕັ້ງປະຕິບັດ 7 ນະໂຍບາຍຂອງແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈວນກ) ໂດຍໃຫ້ສຸມໃສ່:

- ການສົ່ງເສີມທຸລະກິດໃໝ່ (start-up): ຍົກລະດັບຄວາມສາມາດແຂ່ງຂັນໄດ້ ໂດຍການປັບປຸງໂຄງລ່າງພື້ນຖານຄົມມະນາຄົມ, ອິນເຕີເນັດທີ່ມີຄຸນນະພາບ ແລະ ອັດຕາຄ່າບໍລິການທີ່ບໍ່ສູງ, ພ້ອມທັງສ້າງລະບົບນິເວດເພື່ອສົ່ງເສີມຜູ້ປະກອບການໃໝ່; ສ້າງນະໂຍບາຍ ແລະ ຍຸດທະສາດໃນການພັດທະນາ ແລະ ສົ່ງເສີມຜູ້ປະກອບການໃໝ່ ໃຫ້ມີຄວາມເຂັ້ມແຂງ, ຍືນຍົງ ແລະ ສາມາດແຂ່ງຂັນໄດ້ ໃນລະດັບພາກພື້ນ ແລະ ສາກົນ. ສ້າງໂອກາດການເຂົ້າເຖິງການບໍລິການການຍົກລະດັບຄວາມສາມາດຂອງ SME ໂດຍການຊຸກຍູ້ການເຄື່ອນໄຫວສູນບໍລິການ SME ໃຫ້ມີປະສິດທິຜົນ. ສົ່ງເສີມທຸລະກິດທີ່ເກີດຂຶ້ນໃໝ່ ໂດຍສະເພາະແມ່ນທຸລະກິດທີ່ນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານເຂົ້າໃນການບໍລິຫານທຸລະກິດ, ທຸລະກິດຜະລິດສິນຄ້າຫັດຖະກຳ, ອາຫານ, ເຄື່ອງດື່ມ, ອຸປະກອນຮັບໃຊ້ ແລະ ອື່ນໆ ຕະຫຼອດຮອດການຜະລິດສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ (ODOP) ແບບໃໝ່ ທີ່ເປັນມິດຕໍ່ສິ່ງແວດລ້ອມ, ສີຂຽວ ແລະ ຍືນຍົງ ທີ່ໄດ້ມາດຕະຖານຕາມຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ພາກພື້ນ.

- ຍົກລະດັບດ້ານການບໍລິຫານທຸລະກິດ, ການເຂົ້າເຖິງຕະຫຼາດ, ການເຂົ້າເຖິງແຫຼ່ງທຶນ, ດ້ານເຕັກນິກ-ວິທະຍາສາດ-ນະວັດຕະກຳພູມປັນຍາ-ເຕັກໂນໂລຊີ, ມີການຫຸ້ມຫໍ່ ແລະ ຕິດກາໝາຍສິນຄ້າ ເພື່ອຍົກສູງຄຸນນະພາບຂອງສິນຄ້າ ແລະ ຄວາມສາມາດໃນການແຂ່ງຂັນ ດ້ວຍການ: 1) ຍົກລະດັບຄວາມຮັບຮູ້ດ້ານວິຊາການໃຫ້ແກ່ຜູ້ປະກອບການ ແລະ

ຜູ້ທີ່ມີແນວຄິດຢາກລິເລີ່ມດຳເນີນທຸລະກິດ ໃຫ້ສາມາດເຂົ້າເຖິງລະບຽບການ ແລະ ເງື່ອນໄຂຕ່າງໆ ເພື່ອໃຫ້ສາມາດເຂົ້າເຖິງແຫຼ່ງທຶນຈາກສະຖາບັນການເງິນຕ່າງໆ ຢ່າງສະດວກ ແລະ ຫຼຸດຜ່ອນຄວາມສ່ຽງໃນການເຂົ້າຫາແຫຼ່ງທຶນນອກລະບົບ; 2) ປັບປຸງກົນໄກ ແລະ ລະບຽບຂັ້ນຕອນການເຂົ້າເຖິງສິນເຊື່ອຂອງບັນດາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມແທດເໝາະກັບເງື່ອນໄຂຕົວຈິງໃນແຕ່ລະໄລຍະ ເພື່ອສົ່ງເສີມຫົວໜ່ວຍທຸລະກິດທີ່ມີທ່າແຮງເຮັດແທ້ທຳຈິງ ໄປຄຽງຄູ່ກັບການພັດທະນາ ແລະ ຍົກສູງຄຸນນະພາບຂອງພະນັກງານ, ຜະລິດຕະພັນຂອງສະຖາບັນການເງິນ ພ້ອມທັງຍົກສູງຄຸນນະພາບຂອງລະບົບການຄຸ້ມຄອງບໍລິຫານຂອງສະຖາບັນການເງິນ ໃຫ້ນັບມື້ເຂັ້ມແຂງຮອບດ້ານ; 3) ຊຸກຍູ້ໃຫ້ຫົວໜ່ວຍ SME ສາມາດເຂົ້າຮ່ວມຕ່ອງໂສ້ການຜະລິດ ແລະ ຕະຫຼາດສາກົນ ໃຫ້ຫຼາຍຂຶ້ນ ເພື່ອຍົກລະດັບສະມັດຕະພາບສີມືແຮງງານ, ສະມັດຕະພາບການຜະລິດ, ເຂົ້າເຖິງເຕັກໂນໂລຊີໃໝ່-ນະວັດຕະກຳໃໝ່, ການເຂົ້າເຖິງຕະຫຼາດພາຍໃຕ້ຕ່ອງໂສ້ການສະໜອງຂອງຕະຫຼາດພາກພື້ນ ແລະ ສາກົນ.

- ສືບຕໍ່ຂົນຂວາຍແຫຼ່ງທຶນທີ່ມີຕົ້ນທຶນຕ່ຳ ຈາກທັງພາຍໃນ ແລະ ຕ່າງປະເທດ ເພື່ອຊ່ວຍເສີມສ້າງຄວາມເຂັ້ມແຂງດ້ານແຫຼ່ງທຶນໃຫ້ແກ່ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ມີທ່າແຮງດ້ານການຜະລິດ ແລະ ສົ່ງອອກ ໄປຄຽງຄູ່ກັບການສ້າງເງື່ອນໄຂຍົກລະດັບວິຊາການໃຫ້ແກ່ບຸກຄະລາກອນທີ່ຮັບຜິດຊອບໃຫ້ມີຄວາມຊຳນານຢ່າງຕໍ່ເນື່ອງ ແລະ ເປັນລະບົບ.

- ການສົ່ງເສີມ ແລະ ພັດທະນາສິນຄ້າ ໃຫ້ມີຄຸນນະພາບ ແລະ ມີຄວາມຕ້ອງການຂອງຕະຫຼາດ ໂດຍມີນະໂຍບາຍສະໜັບສະໜູນທີ່ເໝາະສົມ.

- ການສົ່ງເສີມ ແລະ ພັດທະນາສິນຄ້າໃຫ້ມີຄຸນນະພາບ ແລະ ມີຄວາມຕ້ອງການຂອງຕະຫຼາດໂດຍມີນະໂຍບາຍສະໜັບສະໜູນທີ່ເໝາະສົມ.

- ການສົ່ງເສີມທຸລະກິດແບບທົ່ວເຖິງ (Inclusive Business) ໂດຍການສົ່ງເສີມໃຫ້ມີການເຊື່ອມໂຍງຕ່ອງໂສ້ການຜະລິດ ລະຫວ່າງ ບໍລິສັດຂະໜາດໃຫຍ່ ແລະ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ; ສ້າງນະໂຍບາຍອັນສະເພາະເພື່ອເປັນການດຶງດູດບັນດາບໍລິສັດຂະໜາດໃຫຍ່ ແລະ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການເຊື່ອມໂຍງເອົາກຸ່ມການຜະລິດ ເຂົ້າໃນຕ່ອງໂສ້ການຜະລິດທັງພາຍໃນ, ພາກພື້ນ ແລະ ສາກົນ.

- ສົ່ງເສີມໃຫ້ບໍລິສັດຂະໜາດໃຫຍ່ ແລະ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ ເພື່ອປັບປຸງຄຸນນະພາບການຜະລິດຂອງປະຊາຊົນ ໃຫ້ສາມາດເຊື່ອມສານເຂົ້າໃນຕ່ອງໂສ້ການຜະລິດ.

- ສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ພາກທຸລະກິດ ທີ່ລົງທຶນໃນຂະແໜງກະສິກຳ, ອາຫານ ແລະ ຢາ ສາມາດເຂົ້າເຖິງຕະຫຼາດໃໝ່, ເຂົ້າເຖິງຫ້ອງທົດລອງ (Laboratory) ກວດກາສານເຄມີຕົກຄ້າງ (ດຶງດູດການລົງທຶນ, ຫ້ອງທົດລອງ, ກວດກາສິນຄ້າກະສິກຳ) ຜ່ານທຶນສົມທົບ BAF, ສາມາດເຂົ້າເຖິງເຕັກນິກການຜະລິດ, ແຫຼ່ງທຶນ, ເຄືອຂ່າຍການຜະລິດສາກົນ ແລະ ຜູ້ຊື້ໂດຍກົງ.

## 5. ແຜນວຽກຈຸດສຸມທີ 5: ພັດທະນາວິສາຫະກິດຂອງລັດ ແລະ ເສດຖະກິດຣວມໝູ່ຂອງປະຊາຊົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຖືເປັນບູລິມະສິດສຳຄັນໃນການຄຸ້ມຄອງ ແລະ ພັດທະນາວິສາຫະກິດລັດໃຫ້ມີຄວາມເຂັ້ມແຂງ ສາມາດເຄື່ອນໄຫວຢ່າງມີປະສິດທິຜົນທາງດ້ານເສດຖະກິດ, ກາຍເປັນຖານເສດຖະກິດ ແລະ ສ້າງລາຍຮັບໃຫ້ແກ່ປະເທດຊາດ ພ້ອມທັງ ຫຼຸດຜ່ອນການສ້າງໜີ້ສິນ; ສ້າງ ແລະ ຂະຫຍາຍບັນດາຮູບແບບເສດຖະກິດຣວມໝູ່ຂອງປະຊາຊົນ ເພື່ອຮັບປະກັນໃຫ້ກາຍເປັນຖານເສດຖະກິດອັນໝັ້ນຄົງ ແລະ ໜັກແໜ້ນ; ສາມາດແຂ່ງຂັນກັບພາກສ່ວນເສດຖະກິດອື່ນ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ. ສະນັ້ນ, ເພື່ອໃຫ້

ເສດຖະກິດມະຫາພາກ ແລະ ການເຕີບໂຕຂອງເສດຖະກິດມີຄວາມເຂັ້ມແຂງ ຈະຕ້ອງໄດ້ທົບທວນຢ່າງຮອບຄອບ ລັດວິສາຫະກິດໃນຂະແໜງພະລັງງານ ໂດຍສະເພາະໃນການບໍລິຫານຈັດການພາລະດ້ານງົບປະມານ ແລະ ການຮັບປະກັນການລົງທຶນມີຄວາມຍືນຍົງທາງດ້ານເສດຖະກິດ ແລະ ສິ່ງແວດລ້ອມ.

### 5.1. ຄາດໝາຍ ແລະ ຕົວຊີ້ບອກ

- ສ້າງ ແລະ ປັບປຸງສະຫະກອນກະສິກຳ ແລະ ບໍລິການ ກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 18 ຫົວໜ່ວຍ.
- ສູ້ຊົນ ຈັດຕັ້ງກຸ່ມການຜະລິດໃຫ້ໄດ້ 4.420 ກຸ່ມ; ຈັດຕັ້ງສະຫະກອນການຜະລິດບ່ອນທີ່ມີເງື່ອນໄຂ ໃຫ້ໄດ້ 250 ສະຫະກອນ ແລະ ສ້າງສະຫະກອນຕົວແບບໃຫ້ໄດ້ 10 ສະຫະກອນ.

### 5.2. ວຽກງານຈຸດສຸມ:

- ປັບປຸງ ແລະ ສ້າງນິຕິກຳ ເພື່ອຄຸ້ມຄອງ ແລະ ພັດທະນາວິສາຫະກິດໃຫ້ມີປະສິດທິຜົນກວ່າເກົ່າ.

- ປະຕິຮູບລັດວິສາຫະກິດຢ່າງຈິງຈັງ ດ້ວຍການສ້າງ ແລະ ປັບປຸງກົນໄກການຄຸ້ມຄອງລາຍຮັບ-ລາຍຈ່າຍຂອງວິສາຫະກິດ ແລະ ວິສາຫະກິດປະສົມ ໂດຍນໍາໃຊ້ເຄື່ອງມືທີ່ທັນສະໄໝ ຖືກຕ້ອງຕາມລະບຽບການ, ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້ ແລະ ມີປະສິດທິຜົນສູງກວ່າເກົ່າ.

- ປັບປຸງ ແລະ ສ້າງນະໂຍບາຍການເຂົ້າເຖິງແຫຼ່ງທຶນ, ສົ່ງເສີມການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດໃຫ້ສອດຄ່ອງກັບການພັດທະນາວິສາຫະກິດໄລຍະໃໝ່ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ.

- ຫັນລັດວິສາຫະກິດຕົ້ນຕໍຈຳນວນໜຶ່ງ ໄປສູ່ຮູບແບບລັດຮ່ວມມືກັບເອກະຊົນ ທີ່ມີຄວາມສາມາດໃນການບໍລິຫານຈັດການ ແລະ ມີຖານະການເງິນເຂັ້ມແຂງ ເພື່ອໃຫ້ການຈັດຕັ້ງ ແລະ ກົນໄກການຄຸ້ມຄອງໄດ້ຕາມມາດຕະຖານຂອງບໍລິສັດມະຫາຊົນ.

- ປະຕິຮູບການຈັດຕັ້ງ ແລະ ການບໍລິຫານຈັດການ ໂດຍການປະຕິບັດການສອບບັນຈຸຜູ້ບໍລິຫານທີ່ເປັນມືອາຊີບຕໍ່ບາງຫົວໜ່ວຍລັດວິສາຫະກິດ.

- ຄົ້ນຄວ້າລະອຽດໂຄງການລົງທຶນລັດໃນຮູບແບບ PPP ແລະ BOT ໂດຍສະເພາະໂຄງການຂະໜາດໃຫຍ່ທີ່ກຳລັງຈັດຕັ້ງປະຕິບັດ ແລະ ບໍລິຫານໂດຍລັດວິສາຫະກິດ ເພື່ອຮັບປະກັນຜົນຕອບແທນດ້ານເສດຖະກິດ ແລະ ສັງຄົມຄຽງຄູ່ກັບການປະເມີນຄືນລັດວິສາຫະກິດເພື່ອສຶກສາກໍລະນີທີ່ຄວນມີການປັບປຸງ ຫຼື ປິດກິດຈະການ ແລະ ມີມາດຕະການເພື່ອແກ້ໄຂໜີ້ເສຍ, ຫັນໄປໃຫ້ບໍລິສັດເອກະຊົນມາຮ່ວມທຶນ.

- ສົ່ງເສີມການຜະລິດ ເພື່ອສ້າງລາຍຮັບທີ່ໝັ້ນຄົງ ໃຫ້ແກ່ປະຊາຊົນ ຢູ່ບັນດາຈຸດສຸມ ຫ່າງໄກສອກຫຼີກ ໃຫ້ມີການຂະຫຍາຍ ແລະ ເປັນລະບົບຕ່ອງໂສ້ການຜະລິດ ໂດຍຕິດພັນກັບການຈັດຕັ້ງກຸ່ມການຜະລິດທີ່ເຂັ້ມແຂງ, ກ້າວໄປສູ່ໃນການສ້າງເງື່ອນໄຂໃນການສ້າງເປັນສະຫະກອນການຜະລິດກະສິກຳ, ການບໍລິການໃນຕໍ່ໜ້າ.

## 6. ທິດທາງການປະຕິຮູບໂຄງສ້າງເສດຖະກິດເພື່ອສ້າງຄວາມເຂັ້ມແຂງພາຍໃນ:

1) ປັບປຸງລະບົບກົນໄກ ແລະ ມາດຕະການທີ່ຄົບຊຸດ ເພື່ອແກ້ໄຂບັນຫາທີ່ຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ, ຮັບປະກັນໃຫ້ການເຕີບໂຕມີຄຸນນະພາບ, ເສດຖະກິດມະຫາພາກ ມີສະຖຽນລະພາບໃນລະດັບທີ່ແນ່ນອນ ໂດຍການຄົ້ນຄວ້າປັບປຸງໂຄງສ້າງໜີ້ຂອງລັດທັງໄລຍະສັ້ນ ແລະ ໄລຍະຍາວ ເພື່ອໃຫ້ລະດັບໜີ້ສິນຫຼຸດລົງໃນລະດັບທີ່ຄຸ້ມຄອງ ແລະ ສາມາດຊໍາລະສະສາງໄດ້ ດ້ວຍຫຼາຍຮູບການ ເປັນຕົ້ນ ການແກ້ໄຂໜີ້ສິນດ້ວຍຮູບການອວ່າຍໜີ້ສາມແຈ, ການອອກພັນທະບັດ ແລະ ອື່ນໆ. ຮີບຮ້ອນປະຕິບັດມາດຕະການເພີ່ມລາຍຮັບຢ່າງເຂັ້ມແຂງ ດ້ວຍການບັງຄັບໃຊ້ລະບົບການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍທີ່ທັນສະໄໝ ເພື່ອໃຫ້ທຸກວິສາຫະກິດປະຕິບັດການເສຍພາສີ-ອາກອນຢ່າງຖືກຕ້ອງໂປ່ງໃສ ແລະ ຄົບຖ້ວນ.
2) ປັບປຸງໂຄງສ້າງເສດຖະກິດ ໃຫ້ມີຄຸນນະພາບ ແລະ ຍືນຍົງ ຕາມຂະແໜງການ, ຕາມພາກສ່ວນເສດຖະກິດ (ລັດ, ລວມໝູ່, ວິສາຫະກິດຂະໜາດນ້ອຍ ແລະ ກາງ), ຕາມເຂດແຄ້ວນ (ສຸມໃສ່ພັດທະນາຕາມແລວທາງເສດຖະກິດ

ລາວ-ຈີນ, ແລວທາງຕາເວັນອອກ-ຕາເວັນຕົກ) ນັບທັງບັນດາເຂດເສດຖະກິດພິເສດ, ນິຄົມ ອຸດສາຫະກໍາ, ຕົວເມືອງທັນສະໄໝ, ທ່າບົກ...

3) ສືບຕໍ່ພັດທະນາເຂດແຄວ້ນ (ພາກເໜືອ, ພາກກາງ ແລະ ພາກໃຕ້) ຕາມທ່າແຮງໄດ້ປຽບຂອງແຕ່ລະພາກ ໃຫ້ເຂົ້າສູ່ລວງເລິກ, ມີຄວາມສອດຄ່ອງກົມກຽວ, ສະໜັບສະໜູນເຊິ່ງກັນ ແລະ ກັນ ເພື່ອສ້າງສໍາພັນເສດຖະກິດທີ່ມີຄຸນນະພາບ ແລະ ມີຄວາມສົມດຸນຫຼາຍຂຶ້ນ; ສຸມໃສ່ພັດທະນາຕາມແລວທາງເສດຖະກິດລາວ-ຈີນ, ແລວທາງເໜືອ-ໃຕ້, ແລວທາງຕາເວັນອອກ-ຕາເວັນຕົກ, ບັນດາເຂດເສດຖະກິດພິເສດ, ຕົວເມືອງທັນສະໄໝ, ທ່າບົກ ແລະ ການບໍລິການໂລຊິດສະຕິກ, ນິຄົມອຸດສາຫະກໍາ, ອຸດສາຫະກໍາການທ່ອງທ່ຽວ (ທໍາມະຊາດ, ປະຫວັດສາດ, ວັດທະນະທໍາ ແລະ ການຜະລິດກະສິກໍາ).

4) ເສີມຂະຫາຍບັນດາປັດໄຈ, ຄວາມອາດສາມາດບົ່ມຊ້ອນພາຍໃນປະເທດໃຫ້ກາຍເປັນທ່າແຮງ ແລະ ກາຍເປັນຂະແໜງເສດຖະກິດປາຍແຫຼມຂອງຊາດ ໂດຍສະເພາະແມ່ນບັນດາທ່າແຮງດັ່ງຕໍ່ໄປນີ້: (1) ຂຸດຄົ້ນທ່າແຮງທາງດ້ານຊັບພະຍາກອນທໍາມະຊາດ ເປັນຕົ້ນ: ທ່າແຮງທາງດ້ານທີ່ດິນ, ປ່າໄມ້ ແລະ ນໍ້າຢ່າງເປັນລະບົບ ໂດຍສະເພາະແມ່ນການຈັດສັນດິນໃຫ້ນໍາໃຊ້ຢ່າງມີຜົນປະໂຫຍດສູງສຸດ ເປັນຕົ້ນແມ່ນການກໍານົດເຂດການຜະລິດ, ເຂດອຸດສາຫະກໍາ-ປຸງແຕ່ງ ແລະ ເຂດທີ່ພັກອາໄສໃຫ້ມີຄວາມຊັດເຈນ ພ້ອມທັງປັບປຸງ ແລະ ສ້າງນິຕິກໍາໃນການຄຸ້ມຄອງໃຫ້ຮັດກຸມ, ໂປ່ງໃສ ແລະ ມີຄວາມສັກສິດ; (2) ທ່າແຮງທາງດ້ານອຸດສາຫະກໍາປຸງແຕ່ງ ຈາກກະສິກໍາ ແລະ ອຸດສາຫະກໍາຜະລິດວັດສະດຸກໍ່ສ້າງ: ເພີ່ມທະວີການປະສານງານລະຫວ່າງຂະແໜງກະສິກໍາ ແລະ ອຸດສາຫະກໍາໃຫ້ເຂັ້ມແຂງ ເພື່ອຜັກດັນການຜະລິດກະສິກໍາໃຫ້ຕິດພັນກັບການປຸງແຕ່ງໃຫ້ຫຼາຍຂຶ້ນ; (3) ທ່າແຮງທາງດ້ານທ່ອງທ່ຽວ: ພວກເຮົາມີທ່າແຮງທາງດ້ານທໍາມະຊາດ, ປະຫວັດສາດ ແລະ ວັດທະນະທໍາ ສະນັ້ນ ຕ້ອງສຸມໃສ່ພັດທະນາທ່າແຮງດັ່ງກ່າວໃຫ້ກາຍເປັນອຸດສາຫະກໍາການທ່ອງທ່ຽວທີ່ສາມາດດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດໃຫ້ນັບມື້ຫຼາຍຂຶ້ນ; (4) ທ່າແຮງທາງດ້ານການເຊື່ອມຈອດຕາມແລວທາງເສດຖະກິດຕ່າງໆ ລວມທັງແລວທາງລົດໄຟລາວ-ຈີນ: ຕ້ອງໄດ້ສ້າງໂຄງລ່າງພື້ນຖານໃຫ້ເຊື່ອມຈອດກັບທາງລົດໄຟ ເພື່ອອໍານວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານ, ຕ້ອງໄດ້ກໍານົດເຂດການຜະລິດເປັນສິນຄ້າໃນບັນດາແຂວງທີ່ມີທາງລົດໄຟຜ່ານ ໃນໄລຍະຊຸມປີຕໍ່ໜ້າ ແລະ ໄລຍະຍາວນານ ຕ້ອງສືບຕໍ່ສຸມໃສ່ພັດທະນາບັນດາແຂວງອື່ນໆ ໃນຂອບເຂດທົ່ວປະເທດໃຫ້ສາມາດຜະລິດເປັນສິນຄ້າເພື່ອສົ່ງອອກ; (5) ທ່າແຮງດ້ານພະລັງງານ-ບໍ່ແຮ່: ຕ້ອງໄດ້ມີການທົບທວນຄືນ ຍຸດທະສາດການພັດທະນາໂຄງການດ້ານພະລັງງານໄຟຟ້າ ໃຫ້ເໝາະສົມກັບຄວາມອາດສາມາດຂອງທ່າແຮງຂອງປະເທດ ແລະ ຄວາມຕ້ອງການຂອງການຊົມໃຊ້ພາຍໃນ ແລະ ຕະຫຼາດຈາກຕ່າງປະເທດຢ່າງເປັນເຈົ້າການ, ພ້ອມດຽວກັນນັ້ນ ຈະຕ້ອງໄດ້ເອົາໃຈໃສ່ໃນການຄຸ້ມຄອງການສໍາຫຼວດ ແລະ ຂຸດຄົ້ນຊັບພະຍາກອນບໍ່ແຮ່ຢ່າງແຂງແຮງ ແລະ ໃຫ້ມີຄວາມຫຼາກຫຼາຍ ຮັບປະກັນໃຫ້ການປຸງແຕ່ງຫຼາຍຂຶ້ນ ເພື່ອສ້າງມູນຄ່າເພີ່ມ ແລະ ທັງເປັນການສ້າງວຽກເຮັດງານທໍາໃຫ້ຫຼາຍຂຶ້ນ; (6) ທ່າແຮງທາງດ້ານການມີປະຊາກອນໜຸ່ມ: ເອົາໃຈໃສ່ພັດທະນາ ແລະ ນໍາໃຊ້ປະຊາກອນທີ່ມີໃຫ້ເຕັມສ່ວນ ແລະ ເກີດປະໂຫຍດສູງສຸດ, ສະນັ້ນ ຕ້ອງໄດ້ລົງທຶນໃສ່ການພັດທະນາກຸ່ມປະຊາກອນໜຸ່ມນີ້ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ມີຄຸນນະພາບ; ຍົກສະມັດຕະພາບ, ຍົກລະດັບສີມືແຮງງານໃຫ້ສູງຂຶ້ນ ເພື່ອກາຍເປັນກໍາລັງແຮງງານ ເຂົ້າໃນຂະບວນການຜະລິດຕ່າງໆ ແລະ ສາມາດປະກອບສ່ວນໃນການພັດທະນາ ແລະ ສ້າງສາປະເທດຊາດໃນຕໍ່ໜ້າ ແລະ (7) ທ່າແຮງດ້ານການນໍາໃຊ້ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (ICT) ແລະ ວິທະຍາສາດເຕັກໂນໂລຊີທີ່ທັນສະໄໝ: ສຸມການລົງທຶນເຂົ້າໃນການຄົ້ນຄວ້າ ແລະ ນໍາໃຊ້ຜົນສໍາເລັດດ້ານວິທະຍາສາດ-ເຕັກໂນໂລຊີ ທີ່ທັນສະໄໝ ຂອງພາກພື້ນ ແລະ ສາກົນ ເຂົ້າໃນການພັດທະນາຂົງເຂດການຜະລິດ, ວຽກງານການບໍລິຫານ-ການປົກຄອງ ແລະ ຂົງເຂດການບໍລິການ ໃຫ້ນັບມື້ຫຼາຍຂຶ້ນ.

5) ຕັ້ງໜ້າຊຸກຍູ້ສົ່ງເສີມຜູ້ປະກອບການພາຍໃນ ໂດຍສະເພາະ SME ໃຫ້ມີຄວາມເຂັ້ມແຂງ, ສາມາດປະກອບສ່ວນເຂົ້າໃນຕ່ອງໂສ້ການຜະລິດຂອງພາກພື້ນ ແລະ ສາກົນ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ລວມທັງການກຳນົດນະໂຍບາຍ ແລະ ກົນໄກທີ່ຈຳເປັນ ເພື່ອໃຫ້ວິສາຫະກິດພາຍໃນປະເທດສາມາດເຂົ້າເຖິງແຫຼ່ງທຶນ ແລະ ຕະຫຼາດ, ທັງເປັນການດຶງດູດການລົງທຶນ ຂອງເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ເພີ່ມຂຶ້ນທັງປະລິມານ ແລະ ຄຸນນະພາບ, ຫັນປ່ຽນຢ່າງຕັ້ງໜ້າບັນດາລັດວິສາຫະກິດ ໃຫ້ມີປະສິດທິຜົນ, ສ້າງລາຍຮັບໃຫ້ງົບປະມານ ແລະ ຄ່ອຍໆ ກາຍເປັນເຈົ້າພາທາງເທື່ອລະກ້າວ. ຄົ້ນຄວ້ານະໂຍບາຍການຫັນລັດວິສາຫະກິດຈຳນວນໜຶ່ງໄປສູ່ລັດຮ່ວມທຶນກັບເອກະຊົນ ໂດຍຮັບປະກັນໃຫ້ມີກົນໄກບໍລິຫານ-ຄຸ້ມຄອງ ທີ່ເຂັ້ມແຂງ.

6) ປະຕິຮູບການລົງທຶນຂອງລັດໃຫ້ມີປະສິດທິຜົນ, ສາມາດເປັນພື້ນຖານອຳນວຍຄວາມສະດວກໃຫ້ແກ່ການລົງທຶນຂອງພາກເອກະຊົນ ແລະ ການແກ້ໄຂຄວາມທຸກຍາກ, ໃນນີ້ຈະໄດ້ເອົາໃຈໃສ່ ເລີ່ມແຕ່ການກຳນົດ ແລະ ການເລືອກເຟັ້ນໂຄງການໃຫ້ສອດຄ່ອງກັບທິດທາງການພັດທະນາຂອງຊາດ ແລະ ຂອງຂະແໜງການ ເພື່ອຮັບປະກັນໃຫ້ການລົງທຶນບໍ່ກະແຈກກະຈາຍ ແລະ ມີຈຸດສຸມ, ມີຄວາມໂປ່ງໃສ, ວ່ອງໄວ, ໂລ່ງລ່ຽນ ແລະ ເປັນລະບົບຮັດກຸມ, ຊຸກຍູ້ສົ່ງເສີມການລົງທຶນພາກເອກະຊົນ ໃນການຜະລິດເປັນສິນຄ້າທີ່ເປັນທ່າແຮງ ເປັນຕົ້ນ ດ້ານກະສິກຳ ແລະ ໂຮງງານປຸງແຕ່ງຜະລິດຕະພັນກະສິກຳ, ການທ່ອງທ່ຽວ, ທ່າບົກ ແລະ ອື່ນໆ ໃນບັນດາແຂວງທີ່ມີທາງລົດໄຟຜ່ານ, ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາຢ່າງມີເປົ້າໝາຍ.

7) ພັດທະນາໂຄງລ່າງພື້ນຖານ ແລະ ລະບົບສາທາລະນຸປະໂພກຢ່າງມີຈຸດສຸມ, ຍົກສູງລະດັບຊີວິດການເປັນຢູ່ ແລະ ຄຸນນະພາບຊີວິດຂອງປະຊາຊົນໃຫ້ດີຂຶ້ນ ໂດຍການພັດທະນາ ແລະ ຂະຫຍາຍໂຄງລ່າງທີ່ຈຳເປັນໃນການອຳນວຍຄວາມສະດວກໃຫ້ແກ່ການຜະລິດ ແລະ ການຄົມມະນາຄົມຂົນສົ່ງໃຫ້ມີຄວາມສົມດຸນລະຫວ່າງຕົວເມືອງ ແລະ ຊົນນະບົດ, ດຳເນີນການຈັດສັນ ແລະ ຂະຫຍາຍກິດຈະການ ການຜະລິດ ແລະ ອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກາງ ໄປສູ່ຊົນນະບົດ ເພື່ອສ້າງອາຊີບ ແລະ ລາຍໄດ້ໃຫ້ປະຊາຊົນ.

8) ປົກປັກຮັກສາສິ່ງແວດລ້ອມຢ່າງຕັ້ງໜ້າ, ເຝົ້າລະວັງ ແລະ ກຽມຄວາມພ້ອມຮັບມືກັບໄພພິບັດທຳມະຊາດ ແລະ ໄພພິບັດທີ່ມະນຸດສ້າງຂຶ້ນ ຢ່າງທັນການ ໂດຍສະເພາະແມ່ນການເພີ່ມທະວີການຈັດຕັ້ງປະຕິບັດກົດໝາຍ, ລະບຽບການກ່ຽວຂ້ອງໃຫ້ມີຄວາມສັກສິດ, ປະຕິບັດວິໄນຕໍ່ອົງການຈັດຕັ້ງພາກລັດ ແລະ ຫົວໜ່ວຍເສດຖະກິດທຸກພາກສ່ວນທີ່ລະເມີດກົດໝາຍ ແລະ ລະບຽບການ; ພ້ອມດຽວກັນນັ້ນ ກໍຕ້ອງໄດ້ສ້າງຄວາມອາດສາມາດໃຫ້ອົງການທີ່ເຮັດໜ້າທີ່ຄຸ້ມຄອງ-ຕິດຕາມ ໃນຂົງເຂດວຽກງານຊັບພະຍາກອນທຳມະຊາດໃຫ້ມີຄວາມເຂັ້ມແຂງ.

## 7. ບາງໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດສະໜັບສະໜູນເປົ້າໝາຍ 1 (ລາຍລະອຽດມີໃນເອກະສານຊ້ອນທ້າຍ):

### 1. ວຽກງານກະສິກຳ-ປ່າໄມ້:

- **ແຜນງານຄໍ້າປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ**

(1). ໂຄງການຜະລິດພືດສະບຽງ ແລະ ສິນຄ້າ (ໂຄງການໃໝ່)

(2). ໂຄງການສົ່ງເສີມ ການລ້ຽງສັດ, ປາ ແລະ ສັດນໍ້າ (ໂຄງການໃໝ່)

(3). ໂຄງການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ (ໂຄງການໃໝ່)

(4). ໂຄງການພັດທະນາຊົນລະປະທານ-ຊົນລະກະເສດ (ໂຄງການໃໝ່)

(5). ໂຄງການສົ່ງເສີມເຕັກນິກ ແລະ ຈັດຕັ້ງຮູບແບບການຜະລິດ (ໂຄງການໃໝ່)

(6). ໂຄງການພັດທະນາຍົກລະດັບໂຄງລ່າງພື້ນຖານດ້ານເຕັກນິກ (ກົນຈັກ, ໂຮງສີ, ໂຮງອົບ,ໂຮງຄັດເມັດ, ລານຕາກ, ຕະຫຼາດຂາຍຍົກ-ຂາຍຍ່ອຍ, ສາງເຢັນ, ໂຮງງານຜະລິດຝຸ່ນຊີວະພາບ, ໂຮງງານຜະລິດຫົວອາຫານສັດ, ໂຮງຂ້າສັດ...) (ໂຄງການໃໝ່)

(7). ໂຄງການສົ່ງເສີມຫົວໜ່ວຍທຸລະກິດ ກະສິກຳ (ວິທີຈັດຕັ້ງ, ແຜນທຸລະກິດ, ການຖືບັນຊີ, ການເຂົ້າເຖິງສິນເຊື່ອ, ປັດໄຈການຜະລິດ ແລະ ຕະຫຼາດ..) (ໂຄງການໃໝ່)

(8). ໂຄງການພັດທະນາມາດຕະຖານ ສຸຂະນາໄມພືດ, ສັດ ແລະ ການເຊື່ອມໂຍງຕະຫຼາດ (ໂຄງການໃໝ່)

(9). ໂຄງການຄົ້ນຄວ້າທົດລອງ ດ້ານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ (ໂຄງການໃໝ່)

(10). ໂຄງການກຳນົດນະໂຍບາຍ ແລະ ນິຕິກຳສົ່ງເສີມຜະລິດສະບຽງ ແລະ ສິນຄ້າກະສິກຳ (ໂຄງການໃໝ່)

- **ແຜນງານພັດທະນາຊັບພະຍາກອນມະນຸດໃນຂະແໜງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.**

(1). ໂຄງການ ຍົກລະດັບ ຄວາມຮູ້ຄວາມສາມາດ ຂອງພະນັກງານ ໃນຂະແໜງການ (ໂຄງການໃໝ່).

(2). ໂຄງການ ສ້າງນັກສົ່ງເສີມ, ພະນັກງານສີມືແຮງງານ ແລະ ນັກທຸລະກິດ ກະສິກຳ (ໂຄງການໃໝ່).

(3). ໂຄງການ ຍົກລະດັບ ແລະ ປັບປຸງຫຼັກສູດການຮຽນການສອນ ໃນວິທະຍາໄລ ກະສິກຳ ແລະ ປ່າໄມ້ (ໂຄງການໃໝ່).

(4). ໂຄງການ ວິຊາການບ້ານ, ຄອບຄົວຕົວແບບ (ໂຄງການໃໝ່).

(5). ໂຄງການພັດທະນາລະບົບຕາໜ່າງບໍລິການຄວາມຮູ້-ຂໍ້ມູນຂ່າວສານກະສິກຳ ລະຫວ່າງພາກລັດ, ທຸລະກິດ, ຜູ້ຜະລິດກະສິກຳ (ໂຄງການໃໝ່).

**2. ວຽກງານພະລັງງານ ແລະ ບໍ່ແຮ່**

(1). ໂຄງການກໍ່ສ້າງເຂື່ອນໄຟຟ້າ 26 ແຫ່ງ (ໂຄງການໃໝ່)

(2). ໂຄງການຂຸດຄົ້ນ-ປຸງແຕ່ງແຮ່ທາດ ມີ 19 ໂຄງການ (ເປັນຕົ້ນ: ໂຄງການຂຸດຄົ້ນຖ່ານຫີນ ປ້ອນໂຮງງານໄຟຟ້າ ແຂວງເຊກອງ, ໂຄງການຂຸດຄົ້ນເກືອກາລີ ເມືອງໜອງບົກ ແຂວງຄຳມ່ວນ) (ໂຄງການໃໝ່)

(3). ໂຄງການຂຸດຄົ້ນ, ປຸງແຕ່ງ ແລະ ຫຼອມຄຳ ເຊໂປນ ຄືນໃໝ່ ໄລຍະ 10-20 ປີ ສາມາດຜະລິດຄຳແທ່ງໄດ້ 250.000 ອອນຕໍ່ປີ (ໂຄງການສືບຕໍ່)

(4). ໂຄງການກໍ່ສ້າງສາຍສົ່ງ ແຮງດັນ 500kv, 230 kv ແລະ 115 kv 48 ໂຄງການ (ໂຄງການໃໝ່)

**3. ວຽກງານການຄ້າ**

(1). ໂຄງການສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງໃຫ້ເຕີບໂຕມີຄຸນະພາບຕາມທິດສີມດຸນ, ສີຂຽວ ແລະ ຍືນຍົງ (ໂຄງການໃໝ່)

(2). ໂຄງການສົ່ງເສີມການຜະລິດສິນຄ້າ (ໂຄງການໃໝ່)

(3). ໂຄງການສົ່ງເສີມຄວາມອາດສາມາດໃນການແຂ່ງຂັນ ແລະ ການຄ້າຂອງ ສປປ ລາວ (ໂຄງການໃໝ່)

(4). ໂຄງການສົ່ງເສີມ-ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ(ໂຄງການໃໝ່)

**4. ວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

(1). ໂຄງການຊຸກຍູ້, ສະໜັບສະໜູນຜູ້ປະກອບການ SMEs ໄປສູ່ການດຳເນີນທຸລະກິດແບບດິຈິຕອນ (Digital Business Transformation) (ໂຄງການໃໝ່)

(2). ໂຄງການສົ່ງເສີມການພັດທະນາລະບົບສະໜັບສະໜູນການຄ້າ ແລະ ທຸລະກຳອອນລາຍ (Digital Commerce) (ໂຄງການໃໝ່)

## *ເປົ້າໝາຍທີ 2: ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ.*

ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ເພື່ອເປັນກຳລັງຂັບເຄື່ອນການພັດທະນາປະເທດໃຫ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ, ຮັບມືການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ແລະ ການພັດທະນາອຸດສາຫະກຳ 4.0 ຢ່າງເປັນເຈົ້າການ; ສົ່ງເສີມການຄົ້ນຄວ້າ ແລະ ນຳໃຊ້ຜົນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ເຕັກນິກວິຊາການ ແລະ ພູມປັນຍາອັນຍອດຍິ່ງ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ; ປັບປຸງຄຸນນະພາບການສຶກສາໃນທຸກລະດັບໄປພ້ອມກັບການສ້າງເງື່ອນໄຂເຂົ້າເຖິງການສຶກສາ ໂດຍສະເພາະໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ; ສ້າງກຳລັງແຮງງານໃຫ້ມີສີມື, ມີຄວາມສຳນານງານ ແລະ ຫຼາກຫຼາຍສາຂາວິຊາຊີບຕາມຄວາມຕ້ອງການຂອງຕະຫຼາດ, ການຫັນປ່ຽນໂຄງປະກອບເສດຖະກິດໃໝ່ ແລະ ການພັດທະນາເສດຖະກິດ-ສັງຄົມ.

### 1. ແຜນວຽກຈຸດສຸມທີ 1: ການປັບປຸງການບໍລິການດ້ານສາທາລະນະສຸກ ແລະ ໂພຊະນາການຢ່າງທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ

ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍສາທາລະນະສຸກທົ່ວປວງຊົນ ຖືເອົາການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບເປັນຕົ້ນຕໍ, ຖືເອົາການປິ່ນປົວ ແລະ ສະໜອງການບໍລິການຢ່າງທົ່ວເຖິງ, ມີຄຸນນະພາບ, ຍຸຕິທຳ ແລະ ສະເໝີພາບເປັນສຳຄັນ ຖືເອົາຄົນເປັນໃຈກາງ; ຮັບປະກັນການມີສຸຂະພາບແຂງແຮງ ແລະ ສົ່ງເສີມຊີວິດການເປັນຢູ່ທີ່ດີໃຫ້ທຸກຄົນທຸກເພດໄວ ເຮັດໃຫ້ປະຊາຊົນເຂົ້າໃຈຮັກສາສຸຂະພາບ, ຮູ້ຈັກຕອບໂຕ້ຄວາມສ່ຽງຕໍ່ສຸຂະພາບ, ແນໃສ່ປັບປຸງວຽກງານຮັກສາສຸຂະພາບຂັ້ນຕົ້ນໃຫ້ເຂັ້ມແຂງ ເພື່ອໃຫ້ປະຊາຊົນເປັນເຈົ້າການໃນການຮັກສາສຸຂະພາບຂອງຕົນ; ສົມທົບຢ່າງກົມກຽວລະຫວ່າງວຽກງານອະນາໄມ, ກັນພະຍາດ, ສົ່ງເສີມສຸຂະພາບກັບວຽກງານປິ່ນປົວ-ຟື້ນຟູໜ້າທີ່ການ, ວຽກງານການແພດ-ການຢາສະໄໝໃໝ່ ແລະ ການແພດ-ການຢາພື້ນເມືອງເຂົ້າໃນການຮັກສາສຸຂະພາບ ແນໃສ່ປະກອບສ່ວນໃນການນຳພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ປີ 2026, ບັນລຸການປົກຄຸມສຸຂະພາບທົ່ວປວງຊົນ ປີ 2025.

#### 1.1. ຄາດໝາຍ ແລະ ຕົວຊີ້ບອກ:

- ສູ້ຊົນເຮັດໃຫ້ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານໃຫ້ຍັງເຫຼືອ 15% ຂອງປະຊາກອນເປົ້າໝາຍ;
- ອັດຕາສ່ວນຂອງເດັກລຸ່ມ 5 ປີ ທີ່ມີລວງສູງບໍ່ໄດ້ມາດຕະຖານ ໃຫ້ຍັງເຫຼືອ 27% ຂອງປະຊາກອນເປົ້າໝາຍ;
- ອັດຕາການຕາຍຂອງເດັກລຸ່ມ 1 ປີ ໃຫ້ຍັງເຫຼືອ 20/1.000 ຂອງເດັກນ້ອຍເກີດມີຊີວິດ;
- ອັດຕາການຕາຍຂອງເດັກລຸ່ມ 5 ປີ ໃຫ້ຍັງເຫຼືອ 30/1.000 ຂອງເດັກນ້ອຍເກີດມີຊີວິດ;
- ອັດຕາສ່ວນການຕາຍຂອງແມ່ໃຫ້ຍັງເຫຼືອ 110/100.000 ຂອງເດັກນ້ອຍເກີດມີຊີວິດ;
- ອັດຕາການເກີດລູກມີແພດຊ່ວຍ ໃຫ້ໄດ້ 85% ຂອງປະຊາກອນເປົ້າໝາຍ;
- ອັດຕາການສັກຢາວັກຊີນກັນພະຍາດໃນເດັກລຸ່ມ 1 ປີ ໃຫ້ໄດ້ 95% ຂອງປະຊາກອນເປົ້າໝາຍ;
- ອັດຕາການຊົມໃຊ້ນໍ້າສະອາດ ໃຫ້ໄດ້ 95% ຂອງປະຊາກອນທັງໝົດ;
- ອັດຕາການຊົມໃຊ້ວິດຖ່າຍຄອບຄົວ ໃຫ້ໄດ້ 85% ຂອງຄອບຄົວທັງໝົດ;
- ອັດຕາປົກຄຸມປະກັນສຸຂະພາບທົ່ວປວງຊົນ ໃຫ້ໄດ້ 96% ຂອງປະຊາກອນທັງໝົດ;
- ອັດຕາການປະກາດ ແລະ ຮັບຮອງ ບ້ານສາທາລະນະສຸກແບບຢ່າງ ໃຫ້ໄດ້ 85% ຂອງຈຳນວນບ້ານທັງໝົດ.

- ເພີ່ມອາຍຸຍືນສະເລ່ຍ ໃຫ້ໄດ້ສູງກວ່າ 73 ປີ.

**1.2. ວຽກຈຸດສຸມ:**

- ສະໜອງການສົ່ງເສີມສຸຂະພາບ, ກວດກາ, ປິ່ນປົວ ແລະ ຟື້ນຟູໜ້າທີ່ການໃຫ້ມີຄຸນນະພາບ, ທົ່ວເຖິງ ແລະ ເປັນທຳ ໂດຍໄດ້ສຸມໃສ່: (1) ປັບປຸງ ແລະ ຂະຫຍາຍໂຮງໝໍຂັ້ນຕ່າງໆ, ໃນນີ້ ປັບປຸງໂຮງໝໍສູນກາງໃຫ້ມີຄວາມທັນສະໄໝຮອບດ້ານ ແລະ ຫັນໄປສູ່ການກຸ້ມຕົນເອງທາງດ້ານການເງິນເທື່ອລະກ້າວ ຂອງບັນດາໂຮງໝໍສູນກາງ ແລະ ບາງໂຮງໝໍແຂວງ; ປັບປຸງໂຮງໝໍແຂວງ ໃຫ້ສາມາດແກ້ໄຂຜ່າຕັດໃຫຍ່, ຜ່າຕັດກະດູກ, ຜ່າຕັດຜ່ານທໍ່ ແລະ ສຸກເສີນທົ່ວໄປ; ປັບປຸງໂຮງໝໍຊຸມຊົນໃຫ້ສາມາດແກ້ໄຂຜ່າຕັດເກີດລູກ ແລະ ປັບປຸງໂຮງໝໍນ້ອຍໃຫ້ສາມາດເກີດລູກແບບປົກກະຕິໄດ້; ຄົ້ນຄວ້າເພື່ອສະໜອງການບໍລິການສຸຂະພາບຂັ້ນພື້ນຖານຢ່າງຄົບຊຸດ (package) ໂດຍລວມມີ: ການບໍລິການວຽກແມ່ ແລະ ເດັກ, ການສັກຢາກັນພະຍາດ, ສຸຂະພາບຈະເລີນພັນ, ວຽກໂພຊະນາການ ໃຫ້ສອດຄ່ອງຕາມສະພາບເງື່ອນໄຂຂອງໂຮງໝໍແຕ່ລະຂັ້ນ; ໃນນີ້ ເອົາວຽກງານບຸກຄະລາກອນເປັນບູລິມະສິດ, ສືບຕໍ່ຍົກລະດັບການຈັດຕັ້ງປະຕິບັດນະໂຍບາຍ 5 ດີ 1 ພໍໃຈ ໃນແຕ່ລະຂັ້ນ ຄຽງຄູ່ກັບສົ່ງເສີມການລົງທຶນພາກເອກະຊົນ (2) ຊຸກຍູ້ການປະຕິບັດແຜນການກໍ່ສ້າງບຳລຸງພະນັກງານແພດ ແລະ ວິຊາການສາຂາວິຊາຕ່າງໆໃຫ້ເປັນແພດໝໍມືອາຊີບ ໃຫ້ແກ່ເຂດຈຸດສຸມພັດທະນາ ແລະ ເຂດຊົນນະບົດຫ່າງໄກສອກຫຼີກທີ່ຍັງຂາດພະນັກງານ; ບຳລຸງຍົກລະດັບຄູອາຈານ, ກໍ່ສ້າງ ແລະ ປັບປຸງສະຖານການສຶກສາ, ສະໜອງອຸປະກອນທີ່ຈຳເປັນ, ປັບປຸງຫຼັກສູດການຮຽນ-ການສອນ; ບັນຈຸຫຼັກສູດຝຶກອົບຮົມລະບົບຖານຂໍ້ມູນສາທາລະນາສຸກ ແລະ ການເຝົ້າລະວັງຕິດຕາມເຂົ້າໃນຫຼັກສູດການແພດໃຫ້ນັກຮຽນແພດສາມາດເຂົ້າໃຈວິທີການເກັບກຳຕົວເລກ, ການເຝົ້າລະວັງ, ການລາຍງານ ແລະ ປ້ອນຂໍ້ມູນຢ່າງຖືກຕ້ອງ ກ່ອນຈົບຫຼັກສູດການແພດ ແລະ ລົງເຮັດວຽກ ແລະ ການຄົ້ນຄວ້າວິທະຍາສາດໃຫ້ສອດຄ່ອງກັບຄວາມຕ້ອງການໃນການບໍລິການສຸຂະພາບ ເພື່ອສາມາດເຊື່ອມໂຍງເຂົ້າກັບຂົງເຂດ ແລະ ສາກົນເທື່ອລະກ້າວ; ສ້າງກົນໄກປະສານງານລະຫວ່າງສະຖານການສຶກສາສາທາລະນະສຸກ ແລະ ໂຮງໝໍໃຫ້ມີຄວາມກົມກຽວ. ກຳນົດມາດຕະຖານພື້ນຖານໃນການສອບເສັງຂອງແພດໝໍໃນລະດັບສາຂາອາຊີບ ຕົວຢ່າງ: ແພດຊ່ວຍເກີດ, ເຝົ້າລະວັງ, ການສັກຢາ, ການວາງຢາ, ແພດແມ່-ເດັກ, ພະຍາດຕິດຕໍ່, ການຢາ ແລະ ການເກັບ-ປ້ອນຂໍ້ມູນໃນຖານຂໍ້ມູນສາທາລະນະສຸກ ເພື່ອຮັບປະກັນຄວາມສາມາດຂອງແພດ-ໝໍ ໃນການສະໜອງບໍລິການສາທາລະນະສຸກ ໃຫ້ມີຄວາມສອດຄ່ອງກັບຊຸດບໍລິການສຸຂະພາບຂັ້ນພື້ນຖານໃນແຕ່ລະລະດັບ ແລະ ເຊື່ອມໂຍງຜົນຂອງການສອບເສັງກັບການອອກໃບຢັ້ງຢືນທາງດ້ານການແພດ ແລະ ການຝຶກອົບຮົມ/ລະບົບການຮຽນຮູ້ແພດຕະຫຼອດຊີວິດ, (3) ເພີ່ມຄວາມສາມາດໃນການເຝົ້າລະວັງຕິດຕາມ, ປິ່ນປົວ, ຊອກຄົ້ນຫາ ແລະ ໂຕ້ຕອບກໍລະນີພະຍາດລະບາດໃຫ້ໄດ້ໄວ, ປະເມີນຄວາມສ່ຽງ, ປັບປຸງລະບົບເຕືອນໄພ ແລະ ຕອບໂຕ້ໃຫ້ທັນເວລາ ດ້ວຍຕາໜ່າງລະບົບເຝົ້າລະວັງ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໂດຍສະເພາະພະຍາດໂຄວິດ-19 ເພື່ອປ້ອງກັນ ແລະ ກຽມຄວາມພ້ອມຮັບມືກັບການລະບາດພະຍາດອື່ນໆໃນອະນາຄົດ; ເຊື່ອມສານຂໍ້ມູນຈາກການເຝົ້າລະວັງຕິດຕາມ ແລະ ການປິ່ນປົວພະຍາດລະບາດເຂົ້າໃນລະບົບຖານຂໍ້ມູນສາທາລະນາສຸກ (DHIS2), ຍົກລະດັບການປິ່ນປົວພະຍາດໃນຂັ້ນສູນກາງ ແລະ ຫ້ອງວິເຄາະລະດັບພາກ; (4) ຊຸກຍູ້ສົ່ງເສີມການຜະລິດຢາ ແລະ ຜະລິດຕະພັນການແພດພື້ນຖານໃຫ້ກຸ້ມຕົນເອງພາຍໃນ ພ້ອມທັງ ເອົາໃຈໃສ່ຄຸ້ມຄອງ ແລະ ສົ່ງເສີມການປູກ-ຜະລິດພືດທີ່ເປັນຢາ ແລະ ການນຳໃຊ້ຢາພື້ນເມືອງຢ່າງແຂງແຮງ; ປັບປຸງລະບົບຕິດຕາມ ແລະ ເຝົ້າລະວັງຄວາມປອດໄພຂອງອາຫານ ແລະ ຢາ ແລະ ຜະລິດຕະພັນການແພດໃຫ້ດີກວ່າເກົ່າ; ກຳນົດລາຄາຢາ, ອຸປະກອນການແພດ ແລະ ການໃຫ້ບໍລິການປິ່ນປົວໃນຊຸດບໍລິການສຸຂະພາບຂັ້ນພື້ນຖານໃຫ້ມີມາດຕະຖານດຽວກັນ ເພື່ອສາມາດກຳນົດງົບປະມານ ໃຫ້ແກ່ກອງທຶນປະກັນສຸຂະພາບແຫ່ງຊາດ; (5) ປັບປຸງລະບົບການເງິນສາທາລະນະສຸກໃຫ້ເຂັ້ມແຂງ ແລະ ຍືນຍົງ ຮອດຂັ້ນໂຮງໝໍນ້ອຍ, ປະຕິບັດກົນໄກຄຸ້ມຄອງການເງິນຕາມສາຍຕັ້ງຂະແໜງການ, ຄຸ້ມຄອງການເງິນລວມສູນ-ຜ່ານປະຕູດຽວ, ເພີ່ມງົບປະມານ ແລະ ຄວາມຮັບຜິດຊອບໃຫ້ທ້ອງຖິ່ນໃນການຄຸ້ມຄອງຈັດຕັ້ງປະຕິບັດຕາມທິດ 3 ສ້າງ ເພື່ອຮັບປະກັນລະບົບການເງິນສາທາລະນະສຸກໃຫ້ມີຄວາມຍືນຍົງ, ໃຫ້ຈະແຈ້ງ ແລະ ເໝາະສົມໃນແຕ່ລະຂັ້ນ; ນຳໃຊ້ເຄື່ອງມືທີ່ທັນສະໄໝໃນການຄຸ້ມຄອງລາຍຮັບ-ລາຍຈ່າຍຮອດຂັ້ນເມືອງ, ປັບປຸງລະບົບປົກປ້ອງສັງຄົມດ້ານສຸຂະພາບໃຫ້ເປັນກອງທຶນດຽວ ແລະ ສ້າງຄວາມ

ສາມາດຄຸ້ມຄອງກອງທຶນດັ່ງກ່າວໃຫ້ເຂັ້ມແຂງ ເພື່ອບັນລຸການປົກຄຸມປະກັນສຸຂະພາບທົ່ວປວງຊົນ (UHC) ໃນປີ 2025; (6) ປັບປຸງສູນຂໍ້ມູນຂ່າວສານເພື່ອສຸຂະພາບ (ລວມມີຂໍ້ມູນສະຖິຕິການແພດ ແລະ ສາທາລະນະສຸກ, ໄອທີກະຊວງ ແລະ ໂຄສະນາສຸຂະສຶກສາ); ເຊື່ອມໂຍງລະບົບຂໍ້ມູນ ລະຫວ່າງ ສາທາລະນາສຸກ ແລະ ລະບົບຖານຂໍ້ມູນຄຸ້ມຄອງພົນລະເມືອງ; ພ້ອມກັນນັ້ນ, ຖືເອົາກາລະໂອກາດ ໃນໄລຍະການສະກັດກັ້ນ, ປ້ອງກັນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ເພື່ອສ້າງການຫັນປ່ຽນໃນຂະແໜງສາທາລະນະສຸກ, ປຸກລະດົມຖັນແຖວນັກຮົບເສື້ອຂາວ, ສ້າງໃຫ້ມີຂະບວນການວຽກງານ ກໍຄືການປະຕິຮູບ ຂະແໜງສາທາລະນະສຸກປະກອບສ່ວນສຳຄັນໃນການສ້າງໃຫ້ຄົນລາວ ມີສຸຂະພະລາໄມທີ່ເຂັ້ມແຂງຫຼາຍຂຶ້ນ.

- ດ້ານໂພຊະນາການ: ຖືເປັນບູລິມະສິດສຳຄັນວຽກງານສຸຂະພາບແມ່-ເດັກ ແລະ ໂພຊະນາການ ເພື່ອຊຸກຍູ້ການຈະເລີນເຕີບໂຕ ແລະ ພັດທະນາການຂອງເດັກ ໃຫ້ໄດ້ຢ່າງເຕັມສ່ວນ ເພື່ອເປັນພື້ນຖານໃນການສ້າງຄົນລຸ້ນໃໝ່ໃຫ້ມີຄວາມອາດສາມາດໃນການຮຽນຮູ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ; ຊຸກຍູ້ ແລະ ສົ່ງເສີມທຸກພາກສ່ວນກ່ຽວຂ້ອງເຂົ້າຮ່ວມຈັດຕັ້ງປະຕິບັດວຽກງານໂພຊະນາການ ຢ່າງຕັ້ງໜ້າ ແລະ ມີຄວາມສອດຄ່ອງກົມກຽວກັນ ໂດຍສຸມໃສ່ວຽກງານຕົ້ນຕໍຄື: ເຊື່ອມສານວຽກງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ, ວຽກໂພຊະນາການເຂົ້າໃນຊຸມຊົນຢ່າງມີສ່ວນຮ່ວມ; ກຳນົດແຜນການລົງເຮັດວຽກຮ່ວມກັບຊຸມຊົນ ໃຫ້ແທດເໝາະກັບສະພາບຄວາມເປັນຈິງ ໃນແຕ່ລະໄລຍະ ເພື່ອຮັບປະກັນໃຫ້ຊຸມຊົນສາມາດເຂົ້າຮ່ວມ, ປະຢັດເວລາ ແລະ ງົບປະມານ ໃນການເຄື່ອນໄຫວວຽກງານດັ່ງກ່າວ. ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍອາຫານທ່ຽງໃນໂຮງຮຽນ ເພື່ອສົ່ງເສີມໃຫ້ນັກຮຽນໄດ້ຮັບສານອາຫານເພື່ອການເຕີບໂຕ ແລະ ພັດທະນາຢ່າງພຽງພໍ ທັງປະລິມານ ແລະ ຄຸນນະພາບບົນພື້ນຖານຖືກຫຼັກອະນາໄມ-ໂພຊະນາການ ພ້ອມທັງສ້າງຂີດຄວາມສາມາດດ້ານດັ່ງກ່າວໃຫ້ກາຍເປັນວັດທະນະທຳຈາກໂຮງຮຽນໄປສູ່ຄົວເຮືອນ; ສືບຕໍ່ເຮັດການໂຄສະນາເຜີຍແຜ່ວຽກງານສຸຂະອະນາໄມ, ໂພຊະນາການ, ການລ້ຽງລູກດ້ວຍນົມແມ່ຢ່າງດຽວ, ການໃຫ້ອາຫານເດັກນ້ອຍ ແລະ ເດັກອ່ອນ ໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈເຖິງຄວາມສຳຄັນ ແລະ ວິທີການກິນ-ດື່ມໃຫ້ຖືກຫຼັກອະນາໄມ ແລະ ໂພຊະນາການຢ່າງເລິກເຊິ່ງ ແລະ ທົ່ວເຖິງ. ສືບຕໍ່ຂະຫຍາຍການຮັບຮອງ ແລະ ປະກາດບ້ານສາທາລະນະສຸກແບບຢ່າງ ໃຫ້ປົກຄຸມຢ່າງມີຄຸນນະພາບ ແລະ ທົ່ວເຖິງ ຕາມຄາດໝາຍທີ່ວາງໄວ້ໃນແຕ່ລະປີ.

## 2. ແຜນວຽກຈຸດສຸມທີ 2: ປັບປຸງຄຸນນະພາບການສຶກສາໃນທຸກລະດັບໃຫ້ສູງຂຶ້ນ ພ້ອມທັງສ້າງເງື່ອນໄຂການເຂົ້າເຖິງການສຶກສາເພື່ອໃຫ້ມີຄວາມພ້ອມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນທັງເປັນການຮອງຮັບອຸດສາຫະກຳຍຸກ 4.0

ພັດທະນາການສຶກສາໃຫ້ມີຄຸນນະພາບສູງຂຶ້ນ ດ້ວຍການສຸມທຶນຮອນໃສ່ການພັດທະນາຊັບພະຍາກອນມະນຸດຢ່າງມີຈຸດສຸມ ເພື່ອສ້າງຊັບສິນມະນຸດທີ່ມີທັກສະສູງ, ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ, ມີນໍ້າໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ, ມີການຮັກຕໍ່ການຮຽນຕະຫຼອດຊີວິດ ເພື່ອໃຫ້ກາຍເປັນກຳລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ. ຂະຫຍາຍຕາໜ່າງການສຶກສາແຕ່ການສຶກສາກ່ອນໄວຮຽນຈົນຮອດອາຊີວະສຶກສາ ແລະ ມະຫາວິທະຍາໄລໃນລະດັບສູນກາງ ແລະ ທ້ອງຖິ່ນຮາກຖານ, ເຂດຫ່າງໄກສອກຫຼີກ ໃຫ້ທົ່ວເຖິງ; ຮັບປະກັນສິດສະເໝີພາບໃນການເຂົ້າເຖິງການສຶກສາຂອງຜູ້ອາໄສຢູ່ຊົນນະບົດ, ກຸ່ມຄົນທີ່ມີຄວາມສ່ຽງ ແລະ ກຸ່ມຄົນທີ່ມີຄວາມຕ້ອງການພິເສດ ແລະ ຕ້ອງເອົາໃຈໃສ່ພິເສດຕໍ່ເພດຍິງ. ພ້ອມດຽວກັນນັ້ນ, ຕ້ອງໄດ້ສົ່ງເສີມຢ່າງເຂັ້ມແຂງໃນການນຳໃຊ້ເຄື່ອງມືວິທະຍາສາດ ແລະ ລະບົບໄອທີເຂົ້າໃນການສຶກສາ ລວມທັງການຮໍ່າຮຽນຜ່ານລະບົບດິຈິຕອນ.

**2.1. ຄາດໝາຍ ແລະ ຕົວຊີ້ບອກ:**

- ອັດຕາເຂົ້າຮຽນຂອງເດັກ 5 ປີ ໃນຂັ້ນການສຶກສາກ່ອນໄວຮຽນສະເລ່ຍໃນທົ່ວປະເທດບໍ່ໃຫ້ຫຼຸດ 86% ໃນ 2025.
- ອັດຕານັກຮຽນເຂົ້າໃໝ່ ປ.1 ໃຫ້ບັນລຸສູງກວ່າ 98%.
- ອັດຕາເຂົ້າຮຽນໃໝ່ລວມຂັ້ນ ປ.5 ໃຫ້ບັນລຸສູງກວ່າ 99%.
- ອັດຕາປະລະການຮຽນຂັ້ນ ປ.1 ໃຫ້ຫຼຸດຈາກ 6,4 ຍັງເຫຼືອ 4%.
- ອັດຕາຈົບຊັ້ນປະຖົມສຶກສາໃຫ້ບັນລຸສູງກວ່າ 95%.
- ອັດຕາການເລື່ອນຂັ້ນຈາກ ປ.5 ຫາ ມ.1 ໃຫ້ບັນລຸສູງກວ່າ 90%.
- ອັດຕາປະລະຂອງນັກຮຽນຊັ້ນປະຖົມໃຫ້ຫຼຸດລົງຈາກ 4,3% ຍັງເຫຼືອ 2%.
- ດັດຊະນີສະເໝີພາບຍິງ-ຊາຍ ຂອງອັດຕາເລື່ອນຂັ້ນຈາກ ປ.5 ຫາ ມ.1 ໃຫ້ບັນລຸໄດ້ລະຫວ່າງ 0,97-1,03.
- ອັດຕາການເຂົ້າຮຽນໃໝ່ລວມຂັ້ນ ມ.4 ໃຫ້ບັນລຸສູງກວ່າ 74%.
- ອັດຕາປະລະຊັ້ນມັດທະຍົມຕອນຕົ້ນໃຫ້ຫຼຸດຈາກ 10,3% ຍັງເຫຼືອ 8%.
- ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນໃຫ້ໄດ້ຮັບການບຳລຸງ ຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ໃຫ້ໄດ້ 150.000 ຄົນ.
- ຄູຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາ ໄດ້ຮັບການຝຶກອົບຮົມ ບໍ່ໃຫ້ຫຼຸດ 10% ຕໍ່ປີ.
- ສູ້ຊົນໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໃຫ້ໄດ້ 5% ທຽບໃສ່ຈຳນວນນັກຮຽນທີ່ຈົບມັດທະຍົມຕອນຕົ້ນ ພາຍໃນປີ 2025.
- ສູ້ຊົນສົ່ງເສີມໃຫ້ນັກສຶກສາທີ່ສະໝັກເຂົ້າຮຽນຢູ່ມະຫາວິທະຍາໄລ ໄດ້ເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ໃຫ້ໄດ້ 12.500 ຄົນ.
- ສັດສ່ວນມວນຊົນທຸກເພດ, ທຸກໄວໄດ້ເຂົ້າຮ່ວມການຫັດກາຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາ-ກາຍະກຳ ບັນລຸໄດ້ 50% ຂອງພົນລະເມືອງ.
- ອັດຕາການຮູ້ໜັງສືຂອງປະຊາກອນອາຍຸ 15-24 ປີ ໃຫ້ບັນລຸ 91%.

**2.2. ວຽກງານຈຸດສຸມ:**

- **ການສຶກສາກ່ອນໄວຮຽນ:** ການລົງທຶນໃສ່ການສຶກສາກ່ອນໄວຮຽນແມ່ນເປັນບູລິມະສິດທີ່ສຳຄັນ ເພື່ອປັບປຸງຄຸນນະພາບການສຶກສາ ຄຽງຄູ່ກັບການຮັກສາສຸຂະພາບ, ໂພຊະນາການ, ສຸຂາພິບານ, ສຸຂະອະນາໄມ, ຄວາມສາມາດ ແລະ ທັກສະໃນການພັດທະນາແບບຮອບດ້ານຂອງເດັກ ເພື່ອໃຫ້ເດັກສາມາດເຂົ້າໃຈ ແລະ ສາມາດຮຽນຮູ້ໄດ້ ໂດຍນຳໃຊ້ວິທີການ ແລະ ກົນໄກທີ່ແຕກຕ່າງກັນ ໂດຍການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ, ການມີສ່ວນຮ່ວມຂອງຊຸມຊົນ ເພື່ອຮັບປະກັນການສະໜອງອາຫານທີ່ມີທາດບຳລຸງຢ່າງພຽງພໍ, ພ້ອມທັງໃຫ້ຄວາມຮູ້ ແລະ ທັກສະການລ້ຽງດູເດັກແກ່ພໍ່ແມ່-ຜູ້ປົກຄອງ ແລະ ການສະໜັບສະໜູນອື່ນໆ ເພື່ອຮັບປະກັນໃຫ້ເດັກນ້ອຍກຽມພ້ອມກ່ອນເຂົ້າໂຮງຮຽນປະຖົມຢ່າງເປັນທາງການ ແລະ ໄດ້ຮັບທັກສະພື້ນຖານທີ່ຈຳເປັນ ເພື່ອໃຫ້ສາມາດສືບຕໍ່ຮຽນໃນລະດັບສູງຂຶ້ນໄປ.
- **ການສຶກສາຊັ້ນປະຖົມ:** ຍົກສູງຄຸນນະພາບການຮຽນ-ການສອນໃນຊັ້ນປະຖົມ ໂດຍສະເພາະແມ່ນປັບປຸງທັກສະການຮູ້ໜັງສື ແລະ ການຄິດໄລ່ເລກຂອງນັກຮຽນປະຖົມ ໂດຍເອົາໃຈໃສ່ຍົກສູງຄວາມຮູ້, ຄວາມສາມາດ ແລະ ຄວາມຫ້າວຫັນຂອງຄູ, ຄວາມສາມາດ ແລະ ຄວາມເປັນເຈົ້າການຂອງອຳນວຍການໂຮງຮຽນ ໃນການຄຸ້ມຄອງໂຮງຮຽນ ເພື່ອປັບປຸງຜົນໄດ້ຮັບການຮຽນຂອງນັກຮຽນ. ການສ້າງຕັ້ງກຸ່ມໂຮງຮຽນ ເພື່ອເປັນຈຸດໃຈກາງໃນການພັດທະນາອາຊີບຄູຢ່າງຕໍ່ເນື່ອງ ແລະ ການຊ່ວຍເຫຼືອດ້ານວິຊາການແກ່ຄູອາຈານ ລວມທັງການສ້າງລະບົບໃຫ້ຄຳປຶກສາດ້ານວິຊາການຂອງຄູ; ພ້ອມດຽວກັນນີ້, ກໍ່ໃຫ້ເອົາໃຈໃສ່ຕິດຕາມ, ກວດກາ ແລະ ປະເມີນຜົນການປະຕິບັດໜ້າທີ່ຄູ ແລະ ຜູ້ອຳນວຍການໂຮງຮຽນຢ່າງເປັນປະຈຳ ເພື່ອເປັນການກະຕຸກຊຸກຍູ້ໃຫ້ຜູ້ທີ່ປະຕິບັດໜ້າທີ່ຂອງຕົນໄດ້ດີ ແລະ ຊອກຫາວິທີການຊ່ວຍ

ເຫຼືອຜູ້ທີ່ຂາດທັກສະ ໂດຍມີແນວທາງທີ່ຈະແຈ້ງ ແລະ ກົນໄກເພື່ອກະຕຸ້ນຄູໃຫ້ກາຍເປັນຄູສອນດີເດັ່ນ. ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳດີຈີຕອນ ເພື່ອອຳນວຍຄວາມສະດວກໃນການຮຽນຮູ້, ລວມທັງທັກສະໃນສັດຕະວັດທີ 21 ກໍຄື ທັກສະການແກ້ໄຂບັນຫາ, ທັກສະດ້ານສະຕິປັນຍາ, ການຮ່ວມມື-ການສື່ສານ, ຄວາມຄິດສ້າງສັນ-ນະວັດຕະກຳ, ຄວາມຮັບຜິດຊອບສ່ວນບຸກຄົນຄວາມສາມາດທາງດ້ານສັງຄົມ ແລະ ວັດທະນະທຳນາໆຊາດ.

- **ການສຶກສາຊັ້ນມັດທະຍົມ:** ຍົກສູງຄຸນນະພາບການຮຽນ-ການສອນ ໂດຍສຸມໃສ່ຍົກລະດັບຄູສອນປະຈຳການ ແລະ ຈັດສັນຄູໃຫ້ສອນຕາມຄວາມຊ່ຽວຊານດ້ານວິຊາການຂອງຄູ. ສະໜອງການສຶກສາຊັ້ນມັດທະຍົມຕອນຕົ້ນທີ່ມີປະສິດທິຜົນ, ຮັບປະກັນຄວາມຍືນຍົງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ. ປັບປຸງຄຸນນະພາບຂອງການສຶກສາຊັ້ນມັດທະຍົມຕອນປາຍ ເພື່ອສົ່ງເສີມໃຫ້ນັກຮຽນທີ່ມີພອນສະຫວັນຮຽນເກັ່ງໃນສາຍວິຊາໃດໜຶ່ງໄດ້ເຂົ້າຮຽນ ແລະ ລົງເລິກໃນສາຍວິຊານັ້ນ ໂດຍມີການພັດທະນາຫຼັກສູດການສຶກສາຊັ້ນມັດທະຍົມຕອນປາຍໃຫ້ເປັນຫຼາຍສາຍ ເຊັ່ນ: ວິທະຍາສາດທຳມະຊາດ ແລະ ວິທະຍາສາດສັງຄົມ; ສົ່ງເສີມການນຳໃຊ້ ICT ເຂົ້າໃນການຮຽນ-ການສອນ ພ້ອມທັງ ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳດີຈີຕອນ ເພື່ອອຳນວຍຄວາມສະດວກໃນການຮຽນຮູ້, ລວມທັງທັກສະໃນສັດຕະວັດທີ 21. ນຳໃຊ້ການສອບເສັງ ເພື່ອວັດແທກລະດັບທັກສະການອ່ານ ແລະ ຄິດໄລ່ເລກຂັ້ນຕ່ຳຂອງມາດຕະຖານສາກົນ ຢ່າງເປັນປົກກະຕິ ເພື່ອຕິດຕາມຄຸນນະພາບການສຶກສາໃນໂຮງຮຽນໃນທຸກລະດັບ.

- **ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ:** ສືບຕໍ່ແຜນງານລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາໃຫ້ແກ່ກຸ່ມເປົ້າໝາຍ ໂດຍສະເພາະຜູ້ທີ່ມີອາຍຸ 15-40 ປີ ແລະ ສະໜອງການຝຶກວິຊາຊີບຂັ້ນພື້ນຖານໃຫ້ແກ່ ຜູ້ອອກໂຮງຮຽນ ແລະ ຜູ້ຫວ່າງງານ ເພື່ອເປັນການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ຕ້ອງມີການຈັດຕັ້ງທີ່ຖືກຕ້ອງ ແລະ ສະ ໜອງຊັບພະຍາກອນໃຫ້ພຽງພໍ ແລະ ສົ່ງເສີມການມີສ່ວນຮ່ວມຂອງຜູ້ປະກອບການເພື່ອກຳນົດນະໂຍບາຍ ແລະ ສິ່ງຈູງໃຈ ເພື່ອຊຸກຍູ້ການຮັບສະໝັກນັກຮຽນທີ່ຈົບຈາກໂຮງຮຽນສາມັນ ແລະ ຫຼັກສູດຝຶກວິຊາຊີບ, ຮັບປະກັນຄວາມຍຸຕິທຳ ແລະ ການສະໜອງຄ່າແຮງງານທີ່ສັງຄົມຍອມຮັບໄດ້.

- **ອາຊີວະສຶກສາ ແລະ ອົບຮົມວິຊາຊີບ**: ເພື່ອເຮັດໃຫ້ການສະໜອງສີມືແຮງງານ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານ ຕ້ອງໄດ້ຮ່ວມມືກັບພາກທຸລະກິດຜູ້ໃຊ້ແຮງງານ ເພື່ອພັດທະນາ ແລະ ປັບປຸງຫຼັກສູດສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ເປັນມາດຕະຖານດຽວກັນ ແລະ ມີການຕິດຕາມຄຸນນະພາບຂອງຫຼັກສູດຢ່າງເປັນປົກກະຕິ ເພື່ອຕອບສະໜອງຄວາມຕ້ອງການໃໝ່ຂອງຕະຫຼາດແຮງງານ; ເຊື່ອມສານຂໍ້ມູນກ່ຽວກັບນັກສຶກສາທີ່ຈົບຫຼັກສູດເຂົ້າກັບລະບົບຖານຂໍ້ມູນຂ່າວສານຕະຫຼາດແຮງງານ; ພ້ອມດຽວກັນນັ້ນ, ກໍຕ້ອງໄດ້ສ້າງສິ່ງອຳນວຍຄວາມສະດວກ ແລະ ສະພາບແວດລ້ອມທີ່ດີ, ສະໜອງ ແລະ ຍົກລະດັບອຸປະກອນການຮຽນ-ການສອນ, ເຄື່ອງມື, ເຄື່ອງກົນຈັກ, ການຝຶກງານ ໃຫ້ສາມາດປະຕິບັດຕົວຈິງໄປຄຽງຄູ່ກັບການຮຽນພາກທິດສະດີ. ສົ່ງເສີມການມີສ່ວນຮ່ວມຂອງພາກເອກະຊົນ ໃນການຝຶກງານຂອງນັກສຶກສາ ເພື່ອໃຫ້ນັກສຶກສາເຫຼົ່ານັ້ນສາມາດເຂົ້າສູ່ການຖືກຈ້າງງານໄດ້. ຍົກສູງຄວາມໝາຍຄວາມສຳຄັນຂອງສະຖານອາຊີວະສຶກສາ ເພື່ອໃຫ້ມີບົດບາດໃນການສ້າງບຸກຄະລາກອນທີ່ຈະເຂົ້າສູ່ຕະຫຼາດແຮງງານໃຫ້ໄດ້ມາດຕະຖານຂອງພາກລັດ ແລະ ເອກະຊົນ; ນອກຈາກນີ້ ການສ້າງຫຼັກສູດຕໍ່ເນື່ອງ ເພື່ອໃຫ້ຜູ້ທີ່ຈົບຫຼັກສູດ ອາຊີວະສຶກສາສາມາດສືບຕໍ່ຮຽນໃນລະດັບການສຶກສາຊັ້ນສູງ; ພ້ອມກັນນີ້, ກໍ່ຕ້ອງມີລະບົບການຈັດປະເພດ ຫຼື ຈັດອັນດັບສະຖານອາຊີວະສຶກສາ ເພື່ອສົ່ງເສີມການແຂ່ງຂັນ ແລະ ປັບປຸງການບໍລິຫານສະຖາບັນໃຫ້ໄດ້ຕາມມາດຕະຖານ. ສົ່ງເສີມການສະໜັບສະໜູນການຮ່ວມມືລະຫວ່າງສະຖານອາຊີວະສຶກສາ ແລະ ບັນດາບໍລິສັດຢູ່ຂັ້ນທ້ອງຖິ່ນ (PPP).

- **ການສຶກສາຊັ້ນສູງ**: ຍົກສູງຄຸນນະພາບຂອງນັກສຶກສາທີ່ຮຽນຈົບ, ຫຼັກສູດການຮຽນ-ການສອນ ແລະ ສ້າງຄວາມສາມາດໃນການຄົ້ນຄວ້າໃນຫົວຂໍ້ຕ່າງໆ. ປັບປຸງມາດຕະຖານ ແລະ ຄວາມໜ້າເຊື່ອຖືໃນລະດັບພາກພື້ນ ແລະ ສາກົນ ດ້ວຍການຮ່ວມມືຢ່າງກວ້າງຂວາງກັບສະຖາບັນ ແລະ ມະຫາວິທະຍາໄລທີ່ມີຊື່ສຽງ, ເອົາໃຈໃສ່ສ້າງທັກສະໃນການເປັນຜູ້ນຳ, ຄວາມສາມາດດ້ານພາສາ, ຄວາມສາມາດໃນການວິເຄາະ ແລະ ແກ້ໄຂບັນຫາ. ໃຫ້ການຝຶກງານເພື່ອເຮັດໃຫ້ຜູ້ຝຶກງານມີຄວາມພ້ອມ ໃນເວລາທີ່ຮຽນຈົບ ແລະ ດຳເນີນວຽກຕົວຈິງຫຼັງຮຽນຈົບ. ສະໜອງທຶນການສຶກສາແກ່

ນັກສຶກສາທີ່ຮຽນໃນຂົງເຂດບູລິມະສິດໃນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະ ສາຍວິຊາວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ, ຄະນິດສາດ (STEM); ສ້າງຄວາມເຂັ້ມແຂງໃຫ້ລະບົບການຮັບປະກັນຄຸນນະພາບຂອງການສຶກສາຊັ້ນສູງ; ສ້າງຄວາມເປັນເລີດໃນການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ, ການບໍລິການດ້ານວິຊາການໂດຍສະເພາະດ້ານວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ, ຄະນິດສາດ (STEM) ແລະ ປັນຍາປະດິດ ໃຫ້ບັນດາມະຫາວິທະຍາໄລ; ນຳໃຊ້ຜົນການສຶກສາເພື່ອຕິດຕາມນັກຮຽນທີ່ຮຽນຈົບໃນແຕ່ລະປີ ເພື່ອເປັນພື້ນຖານໃນການປັບປຸງຫຼັກສູດ, ສົ່ງເສີມການນຳໃຊ້ ICT ໃນການຮຽນ-ການສອນ ແລະ ການພັດທະນາປັນຍາປະດິດ ໂດຍການກຳນົດນະໂຍບາຍທີ່ຈະແຈ້ງ ແລະ ສອດຄ່ອງກັບສະພາບການປ່ຽນແປງໃໝ່, ສ້າງຄວາມເຂັ້ມແຂງໃຫ້ມະຫາວິທະຍາໄລ ເພື່ອສາມາດກຸ້ມຕົນເອງທາງດ້ານການເງິນເທື່ອລະກ້າວ.

- **ການພັດທະນາ ແລະ ການນຳໃຊ້ຄູ:** ເພື່ອປັບປຸງຄຸນນະພາບການສອນຂອງຄູ ຕ້ອງພັດທະນາຫຼັກສູດການຝຶກອົບຮົມໃຫ້ແກ່ຄູ, ພ້ອມທັງ ມີການປະເມີນຄວາມຮູ້ ແລະ ທັກສະວິຊາອາຊີບຄູ ທຸກລະດັບຕາມສາຂາວິຊາຊີບໃຫ້ໄດ້ມາດຕະຖານ. ວິທະຍາໄລສ້າງຄູທຸກແຫ່ງຕ້ອງເຮັດໜ້າທີ່ເປັນສູນພັດທະນາວິຊາຊີບສຳລັບການບໍລິການໃຫ້ແກ່ຄູກ່ອນປະຈຳການ ແລະ ຄູປະຈຳການ ລວມທັງຄູສຶກສານິເທດ; ພ້ອມທັງ ປັບປຸງລະບົບການສ້າງ ແລະ ຍົກລະດັບຄູຢ່າງເປັນປົກກະຕິ ໂດຍເລືອກເອົາພຽງຜູ້ມີພອນສະຫວັນ ແລະ ເກັ່ງທາງດ້ານວິຊາການໃດໜຶ່ງ ທີ່ຈະໄປສຶກສາຕໍ່ໃນສາຂານັ້ນ ແລະ ມີນະໂຍບາຍສຳລັບນັກຮຽນຄູທີ່ຮຽນດີສອນເກັ່ງ; ສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳດິຈິຕອນ ເພື່ອສະໜັບສະໜູນການສ້າງຄູ ແລະ ພັດທະນາວິຊາຊີບຢ່າງຕໍ່ເນື່ອງ; ສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງລະຫວ່າງສະຖາບັນສ້າງຄູ ກັບຄະນະສຶກສາສາດຂອງມະຫາວິທະຍາໄລ ເພື່ອປັບປຸງໃຫ້ມີຄວາມເປັນເອກະພາບກັນ.

- **ການພັດທະນາກິລາ-ກາຍະກຳລາວ:** ເອົາໃຈໃສ່ສົ່ງເສີມມວນຊົນເຂົ້າໃນການອອກກຳລັງກາຍ ເພື່ອສຸຂະພາບ, ສົ່ງເສີມກິລາພື້ນເມືອງຂອງລາວ ພ້ອມທັງພັດທະນາ ແລະ ຍົກລະດັບນັກກິລາອາຊີບ, ຄູຝຶກ ແລະ ກຳມະການຕັດສິນໃຫ້ຫຼາຍຂຶ້ນຕື່ມ ເພື່ອໃຫ້ໄດ້ມາດຕະຖານພາກພື້ນ; ປັບປຸງ, ນຳໃຊ້ ແລະ ຄຸ້ມຄອງສິ່ງອຳນວຍຄວາມສະດວກດ້ານກິລາ ໃນທຸກລະດັບໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

- ການພັດທະນາການສຶກສາດິຈິຕອນ (Digital Learning), ສົ່ງເສີມການນຳໃຊ້ ໄອຊີທີ ເຂົ້າໃນວຽກງານບໍລິຫານການສຶກສາ, ການຮຽນການສອນ, ການພັດທະນາຫຼັກສູດການຮຽນ-ການສອນ ໂດຍມີຫຼັກສູດວິທະຍາສາດ ແລະ ເຕັກໂນໂລຊີສື່ສານແຕ່ຊັ້ນປະຖົມ. ພັດທະນາເຄື່ອງມືການຮຽນການສອນທາງໄກ (e-Learning) ເພື່ອຕອບສະໜອງການສຶກສາໃຫ້ທົ່ວເຖິງ. ຊຸກຍູ້ການພັດທະນາຫຼັກສູດການຮຽນເຕັກໂນໂລຊີທີ່ທັນສະໄໝ ແລະ ທັນການ. ຫັນການສຶກສາລະດັບຊັ້ນສູງ ແລະ ມະຫາວິທະຍາໄລ ໄປສູ່ການນຳໃຊ້ເຄື່ອງມືອັດສະລິຍະ (Smart Digital Tools), ຂະຫຍາຍເຄືອຂ່າຍອິນເຕີເນັດສຳລັບການຮຽນ-ການສອນ ແລະ ປັບປຸງຄ່າບໍລິການອິນເຕີເນັດສຳລັບການຮຽນ-ການສອນໃນອັດຕາພິເສດ.

## 3. ແຜນວຽກຈຸດສຸມທີ 3: ກຳລັງແຮງງານໄດ້ຮັບການພັດທະນາດ້ານສີມື, ຄວາມຊຳນານງານ ແລະ ມີລະບຽບວິໄນສູງຂຶ້ນ ທັງມີຄວາມຫຼາກຫຼາຍວິຊາຊີບ ແລະ ມີວຽກເຮັດງານທຳທີ່ໝັ້ນຄົງ ແລະ ມີລາຍໄດ້ສູງຂຶ້ນ, ສາມາດຕອບສະໜອງຕາມຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ

ພັດທະນາກຳລັງແຮງງານໃຫ້ມີຄຸນນະພາບ ເພື່ອກາຍເປັນປັດໄຈທີ່ສຳຄັນ ແລະ ກຳລັງການຜະລິດຕົ້ນຕໍ ໃນການພັດທະນາເສດຖະກິດ-ສັງຄົມຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ດຸນດ່ຽງແຮງງານໃຫ້ສົມສ່ວນກັບຄວາມຕ້ອງການຂອງຕະຫຼາດແຮງງານ, ສົ່ງເສີມການສ້າງວຽກເຮັດງານທຳຕາມຂະແໜງການເສດຖະກິດທັງໃນຕົວເມືອງ ແລະ ຊົນນະບົດໃຫ້ມີຄວາມໝັ້ນຄົງ ແລະ ຫຼາກຫຼາຍສາຂາອາຊີບ, ຍົກສູງຜະລິດຕະພາບແຮງງານສູງຂຶ້ນ ແລະ ມີລາຍໄດ້ທີ່ເໝາະສົມ, ສ້າງຄວາມເຂັ້ມແຂງສາຍພົວພັນແຮງງານ, ຄວາມປອດໄພ ແລະ ສຸຂະພາບແຮງງານເພື່ອປົກປ້ອງສິດ ແລະ ຜົນ

ປະໂຫຍດຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ, ຊຸກຍູ້ຊ່ວຍເຫຼືອແຮງງານທີ່ດ້ອຍໂອກາດ ໃຫ້ສາມາດເຂົ້າເຖິງຕະຫຼາດແຮງງານ ແລະ ປະກອບສ່ວນໃນກຳລັງແຮງງານ ເພື່ອພັດທະນາເສດຖະກິດ-ສັງຄົມ ໂດຍການຕິດຕາມຕົວເລກແຮງງານແຍກຕາມປະເພດແຮງງານ ແລະ ວິຊາຊີບ, ເພດ, ຊົນເຜົ່າ, ລະດັບການສຶກສາ ແລະ ຄວາມພິການຕ່າງໆ ເພື່ອກຳນົດນະໂຍບາຍທີ່ເໝາະສົມ.

**3.1. ຄາດໝາຍ ແລະ ຕົວຊີ້ບອກ:**

- ພັດທະນາສີມືແຮງງານຢູ່ສະຖາບັນ ແລະ ສູນພັດທະນາສີມືແຮງງານໃນລະດັບຕ່າງໆ ໃຫ້ໄດ້ 10.000 ຄົນ ແລະ ຝຶກເຄື່ອນທີ່ຕາມສາຂາອາຊີບຕ່າງໆ ໃຫ້ໄດ້ 5.000 ຄົນ.
- ຊຸກຍູ້ສົ່ງເສີມບັນດາຫົວໜ່ວຍແຮງງານ ພັດທະນາສີມືແຮງງານ ຕາມສາຂາອາຊີບຕ່າງໆ ໃຫ້ໄດ້ 25.000 ຄົນ.
- ທົດສອບມາດຕະຖານສີມືແຮງງານ ໃນ 32 ສາຂາອາຊີບ ໃຫ້ໄດ້ຢ່າງໜ້ອຍ 1.700 ຄົນ.
- ພັດທະນາສີມືແຮງງານຂອງຫົວໜ່ວຍແຮງງານ ເປັນມາດຕະຖານສີມືແຮງງານແຫ່ງຊາດ ໃຫ້ໄດ້ 10 ສາຂາອາຊີບ.
- ຊຸກຍູ້ ແລະ ສົ່ງເສີມ ການຈັດແຂ່ງຂັນສີມືແຮງງານລະດັບທ້ອງຖິ່ນໃຫ້ເປັນປົກກະຕິຫຼາຍຂຶ້ນ, ການແຂ່ງຂັນລະດັບຊາດ 2 ຄັ້ງ, ເຂົ້າຮ່ວມການແຂ່ງຂັນສີມືແຮງງານລະດັບອາຊຽນ 2 ຄັ້ງ ແລະ ເປັນເຈົ້າພາບ 1 ຄັ້ງ, ລະດັບສາກົນ 1 ຄັ້ງ.
- ປັບປຸງສະຖາບັນ ແລະ ສູນພັດທະນາສີມືແຮງງານ 7 ແຫ່ງ ພ້ອມທັງສະໜອງອຸປະກອນ ເພື່ອຍົກລະດັບການພັດທະນາສີມືແຮງງານໃຫ້ມີຄຸນນະພາບສູງຂຶ້ນ ແລະ ສົ່ງເສີມໃຫ້ພາກສ່ວນເສດຖະກິດລົງທຶນສ້າງສູນພັດທະນາສີມືແຮງງານ ໃຫ້ໄດ້ 2 ແຫ່ງ.
- ສົ່ງເສີມການຈັດຫາວຽກເຮັດງານທຳ ໃນຕະຫຼາດແຮງງານຕາມຂະແໜງເສດຖະກິດຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 392.197 ຄົນ, ໃນນີ້; ຜູ້ຢູ່ນອກກຳລັງແຮງງານທີ່ພ້ອມເຂົ້າສູ່ການເຮັດວຽກ 355.620 ຄົນ ແລະ ຜູ້ຫວ່າງງານ 36.577 ຄົນ.
- ຫຼຸດຜ່ອນອັດຕາຫວ່າງງານ ເປັນ 15% ໃນປີ 2025.
- ຊຸກຍູ້ໃຫ້ກຳລັງແຮງງານ ເພີ່ມເປັນ 2,69 ລ້ານຄົນ ເທົ່າກັບ 48,3% ຂອງຜູ້ຢູ່ໃນເກນອາຍຸອອກແຮງງານ.
- ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານໃຫ້ສາມາດຕອບສະໜອງຂໍ້ມູນພື້ນຖານ 17 ຕົວຊີ້ບອກຂອງຕະຫຼາດແຮງງານ ແລະ ຕົວຊີ້ບອກຂອງເປົ້າໝາຍການພັດທະນາແບບຍືນຍົງ.
- ໂຄສະນາເຜີຍແຜ່ ແລະ ກວດກາການຈັດຕັ້ງປະຕິບັດກົດໝາຍແຮງງານຂອງຫົວໜ່ວຍແຮງງານໃຫ້ໄດ້ 12.500 ຄັ້ງ, ຊຸກຍູ້ຫົວໜ່ວຍແຮງງານໃຫ້ໄດ້ມາດຕະຖານແຮງງານແຫ່ງຊາດໃຫ້ໄດ້ 100 ແຫ່ງ, ຊຸກຍູ້ຫົວໜ່ວຍແຮງງານສ້າງ ແລະ ປັບປຸງລະບຽບພາຍໃນ ໃຫ້ໄດ້ 500 ແຫ່ງ, ສ້າງໃຫ້ມີສັນຍາແຮງງານ ໃຫ້ໄດ້ 500 ແຫ່ງ, ຊຸກຍູ້ຫົວໜ່ວຍແຮງງານໃຫ້ຜູ້ອອກແຮງງານ ໄດ້ຮັບການກວດສຸຂະພາບປະຈຳປີ ໃຫ້ໄດ້ 100 ແຫ່ງ, ສ້າງຕັ້ງໜ່ວຍງານປອດໄພ ແລະ ສຸຂະພາບແຮງງານ ໃນສະຖານທີ່ເຮັດວຽກ ໃຫ້ໄດ້ 100 ແຫ່ງ.
- ສູ້ຊົນແກ້ໄຂຂໍ້ຂັດແຍ່ງແຮງງານທີ່ໄດ້ຮັບການຮ້ອງຮຽນ ໃຫ້ໄດ້ຮັບການໄກ່ເກ່ຍ 80% ໃນແຕ່ລະປີ, ລຶບລ້າງການນຳໃຊ້ແຮງງານເດັກ ໃນຮູບແບບທີ່ຮ້າຍແຮງ ແລະ ເປັນອັນຕະລາຍ ໃຫ້ໄດ້ 100%.

**3.2. ວຽກງານຈຸດສຸມ:**

- ພັດທະນາລະບົບຖານຂໍ້ມູນຂ່າວສານຕະຫຼາດແຮງງານໃຫ້ມີຄວາມເຂັ້ມແຂງ ແລະ ເປັນລະບົບ ເພື່ອໃຫ້ສາມາດສະໜອງຂໍ້ມູນ ໃນການດຸນດ່ຽງໂຄງປະກອບກຳລັງແຮງງານ, ການດັດສົມກຳລັງແຮງງານໃຫ້ສົມສ່ວນກັບຄວາມຕ້ອງການຂອງຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ ເພື່ອເປັນພື້ນຖານໃຫ້ແກ່ການສ້າງແຜນພັດທະນາສີມືແຮງງານ ແລະ ການຈັດຫາວຽກເຮັດງານທຳ ຕາມຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານ ຕາມຂະແໜງເສດຖະກິດ ໃຫ້ໄດ້ຄຸນນະພາບ ແລະ ຄ່ອງຕົວຍິ່ງຂຶ້ນ.

- ສ້າງ, ປັບປຸງໂຄງລ່າງພື້ນຖານ ແລະ ກົນໄກການພັດທະນາສີມືແຮງງານ ໂດຍການມີສ່ວນຮ່ວມລະຫວ່າງພາກລັດ, ພາກເອກະຊົນ, ຫົວໜ່ວຍແຮງງານ, ຄູ່ຮ່ວມພັດທະນາ ແລະ ໂຄງການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ມີຄວາມກົມກຽວກັນ ໃນການສະໜອງການສ້າງຂີດຄວາມສາມາດ ແລະ ການຝຶກອົບຮົມຕົວຈິງໃນຂະແໜງຕົວຈິງ.
- ສຸມໃສ່ການສ້າງຫຼັກສູດ ແລະ ມາດຕະຖານ ການຝຶກສີມືແຮງງານ ຕາມສາຂາອາຊີບຕ່າງໆ ໃຫ້ຫຼາຍຂຶ້ນ ແລະ ເໝາະສົມກັບແຮງງານຂອງແຕ່ລະກຸ່ມ; ພ້ອມທັງ ການແຂ່ງຂັນ, ເຮັດທົດສອບ ແລະ ອອກໃບຢັ້ງຢືນ ໂດຍມີການກຳນົດອາຍຸຂອງໃບຢັ້ງຢືນວິຊາຊີບ ຕາມປະເພດສີມືແຮງງານ ແລະ ວິຊາອາຊີບ ກຳນົດໃຫ້ມີການສອບເສັງຄືນ ເພື່ອຮັກສາໃບຢັ້ງຢືນວິຊາຊີບ ແລະ ສີມືແຮງງານ ຕາມປະເພດວິຊາອາຊີບໂດຍການມີສ່ວນຮ່ວມຂອງພາກສ່ວນຕ່າງໆຢ່າງກວ້າງຂວາງ.
- ຂະຫຍາຍຕາໜ່າງການບໍລິການຈັດຫາງານໃຫ້ຫຼາຍຂຶ້ນ ແລະ ສາມາດໃຫ້ບໍລິການທີ່ມີຄຸນນະພາບສູງຂຶ້ນ ພ້ອມທັງສຸມໃສ່ ການຫັນປ່ຽນການຈັດຫາວຽກເຮັດງານທຳນອກລະບົບໄປສູ່ໃນລະບົບ ເພື່ອກ້າວໄປສູ່ການມີວຽກເຮັດງານທຳ ທີ່ມີຄຸນຄ່າ ແລະ ເປັນທຳ, ສ້າງວຽກເຮັດງານທຳໃຫ້ກຸ່ມແຮງງານແຕ່ລະປະເພດ ຕາມຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ຂະແໜງການເສດຖະກິດ, ໃນນັ້ນ ສຸມໃສ່ຈັດຕັ້ງປະຕິບັດຍຸດທະສາດການສົ່ງເສີມວຽກເຮັດງານທຳໃນຊົນນະບົດ ເພື່ອໃຫ້ແຮງງານໃນຊົນນະບົດມີວຽກເຮັດງານທຳ ໂດຍຕິດພັນຢ່າງສະໜິດແໜ້ນກັບການຜະລິດກະສິກຳ, ຫັດຖະກຳ, ຜະລິດຕະພັນໃຊ້ສອຍ, ສະບຽງອາຫານ, ທຸລະກິດຂະໜາດນ້ອຍ, ການບໍລິການ ແລະ ການທ່ອງທ່ຽວທຳມະຊາດ ເພື່ອໃຫ້ແຮງງານໃນຊົນນະບົດໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ມີວຽກເຮັດທີ່ໝັ້ນຄົງ, ຍົກສູງຜະລິດຕະພາບແຮງງານສູງຂຶ້ນ ແລະ ມີລາຍໄດ້ສົມເຫດສົມຜົນ ເຊິ່ງເປັນການແກ້ໄຂແຮງງານເຮັດວຽກຕາມລະດູການ, ແຮງງານເຮັດວຽກເພື່ອຊົມໃຊ້ໃນຄົວເຮືອນ, ແຮງງານເຄື່ອນຍ້າຍຈາກຊົນນະບົດເຂົ້າສູ່ຕົວເມືອງ ແລະ ໄປຕ່າງປະເທດ ທີ່ບໍ່ຖືກຕ້ອງຕາມກົດໝາຍ. ກຳນົດຄ່າແຮງງານຂັ້ນຕ່ຳ ແລະ ມາດຕະຖານ ຂອງແຕ່ລະປະເພດແຮງງານ ເພື່ອປົກປ້ອງສິດຂອງຜູ້ອອກແຮງງານ ແລະ ຮັບປະກັນຄ່າແຮງງານທີ່ເໝາະສົມ ແລະ ເປັນທຳ.
- ຄົ້ນຄວ້າ, ປັບປຸງ ແລະ ສ້າງນິຕິກຳທີ່ຈຳເປັນເພື່ອປົກປ້ອງ ແລະ ສະຫງວນວຽກເຮັດງານທຳທີ່ຈຳເປັນພື້ນຖານ ແລະ ຕິດພັນໂດຍກົງກັບການດຳລົງຊີວິດປະຈຳວັນໃຫ້ແກ່ຄົນລາວ.
- ປະສານສົມທົບກັບບັນດາຂະແໜງການກ່ຽວຂ້ອງໃນການສ້າງກົນໄກປົກປ້ອງ ແລະ ຄຸ້ມຄອງແຮງງານ ລວມທັງຄົນຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ຕາມຄວາມຕ້ອງການຂອງສາຂາອາຊີບທີ່ຈຳເປັນ. ປົກປ້ອງ-ຄຸ້ມຄອງສິດທິແຮງງານ ໃນກໍລະນີມີການແຜ່ລະບາດຂອງພະຍາດ ທີ່ກໍ່ໃຫ້ເກີດມີການປິດກິດຈະການຊົ່ວຄາວຂອງຫົວໜ່ວຍທຸລະກິດ ເຮັດໃຫ້ມີການຫວ່າງງານ ໂດຍການປະຕິບັດນະໂຍບາຍປົກປ້ອງທາງສັງຄົມ, ກົດໝາຍວ່າດ້ວຍແຮງງານ ແລະ ກົດໝາຍວ່າດ້ວຍປະກັນສັງຄົມ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການສາມຝ່າຍ ໃນການສົ່ງເສີມສາຍພົວພັນແຮງງານ ໂດຍສ້າງກົນໄກປະສານງານ ແລະ ການປຶກສາຫາລືສາມຝ່າຍ ໃນການປະຕິບັດໜ້າທີ່ ຕາມພາລະບົດບາດຂອງຕົນໃຫ້ຫຼາຍຂຶ້ນ.
- ສົ່ງເສີມການສ້າງເງື່ອນໄຂ ແລະ ສະພາບແວດລ້ອມທີ່ດີ ເປັນຕົ້ນແມ່ນການມີລະບຽບການນຳໃຊ້ແຮງງານ, ການມີສັນຍາແຮງງານ, ການໄດ້ຮັບຄ່າແຮງງານ ແລະ ສະຫວັດດີການແຮງງານ ທີ່ເໝາະສົມ, ຄວາມປອດໄພສະຖານທີ່ເຮັດວຽກ, ຜູ້ອອກແຮງງານມີສຸຂະພາບທີ່ດີ ເພື່ອເປັນແຮງຈູງໃຈ ໃຫ້ຜູ້ອອກແຮງງານເຂົ້າສູ່ຕະຫຼາດແຮງງານໃນລະບົບຫຼາຍຂຶ້ນ.
- ວຽກກວດກາແຮງງານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງທົ່ວເຖິງ ແລະ ເຂົ້າສູ່ຫົວໜ່ວຍແຮງງານຫຼາຍຂຶ້ນ, ເຈົ້າໜ້າທີ່ມີຄວາມເຂັ້ມແຂງດ້ານວິຊາການ ແລະ ມີຄວາມຮັບຜິດຊອບ, ສະໜອງສິ່ງອຳນວຍຄວາມສະດວກ ຢ່າງເໝາະສົມ.

- ປັບປຸງລະບົບການແກ້ໄຂຂໍ້ຂັດແຍ່ງແຮງງານໃຫ້ມີປະສິດທິຜົນສູງຂຶ້ນ, ເອົາໃຈໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານທີ່ມີລັກສະນະສະເພາະ ເປັນຕົ້ນ ແຮງງານເພດຍິງ, ແຮງງານໄວໜຸ່ມ, ຜູ້ດ້ອຍໂອກາດອື່ນໆ ເພື່ອຄວາມສະເໝີພາບ ແລະ ບໍ່ຈຳແນກໃນສະຖານທີ່ເຮັດວຽກ. ສົ່ງເສີມການຮ່ວມມືກັບພາກເອກະຊົນ ແລະ ຫົວໜ່ວຍແຮງງານ ເພື່ອສ້າງກົນໄກປົກປ້ອງ ແລະ ຄຸ້ມຄອງແຮງງານ ແລະ ສົ່ງເສີມການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແຮງງານ.

## 4. ແຜນວຽກຈຸດສຸມທີ 4: ສົ່ງເສີມການຄົ້ນຄວ້າ ແລະ ນຳໃຊ້ຜົນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ເຕັກນິກວິຊາການ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເຂົ້າໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ.

ພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳໃຫ້ກາຍເປັນກຳລັງແຮງພັດທະນາປະເທດ ຄຽງຄູ່ການນຳໃຊ້ການຄົ້ນຄວ້າ, ເຕັກນິກ-ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ ແລະ ເສດຖະກິດ-ສັງຄົມພູມປັນຍາ ກະທົບໃສ່ຂະບວນການຜະລິດ, ການບໍລິການ ເພື່ອສ້າງຄວາມຫຼາກຫຼາຍ, ມູນຄ່າເພີ່ມຂອງສິນຄ້າທີ່ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ; ເສີມຂະຫຍາຍເສດຖະກິດພູມປັນຍາ, ເສດຖະກິດສີຂຽວ, ນຳໃຊ້ເຕັກໂນໂລຊີໃໝ່ ທີ່ປະຢັດພະລັງງານ-ປະຢັດວັດຖຸດິບ ແລະ ເປັນມິດກັບສິ່ງແວດລ້ອມ ຕິດພັນກັບການຄົ້ນຄວ້ານຳໃຊ້ຄວາມກ້າວໜ້າທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ໃນຍຸກສະໄໝອຸດສາຫະກຳ 4.0 ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຂະຫຍາຍຕົວຕາມທິດທັນເປັນເສດຖະກິດດິຈິຕອນ.

### 4.1. ຄາດໝາຍ ແລະ ຕົວຊີ້ບອກ:

- ສູ້ຊົນສ້າງນັກຄົ້ນຄວ້າວິທະຍາສາດໃນຂອບເຂດທົ່ວປະເທດໃຫ້ໄດ້ 8,5 ຄົນ ຕໍ່ 10.000 ຄົນ ຂອງພົນລະເມືອງ ແລະ ສ້າງນັກຄົ້ນຄວ້າພາຍໃນຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ ລະດັບປະລິນຍາໂທ ແລະ ເອກ ໃຫ້ໄດ້ 160 ຄົນ ແລະ ສ້າງນັກຄົ້ນຄວ້າວິທະຍາສາດສັງຄົມ, ການເມືອງ-ການປົກຄອງ ແລະ ທິດສະດີ-ພຶດຕິກຳພັກ ລະດັບປະລິນຍາໂທ ແລະ ເອກ ໃຫ້ໄດ້ 120 ຄົນ ພາຍໃນປີ 2025;
- ລັດລົງທຶນໃສ່ການຄົ້ນຄວ້າ ແລະ ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ໄດ້ 1% ຂອງງົບປະມານການລົງທຶນຂອງລັດໃນແຕ່ລະປີ; ຈັດສັນງົບປະມານກອງທຶນຄົ້ນຄວ້າພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເຂົ້າໃສ່ຄົ້ນຄວ້າວິທະຍາສາດທຳມະຊາດ ແລະ ສັງຄົມ ທີ່ຕິດພັນກັບການສົ່ງເສີມການພັດທະນາສີຂຽວ ແລະ ເປົ້າໝາຍການພັດທະນາແບບຍືນຍົງ ໃຫ້ໄດ້ 30% ຂອງງົບປະມານຄົ້ນຄວ້າໃນແຕ່ລະປີ;
- ສົ່ງເສີມ ແລະ ຊຸກຍູ້ການລົງທຶນຂອງພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນການຄົ້ນຄວ້າ ແລະ ພັດທະນາ R&D ໃຫ້ໄດ້ຢ່າງໜ້ອຍ 35% ຂອງງົບປະມານໃນແຕ່ລະປີ;
- ສູ້ຊົນສ້າງ ແລະ ຮັບຮອງມາດຕະຖານແຫ່ງຊາດ ໃຫ້ໄດ້ 900 ມາດຕະຖານ; ໃຫ້ບໍລິການຈົດທະບຽນຊັບສິນອຸດສາຫະກຳ ແລະ ພັນພືດໃໝ່ໃຫ້ໄດ້ 10.000 ເຄື່ອງໝາຍ, ໃຫ້ບໍລິການຈົດທະບຽນສາກົນກ່ຽວກັບເຄື່ອງໝາຍການຄ້າໂດຍຜ່ານລະບົບມາດຣິດໃຫ້ໄດ້ 6.000 ເຄື່ອງໝາຍ;
- ຊຸກຍູ້ສົ່ງເສີມໃຫ້ທຸກຂະແໜງການທັງພາກລັດ ແລະ ເອກະຊົນ ນຳໃຊ້ສູນຂໍ້ມູນດິຈິຕອນໃຫ້ໄດ້ 80%;
- ສູ້ຊົນສ້າງເຂດພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ລະດັບສູງໃຫ້ໄດ້ 1 ແຫ່ງ ຮອດປີ 2025.

### 4.2. ວຽກງານຈຸດສຸມ:

- ສ້າງຍຸດທະສາດການພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳໃນຍຸກອຸດສະຫະກຳ 4.0 ໃຫ້ການເປັນອົງປະກອບທີ່ສຳຄັນໃນການພັດທະນາເສດຖະກິດ-ສັງຄົມ. ພ້ອມທັງສ້າງນະໂຍບາຍ, ນິຕິກຳ ແລະ ກົນໄກຊຸກຍູ້ສົ່ງເສີມວຽກງານວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ, ກອງທຶນນະວັດຕະກຳ ແລະ

ການປົກປ້ອງຊັບສິນທາງປັນຍາ, ມາດຕະຖານ ແລະ ການວັດແທກທີ່ເໝາະສົມ ເພື່ອສົ່ງເສີມຫົວຄິດປະດິດສ້າງການພັດທະນາໃນຍຸກອຸດສາຫະກຳ 4.0.

- ສ້າງນັກຄົ້ນຄວ້າ, ນັກວິທະຍາສາດ, ນັກວິຊາການຊ່ຽວຊານສະເພາະດ້ານ, ຜູ້ປະກອບການ ແລະ ພະນັກງານທັງຈາກພາກລັດ ແລະ ເອກະຊົນຢ່າງມີຈຸດສຸມ.
- ປະສານສົມທົບຢ່າງກົມກຽວກັບບັນດາມະຫາວິທະຍາໄລ ແລະ ສະຖາບັນສຶກສາ-ຄົ້ນຄວ້າ ແລະ ຂົນຂວາຍການຮ່ວມມືກັບຂະແໜງການພາກເອກະຊົນທີ່ມີທ່າແຮງໃນການຄົ້ນຄວ້າ ແລະ ພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ, ພ້ອມທັງ ນຳໃຊ້ຜົນສຳເລັດຂອງການຄົ້ນຄວ້າເຂົ້າສູ່ການຜະລິດຕົວຈິງ ເພື່ອພັດທະນາໃຫ້ກາຍເປັນສິນຄ້າທີ່ມີຄວາມຫຼາກຫຼາຍ ແລະ ສ້າງມູນຄ່າເພີ່ມໃຫ້ສູງຂຶ້ນ.
- ສົ່ງເສີມການຄົ້ນຄວ້າ ແລະ ນຳໃຊ້ນະວັດຕະກຳດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ ທີ່ເປັນປະໂຫຍດຕໍ່ການພັດທະນາເສດຖະກິດ-ສັງຄົມ.
- ສົ່ງເສີມການຄົ້ນຄວ້າວິທະຍາສາດສັງຄົມ, ເສດຖະກິດ, ການຄົ້ນຄວ້າທິດສະດີ-ພຶດຕິກຳ, ການຄົ້ນຄວ້າໂຄງການຫຼັກສູດການສິດສອນການເມືອງ-ການປົກຄອງ ເພື່ອສ້າງເປັນພື້ນຖານທິດສະດີໃນການສິດສອນ ແລະການວາງແນວທາງນະໂຍບາຍການພັດທະນາໃນແຕ່ລະໄລຍະ.
- ສູ້ຊົນຄົ້ນຄວ້າ ແລະ ພັດທະນາຖ່າຍທອດເຕັກໂນໂລຊີນະວັດຕະກຳເຂົ້າສູ່ຂະບວນການຜະລິດ, ການບໍລິການໃຫ້ສຳເລັດໂດຍພື້ນຖານ ໂດຍການສ້າງສູນຖ່າຍທອດ, ແລກປ່ຽນຂໍ້ມູນຂ່າວສານ ແລະ ຮຽນຮູ້ບົດຮຽນທີ່ດີເລີດທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອສົ່ງເສີມການສ້າງເສດຖະກິດສັງຄົມພູມປັນຍາ ແລະ ຜູ້ປະກອບການໃໝ່ (Start up) ແລະ ຫົວໜ່ວຍວິສະຫະກິດຂະໜາດນ້ອຍ-ກາງ ໃຫ້ມີຄວາມເຂັ້ມແຂງ.

**5. ບາງໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດ ສະໜັບສະໜູນເປົ້າໝາຍ 2 (ລາຍລະອຽດມີໃນເອກະສານຊ້ອນທ້າຍ):**

**1. ວຽກງານສາທາລະນະສຸກ**

(1). ໂຄງການພັດທະນາແບບຍືນຍົງ ແລະ ການຍົກສູງຄຸນນະພາບການບໍລິການສາທາລະນະສຸກ ໃນ ສປປ ລາວ (Project for Sustainable Development and Quality Assurance of Healthcare Professionals in Lao PDR) (ທຶນຊ່ວຍເຫຼືອຈາກ JICA) (ໂຄງການສືບຕໍ່)

(2). ໂຄງການປັບປຸງໂຮງໝໍໄຊເສດຖາ ແລະ ໂຮງໝໍແຂວງຈຳປາສັກ (ທຶນຊ່ວຍເຫຼືອ JICA) (ໂຄງການສືບຕໍ່)

(3). ໂຄງການກໍ່ສ້າງໂຮງໝໍມະຫາວິທະຍາໄລ ຂະໜາດ 400 ຕຽງ ທີ່ດົງໂດພີ ນຳໃຊ້ທຶນກູ້ຢືມຈາກ EDCF (ໂຄງການສືບຕໍ່)

(4). ໂຄງການກໍ່ສ້າງໂຮງໝໍ 04 ແຂວງພາກໃຕ້, ກະຊວງສາທາລະນະສຸກ ຈາກ EDCF (ໂຄງການສືບຕໍ່)

(5). ໂຄງການກໍ່ສ້າງໂຮງໝໍແຂວງສະຫວັນນະເຂດ ຈາກ EDCF (ໂຄງການສືບຕໍ່)

(6). ໂຄງການຍົກລະດັບໂຮງໝໍແຂວງໄຊສົມບູນ (ໂຄງການໃໝ່)

(7). ໂຄງການບໍລິຫານດ້ານສາທາລະນະສຸກ, ໂຮງຮຽນວິທະຍາໄລວິທະຍາສາດສຸຂະພາບ, ກໍ່ສ້າງແພດຊ່ຽວຊານ, ສະໜອງອຸປະກອນ ແລະ ພາຫະນະໃຫ້ແກ່ໂຮງໝໍ ແລະ ໂຮງຮຽນທີ່ແຂວງສາລະວັນ, ໂຄງການກໍ່ສ້າງຕຶກອາຄານໂຮງໝໍຫຼັງໃໝ່ແຂວງໄຊຍະບູລີ ແລະ ໂຄງການກໍ່ສ້າງຕຶກອາຄານບໍລິຫານປິ່ນປົວຫຼັງໃໝ່ຂອງແຂວງຄຳມ່ວນ (ໂຄງການໃໝ່).

(8). ໂຄງການເຂົ້າເຖິງການບໍລິການສຸຂະພາບ ແລະ ໂພຊະນາການ (ໂຄງການໃໝ່)

(9). ໂຄງການບໍລິການສາທາລະນະສຸກທີ່ມີຄຸນນະພາບ (Quality Health Care) (ໂຄງການໃໝ່)

(10). ໂຄງການກໍ່ສ້າງຄະນະແພດສາດຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ

**2. ວຽກງານສຶກສາ**

(1). ໂຄງການກໍ່ສ້າງ ແລະ ສ້ອມແປງໂຮງຮຽນໃນຂອບເຂດທົ່ວປະເທດ (ໂຄງການໃໝ່);

(2). ໂຄງການກໍ່ສ້າງຫໍພັກນັກຮຽນມັດທະຍົມ (ໂຄງການໃໝ່);

(3). ໂຄງການສ້າງຫ້ອງທົດລອງ (ໂຄງການໃໝ່);

(4). ໂຄງການສ້າງສິ່ງອຳນວຍຄວາມສະດວກໃນໂຮງຮຽນດ້ານສຸຂະອະນາໄມ (ໂຄງການໃໝ່)

(5). ໂຄງການປັບປຸງວິທະຍາໄລສ້າງຄູ 8 ແຫ່ງ (ທຶນຊ່ວຍເຫຼືອ JICA) (ໂຄງການໃໝ່).

(6). ໂຄງການປັບປຸງການສະໜອງເຄື່ອງມືທົດລອງ ແລະ ສິ່ງອຳນວຍຄວາມສະດວກໃຫ້ພາກວິຊາວິສະວະກຳສາດ, ມະຫາວິທະຍາໄລແຫ່ງຊາດ (project for improving of facility and laboratory equipment in the faculty of engineering, National University of Laos) (ທຶນຊ່ວຍເຫຼືອ JICA) (ໂຄງການໃໝ່)

(7). ໂຄງການສ້າງຄວາມເຂັ້ມແຂງການພັດທະນາຊັບພະຍາກອນມະນຸດດ້ານວິສະວະກຳ ແລະ ເຕັກໂນໂລຊີ ເພື່ອການພັດທະນາອຸດສາຫະກຳໃນ ສປປ ລາວ (Project for Strengthening Human Resource Development of Engineering and Technology for Industry Development in Lao PDR) (ທຶນຊ່ວຍເຫຼືອ JICA) (ໂຄງການໃໝ່)

**3. ວຽກງານພັດທະນາສີມືແຮງງານ:**

(1). ໂຄງການພັດທະນາສີມືແຮງງານໃນກຸ່ມເປົ້າໝາຍທີ່ມາຈາກຜູ້ຢູ່ນອກແຮງງານ ແລະ ຜູ້ຫວ່າງງານ ໄດ້ເຂົ້າສູ່ຕະຫຼາດແຮງງານຕາມຂະແໜງເສດຖະກິດ (ໂຄງການໃໝ່)

(2). ໂຄງການແຂ່ງຂັນສີມືແຮງງານແຫ່ງຊາດ, ພາກພື້ນ ແລະ ສາກົນ (ໂຄງການໃໝ່)

(3). ໂຄງການສ້າງ ແລະ ພັດທະນາພື້ນຖານໂຄງລ່າງການພັດທະນາສີມືແຮງງານ ແຂວງອັດຕະປື, ສະຫວັນນະເຂດ, ອຸດົມໄຊ, ໄຊຍະບູລີ ແລະ ຈຳປາສັກ (ໂຄງການໃໝ່)

(4). ໂຄງການປັບປຸງ ແລະ ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ (ໂຄງການໃໝ່)

**4. ວຽກງານວິທະຍາສາດ ແລະ ເຕັກໂນໂລຊີ**

(1). ໂຄງການສ້າງ ແລະ ປັບປຸງກົດໝາຍຂອງຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ (ໂຄງການໃໝ່).

(2). ໂຄງການສ້າງແຜນຍຸດທະສາດການພັດທະນາພະນັກງານຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ ໄລຍະ 10 ປີ (2021-2030) (ໂຄງການໃໝ່).

(3). ໂຄງການຄົ້ນຄວ້າວິໄຈຄຸນນະພາບຜະລິດຕະພັນ ແລະ ສິນຄ້າທີ່ເປັນບູລິມະສິດ ເພື່ອຊຸກຍູ້ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ໄດ້ຄຸນນະພາບຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ໃຫ້ສາມາດສົ່ງອອກໄດ້ໃນຂອບເຂດທົ່ວປະເທດ (ໂຄງການໃໝ່).

(4). ໂຄງການນຳໃຊ້ຊັບສິນທາງປັນຍາເຂົ້າສູ່ຂະບວນການຜະລິດເປັນສິນຄ້າໃນການຈົດທະບຽນຖິ່ນກຳເນີດໝາກຖົ່ວຽນ, ໝາກແໜ່ງ ແລະ ສ້າງເຄື່ອງໝາຍການຄ້າ ແລະ ເຄື່ອງໝາຍລວມໝູ່ຢູ່ທີ່ແຂວງຈຳປາສັກ ແລະ ແຂວງເຊກອງ (ໂຄງການໃໝ່).

(5). ໂຄງການສົ່ງເສີມການນຳໃຊ້ພະລັງງານແສງຕາເວັນເພື່ອສະໜອງນ້ຳສະອາດໃຫ້ແກ່ຊຸມຊົນໃນເຂດຊົນນະບົດ (ໂຄງການໃໝ່).

(6). ໂຄງການສຶກສາຄົ້ນຄວ້າເຕັກນິກການປູກມອນ-ລ້ຽງມ້ອນ, ການຂະຫຍາຍພັນມ້ອນ ແລະ ສົ່ງເສີມການຜະລິດແບບຍືນຍົງ.

(7). ໂຄງການກວດສອບສານອາຫານຂອງພືດໃນດິນ ແລະ ນໍ້າເຂດກະສິກໍາ ຢູ່ 08 ແຂວງ (ນະຄອນຫຼວງວຽງຈັນ, ວຽງຈັນ, ຊຽງຂວາງ, ໄຊສົມບູນ, ຄໍາມ່ວນ, ສະຫວັນນະເຂດ, ຈໍາປາສັກ ແລະ ສາລະວັນ) (ໂຄງການໃໝ່).

(8). ໂຄງການຮ່ວມມືພັດທະນາເຂດເຕັກໂນໂລຊີລະດັບສູງ Hitechpart ລາວ-ຈີນ (ໂຄງການໃໝ່).

(9). ໂຄງການສ້າງສ້າງສູນອໍານວຍຄວາມສະດວກໃຫ້ແກ່ການຄົ້ນຄວ້າ-ວິໄຈວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ ສປປ ລາວ (LAO-NFEC) (ໂຄງການໃໝ່).

(10). ໂຄງການສ້າງສູນບໍລິການໃຫ້ການປຶກສາຄວາມປອດໄພລະບົບເຕັກໂນໂລຊີຂໍ້ມູນຂ່າວສານ (ໂຄງການໃໝ່).

(11). ໂຄງການສ້າງສູນສໍາຮອງຂໍ້ມູນ (Disaster Recovery Site) ເພື່ອຍົກລະດັບຄວາມປອດໄພ ແລະ ຄຸນນະພາບຂອງການບໍລິການສູນຂໍ້ມູນດິຈິຕອນ (Data Center) (ໂຄງການໃໝ່).

(12). ໂຄງການສົ່ງເສີມວິຊາການພັດທະນາລະບົບ CA ເພື່ອບໍລິການລາຍເຊັນເອເລັກໂທຣນິກ (CA Service Provider) (ໂຄງການໃໝ່).

(13). ໂຄງການສ້າງເຂດພັດທະນາອຸດສາຫະກໍາຊອບແວຣ (Software Park) (ໂຄງການໃໝ່)

## *ເປົ້າໝາຍທີ 3: ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ*

ຄວາມຄືບໜ້າໃນການຫຼຸດຜ່ອນຄວາມທຸກຍາກແມ່ນ ມາຈາກການເຕີບໂຕຂອງລາຍຮັບ, ການຍົກລະດັບການສຶກສາ ແລະ ການເຂົ້າເຖິງໂອກາດໃນການພັດທະນາ ແຕ່ເຖິງແນວໃດກໍຕາມ ອັດຕາຄວາມທຸກຍາກໃນ ສປປ ລາວ ຄາດວ່າຈະເພີ່ມຂຶ້ນໄປເຖິງ 21,5% ເນື່ອງຈາກສະພາບຂອງ ໂຄວິດ-19. ເຖິງວ່າຄວາມທຸກຍາກຈະຫຼຸດລົງ ແຕ່ຍັງມີຄວາມແຕກໂຕນຂອງລາຍຮັບ ແລະ ບໍ່ສົມຄູ່ກັບການ ຂະຫຍາຍຕົວຂອງເສດຖະກິດ ເຊັ່ນ: ການຂະຫຍາຍຕົວ 1% ຂອງ GDP ເຮັດໃຫ້ຄວາມທຸກຍາກຫຼຸດລົງພຽງ 0,4% ແລະ ເພີ່ມຂຶ້ນເປັນ 0,67% ໃນປີ 2018-2019. ການຂະຫຍາຍຕົວທີ່ຂັບເຄື່ອນໂດຍຂະແໜງຊັບພະຍາກອນ ແລະ ນໍາໃຊ້ທຶນຫຼາຍ ແຕ່ການສ້າງວຽກເຮັດງານທໍາຍັງຈໍາກັດ ແລະ ຄົວເຮືອນສ່ວນໃຫຍ່ແມ່ນມີເສດຖະກິດທີ່ບໍ່ໝັ້ນຄົງ. ການຂະຫຍາຍຕົວຂອງຊັບພະຍາກອນມະນຸດໃນ ສປປ ລາວ ແມ່ນມີທ່າອ່ຽງບໍ່ເທົ່າທຽມກັນຕາມພື້ນທີ່, ເພດ ແລະ ຊົນເຜົ່າ. ອີງຕາມການວັດແທກໂດຍນໍາໃຊ້ຄ່າດັດຊະນີການກະຈາຍລາຍຮັບຄວາມບໍ່ເທົ່າທຽມເພີ່ມຂຶ້ນຈາກ 36,0 ເປັນ 38,8 ໃນປີ 2018-2019.

ຄວາມທຸກຍາກ ແມ່ນມີການຫຼຸດໂຕນກັນຢ່າງຊັດເຈນພາຍໃນເຂດຕົວເມືອງ-ຊົນນະບົດ, ພາກ ແລະ ກຸ່ມຊົນເຜົ່າ. ຄວາມທຸກຍາກໃນຂອບເຂດຊົນນະບົດແມ່ນມີອັດຕາສູງກວ່າຢູ່ຕົວເມືອງເຖິງສາມທົບ ໃນປີ 2018-2019. ບັນດາແຂວງພາກເໜືອ ແລະ ພາກໃຕ້ ຄວາມທຸກຍາກແມ່ນຫຼຸດລົງຢ່າງຊັດເຈນ, ສ່ວນພາກກາງ ອັດຕາຄວາມທຸກຍາກບໍ່ມີການປ່ຽນແປງ ແລະ ອັດຕາຄວາມທຸກຍາກຍັງສູງ 21,5% ທຽບໃສ່ພາກເໜືອ 20,7% ແລະ ພາກໃຕ້ 17,7%. ການຫຼຸດຜ່ອນຄວາມທຸກຍາກແມ່ນມີຄວາມຫຼ້າຊ້າລົງກວ່າເກົ່າໃນຊົນເຜົ່າກຸ່ມນ້ອຍ.

ເພື່ອແກ້ໄຂຄວາມທຸກຍາກ, ຄວາມແຕກໂຕນທາງດ້ານການພັດທະນາໃນ ສປປ ລາວ, ທິດທາງການພັດທະນາໃນຕໍ່ໜ້າ ແມ່ນຈະສຸມໃສ່ “ ຄົນທຸກຍາກ” ເພື່ອຮັບປະກັນໃຫ້ມີຊີວິດການເປັນຢູ່ທີ່ຍືນຍົງ ໂດຍການກະຈາຍລາຍຮັບຢ່າງເທົ່າທຽມກັນ ແລະ ໄດ້ຮັບການປົກປ້ອງທາງສັງຄົມໃນທຸກກຸ່ມຄົນ ໂດຍສະເພາະຕໍ່ກັບກຸ່ມຄົນທີ່ມີຄວາມສ່ຽງ ແລະ ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ພະຍາດລະບາດອື່ນໆ. ເພື່ອໃຫ້ບັນລຸເປົ້າໝາຍນີ້, ຈຶ່ງໄດ້ກໍານົດ 6 ແຜນວຽກຈຸດສຸມ ດັ່ງລຸ່ມນີ້:

## 1. ແຜນວຽກຈຸດສຸມທີ 1: ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກທີ່ຍັງທຸກຍາກ ໄດ້ຮັບການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນ, ຄຸນຄ່າດ້ານວັດທະນະທຳ ແລະ ວຽກງານສື່ມວນຊົນ ໄດ້ຮັບການປັບປຸງດີຂຶ້ນ.

ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ທົ່ວເຖິງ ຕາມທິດສາມສ້າງ ແລະ ສ້າງຊົນນະບົດໃໝ່ ດ້ວຍການສົ່ງເສີມການຜະລິດສິນຄ້າ, ການເຂົ້າເຖິງແຫຼ່ງທຶນ, ລະບົບການຜະລິດ, ຕະຫຼາດ, ບຸກຄະລາກອນ, ຊັບພະຍາກອນ (ດິນ, ປ່າໄມ້ ແລະ ພືດທີ່ບໍ່ແມ່ນໄມ້ຕ່າງໆ), ຂໍ້ມູນທາງດ້ານການກະສິກຳ, ການບໍລິການສັງຄົມ (ດ້ານການສຶກສາ ແລະ ສາທາລະນະສຸກ, ນ້ຳສະອາດ ແລະ ສຸຂະອະນາໄມ) ແລະ ການເງິນຊົນນະບົດ, ສົ່ງເສີມວິຊາຊີບ ແລະ ເຕັກນິກວິຊາການທີ່ກ້າວໜ້າ ເພື່ອຍົກສູງສະມັດຕະພາບການຜະລິດ, ຄຽງຄູ່ກັບການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ໝັ້ນຄົງ; ພັດທະນາໂຄງລ່າງພື້ນຖານຮັບໃຊ້ການຜະລິດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ພັດທະນາຊັບພະຍາກອນມະນຸດ ແລະ ລະບົບສາທາລະນະສຸກ.

ອະນຸລັກ, ປົກປັກຮັກສາ, ສືບທອດ ແລະ ເສີມຂະຫຍາຍມູນເຊື້ອມໍຣະດົກວັດທະນະທຳ ອັນດີງາມຂອງຊາດ ແລະ ຂອງເຜົ່າ ໃຫ້ມີຄວາມຍືນຍົງ, ພັດທະນາອະລິຍະທຳທາງດ້ານວັດຖຸ ແລະ ຈິດໃຈໃນສັງຄົມລາວ ພ້ອມທັງເລືອກເຟັ້ນເອົາຄຸນຄ່າວັດທະນະທຳທີ່ກ້າວໜ້າຂອງມວນມະນຸດ ເພື່ອສ້າງໃຫ້ມີຄວາມຫຼາກຫຼາຍ ແລະ ຄຸນຄ່າທາງດ້ານເສດຖະກິດ-ສັງຄົມ; ພັດທະນາວຽກງານສື່ມວນຊົນ ໃຫ້ມີຄຸນນະພາບ, ທັນສະໄໝ, ວ່ອງໄວ ແລະ ທັນການ ເພື່ອກາຍເປັນກະບອກສຽງອັນແຫຼມຄົມຂອງພັກ-ລັດໃນການຜັນຂະຫຍາຍແນວທາງ ແລະ ນະໂຍບາຍຂອງພັກ ແລະ ລັດຖະບານໃນແຕ່ລະໄລຍະ ຢ່າງເລິກເຊິ່ງ ແລະ ກວ້າງຂວາງແຕ່ຂັ້ນສູນກາງຮອດທ້ອງຖິ່ນ.

### 1.1. ຄາດໝາຍ ແລະ ຕົວຊີ້ບອກ:

- ອີງຕາມຜົນການສຳຫຼວດການໃຊ້ຈ່າຍ ແລະ ຊົມໃຊ້ຄົວເຮືອນ ຄັ້ງທີ 6 (LECS6): ອັດຕາຄວາມທຸກຍາກໃຫ້ຍັງເຫຼືອ 13,9% ຂອງປະຊາກອນທັງໝົດ, ອັດຕາຄົວເຮືອນທຸກຍາກ ໃຫ້ຍັງເຫຼືອ 9,5% ຂອງຄົວເຮືອນທັງໝົດ.
- ອີງໃສ່ດຳລັດ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ສະບັບເລກທີ 348/ນຍ:
  + ສູ້ຊົນສ້າງຄອບຄົວພົ້ນທຸກ ໃຫ້ໄດ້ 204.360 ຄອບຄົວ (ເພີ່ມຂຶ້ນຈາກ 964.149 ຄອບຄົວ ມາເປັນ 1.168.509 ຄອບຄົວ);
  + ສູ້ຊົນສ້າງບ້ານພົ້ນທຸກ ໃຫ້ໄດ້ 3.104 ບ້ານ (ເພີ່ມຂຶ້ນຈາກ 4.792 ບ້ານ ມາເປັນ 7.896 ບ້ານ);
  + ສູ້ຊົນສ້າງເມືອງພົ້ນທຸກໃຫ້ໄດ້ 69 ເມືອງ (ເພີ່ມຂຶ້ນຈາກ 53 ເມືອງ ມາເປັນ 122 ເມືອງ);
  + ສູ້ຊົນສ້າງຄອບຄົວພັດທະນາ ໃຫ້ໄດ້ 245.754 ຄອບຄົວ (ເພີ່ມຂຶ້ນຈາກ 736.996 ຄອບຄົວ ມາເປັນ 982.750 ຄອບຄົວ);
  + ສູ້ຊົນສ້າງບ້ານພັດທະນາ ໃຫ້ໄດ້ 4.420 ບ້ານ (ເພີ່ມຂຶ້ນຈາກ 747 ບ້ານ ມາເປັນ 5.167 ບ້ານ);
  + ສູ້ຊົນສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ໃຫ້ໄດ້ 10 ບ້ານ.
- ສູ້ຊົນຈັດສັນພູມລຳເນົາຄົງທີ່ ແລະ ອາຊີບໝັ້ນຄົງ ໃຫ້ປະຊາຊົນ ຢູ່ 25 ຈຸດສຸມ;
- ສູ້ຊົນຂະຫຍາຍກອງທຶນພັດທະນາບ້ານ ບ້ວງ 500 ລ້ານກີບຕໍ່ເມືອງທຸກຍາກ ຂະຫຍາຍໄປສູ່ບ້ານອື່ນໃຫ້ໄດ້ 64 ບ້ານ;
- ສູ້ຊົນສ້າງສູນຂໍ້ມູນຂ່າສານ (ICT) ທັນສະໄໝ ຢູ່ທ້ອງຖິ່ນໃຫ້ໄດ້ 3 ແຫ່ງ;
- ສ້າງ ແລະ ຂະຫຍາຍວິທະຍຸກະຈາຍສຽງຂັ້ນເມືອງໃຫ້ໄດ້ 36 ຈຸດ ແລະ ຂະຫຍາຍໂທລະໂຄ່ງຢູ່ຂັ້ນບ້ານ ໃຫ້ໄດ້ 2.800 ບ້ານ;
- ຂະຫຍາຍລະບົບເຕັກນິກ ຈາກລະບົບອານາລັອກໄປສູ່ລະບົບດີຈິຕອນ ໃຫ້ໄດ້ 22 ຈຸດ ໃນຂອບເຂດທົ່ວປະເທດ;
- ຊຸກຍູ້ສ້າງຄອບຄົວວັດທະນະທຳໃຫ້ໄດ້ 130.000 ຄອບຄົວ ແລະ ບ້ານວັດທະນະທຳໃຫ້ໄດ້ 750 ບ້ານ;

- ສືບຕໍ່ສະເໜີມໍລະດົກແຫ່ງຊາດທາງທໍາມະຊາດ 1 ແຫ່ງ (ອຸທິຍານແຫ່ງຊາດຫີນໜາມໜໍ່ ແຂວງຄໍາມ່ວນ) ໃຫ້ເປັນມໍລະດົກໂລກ, ມໍລະດົກວັດທະນະທໍານາມມະທໍາ 4 ລາຍການ (ພູມປັນຍາຫັດຖະກໍາພື້ນເມືອງການຕໍ່າລາຍນາກຂອງຊຸມຊົນເຊື້ອຊາດລາວ, ຟ້ອນລໍາວົງລາວ, ພິທີບາສີສູ່ຂວັນ ແລະ ການພະດຸງຄັນແບບພື້ນບ້ານ) ໃຫ້ເປັນມໍລະດົກວັດທະນະທໍາຂອງມວນມະນຸດ ແລະ ມໍລະດົກປະຫວັດສາດ 3 ລາຍການ (ຮູບພາບປະຫວັດສາດ-ວັດທະນະທໍາ, ໜັງສືຜູກໃບລານ ແລະ ງານພຸດທະສິນ) ໃຫ້ເປັນຄວາມຊົງຈໍາເປັນຂອງໂລກ;
- ສໍາຫຼວດ, ເກັບກໍາຂໍ້ມູນ ແລະ ຂຶ້ນທະບຽນໃນຂະແໜງວັດທະນະທໍາ ຄື: ສໍາຫຼວດແຫຼ່ງບູຮານວິທະຍາ ໃຫ້ໄດ້ 35 ແຫ່ງ ແລະ ຂຸດຄົ້ນໃຫ້ໄດ້ 5 ແຫ່ງ; ຂຶ້ນທະບຽນບັນຊີວັດຖຸບູຮານ ແລະ ພະພຸດທະຮູບ 5 ແຫ່ງ; ຂຶ້ນບັນຊີມໍລະດົກວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດ ຈາກລະດັບທ້ອງຖິ່ນໃຫ້ເປັນລະດັບຊາດໃຫ້ໄດ້ 20 ແຫ່ງ ແລະ ຂຶ້ນທະບຽນບັນຊີບູຮານງານພຸດທະສິນ ໃຫ້ໄດ້ 5 ແຫ່ງ.

**1.2. ວຽກງານຈຸດສຸມ:**

- **ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ:**

- ສືບຕໍ່ພັດທະນາໂຄງລ່າງພື້ນຖານຊົນນະບົດ ຢູ່ເຂດຈຸດສຸມພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງລັດຖະບານ ແລະ ທ້ອງຖິ່ນ ດ້ວຍການສະໜອງໂຄງລ່າງພື້ນຖານຊົນນະບົດທີ່ຈໍາເປັນ ເປັນຕົ້ນ ຂະຫຍາຍເສັ້ນທາງ, ຂົວ ແລະ ລະບົບຂົນສົ່ງໃຫ້ເຂົ້າເຖິງບ້ານ, ໃຈກາງຂອງແຕ່ລະຈຸດສຸມ ແລະ ເຊື່ອມຈອດກັບແຕ່ລະບ້ານ; ຂະຫຍາຍລະບົບໂທລະຄົມມະນາຄົມ ແລະ ໄປສະນີ ໃຫ້ທົ່ວເຖິງ; ຂະຫຍາຍຕາໜ່າງໄຟຟ້າທັງໃນລະບົບ ແລະ ນອກລະບົບ ລົງສູ່ຊົນນະບົດເຂດຫ່າງໄກສອກຫຼີກ; ຂະຫຍາຍການສຶກສາໃຫ້ທົ່ວເຖິງ ແລະ ມີຄຸນນະພາບ ເຮັດໃຫ້ທຸກຈຸດສຸມ ມີໂຮງຮຽນມັດທະຍົມສຶກສາ; ປັບປຸງ ແລະ ຂະຫຍາຍການໃຫ້ບໍລິການດ້ານສາທາລະນະສຸກ ໄປສູ່ເຂດຊົນນະບົດ ແລະ ເຂດພູດອຍຫ່າງໄກສອກຫຼີກ ໃຫ້ທົ່ວເຖິງ ເຮັດໃຫ້ທຸກໂຮງໝໍນ້ອຍ ມີແພດຊັ້ນສູງ ແລະ ມີອຸປະກອນການແພດທີ່ພຽງພໍ ເພື່ອຮັບປະກັນການປິ່ນປົວ ໃຫ້ໄດ້ຂັ້ນພື້ນຖານ ແລະ ບ້ານທີ່ຫ່າງໄກສອກຫຼີກ ໃຫ້ມີຖົງຢາປະຈໍາບ້ານ; ສຸມໃສ່ສໍາຫຼວດ-ອອກແບບ ແລະ ວາງຜັງບ້ານໃຫຍ່ ເພື່ອສ້າງເປັນໃຈກາງທາງດ້ານເສດຖະກິດ ແລະ ວັດທະນະທໍາ-ສັງຄົມ ຢູ່ບັນດາເຂດຈຸດສຸມພັດທະນາ, ເຂດຈັດສັນໃໝ່ ຂອງທ້ອງຖິ່ນ ແລະ ລັດຖະບານ ໃຫ້ສໍາເລັດໂດຍພື້ນຖານ.
- ສືບຕໍ່ຈັດສັນພູມລໍາເນົາຄົງທີ່ ແລະ ບ່ອນທໍາມາຫາກິນຖາວອນໃຫ້ປະຊາຊົນ ໃນເຂດເປົ້າໝາຍ ແລະ ແກ້ໄຂບັນຫາການເຄື່ອນຍ້າຍຂອງພົນລະເມືອງແບບຊະຊາຍ ໃຫ້ສໍາເລັດໂດຍພື້ນຖານ.
- ສຸມໃສ່ຈັດສັນຄອບຄົວປະຊາຊົນທີ່ບໍ່ມີພູມລໍາເນົາຄົງທີ່, ບໍ່ມີບ່ອນທໍາມາຫາກິນຖາວອນ, ບໍ່ມີອາຊີບທີ່ໝັ້ນທ່ຽງ, ບ້ານນ້ອຍທີ່ຕັ້ງຢູ່ກະແຈກກະຈາຍ ທີ່ຖາງປ່າເຮັດໄຮ່ ແລະ ບໍ່ມີເງື່ອນໄຂພັດທະນາໃຫ້ຍືນຍົງ ແລະ ບັນດາບ້ານເປົ້າໝາຍ ທີ່ໄດ້ຮັບຜົນກະທົບຈາກໂຄງການການພັດທະນາ ດ້ວຍການຍົກຍ້າຍ ໄປຈັດສັນຢູ່ບ່ອນໃໝ່ທີ່ມີເງື່ອນໄຂເໝາະສົມ ຫຼື ເຕົ້າໂຮມສ້າງເປັນບ້ານໃຫຍ່ ໂດຍຖືເອົາການຈັດສັນກັບທີ່ (ພາຍໃນທ້ອງຖິ່ນ) ເປັນຕົ້ນຕໍ ແລະ ດໍາເນີນການຈັດສັນລະຫວ່າງແຂວງ ຕາມຄວາມຈໍາເປັນຢ່າງມີແຜນການຮອບຄອບ.
- ສືບຕໍ່ຈັດຕັ້ງປະຕິບັດກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ທຶນພັດທະນາຊາຍແດນ.
- ສົ່ງເສີມການລົງທຶນຂອງພາກທຸລະກິດຕິດພັນກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.
- ປັບປຸງບັນດາສູນເຕັກນິກຕ່າງໆ ພ້ອມທັງຊຸກຍູ້ດ້ານເຕັກນິກວິຊາການ ໃນຂົງເຂດການຜະລິດ, ຕ່ອງໂສ້ການຜະລິດ ແລະ ການດໍາເນີນທຸລະກິດ.

- **ວຽກງານຖະແຫຼງຂ່າວ ແລະ ວັດທະນະທໍາ:**

- ປັບປຸງ ແລະ ຍົກລະດັບພື້ນຖານວັດຖຸເຕັກນິກຮັບໃຊ້ການຜະລິດຂ່າວທາງໂທລະພາບ, ວິທະຍຸກະຈາຍສຽງ, ໜັງສືພິມ ແລະ ສື່ແບບໃໝ່ໃຫ້ເປັນລະບົບຄົບຊຸດ, ສືບຕໍ່ຫັນລະບົບອານາລັອກໄປສູ່ລະບົບດິຈິຕອນ ໃຫ້ຂອບເຂດທົ່ວປະເທດ;

- ພັດທະນາໂທລະພາບ, ວິທະຍຸກະຈາຍສຽງ, ສື່ແບບໃໝ່ ແລະ ຄໍລໍາໜັງສືພິມ ໃຫ້ມີຄຸນນະພາບ, ມີຄວາມຫຼາກຫຼາຍ;
- ສ້າງສະຖານີ ແລະ ເຄືອຂ່າຍຮັບ-ສົ່ງສັນຍານຜ່ານລະບົບໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ໃຫ້ເປັນລະບົບເທື່ອລະກ້າວ; ຂະຫຍາຍລະບົບໂທລະໂຄ່ງ;
- ພັດທະນາລາຍການລະບົບຊອບແວຮັບ-ສົ່ງຂໍ້ມູນສື່ສິ່ງພິມ, ສື່ເອເລັກໂທຣນິກ ລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ມີຄວາມຄ່ອງຕົວ, ວ່ອງໄວ ແລະ ປອດໄພ;
- ສ້າງຖານຂໍ້ມູນຂ່າວສານສື່ມວນຊົນ (Media Centre) ເພື່ອຄຸ້ມຄອງ ແລະ ບໍລິການໃນຂອບເຂດທົ່ວປະເທດ;
- ປັບປຸງກົນໄກການຮ່ວມມື, ປະສານງານກັບຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາຜະລິດຕະພັນສື່ມວນຊົນໃຫ້ມີຄຸນນະພາບ, ຫຼາກຫຼາຍ ແລະ ທັນສະໄໝ;
- ບູລະນະປະຕິສັງຂອນ ມໍລະດົກວັດທະນະທໍາ, ປັບປຸງຖານຂໍ້ມູນໃນຫໍສະໝຸດແຫ່ງຊາດ, ສໍາຫຼວດ ເກັບກໍາວັດຖຸພັນ ເພື່ອນໍາມາຈັດວາງສະແດງໃນຫໍພິພິຕະພັນແຫ່ງຊາດ;
- ປັບປຸງ ແລະ ຍົກລະດັບຂະບວນການສ້າງຄອບຄົວ ແລະ ບ້ານວັດທະນະທໍາໃໝ່ ຕິດພັນກັບການສ້າງແຜນດໍາລົງຊີວິດໃໝ່ ແລະ ການພັດທະນາອະລິຍະທໍາທາງດ້ານຈິດໃຈຂອງສັງຄົມ ບົນພື້ນຖານສືບທອດຮີດຄອງປະເພນີອັນດີງາມຂອງທ້ອງຖິ່ນ ແລະ ຊຸມຊົນ.

## 2. ແຜນວຽກຈຸດສຸມທີ 2: ໂຄງລ່າງພື້ນຖານການບໍລິການດ້ານສາທາລະນຸປະໂພກໄດ້ຮັບການປັບປຸງ ແລະ ສະໜອງໃຫ້ປະຊາຊົນຢ່າງທົ່ວເຖິງ ເພື່ອຫຼຸດຜ່ອນຄວາມແຕກໂຕນດ້ານການເຂົ້າເຖິງໂຄງລ່າງພື້ນຖານ ແລະ ການບໍລິການຕ່າງໆ.

ເພື່ອຫຼຸດຜ່ອນຄວາມແຕກໂຕນດ້ານການເຂົ້າເຖິງໂຄງລ່າງພື້ນຖານ ແລະ ການບໍລິການຕ່າງໆ ຈະໄດ້ເພີ່ມການລົງທຶນ ໃສ່ການກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານການບໍລິການດ້ານສາທາລະນຸປະໂພກຕ່າງໆ ແລະ ສົ່ງເສີມການສ້າງວຽກເຮັດງານທໍາທີ່ຍືນຍົງໃນເຂດຊົນນະບົດ ໂດຍການໃຫ້ມີສ່ວນຮ່ວມຈາກການລົງທຶນພາກເອກະຊົນ ແລະ ສັງຄົມ.

### 2.1. ຄາດໝາຍ ແລະ ຕົວຊີ້ບອກ:

- ສູ້ຊົນຂະຫຍາຍອັດຕາການຊົມໃຊ້ໄຟຟ້າ ໃຫ້ໄດ້ 98% (ຂະຫຍາຍຕົວເພີ່ມຂຶ້ນ 3%) ຂອງຄົວເຮືອນໃນຂອບເຂດທົ່ວປະເທດ; ໃນນັ້ນ, ຂະຫຍາຍລະບົບຕາຂ່າຍໄຟຟ້າ ໃຫ້ໄດ້ 2,26% (28.000 ຄອບຄົວ) ແລະ ໄຟຟ້ານອກລະບົບ ໃຫ້ໄດ້ 0,74% (9.000 ກວ່າຄອບຄົວ)
- ຂະຫຍາຍລະບົບຕາຂ່າຍໄຟຟ້າຢູ່ 3 ແຂວງ (ຜົ້ງສາລີ, ຫົວພັນ ແລະ ເຊກອງ) ທີ່ມີອັດຕາການຊົມໃຊ້ໄຟຟ້າຕໍ່າສຸດໃນຂອບເຂດທົ່ວປະເທດ ໃຫ້ສໍາເລັດ.
- 90% ຂອງກຸ່ມບ້ານທັງໝົດ (ຄົວເຮືອນ) ແມ່ນສາມາດເຂົ້າເຖິງການນໍາໃຊ້ຖະໜົນຫົນທາງໃນຕະຫຼອດລະດູການ.
- 98% ຂອງຄອບຄົວທັງໝົດແມ່ນສາມາດເຂົ້າເຖິງລະບົບບໍລິການສາທາລະນະສຸກ.
- ອັດຕາການຕາຍຂອງແມ່ໃນເຂດຊົນນະບົດໃຫ້ຫຼຸດລົງ 30%.
- ອັດຕາການຕາຍຂອງເດັກເກີດໃໝ່ໃນເຂດຊົນນະບົດ ໃຫ້ຫຼຸດລົງ 30%.

### 2.2. ວຽກງານຈຸດສຸມ:

ຫຼຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ ແລະ ຊົນນະບົດ ດ້ານລາຍໄດ້ຂອງປະຊາຊົນ, ດ້ານການເຂົ້າເຖິງໂຄງລ່າງພື້ນຖານ ແລະ ການບໍລິການຕ່າງໆທີ່ຈໍາເປັນ ໃຫ້ຫຼຸດລົງເທື່ອລະກ້າວ ໂດຍສຸມໃສ່: ສືບຕໍ່ປັບປຸງ ແລະ ກໍ່ສ້າງໂຄງລ່າງພື້ນຖານໃນບ່ອນທີ່ຈໍາເປັນ ແລະ ຍັງຂາດເຂີນ ໂດຍສະເພາະແມ່ນ ເສັ້ນທາງຊົນນະບົດ, ການເຂົ້າເຖິງການຊົມໃຊ້ໄຟຟ້າສູ່ຊົນນະບົດເຂດຫ່າງໄກສອກຫຼີກດ້ວຍຫຼາຍຮູບແບບ ໂດຍການຂະຫຍາຍສາຍສົ່ງ-ສາຍຈໍາໜ່າຍໃນລະບົບດ້ວຍຮູບແບບ SWER, ຂະຫຍາຍໄຟຟ້າແສງຕາເວັນເຂົ້າເຂດຫ່າງໄກສອກຫຼີກ ທີ່ບໍ່ມີເງື່ອນໄຂຂະຫຍາຍລະບົບຕາຂ່າຍໄຟຟ້າໄປເຖິງ, ຂະຫຍາຍລະບົບໂທລະຄົມມະນາຄົມ, ນໍ້າປະປາ, ໂຮງຮຽນ, ໂຮງໝໍ, ໂຮງໝໍນ້ອຍ, ເຂດການຜະລິດ ແລະ ການ

ບໍລິການອື່ນໆ. ສືບຕໍ່ຊຸກຍູ້ ແລະ ນໍາພາປະຊາຊົນປະກອບສ່ວນເຂົ້າໃນຂະບວນການພັດທະນາເສດຖະກິດ-ສັງຄົມ ກໍ່ຄື ຂະບວນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນຢ່າງເປັນເຈົ້າການ ໂດຍຕິດພັນສະໜິດແໜ້ນກັບຂະບວນການຜະລິດ ເພື່ອຄໍ້າປະກັນສະບຽງອາຫານ, ການຜະລິດເປັນສິນຄ້າ ແລະ ການປຸງແຕ່ງ.

## 3. ແຜນວຽກຈຸດສຸມທີ 3: ສົ່ງເສີມໃຫ້ແມ່ຍິງ ແລະ ເດັກ ໄດ້ເຂົ້າເຖິງການພັດທະນາ, ມີຄວາມສະເໝີພາບຍິງ-ຊາຍ ແລະ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຢ່າງເຕັມສ່ວນຈາກການພັດທະນາເສດຖະກິດ-ສັງຄົມ.

ພັດທະນາແມ່ຍິງ ແລະ ເດັກ ໃຫ້ມີຄວາມພ້ອມທຸກດ້ານ ໃນການປະກອບສ່ວນພັດທະນາເສດຖະກິດ-ສັງຄົມ, ຄຽງຄູ່ກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ, ເດັກ, ຊົນເຜົ່າ ໂດຍໃຫ້ການບໍລິການຊ່ວຍເຫຼືອ ຫຼື ການອຸດໜູນທີ່ຈໍາເປັນ ເພື່ອພັດທະນາຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນ ແລະ ຊຸກຍູ້ການມີສ່ວນຮ່ວມຂອງສັງຄົມຢ່າງກວ້າງຂວາງ.

### 3.1 ຄາດໝາຍ ແລະ ຕົວຊີ້ບອກ:

**+ ສົ່ງເສີມ ແລະ ສ້າງຄວາມສະເໝີພາບຍິງ-ຊາຍ:**

- ດັດຊະນີຄວາມບໍ່ສະເໝີພາບຍິງ-ຊາຍ ໃຫ້ຫຼຸດລົງຈາກ 0,459 ໃນປີ 2019 ມາເປັນ 0,430 ໃນປີ 2025.
- ດັດຊະນີການພັດທະນາຄວາມສະເໝີພາບຍິງ-ຊາຍ ໃຫ້ເພີ່ມຂຶ້ນຈາກ 0,927 ໃນປີ 2019 ມາເປັນ 0,984 ໃນປີ 2025.
- ດັດຊະນີການພັດທະນາແມ່ຍິງ ໃຫ້ເພີ່ມຂຶ້ນຈາກ 0,589 ໃນປີ 2019 ມາເປັນ 0,675 ໃນປີ 2025.
- ອັດຕາຂອງແມ່ຍິງທີ່ຖືກຄວາມຮຸນແຮງຈາກຄູ່ຮ່ວມນອນຂອງຕົນ ຢ່າງໜ້ອຍໜຶ່ງໃນ 3 ປະເພດຂອງຄວາມຮຸນແຮງ (ຮ່າງກາຍ, ເພດ ແລະ ຈິດໃຈ) ໃຫ້ຫຼຸດລົງຈາກ 30,3% ມາເປັນ 15%.
- ຊຸກຍູ້ສ້າງເງື່ອນໄຂໃຫ້ໃຫ້ພະນັກງານນໍາພາ-ຄຸ້ມຄອງ ທີ່ເປັນເພດຍິງທຸກຂັ້ນ ໂດຍສະເລ່ຍ ໃຫ້ກວມ 20% ຂຶ້ນໄປ, ໃນນັ້ນ:
    - ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເພດຍິງ ກວມ 30% ຂຶ້ນໄປ.
    - ການນໍາທີ່ເປັນເພດຍິງຂັ້ນສູງກາງ ໃຫ້ກວມ 30% ຂຶ້ນໄປ.
    - ການນໍາທີ່ເປັນເພດຍິງຂັ້ນແຂວງ, ນະຄອນຫຼວງວຽງຈັນ ໃຫ້ກວມ 20% ຂຶ້ນໄປ.
    - ການນໍາທີ່ເປັນເພດຍິງຂັ້ນເມືອງ ໃຫ້ກວມ 20% ຂຶ້ນໄປ.
    - ການນໍາທີ່ເປັນເພດຍິງຂັ້ນບ້ານ ໃຫ້ກວມ 10% ຂຶ້ນໄປ.
    - ແມ່ຍິງເປັນລັດຖະກອນໃຫ້ກວມເອົາ 50% ຂຶ້ນໄປ.
- ແມ່ຍິງທີ່ລອດຈາກຄວາມຮຸນແຮງສາມາດເຂົ້າເຖິງການບໍລິການດ້ານກົດໝາຍ, ສຸຂະພາບ ແລະ ສັງຄົມ ເພີ່ມຂຶ້ນຈາກ 2% ເປັນ 20%.
- ອັດຕາສ່ວນແມ່ຍິງທີ່ຖືກຄວາມຮຸນແຮງໃນຊ່ວງຊີວິດ ຫຼຸດລົງຈາກ 15,3% ເປັນ 6%.
- ແມ່ຍິງໄດ້ເຂົ້າຮ່ວມຄົ້ນຄວ້າເຊື່ອມຊຶມແນວທາງນະໂຍບາຍຂອງລັດ, ລັດຖະທໍາມະນູນ, ກົດໝາຍ, ສົນທິສັນຍາຕ່າງໆທີ່ພົວພັນເຖິງແມ່ຍິງ ແລະ ເດັກ, ແຜນພັດທະນາ, ມູນເຊື້ອປະຫວັດສາດ ແລະ ວັດທະນະທໍາຕ່າງໆ ກວມເອົາ 80% ຂອງແມ່ຍິງໃນເກນອາຍຸ 15 ປີ ຂຶ້ນໄປ.
- ສະຫະພັນແມ່ຍິງຂັ້ນເມືອງ ແລະ ຂັ້ນແຂວງ ໄດ້ຮັບການຍົກລະດັບຄວາມຮູ້ຄວາມສາມາດກ່ຽວກັບວຽກງານໃຫ້ຄໍາປຶກສາແກ່ແມ່ຍິງ ແລະ ເດັກນ້ອຍ ກວມ 50%, ແມ່ຍິງ ແລະ ເດັກຜູ້ທີ່ມີບັນຫາ ແລະ ຜູ້ຖືກເຄາະຮ້າຍໄດ້ຮັບການປົກປ້ອງຊ່ວຍເຫຼືອຕາມກົດໝາຍ ແລະ ເຂົ້າເຖິງຂະບວນການຍຸຕິທໍາຫຼາຍຂຶ້ນ; ປ້ອງກັນ ແລະ ຫຼຸດຜ່ອນການແຕ່ງງານກ່ອນໄວຂອງເດັກ.

- ແມ່ຍິງຜູ້ທຸກຍາກ, ດ້ອຍໂອກາດໃນບັນດາສະຫະພັນແມ່ຍິງແຂວງໄດ້ຮັບການຝຶກອົບຮົມວິຊາຊີບໄລຍະສັ້ນ ແລະ ໄລຍະຍາວໃຫ້ໄດ້ 1.500 ຄົນ.
- ຂະຫຍາຍການຈັດຕັ້ງ, ສະມາຊິກສະຫະພັນແມ່ຍິງໃນຂົງເຂດທຸລະກິດເອກະຊົນ (ຫົວໜ່ວຍທຸລະກິດທີ່ມີແມ່ຍິງກວມ 50% ຂຶ້ນໄປ) ກວມ 20%.

**+ ສົ່ງເສີມສິດທິ ແລະ ພັດທະນາເດັກ:**

- ເປີເຊັນຂອງເດັກທີ່ຂາດເຂີນໃນຫຼາຍມິຕິ ໂດຍອີງໃສ່ນິຍາມແຫ່ງຊາດກ່ຽວກັບຄວາມຂາດເຂີນ ໃຫ້ເຫຼືອ 30% ໃນແຕ່ລະແຂວງ.
- ການແຕ່ງດອງຂອງເດັກອາຍຸຕໍ່າກວ່າ 15-19 ປີ ເດັກຍິງໃຫ້ຫຼຸດລົງຈາກ 23,5% ມາເປັນ 20% ແລະ ເດັກຊາຍ ໃຫ້ຫຼຸດລົງຈາກ 5,9% ມາເປັນ 3%
- ຫຼຸດຜ່ອນການໃຊ້ຄວາມຮຸນແຮງຕໍ່ເດັກ:
    + ທາງດ້ານຮ່າງກາຍ: ເດັກຍິງ ຫຼຸດລົງຈາກ 15% ມາເປັນ 10% ແລະ ເດັກຊາຍ ຫຼຸດລົງຈາກ 16,9% ມາເປັນ 10%;
    + ທາງດ້ານຈິດໃຈ: ເດັກຍິງ ຫຼຸດລົງຈາກ 24,2% ມາເປັນ 20% ແລະ ເດັກຊາຍ ຫຼຸດລົງຈາກ 17,7% ມາເປັນ 12%;
    + ທາງເພດ: ເດັກຍິງ ຫຼຸດລົງຈາກ 7,3% ມາເປັນ 4% ແລະ ເດັກຊາຍ ຫຼຸດລົງຈາກ 12% ມາເປັນ 8%.

**3.2 ວຽກງານຈຸດສຸມ:**

+ <u>ວຽກງານສົ່ງເສີມ ແລະ ສ້າງໂອກາດໃຫ້ແມ່ຍິງ ແລະ ເດັກ:</u>

- ຄົ້ນຄວ້າເຊື່ອມຊຶມ, ໂຄສະນາ ແລະ ເຜີຍແຜ່ແນວທາງນະໂຍບາຍຂອງລັດ, ລັດຖະທໍາມະນູນ, ກົດໝາຍ ແລະ ສົນທິສັນຍາທີ່ພົວພັນເຖິງການພັດທະນາ ແລະ ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກ, ແຜນພັດທະນາ ແລະ ມູນເຊື້ອປະຫວັດສາດ ແລະ ວັດທະນະທໍາ.
- ຂະຫຍາຍສະມາຊິກສະຫະພັນແມ່ຍິງໃຫ້ກວມເອົາທຸກຂົງເຂດວຽກງານ, ສ້າງຄວາມເຂັ້ມແຂງໃຫ້ພະນັກງານນໍາພາ-ຄຸ້ມຄອງເພດຍິງ ແລະ ພະນັກງານສືບທອດປ່ຽນແທນ.
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງສ້າງເງື່ອນໄຂໃຫ້ສະມາຊິກແມ່ຍິງໄດ້ເຂົ້າຮ່ວມຍົກລະດັບວຽກງານດ້ານວິຊາສະເພາະ, ທິດສະດີການເມືອງ ແລະ ອື່ນໆ.
- ປ້ອງກັນ, ສະກັດກັ້ນ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ການຄ້າມະນຸດ ແລະ ການແຕ່ງງານກ່ອນໄວຂອງເດັກຍິງ; ສ້າງຄວາມເຂັ້ມແຂງ, ຕິດຕາມປະເມີນຜົນວຽກງານໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍທີ່ມີບັນຫາຢູ່ໃນຄອບຄົວ ແລະ ສັງຄົມ; ປັບປຸງ ແລະ ຂະຫຍາຍການບໍລິການໂທລະສັບສາຍດ່ວນຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.
- ພັດທະນາຊີວິດການເປັນຢູ່ຂອງເດັກໃຫ້ຫຼຸດຜ່ອນຈາກການຂາດເຂີນໃນຫຼາຍມິຕິ (ໂພຊະນາການ, ສຸຂະພາບ, ການປົກປ້ອງເດັກ, ສຸຂະອະນາໄມ, ທີ່ຢູ່ອາໄສ, ການພັດທະນາກ່ອນໄວຮຽນ, ການສຶກສາ, ຂໍ້ມູນຂ່າວສານ).
- ປະສານສົມທົບກັບທຸກພາກສ່ວນໃນການເຊື່ອມວຽກຄວາມສະເໝີພາບຍິງ-ຊາຍ ເຂົ້າໃນບັນດາແຜນພັດທະນາ, ແຜນງານ, ໂຄງການ, ກິດຈະກໍາ ເພື່ອເປັນການສົ່ງເສີມ ແລະ ສ້າງຄວາມສະເໝີພາບຍິງ-ຊາຍໃນທຸກຂົງເຂດ.
- ສ້າງຄວາມເຂັ້ມແຂງໃຫ້ກົນໄກຕິດຕາມຊຸກຍູ້ ແລະ ການບັງຄັບໃຊ້ກົດໝາຍທີ່ຕິດພັນກັບຄວາມສະເໝີພາບຍິງ-ຊາຍ, ສົນທິສັນຍາຊີດໍ ແລະ ສົນທິສັນຍາສິດທິເດັກ.

- ສ້າງຄວາມເຂັ້ມແຂງກົນໄກຂອງການໃຫ້ບໍລິການຊ່ວຍເຫຼືອຜູ້ຖືກລອດຊີວິດຈາກຄວາມຮຸນແຮງໃນຂະແໜງສັງຄົມ ແລະ ສາທາລະນະສຸກ ໃຫ້ມີປະສິດທິພາບ.
- ສ້າງຄວາມເຂັ້ມແຂງໃນການສ້າງ ແລະ ນຳໃຊ້ສະຖິຕິຄວາມສະເໝີພາບຍິງ-ຊາຍ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ.
- ປູກຈິດສຳນຶກກ່ຽວກັບຄວາມສະເໝີພາບຍິງ-ຊາຍໃຫ້ບັນດານັກການເມືອງ, ສະມາຊິກສະພາ, ຜູ້ນຳຂອງແຕ່ລະພາກສ່ວນ, ນັກກົດໝາຍ, ໄວໜຸ່ມ, ພໍ່ແມ່, ຜູ້ປົກຄອງ, ຜູ້ນຳຊຸມຊົນ ແລະ ພະນັກງານ-ລັດຖະກອນ ເພື່ອເສີມສ້າງຄວາມເຂົ້າໃຈກ່ຽວກັບຄວາມສຳຄັນຂອງຄວາມສະເໝີພາບຍິງ-ຊາຍ, ສົນທິສັນຍາຊີດໍ, ມາດຕະການພິເສດຊົ່ວຄາວ ແລະ ໃຊ້ຄວາມຮູ້ກ່ຽວກັບ ຄວາມສະເໝີພາບຍິງ-ຊາຍ ເຂົ້າໃນການສ້າງກົດໝາຍຕິດພັນກັບສິດທິແມ່ຍິງ ແລະ ເດັກ ແລະ ການປະຕິບັດສິດສະເໝີພາບຍິງ-ຊາຍ ຢູ່ໃນຄອບຄົວ, ຊຸມຊົນ ແລະ ສັງຄົມ.
- ສົ່ງເສີມແມ່ຍິງ ແລະ ເດັກໄດ້ຮັບການຝຶກອົບຮົມວິຊາຊີບ, ເຕັກນິກວິຊາການ ເປັນຕົ້ນ: ການຜະລິດກະສິກຳ , ປູກຝັງ, ລ້ຽງສັດ, ຫັດຖະກຳ, ການບໍລິການເງິນ, ດຳເນີນທຸລະກິດ, ການທະນາຄານ, ພາສີ, ກົດໝາຍ ແລະ ລະບຽບການທຸລະກິດ ພ້ອມທັງຄົ້ນຄວ້າສ້າງນະໂຍບາຍໃນການເຂົ້າເຖິງແຫຼ່ງທຶນ ແລະ ການດຳເນີນທຸລະກິດຂອງແມ່ຍິງ ເພື່ອປະກອບທຸລະກິດເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.
- ສົ່ງເສີມການພັດທະນາໄວໜຸ່ມ, ເດັກຍິງ ຜ່ານຫຼາຍນະໂຍບາຍ ແລະ ມາດຕະການ ເຊັ່ນ: ຂອບໂຄງການ "ນາງນ້ອຍ" ເພື່ອລະດົມໃຫ້ທຸກພາກສ່ວນເພີ່ມທະວີການລົງທຶນໃສ່ໄວໜຸ່ມ ແລະ ເດັກຍິງໃນໄວຈະເລີນພັນ. ປູກຈິດສຳນຶກ ໃຫ້ຮູ້ຄຸນຄ່າຂອງຕົນໃນການສ້າງສາພັດທະນາ; ສົ່ງເສີມພາລະບົດບາດຂອງແມ່ຍິງ ໃນຕົວເມືອງ ແລະ ຊົນນະບົດ ເພື່ອປະກອບສ່ວນພັດທະນາ ດ້ວຍການຫຼຸດຜ່ອນຊ່ອງຫວ່າງຄ່າຕອບແທນແຮງງານຫຼຸດໂຕນ ລະຫວ່າງ ຍິງ-ຊາຍ.
- ສ້າງຄວາມທົນທານໃຫ້ກັບແມ່ຍິງ ແລະ ເດັກ ໂດຍການຊ່ວຍເຫຼືອດ້ານມະນຸດສະທຳ ລວມທັງພະຍາດໂຄວິດ-19, ການກຽມຄວາມພ້ອມສຳລັບການປ່ຽນແປງດິນຟ້າອາກາດ ແລະ ການຕອບໂຕ້ສຸກເສີນ.
- ສືບຕໍ່ຜັນຂະຫຍາຍສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ສົນທິສັນຍາສິດເດັກ, ຄວາມໝາຍໝັ້ນຂອງ ສປປ ລາວ ໃນການສົ່ງເສີມສິດທິເດັກພາຍໃຕ້ຄຳຂວັນ "ຄວາມອາດສາມາດບໍ່ມຂ້ອນທີ່ບໍ່ຈຳກັດຂອງຄົນລາວລຸ້ນປີ 2030" ແລະ ຖະແຫຼງການ, ແຜນປະຕິບັດງານປັກກິ່ງ.
- ປັບປຸງຄວາມສົມດຸນທາງດ້ານບຸກຄະລາກອນໃຫ້ມີເພດຍິງ-ຊາຍ, ຊົນເຜົ່າ ໃນທຸກລະດັບ.
- ສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງໃນການວາງແຜນ, ຕິດຕາມ ແລະ ຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ ທີ່ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ; ລວມທັງການສ້າງຂີດຄວາມສາມາດໃຫ້ແກ່ແມ່ຍິງ.
- ຮັບປະກັນການມີສ່ວນຮ່ວມຂອງເດັກ ແລະ ແມ່ຍິງ ເຂົ້າໃນແຜນພັດທະນາຕົວເມືອງ ເພື່ອສ້າງໂອກາດວຽກເຮັດງານທຳ.

## 4. ແຜນວຽກຈຸດສຸມທີ 4: ສົ່ງເສີມ ແລະ ພັດທະນາຊັບພະຍາກອນໜຸ່ມໃຫ້ມີຄຸນນະພາບ ແລະ ມີວຽກເຮັດງານທຳຫຼາຍຂຶ້ນ.

### 4.1. ຄາດໝາຍ ແລະ ຕົວຊີ້ບອກ:

- ຝຶກອົບຮົມວິຊາຊີບ ແລະ ສ້າງວຽກເຮັດງານທຳໃຫ້ແກ່ຊາວໜຸ່ມ ໂດຍສະເພາະແມ່ນຊາວໜຸ່ມທີ່ຢູ່ຊົນນະບົດຫ່າງໄກສອກຫຼີກ, ຜູ້ທຸກຍາກ ແລະ ດ້ອຍໂອກາດ ໃນສາຂາວິຊາຊີບ ຊ່າງສ້ອມແປງລົດຈັກ, ລົດໃຫຍ່, ຊ່າງໄຟຟ້າ, ຊ່າງເຊື່ອມໂລຫະ, ຊ່າງຕັດຫຍິບ, ເສີມສວຍ, ປູກຝັງ ແລະ ລ້ຽງສັດ ໃຫ້ຂະຫຍາຍຕົວເພີ່ມຂຶ້ນ 20% ຕໍ່ປີ (ຜ່ານສູນກາງຊາວໜຸ່ມ).

- ໃຫ້ຄຳປຶກສາແກ່ຊາວໜຸ່ມ-ເຍົາວະຊົນທີ່ຜິດຫວັງ, ເສຍໃຈ, ບໍ່ມີທາງອອກໃນຊີວິດ ແລະ ບັນຫາອື່ນໆ ໃຫ້ໄດ້ 15% ຂອງຈຳນວນປະຊາກອນຊາວໜຸ່ມ.
- ໂຄສະນາເຜີຍແຜ່ກົດໝາຍ ແລະ ນະໂຍບາຍໃຫ້ແກ່ຊາວໜຸ່ມໃນຂອບເຂດທົ່ວປະເທດ.
- ໂຄສະນາປູກຈິດສຳນຶກໃນໂຮງຮຽນນັບແຕ່ຊັ້ນປະຖົມໃນຂອບເຂດທົ່ວປະເທດ.
- ຈັດຝຶກອົບຮົມວຽກງານວິຊາສະເພາະ ແລະ ວຽກງານຊາວໜຸ່ມໃຫ້ແກ່ພະນັກງານທີ່ເຮັດວຽກຊາວໜຸ່ມໃນຂອບເຂດທົ່ວປະເທດໃຫ້ໄດ້ 1 ຄັ້ງຕໍ່ປີ.

**4.2. ວຽກງານຈຸດສຸມ**

- ໂຄສະນາ ແລະ ເຜີຍແຜ່ກົດໝາຍຊາວໜຸ່ມລາວ ແລະ ຍຸດທະສາດການພັດທະນາຊາວໜຸ່ມຢູ່ ສປປ ລາວ (2021-2030).
- ປູກຈິດສຳນຶກໃຫ້ຊາວໜຸ່ມ-ເຍົາວະຊົນຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມຢ່າງຕັ້ງໜ້າໃນວຽກງານບູລິມະສິດ ເປັນຕົ້ນ ຂະແໜງສຶກສາທິການ ແລະ ກິລາ, ສາທາລະນະສຸກ, ວິຊາຊີບ, ການອອກແຮງງານ, ປົກປັກຮັກສາວັດທະນະທຳ ໂດຍສະເພາະການຮັກສາເອກະລັກຮູບຊົງຂອງເຮືອນ, ການນຸ່ງຖື ແລະ ວິຖີຊີວິດຂອງປະຊາຊົນບັນດາເຜົ່າ, ການບໍລິໂພກຂໍ້ມູນຂ່າວສານ, ສິ່ງແວດລ້ອມ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ-ເຍົາວະຊົນ.
- ຊາວໜຸ່ມ ແລະ ເຍົາວະຊົນ ຢູ່ເຂດຫ່າງໄກສອກຫຼີກ ແລະ ຊຸມຊົນໃນເຂດຊົນນະບົດ ໄດ້ມີວຽກເຮັດງານທຳ ແລະ ປັບປຸງທັກສະໃນການເຮັດທຸລະກິດ ເພື່ອສ້າງລາຍຮັບສູ່ຄອບຄົວ.
- ສົ່ງເສີມການປະກອບອາຊີບ ແລະ ສ້າງວຽກເຮັດງານທຳໃນຂະແໜງໃນລະບົບໃຫ້ນັບມື້ນັບຫຼາຍຂຶ້ນ.
- ປັບປຸງຂີດຄວາມສາມາດໃຫ້ແກ່ພະນັກງານຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ອົງການຈັດຕັ້ງອື່ນໆ ເພື່ອໃຫ້ສາມາດອອກແບບ ແລະ ຈັດຕັ້ງປະຕິບັດແຜນງານຕ່າງໆຂອງຊາວໜຸ່ມ.
- ເພີ່ມທະວີຄວາມອາດສາມາດໃຫ້ແກ່ຊາວໜຸ່ມລາວໃນຂອບເຂດທົ່ວປະເທດ ໃນການມີສ່ວນຮ່ວມຢ່າງຫ້າວຫັນຕໍ່ການພັດທະນາທ້ອງຖິ່ນຂະແໜງການ ແລະ ພັດທະນາເສດຖະກິດ-ສັງຄົມ.
- ໃຫ້ຄຳປຶກສາແກ່ຊາວໜຸ່ມ-ເຍົາວະຊົນທີ່ຜິດຫວັງ, ເສຍໃຈ, ບໍ່ມີທາງອອກໃນຊີວິດ ແລະ ບັນຫາອື່ນ.
- ສົ່ງເສີມພອນສະຫວັນຂອງເຍົາວະຊົນ-ອະນຸຊົນທັນວາ ໃຫ້ເຂົາເຈົ້າມີເວທີສະແດງອອກ ເພື່ອໃຫ້ສັງຄົມ ແລະ ຄອບຄົວ, ພັກ-ລັດ ແລະ ປວງຊົນຮັບຮູ້ ເຖິງຄວາມສາມາດຂອງເຍົາວະຊົນ-ອະນຸຊົນທັນວາ.
- ສົ່ງເສີມການຮັກສາສຸຂະພາບຂອງຊາວໜຸ່ມ ໂດຍການໃຫ້ຄວາມຄວາມຮູ້ ກ່ຽວກັບສຸຂະພາບຈະເລີນພັນ, ເພດສຶກສາ, ພະຍາດ HIV ແລະ ຜົນຂ້າງຄຽງຂອງສານເສບຕິດຕ່າງໆ. ສ້າງໂອກາດໃຫ້ຊາວໜຸ່ມເຂົ້າມາສ່ວນຮ່ວມໃນການຕັດສິນບັນຫາຕ່າງໆໃຫ້ຫຼາຍຂຶ້ນ.

## 5. ແຜນວຽກຈຸດສຸມທີ 5: ປະຊາຊົນ ແລະ ຜູ້ອອກແຮງງານພາກວິສາຫະກິດ, ຜູ້ປະກອບອາຊີບອິດສະຫຼະເຂົ້າເຖິງການບໍລິການປົກປ້ອງສັງຄົມທີ່ມີປະສິດທິຜົນດີຂຶ້ນ.

ປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ 2025 ໂດຍສຸມໃສ່ ພັດທະນາລະບົບປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບເພື່ອຂະຫຍາຍການປົກຄຸມປະກັນສັງຄົມສຳລັບຜູ້ອອກແຮງງານໃຫ້ກວມເອົາກຸ່ມເປົ້າໝາຍຕ່າງໆ ຢ່າງກວ້າງຂວາງ ແລະ ເຂົ້າເຖິງການບໍລິການປະກັນສັງຄົມດ້ວຍຮູບແບບປະກອບທຶນສົມທົບ, ປັບປຸງກົນໄກການຄຸ້ມຄອງ ແລະ ບໍລິຫານກອງທຶນປະກັນສັງຄົມແຫ່ງຊາດໃຫ້ມີຄວາມຍືນຍົງ, ສາມາດຕອບສະໜອງການຈ່າຍເງິນອຸດໜູນຕ່າງໆ ແລະ ໃຫ້ການບໍລິການທີ່ມີຄຸນນະພາບ ແລະ ມີຄວາມໂປ່ງໃສ.

ປັບປຸງລະບົບສະຫວັດດີການສັງຄົມ ໃຫ້ພະນັກງານທີ່ມີຜົນງານໃນພາລະກິດປະຕິວັດຊາດປະຊາທິປະໄຕ ແລະ ກຸ່ມຄົນດ້ອຍໂອກາດ ເປັນຕົ້ນ ເດັກທີ່ຕ້ອງການປົກປ້ອງພິເສດ, ຜູ້ພິການ ແລະ ຜູ້ສູງອາຍຸທີ່ປ່ຽວພອຍ ໃຫ້ສາມາດເຂົ້າເຖິງການບໍລິການທີ່ມີປະສິດທິພາບດີຂຶ້ນ ແລະ ການມີສ່ວນຮ່ວມຂອງສັງຄົມ ຢ່າງກ້ວາງຂວາງ.

ປັບປຸງລະບົບສັງຄົມສົງເຄາະໃຫ້ສາມາດບໍລິການຊ່ວຍເຫຼືອສົງເຄາະ ແລະ ບັນເທົາທຸກໃຫ້ປະຊາຊົນ ທີ່ທຸກຍາກ ແລະ ຜູ້ປະສົບໄພພິບັດຕ່າງໆ ໂດຍສົ່ງເສີມສັງຄົມມີສ່ວນຮ່ວມຢ່າງກວ້າງຂວາງ.

**5.1. ຄາດໝາຍ ແລະ ຕົວຊີ້ບອກ:**

- ປັບປຸງວຽກງານກວດສອບການຄຸ້ມຄອງລາຍຮັບ-ລາຍຈ່າຍຂອງກອງທຶນປະກັນສັງຄົມແຫ່ງຊາດໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ປີລະ 2 ຄັ້ງ;
- ຂະຫຍາຍການຄຸ້ມຄອງຫົວໜ່ວຍວິສາຫະກິດເພີ່ມໃໝ່ ໃຫ້ໄດ້ 1.275 ຫົວໜ່ວຍ;
- ຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ໄດ້ 157.500 ຄົນ, ໃນນີ້ ຜູ້ປະກັນຕົນພາກລັດ 7.500 ຄົນ, ພາກວິສາຫະກິດ 135.000 ຄົນ ແລະ ຜູ້ສະໝັກໃຈ 15.000 ຄົນ;
- ຄາດຄະເນການສະໜອງເງິນອຸດໜູນປະກັນສັງຄົມປະເພດຕ່າງໆ ໃຫ້ໄດ້ 479.633 ຄົນ, ໃນນີ້ ພາກລັດ 198.321 ຄົນ, ພາກວິສາຫະກິດ ແລະ ຜູ້ສະໝັກໃຈ 283.312 ຄົນ;
- ສູ້ຊົນເກັບເງິນສົມທົບ ໃຫ້ໄດ້ 10.630 ຕື້ກີບ, ໃນນີ້ ພາກລັດ 7.902 ຕື້ກີບ, ພາກວິສາຫະກິດ ແລະ ຜູ້ສະໝັກໃຈ 2.728 ຕື້ກີບ; ລາຍຈ່າຍການອຸດໜູນ ແລະ ການບໍລິຫານ 9.461 ຕື້ກີບ, ໃນນີ້ ພາກລັດ 7.891 ຕື້ກີບ, ພາກວິສາຫະກິດ ແລະ ຜູ້ສະໝັກໃຈ 1.569 ຕື້ກີບ; ຄາດຄະເນຮອດປີ 2025 ມີຄັງສະສົມທັງໝົດ 2.810 ຕື້ກີບ, ເພີ່ມການລົງທຶນ ຄາດວ່າ ມີຜົນໄດ້ຮັບປະມານ 602 ຕື້ກີບ.
- ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ໃຫ້ໄດ້ 16.000 ທ່ານ ຈະນໍາໃຊ້ງົບປະມານທັງໝົດ 418,82 ຕື້ກີບ ໃນນີ້ 5 ເປົ້າໝາຍບູລິມະສິດ ໃຫ້ໄດ້ 15.000 ຄົນ ນໍາໃຊ້ງົບປະມານ 388,82 ຕື້ກີບ ແລະ ເປົ້າໝາຍທົ່ວໄປ ໃຫ້ໄດ້ 1.000 ຄົນ ນໍາໃຊ້ງົບປະມານ 30 ຕື້ກີບ.
- ຄົ້ນຄວ້າ ແລະ ແກ້ໄຂ ອຸດໜູນເສຍອົງຄະ ຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບ ໃນພາລະກິດປະຕິວັດຊາດປະຊາທິປະໄຕ ໃຫ້ໄດ້ 950 ທ່ານ.
- ມີລະບົບຖານຂໍ້ມູນການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.
- ມີລະບົບຖານຂໍ້ມູນຄົນພິການ ແລະ ຜູ້ສູງອາຍຸຢູ່ສູນກາງ ແລະ ຕິດຕັ້ງໃຫ້ 18 ແຂວງ ໃນຂອບເຂດທົ່ວປະເທດ.
- ຄຸນນະພາບຊີວິດຂອງຜູ້ພິການ ຈໍານວນ 2.000 ຄົນ ແລະ ຜູ້ອາຍຸສູງ 800 ຄົນ ໄດ້ຮັບການພັດທະນາ.
- ຂະຫຍາຍຄະນະກໍາມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ຂັ້ນເມືອງ 35 ເມືອງ ແລະ ຂັ້ນບ້ານ 500 ບ້ານ ພ້ອມທັງ ຈັດຝຶກອົບຮົມວຽກປົກປ້ອງ ແລະ ຊ່ວຍເຫຼືອເດັກ ໃຫ້ໄດ້ຢ່າງໜ້ອຍ 500 ຄົນ, ສະເລ່ຍ 100 ຄົນຕໍ່ປີ.
- ສົມທົບທຶນໃນການເບິ່ງແຍງລ້ຽງດູເດັກນ້ອຍບ້ານເດັກເອັສໂອເອັສລາວ ໃຫ້ໄດ້ 1.003 ຄົນ ເປັນຍິງ 444 ຄົນ.
- ໃຫ້ການຊ່ວຍເຫຼືອເດັກທີ່ຕ້ອງການປົກປ້ອງພິເສດ, ຊ່ວຍເຫຼືອແມ່ຍິງຖືພາ ແລະ ເດັກນັບແຕ່ມື້ເກີດຮອດອາຍຸ 1.000 ວັນ ໃຫ້ໄດ້ 2.000 ຄົນ.
- ສ້າງສູນພັດທະນາສັງຄົມມິດຕະພາບລາວ-ໄທ ໃຫ້ໄດ້ 1 ແຫ່ງ.
- ສ້າງເກັບມ້ຽນເຄື່ອງອຸປະໂພກ-ບໍລິໂພກ ໄດ້ຮັບການປັບປຸງ 2 ແຫ່ງ ຢູ່ນະຄອນຫຼວງວຽງຈັນ 1 ແຫ່ງ ແລະ ແຂວງຈໍາປາສັກ 1 ແຫ່ງ ແລະ ສ້າງສາງໃໝ່ ຢູ່ພາກເໜືອ 1 ແຫ່ງ ຢູ່ອຸດົມໄຊ.
- ຊຸກຍູ້ສ້າງກອງທຶນສັງຄົມສົງເຄາະ ຢູ່ເມືອງທີ່ທຸກຍາກ ໃຫ້ໄດ້ 23 ເມືອງ.
- ປຸກລະດົມ ແລະ ຮັບບໍລິຈາກເລືອດ ໃຫ້ໄດ້ 364.400 ຖົງ ໃນນີ້ ຢູ່ສູນເລືອດແຫ່ງຊາດ 151.530 ຖົງ ແລະ ທ້ອງຖິ່ນຕ່າງໆ 211.870 ຖົງ.
- ຊ່ວຍເຫຼືອເຂົ້າກິນໃຫ້ຜູ້ປະສົບໄພພິບັດຢູ່ເມືອງສະໜາມໄຊ ແຂວງອັດຕະປື 4.656 ຄອບຄົວ ແລະ ຜູ້ປະສົບໄພພິບັດ, ຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດໃນສັງຄົມໃນຂອບເຂດທົ່ວປະເທດ ໃຫ້ໄດ້ປີລະ 210.000 ຄົນ,

ສະໜອງເຄື່ອງອຸປະໂພກ-ບໍລິໂພກປະເພດຕ່າງໆ ປີລະ 4.000 ຄົນ, ສົມທົບປຸກສ້າງເຮືອນຢູ່ ປີລະ 500 ຄອບຄົວ ແລະ ປັບປຸງຊີວິດການເປັນຢູ່ ປີລະ 100 ຄົນ.

**5.2. ວຽກງານຈຸດສຸມ:**

- ພັດທະນາລະບົບປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບ ເພື່ອໃຫ້ຜູ້ອອກແຮງງານສາມາດເຂົ້າເຖິງການປະກັນຕົນ ຢ່າງກວ້າງຂວາງ ແລະ ການເຂົ້າເຖິງການບໍລິການປະກັນສັງຄົມ ທີ່ບໍ່ມີຜົນກະທົບດ້ານການເງິນໃຫ້ກັບຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ ທີ່ເກີດສິດດ້ອຍຮູບແບບປະກອບທຶນສົມທົບ.
- ຂະຫຍາຍການປົກຄຸມປະກັນສັງຄົມສໍາລັບຜູ້ອອກແຮງງານໃຫ້ກວມເອົາກຸ່ມເປົ້າໝາຍຕ່າງໆ ໂດຍສຸມໃສ່ຜູ້ອອກແຮງງານໃນຫົວໜ່ວຍວິສາຫະກິດທີ່ຈົດທະບຽນວິສາຫະກິດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ຜູ້ອອກແຮງງານທີ່ປະກອບອາຊີບສ່ວນບຸກຄົນໃນຂະແໜງເສດຖະກິດໃນລະບົບຢ່າງກ້ວາງຂວາງ.
- ສ້າງສິ່ງອໍານວຍຄວາມສະດວກໃຫ້ຜູ້ອອກແຮງງານນອກລະບົບຕາມກຸ່ມອາຊີບຕ່າງໆໃນຂັ້ນທ້ອງຖິ່ນໃຫ້ເຂົ້າຮ່ວມລະບົບປະກັນສັງຄົມແບບສະໝັກໃຈຢ່າງກວ້າງຂວາງ ແລະ ໃຫ້ອຸດໜູນທີ່ເໝາະສົມກັບຄວາມຕ້ອງການສະເພາະຂອງແຕ່ລະກຸ່ມເປົ້າໝາຍ.
- ປັບປຸງກົນໄກການຄຸ້ມຄອງ ແລະ ບໍລິຫານກອງທຶນປະກັນສັງຄົມແຫ່ງຊາດ ໃຫ້ມີຄວາມຍືນຍົງ ສາມາດຕອບສະໜອງການຈ່າຍເງິນອຸດໜູນຕ່າງໆໃນແຕ່ລະໄລຍະ ແລະ ໃຫ້ບໍລິການທີ່ມີຄຸນນະພາບ, ວ່ອງໄວ, ໂປ່ງໃສ ແລະ ສາມາດກວດສອບໄດ້.
- ປັບປຸງຕາໜ່າງການບໍລິການປະກັນສັງຄົມ ຢູ່ຂັ້ນເມືອງໃຫ້ເປັນລະບົບ ແລະ ມີຄຸນນະພາບ ພ້ອມທັງສ້າງກົນໄກການກວດກາວຽກງານປະກັນສັງຄົມ ໃຫ້ເປັນລະບົບ ສາມາດເຄື່ອນໄຫວ ຢ່າງມີປະສິດທິຜົນ.
- ສົ່ງເສີມການເຂົ້າຮ່ວມປະກັນສັງຄົມ ໂດຍດໍາເນີນການປະຊາສໍາພັນວຽກປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ ແລະ ກວ້າງຂວາງເຮັດໃຫ້ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ແລະ ຜູ້ປະກອບອາຊີບສ່ວນບຸກຄົນມີຄວາມຮັບຮູ້ເຂົ້າໃຈກ່ຽວກັບສິດ ແລະ ຜົນປະໂຫຍດຂອງວຽກງານປະກັນສັງຄົມ.
- ຄົ້ນຄວ້າ ແລະ ວິໄຈຄະນິດສາດປະກັນສັງຄົມ ເພື່ອຮັບປະກັນໃຫ້ມີຖານການເງິນທີ່ມີການສະສົມທຶນ ແລະ ຄວາມຍືນຍົງຂອງກອງທຶນປະກັນສັງຄົມ ອີງຕາມຜົນການປະເມີນ ແລະ ວິໄຈຄະນິດສາດປະກັນສັງຄົມ ເພື່ອຮັບປະກັນຄວາມຍືນຍົງຂອງກອງທຶນປະກັນສັງຄົມແຫ່ງຊາດ, ປັບປຸງເງື່ອນໄຂທີ່ຈໍາເປັນເພື່ອອໍານວຍຄວາມສະດວກໃນການປະກອບທຶນສົມທົບເຂົ້າປະກັນສັງຄົມ ໂດຍຜ່ານລະບົບການໂອນຜ່ານທະນາຄານ ເພື່ອຮັບປະກັນການເກັບທຶນສົມທົບ ແລະ ຄວາມຍືນຍົງຂອງກອງທຶນປະກັນສັງຄົມແຫ່ງຊາດ.
- ສ້າງລະບົບປະກັນໄພສໍາລັບຊາວກະສິກອນຂະໜາດນ້ອຍ.
- ປະຕິບັດນະໂຍບາຍສະແດງຄວາມກະຕັນຍູຮູ້ບຸນຄຸນ ຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດການປະຕິວັດຊາດ ປະຊາທິປະໄຕ ຕາມກຸ່ມເປົ້າໝາຍຕ່າງໆ ໂດຍສະເພາະເປົ້າໝາຍ ບູລິມະສິດໃຫ້ສໍາເລັດ ໂດຍປັບປຸງຖານຂໍ້ມູນຂ່າວສານ ໃຫ້ເປັນລະບົບ, ມີຄວາມຊັດເຈນ ແລະ ສະໜອງງົບປະມານ ເຂົ້າໃນການຈັດຕັ້ງປະຕິບັດໃຫ້ຫຼາຍຂຶ້ນ ລວມທັງສົ່ງເສີມໃຫ້ສັງຄົມມີສ່ວນຮ່ວມຢ່າງກວ້າງຂວາງ.
- ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ພິການ ແລະ ອາຍຸສູງ ຕາມກົດໝາຍ ໃຫ້ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ພ້ອມທັງພັດທະນາຊີວິດການເປັນຢູ່ຂອງເຂົາເຈົ້າ ໂດຍການມີສ່ວນຮ່ວມຈາກສັງຄົມຢ່າງກວ້າງຂວາງ.
- ຮັບປະກັນການມີສ່ວນຮ່ວມຂອງກຸ່ມຄົນດ້ອຍໂອກາດ ແລະ ຄົນພິການ ເຂົ້າໃນແຜນພັດທະນາຕົວເມືອງ ເພື່ອສ້າງໂອກາດວຽກເຮັດງານທໍາ ແລະ ຄົ້ນຄວ້າ, ປັບປຸງ ແລະ ສ້າງໂຄງລ່າງພື້ນຖານທີ່ເໝາະສົມ ໃຫ້ສາມາດນໍາໃຊ້ໂດຍທຸກພາກສ່ວນ ລວມທັງຜູ້ສູງອາຍຸ.

- ພັດທະນາວຽກງານປົກປ້ອງເດັກໃຫ້ມີຄວາມເຂັ້ມແຂງ, ມີປະສິດທິພາບ ແລະ ສາມາດໃຫ້ການບໍລິການຊ່ວຍເຫຼືອ ຫຼື ການອຸດໜູນເດັກທີ່ຕ້ອງການປົກປ້ອງພິເສດ, ມີຄວາມສ່ຽງຕໍ່ການຄ້າມະນຸດ ແລະ ສົ່ງເສີມໃຫ້ສັງຄົມມີສ່ວນຮ່ວມຢ່າງກວ້າງຂວາງ.
- ປະສານສົມທົບກັບບັນດາອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງສັງຄົມໃຫ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວຽກສະຫວັດດີການສັງຄົມໃຫ້ມີປະສິດທິຜົນ.
- ສືບຕໍ່ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດວຽກມະນຸດສະທຳ ໂດຍສຸມໃສ່ການປຸກລະດົມຂົນຂວາຍບໍລິຈາກເລືອດ ແລະ ສະໜອງເລືອດທີ່ປອດໄພ, ການຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ, ການສົ່ງເສີມສຸຂະພາບຂັ້ນພື້ນຖານ, ການປະຖົມພະຍາບານ, ການກູ້ໄພສຸກເສີນໂດຍມີສ່ວນຮ່ວມຂອງສັງຄົມຢ່າງກວ້າງຂວາງ.

## 6. ແຜນວຽກຈຸດສຸມທີ 6: ການກວດກູ້ລະເບີດບໍ່ທັນແຕກ ແລະ ຊີວິດຂອງປະຊາຊົນມີຄວາມປອດໄພຈາກລະເບີດບໍ່ທັນແຕກເພີ່ມຂຶ້ນເທື່ອລະກ້າວ.

ບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວ ເປັນໜຶ່ງໃນບັນຫາບູລິມະສິດ ທີ່ຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ການນຳໃຊ້ທີ່ດິນເພື່ອການຜະລິດກະສິກຳ, ທີ່ຢູ່ອາໄສ, ການທ່ອງທ່ຽວ ຫຼື ການນຳໃຊ້ທີ່ດິນເພື່ອເຂົ້າເຖິງແຫຼ່ງຊັບພະຍາກອນທຳມະຊາດຕ່າງໆ, ເປັນອຸປະສັກໃນການພັດທະນາເສດຖະກິດ-ສັງຄົມ ແລະ ຍັງເປັນໄພຄຸກຄາມເລື່ອງຄວາມປອດໄພຕໍ່ຊີວິດ ແລະ ຈິດໃຈຂອງປະຊາຊົນ. ໃນໄລຍະຜ່ານມາ ເຖິງວ່າພາກສ່ວນກ່ຽວຂ້ອງໄດ້ເກັບກູ້ລະເບີດບໍ່ທັນແຕກອອກຈາກພື້ນທີ່ການຜະລິດກະສິກຳ, ດິນປຸກສ້າງ ແລະ ເນື້ອທີ່ພັດທະນາອື່ນໆແລ້ວກໍ່ຕາມ ແຕ່ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ ແລະ ການພັດທະນາເສດຖະກິດ-ສັງຄົມ ເຫັນວ່າເນື້ອທີ່ທີ່ໄດ້ເກັບກູ້ລະເບີດຍັງບໍ່ຫຼາຍເທົ່າທີ່ຄວນ ຍ້ອນຄວາມຈຳກັດດ້ານຊັບພະຍາກອນ, ທຶນຮອນ ແລະ ເຕັກນິກ. ສ້າງຍຸດທະສາດໄລຍະຍາວ ເພື່ອເກັບກູ້ລະເບີດບໍ່ທັນແຕກ, ເສີມຂະຫຍາຍຄວາມເປັນເຈົ້າການ ແລະ ສ້າງຄວາມອາດສາມາດໃຫ້ຂະແໜງການເກັບກູ້ລະເບີດບໍ່ທັນແຕກໃຫ້ຍືນຍົງ.

### 6.1. ຄາດໝາຍ ແລະ ຕົວຊີ້ບອກ:

- ໂຄສະນາຜົນຮ້າຍ ແລະ ທີ່ມາຂອງລະເບີດບໍ່ທັນແຕກ ຕາມກຸ່ມບ້ານເປົ້າໝາຍ ໃຫ້ໄດ້ 3.000 ເທື່ອບ້ານ ແລະ ຂະຫຍາຍການສິດສອນຫຼັກສູດລະເບີດຕົກຄ້າງໃນສະຖາບັນການສຶກສາຕ່າງໆໃຫ້ໄດ້ 500 ແຫ່ງ ແລະ ຫຼຸດຜ່ອນຈຳນວນຜູ້ໄດ້ຮັບເຄາະຮ້າຍລະເບີດບໍ່ທັນແຕກໃຫ້ຕໍ່າກວ່າ 40 ຄົນ/ປີ.
- ຈັດຕັ້ງການສຳຫຼວດບໍ່ແມ່ນວິຊາການ ເພື່ອຊອກຫາຈຸດຫຼັກຖານລະເບີດບໍ່ທັນແຕກ ໃຫ້ໄດ້ 2.776 ບ້ານ ແລະ ສຳຫຼວດແບບວິຊາການ ເພື່ອກຳນົດພື້ນທີ່ລະເບີດບໍ່ທັນແຕກຕົກຄ້າງ ໃຫ້ໄດ້ 250.000 ເຮັກຕາ, ສະເລ່ຍ 50.000 ເຮັກຕາ/ປີ.
- ກວດກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ທຳການຜະລິດ ແລະ ເຂດຊຸມຊົນ, ເຂດຈຸດສຸມທຸລະກິດ ໃຫ້ໄດ້ 50.000 ເຮັກຕາ, ສະເລ່ຍ 10.000 ເຮັກຕາ/ປີ.
- ໃຫ້ຄວາມຊ່ວຍເຫຼືອຜູ້ປະສົບອຸປະຕິເຫດຈາກລະເບີດບໍ່ທັນແຕກໃນການປິ່ນປົວ, ຟື້ນຟູສຸຂະພາບຈິດ, ໜ້າທີ່ການ, ຝຶກວິຊາຊີບ ແລະ ປະກອບອາຊີບ ໃຫ້ໄດ້ 5.760 ຄົນ ຂອງຈຳນວນຜູ້ທີ່ໄດ້ຮັບເຄາະຮ້າຍທັງໝົດ 9.607 ຄົນ, ໃນນີ້ ປິ່ນປົວດ້ານການແພດ 250 ຄົນ, ຟື້ນຟູສຸຂະພາບຈິດ 250 ຄົນ, ຟື້ນຟູໜ້າທີ່ການ 750 ຄົນ, ຝຶກອົບຮົມ ແລະ ປະກອບອາຊີບ 2.010 ຄົນ ແລະ ໂຄສະນາສິດທິຄົນພິການ 2.500 ຄົນ.

### 6.2. ວຽກງານຈຸດສຸມ:

ສືບຕໍ່ຕັ້ງໜ້າແກ້ໄຂບັນຫາລະເບີດບໍ່ທັນແຕກ ເພື່ອໃຫ້ປະຊາຊົນມີຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ໂດຍສຸມໃສ່:

- ໂຄສະນາສຶກສາອົບຮົມຄວາມສ່ຽງຈາກລະເບີດບໍ່ທັນແຕກໃຫ້ຊຸມຊົນຢ່າງກວ້າງຂວາງ ແລະ ໃຫ້ການຊ່ວຍເຫຼືອຜູ້ທີ່ຖືກເຄາະຮ້າຍຢ່າງທັນການ ເພື່ອໃຫ້ເຂົາເຈົ້າສາມາດສືບຕໍ່ດຳລົງຊີວິດ ແລະ ປະກອບສ່ວນເຂົ້າໃນການພັດທະນາ.
- ດຳເນີນການສຳຫຼວດບໍ່ແມ່ນວິຊາການ, ການສຳຫຼວດວິຊາການ ແລະ ກວດກູ້ລະເບີດບໍ່ທັນແຕກຕາມຈຸດຕ່າງໆ ໃຫ້ໄດ້ຫຼາຍຂຶ້ນ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາອົງການເກັບກູ້ລະເບີດ ທາງດ້ານວິຊາການ, ການປະສານງານ ແລະ ການວາງແຜນໃຫ້ມີປະສິດທິພາບ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ; ເພີ່ມການລະດົມທຶນຈາກພາຍໃນ ແລະ ຕ່າງປະເທດຢ່າງກວ້າງຂວາງ.
- ເພີ່ມທະວີການປະສານສົມທົບ ລະຫວ່າງພາກລັດ ແລະ ອົງການຈັດຕັ້ງທາງສັງຄົມ ເຊິ່ງມີບົດບາດສຳຄັນໃນການປະກອບສ່ວນຊ່ວຍເຫຼືອແກ່ລັດຖະບານ ໃນການຈັດຕັ້ງປະຕິບັດວຽກງານລະເບີດບໍ່ທັນແຕກ.

**7. ບາງໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດສະໜັບສະໜຸນ ເປົ້າໝາຍ 3 (ລາຍລະອຽດມີໃນເອກະສານຊ້ອນທ້າຍ):**

1. ໂຄງການກໍ່ສ້າງໂຄງລ່າງພື້ນຖານຫຼຸດຜ່ອນຄວາມທຸກຍາກຢູ່ໃນຊົນນະບົດລາວ ຊຸດທີ 1 (ໂຄງການສືບຕໍ່).
2. ແຜນງານພັດທະນາທ້ອງຖິ່ນ (ລຸກຊຳບວກ) (ໂຄງການສືບຕໍ່).
3. ໂຄງການເກັບກູ້ລະເບີດບໍ່ທັນແຕກ (ໂຄງການສືບຕໍ່).
4. ໂຄງການກໍ່ສ້າງໂຄງລ່າງພື້ນຖານຫຼຸດຜ່ອນຄວາມທຸກຍາກຢູ່ໃນຊົນນະບົດລາວ ຊຸດທີ 2 (ໂຄງການໃໝ່).
5. ໂຄງການພັດທະນາໂຄງລ່າງພື້ນຖານຊົນນະບົດ (ໂຄງລ່າງສາທາລະນະ, ເສັ້ນທາງເຂົ້າສູ່ບ່ອນທຳການຜະລິດ (ໂຄງການໃໝ່).
6. ໂຄງການຈັດສັນບ່ອນທຳການຜະລິດ ແລະ ອາຊີບສ້າງລາຍຮັບ ໃຫ້ປະຊາຊົນ (ໂຄງການໃໝ່).
7. ໂຄງການສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ໃຫ້ເປັນຕົວເມືອງໃນຊົນນະບົດຕາມມາດຕະຖານໃນດຳລັດ 348/ລບ (ໂຄງການໃໝ່).
8. ໂຄງການສົ່ງເສີມຜະລິດກະສິກຳແບບປະສົມປະສານ ເພື່ອຄ້ຳປະກັນດ້ານສະບຽງອາຫານ ແລະ ໂພຊະນາການ ແລະ ສ້າງລາຍຮັບ ໃຫ້ປະຊາຊົນບັນດາເຜົ່າ (ໂຄງການໃໝ່).
9. ໂຄງການເພີ່ມທະວີໂອກາດດ້ານເສດຖະກິດ-ສັງຄົມຂອງໄວໜຸ່ມ (UNDP) (ໂຄງການສືບຕໍ່).
10. ໂຄງການສົ່ງເສີມອາຊີບຂອງຜູ້ອາຍຸສູງ (ໂຄງການສືບຕໍ່)
11. ໂຄງການສົ່ງເສີມການລົບລ້າງການໃຊ້ແຮງງານເດັກເຮັດວຽກງານຮູບແບບຮ້າຍແຮງ ແລະ ເປັນອັນຕະລາຍ (ໂຄງການໃໝ່)
12. ໂຄງການສົ່ງເສີມບົດບາດຍິງ-ຊາຍ ແລະ ພັດທະນາແມ່ຍິງ
13. ໂຄງການປັບປຸງ ແລະ ຂະຫຍາຍຕາໜ່າງໃຫ້ຄຳປຶກສາແມ່ຍິງ ແລະ ເດັກນ້ອຍ (ໂຄງການໃໝ່)
14. ໂຄງການປົກປ້ອງ ແລະ ລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ ເພື່ອເຊື່ອມສານຄວາມສະເໝີພາບຍິງ-ຊາຍ ເຂົ້າໃນແຜນພັດທະນາຂອງ ສປປ ລາວ (ໂຄງການສືບຕໍ່)

## *ເປົ້າໝາຍທີ 4: ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ*

ການພັດທະນາເສດຖະກິດ-ສັງຄົມຕ້ອງຕິດພັນກັບການປົກປັກຮັກສາສິ່ງແວດລ້ອມຕາມທິດສີຂຽວ ແລະ ຍືນຍົງ ໃນການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃນເຂດຕົວເມືອງ ແລະ ຊົນນະບົດໃຫ້ດີຂຶ້ນ ໂດຍການຮ່ວມມື

ແລະ ປະສານງານທີ່ເຂັ້ມແຂງ ລະຫວ່າງພາກລັດ, ເອກະຊົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິພາບ, ມີປະສິດທິຜົນສູງ ແລະ ຍືນຍົງ ທັງຮັບປະກັນການສ້າງຜົນປະໂຫຍດສູງສຸດໃຫ້ປະເທດຊາດ ແລະ ປະຊາຊົນ ໂດຍສະເພາະແມ່ນການຊື້ຂາຍກາກບອນຈາກປ່າໄມ້ ໂດຍຜ່ານການສົ່ງເສີມການເງິນສີຂຽວ. ປັບປຸງບັນດານິຕິກຳ, ການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເພື່ອຮັບປະກັນຄວາມຍືນຍົງຂອງໂຄງການລົງທຶນ ແລະ ການຈັດການບັນຫາມົນລະພິດ ແລະ ສິ່ງເສດເຫຼືອ. ກຳນົດມາດຕະການ ແລະ ເງື່ອນໄຂ ເພື່ອສ້າງຄວາມທົນທານ, ການປັບຕົວ ແລະ ການຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ພ້ອມທັງສົ່ງເສີມການເຕີບໂຕສີຂຽວ ໂດຍການລົງທຶນຢ່າງມີຈຸດສຸມໃສ່ຂະແໜງການເຕີບໂຕສີຂຽວ ເພື່ອສົ່ງເສີມຄວາມຫຼາກຫຼາຍ ແລະ ຫັນໄປສູ່ການພັດທະນາຕາມຮູບແບບເສດຖະກິດໝູນວຽນຫຼາຍຂຶ້ນ. ຖືສຳຄັນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ດ້ວຍການຫຼຸດຜ່ອນມົນລະພິດ, ການຈູດເຜົາສິ່ງເສດເຫຼືອ ໃນການປ່ອຍທາດອາຍເຮືອນແກ້ວ ຄຽງຄູ່ກັບ ການກຳນົດຍຸດທະສາດຮັບມືການປ່ຽນແປງ, ການກະກຽມຄວາມພ້ອມຮັບມື ແລະ ຕອບໂຕ້ໄພພິບັດທຳມະຊາດ, ການຮັບມືສຸກເສີນຢ່າງທັນການ.

## 1. ແຜນວຽກຈຸດສຸມທີ 1: ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ

### 1.1. ຄາດໝາຍ ແລະ ຕົວຊີ້ບອກ:

- ສູ້ຊົນເນື້ອທີ່ດິນປ່າໄມ້ ເພີ່ມຂຶ້ນ ໃຫ້ໄດ້ 70% ແລະ ການປົກຫຸ້ມປ່າໄມ້ ບໍ່ໃຫ້ຫຼຸດ 70% ຂອງເນື້ອທີ່ທົ່ວປະເທດ ໃນປີ 2025.
- ຍົກລະດັບປ່າສະຫງວນແຫ່ງຊາດຂຶ້ນເປັນອຸທິຍານແຫ່ງຊາດ ໃຫ້ໄດ້ 5 ແຫ່ງ ໃນປີ 2025 (ປ່າສະຫງວນແຫ່ງຊາດ ເຊປຽນ, ດົງຫົວສາວ, ພູເຂົາຄວາຍ, ນ້ຳກ່ານ ແລະ ນ້ຳກະດິງ).
- ສະຫຼຸບ ແລະ ປະເມີນຄືນຮູບແບບການລົງທຶນເພື່ອຮັກສາ ແລະ ຟື້ນຟູປ່າໄມ້ ເປັນຕົ້ນ ປ່າຍອດນ້ຳ ເຊິ່ງມີລັດ, ເອກະຊົນ ແລະ ປະຊາຊົນເຂົ້າຮ່ວມໃນຮູບແບບຂອງນ້ຳກັດຢໍລະປາ ເພື່ອຈັດຕັ້ງຜັນຂະຫຍາຍຕົວແບບດັ່ງກ່າວໃຫ້ກວ້າງຂວາງອອກຕື່ມ ເປັນຕົ້ນເຂດປ່າຍອດນ້ຳ, ເຂດປົກປັກຮັກສາຊີວະນາໆພັນ, ພ້ອມທັງເປັນການຊຸກຍູ້ສົ່ງເສີມການທ່ອງທ່ຽວແບບອະນຸລັກທຳມະຊາດຕາມທິດຍືນຍົງ.
- ສູ້ຊົນສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນໃຫ້ສຳເລັດ ໃນຂອບເຂດທົ່ວປະເທດ ໂດຍເນັ້ນໃສ່ການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍທີ່ດິນ ໃຫ້ສຳເລັດ ແລະ ມີຜົນສັກສິດ.
- ສູ້ຊົນຂຶ້ນທະບຽນອອກໃບຕາດິນ ໃຫ້ໄດ້ 1,6 ລ້ານຕອນ ໃນຂອບເຂດທົ່ວປະເທດ, ພ້ອມທັງຫັນລະບົບການຄຸ້ມຄອງທີ່ດິນໃຫ້ເປັນທັນສະໄໝ.
- ປູກໄມ້ ໃຫ້ໄດ້ 200.000 ເຮັກຕາ ເພື່ອເປັນສິນຄ້າ ແລະ ຄ້ຳປະກັນການສະໜອງວັດຖຸດິບປ້ອນໂຮງງານ.
- ຟື້ນຟູປ່າໄມ້ ໃຫ້ໄດ້ 1.800.000 ເຮັກຕາ.
- ສູ້ຊົນສ້າງສະຖານີວັດແທກຄຸນນະພາບອາກາດ ຢ່າງໜ້ອຍໃຫ້ໄດ້ 9 ແຫ່ງ ໃນຂອບເຂດທົ່ວປະເທດ.
- ສູ້ຊົນສ້າງແຜນຄຸ້ມຄອງອ່າງຮັບນ້ຳຂະໜາດໃຫຍ່ 14 ອ່າງ ແລະ ອ່າງຮັບນ້ຳຫຼັກຂອງແຂວງ ໃນຂອບເຂດທົ່ວປະເທດ ໃຫ້ສຳເລັດ;

### 1.2. ວຽກງານຈຸດສຸມ:

ວຽກງານການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນນ້ຳ: ຮັບປະກັນການນຳໃຊ້ຊັບພະຍາກອນນ້ຳເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ເກີດປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ ເປັນຕົ້ນ ນຳໃຊ້ໃນການບໍລິໂພກ ແລະ ອຸປະໂພກຂອງປະຊາຊົນ, ສຸຂະອະນາໄມ ແລະ ສຸຂະພາບ, ການຜະລິດ, ການປະມົງ, ຜະລິດພະລັງງານໄຟຟ້າ ແລະ ຊົມໃຊ້ໃນອຸດສາຫະກຳ ແລະ ອື່ນໆ. ສະນັ້ນ, ເພື່ອຮັບປະກັນການນຳໃຊ້ນ້ຳຢ່າງພຽງພໍ, ມີປະສິດທິພາບ, ມີປະສິດທິຜົນ

ແລະ ຍືນຍົງ ຕ້ອງສຸມໃສ່ຄຸ້ມຄອງ ແລະ ຮັກສາແຫຼ່ງນໍ້າ ດ້ວຍການຊຸກຍູ້ສົ່ງເສີມການສ້າງກົນໄກປະສານງານໃນການຄຸ້ມຄອງ, ຈັດສັນ ແລະ ນໍາໃຊ້ນໍ້າແບບມີສ່ວນຮ່ວມຂອງຫຼາຍຂະແໜງການ ແລະ ທ້ອງຖິ່ນ ລວມທັງປະຊາຊົນບັນດາເຜົ່າ ແລະ ທຸກພາກສ່ວນໃນສັງຄົມ; ປົກປັກຮັກສາ ແລະ ປັບປຸງຄຸນນະພາບຂອງປ່າຕົ້ນນໍ້າ ແລະ ແຫຼ່ງນໍ້າທີ່ຕິດພັນກັບອ່າງຮັບນໍ້າ ໂດຍຈັດຕັ້ງຜັນຂະຫຍາຍຍຸດທະສາດນໍ້າ ແລະ ຊັບພະຍາກອນນໍ້າແຫ່ງຊາດ ແລະ ແຜນການຄຸ້ມຄອງອ່າງຮັບນໍ້າ; ປົກປັກຮັກສາ, ປັບປຸງ ແລະ ຂະຫຍາຍອ່າງເກັບນໍ້າທໍາມະຊາດ (ຫ້ວຍ, ໜອງ, ຄອງ, ບຶງ) ແລະ ແຫຼ່ງນໍ້າທີ່ຄົນສ້າງຂຶ້ນໃຫ້ມີປະສິດທິພາບສູງຂຶ້ນ ແລະ ມີຄວາມຍືນຍົງ; ປົກປັກຮັກສາຄຸນນະພາບນໍ້າ ແລະ ສ້າງແຜນຄຸ້ມຄອງ, ຈັດສັນ ແລະ ນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ. ສ້າງ ແລະ ປັບປຸງໂຄງລ່າງພື້ນຖານທີ່ຈໍາເປັນ ແລະ ລາຄາເໝາະສົມ ໃນການເກັບ ແລະ ບໍາບັດນໍ້າເປື້ອນໃນຕົວເມືອງ ແລະ ຊົນນະບົດ. ກໍານົດຍຸດທະສາດ ແລະ ນະໂຍບາຍໃນລະດັບຊາດ ແລະ ຂັ້ນທ້ອງຖິ່ນ ເພື່ອຊຸກຍູ້ການລົງທຶນທີ່ມີປະສິດທິພາບ ດ້ານບໍລິການສຸຂະອະນາໄມຢ່າງເໝາະສົມ.

- ວຽກງານຄວບຄຸມມົນລະພິດ: ຊຸກຍູ້ການປັບປຸງລະບົບຄຸ້ມຄອງມົນລະພິດໃຫ້ເຂັ້ມແຂງ ແລະ ມີປະສິດທິພາບສູງຂຶ້ນ ໂດຍສຸມໃສ່: ສືບຕໍ່ສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍຕ່າງໆ ທີ່ກ່ຽວຂ້ອງໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຮັດກຸມ; ດໍາເນີນການຕິດຕາມກວດກາຄຸນນະພາບສິ່ງແວດລ້ອມ ໂດຍສະເພາະ ຄຸນນະພາບນໍ້າ ແລະ ຄຸນນະພາບອາກາດ (PM 2.5), ສ້າງລະບົບຖານຂໍ້ມູນ ແລະ ເກັບກໍາຂໍ້ມູນແຫຼ່ງປ່ອຍມົນລະພິດ, ສານເຄມີເປັນພິດ, ສິ່ງເສດເຫຼືອອັນຕະລາຍ ແລະ ສິ່ງເສດເຫຼືອອື່ນໆ ເພື່ອຄວບຄຸມ, ຕິດຕາມກວດກາ ແລະ ວັດແທກລະດັບມົນລະພິດ ແລະ ການສ້າງນະໂຍບາຍ. ຊຸກຍູ້ໂຮງງານອຸດສາຫະກໍາ, ຜູ້ປະກອບການ ແລະ ຜູ້ຊົມໃຊ້ທຸກລະດັບ ໃນການຈັດການ ແລະ ໝູນໃຊ້ສິ່ງເສດເຫຼືອໃຫ້ຫຼາຍຂຶ້ນ ດ້ວຍການສ້າງສິ່ງຈູງໃຈ ແລະ ກິດຈະກໍາທາງສັງຄົມເພື່ອຍົກສູງຈິດສໍານຶກ ແລະ ຄວາມຮັບຜິດຊອບຮ່ວມກັນ, ແກ້ໄຂບັນຫາມົນລະພິດທາງອາກາດ, ສ້າງຄວາມເຂັ້ມແຂງໃນການແກ້ໄຂບັນຫາມົນລະພິດທີ່ເກີດຈາກການ ນໍາໃຊ້ພລາສຕິກໃນທຸກລະດັບ; ພັດທະນານິຕິກໍາ ແລະ ລະບຽບການກ່ຽວກັບສານເຄມີຕົກຄ້າງ, ໂດຍສະເພາະແມ່ນໃນຂະແໜງການກະສິກໍາ ທີ່ຕິດພັນກັບການນໍາໃຊ້ຢາປາບສັດຕູພືດ. ຊຸກຍູ້ດໍາເນີນມາດຕະການຫຼຸດຜ່ອນ ແລະ ສະກັດກັ້ນໄຟປ່າ, ໝອກຄວັນຈາກການຈູດປ່າ-ເຮັດໄຮ່ເຂດທີ່ມີຄວາມສ່ຽງໃນຂອບເຂດທົ່ວປະເທດ; ເພີ່ມຂີດຄວາມສາມາດໃຫ້ແກ່ພະນັກງານຂອງຂະແໜງການ ແລະ ທ້ອງຖິ່ນ.

- ວຽກງານການຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນປ່າໄມ້: ສຸມໃສ່ສ້າງກົນໄກການສ້າງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ປ່າແບບມີສ່ວນຮ່ວມຂອງຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ; ສໍາຫຼວດ, ຈັດແບ່ງ, ໝາຍເຂດປ່າ ແລະ ປະເພດປ່າໃຫ້ສໍາເລັດໂດຍໄວ ພ້ອມທັງໃຫ້ມີການຕິດຕາມກວດກາການຄຸ້ມຄອງ ແລະ ນໍາໃຊ້ປ່າແຕ່ລະປະເພດ; ສົ່ງເສີມການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ປ່າແບບຍືນຍົງຂອງຊຸມຊົນ ເພື່ອຫຼຸດຜ່ອນເນື້ອທີ່ປ່າໄມ້ທີ່ມີການເຊື່ອມໂຊມ; ຊຸກຍູ້ ແລະ ສົ່ງເສີມໃຫ້ມີການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ ປູກປ່າ ຫຼື ປູກຕົ້ນໄມ້ແບບປະສົມປະສານໝູນວຽນໃສ່ດິນປົກໂລ້ນ ແລະ ດິນເຊື່ອມໂຊມ ເພື່ອຂະຫຍາຍເນື້ອທີ່ປົກຫຸ້ມຂອງປ່າ ທັງເປັນການຫຼຸດຜ່ອນບັນຫາການປ່ຽນແປງຂອງດິນຟ້າອາກາດ ແລະ ຕອບສະໜອງອຸດສາຫະກໍາປຸງແຕ່ງໄມ້ ແລະ ສົ່ງອອກ ເພື່ອຊຸກຍູ້ການຂະຫຍາຍຕົວເສດຖະກິດ, ສ້າງວຽກເຮັດງານທໍາ, ຫຼຸດຜ່ອນຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

- ການຄຸ້ມຄອງ ແລະ ນໍາໃຊ້ທີ່ດິນ: ສ້າງຍຸດທະສາດນໍາໃຊ້ທີ່ດິນ ແລະ ແຜນແມ່ບົດຈັດສັນທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ, ອອກໃບຕາດິນໃຫ້ສໍາເລັດໃນຂອບເຂດທົ່ວປະເທດ ແລະ ຫັນເປັນທັນສະໄໝລະບົບການຄຸ້ມຄອງຂໍ້ມູນໃບຕາດິນໃຫ້ສໍາເລັດ; ຊຸກຍູ້ສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ໃຫ້ສໍາເລັດໃນຂອບເຂດທົ່ວປະເທດ. ຈັດສັນທີ່ດິນກະສິກໍາເພື່ອປູກພືດກະສິກໍາສະອາດ, ກະສິກໍາອິນຊີ ແບບຍືນຍົງ, ການຜະລິດສິນຄ້າອຸດສາຫະກໍາແບບຍືນຍົງ ແລະ ຫຼຸດຜ່ອນຜົນກະທົບ ແລະ ສ້າງຄວາມທົນທານຕໍ່ກັບ ການປ່ຽນແປງຂອງດິນຟ້າອາກາດ ຜ່ານການປູກປ່າໄມ້ ຫຼື ການປູກປ່າໄມ້ກະສິກໍາ.

- ການຄຸ້ມຄອງຊີວະນາໆພັນ: ປົກປ້ອງຊີວະນາໆພັນ ແລະ ລະບົບນິເວດ ທີ່ມີຄຸນຄ່າທາງດ້ານເສດຖະກິດ ແລະ ສຳຄັນຕໍ່ສິ່ງທີ່ມີຊີວິດ ໂດຍການສົ່ງເສີມການທ່ອງທ່ຽວທີ່ເປັນມິດຕໍ່ສິ່ງແວດລ້ອມ, ພັດທະນາສວນອຸທິຍານແຫ່ງຊາດ ແລະ ປົກປັກຮັກສາແຫຼ່ງກຳເນີດຂອງຊີວະນາໆພັນທີ່ຈະເປັນສ່ວນຊຸກຍູ້ໂອກາດທາງດ້ານເສດຖະກິດ ແລະ ຫຼຸດຜ່ອນຄວາມສ່ຽງຂອງການລະບາດຂອງພະຍາດ. ດຳເນີນການທົດລອງສ້າງຕົວແບບການຂຶ້ນບັນຊີຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃນເຂດພູຈອມວອຍ ເພື່ອເປັນພື້ນຖານໃນການປະເມີນການຄຸ້ມຄອງນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ພ້ອມທັງດຳເນີນມາດຕະການຄຸ້ມຄອງ ແລະ ຫຼຸດຜ່ອນຂໍ້ຂັດແຍ່ງລະຫວ່າງຊີວະນາໆພັນ ແລະ ສັດປ່າກັບການພັດທະນາເສດຖະກິດ-ສັງຄົມ.

- ວຽກງານສິ່ງແວດລ້ອມ: ສ້າງ, ປັບປຸງ ແລະ ຊຸກຍູ້ການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍກ່ຽວກັບວຽກງານປ້ອງກັນ, ຄຸ້ມຄອງ ແລະ ສົ່ງເສີມການມີສ່ວນຮ່ວມຂອງມວນຊົນ ໃນການປົກປັກຮັກສາສິ່ງແວດລ້ອມ; ສ້າງແຜນດຳເນີນງານ, ປຶ້ມຄູ່ມື ແລະ ບົດແນະນຳດ້ານສິ່ງແວດລ້ອມ; ການປະເມີນສິ່ງແວດລ້ອມແບບຍຸດທະສາດ (SEA); ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIA); ການປະເມີນຜົນກະທົບຕໍ່ກັບເສດຖະກິດ-ສັງຄົມ (SEIA); ສ້າງຄວາມເຂັ້ມແຂງໃນການຕິດຕາມກວດກາໂຄງການລົງທຶນ.

## 2. ແຜນວຽກຈຸດສຸມທີ 2: ການເຕີບໂຕສີຂຽວ ແລະ ການແກ້ໄຂບັນຫາຕໍ່ກັບການປ່ຽນແປງດິນຟ້າອາກາດ

### 2.1.ຄາດໝາຍ ແລະ ຕົວຊີ້ບອກ:

- ສຶກສາຄວາມເປັນໄປໄດ້ ໃນການສ້າງແຜນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໃຫ້ຈົນຮອດລະດັບດຸນດ່ຽງກັບຄວາມສາມາດໃນການດູດຊັບຂອງແຫຼ່ງດູດຊັບຕ່າງໆ, ເຊິ່ງແມ່ນການປ່ອຍທາດອາຍເຮືອນແກ້ວໃຫ້ຢູ່ໃນລະດັບສູນ (Net Zero Emission Plan 2050).
- ຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ໃຫ້ໄດ້ປະມານ 30 ລ້ານໂຕນອາຍກາກໂບນິກ ($tC0_2e$) ແລະ ຂາຍກາກບອນປ່າໄມ້ ບໍ່ໃຫ້ຫຼຸດ 95 ລ້ານໂດລາສະຫະລັດ.
- ສ້າງແຜນງານແຫ່ງຊາດສະບັບໃໝ່ ກ່ຽວກັບການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານແຫ່ງຊາດກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃຫ້ສຳເລັດ.
- ສ້າງມາດຕະຖານ ແລະ ກາໝາຍປະສິດທິພາບພະລັງງານ ສຳລັບອຸປະກອນໄຟຟ້າໃຫ້ສຳເລັດ.
- ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດສົ່ງເສີມການນຳໃຊ້ພະລັງງານສະອາດເຂົ້າໃນຂະແໜງຄົມມະນາຄົມ ໃຫ້ໄດ້ 14% ຂອງການນຳໃຊ້ພາຫະນະໃນຂອບເຂດທົ່ວປະເທດ.
- ສ້າງສະຖານີສາກລົດໄຟຟ້າ/ປໍ້ານໍ້າມັນຊີວະພາບ ໃຫ້ໄດ້ຫຼາຍກວ່າ 100 ສະຖານີ ໃນຂອບເຂດທົ່ວປະເທດ (ພາກເໜືອ 20 ສະຖານີ, ພາກກາງ 50 ສະຖານີ ແລະ ພາກໃຕ້ 30 ສະຖານີ).
- ກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານ ສະໜາມຂີ່ເຫຍື້ອ ທີ່ໄດ້ມາດຕະຖານ ໃນຂອບເຂດທົ່ວປະເທດ, ໃນນີ້ຢ່າງໜ້ອຍໃຫ້ໄດ້ 5 ຈຸດ ໃນຕົວເມືອງໃຫຍ່.

### 2.2.ວຽກງານຈຸດສຸມ:

(1). ວຽກການເຕີບໂຕສີຂຽວ: ສຸມໃສ່ການລົງທຶນທີ່ເປັນມິດຕໍ່ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ ເພື່ອຫຼຸດຜ່ອນການເອື່ອຍອີງໃສ່ການຂຸດຄົ້ນຊັບພະຍາກອນທຳມະຊາດ ເຊິ່ງຈະຊ່ວຍໃຫ້ເກີດມີຄວາມຫຼາກຫຼາຍ ແລະ ການເຕີບໂຕທາງດ້ານເສດຖະກິດ. ຄົ້ນຄວ້ານະໂຍບາຍ, ລະບຽບການ ເພື່ອກຳນົດງົບປະມານສີຂຽວ ເຂົ້າໃນສາລະບານງົບປະມານແຫ່ງຊາດ ແລະ ຂະແໜງການ. ສ້າງແຮງຈູງໃຈໃຫ້ແກ່ການລົງທຶນພາກເອກະຊົນພາຍໃນ ແລະ ຕ່າງປະເທດໃນຂະແໜງການບູລະມີສິດທີ່ມີໝັ່ນແໜງ ແລະ ມີທ່າແຮງຊຸກຍູ້ການເຕີບໂຕສີຂຽວ, ດັ່ງນີ້:

- <u>ເສດຖະກິດໝູນວຽນ:</u> ການເຕີບໂຕເສດຖະກິດ ຕ້ອງຄຽງຄູ່ກັບ ການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ, ມີປະສິດທິພາບ ແລະ ມີປະສິດທິຜົນ ດ້ວຍການຮັບປະກັນອາຍຸການໃຊ້ງານ ແລະ ຄຸນນະພາບຂອງຜົນ

ຜະລິດ ໄປຕາມຮູບແບບເສດຖະກິດໝູນວຽນ ທີ່ແນ່ໃສ່ການຫຼຸດຜ່ອນ, ການນໍາສິ່ງທີ່ມີຢູ່ມາໃຊ້ຄືນໃໝ່ ແລະ ການນໍາມາຜະລິດຄືນໃໝ່ເພື່ອສ້າງມູນຄ່າເພີ່ມ. ສໍາລັບ ສປປ ລາວ ຂະແໜງການທີ່ມີທ່າແຮງໃນການທົດລອງ ຮູບແບບເສດຖະກິດໝູນວຽນ ລວມມີການທ່ອງທ່ຽວທີ່ຕິດພັນກັບທໍາມະຊາດ, ຄວາມເປັນໄປໄດ້ ເພື່ອການ ສົ່ງເສີມການລ້ຽງໄດໃນອ່າງເກັບນໍ້າຂອງເຂື່ອນໄຟຟ້າເພື່ອຜະລິດນໍ້າມັນຊີວະພາບ, ນໍ້າມັນປາ ແລະ ປຸ໋ຍ. ອີກ ຂະແໜງໜຶ່ງທີ່ມີທ່າແຮງບົ່ມຊ້ອນແມ່ນ ການສົ່ງອອກວັດສະດຸກໍ່ສ້າງສີຂຽວ ເປັນຕົ້ນ ໄມ້ໄຜ່.

- ຂະແໜງອຸດສາຫະກໍາ: ສົ່ງເສີມການພັດທະນາອຸດສາຫະກໍາແບບຄົບວົງຈອນທີ່ນໍາເອົາເສດວັດຖຸດິບ ຫຼື ສິ່ງ ເສດເຫຼືອຈາກໂຮງງານໜຶ່ງໄປເປັນວັດຖຸດິບປ້ອນໂຮງງານອື່ນ ເພື່ອເພີ່ມປະສິດທິພາບຂອງການນໍາໃຊ້ຊັບພະຍາ ກອນທໍາມະຊາດທີ່ມີຢູ່ຢ່າງຈໍາກັດໃຫ້ເກີດປະໂຫຍດສູງສຸດ ທັງເປັນການຫຼຸດຜ່ອນສິ່ງເສດເຫຼືອ.
- ວິສາຫະກິດຂະໜາດນ້ອຍ ແລະ ກາງ: ສົ່ງເສີມອຸດສາຫະກໍາປຸງແຕ່ງຂະໜາດນ້ອຍ ແລະ ກາງຕາມທິດສີຂຽວ ແລະ ຍືນຍົງ ໂດຍສະເພາະ ກະສິກໍາສະອາດ ແລະ ກະສິກໍາປອດສານພິດ, ຊຸກຍູ້ການທ່ອງທ່ຽວແບບອະນຸລັກ ປະຊາຊົນມີສ່ວນຮ່ວມໃນເຂດທໍາມະຊາດ ແລະ ຊຸກຍູ້ໃຫ້ທຸລະກິດປິ່ນອ້ອມຂະແໜງການທ່ອງທ່ຽວນໍາໃຊ້ຊັບ ພະຍາກອນທໍາມະຊາດ ແລະ ພະລັງງານແບບປະຢັດ, ເປັນມິດກັບສິ່ງແວດລ້ອມ ແລະ ຫຼຸດຜ່ອນສິ່ງເສດເຫຼືອ ແລະ ອື່ນໆ.
- ການພັດທະນາຕົວເມືອງ: ພັດທະນາຕົວເມືອງທີ່ສວຍສົດງົດງາມ, ມີຄຸນຄ່າທາງດ້ານສິລະປະ-ວັດທະນະທໍາ, ເປັນຕົວເມືອງສີຂຽວ ແລະ ໜ້າຢູ່ ໂດຍສຸມໃສ່: ອອກແບບ ແລະ ຄຸ້ມຄອງຜັງເມືອງ, ອາຄານສະຖານທີ່ ແລະ ການປຸກສ້າງອາຄານໃນຕົວເມືອງ (ເທດສະບານແຂວງ, ເມືອງ ແລະ ເຂດຊຸມຊົນ) ແນ່ໃສ່ພັດທະນາຕົວເມືອງ ໃຫ້ກາຍເປັນຕົວເມືອງສີຂຽວ ແລະ ໜ້າຢູ່, ມີຄຸນຄ່າທາງດ້ານສິລະປະ ແລະ ວັດທະນະທໍາທີ່ເປັນເອກະລັກຂອງ ຊາດ, ມີໂຄງສ້າງໝັ້ນຄົງ, ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທໍາມະຊາດ; ຮັບປະກັນ ໃຫ້ມີທາງຍ່າງທີ່ສະດວກສະບາຍ ແລະ ປອດໄພ, ມີພື້ນທີ່ສີຂຽວ, ສວນສາທາລະນະ, ສະໜາມກິລາ, ສະໜາມ ຫຼິ້ນເດັກນ້ອຍ ແລະ ອື່ນໆ; ປັບປຸງລະບົບບໍາບັດ ແລະ ລະບົບປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມໃນ ຕົວເມືອງ ເພື່ອຫຼຸດຜ່ອນການປ່ອຍສິ່ງເສດເຫຼືອຈາກໂຮງງານອຸດສາຫະກໍາ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ເຮືອນຂອງປະຊາຊົນ. ຄົ້ນຄວ້າ ແລະ ທົດລອງສ້າງຕົວເມືອງ ແລະ ຊົນນະບົດສີຂຽວຕົວແບບ.
- ການຄຸ້ມຄອງສິ່ງເສດເຫຼືອ: ປັບປຸງລະບົບການຄຸ້ມຄອງຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ ໃຫ້ມີປະສິດທິພາບ ແລະ ມີ ປະສິດທິຜົນສູງຂຶ້ນ ໂດຍສຸມໃສ່ປູກຈິດສໍານຶກໃຫ້ປະຊາຊົນບໍ່ຖິ້ມຂີ້ເຫຍື້ອແບບຊະຊາຍ; ໄຈ້ແຍກສິ່ງເສດເຫຼືອ ເພື່ອໃຫ້ສາມາດນໍາໄປຜະລິດ ແລະ ນໍາໃຊ້ຄືນ, ຫຼຸດຜ່ອນການນໍາໃຊ້ວັດສະດຸໃຊ້ເທື່ອດຽວ, ສົ່ງເສີມການນໍາໃຊ້ ຜະລິດຕະພັນທີ່ສາມາດຍ່ອຍສະຫຼາຍໄດ້; ກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານ (Landfill) ໃຫ້ມີປະສິດທິພາບ, ປະສິດທິຜົນສູງຂຶ້ນ ແລະ ຖືກຕ້ອງຕາມຫຼັກສຸຂະອະນາໄມ ແລະ ອື່ນໆ ໂດຍສະເພາະແມ່ນເລັ່ງໃສ່ຕົວເມືອງໃຫຍ່ ເລີ່ມທີ່ບັນຫາສິ່ງແວດລ້ອມໃນຕົວເມືອງ ເຊັ່ນ: ນະຄອນຫຼວງວຽງຈັນ, ນະຄອນໄກສອນພົມວິຫານ, ນະຄອນ ປາກເຊ, ນະຄອນຫຼວງພະບາງ ແລະ ຕົວເມືອງອື່ນໆ. ຊຸກຍູ້, ສົ່ງເສີມນັກລົງທຶນພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃສ່ທຸລະກິດສິ່ງເສດເຫຼືອ ເພື່ອນໍາເອົາຂີ້ເຫຍື້ອແປຮູບ ແລະ ມານໍາໃຊ້ຄືນ ຫຼື ເປັນວັດຖຸດິບຜະລິດສິ່ງ ຂອງເພື່ອສ້າງມູນຄ່າເພີ່ມທາງດ້ານເສດຖະກິດ ແລະ ຫຼຸດຜ່ອນການນໍາໃຊ້ຊັບພະຍາກອນທໍາມະຊາດໃໝ່ທີ່ມີຢ່າງ ຈໍາກັດ.
- ການພັດທະນາກະສິກໍາ ແບບຍືນຍົງ: ສົ່ງເສີມໃຫ້ເກີດມີການຜະລິດກະສິກໍາສະອາດ, ມີປະສິດທິພາບ ແລະ ຍືນ ຍົງ, ສົ່ງເສີມການຜະລິດກະສິກໍາແບບປະສົມປະສານ, ແບບໝູນວຽນປູກພືດເພື່ອຫຼຸດຜ່ອນການເຊື່ອມໂຊມຂອງ ດິນ, ຈໍາກັດ ແລະ ຫຼຸດຜ່ອນການປູກພືດຕະກູນດຽວ ແລະ ຊະນິດດຽວ ເປັນເວລາດົນນານ ທີ່ສົ່ງຜົນກະທົບຕໍ່ ຄວາມອຸດົມສົມບູນຂອງດິນ ແລະ ຄວາມຫຼາກຫຼາຍຂອງຊີວະນາໆພັນ ດ້ວຍການສົ່ງເສີມການປູກພືດຫຼາຍຊະນິດ

ໂດຍຄຳນຶງເຖິງປະສິດທິພາບທາງເສດຖະກິດ, ຄວາມເປັນໄປໄດ້ທາງດ້ານເຕັກນິກ, ການປ່ຽນແປງຂອງສະພາບດິນຟ້າອາກາດ, ຄວາມສາມາດໃນການຄໍ້າປະກັນສະບຽງອາຫານ ແລະ ຄຸນຄ່າທາງດ້ານໂພຊະນາການ.

- ຂະແໜງຂົນສົ່ງ: ຄົ້ນຄວ້າສ້າງນິຕິກຳ ແລະ ນະໂຍບາຍ ເພື່ອຊຸກຍູ້ສົ່ງເສີມການນຳໃຊ້ຍານພາຫະນະທີ່ຂັບເຄື່ອນດ້ວຍພະລັງງານສະອາດ ຫຼື ພະລັງງານທີ່ມີຢູ່ພາຍໃນປະເທດ ເຊັ່ນ: ລົດໄຟຟ້າທີ່ນຳໃຊ້ພະລັງງານນໍ້າ ແລະ ພະລັງງານແສງອາທິດ, ສົ່ງເສີມການພັດທະນາໂຮງງານນໍ້າມັນເຊື້ອໄຟຊີວະພາບຈາກປົ່ານໍ້າມັນ, ໝາກເກົາ, ມັນຕົ້ນ ແລະ ໂຄງການສາທິດຂະບວນການຜະລິດອາຍແກັສມີເທນ ($CH_4$) ສໍາລັບຂະແໜງຂົນສົ່ງ ແລະ ອຸດສາຫະກຳ ເພື່ອຫຼຸດຜ່ອນການນຳເຂົ້າ ແລະ ນຳໃຊ້ນໍ້າມັນເຊື້ອໄຟ ແລະ ການປ່ອຍທາດອາຍເຮືອນແກ້ວ.
- ຂະແໜງພະລັງງານ: ຊຸກຍູ້ການຜະລິດໄຟຟ້າຈາກຊັບພະຍາກອນທຳມະຊາດ ຕາມທ່າແຮງຂອງທ້ອງຖິ່ນ ເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ; ຊຸກຍູ້ການພັດທະນາໂຄງລ່າງພື້ນຖານສີຂຽວ ແລະ ປັບປຸງການນຳໃຊ້ພະລັງງານຢ່າງມີປະສິດທິພາບໃນຄົວເຮືອນ ແລະ ສະຖານທີ່ຕ່າງໆ; ຊຸກຍູ້ອຸດສາຫະກຳພະລັງງານທົດແທນໂດຍສຸມໃສ່ ການລົງທຶນຂອງພາກລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດເຂົ້າໃນການຜະລິດກະແສໄຟຟ້າພະລັງງານນໍ້າ, ພະລັງງານແສງຕາເວັນ ແລະ ພະລັງງານລົມ ຢ່າງມີການຄັດຈ້ອນ ເພື່ອໃຫ້ປະໂຫຍດສູງສຸດ ດ້ວຍການສ້າງສິ່ງຈູງໃຈທາງດ້ານການເງິນ ເຊັ່ນ: ນະໂຍບາຍຜ່ອນຜັນດ້ານພາສີ ຕໍ່ການລົງທຶນໃສ່ເຕັກໂນໂລຊີພະລັງງານທົດແທນສຳລັບນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ. ສ້າງລະບຽບການ ແລະ ຄູ່ມືການຈັດຕັ້ງປະຕິບັດການປະຢັດ ແລະ ອະນຸລັກພະລັງງານ ສຳລັບໂຮງງານອຸດສາຫະກຳ, ຕຶກອາຄານສຳນັກງານ ແລະ ບັນດາອຸປະກອນໄຟຟ້າເຄື່ອງໃຊ້ພະລັງງານ; ສົ່ງເສີມລະບົບການບໍລິຫານຈັດການພະລັງງານໃນຕຶກອາຄານ ແລະ ໂຮງງານອຸດສາຫະກຳ.
- ການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມ: ສົ່ງເສີມການທ່ອງທ່ຽວທີ່ເປັນມິດຕໍ່ສິ່ງແວດລ້ອມ ໂດຍການນຳໃຊ້ພະລັງງານຢ່າງຈຳກັດ ເຮັດໃຫ້ເກີດຜົນປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ, ປັບປຸງຄຸນນະພາບເຄືອຄ່າຍການບໍລິການທ່ອງທ່ຽວໃນການຜະລິດ ແລະ ນຳໃຊ້ຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຫຼຸດຜ່ອນສິ່ງເສດເຫຼືອ ແນ່ໃສ່ປົກປັກຮັກສາຊັບພະຍາກອນທຳມະຊາດ, ສ້າງເມືອງທ່ອງທ່ຽວສະອາດ ແລະ ພັດທະນາສະຖານທີ່ທ່ອງທ່ຽວໃຫ້ໄດ້ມາດຕະຖານ ເພື່ອກະຕຸ້ນການເຕີບໂຕຂອງເສດຖະກິດ, ສ້າງວຽກເຮັດງານທຳ ແລະ ຫຼຸດຜ່ອນຄວາມທຸກຍາກ ໂດຍການມີສ່ວນຮ່ວມຂອງປະຊາຊົນ.

(2). ວຽກງານແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ: ສປປ ລາວ ປ່ອຍທາດອາຍເຮືອນແກ້ວໃນປະລິມານທີ່ໜ້ອຍແຕ່ພັດໄດ້ຮັບຜົນກະທົບຫຼາຍຈາກອາຍເຮືອນແກ້ວຈາກທົ່ວໂລກ. ສະນັ້ນ, ເພື່ອໃຫ້ສາມາດປັບໂຕ ແລະ ຫຼຸດຜ່ອນຜົນກະທົບ ຕ້ອງສຸມໃສ່ວຽກງານດັ່ງນີ້:

- ສືບຕໍ່ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC) ແລະ ກົນໄກຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ເປັນຕົ້ນ: ໂຄງການ REDD+ ເພື່ອປະກອບສ່ວນເຂົ້າໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວສາກົນ; ສົ່ງເສີມທຸລະກິດທີ່ປ່ອຍທາດອາຍເຮືອນແກ້ວຕໍ່າ ເພື່ອປະກອບສ່ວນເຂົ້າໃນການບັນເທົາການປ່ຽນແປງສະພາບດິນຟ້າອາກາດ; ສົ່ງເສີມການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ທີ່ສ້າງສິ່ງເສດເຫຼືອໜ້ອຍ, ປະຢັດພະລັງງານ ແລະ ນຳໃຊ້ພະລັງງານທີ່ສະອາດ-ເປັນມິດກັບສິ່ງແວດລ້ອມ; ສົ່ງເສີມການປົກປັກຮັກສາ ແລະ ຂະຫຍາຍແຫຼ່ງຊຶມຊັບທາດອາຍເຮືອນແກ້ວເຊັ່ນ: ການຂະຫຍາຍ-ປົກປ້ອງເນື້ອທີ່ປົກຫຸ້ມປ່າໄມ້, ດິນ ແລະ ອື່ນໆ.
- ເຊື່ອມສານວຽກງານການປັບໂຕເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍມີຊຸມຊົນເປັນໃຈກາງ (Community-based adaptation) ເຂົ້າໃນແຜນຂອງຂະແໜງການ ເພື່ອປົກປ້ອງປະຊາຊົນຈາກໄພທຳມະຊາດ.

## 3. ແຜນວຽກຈຸດສຸມທີ 3: ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ

ສປປ ລາວ ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ເປັນຕົ້ນ ໄພນໍ້າຖ້ວມ, ແຫ້ງແລ້ງ, ດິນເຈື່ອນ, ແຜ່ນດິນໄຫວ ອັນເນື່ອງຈາກການປ່ຽນແປງຂອງດິນຟ້າອາກາດ ທີ່ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ຢ່າງໜັກໜ່ວງ. ສະນັ້ນ, ການເພີ່ມທະວີການປ້ອງກັນ, ການຮັບມື ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ (ໄພພິບັດທາງທຳມະຊາດ ແລະ ໄພພິບັດທີ່ມະນຸດສ້າງຂຶ້ນ) ລວມທັງ ການປະກັນໄພຈາກຄວາມສ່ຽງໄພພິບັດທຳມະຊາດ ຈຶ່ງເປັນສິ່ງສຳຄັນ ເພື່ອຫຼຸດຜ່ອນຜົນກະທົບດ້ານຕ່າງໆ ແລະ ສາມາດເຝົ້າລະວັງ ແລະ ເຕືອນໄພໄດ້ຢ່າງທັນການ.

### 3.1 ຄາດໝາຍ ແລະ ຕົວຊີ້ບອກ:

- ສ້າງ ແລະ ຍົກລະດັບຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດໃນຂອບເຂດທົ່ວປະເທດ ພ້ອມດ້ວຍການປັບປຸງລະບົບທັນເປັນສະຖານີອັດຕະໂນມັດທີ່ທັນສະໄໝ, ສູ້ຊົນສ້າງຕັ້ງສະຖານີອຸຕຸນິຍົມໃໝ່ ໃຫ້ໄດ້ 45 ແຫ່ງ ແລະ ສະຖານີອຸທົກກະສາດໃໝ່ ໃຫ້ໄດ້ 25 ແຫ່ງ.
- ສ້າງແຜນທີ່ຄວາມສ່ຽງໄພພິບັດທາງທຳມະຊາດ ແລະ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ສ້າງລະບົບພະຍາກອນວຽກງານອຸທົກກະສາດໃນຂອບເຂດທົ່ວປະເທດ ໃຫ້ມີຄວາມຮັບປະກັນ ເພື່ອເປັນພື້ນຖານໃຫ້ແກ່ການຜະລິດກະສິກຳ.
- ສູ້ຊົນສ້າງແຜນດຳເນີນງານແກ້ໄຂບັນຫາຄວາມສ່ຽງ ແລະ ຄວາມບອບບາງໃຫ້ສຳເລັດ.
- ສູ້ຊົນສ້າງ ແລະ ປັບປຸງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ແລະ ບ້ານທີ່ມີຄວາມສ່ຽງໄພພິບັດສູງໃຫ້ໄດ້ 100 ເມືອງ ແລະ 800 ບ້ານ ໃນບັນດາແຂວງ ແລະ ນະຄອນຫຼວງວຽງຈັນໃນຂອບເຂດທົ່ວປະເທດ, ພ້ອມທັງ ສ້າງຄວາມເຂັ້ມແຂງວຽກຄຸ້ມຄອງໄພພິບັດໃຫ້ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ, ເມືອງ ແລະ ບ້ານກຸ້ມເປົ້າໝາຍ ໃຫ້ໄດ້ 750 ຄົນ, ສະເລ່ຍ 150 ຄົນ/ປີ.
- ສູ້ຊົນສ້າງກອງທຶນຄຸ້ມຄອງໄພພິບັດຂັ້ນສູນກາງ 1 ແຫ່ງ, ຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນ 18 ແຫ່ງ ແລະ ຂັ້ນເມືອງ 56 ແຫ່ງ.
- ປັບປຸງຂໍ້ມູນຄວາມສ່ຽງໄພພິບັດຢູ່ຂັ້ນສູນກາງ ແລະ ຊຸກຍູ້ທ້ອງຖິ່ນ ເພື່ອປະເມີນຄວາມສ່ຽງ ແລະ ສ້າງແຜນທີ່ຄວາມສ່ຽງໄພພິບັດ; ຊຸກຍູ້ສ້າງແຜນຍຸດທະສາດຫຼຸດຜ່ອນຄວາມສ່ຽງໄພພິບັດຂັ້ນແຂວງ ແລະ ສ້າງແຜນການກຽມພ້ອມຕອບໂຕ້ໄພພິບັດທີ່ມີຄວາມສ່ຽງສູງຕໍ່ໄພພິບັດ ໃຫ້ໄດ້ 10 ແຂວງ, 20 ເມືອງ, 80 ບ້ານ.
- ຈັດຝຶກຊ້ອມການຕອບໂຕ້ຊ່ວຍເຫຼືອໄພພິບັດສຸກເສີນອາຊຽນ 1 ຄັ້ງ, ລະດັບຊາດ 2 ຄັ້ງ ແລະ ລະດັບທ້ອງຖິ່ນ 5 ຄັ້ງ.
- ສ້າງທີມງານປະເມີນ ແລະ ຊ່ວຍເຫຼືອສຸກເສີນ ຂັ້ນສູນກາງ 30 ຄົນ, ຂັ້ນແຂວງທົ່ວປະເທດ 100 ຄົນ, ຂັ້ນເມືອງ 300 ຄົນ ພ້ອມທັງ ຍົກລະດັບຂີດຄວາມສາມາດໃຫ້ທີມງານດັ່ງກ່າວ.

### 3.2 ວຽກງານຈຸດສຸມ:

- ເຊື່ອມສານການປັບຕົວກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ ເຂົ້າໃນແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຢ່າງເປັນລະບົບ; ສ້າງບົດແນະນຳດ້ານມາດຖານລະບຽບການໃນການດຳເນີນງານ ກ່ຽວກັບການແຈ້ງເຕືອນໄພລ່ວງໜ້າຕໍ່ກັບໄພອັນຕະລາຍດ້ານອຸຕຸນິຍົມ ແລະ ອຸທົກກະສາດ. ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ມາດຕະການປ້ອງກັນ ແລະ ສະກັດກັ້ນຕ້ານຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ (ລະບົບເຕືອນໄພ, ປ້ອງກັນ, ການຊ່ວຍເຫຼືອສຸກເສີນ); ສ້າງຄວາມອາດສາມາດໃນການພະຍາກອນນໍ້າຖ້ວມ, ໄພແຫ້ງແລ້ງ ແລະ ແຜ່ນດິນໄຫວ ຢູ່ໃນເຂດທີ່ມີຄວາມສ່ຽງໃນຂອບເຂດທົ່ວປະເທດ; ສືບຕໍ່ປັບປຸງ ແລະ ຂະຫຍາຍລະບົບຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດໃນຂອບເຂດທົ່ວປະເທດ; ປັບປຸງ ແລະ ຂະຫຍາຍສູນເຕືອນໄພລ່ວງໜ້າແຫ່ງ

ຊາດ ພ້ອມທັງລະບົບເຄືອຍຂ່າຍຮັບ-ສົ່ງຂໍ້ມູນ, ການພະຍາກອນ ແລະ ການແຈ້ງເຕືອນໄພລ່ວງໜ້າ ກ່ຽວກັບໄພພິບັດດ້ານອຸຕຸນິຍົມ ແລະ ອຸທົກກະສາດ ໃຫ້ມີປະສິດທິພາບ ແລະ ໃຫ້ໄດ້ມາດຕະຖານຕາມລະບຽບການຂອງອົງການອຸຕຸນິຍົມໂລກ; ປັບປຸງຄຸນນະພາບການລາຍງານ, ການອອກຂ່າວແຈ້ງເຕືອນສະພາບອຸນຫະພູມ, ສະພາບອາກາດ, ແຜ່ນດິນໄຫວ ແລະ ລະດັບນໍ້າ ຢ່າງມີປະສິດທິພາບ.

- ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຄືນຫຼັງໄພພິບັດທາງທຳມະຊາດ ແລະ ໄພພິບັດທີ່ມະນຸດສ້າງຂຶ້ນ ໂດຍການສ້າງຄວາມເຂັ້ມແຂງໃຫ້ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຫຼຸດຜ່ອນຄວາມສ່ຽງ ແລະ ກະກຽມຄວາມພ້ອມຮັບມືກັບໄພພິບັດ; ສົ່ງເສີມການສ້າງຕັ້ງ ແລະ ເພີ່ມຂີດຄວາມສາມາດຂອງຄັງແຮ່ຊ່ວຍເຫຼືອສຸກເສີນແຫ່ງຊາດ, ຂັ້ນແຂວງ, ເມືອງ ແລະ ບ້ານເພື່ອໃຫ້ສາມາດຊ່ວຍເຫຼືອບັນເທົາທຸກແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດທຳມະຊາດໄດ້ຢ່າງທັນການ ແລະ ມີປະສິດທິຜົນສູງ, ພ້ອມກັນນັ້ນ ຍັງຕ້ອງສ້າງຄວາມເຂັ້ມແຂງດ້ານການປະສານງານລະຫວ່າງຂະແໜງການຂອງລັດ ແລະ ອົງການປົກຄອງທ້ອງຖິ່ນໃນການແກ້ໄຂຜົນເສຍຫາຍ, ການສູນເສຍ ແລະ ໃຫ້ການຊ່ວຍເຫຼືອຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ຢ່າງມີປະສິດທິຜົນ, ສົ່ງເສີມການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ທັງພາຍໃນ ແລະ ຕ່າງປະເທດ.

### 4. ໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດສະໜັບສະໜຸນ ເປົ້າໝາຍ 4 (ລາຍລະອຽດມີໃນເອກະສານຊ້ອນທ້າຍ):

1. ໂຄງການຄຸ້ມຄອງ ປ່າສະຫງວນ, ອຸທິຍານແຫ່ງຊາດ ແລະ ມໍຣະດົກໂລກ (ໂຄງການສືບຕໍ່)
2. ໂຄງການຄຸ້ມຄອງປ່າປ້ອງກັນ (ໂຄງການສືບຕໍ່)
3. ໂຄງການຄຸ້ມຄອງປ່າຜະລິດ (ໂຄງການສືບຕໍ່)
4. ໂຄງການຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ (ໂຄງການສືບຕໍ່)
5. ໂຄງການສົ່ງເສີມປູກໄມ້ ແລະ ຟື້ນຟູປ່າ (ໂຄງການສືບຕໍ່)
6. ໂຄງການ ຄຸ້ມຄອງສັດນໍ້າ, ສັດປ່າ ແລະ ຊີວະນາໆພັນ (ໂຄງການສືບຕໍ່)
7. ໂຄງການຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ (ໂຄງການສືບຕໍ່)
8. ໂຄງການ ກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ (ໂຄງການສືບຕໍ່)
9. ໂຄງການ ສ້າງຄວາມສາມາດ ໃນການຫຼຸດຜ່ອນຄວາມສ່ຽງ ຈາກໄພພິບັດທຳມະຊາດ (ໂຄງການສືບຕໍ່)
10. ໂຄງການການບໍລິໂພກ ແລະ ການຜະລິດແບບຍືນຍົງ (ໂຄງການສືບຕໍ່)
11. ໂຄງການຄຸ້ມຄອງທີ່ດິນຫັນເປັນທັນສະໄໝໃນຂອບເຂດທົ່ວປະເທດ (ໂຄງການສືບຕໍ່).
12. ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ (ໂຄງການສືບຕໍ່)
13. ໂຄງການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (ໂຄງການສືບຕໍ່).
14. ໂຄງການເຊື່ອມສານແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ໂຄງການສືບຕໍ່).
15. ໂຄງການຄຸ້ມຄອງ, ຫຼຸດຜ່ອນສິ່ງເສດເຫຼືອ ແລະ ພາດສຕິກ (ໂຄງການສືບຕໍ່).
16. ໂຄງການສ້າງແຜນພັດທະນາທີ່ດິນ ແລະ ສິ່ງແວດລ້ອມ (ໂຄງການໃໝ່).
17. ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດ (ທະນາຄານໂລກ) (ໂຄງການສືບຕໍ່)
18. ກອງທຶນສົ່ງເສີມສະພາບດິນຟ້າອາກາດສີຂຽວ (Green Climate Fund- ສະຖາບັນການເຕີບໂຕສີຂຽວໂລກ) (ໂຄງການສືບຕໍ່)
19. ໂຄງການທົດລອງນຳໃຊ້ລົດໄຟຟ້າ (ສະຖາບັນການເຕີບໂຕສີຂຽວໂລກ) (ໂຄງການໃໝ່).

## *ເປົ້າໝາຍທີ 5: ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນໍາໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ*

ສປປ ລາວ ເປັນປະເທດທີ່ມີທ່າແຮງໄດ້ປຽບທາງດ້ານທີ່ຕັ້ງພູມສັນຖານທີ່ຕັ້ງຢູ່ໃຈກາງ ແລະ ໃກ້ຄຽງກັບບັນດາປະເທດທີ່ເສດຖະກິດມີການເຕີບໂຕຢ່າງແຂງແຮງ ໂດຍສະເພາະກຸ່ມປະເທດອາຊຽນ ແລະ ສປ ຈີນ ເຮັດໃຫ້ສາມາດກາຍເປັນສູນກາງໃນການຂົນສົ່ງສິນຄ້າ ແລະ ການບໍລິການ. ສະນັ້ນ, ການປັບປຸງ ແລະ ຍົກລະດັບການເຊື່ອມຈອດທາງບົກ, ທາງນໍ້າ ແລະ ທາງອາກາດ ຈຶ່ງມີຄວາມຈໍາເປັນ ແລະ ສໍາຄັນ ເພື່ອເຮັດໃຫ້ ສປປ ລາວ ຈາກປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ກາຍເປັນປະເທດທີ່ສາມາດເຊື່ອມຈອດກັບພາກພື້ນ ແລະ ສາກົນໄດ້ຢ່າງຮອບດ້ານ ທັງເປັນການສົ່ງເສີມການເຊື່ອມໂຍງດ້ານເສດຖະກິດ, ດ້ານການຄ້າ ແລະ ການບໍລິການ, ເຕັກໂນໂລຊີ, ພະລັງງານສະອາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແລະ ອື່ນໆ ພາຍໃຕ້ຂອບຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ເຊັ່ນ: AEC, WTO ແລະ ອື່ນໆ. ພ້ອມກັນນີ້, ຕ້ອງໄດ້ຄົ້ນຄວ້າ ແລະ ປັບປຸງບັນດານິຕິກໍາ ແລະ ນະໂຍບາຍ ເພື່ອສ້າງເງື່ອນໄຂທີ່ເອື້ອອໍານວຍໃນການຈັດຕັ້ງປະຕິບັດສົນທິສັນຍາການຄ້າ ແລະ ການລົງທຶນ ໃຫ້ມີຄວາມສອດຄ່ອງ ແລະ ຖືກຕ້ອງ. ການເຊື່ອມຈອດໂຄງລ່າງ ປະກອບມີການກໍ່ສ້າງເສັ້ນທາງ, ເສັ້ນທາງລົດໄຟ, ທ່າເຮືອ ແລະ ທາງອາກາດ ເພື່ອຫຼຸດຜ່ອນໄລຍະເວລາໃນການເດີນທາງ, ຄ່າໃຊ້ຈ່າຍໃນການຂົນສົ່ງ ແລະ ມີຄວາມປອດໄພຫຼາຍຂຶ້ນ ເພື່ອຊຸກຍູ້ ແລະ ສົ່ງເສີມຂະແໜງການທີ່ມີທ່າແຮງ ແລະ ການຮ່ວມມື ເປັນຕົ້ນ: ການທ່ອງທ່ຽວ, ການຮ່ວມມືໃຕ້-ໃຕ້ ແລະ ຕ່ອງໂສ້ມູນຄ່າການຄ້າ ແລະ ການບໍລິການ ທີ່ມີທ່າອ່ຽງຈະເພີ່ມຂຶ້ນ ພາຍຫຼັງການຟື້ນຟູຈາກຜົນກະທົບຂອງພະຍາດໂຄວິດ-19.

### 1. ແຜນວຽກຈຸດສຸມທີ 1: ໂຄງລ່າງພື້ນຖານໄດ້ຮັບການພັດທະນາທີ່ສາມາດເຊື່ອມຈອດ-ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອໍານວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ

ສປປ ລາວ ໄດ້ເລີ່ມພັດທະນາໂຄງລ່າງພື້ນຖານເຊື່ອມຈອດໃນຮູບແບບຕ່າງໆ ລວມທັງການເຊື່ອມຕໍ່ກັບເສັ້ນທາງລົດໄຟຄຸນໝິງ-ສິງກະໂປ ເຊິ່ງຈະຊ່ວຍເຮັດໃຫ້ໄລຍະການເດີນທາງລະຫວ່າງຄຸນໝິງ ແລະ ວຽງຈັນ ຫຼຸດລົງຈາກສາມມື້ເປັນສາມຊົ່ວໂມງ.

ສຸມໃສ່ພັດທະນາ ແລະ ຍົກລະດັບບັນດາໂຄງລ່າງພື້ນຖານຄົມມະນາຄົມ, ການບໍລິການຜ່ານ ແລະ ຂົນສົ່ງຂ້າມແດນ, ລະບົບສາຍສົ່ງໄຟຟ້າ, ໂທລະຄົມມະນາຄົມ ແລະ ໄປສະນີ ໃຫ້ສາມາດເຊື່ອມຈອດກັນພາຍໃນ, ກັບປະເທດອ້ອມຂ້າງ, ພາກພື້ນ ແລະ ສາກົນຢ່າງມີຈຸດສຸມ ແລະ ເປັນລະບົບກົມກຽວກັນ ດ້ວຍການຕິດຕາມປະສິດທິພາບການບໍລິການໂລຊິດສະຕິກຢ່າງເປັນລະບົບ ເພື່ອສ້າງປະເທດລາວໃຫ້ເປັນຈຸດຜ່ານແດນສໍາຄັນຂອງການຂົນສົ່ງສິນຄ້າ ແລະ ທັງເສີມຂະຫຍາຍທ່າແຮງທາງດ້ານທີ່ຕັ້ງພູມສັນຖານ, ທ່າແຮງບົ່ມຊ້ອນອື່ນໆຂອງປະເທດ ແລະ ຂອງທ້ອງຖິ່ນໃຫ້ເກີດປະໂຫຍດສູງທີ່ສຸດ ຕິດພັນກັບການສົ່ງເສີມອຸດສາຫະກໍາການທ່ອງທ່ຽວ, ການຜະລິດເພື່ອສະໜອງຄວາມຕ້ອງການຂອງປະເທດໃກ້ຄຽງ, ສົ່ງເສີມຂະແໜງພະລັງງານນໍ້າ ເພື່ອປະກອບສ່ວນເຂົ້າໃນການເພີ່ມທະວີການຫັນໄປສູ່ການນໍາໃຊ້ພະລັງງານສະອາດ; ສົ່ງເສີມການທ່ອງທ່ຽວທາງລົດໄຟລະຫວ່າງ ຈີນ ໄປຫາ ໄທ, ໂດຍການຮັບປະກັນໃຫ້ໂຄງການທາງລົດໄຟລາວ-ຈີນໃຫ້ສໍາເລັດຕາມກໍານົດເວລາທີ່ວາງໄວ້, ໝູນໃຊ້ສະໜາມບິນສາກົນ 4 ແຫ່ງ ທີ່ມີໃນປັດຈຸບັນໃຫ້ເກີດປະໂຫຍດສູງສຸດ ໂດຍສະເພາະໃນການອໍານວຍຄວາມສະດວກໃຫ້ມີການຄົມມະນາຄົມລະຫວ່າງ ສປປ ລາວ ໄປສູ່ປະເທດໄທ, ຫວຽດນາມ ແລະ ຈີນ ທີ່ກວມອັດຕາສ່ວນສູງຢູ່ແລ້ວນັ້ນ ໃຫ້ນັບມື້ນັບເພີ່ມເປັນທະວີຄູນ; ພ້ອມນັ້ນ, ກໍ່ສົ່ງເສີມສາຍການບິນໄປມາເລເຊຍ, ເກົາຫຼີ ແລະ ຍີ່ປຸ່ນໃຫ້ມີຄວາມສະດວກ ແລະ ຫຼາຍຂຶ້ນກວ່າເກົ່າ.

#### 1.1. ຄາດໝາຍ ແລະ ຕົວຊີ້ບອກ:

- ດັດຊະນີການດໍາເນີນວຽກງານໂລຊິດສະຕິກຂອງ ສປປ ລາວ ໃຫ້ເພີ່ມຂຶ້ນ (ການຈັດອັນດັບຂອງທະນາຄານໂລກ).

- ສູ້ຊົນຂະຫຍາຍ ແລະ ນຳໃຊ້ຕາໜ່າງອິນເຕີເນັດຄວາມໄວສູງແບບມີສາຍໃຫ້ໄດ້ທຸກເມືອງ (148 ເມືອງ) ໃນທົ່ວປະເທດ;
- ຂະຫຍາຍການນຳໃຊ້ລະບົບກອງປະຊຸມທາງໄກ ແລະ ລະບົບອີເມວຂອງພາກລັດໃຫ້ໄດ້ 68 ພາກສ່ວນທັງສູນກາງ ແລະ ທ້ອງຖິ່ນ.
- ຂະຫຍາຍສະຖານີຮັບ-ສົ່ງສັນຍານມືຖື ລະບົບ 3G ຄວບຄຸມໃຫ້ໄດ້ 100%, 4G ໃຫ້ໄດ້ 90% ແລະ ລະບົບ 5G ຄວບຄຸມໃຫ້ໄດ້ ຕົວເມືອງໃຫຍ່ ໃນ 18 ແຂວງທົ່ວປະເທດ.
- ສ້າງໃຫ້ມີສູນສຳຮອງສູນອິນເຕີເນັດແຫ່ງຊາດ ໃຫ້ໄດ້ 2 ແຫ່ງ.
- ຂະຫຍາຍອັດຕາສ່ວນການນຳໃຊ້ ຄອມພິວເຕີ ໃຫ້ໄດ້ 70%, ອິນເຕີເນັດແບບມີສາຍ ແລະ ບໍ່ມີສາຍ ໃຫ້ໄດ້ 60%, ໂທລະສັບຕັ້ງໂຕະແບບມີສາຍ ແລະ ບໍ່ມີສາຍ ໃຫ້ໄດ້ 100% ແລະ ອິນເຕີເນັດຄວາມໄວສູງແບບມີສາຍ ແລະ ບໍ່ມີສາຍ ໃຫ້ໄດ້ 70% ຂອງປະຊາກອນທັງໝົດ.
- ສ້າງເງື່ອນໄຂເພື່ອຊຸກຍູ້ສົ່ງເສີມພາກລັດ ແລະ ພາກເອກະຊົນ ຫັນມາ ໃຊ້ດາວທຽມລາວ ເຂົ້າໃນວຽກງານ ໃຫ້ໄດ້ 18 ພາກສ່ວນ ພາຍໃນປີ 2025; ໃຫ້ມີສະຖານີສື່ສານ VSAT ຮັບໃຊ້ວຽກງານພາກລັດໃນທົ່ວປະເທດ.
- ສູ້ຊົນຂະຫຍາຍການນຳໃຊ້ ລະບົບຫ້ອງການທັນສະໄໝ (e-Office) ເຂົ້າໃນອົງການຈັດຕັ້ງພັກ-ລັດ ໃຫ້ໄດ້ 45 ຫ້ອງການ ສູນກາງ ແລະ ທ້ອງຖິ່ນ.
- ສູ້ຊົນຫັນເປັນທັນສະໄໝໃນການຊຳລະສະສາງ ແລະ ການເກັບລາຍຮັບເຂົ້າງົບປະມານ ດ້ວຍລະບົບຕ່າງໆ ເປັນຕົ້ນ: ຜ່ານໂທລະສັບມືຖື (Mobile Money) ເພື່ອຫຼຸດຜ່ອນການນຳໃຊ້ເງິນສົດໃນສັງຄົມ, ວິຖີຊີວິດປົກກະຕິແບບໃໝ່ ແລະ ການພັດທະນາເສດຖະກິດດິຈິຕອນໃນໄລຍະໃໝ່, ສ້າງຕະຫຼາດເອເລັກໂທຣນິກ, ການບໍລິການສາງພັກສິນຄ້າ ແລະ ທ່າບົກ.

**1.2. ວຽກງານຈຸດສຸມ:**

- ການເຊື່ອມຈອດທາງບົກ, ທາງນໍ້າ ແລະ ທາງອາກາດ:
  - ກໍ່ສ້າງ, ຍົກລະດັບ, ຟື້ນຟູ ແລະ ບູລະນະສ້ອມແປງໂຄງລ່າງພື້ນຖານຄົມມະນາຄົມ-ຂົນສົ່ງທາງບົກເຊິ່ງ ລວມມີບັນດາເສັ້ນທາງ, ຂົວ ແລະ ທາງດ່ວນ ທີ່ເປັນຕາໜ່າງນອນໃນບັນດາແລວເສດຖະກິດທີ່ເຊື່ອມຈອດກັບບັນດາປະເທດໃນພາກພື້ນຕາມມາດຕະຖານເຕັກນິກຂອງ ASEAN ໃຫ້ໄດ້ 2.800 ກິໂລແມັດ.
  - ພັດທະນາ, ຟື້ນຟູ ແລະ ບູລະນະສ້ອມແປງໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກທາງດ້ານການຂົນສົ່ງທາງນໍ້າຕາມລຳນໍ້າຂອງ ແລະ ແມ່ນໍ້າເຫືອງທີ່ເປັນຊາຍແດນທາງນໍ້າລະຫວ່າງປະເທດ ລວມມີ ທ່າເຮືອ, ຄອງເດີນເຮືອ ແລະ ການປ້ອງກັນຕະຝັ່ງເຈື່ອນ.
  - ສ້າງລະບົບການຂົນສົ່ງທາງທະເລ ໃຫ້ມີປະສິດທິພາບ, ຮອບດ້ານ ແລະ ສາມາດແຂ່ງຂັນໃນລະດັບພາກພື້ນ ເຊິ່ງລວມມີ: ການພັດທະນາ ແລະ ປັບປຸງທ່າທຽບເຮືອ 1, 2 ແລະ 3 ທ່າເຮືອຫວຸ້ງອ່າງ ແລະ ສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງກັບທ່າເຮືອຫວຸ້ງອ່າງ; ຍົກລະດັບການບໍລິຫານຄຸ້ມຄອງທ່າເຮືອຫວຸ້ງອ່າງໃຫ້ມີປະສິດທິພາບສູງຂຶ້ນ.
  - ສຶກສາຄວາມເປັນໄປໄດ້, ສຳຫຼວດ-ອອກແບບ, ກໍ່ສ້າງ, ຄຸ້ມຄອງ ແລະ ບຳລຸງຮັກສາ ເສັ້ນທາງລົດໄຟ ແລະ ສິ່ງອຳນວຍຄວາມສະດວກຕ່າງໆຂອງທາງລົດໄຟ ຕາມແຜນຍຸດທະສາດທີ່ລັດຖະບານຮັບຮອງ ເປັນຕົ້ນແມ່ນເສັ້ນທາງລົດໄຟລາວ-ຈີນ ແລະ ເສັ້ນທາງລົດໄຟລາວ-ໄທ. ສຳລັບເສັ້ນທາງລົດໄຟແຕ່ ນະຄອນຫຼວງວຽງຈັນ-ທ່າແຂກ-ຫວຸ້ງອ່າງ ປັດຈຸບັນ ຢູ່ໃນຂັ້ນຕອນການກະກຽມສຳຫຼວດ-ອອກແບບລະອຽດ ເພື່ອກ້າວໄປເຖິງການກໍ່ສ້າງຊ່ວງທາງທ່າແຂກ-ມູຢ່າ (ຊາຍແດນລາວ-ຫວຽດນາມ).
  - ກໍ່ສ້າງ, ປັບປຸງ, ຟື້ນຟູ, ຄຸ້ມຄອງ ແລະ ບຳລຸງຮັກສາບັນດາສະໜາມບິນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ດ້ານການບິນ ໃຫ້ຮັບປະກັນຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພ ຕາມມາດຕະຖານສາກົນ

ເຊິ່ງລວມມີ: ສະໜາມບິນສາກົນ 4 ແຫ່ງ, ສະໜາມບິນພາຍໃນ ແລະ ລະບົບສື່ສານການບິນໃນວຽກງານຄຸ້ມຄອງຈໍລະຈອນທາງອາກາດ.

- ພັດທະນາລະບົບການບໍລິການຂົນສົ່ງທີ່ທັນສະໄໝຄົບຊຸດ ເຂດໂລຊິດສະຕິກ 9 ແຫ່ງ ເພື່ອໜູນໃຊ້ເສັ້ນທາງລົດໄຟລາວ-ຈີນ ໃຫ້ເຊື່ອມຈອດກັບຕາໜ່າງເສັ້ນທາງລົດໄຟອະນຸພາກພື້ນແມ່ນ້ຳຂອງ ແລະ ອາຊຽນ (SKRL), ພາກພື້ນ ແລະ ສາກົນ (Trans-Asian Railway) ແລະ ເຊື່ອມຕໍ່ໃສ່ຕາໜ່າງເສັ້ນທາງ, ທ່າເຮືອ ແລະ ສະໜາມບິນ ກາຍເປັນລະບົບການຂົນສົ່ງໃຫ້ມີຄວາມສະດວກ, ວ່ອງໄວ, ທັນສະໄໝ, ປອດໄພ, ມີປະສິດທິຜົນສູງ ແລະ ລາຄາຂົນສົ່ງໃຫ້ຖືກລົງ.
- ສຸມໃສ່ກໍ່ສ້າງ ແລະ ຕິດຕັ້ງສະຖານີຊັ່ງນ້ຳໜັກ ແລະ ອຸປະກອນຊິງຊັ່ງນ້ຳໜັກ ເພື່ອຄຸ້ມຄອງລົດບັນທຸກນ້ຳໜັກໃນເສັ້ນທາງເຊື່ອມຈອດກັບບັນດາປະເທດໃນພາກພື້ນໃຫ້ມີປະສິດທິພາບສູງຂຶ້ນ; ປັບປຸງກົນໄກ ແລະ ນິຕິກຳຄຸ້ມຄອງລົດບັນທຸກນ້ຳໜັກໃຫ້ດີຂຶ້ນ.

- <u>ການເຊື່ອມໂຍງດ້ານສາຍສົ່ງໄຟຟ້າ:</u> ສຸມໃສ່ຍົກລະດັບ ແລະ ກໍ່ສ້າງສາຍສົ່ງໄຟຟ້າທີ່ຈຳເປັນເພື່ອເຊື່ອມຈອດແຕ່ເໜືອ-ໃຕ້ ແລະ ເຊື່ອມຈອດກັບປະເທດອ້ອມຂ້າງ ເພື່ອສາມາດແລກປ່ຽນຊື້-ຂາຍນຳກັນໄດ້, ພ້ອມທັງຮ່ວມມືກຳນົດຕະຫຼາດແລກປ່ຽນຊື້-ຂາຍພະລັງງານໄຟຟ້າ.
- <u>ການເຊື່ອມຈອດໂທລະຄົມມະນາຄົມ, ໄປສະນີ ແລະ ການສື່ສານ:</u>

- ພັດທະນາລະບົບບໍລິຫານລັດດ້ວຍເອເລັກໂທຣນິກເຂົ້າໃນວຽກງານຕົວຈິງ ເພື່ອສະໜັບສະໜູນການພັດທະນາເສດຖະກິດ-ສັງຄົມ, ພ້ອມນັ້ນ ກໍ່ຜັນຂະຫຍາຍບໍລິການລັດໃຫ້ຫຼາຍຂຶ້ນ ເປັນຕົ້ນ: e-Disaster, e-Agriculture, e-Signature, Open Government Data.
- ປັບປຸງ ແລະ ຂະຫຍາຍການນຳໃຊ້ ບັນດາໂປແກຣມການຫັນການບໍລິຫານ ແລະ ບໍລິການຂອງພາກລັດໃຫ້ເປັນເອເລັກໂທຣນິກ ແລະ ທັນສະໄໝ (e-Service) ເພື່ອໃຫ້ການບໍລິການລະຫວ່າງລັດຖະບານກັບລັດຖະບານ (G2G), ລັດຖະບານກັບພາກທຸລະກິດ (G2B), ລັດຖະບານກັບຊຸມຊົນ (G2C).
- ພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ/ໄອຊີທີ ໃຫ້ເປັນທັນສະໄໝ ເພື່ອຮອງຮັບເຕັກໂນໂລຊີທີ່ມີການພັດທະນາ ແນ່ໃສ່ຮັບປະກັນການສະໜອງໂຄງລ່າງພື້ນຖານໃນຍຸກເສດຖະກິດດິຈິຕອນ.
- ສົ່ງເສີມການພັດທະນາ ແລະ ນຳໃຊ້ເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ ແລະ ການຫັນເປັນທັນສະໄໝການຊຳລະສະສາງດ້ວຍລະບົບມືຖື ເພື່ອກາຍເປັນເຄື່ອງມືທີ່ທັນສະໄໝ ແລະ ປະກອບສ່ວນໃນການຄຸ້ມຄອງບໍລິຫານ ແລະ ບໍລິການຂອງລັດຖະບານໃນການເກັບລາຍຮັບມີປະສິດທິພາບສູງຂຶ້ນ.
- ພັດທະນາເຄືອຂ່າຍເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ ຄວາມໄວສູງຂະຫຍາຍລົງສູ່ຕົວເມືອງ, ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ດ້ວຍລາຄາທີ່ເໝາະສົມ ແລະ ພ້ອມທັງສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.
- ສ້າງລະບົບປ້ອງກັນໄອຊີທີໃຫ້ມີຄວາມປອດໄພສູງ ເພື່ອຮັບປະກັນ ແລະ ສະກັດກັ້ນການທຳລາຍເຄືອຂ່າຍເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ; ປົກປ້ອງຂໍ້ມູນສ່ວນບຸກຄົນ, ສະກັດກັ້ນການໂຈລະກຳຂໍ້ມູນຂ່າວສານທຸກຮູບແບບ ແລະ ສະກັດກັ້ນຂໍ້ມູນທີ່ເປັນໄພ.
- ພັດທະນາວຽກງານໄປສະນີ ກາຍເປັນເອເລັກໂທຣນິກ ແລະ ທັນສະໄໝ ເພື່ອໃຫ້ການບໍລິການແກ່ສັງຄົມຢ່າງທົ່ວເຖິງ; ສົ່ງເສີມໃຫ້ມີຜະລິດຕະພັນໃໝ່ ແລະ ການບໍລິຫານທີ່ຫຼາກຫຼາຍ ເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ຊົມໃຊ້.
- ສ້າງລະບົບສາຍສົ່ງໂທລະຄົມມະນາຄົມ ແລະ ຈຸດເຊື່ອມຕໍ່ຊາຍແດນ ເພື່ອຮອງຮັບການຫັນປະເທດໃຫ້ເປັນປະຕູເຊື່ອມຕໍ່ອິນເຕີເນັດ ລະຫວ່າງ ຈີນ ແລະ ອາຊຽນ ກາຍເປັນປະເທດບໍລິການທາງຜ່ານ ດ້ານໂທລະຄົມມະນາຄົມ.

## 2. ແຜນວຽກຈຸດສຸມທີ 2: ການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ

ການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ແມ່ນນັບມື້ມີຄວາມຈຳເປັນ ແລະ ສຳຄັນ ເພື່ອຫຼຸດຜ່ອນຄວາມບອບບາງຂອງການພັດທະນາ ດ້ວຍການດຶງດູດການລົງທຶນຈາກຕ່າງປະເທດ, ຂະຫຍາຍຕະຫຼາດ ແລະ ຄູ່ຄ້າ; ສ້າງມູນຄ່າເພີ່ມ ແລະ ຄວາມຫຼາກຫຼາຍຂອງສິນຄ້າ ແລະ ການບໍລິການ ເພື່ອເຮັດໃຫ້ການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາໃນໄລຍະຍາວໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ. ສະນັ້ນ, ຕ້ອງຄົ້ນຄວ້າ ແລະ ສ້າງຍຸດທະສາດ, ນະໂຍບາຍ ແລະ ມາດຕະການທີ່ເໝາະສົມ ເພື່ອຫຼຸດຜ່ອນຜົນກະທົບທາງດ້ານການຄ້າ ດ້ວຍການເປັນເຈົ້າການໃນການເຈລະຈາ ທາງດ້ານການຄ້າ ພາຍໃຕ້ຂອບການຮ່ວມມືທີ່ມີໃນປັດຈຸບັນ, ພ້ອມທັງຄົ້ນຄວ້ານະໂຍບາຍອື່ນໆທີ່ເໝາະສົມ ເປັນຕົ້ນ ສິດທິພິເສດດ້ານການຄ້າບວກ (EU Generalized System of Preferences Plus).

ໃນໄລຍະ 5 ປີ ຕໍ່ໜ້າ (2021-2025) ບາງວຽກງານບູລິມະສິດຕົ້ນຕໍຂອງການເຊື່ອມໂຍງພາກພື້ນ ແລະ ສາກົນທີ່ຕ້ອງໄດ້ເອົາໃຈໃສ່ ເປັນຕົ້ນ: ການເຊື່ອມໂຍງພາສີ-ອາກອນ, ການຄ້າຊາຍແດນ, ສິດທິຊັບສິນທາງປັນຍາ, ການຄ້າທາງເອເລັກໂທຣນິກ, ການສົ່ງເສີມພະລັງງານສະອາດຕ້ອງຕິດພັນກັບການປັບປຸງນິຕິກຳທີ່ເອື້ອອຳນວຍຄຽງຄູ່ກັບການສ້າງຂີດຄວາມສາມາດ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໃນການຕິດຕາມ ແລະ ປະເມີນຜົນໃນແຕ່ລະໄລຍະ.

### 2.1 ຄາດໝາຍ ແລະ ຕົວຊີ້ບອກ:

- ສູ້ຊົນເຮັດໃຫ້ອັດຕາການເຊື່ອມໂຍງການຄ້າທັງໝົດຕໍ່ລວມຍອດຜະລິດຕະພັນພາຍໃນ (ອັດຕາການເປີດປະເທດ) ໃຫ້ໄດ້ຫຼາຍກວ່າ 70% ໃນປີ 2025.
- ປະລິມານການຂົນສົ່ງ ຜູ້ໂດຍສານ ໃນຕາໜ່າງການເຊື່ອມໂຍງ-ເຊື່ອມຈອດກັບບັນດາປະເທດໃນພາກພື້ນໃນທຸກຮູບແບບການຂົນສົ່ງ: ທາງບົກ ຂະຫຍາຍຕົວ 7% ຕໍ່ປີ, ທາງນໍ້າ ຂະຫຍາຍຕົວ 5%, ທາງອາກາດ ຂະຫຍາຍຕົວ 12%, ທາງລົດໄຟ ຂະຫຍາຍຕົວ 10%;
- ປະລິມານການຂົນສົ່ງ ສິນຄ້າ ໃນຕາໜ່າງການເຊື່ອມໂຍງ-ເຊື່ອມຈອດກັບບັນດາປະເທດໃນພາກພື້ນໃນທຸກຮູບແບບການຂົນສົ່ງ: ທາງບົກ ຂະຫຍາຍຕົວ 7% ຕໍ່ປີ, ທາງນໍ້າ ຂະຫຍາຍຕົວ 5%, ທາງອາກາດ ຂະຫຍາຍຕົວ 12%, ທາງລົດໄຟ ຂະຫຍາຍຕົວ 7%;
- ສູ້ຊົນເຮັດໃຫ້ມູນຄ່າສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງ ກວມ 50% ໃນປີ 2025.

### 2.2 ວຽກງານຈຸດສຸມ:

ການເຊື່ອມໂຍງ ແລະ ການປະຕິຮູບນະໂຍບາຍທາງດ້ານການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ລະບຽບທາງດ້ານຊັບສິນທາງປັນຍາ: ປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາໂດຍສະເພາະຂອບວຽກທາງດ້ານນິຕິກຳທີ່ກ່ຽວຂ້ອງ, ຄຸ້ມຄອງຊັບສິນໃນຂະແໜງອຸດສາຫະກຳ, ໃນໂຮງງານທີ່ເກີດຂຶ້ນໃໝ່ ລວມທັງຄຸ້ມຄອງທາງດ້ານລິຂະສິດ ແລະ ສິດທິອື່ນໆທີ່ກ່ຽວຂ້ອງ. ເຊື່ອມສານ ແລະ ປະຕິບັດພັນທະຕໍ່ກັບແຜນດຳເນີນງານ ແລະ ປະຕິບັດການດ້ານການອຳນວຍຄວາມສະດວກທາງດ້ານການຄ້າລະຫວ່າງເອີຣົບ-ອາຊຽນ 2017-2022 ໂດຍການສ້າງຫ້ອງການກວດກາສິນຄ້າຢູ່ຕາມເຂດຊາຍແດນເພື່ອປະຕິບັດມາດຕະການຕໍ່ຜູ້ລ່ວງລະເມີດຊັບສິນທາງປັນຍາ. ພ້ອມນັ້ນ, ກໍ່ເຊື່ອມສານ ແລະ ປະຕິບັດ ແຜນດຳເນີນງານກ່ຽວກັບການປົກປ້ອງຊັບສິນທາງປັນຍາ 2016-2025 ຂອງອາຊຽນ ແລະ ແຜນປະຕິບັດງານດ້ານການປົກປ້ອງຊັບສິນທາງປັນຍາ ຂອງອົງການປົກປ້ອງຊັບສິນທາງປັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ການເຊື່ອມໂຍງດ້ານພາສີ-ອາກອນ: ສືບຕໍ່ເຊື່ອມສານນະໂຍບາຍການຫຼຸດຜ່ອນອັດຕາພາສີ ແລະ ໃຊ້ນະໂຍບາຍທາງດ້ານພາສີ-ອາກອນຕາມຂອບຂອງປະເທດທີ່ໄດ້ຮັບການອະນຸເຄາະຫຼາຍທີ່ສຸດ, ຂຸດຄົ້ນລາຍຮັບຈາກແຫຼ່ງອື່ນທີ່ບໍ່ແມ່ນພາສີ-ອາກອນທີ່ເກັບຈາກການຄ້າ ດ້ວຍອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້. ໄປຄຽງຄູ່ກັນນັ້ນ, ກໍຄົ້ນຄວ້າຄວາມເປັນໄປໄດ້ໃນການໃຫ້ນະໂຍບາຍສົ່ງເສີມການສົ່ງອອກ.

ການປັບປຸງກົນໄກການອຳນວຍຄວາມສະດວກດ້ານການຄ້າ ແລະ ຫຼຸດຜ່ອນຄ່າສິ້ນເປືອງຂອງຫົວໜ່ວຍທຸລະກິດ: 1) ສົ່ງເສີມການນຳໃຊ້ລະບົບຂໍ້ມູນຂ່າວສານ ICT ໃນການບໍລິຫານ, ພົວພັນ ແລະ ບໍລິການທາງດ້ານວິຊາການຕ່າງໆ ເຊັ່ນ: e-Licensing, e-Co ແລະ e-trade ເພື່ອສ້າງລະບົບເຊື່ອມຕໍ່ດ້ານຂໍ້ມູນຂ່າວສານທີ່ໄດ້ມາດຕະຖານ ແລະ ສະດວກສະບາຍຍິ່ງຂຶ້ນ ເຊິ່ງຈະຊ່ວຍໃຫ້ພາກທຸລະກິດສາມາດຫຼຸດຜ່ອນຄ່າສິ້ນເປືອງໃນການພົວພັນທຸລະກິດໃນດ້ານຕ່າງໆ; 2) ປັບປຸງນິຕິກຳທີ່ຈຳເປັນທີ່ພົວພັນກັບການຜະລິດ, ການຄ້າ, ການແຂ່ງຂັນທີ່ເປັນທຳ ແລະ ການບໍລິການທີ່ໄດ້ມາດຖານສາກົນ ໂດຍສະເພາະ ບັນດາສົນທິສັນຍາທີ່ໄດ້ໃຫ້ສັດຕະຍາບັນ ຫຼື ເປັນພາຄີ ໃນຂອບການຮ່ວມມືດ້ານການຄ້າຕ່າງໆ ພາຍໃນພາກພື້ນ ແລະ ສາກົນ; 3) ປັບປຸງຄຸນນະພາບຂອງບຸກຄະລາກອນ ໃຫ້ມີຄວາມຊຳນານງານ ມີລະບຽບວິໄນ ແລະ ສະຖານທີ່ການບໍລິການ ໃຫ້ມີຄວາມສະດວກສະບາຍ ແລະ ລວມສູນທຸກວຽກງານ; ສ້າງໜ່ວຍງານຮັບຄຳສະເໜີ ຄຳຄິດຄຳເຫັນ ແລະ ເຄົາເຕີໃຫ້ຄຳປຶກສາແກ່ພາກທຸລະກິດ ເພື່ອແກ້ໄຂຂອດຫຍຸ້ງຍາກ ແລະ ອຳນວຍຄວາມສະດວກໃຫ້ພາກທຸລະກິດສາມາດລິເລີ່ມທຸລະກິດໄດ້.

ການປັບປຸງ ແລະ ພັດທະນາວຽກງານການຄ້າໃຫ້ເປັນລະບົບທັນສະໄໝ: ຄົ້ນຄວ້າ ແລະ ພັດທະນາລະບົບການຄ້າທາງເອເລັກໂທຣນິກ (e-Commerce) ແລະ ຜັນຂະຫຍາຍດຳລັດວ່າດ້ວຍການຄ້າທາງເອເລັກໂທຣນິກ ພ້ອມທັງສ້າງຄວາມເຂັ້ມແຂງ ແລະ ຄວາມຮັບຮູ້ເຂົ້າໃຈ ໃນການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ໃຫ້ພາກທຸລະກິດ ແລະ ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ. ສືບຕໍ່ຄົ້ນຄວ້າ ແລະ ພັດທະນາລະບົບອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂທຣນິກທາງອອນລາຍ (e-CO) ໃຫ້ມີປະສິດທິພາບ, ສະດວກ, ວ່ອງໄວ, ທັນສະໄໝ ແລະ ເຊື່ອຖືໄດ້. ຄົ້ນຄວ້າ ແລະ ພັດທະນາລະບົບການຊື້-ຂາຍສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຜ່ານແອັບພິເຄຊັ່ນ ຜ່ານທາງໂທລະສັບມືຖື (ODOP APP) ໃຫ້ມີປະສິດທິພາບ, ສະດວກ, ວ່ອງໄວ, ທັນສະໄໝ ແລະ ເຊື່ອຖືໄດ້. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງເພື່ອຄົ້ນຄວ້າ ແລະ ພັດທະນາລະບົບອອກໃບຢັ້ງຢືນການມີຕົວຕົນ (CA-Certificate of Authority) ໃຫ້ມີປະສິດທິພາບ, ສະດວກ, ວ່ອງໄວ, ທັນສະໄໝ ແລະ ເຊື່ອຖືໄດ້.

ການປັບປຸງສະພາບແວດລ້ອມ ແລະ ການອຳນວຍຄວາມສະດວກທາງດ້ານການຄ້າ ປະສານສົມທົບຄືນລະບຽບການ ແລະ ຂັ້ນຕອນ ໃນການອອກອະນຸຍາດ, ຢັ້ງຢືນ ສຳລັບການນຳເຂົ້າ ແລະ ສົ່ງອອກສິນຄ້າໃຫ້ກະທັດຮັດ ແລະ ວ່ອງໄວຂຶ້ນ ແນ່ໃສ່ຫຼຸດເວລາໃຫ້ໄດ້ຢ່າງໜ້ອຍ 50%, ຄ່າໃຊ້ຈ່າຍ ແລະ ເອກະສານ ໃຫ້ໄດ້ຢ່າງໜ້ອຍ 30% ໃນປີ 2022 ຕາມແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ປີ 2017-2022. ຫາກເຫັນວ່າ ລະບຽບການ, ຂັ້ນຕອນ, ເວລາ, ຄ່າໃຊ້ຈ່າຍ ແລະ ເອກະສານ ໃນການອອກອະນຸຍາດ, ຢັ້ງຢືນ ບໍ່ສົມເຫດສົມຜົນ ແລະ ຊໍ້າຊ້ອນກັນແມ່ນໃຫ້ປັບປຸງ ຫຼື ລົບລ້າງ. ຄົ້ນຄວ້າ ແລະ ປັບປຸງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ສຳລັບສິນຄ້ານຳເຂົ້າ ແລະ ສົ່ງອອກໃຫ້ມີຄວາມຮັດກຸມ ແນ່ໃສ່ປົກປ້ອງຊີວິດ, ສຸຂະພາບຂອງຄົນ ແລະ ສັດ, ຮັບປະກັນຄວາມປອດໄພຂອງສິນຄ້າ ຕໍ່ກັບຜູ້ຊົມໃຊ້, ຄວາມໝັ້ນຄົງຂອງຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນແມ່ນ ມາດຕະການສຸຂະອະນາໄມ ແລະ ສຸຂະນາໄມພືດ (SPS), ມາດຕະການເຕັກນິກຕໍ່ການຄ້າ (TBT) ແລະ ມາດຕະການອື່ນໆ ໂດຍສອດຄ່ອງກັບສັນຍາ ແລະ ສົນທິສັນຍາຕ່າງໆ ທີ່ ສປປ ລາວ ເປັນພາຄີ. ສືບຕໍ່ຈັດຕັ້ງປະຕິບັດແຜນປະຕິບັດງານຂອງກອງເລຂາຢ່າງມີປະສິດທິຜົນ, ລວມທັງການຕິດຕາມ, ກວດກາ, ແລະ ການຈັດຕັ້ງປະຕິບັດບັນດາພັນທະ ແລະ ຂໍ້ຜູກພັນພາຍໃຕ້ WTO, ASEAN, GMS ແລະ ສັນຍາການຄ້າສອງຝ່າຍ.

ການເຊື່ອມໂຍງເພື່ອການສົ່ງເສີມການນຳໃຊ້ພະລັງງານສະອາດ: ສປປ ລາວ ເປັນປະເທດທີ່ມີບົດບາດສູງໃນການສະໜອງພະລັງງານສະອາດໃຫ້ແກ່ປະເທດໃກ້ຄຽງ. ການຫັນຈາກການໃຊ້ພາຫະນະຂັບເຄື່ອນດ້ວຍນ້ຳມັນເຊື້ອໄຟໄປເປັນພາຫະນະທີ່ຂັບເຄື່ອນດ້ວຍໄຟຟ້າຈະເປັນທ່າອ່ຽງອັນໃໝ່ໃນອະນາຄົດ. ສະນັ້ນ, ຈຶ່ງຕ້ອງຮັບປະກັນໃຫ້ມີການສະໜອງໄຟຟ້າທີ່ພຽງພໍກັບຄວາມຕ້ອງການ. ນອກຈາກການຜະລິດພະລັງງານດ້ວຍເຂື່ອນໄຟຟ້າແລ້ວ, ຕ້ອງໄດ້ຄົ້ນຄວ້າຫາແຫຼ່ງພະລັງງານທາງເລືອກອື່ນນຳ ເປັນຕົ້ນການຜະລິດພະລັງງານຈາກແສງຕາເວັນ, ສິ່ງເສດເຫຼືອຈາກການຜະລິດກະສິກຳ , ອາຍແກັສຊີວະພາບ ເພື່ອທົດແທນພະລັງນ້ຳໃນເວລາທີ່ຜະລິດໄຟຟ້າບໍ່ທັນກັບຄວາມຕ້ອງການໃນລະດູນ້ຳໜ້ອຍ. ເພື່ອ

ປັບປຸງການຄຸ້ມຄອງຂະແໜງໄຟຟ້າໃຫ້ມີຄວາມຍືນຍົງ ແມ່ນຕ້ອງມີການປະເມີນແນວໂນ້ມຄວາມຕ້ອງການຂອງຕະຫຼາດ ເພື່ອໃຫ້ສອດຄ່ອງກັບການສະໜອງໄຟຟ້າ ດ້ວຍການນຳໃຊ້ວິທີການປະເມີນທີ່ຮອບຄອບກວ່າເກົ່າ ເພື່ອຮັບປະກັນໃຫ້ມີຜົນກຳໄລ ແລະ ການບໍລິໂພກພະລັງງານແບບຍືນຍົງ. ສະນັ້ນ, ຕ້ອງມີມາດຕະການຄຸ້ມຄອງການໃຊ້ພະລັງງານແບບມີປະສິດທິພາບ ເພື່ອຍົກລະດັບຄວາມສາມາດໃນການແຂ່ງຂັນທາງດ້ານເສດຖະກິດ ແລະ ຍັງສາມາດຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ມົນລະພິດອື່ນໆ.

ການຄົມມະນາຄົມຂົນສົ່ງພາຍໃນ: ໂຄງການປັບປຸງຂອງ ລັດວິສາຫະກິດລົດເມ ເພື່ອປັບປຸງຂົນສົ່ງສາທາລະນະໃນຕົວເມືອງນະຄອນຫຼວງວຽງຈັນ ເພື່ອໃຫ້ຄ່າບໍລິການມີຄວາມສົມເຫດສົມຜົນ ແນໃສ່ການບໍລິການຂົນສົ່ງທີ່ມີຄຸນນະພາບ ແລະ ທົ່ວເຖິງ.

- ການພັດທະນາຊາຍແດນ: ສົ່ງເສີມການຮ່ວມມື, ການຄ້າ, ການລົງທຶນ ແລະ ການບໍລິການ ຕາມບໍລິເວນຊາຍແດນ ຕິດພັນກັບການການພັດທະນາເຂດເສດຖະກິດພິເສດ ແລະ ຕາມແລວທາງລົດໄຟລາວ-ຈີນ ເພື່ອດຶງດູດການລົງທຶນເຂົ້າໃນເຂດອຸດສາຫະກຳປຸງແຕ່ງ ແລະ ການຄ້າ ໂດຍສຸມໃສ່ການສ້າງສິ່ງອຳນວຍຄວາມສະດວກການບໍລິການຂົນສົ່ງສິນຄ້າ, ສາງພັກ ແລະ ຄຽງຖ່າຍສິນຄ້າ; ລະບົບການບໍລິການດ້ານການຄ້າ, ICT ແລະ e-Commerce, ສ້າງຕະຫຼາດການຄ້າຊາຍແດນໃຫ້ມີຄວາມສະດວກ, ວ່ອງໄວ ແລະ ທັນສະໄໝ ລະຫວ່າງລາວ-ຫວຽດນາມ, ລາວ-ຈີນ, ລາວ-ກຳປູເຈຍ ແລະ ລາວ-ມຽນມ້າ. ປັບປຸງລະບຽບການທີ່ຕິດພັນກັບການນຳເຂົ້າຊື່ອຄາວ ແລະ ສິນຄ້າຜ່ານແດນ ເພື່ອແກ້ໄຂບັນຫາຄວາມບໍ່ເປັນເອກະພາບ ກ່ຽວກັບຂັ້ນຕອນ, ເອກະສານປະກອບ, ການຄຸ້ມຄອງຫົວໜ່ວຍທຸລະກິດ ລວມທັງອາຍຸການນຳໃຊ້ຂອງໃບອະນຸຍາດ, ການຢັ້ງຢືນຕ່າງໆ.

## 3. ແຜນວຽກຈຸດສຸມທີ 3: ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ

ເຂດແຄວ້ນ ແລະ ທ້ອງຖິ່ນ ແມ່ນມີທ່າແຮງຫຼາຍດ້ານ ໂດຍສະເພາະ ທີ່ຕັ້ງທາງດ້ານພູມສາດ ຍ້ອນຫຼາຍແຂວງມີຊາຍແດນຕິດກັບຫຼາຍປະເທດໃກ້ຄຽງ ທີ່ເປັນເງື່ອນໄຂເອື້ອອຳນວຍໃນການເຮັດການຄ້າ ແລະ ການຮ່ວມມືຊາຍແດນ; ມີທ່າແຮງທາງດ້ານຊັບພະຍາກອນທາງທຳມະຊາດ ເປັນຕົ້ນ: ປ່າໄມ້, ແຮ່ທາດ, ທີ່ດິນ, ສະພາບອາກາດ ແລະ ແຫຼ່ງນໍ້າ; ມີທ່າແຮງດ້ານ ທ່ອງທ່ຽວປະຫວັດສາດ, ວັດທະນະທຳ ແລະ ແຫຼ່ງທ່ອງທຳມະຊາດທີ່ອຸດົມສົມບູນ ເພື່ອພັດທະນາຕາມທິດສີຂຽວ ແລະ ຍືນຍົງ. ສະນັ້ນ, ການພັດທະນາເຂດແຄ້ວນ ແລະ ທ້ອງຖິ່ນແມ່ນຕ້ອງອີງໃສ່ທ່າແຮງ ແລະ ຈຸດພິເສດຂອງແຕ່ລະພື້ນທີ່ ດ້ວຍການຄົ້ນຄວ້າ, ກຳນົດນິຕິກຳ ແລະ ນະໂຍບາຍເພື່ອສົ່ງເສີມເສດຖະກິດ ພາຍຫຼັງທີ່ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19 ໃຫ້ກັບຄືນສູ່ສະພາບປົກກະຕິ ໂດຍສະເພາະຂະແໜງທຸລະກິດທີ່ໄດ້ຮັບຜົນກະທົບ ເປັນຕົ້ນ: ຂະແໜງທ່ອງທ່ຽວ, ການບໍລິການ ແລະ ຂະແໜງອຸດສາຫະກຳ ເພື່ອສ້າງວຽກເຮັດງານທຳ ແລະ ລາຍໄດ້ ໃຫ້ແກ່ທ້ອງຖິ່ນ. ພ້ອມກັນນີ້, ເອົາໃຈໃສ່ເປັນພິເສດ ກ່ຽວກັບການຄຸ້ມຄອງຊັບພະຍາກອນນໍ້າ ແລະ ຮ່ວມມືກັບບັນດາປະເທດລຸ່ມແມ່ນໍ້າຂອງ. ນຳໃຊ້ໂຄງການລົດໄຟລາວ-ຈີນ ໃຫ້ກາຍເປັນຂໍ້ຕໍ່ທາງດ້ານເສດຖະກິດ, ການຄ້າ ແລະ ການທ່ອງທ່ຽວ, ເຊື່ອມໂຍງກັບເຂດເສດຖະກິດພິເສດ, ການຄ້າ-ຂາຍຊາຍແດນຂອງບັນດາແຂວງທີ່ມີເສັ້ນທາງລົດໄຟແລ່ນຜ່ານ ແລະ ບັນດາແຂວງທີ່ບໍ່ມີເສັ້ນ ທາງລົດໄຟແລ່ນຜ່ານ ໃຫ້ເກີດປະໂຫຍດ ແລະ ມີປະສິດທິຜົນສູງສຸດ.

### 3.1 ຄາດໝາຍ ແລະ ຕົວຊີ້ບອກ:

- ສູ້ຊົນໃຫ້ບັນດາແຂວງຂອງ ສປປ ລາວ ທີ່ມີຊາຍແດນຕິດກັບຕ່າງປະເທດ ໃຫ້ມີດ່ານສາກົນຢ່າງໜ້ອຍ 1 ແຫ່ງ.

### 3.2 ວຽກງານຈຸດສຸມ:

ພາກເໜືອ: ສຸມໃສ່ການຜະລິດ ແລະ ການບໍລິການ ທີ່ເປັນທ່າແຮງ ຕິດພັນກັບການນຳໃຊ້ໂຄງການທາງລົດໄຟລາວ-ຈີນ ໃຫ້ເກີດຜົນປະໂຫຍດສູງຊຸດ ໂດຍສະເພາະ ການພັດທະນາການທ່ອງທ່ຽວຕິດພັນການອະນຸລັກທຳມະຊາດ-ຊີວະນາໆພັນ, ການຜະລິດກະສິກຳສະອາດ ແລະ ຫັດຖະກຳທີ່ຕິດພັນກັບການທ່ອງທ່ຽວ ເພື່ອບໍລິການກັບທີ່ ແລະ ສົ່ງອອກຕາມຊາຍແດນ; ດ້ານກະສິກຳ ສຸມໃສ່ລ້ຽງສັດໃຫຍ່ ໂດຍສະເພາະ ງົວເພື່ອສົ່ງອອກໄປຈີນ, ການປູກພືດກິນໝາກ;

ດ້ານອຸດສາຫະກຳ ສົ່ງເສີມໂຮງງານປຸງແຕ່ງສາລີ, ໂຮງງານປຸງແຕ່ງຢາງພະລາ, ໂຮງງານຂ້າສັດເພື່ອແປຮູບຊີ້ນງົວ,...; ສຸມໃສ່ປັບປຸງ ແລະ ກໍ່ສ້າງໂຄງລ່າງພື້ນຖານທີ່ຈຳເປັນເພື່ອເຊື່ອມກັບເສັ້ນທາງລົດໄຟລາວ-ຈີນ ເປັນຕົ້ນ: ເສັ້ນທາງເຊື່ອມຕໍ່ລະຫວ່າງເຂດການຜະລິດ-ການບໍລິການທ່ອງທ່ຽວຫາເສັ້ນທາງລົດໄຟລາວ-ຈີນ, ທາງດ່ວນ, ທ່າບົກ, ຕົວເມືອງທັນສະໄໝ ຢູ່ແຂວງຫຼວງນ້ຳທາ, ແຂວງອຸດົມໄຊ ແລະ ແຂວງຫຼວງພະບາງ, ສືບຕໍ່ພັດທະນາເຂດເສດຖະກິດພິເສດທີ່ມີແລ້ວ.

ພາກກາງ: ສຸມໃສ່ການບໍລິການ, ການທ່ອງທ່ຽວແບບທຳມະຊາດ, ຜະລິດສະບຽງອາຫານ ແລະ ອຸດສາຫະກຳເບົາອື່ນໆ ເຊັ່ນ: ອຸດສາຫະກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ, ເຄື່ອງນຸ່ງຫົ່ມ, ອຸປະກອນໄຟຟ້າ, ເອເລັກໂທຣນິກ, ເຄື່ອງກົນຈັກ, ຍານພາຫະນະ, ອຸດສາຫະກຳປຸງແຕ່ງໄມ້, ວັດສະດຸກໍ່ສ້າງ, ຫັດຖະກຳຕ່ຳຫູກ ແລະ ຍ້ອມສີທຳມະຊາດ, ໄມ້ແກະສະຫຼັກ, ຈັກສານ ແລະ ເຄື່ອງປັ້ນດິນເຜົາ, ອາຫານພື້ນເມືອງ, ເຄື່ອງເອ້ຢ້ອງຂອງທີ່ລະນຶກຕ່າງໆ; ສືບຕໍ່ສ້າງ ແລະ ພັດທະນາໂຄງລ່າງພື້ນຖານເຂດເສດຖະກິດພິເສດ, ເຂດ ແລະ ນິຄົມອຸດສາຫະກຳທີ່ມີໃນປັດຈຸບັນ ຢູ່ນະຄອນຫຼວງວຽງຈັນ, ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ.

ພາກໃຕ້: ສຸມໃສ່ການຜະລິດກະສິກຳ ແລະ ອຸດສາຫະກຳປຸງແຕ່ງກະສິກຳ ເຊັ່ນ: ອຸດສາຫະກຳປຸງແຕ່ງກາເຟ, ປຸງແຕ່ງໄມ້, ປຸງແຕ່ງຢາງພາລາ, ນ້ຳມັນພືດ, ຊາ, ແລະ ຢາພື້ນເມືອງ; ອຸດສາຫະກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ; ວັດສະດຸກໍ່ສ້າງ; ອຸດສາຫະກຳປຸງແຕ່ງແຮ່ທາດ ເປັນຕົ້ນ ປຸງແຕ່ງອາລູມີນຽມ; ສ້າງໂຄງລ່າງພື້ນຖານເຂດອຸດສາຫະກຳ ເປັນຕົ້ນເຂດ ແລະ ນິຄົມອຸດສາຫະກຳຢູ່ເມືອງໂພນທອງ ແຂວງຈຳປາສັກ ແລະ ເຂດສາມຫຼ່ຽມພັດທະນາ ແຂວງອັດຕະປື ແລະ ພັດທະນາການທ່ອງທ່ຽວແບບທຳມະຊາດ.

## 4. ແຜນວຽກຈຸດສຸມທີ 4: ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ສປປ ລາວ ມີປະຊາກອນທີ່ອາໄສຢູ່ໃນເຂດຕົວເມືອງປະມານ 35% ແລະ ຈັງຫວະການຂະຫຍາຍຕົວຂອງປະຊາກອນໃນຕົວເມືອງ ແມ່ນຢູ່ໃນລະດັບທີ່ໄວພໍສົມຄວນ ໂດຍສະເພາະໃນນະຄອນຫຼວງວຽງຈັນ. ສະນັ້ນ, ການວາງແຜນ ແລະ ຄຸ້ມຄອງຕົວເມືອງ ທີ່ດີ ແລະ ມີຄວາມສອດຄ່ອງ ຈະສາມາດກາຍເປັນເງື່ອນໄຂໃນການຂັບເຄື່ອນການພັດທະນາເສດຖະກິດ ແລະ ສັງຄົມ. ລະດັບຄວາມໜາແໜ້ນຂອງທີ່ຢູ່ອາໄສໃນຕົວເມືອງ ຈະສາມາດເຕົ້າໂຮມປະຊາກອນທີ່ມີຫົວຄິດປະດິດສ້າງ ແລະ ສາມາດດຳລົງຊີວິດໃກ້ກັນຫຼາຍຂຶ້ນ ເຊິ່ງຈະນຳໄປສູ່ຜະລິດຕະພາບທີ່ສູງຂຶ້ນຍ້ອນຊ່ຽວຊານສະເພາະດ້ານເພີ່ມຂຶ້ນ, ສ້າງໃຫ້ກາຍເປັນເມືອງທີ່ເປັນມິດກັບສິ່ງແວດລ້ອມຫຼາຍຂຶ້ນ. ແຕ່ຢ່າງໃດກໍຕາມ, ການເຕີບໂຕຂອງຕົວເມືອງທີ່ບໍ່ໄດ້ມີການວາງແຜນ ແລະ ການຄຸ້ມຄອງທີ່ເປັນລະບົບ ຈະນຳໄປສູ່ຄວາມແອອັດ, ບັນຫາສຸຂະອະນາໄມ, ຄວາມເຊື່ອມໂຊມຄຸນນະພາບຂອງອາກາດ ແລະ ຈະເຮັດໃຫ້ພື້ນທີ່ສຳລັບການພັກຜ່ອນບໍ່ພຽງພໍ. ສະນັ້ນ, ສປປ ລາວ ຕ້ອງມີມາດຕະການໃນການຄຸ້ມຄອງ ແລະ ພັດທະນາຕົວເມືອງໃຫ້ມີຄວາມຍືນຍົງ ລວມທັງເຂດເສດຖະກິດພິເສດ ເພື່ອດຶງດູດ ແລະ ສົ່ງເສີມການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອສ້າງວຽກເຮັດງານທຳ ແລະ ສ້າງລາຍຮັບໃຫ້ແກ່ປະຊາຊົນຫຼາຍຂຶ້ນ ເຊິ່ງຈະຊ່ວຍຫຼຸດຜ່ອນຄວາມແຕກໂຕນ ລະຫວ່າງຕົວເມືອງ ແລະ ຊົນນະບົດ. ນອກນີ້, ຍັງເປັນການເພີ່ມຂີດຄວາມສາມາດໃນການແຂ່ງຂັນຂອງ ສປປ ລາວ ໃນລະດັບສາກົນ ແລະ ການເຊື່ອມໂຍງພາກພື້ນ ແລະ ສາກົນໃຫ້ດີຂຶ້ນ.

### 4.1. ຄາດໝາຍ ແລະ ຕົວຊີ້ບອກ:

+ **ການພັດທະນາຕົວເມືອງ:**
    - ຈັດຕັ້ງປະຕິບັດໂຄງການພັດທະນາຕົວເມືອງ ໃຫ້ສຳເລັດຢູ່ 3 ນະຄອນ, ຕົວເມືອງຕາມແລວທາງອະນຸພາກພື້ນແມ່ນ້ຳຂອງ (GSM) ໃຫ້ສຳເລັດຢ່າງໜ້ອຍຈຳນວນ 4 ຕົວເມືອງ ເພື່ອປັບປຸງທາງດ້ານໂຄງລ່າງພື້ນຖານ ແລະ ສິ່ງແວດລ້ອມຕົວເມືອງ.

- ພັດທະນາເທດສະບານແຂວງຂອງທຸກແຂວງໃຫ້ເປັນລະບົບ, ເປັນຕົວເມືອງທີ່ຕັ້ງການປົກຄອງ ແລະ ເອື້ອອໍານວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງ.
- ນະຄອນຫຼວງວຽງຈັນ, 3 ນະຄອນ ແລະ ຢ່າງໜ້ອຍ 4 ຕົວເມືອງຕາມແລວທາງອານຸພາກພື້ນແມ່ນໍ້າຂອງ ມີສະໜາມກໍາຈັດຂີ້ເຫຍື້ອທີ່ໄດ້ມາດຕະຖານ ຖືກຫຼັກອານາໄມ.
- ນະຄອນຫຼວງວຽງຈັນ, 3 ນະຄອນ ແລະ ຢ່າງໜ້ອຍ 4 ຕົວເມືອງຕາມແລວທາງອານຸພາກພື້ນແມ່ນໍ້າຂອງ ມີລະບົບການບໍາບັດນໍ້າເປື້ອນທີ່ເໝາະສົມ.
- ການບໍລິການກໍາຈັດຂີ້ເຫຍື້ອຢູ່ນະຄອນຫຼວງວຽງຈັນ, 3 ນະຄອນ ແລະ ຢ່າງໜ້ອຍ 4 ຕົວເມືອງຕາມແລວທາງອານຸພາກພື້ນແມ່ນໍ້າຂອງ ກວມຫຼາຍກວ່າ 80% ສໍາລັບຂີ້ເຫຍື້ອທົ່ວໄປ ແລະ ສໍາລັບຂີ້ເຫຍື້ອຕິດເຊື້ອ ແລະ ອັນຕະລາຍ.
- ສ້າງຕົວເມືອງນ້ອຍອັດສະລິຍະ (Smart City) ຕົ້ນແບບຢ່າງໜ້ອຍໜຶ່ງເມືອງ.

**4.2. ວຽກງານຈຸດສຸມ:**

**+ ການພັດທະນາຕົວເມືອງ:**

- ພັດທະນາຕົວເມືອງຕາມແລວທາງເສດຖະກິດຕ່າງໆ ລວມທັງຕາມແລວທາງລົດໄຟລາວ-ຈີນ ເປັນຕົ້ນ: ການສ້າງຕົວເມືອງທັນສະໄໝ (Smart City) ຢູ່ຫຼວງນໍ້າທາ, ອຸດົມໄຊ, ຫຼວງພະບາງ ແລະ ແຂວງວຽງຈັນ ເພື່ອເປັນຕົວແບບໃນການຂະຫຍາຍໄປສູ່ຕົວເມືອງອື່ນ.
- ສຸມໃສ່ພັດທະນານະຄອນຫຼວງ, ນະຄອນ ແລະ ເມືອງຕ່າງໆທີ່ມີທ່າແຮງທາງດ້ານເສດຖະກິດເພື່ອໃຫ້ກາຍເປັນສູນກາງທີ່ສາມາດຍູ້ໜູນການພັດທະນາດ້ານຕ່າງໆ ຂອງຕົວເມືອງອື່ນທີ່ຢູ່ອ້ອມຮອບ;
- ປັບປຸງສິ່ງແວດລ້ອມຕົວເມືອງ ເຊັ່ນ: ສ້າງສວນສາທາລະນະ, ສ້າງເຂດຂຽວ, ປົກປັກຮັກສາທິວທັດທໍາມະຊາດ ແລະ ເຂດສະຫງວນຕ່າງໆ ຢູ່ຕົວເມືອງນະຄອນຫຼວງວຽງຈັນ ແລະ ຕົວເມືອງອື່ນໆ ຕະຫຼອດຮອດຊຸມຊົນເມືອງໃຫ້ມີຄວາມສວຍງາມ, ສີຂຽວ, ສະອາດ, ສະຫງົບ, ປອດໄພ ແລະ ໜ້າຢູ່ ເພື່ອຮັບປະກັນດ້ານຄຸນນະພາບຊີວິດຂອງປະຊາຊົນໃນຕົວເມືອງ ໃຫ້ໄດ້ຕາມເປົ້າໝາຍການພັດທະນາຍືນຍົງ.
- ສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດທັງຂອງລັດ ແລະ ເອກະຊົນ ລວມທັງປະຊາຊົນມີສ່ວນຮ່ວມໃນການບໍລິການເກັບມ້ຽນ, ຂົນສົ່ງ ແລະ ກໍາຈັດຂີ້ເຫຍື້ອ ຢູ່ໃນຕົວເມືອງຕ່າງໆ, ໄປຄຽງຄູ່ກັບການສ້າງສິ່ງອໍານວຍຄວາມສະດວກ ໃນການນໍາໃຊ້ຄືນ ແລະ ຜະລິດຄືນໃໝ່ຕາມຫຼັກການຫຼຸດຜ່ອນປະລິມານຂີ້ເຫຍື້ອແຕ່ແຫຼ່ງກໍາເນີດ. ບັນຫາທີ່ກ່າວມານີ້ແມ່ນຈະໄດ້ຮັບການສະໜັບສະໜູນຈາກການຈັດຕັ້ງປະຕິບັດ ເສດຖະກິດໝູນວຽນ ເຊິ່ງໄດ້ຖືກກໍານົດເປັນວຽກສໍາຄັນຂອງນະໂຍບາຍ "ການເຕີບໂຕສີຂຽວ ແລະ ການແກ້ໄຂບັນຫາກ່ຽວກັບການປ່ຽນແປງດິນຟ້າອາກາດ". ຂະແໜງດັ່ງກ່າວ ຈະສາມາດສ້າງໂອກາດທາງດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມ ຖ້າຫາກມີການຄຸ້ມຄອງ ແລະ ຈັດການສິ່ງເສດເຫຼືອຢ່າງເປັນລະບົບ. ສັດສ່ວນຂອງສານອິນຊີທີ່ມີຢູ່ໃນສິ່ງເສດເຫຼືອໃນປະລິມານທີ່ສູງ ເຮັດໃຫ້ສາມາດຫັນສິ່ງເສດເຫຼືອໃຫ້ກາຍມາເປັນຊັບພະຍາກອນ ດ້ວຍການສ້າງລາຍຮັບຈາກການຂາຍຜະລິດຕະພັນສໍາເລັດຮູບ ຄຽງຄູ່ກັບການຫຼຸດຜ່ອນຜົນກະທົບທາງລົບຕໍ່ສິ່ງແວດລ້ອມ.
- ສືບຕໍ່ປັບປຸງ ແລະ ກໍ່ສ້າງລະບົບຮ່ອງລະບາຍນໍ້າ ແລະ ປ້ອງກັນນໍ້າຖ້ວມຢູ່ຕົວເມືອງຕ່າງໆ, ໄປຄຽງຄູ່ກັບການປົກປັກຮັກສາເຂດສະຫງວນໜອງ, ບຶງ, ເຂດແຄມແມ່ນໍ້າ ແລະ ເຂດດິນທາມເພື່ອຮັບປະກັນໃຫ້ຕົວເມືອງຕ່າງໆ ມີລະບົບນິເວດທີ່ດີ ແລະ ທົນທານຕໍ່ການປ່ຽນແປງດິນຟ້າອາກາດ.
- ຊຸກຍູ້ ແລະ ສົ່ງເສີມການຫຼຸດຜ່ອນມົນລະພິດທາງອາກາດ ດ້ວຍຮູບການສົ່ງເສີມການນໍາໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມ, ການນໍາຊ້ພະລັງງານທາງເລືອກສໍາລັບພາຫະນະ ແລະ ການນໍາໃຊ້ເຊື້ອໄຟທີ່ສະອາດ

ເຂົ້າໃນການປຸງແຕ່ງອາຫານ ເພື່ອຮັບປະກັນດ້ານຄຸນນະພາບຂອງສິ່ງແວດລ້ອມຕົວເມືອງ ແລະ ສຸຂະພາບຂອງປະຊາຊົນ.

+ **ການພັດທະນາເຂດເສດຖະກິດພິເສດ:**

- ສືບຕໍ່ຊຸກຍູ້ການພັດທະນາ 12 ເຂດເສດຖະກິດພິເສດ ໃຫ້ມີປະສິດທິຜົນກວ່າເກົ່າ ລວມທັງປັບປຸງລະບົບກົນໄກການຂົນສົ່ງໃຫ້ແກ່ເຂດເສດຖະກິດພິເສດ ແລະ ທົບທວນນະໂຍບາຍອາກອນໃຫ້ແກ່ເຂດເສດຖະກິດພິເສດ ເພື່ອຮັບປະກັນການເກັບລາຍຮັບຢ່າງມີປະສິດທິພາບໂດຍການປະເມີນຄືນບັນດາສັນຍາ ແລະ ແຜນພັດທະນາໃນແຕ່ລະເຂດໃຫ້ມີຄວາມສອດຄ່ອງກັບສະພາບໃນປັດຈຸບັນ ແລະ ທ່າອ່ຽງຂອງຕະຫຼາດໂລກ ເພື່ອເພີ່ມສາມາດໃນການແຂ່ງຂັນກັບພາກພື້ນ ແລະ ສາກົນ.
- ປັບປຸງກົນໄກການບໍລິການການລົງທຶນປະຕູດຽວ ໂດຍການເພີ່ມທະວີການປະສານສົມທົບລະຫວ່າງພາກລັດ, ປັບປຸງນະໂຍບາຍ, ກົນໄກ, ລະບຽບການ ທີ່ຕິດພັນກັບການອະນຸມັດການລົງທຶນໃຫ້ມີຄວາມເປັນເອກະພາບ ແລະ ຄ່ອງຕົວກວ່າເກົ່າ ເພື່ອອຳນວຍຄວາມສະດວກໃຫ້ແກ່ນັກລົງທຶນ.
- ສືບຕໍ່ພັດທະນາໂຄງລ່າງພື້ນຖານທີ່ຈຳເປັນ ເປັນຕົ້ນ ເສັ້ນທາງ, ໄຟຟ້າ, ນ້ຳປະປາ ເພື່ອດຶງດູດການລົງທຶນໃຫ້ຫຼາຍຂຶ້ນ.
- ເພີ່ມທະວີການດຶງດູດການລົງທຶນໃນເຂດໃໝ່ຕາມແລວທາງລົດໄຟລາວ-ຈີນ ແລະ ແລວທາງເສດຖະກິດອື່ນໆ ເປັນຕົ້ນ ສຶກສາຄວາມເປັນໄປໄດ້ ແລະ ກໍ່ສ້າງຕົວເມືອງທັນສະໄໝ ຢູ່ເຂດນາເຕີຍ ແຂວງນ້ຳທາ, ຢູ່ເຂດນາໝໍ້ ແຂວງອຸດົມໄຊ, ຢູ່ເຂດບ້ານໜອງແປນ, ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ.
- ສົມທົບກັບພາກສ່ວນກ່ຽວກັບ ທັງພາກລັດ ແລະ ພາກເອກະຊົນ ພັດທະນາສີມືແຮງງານ ໃຫ້ສອດຄ່ອງກັບຄວາມຕ້ອງການການພັດທະນາໃນເຂດ; ປັບປຸງ ແລະ ເຜີຍແຜ່ນິຕິກຳ ແລະ ລະບຽບການ ກ່ຽວກັບນາຍຈ້າງ ແລະ ຜູ້ອອກແຮງງານ ເພື່ອຍົກສູງການຮັບຮູ້ກ່ຽວກັບສິດທິ ແລະ ຜົນປະໂຫຍດຂອງຜູ້ມາລົງທຶນ ແລະ ຜູ້ອອກແຮງງານ.

## 5. ບາງໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດສະໜັບສະໜຸນ ເປົ້າໝາຍ 5 (ລາຍລະອຽດມີໃນເອກະສານຊ້ອນທ້າຍ):

### 1. ການເຊື່ອມຈອດ

(1). ໂຄງການສ້າງທ່າເຮືອ 3 ແຫ່ງ (ຊຽງກົກ, ປາກແບ່ງ ແລະ ຄົກຈອງ)

(2). ໂຄງການສືບຕໍ່ກໍ່ສ້າງດ່ານວັງເຕົ່າ.

(3). ໂຄງການກໍ່ສ້າງດ່ານບ້ານວັງ ເມືອງໝື່ນ ແຂວງວຽງຈັນ.

(4). ໂຄງການກໍ່ສ້າງສະໜາມບິນສາກົນ ຢູ່ຕົ້ນເຜີ້ງ ແຂວງບໍ່ແກ້ວ.

(5). ໂຄງການກໍ່ສ້າງທາງດ່ວນແຕ່ດ່ານສາກົນປາກທົກ (ໄຕຈ່າງ) ລາວ-ຫວຽດ-ແຂວງອຸດົມໄຊ (ທາງ 2E) ເຊື່ອມຕໍ່ເສັ້ນທາງດ່ວນຫຼວງພະບາງ-ບໍ່ເຕັນ (ໂຄງການໃໝ່).

(6). ໂຄງການກໍ່ສ້າງທາງດ່ວນແຕ່ດ່ານສາກົນລ້ານຕຸ້ຍ (ລາວ-ຈີນ)-ເມືອງບຸນໃຕ້ແຂວງຜົ້ງສາລີ-ສະຖານີລົດໄຟເມືອງນາໝໍ້ແຂວງອຸດົມໄຊ (ຫຼື ຫານາເຕີຍແຂວງຫຼວງນ້ຳທາ) (ໂຄງການໃໝ່).

(7). ໂຄງການກໍ່ສ້າງຂົວມິດຕະພາບແຫ່ງທີ 5 (ປາກຊັນ-ບຶງການ)

(8). ໂຄງການຂົວຂ້າມນ້ຳຂອງເມືອງຈອມເພັດ ແຂວງຫຼວງພະບາງ

(9). ໂຄງການກໍ່ສ້າງຂົວມິດຕະພາບແຫ່ງທີ 6 (ສາລະວັນ-ອຸບົນ)

(10). ໂຄງການກໍ່ສ້າງຂົວຂ້າມນ້ຳຂອງແຫ່ງທີ 2 ຢູ່ທາງທິດເໜືອ ແລະ ທາງທິດໃຕ້ຂອງຂົວຂ້າມນ້ຳຂອງປາກເຊ-ໂພນທອງ (ໂຄງການໃໝ່).

(11). ໂຄງການພັດທະນາທ່າເຮືອ ແລະ ບໍລິການ ເມືອງຕົ້ນເຜີ້ງ ມູນຄ່າການລົງທຶນເບື້ອງຕົ້ນ 50 ລ້ານໂດລາສະຫະລັດ. (ໂຄງການໃໝ່)

(12). ໂຄງການກໍ່ສ້າງເສັ້ນທາງປູຢາງ 2 ຊັ້ນ ເວັ້ນນະຄອນປາກເຊ ແລະ ກໍ່ສ້າງຂົວເຊໂດນແຫ່ງໃໝ່ (ໂຄງການໃໝ່).

(13). ໂຄງການກໍ່ສ້າງທາງເລກທີ 12 (ໂຄງການໃໝ່).

(14). ໂຄງການກໍ່ສ້າງທາງດ່ວນ ວັງວຽງ-ຫຼວງພະບາງ (ໂຄງການໃໝ່)

(15). ໂຄງການກໍ່ສ້າງທາງດ່ວນ ຫຼວງພະບາງ-ແຂວງອຸດົມໄຊ (ໂຄງການໃໝ່)

(16). ໂຄງການກໍ່ສ້າງທາງດ່ວນ ອຸດົມໄຊ-ບໍ່ເຕັນ (ໂຄງການໃໝ່)

(17). ໂຄງການກໍ່ສ້າງທາງດ່ວນ ແຕ່ບໍ່ເຕັນ ແຂວງຫຼວງນໍ້າທາ-ຫ້ວຍຊາຍ ແຂວງບໍ່ແກ້ວ (ໂຄງການໃໝ່)

(18). ໂຄງການພັດທະນາທ່າບົກ ນາເຕີຍ (ແຂວງຫຼວງນໍ້າທາ)

(19). ໂຄງການພັດທະນາທ່າບົກ ຫຼັກ 20 (ແຂວງບໍລິຄໍາໄຊ)

(20). ໂຄງການພັດທະນາທ່າບົກ ຫ້ວຍຊາຍ (ແຂວງບໍ່ແກ້ວ)

(21). ໂຄງການພັດທະນາທ່າບົກຫຼວງພະບາງ (ແຂວງຫຼວງພະບາງ)

(22). ໂຄງການພັດທະນາທ່າບົກ ອຸດົມໄຊ (ແຂວງອຸດົມໄຊ)

(23). ໂຄງການຂົວທາງ ໄລຍະ 2 (ທະນາຄານໂລກ) (ໂຄງການສືບຕໍ່)

(24). ໂຄງການສົ່ງເສີມທຸລະກໍາດ້ານການເງິນຢູ່ຊາຍແດນ ໃນ ASEAN +3 (ADB) (ໂຄງການໃໝ່).

(25). ໂຄງການພັດທະນາຄວາມອາດສາມາດໃນການຄຸ້ມຄອງ ແລະ ບໍາລຸງຮັກສາຂົວ (ທຶນຊ່ວຍເຫຼືອ JICA)

(26). ໂຄງການສະໜັບສະໜຸນດ້ານວິຊາການເພື່ອສືບຕໍ່ປັບປຸງສະໜາມບິນສາກົນວັດໄຕ (Project for Technical Support on Continues Improvement of Vientiane International Airport) (ທຶນຊ່ວຍເຫຼືອ JICA).

## 2. ການເຊື່ອມໂຍງທາງດ້ານການຄ້າວຽກງານການຮ່ວມມືທາງດ້ານການຄ້າ

(1). ໂຄງການສົ່ງເສີມການເຈລະຈາການຄ້າຂອບສອງຝ່າຍ.

(2). ໂຄງການສົ່ງເສີມເຈລະຈາການຄ້າຂອບພາກພື້ນອາຊຽນ (AEC) ແລະ ອົງການອາຫານໂລກ (WHO).

(3). ໂຄງການສົ່ງເສີມການຮ່ວມມືໃນຂອບອະນຸພາກພື້ນ.

(4). ໂຄງການສົ່ງເສີມການເຊື່ອມໂຍງດ້ານມາດຕະຖານ ແລະ ຄຸນນະພາບຜະລິດຕະພັນອຸດສາຫະກໍາ ແລະ ເຄືອຂ່າຍການຜະລິດກັບພາກພື້ນ ແລະ ສາກົນ.

(5). ໂຄງການສົ່ງເສີມການເຈລະຈາການສົ່ງເສີມການສົ່ງອອກສິນຄ້າ.

(6). ໂຄງການສົ່ງເສີມ ແລະ ພັດທະນາການຄ້າຊາຍແດນ ແລະ ການບໍລິການການຄ້າຜ່ານຊາຍແດນຕິດພັນກັບ Logistic ໃນຍຸກແຫ່ງການເຊື່ອມໂຍງເຊື່ອມຈອດ.

(7). ໂຄງການສົ່ງເສີມນໍາໃຊ້ເຕັກໂນໂລຊີທັນສະໄໝ ເພື່ອການວາງແຜນ ແລະ ຕິດຕາມການລົງທຶນດ້ານໂຄງລ່າງພື້ນຖານທີ່ມີຄຸນນະພາບ (ADB) (ໂຄງການສືບຕໍ່)

(8). ຂອບການຮ່ວມມື CLV (ໂຄງການສືບຕໍ່)

(9). ໂຄງການ REDD+ (JICA) (ໂຄງການສືບຕໍ່)

## 3. ການພັດທະນາຕົວເມືອງ

(1). ໂຄງການພັດທະນາຄວາມສາມາດໃນການສົ່ງເສີມ ແລະ ຄຸ້ມຄອງການພັດທະນາຕົວເມືອງ (Project for Capacity Development on Urban Development Control and Promotion) (ທຶນຊ່ວຍເຫຼືອຈາກ JICA).

(2). ໂຄງການສົ່ງເສີມການບໍາບັດນໍ້າເສຍ ແລະ ສິ່ງເສດເຫຼືອ ເພື່ອປັບປຸງສະພາບແວດລ້ອມໃນຕົວເມືອງ (ນະຄອນຫຼວງວຽງຈັນ ແລະ ປາກເຊ) (ໂຄງການສືບຕໍ່)

(3). ໂຄງການສະຖານີລົດເມນະຄອນຫຼວງວຽງຈັນ (ໂຄງການສືບຕໍ່)

(4). ໂຄງການສືບຕໍ່ພັດທະນາຕົວເມືອງໃໝ່ເຫດສະບານແຂວງວຽງຈັນ.

(5). ໂຄງການສ້າງແຫຼ່ງທ່ອງທ່ຽວແຄມຂອງໃຫ້ເປັນທາງຍ່າງຢ່າງຕໍ່ເນື່ອງ ແລະ ສ້າງຄອງນໍ້າວຽງຈັນ ໃຫ້ເປັນແຫຼ່ງທ່ອງທ່ຽວຫຼາຍຊົ່ວໂມງ ຢູ່ນະຄອນຫຼວງວຽງຈັນ (ໂຄງການໃໝ່).

**4. ການພັດທະນາເຂດເສດຖະກິດພິເສດ**

(1). ໂຄງການພັດທະນາຕົວເມືອງທັນສະໄໝ AMATA SMART CITY ຢູ່ແຂວງຫຼວງນໍ້າທາ ແລະ ແຂວງອຸດົມໄຊ

(2). ໂຄງການກໍ່ສ້າງຕົວເມືອງທັນສະໄໝ (Smart City) ຢູ່ບ້ານໜອງແປນ, ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ

(3). ໂຄງການພັດທະນາສູນບໍລິການເຕົ້າໂຮມ ແລະ ຄ່ຽນຖ່າຍສິນຄ້າ (ICD) ຢູ່ເຂດພັດທະນາກວມລວມໄຊເສດຖາ ນະຄອນຫຼວງວຽງຈັນ

(4). ໂຄງການກໍ່ສ້າງທ່າບົກ ຢູ່ເຂດວັງເຕົ່າ-ໂພນທອງ ແຂວງຈໍາປາສັກ

**5. ການພັດທະນາ ແລະ ນໍາໃຊ້ນະວັດຕະກໍາໄອຊີທີ**

(1). ໂຄງການ ປັບປຸງລະບົບອອກອະນຸຍາດໄອຊີທີ ແບບອອນລາຍ ໃຫ້ສາມາດບໍລິການໄດ້ທົ່ວປະເທດ.

(2). ໂຄງການ ປັບປຸງການກວດກາມາດຕະຖານອຸປະກອນ ໄອຊີທີ.

(3). ໂຄງການ ກວດກາການບໍລິການທາງດ້ານ ໄອຊີທີ.

(4). ໂຄງການ ສ້າງ Digital Park/ICT Park ຢູ່ນະຄອນຫຼວງວຽງຈັນ.

(5). ໂຄງການສ້າງສູນນະວັດຕະກໍາ ແລະ ທີ່ປຶກສາທາງດ້ານດີຈິຕອນ.

(6). ໂຄງການ Digital camp.

(7). ໂຄງການ ສ້າງ Digital Index.

(8). ໂຄງການ Internet ບໍ່ເສຍຄ່າ.

**6. ພັດທະນາໂຄງລ່າງພື້ນຖານ ໂທລະຄົມມະນາຄົມ, ໄອຊີທີ ແລະ ດິຈິຕອນໂຄ (15 ໂຄງການ)**

(1). ໂຄງການປັບປຸງລະບົບເຕັກນິກ ແລະ ທົດລອງນໍາໃຊ້ IPv6 ກັບບໍລິສັດ ທີ່ໃຫ້ບໍລິການອິນເຕີເນັດ ພາຍໃນ ແລະ ຕ່າງປະເທດ.

(2). ໂຄງການປັບປຸງລະບົບເຕັກນິກ ແລະ ຄວາມປອດໄພ ສໍາລັບລະບົບຄຸ້ມຄອງລະຫັດຊື່ອິນເຕີເນັດ .LA ແລະ ລາວ.

(3). ໂຄງການສຶກສາຄວາມເປັນໄປໄດ້ ແລະ ສ້າງສູນສໍາຮອງສູນອິນເຕີເນັດແຫ່ງຊາດ.

(4). ໂຄງການສ້າງລະບົບ Registry ສໍາຮອງ ທີ່ສູນສໍາຮອງສູນອິນເຕີເນັດແຫ່ງຊາດ ໃນພາກເໜືອ ແລະ ພາກໃຕ້.

(5). ໂຄງການປັບປຸງລະບົບຮັບຝາກເວັບໄຊ (Hosting) ເພື່ອໃຫ້ມີຄວາມປອດໄພ ແລະ ສາມາດຮອງຮັບຂະຫຍາຍຕົວຂອງການຊົມໃຊ້.

(6). ໂຄງການປັບປຸງລະບົບຮັບຝາກອຸປະກອນໄອຊີທີ (Colocation) ເພື່ອໃຫ້ ສາມາດຮອງຮັບຂະຫຍາຍຕົວຂອງການຊົມໃຊ້.

(7). ໂຄງການຂະຫຍາຍລະບົບຄລາວ (Cloud) ຮອງຮັບການຫັນເປັນທັນສະໄໝ.

(8). ໂຄງການສ້າງສູນແລກປ່ຽນຂໍ້ມູນສໍາລັບພາກລັດ (National Data Exchange Center).

(9). ໂຄງການ ປັບປຸງ ແລະ ຂະຫຍາຍເຄືອຂ່າຍເຊື່ອມຕໍ່ພາກລັດ (Government network )

(10). ໂຄງການພັດທະນາໂຄງຂ່າຍຂໍ້ມູນຂ່າວສານຄວາມໄວສູງ ເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ຮອງຮັບແລວທາງເສດຖະກິດເສັ້ນທາງສາຍໄໝດິຈິຕອນ.

(11). ໂຄງການພັດທະນາໂຄງລ່າງພື້ນຖານສູນກາງອິນເຕີເນັດຄວາມໄວສູງ ເຊື່ອມຕໍ່ອະນຸພາກພື້ນ (CLMV).

(12). ໂຄງການສ້າງຈຸດເຊື່ອມຕໍ່ລະບົບສາຍສົ່ງໂທລະຄົມມະນາຄົມ ເຂົ້າ-ອອກ ຕ່າງປະເທດ

(13). ໂຄງການຈັດຊື້ ແລະ ຕິດຕັ້ງລະບົບໄຟຟ້າສູນຂໍ້ມູນສໍາຮອງ ດົງໂພສີ

(14). ໂຄງການປັບປຸງສູນດົງໂພສີໃຫ້ກາຍເປັນສູນສໍາຮອງ

(15). ໂຄງການ ສຶກສາໂຄງສ້າງສ່ວນແບ່ງຕະຫຼາດ ແລະ ການກໍານົດຂອບເຂດຕະຫຼາດ ໂທລະຄົມມະນາຄົມ ຄຽງຄູ່ໄປກັບການສົ່ງເສີມການແຂ່ງຂັນ ທີ່ເປັນທໍາ.

***ເປົ້າໝາຍທີ 6: ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທໍາ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ.***

ສືບຕໍ່ປັບປຸງການຄຸ້ມຄອງ ແລະ ການບໍລິຫານຂອງລັດ ໃຫ້ກ້າວໄປສູ່ການຫັນລັດແຫ່ງກົດໝາຍໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອເປັນກຸນແຈສໍາຄັນໃນການເສີມສ້າງຂີດຄວາມສາມາດຂອງພາກລັດ ໂດຍສະເພາະເພື່ອຮັບມືກັບຄວາມຮຽກຮ້ອງຕ້ອງການ ແລະ ສິ່ງທ້າທາຍຕ່າງໆທີ່ເພີ່ມຂຶ້ນ ອັນເນື່ອງມາຈາກ ການລະບາດຂອງພະຍາດໂຄວິດ-19, ໂອກາດ ແລະ ຄວາມສ່ຽງຈາກການລົງທຶນ ແລະ ການເຊື່ອມໂຍງເສດຖະກິດ ທີ່ເພີ່ມສູງຂຶ້ນໃນພາກພື້ນ ແລະ ສາກົນ; ຄຽງຄູ່ກັນນັ້ນ, ຕ້ອງໄດ້ຍົກສູງປະສິດທິພາບໃນການປະສານງານ ແລະ ການສະໜອງບໍລິການພາກລັດໃຫ້ດີຂຶ້ນ.

1. **ແຜນວຽກຈຸດສຸມ 1: ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ວຽກງານສາມສ້າງໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ**

**1.1 ຄາດໝາຍ ແລະ ຕົວຊີ້ບອກ:**

- ສູ້ຊົນການບໍລິຫານລັດເປັນທັນສະໄໝ ແລະ ປັບປຸງການບໍລິຫານລັດເປັນ e-goverment.
- ກົງຈັກການຈັດຕັ້ງບໍລິຫານລັດທຸກຂັ້ນໄດ້ຮັບການປັບປຸງໃຫ້ກະທັດຮັດຕາມທິດສາມສ້າງ ສູ້ຊົນໃຫ້ຈໍານວນຫົວໜ່ວຍການຈັດຕັ້ງຂັ້ນກົມ ແລະ ພະແນກຢູ່ກະຊວງ-ອົງການຕ່າງໆໃຫ້ໄດ້ 20% ຂອງຈໍານວນທີ່ມີໃນປັດຈຸບັນ ແລະ ຂັ້ນຂະແໜງ, ໜ່ວຍງານ ແລະ ຈຸງານ ຢູ່ຫົວໜ່ວຍບໍລິຫານຂັ້ນທ້ອງຖິ່ນໃຫ້ໄດ້ 30% ຂອງຈໍານວນທີ່ມີປັດຈຸບັນ.
- ສ້າງເທດສະບານ/ນະຄອນ ເຊິ່ງເປັນອົງການປົກຄອງທ້ອງຖິ່ນໃນຕົວເມືອງ ຕາມເງື່ອນໄຂ ແລະ ກົດໝາຍໂດຍສະເພາະແມ່ນສຸມໃສ່ເມືອງທີ່ເປັນທີ່ຕັ້ງຂອງສໍານັກງານປົກຄອງແຂວງເປັນບູລິມະສິດ ໃຫ້ໄດ້ຢ່າງໜ້ອຍ 8 ແຫ່ງ;
- ການບໍລິການຂອງລັດຕາມກົນໄກບໍລິການ ຜ່ານປະຕູດຽວໄດ້ຮັບການປັບປຸງໃຫ້ດີຂຶ້ນ, ປະຊາຊົນໄດ້ຮັບການບໍລິການທີ່ສະດວກ, ວ່ອງໄວ ແລະ ໂປ່ງໃສ;
- ສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ ຕາມ 7 ດ້ານ (ດ້ານການກໍ່ສ້າງພັກ-ພະນັກງານ, ດ້ານການປົກຄອງ ແລະ ບໍລິຫານລັດດ້ວຍກົດໝາຍ ທີ່ສັກສິດ, ດ້ານການຂະຫຍາຍຕົວຂອງເສດຖະກິດທີ່ມີຍຸດທະສາດ ແລະ ທິດການເສີມຂະຫຍາຍທ່າແຮງທີ່ມີພາຍໃນທ້ອງຖິ່ນຕົນ, ດ້ານການເງິນຂອງປະເທດ, ດ້ານການຄຸ້ມຄອງ, ຂຸດຄົ້ນ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດ, ໂຄງລ່າງພື້ນຖານ-ວັດຖຸເຕັກນິກ ຢ່າງມີປະສິດທິຜົນ, ດ້ານການຄຸ້ມຄອງວັດທະນະທໍາ-ສັງຄົມ ແລະ ຊັບພະຍາກອນມະນຸດ, ດ້ານການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບທີ່ເຂັ້ມແຂງ) ໃຫ້ໄດ້ຢ່າງໜ້ອຍ 2/3 ຫຼື ເທົ່າກັບ 66,66% ຫຼື ຫຼາຍກວ່າ 11

ແຂວງ ຂອງຈຳນວນແຂວງທັງໝົດ, ເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານໃຫ້ໄດ້ 1/3 ຫຼື ເທົ່າກັບ 33,33% ຫຼື ຫຼາຍກວ່າ 48 ເມືອງ ຂອງຈຳນວນເມືອງທັງໝົດ, ບ້ານເປັນຫົວໜ່ວຍພັດທະນາໃຫ້ໄດ້ 2/3 ຫຼື ຫຼາຍກວ່າ 66,66% ຫຼື ຫຼາຍກວ່າ 5.575 ບ້ານ ຂອງຈຳນວນບ້ານທັງໝົດ.

- ສູ້ຊົນໃຫ້ພົນລະເມືອງລາວທຸກຄົນ ແລະ ເດັກເກີດໃໝ່ໄດ້ຮັບການຈົດທະບຽນ ແລະ ມີໃບຢັ້ງຢືນການເກີດເປັນທາງການ ໃຫ້ໄດ້ 70% ຂຶ້ນໄປ.
- ການບໍລິຫານພາຍໃນອົງກອນການຈັດຕັ້ງລັດ ທັງສູນກາງ ແລະ ທ້ອງຖິ່ນ ນຳໃຊ້ລະບົບດີຈິຕອນ.
- ຫັນທຸກບໍລິການພື້ນຖານທີ່ຈຳເປັນຂອງພັກລັດ ເປັນການບໍລິການຜ່ານອອນລາຍ ໃຫ້ບັນລຸ 50% ເພື່ອຍົກລະດັບດັດຊະນີຕົວຊີ້ບອກແຕ່ລະໜ່ວຍ ດ້ານການບໍລິຫານລັດດ້ວຍເອເລັກໂທຣນິກ ແລະ ດ້ານການພັດທະນາໄອຊີທີ ໃຫ້ດີຂຶ້ນ.
- ສ້າງເສດຖະກິດໃໝ່ ບົນພື້ນຖານເສດຖະກິດດີຈິຕອນ ໂດຍການສ້າງສູນຂໍ້ມູນໃຫຍ່ 2 ແຫ່ງ, ທາງຜ່ານການເຊື່ອມຕໍ່ອິນເຕີເນັດ ໂດຍການນຳໃຊ້ໂຄງລ່າງພື້ນຖານເສັ້ນທາງລົດໄຟລາວ-ຈີນ ແລະ ສາຍສົ່ງໄຟຟ້າແຫ່ງຊາດ.
- ສ້າງເຂດເສດຖະກິດພິເສດດ້ານດີຈິຕອນ ໃຫ້ໄດ້ 1 ແຫ່ງ ເພື່ອດຶງດູດການລົງທຶນຈາກຕ່າງປະເທດ.

### 1.2 ວຽກງານຈຸດສຸມ:

- ປະຕິຮູບກົງຈັກບໍລິຫານລັດ, ປະຕິຮູບລະບຽບການຄຸ້ມຄອງລັດຖະກອນ ໃຫ້ສອດຄ່ອງ ແລະ ຮັດກຸມ.
- ກຳນົດພາລະບົດບາດ, ໜ້າທີ່ຂອງກະຊວງ, ອົງການຈຳນວນໜຶ່ງຄືນໃໝ່ ໃຫ້ຈະແຈ້ງກວ່າເກົ່າ, ບໍ່ຊ້ຳຊ້ອນ ແລະ ກ້າວກ່າຍກັນ.
- ປັບປຸງກະຊວງ-ອົງການລັດທຽບເທົ່າກະຊວງ ໃຫ້ກະທັດຮັດ, ທັນສະໄໝ, ສາມາດເຄື່ອນໄຫວວຽກງານຢ່າງຄ່ອງຕົວມີປະສິດທິພາບ ແລະ ມີປະສິດທິຜົນດ້ວຍການໂຮມ, ຍຸບເຂົ້າກັນ ແລະ ແຍກກະຊວງຈຳນວນໜຶ່ງ ໃຫ້ສອດຄ່ອງກັບເງື່ອນໄຂໃໝ່.
- ການປັບປຸງກົງຈັກການຈັດຕັ້ງໃຫ້ຖືກຕ້ອງຕາມພາລະບົດບາດ, ກຳນົດຕຳແໜ່ງງານໃຫ້ເໝາະສົມກັບວິຊາສະເພາະທີ່ຕ້ອງການ, ສອດຄ່ອງໜ້າວຽກຕົວຈິງ, ພ້ອມທັງບັນຈຸລັດຖະກອນໃຫ້ຖືກຕ້ອງຕາມການກຳນົດຕຳແໜ່ງງານ, ຕາມວິຊາສະເພາະ ແລະ ຕາມເງື່ອນໄຂທີ່ໄດ້ກຳນົດ. ຝຶກອົບຮົມ ແລະ ພັດທະນາພະນັກງານ-ລັດຖະກອນ ຕາມຕຳແໜ່ງບໍລິຫານ, ຕຳແໜ່ງວິຊາການ, ຕາມປະເພດ, ວິຊາສະເພາະ ແລະ ມີການປະເມີນຜົນການປະຕິບັດວຽກງານຢ່າງເປັນປົກກະຕິ ແລະ ທັນສະໄໝ; ມີການສອບເສັງວັດລະດັບມາດຕະຖານຕຳແໜ່ງ, ປະເມີນຜົນສະເພາະກ່ອນການແຕ່ງຕັ້ງດຳລົງຕຳແໜ່ງໃໝ່ ຫຼື ຍົກຍ້າຍໄປຮັບຕຳແໜ່ງໃໝ່.
- ປັບປຸງການແບ່ງຂັ້ນຄຸ້ມຄອງດ້ານກົງຈັກ ທີ່ຕິດພັນກັບການຄຸ້ມຄອງບຸກຄະລາກອນລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ລະອຽດ ຈະແຈ້ງຂຶ້ນຕື່ມ ໂດຍອີງຕາມ ຕົວຊີ້ບອກປະສິດທິພາບການປະຕິບັດງານຕົ້ນຕໍ (key performance indicators) ພາຍໃຕ້ລະບົບຄວາມຮັບຜິດຊອບຂອງສະຖາບັນກວດສອບແຫ່ງລັດ ເພື່ອໃຫ້ສາມາດກຳນົດ ກ່ຽວກັບ ໜ້າທີ່ຮັບຜິດຊອບ, ຂໍ້ຫຍຸ້ງຍາກ ແລະ ຄວາມຄືບໜ້າໄດ້ຢ່າງຊັດເຈນ.
- ກຳນົດເຂດການປົກຄອງໃຫ້ຈະແຈ້ງ ໂດຍການແຍກພື້ນທີ່ການປົກຄອງທ້ອງຖິ່ນໃນຕົວເມືອງ ແລະ ຊົນນະບົດ ເພື່ອປະຕິບັດພາລະບົດບາດໃຫ້ສອດຄ່ອງກັບສະພາບການຕົວຈິງຂອງແຕ່ລະພື້ນທີ່.
- ກຳນົດວຽກງານສາມສ້າງ ໃຫ້ເປັນວຽກປົກກະຕິຂອງຂະແໜງການ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ ໂດຍມອບສິດອຳນາດ ແລະ ຄວາມຮັບຜິດຊອບໃຫ້ທ້ອງຖິ່ນແຕ່ລະຂັ້ນໃນຂອດການຕົກລົງຕັດສິນບັນຫາພາຍໃຕ້ຂອບລະບຽບ, ກົດໝາຍຢ່າງຊັດເຈນ.
- ປັບປຸງຂອບຕິດຕາມ ແລະ ປະເມີນຜົນ ບັນດາຕົວຊີ້ບອກລະດັບຊາດ, ພ້ອມທັງເປັນການກະກຽມການສ້າງ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X, ສ້າງຄວາມເຂັ້ມແຂງໃນການປະສານງານລະຫວ່າງກອງເລຂາ ແລະ ຈຸດປະສານງານ ປພຍ, ລວມທັງຍົກສູງຄວາມຮັບຜິດຊອບຂອງຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງຂໍ້ມູນ ແລະ ຕົວຊີ້ບອກ.

## 2. ແຜນວຽກຈຸດສຸມ 2: ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ.

ປັບປຸງຂີດຄວາມສາມາດໃນການບໍລິການຂອງພາກລັດ ເພື່ອໃຫ້ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສັງຄົມ, ປະລິມານການຄ້າ ແລະ ການລົງທຶນ, ສິ່ງທ້າຍທາຍ ຕ່າງໆທີ່ເພີ່ມຂຶ້ນ ໃນພາກພື້ນ ແລະ ສາກົນ; ປັບປຸງກົນໄກການບໍລິການປະຕູດຽວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

### 2.1 ຄາດໝາຍ ແລະ ຕົວຊີ້ບອກ:

- ປັບປຸງພາລະບົດບາດໜ້າທີ່, ຂອບເຂດສິດ ແລະ ການແບ່ງຂັ້ນຄຸ້ມຄອງຂອງຂະແໜງການທີ່ມີລັກສະນະເຕັກນິກວິຊາການເຊັ່ນ: ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະລັງງານ ແລະ ບໍ່ແຮ່, ໂຍທາທິການ ແລະ ຂົນສົ່ງ, ກະສິກຳ ແລະ ປ່າໄມ້, ອຸດສາຫະກຳ ແລະ ການຄ້າ, ສຶກສາທິການ ແລະ ກິລາ, ສາທາລະນະສຸກ.
- ກົນໄກ ແລະ ລະບຽບການຕ່າງໆໃນການປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນໄດ້ຮັບການປັບປຸງ ຕາມທິດສາມສ້າງ ໃຫ້ໄດ້ຢ່າງໜ້ອຍ 50% ຂອງຈຳນວນກະຊວງ ແລະ ອົງການທັງໝົດ.
- ແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ, ລະຫວ່າງແຂວງ ແລະ ເມືອງ, ເມືອງ ແລະ ຫົວໜ່ວຍປົກຄອງພື້ນຖານໃຫ້ຈະແຈ້ງ ແລະ ສອດຄ່ອງກັບກັບເງື່ອນໄຂຕົວຈິງ ໃຫ້ສຳເລັດຫຼາຍກວ່າ 80% ຂອງຈຳນວນກະຊວງ, ອົງການ, ແຂວງ ແລະ ເມືອງທັງໝົດ.
- ສູ້ຊົນສ້າງໜ່ວຍງານບໍລິການຜ່ານປະຕູດຽວຂັ້ນທ້ອງຖິ່ນ ໃຫ້ໄດ້ຕື່ມ 15 ແຫ່ງ (ສະເລ່ຍເພີ່ມຂຶ້ນ 3 ແຫ່ງຕໍ່ປີ) ເພີ່ມຂຶ້ນຈາກທີ່ມີຢູ່ໃນປັດຈຸບັນ (ປີ 2019) ທັງໝົດ 43 ແຫ່ງ ໃຫ້ເປັນ 58 ແຫ່ງ (ຫຼື ເພີ່ມຂຶ້ນ 34,88%) ໃນປີ 2025.

### 2.2 ວຽກງານຈຸດສຸມ:

- ປັບປຸງກົນໄກການປະສານງານ ລະຫວ່າງຂະແໜງການດ້ວຍກັນ, ຂະແໜງການຂັ້ນສູນກາງ ກັບແຂວງ ແລະ ເມືອງ ບໍ່ໃຫ້ມີການຊໍ້າຊ້ອນກັນ ແລະ ສອດຄ່ອງກັບການປະຕິບັດວຽກງານຕົວຈິງ ຕາມທິດສາມສ້າງ ແລະ ກົດໝາຍການປົກຄອງທ້ອງຖິ່ນ. ອອກນິຕິກຳ ແລະ ລະບຽບການເພີ່ມເຕີມເພື່ອໃຫ້ມີຄວາມຈະແຈ້ງ ແລະ ຊັດເຈນຂຶ້ນຕື່ມ ທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບ ຂອງແຕ່ລະອົງການ.
- ປັບປຸງກົນໄກປະສານງານ ແລະ ສື່ສານ ຂອງພາກລັດໃຫ້ວ່ອງໄວ, ປະຢັດ ແລະ ປອດໄພ ໂດຍຫັນມາໃຊ້ລະບົບການສື່ສານຂອງພາກລັດ.
- ສ້າງຂີດຄວາມສາມາດດ້ານວິຊາການ, ຄຸນວຸດທິ ແລະ ຄວາມຊຳນານງານຂອງພະນັກງານ ໃຫ້ສອດຄ່ອງກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຢ່າງເໝາະສົມ ເພື່ອເສີມຂະຫຍາຍທ່າແຮງດ້ານຊັບພະຍາກອນມະນຸດທີ່ມີຢູ່ໃຫ້ເຕັມປະສິດທິພາບ.
- ສ້າງ ແລະ ປັບປຸງລະບຽບການຕ່າງໆໃຫ້ມີຄວາມສອດຄ່ອງ ແລະ ຮັດກຸມຫຼາຍຂຶ້ນ; ພ້ອມທັງມີການປະເມີນການຈັດຕັ້ງປະຕິບັດຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.
- ປັບປຸງ ແລະ ຈັດຕັ້ງປະຕິບັດກົນໄກການບໍລິການປະຕູດຽວ ໃຫ້ມີຄວາມສອດຄ່ອງ ແລະ ສາມາດບໍລິການວ່ອງໄວຂຶ້ນກວ່າເກົ່າ ໂດຍໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ເອົາວຽກຂອງຕົນເຂົ້າໃນລະບົບ ຫຼື ເຂົ້າໃນສູນບໍລິການຜ່ານປະຕູດຽວຢູ່ຂັ້ນແຂວງ ແລະ ຂັ້ນເມືອງ.
- ສ້າງຕັ້ງສູນບໍລິການປະຕູດຽວ ໃນລະດັບແຂວງ ແລະ ເມືອງ ໃຫ້ເພີ່ມຂຶ້ນ ເພື່ອໃຫ້ຜູ້ຊົມໃຊ້ສາມາດເຂົ້າເຖິງການບໍລິການໄດ້ຫຼາຍຂຶ້ນ ແລະ ສອດຄ່ອງກັບ 'ທິດ 3 ສ້າງ' ແລະ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ.

- ເພີ່ມທະວີການຫັນເປັນດິຈິຕອນ ເຂົ້າໃນການຈັດຕັ້ງປະຕິບັດວຽກງານຂອງບັນດາຂະແໜງການ-ທ້ອງຖິ່ນ ແລະ ການບໍລິການຂອງພາກລັດ (e-Governance) ເພື່ອເພີ່ມປະສິດທິພາບ, ຄວາມຮັບຜິດຊອບ, ຄວາມໂປ່ງໃສ ແລະ ການເຂົ້າເຖິງຂອງປະຊາຊົນ.
- ສ້າງໂອກາດໃຫ້ປະຊາຊົນ ສາມາດມີຄຳຄິດຄຳເຫັນໃນການບໍລິການຂອງພາກລັດ ໂດຍການສຳຫຼວດຄຳຄິດເຫັນຂອງຜູ້ໃຊ້ການບໍລິການແບບໃໝ່ (Innovative Service Users Feedback Survey) ເພື່ອເປັນຂໍ້ມູນທີ່ສຳຄັນໃນການປັບປຸງການບໍລິການໃຫ້ດີຂຶ້ນເທື່ອລະກ້າວ.

## 3. ແຜນວຽກຈຸດສຸມທີ 3: ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ

### 3.1 ຄາດໝາຍ ແລະ ຕົວຊີ້ບອກ:

- ຊຸກຍູ້ ແລະ ປະກອບເຄື່ອງມື, ອຸປະກອນທີ່ທັນສະໄໝທີ່ຈຳເປັນໃຫ້ສານປະຊາຊົນສູງສຸດ, ອົງການສອບສວນ-ສືບສວນ, ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນຂອບເຂດທົ່ວປະເທດ, ອົງການໄອຍະການປະຊາຊົນສູງສຸດ, ສູ້ຊົນອອກຄຳຖະແຫຼງ ໃຫ້ໄດ້ 95%, ສູ້ຊົນຕັດສິນ-ພິພາກສາຄະດີໃຫ້ບັນລຸໄດ້ 85% ດ້ວຍຄຸນນະພາບທີ່ດີ, ຖືກຕ້ອງກັບກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ; ຈັດຕັ້ງປະຕິບັດຄຳຕັດສິນທີ່ຍັງຄ້າງ ແລະ ຄຳຕັດສິນເຂົ້າໃໝ່ ໃຫ້ໄດ້ 80%, ໃນນັ້ນ 20% ແມ່ນໃຫ້ຈັດຕັ້ງປະຕິບັດສຳເລັດ ແລະ ປິດສຳນວນຄະດີ.
- ສ້າງບ້ານແບບຢ່າງປະຕິບັດກົດໝາຍໃຫ້ໄດ້ 7.400 ບ້ານ.
- ພັດທະນາລະບົບການຝຶກອົບຮົມ ວຽກງານກົດໝາຍ ແລະ ຍຸຕິທຳ ໃຫ້ແກ່ພະນັກງານ, ນັກສຶກສາທີ່ຮຽນຈົບວິຊາກົດໝາຍໃຫ້ກາຍເປັນຜູ້ພິພາກສາ, ໄອຍະການ ແລະ ທະນາຍຄວາມ ໃຫ້ໄດ້ປີລະ 1 ຊຸດ ຫຼື ປະມານປີລະ 100 ຄົນ.
- ສູ້ຊົນບໍລິການກົດໝາຍ ໂດຍຜ່ານຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍ ໃນຂອບເຂດທົ່ວປະເທດ ໃຫ້ໄດ້ 200.000 ເທື່ອຄົນ ແລະ ໃຫ້ບໍລິການຜ່ານຄະນະໜ່ວຍໄກ່ເກ່ຍຂັ້ນບ້ານໃນຂອບເຂດທົ່ວປະເທດ ໃຫ້ຫຼຸດລົງຕ່ຳກວ່າ 15.000 ເລື່ອງ.

### 3.2 ວຽກງານຈຸດສຸມ:

- ພັດທະນາການປົກຄອງດ້ວຍກົດໝາຍຢ່າງໜັກແໜ້ນ ແລະ ມີຄວາມສັກສິດ ໂດຍສຸມໃສ່ສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃຫ້ເປັນລະບົບຄົບຊຸດ ແລະ ສອດຄ່ອງກັບສະພາບຕົວຈິງ; ປັບປຸງຕາໜ່າງໂຄສະນາເຜີຍແຜ່ກົດໝາຍໃຫ້ມີຫຼາຍຮູບແບບ, ຫຼາຍວິທີທີ່ສອດຄ່ອງກັບສະພາບຕົວຈິງຂອງເປົ້າໝາຍ; ສ້າງສະຕິເຄົາລົບກົດໝາຍທົ່ວປວງຊົນ, ໃຫ້ປະຊາຊົນມີສ່ວນຮ່ວມໃນການໂຄສະນາເຜີຍແຜ່ກົດໝາຍ.
- ສືບຕໍ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດພັນທະສາກົນຕ່າງໆ ເປັນຕົ້ນ: ບັນດາຂໍ້ສະເໜີແນະທີ່ລັດຖະບານໄດ້ຮັບຮອງເອົາຈາກຜົນການທົບທວນດ້ານສິດທິມະນຸດ ປະຈຳໄລຍະ ແລະ ສົນທິສັນຍາດ້ານສິດທິມະນຸດ ທີ່ ສປປ ລາວ ໄດ້ໃຫ້ສັດຕະຍາບັນ.
- ເພີ່ມທະວີການໂຄສະນາ ແລະ ເຜີຍແຜ່ກົດໝາຍຕ່າງໆ ລວມທັງ ກົດໝາຍອາຍາ ແລະ ກົດໝາຍແພ່ງ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ປະຊາຊົນ ດ້ວຍຫຼາຍວິທີ ແລະ ຊ່ອງທາງຕ່າງໆ.
- ສ້າງແຜນແມ່ບົດວ່າດ້ວຍການພັດທະນາລັດແຫ່ງກົດໝາຍສະບັບໃໝ່ ເພື່ອເປັນທິດທາງ ແລະ ສົ່ງເສີມການພັດທະນາຂົງເຂດຍຸຕິທຳ, ໄອຍະການ ແລະ ສານປະຊາຊົນສູງສຸດ.
- ສ້າງຂີດຄວາມສາມາດໃຫ້ແກ່ຜູ້ຊ່ຽວຊານດ້ານຍຸຕິທຳ, ຜູ້ພິພາກສາ, ໄອຍະການ ແລະ ທະນາຍຄວາມ ເພື່ອ

ຍົກສູງປະສິດທິຜົນຂອງວຽກງານ ແລະ ປັບປຸງການເຂົ້າເຖິງຂະບວນການຍຸຕິທຳ.

- ເພີ່ມທະວີບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນການປັບປຸງ ແລະ ຮັບຮອງເອົາ ນິຕິກຳ, ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ລວມທັງການຈັດຕັ້ງປະຕິບັດ ປພຍ ດ້ວຍການປັບປຸງປະສານງານ ກັບກອງເລຂາ ແລະ ຈຸດປະສານງານ ປພຍ.
- ຍົກສູງຂີດຄວາມສາມາດຂອງໜ່ວຍງານບັງຄັບໃຊ້ກົດໝາຍ ເພື່ອໃຫ້ສາມາດເຮັດວຽກກັບຄູ່ຮ່ວມງານດ້ານຕ່າງໆໃນພາກພື້ນ ແລະ ສາກົນ ໃຫ້ມີປະສິດທິຜົນສູງຂຶ້ນ.
- ປັບປຸງການຄຸ້ມຄອງເຂດຊາຍແດນ, ການເຄື່ອນຍ້າຍຄົນເຂົ້າ-ອອກເມືອງ ໃຫ້ເປັນລະບົບ; ການຕ້ານອາຊະຍາກຳຂ້າມຊາດ; ຍົກລະດັບຂີດຄວາມສາມາດຂອງເຈົ້າໜ້າທີ່ຊາຍແດນ.
- ພັດທະນາການບໍລິການດ້ານກົດໝາຍໃຫ້ມີຄຸນນະພາບດີຂຶ້ນ ໂດຍສະເພາະການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ມີຄວາມຖືກຕ້ອງຊັດເຈນ ແລະ ວ່ອງໄວ; ປັບປຸງວຽກງານທະບຽນສານຂັ້ນທ້ອງຖິ່ນ ໃຫ້ເຂັ້ມແຂງສາມາດຕອບສະໜອງຄວາມຕ້ອງການຂອງສັງຄົມໄດ້; ປັບປຸງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ກາຍເປັນອົງການທີ່ເຂັ້ມແຂງ, ມີຄວາມສາມາດຮອງຮັບການຂະຫຍາຍຕົວເສດຖະກິດ-ສັງຄົມ ແລະ ໄດ້ຮັບຄວາມເຊື່ອຖືເທື່ອລະກ້າວ; ປັບປຸງສະພາທະນາຍຄວາມໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ ເພື່ອຊ່ວຍເຫຼືອລູກຄວາມຢ່າງມີຄຸນນະພາບ.
- ເພີ່ມທະວີການປັບປຸງ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນເຂົ້າເຖິງການບໍລິການຊ່ວຍເຫຼືອທາງກົດໝາຍ ແລະ ການເຂົ້າເຖິງກົນໄກຍຸຕິທຳ ຫຼາຍຂຶ້ນ.
- ສົ່ງເສີມການມີສ່ວນຮ່ວມຂອງ ອົງການຈັດຕັ້ງທາງສັງຄົມ ໃນການປະກອບສ່ວນເຂົ້າການພັດທະນາເສດຖະກິດ-ສັງຄົມ.
- ສ້າງຄວາມສາມັກຄີປອງດອງພາຍໃນຊາດ, ໂດຍການໂຄສະນາ ແລະ ເຜີຍແຜ່ແນວທາງນະໂຍບາຍຂອງພັກ-ລັດ, ມູນເຊື້ອການປະຕິວັດ ໃນວັນສຳຄັນຕ່າງໆ.
- ສ້າງໂຄງລ່າງພື້ນຖານຈຳເປັນ ເພື່ອຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
- ສືບຕໍ່ຈັດຕັ້ງປະຕິບັດວຽກງານ ການກໍ່ສ້າງຮາກຖານການເມືອງຢູ່ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ ແລະ ໜັກແໜ້ນທາງດ້ານການເມືອງ-ແນວຄິດ, ສ້າງຂະບວນການຮັກຊາດ ແລະ ພັດທະນາທົ່ວປວງຊົນຢ່າງເປັນເຈົ້າການ.
- ຕ້ານປະກົດການຫຍໍ້ທໍ້ຕ່າງໆໃນສັງຄົມ ເປັນຕົ້ນ: ປຸ້ນຈີ້, ຂີ້ລັກ, ອຸບັດຕິເຫດຕາມທ້ອງຖະໜົນ,...
- ສ້າງ, ປັບປຸງນິຕິກຳ, ປຶ້ມຄູ່ມື, ຫຼັກສູດການຮຽນ-ການສອນ ແລະ ອື່ນໆ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ.
- ໂຄສະນາປູກຈິດສຳນຶກດ້ວຍຫຼາຍຮູບແບບ ໃຫ້ທົ່ວສັງຄົມ ໂດຍສະເພາະແມ່ຍິງ, ເດັກນ້ອຍ ແລະ ກຸ່ມສ່ຽງຮັບຮູ້ຜົນຮ້າຍ, ຜົນກະທົບຂອງການຄ້າມະນຸດ ມີສະຕິປ້ອງກັນໂຕເອງ ແລະ ເປັນເຈົ້າການເຂົ້າຮ່ວມໃນວຽກງານຕ້ານການຄ້າມະນຸດ.
- ສ້າງ ແລະ ປັບປຸງຖານຂໍ້ມູນ-ສະຖິຕິຄະດີ, ປະສານງານ ແລະ ແລກປ່ຽນຂໍ້ມູນທີ່ພົວພັນກັບການຄ້າມະນຸດໃຫ້ເປັນລະບົບ.
- ເພີ່ມທະວີການຕໍ່ຕ້ານການຄ້າມະນຸດດ້ວຍການບັງຄັບທຸກຮູບແບບ (trafficking-in-persons), ດ້ວຍການເພີ່ມຄວາມສາມາດການເຂົ້າເຖິງລະບົບປ້ອງກັນສັງຄົມ ເຊັ່ນ: ກອງທຶນສັງຄົມ ໂດຍສະເພາະ ສຳລັບຜູ້ທີ່ຕົກເປັນເຫຍື່ອ ຫຼື ຜູ້ທີ່ໄດ້ຮັບເຄາະຮ້າຍ; ຕ້ານການຄ້າຢາເສບຕິດ, ການລັກລອບຄ້າສັດປ່າ ແລະ ອື່ນໆ ທີ່ສົ່ງຜົນກະທົບທາງລົບຕໍ່ການພັດທະນາ ແລະ ຄວາມໝັ້ນຄົງຂອງປະເທດ.
- ຊຸກຍູ້ສະພາທະນາຍຄວາມລາວ ໃຫ້ການບໍລິການແກ່ລູກຄ້າທີ່ມີຄຸນນະພາບ ແລະ ຝຶກອົບຮົມໃຫ້ຜູ້

ຊ່ຽວຊານດ້ານກົດໝາຍລຸ້ນໃໝ່ ໂດຍການຮ່ວມມືກັບມະຫາວິທະຍາໄລ ແລະ ບໍລິສັດກົດໝາຍຕ່າງໆ.

- ປັບປຸງການບໍລິການຊ່ວຍເຫຼືອດ້ານກົດໝາຍ ໃຫ້ແກ່ກຸ່ມຄົນທີ່ມີຄວາມສ່ຽງ ເຊັ່ນ: ແມ່ຍິງທີ່ໄດ້ຮັບຄວາມຮຸນແຮງທາງເພດ, ເດັກນ້ອຍ, ຊົນເຜົ່າສ່ວນນ້ອຍ ແລະ ຄົນພິການ.
- ສ້າງເຄື່ອງມື e-Justice ເພື່ອປັບປຸງການເຂົ້າເຖິງຂະບວນການຍຸຕິທຳ ຂອງສັງຄົມ.

**4. ບາງໂຄງການຂະໜາດໃຫຍ່ ແລະ ໂຄງການບູລິມະສິດສະໜັບສະໜູນ ເປົ້າໝາຍ 6 (ລາຍລະອຽດມີໃນເອກະສານຊ້ອນທ້າຍ):**

**1. ວຽກງານການຄຸ້ມຄອງບໍລິຫານລັດ ແລະ ການສ້າງຄວາມເຂັ້ມແຂງດ້ານນິຕິກຳ**

(1) ໂຄງການການປັບປຸງການຄຸ້ມຄອງ ແລະ ບໍລິຫານພາກລັດ ເພື່ອສົ່ງເສີມໂຄງການພັດທະນາແບບມີສ່ວນຮ່ວມ (ສະວິດເຊີແລນ) (ໂຄງການສືບຕໍ່).

(2) ໂຄງການສົ່ງເສີມການຈັດຕັ້ງປະຕິບັດ ປພຍ ທີ 5 (ສິດສະເໝີພາບຍິງ-ຊາຍ) (UNDP) (ໂຄງການສືບຕໍ່).

(3) ໂຄງການສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນຜ່ານລະບົບວິທະຍຸ (UNDP) (ໂຄງການສືບຕໍ່).

(4) ໂຄງການສົ່ງເສີມພາລະບົດຂອງສະພາແຫ່ງຊາດ ແລະ ສະພາແຂວງ (UNDP) (ໂຄງການສືບຕໍ່).

(5) ໂຄງການສ້າງຄວາມເຂັ້ມແຂງ (ຍົກລະດັບສະຖາບັນຝຶກອົບຮົມ) ເປັນສະຖາບັນການສຶກສາດ້ານການກວດສອບແຫ່ງລັດ.

(6) ໂຄງການພັດທະນາ ແລະ ສ້າງຄວາມເຂັ້ມແຂງດ້ານກົດໝາຍໃນຂະແໜງນິຕິກຳ (Project for developing and strengthening of Rule of Law in legal sector) (ທຶນຊ່ວຍເຫຼືອ JICA).

**2. ວຽກງານການຄ້າ**

(1). ໂຄງການສົ່ງເສີມ ແລະ ພັດທະນາຊ່ຽວຊານ ແລະ ຜູ້ຄົ້ນຄວ້າສະເພາະດ້ານໃນການພັດທະນາ ແລະ ສົ່ງເສີມວຽກງານອຸດສາຫະກຳ ແລະ ການຄ້າ.

(2). ໂຄງການຄົ້ນຄ້ວາວິທະຍາສາດ-ວິທະຍາການ ແລະ ການພັດທະນາວິທະຍາໄລການຄ້າ

(3). ໂຄງການປັບປຸງ ແລະ ພັດທະນາວິສາຫະກິດຂອງຂະແໜງການອຸດສາຫະກຳ ແລະ ການຄ້າ

(4). ໂຄງການສົ່ງເສີມ ແລະ ບໍລິການ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

**3. ພັດທະນາລະບົບບໍລິຫານລັດໃຫ້ເປັນທັນສະໄໝ**

(1). ໂຄງການປັບປຸງ ແລະ ພັດທະນາລະບົບການເຊື່ອມໂຍງຂໍ້ມູນພາກລັດ (Government data exchange) ເພື່ອແລກປ່ຽນ ແລະ ລວມສູນຂໍ້ມູນພາກລັດ ໃຫ້ເອກະພາບ.

(2). ໂຄງການປັບປຸງ ແລະ ເຊື່ອມໂຍງສູນຂໍ້ມູນຂ່າວສານພາກລັດ (G-Cloud).

(3). ໂຄງການ ປັບປຸງ ແລະ ພັດທະນາລະບົບເຄືອຂ່າຍພາຍໃນ ແລະ ລະບົບ ICT ກະຊວງ ປທສ ເພື່ອເປັນຕົ້ນແບບ ກະຊວງທີ່ທັນເປັນທັນສະໄໝ.

(4). ໂຄງການປັບປຸງ ແລະ ຂະຫຍາຍລະບົບກອງປະຊຸມທາງໄກ (video conference) ຢູ່ສູນກາງ ແລະ ທ້ອງຖິ່ນ.

(5). ໂຄງການປັບປຸງ ແລະ ຂະຫຍາຍລະບົບອີເມວລັດຖະບານ ຢູ່ສູນກາງ ແລະ ທ້ອງຖິ່ນ.

(6). ໂຄງການ ສ້າງສູນຂໍ້ມູນຂ່າວສານແບບເອເລັກໂທຣນິກປະຈຳແຂວງ.

(7). ໂຄງການ ພັດທະນາ, ປັບປຸງ ແລະ ບຳລຸງຮັກສາ ລະບົບ e-office.

(8). ໂຄງການ ພັດທະນາ ແລະ ຂະຫຍາຍການນຳໃຊ້ລະບົບຫ້ອງການທັນສະໄໝ (e-Office) ໃຫ້ບັນດາກະຊວງ ແລະ ຫ້ອງການລັດ ທົ່ວປະເທດ.

(9). ໂຄງການ ພັດທະນາລະບົບໂປຼແກຼມເອກະສານພາສາລາວ (Phetsarath Office) ແລະ ນຳໃຊ້ເອກະສານຮ່ວມກັນຂອງພາກລັດ (G-Share, G-Drive).

(10). ໂຄງການ ພັດທະນາລະບົບບໍລິການ ຂອງພາກລັດໃຫ້ເປັນທັນສະໄໝ ດ້ວຍລະບົບດິຈິຕອນ (e-Services and Single Sign-On) ໃຫ້ສູນກາງ ແລະ ທ້ອງຖິ່ນ.

(11). ໂຄງການພັດທະນາ ແລະ ການຂະຫຍາຍການນໍາໃຊ້ ລະບົບສື່ສານຂອງພາກລັດ (Government Chatting Application).

(12). ໂຄງການ ຂະຫຍາຍການນໍາໃຊ້ G-Web Platform ໃຫ້ທົ່ວພາກລັດ ຢູ່ສູນກາງ ແລະ ທ້ອງຖິ່ນ.

(13). ໂຄງການພັດທະນາແບບລວມ ລະບົບການເຊື່ອມໂຍງຂໍ້ມູນເປີດຂອງລັດຖະບານ (Government Open Data Platform).

(14). ໂຄງການລະບົບຄວາມປອດໄພ ລະບົບບໍລິຫານລັດດ້ວຍເອເລັກໂທຣນິກ (E-gov security and anti-virus).

(15). ໂຄງການສຶກສາພັດທະນາຕົວແບບເມືອງທັນສະໄໝ (Smart City) ນໍາໃຊ້ລະບົບບໍລິຫານລັດດ້ວຍເອເລັກໂທຣນິກ.

(16). ໂຄງການພັດທະນາ ແລະ ສ້າງລະບົບລາຍງານພາກລັດ (Dashboard) ເພື່ອຫັນເປັນທັນສະໄໝ (ດິຈິຕອນ) ຜ່ານໂທລະສັບມືຖື.

(17). ໂຄງການພັດທະນາ Font Lao ແລະ ສາລະບານພາສາລາວ ແບບເອເລັກໂຕຼນິກ.

(18). ໂຄງການພັດທະນາຕົວຊີ້ບອກ ລັດຖະບານທັນສະໄໝ (e-Gov Index)

(19). ໂຄງການພັດທະນາ ແລະ ຂະຫຍາຍການນໍາໃຊ້ e-Signature (CA) ຂອງພາກລັດ.

(20). ໂຄງການຄົ້ນຄວ້ານໍາໃຊ້ເຕັກໂນໂລຊີ (BlockChain) ເຂົ້າໃນວຽກງານພາກລັດ.

**4. ວຽກງານສະຖິຕິ**

(1). ໂຄງການສໍາຫຼວດລະດັບຊາດ ແລະ ເກັບກໍາຂໍ້ມູນເພື່ອຮັບໃຊ້ການຕິດຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ

# ພາກທີສາມ:
# ມາດຕະການ ແລະ ກົນໄກໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

# ພາກທີ III: ມາດຕະການ ແລະ ກົນໄກໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

## I. ມາດຕະການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງນີ້ ມີປະສິດທິພາບ, ປະສິດທິຜົນ ແລະ ມີຜົນສຳເລັດຕາມແຜນການທີ່ວາງໄວ້ ຈະຕ້ອງໄດ້ສຸມໃສ່ຈັດຕັ້ງຜັນຂະຫຍາຍ 4 ບຸກທະລຸຢ່າງຕັ້ງໜ້າ ຄື: ບຸກທະລຸທາງດ້ານຈິນຕະນາການ; ບຸກທະລຸທາງດ້ານການພັດທະນາຊັບພະຍາກອນມະນຸດ; ບຸກທະລຸລະບົບກົນໄກ, ລະບອບ, ລະບຽບການບໍລິຫານ ແລະ ບຸກທະລຸດ້ານການແກ້ໄຂຄວາມທຸກຍາກຂອງປະຊາຊົນ ຕື່ມອີກ ດ້ວຍການຂຸດຄົ້ນແຫຼ່ງທຶນຕ່າງໆ ແລະ ມີນະໂຍບາຍສົ່ງເສີມພິເສດໃນການສ້າງໂຄງລ່າງພື້ນຖານທາງດ້ານເສດຖະກິດ-ສັງຄົມຢ່າງມີຈຸດສຸມ; ນອກນັ້ນ ຍັງຈະຕ້ອງໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາມາດຕະການຕົ້ນຕໍ ຈຳນວນໜຶ່ງ ຄື:

1. **ເພີ່ມທະວີການຄຸ້ມຄອງໃຫ້ເສດຖະກິດມະຫາພາກມີຄວາມເຂັ້ມແຂງ, ຍືນຍົງ ແລະ ມີຄວາມຫຼາກຫຼາຍ:**

- ໂດຍເອົາບັນຫາການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ນັບທັງການປະຢັດ ຕ້ານການຟຸມເຟືອຍ ແລະ ການແກ້ໄຂບັນຫາຢາເສບຕິດ ເປັນວາລະແຫ່ງຊາດ ເພື່ອໃຫ້ທົ່ວລັດ ກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ມີຄວາມຮັບຜິດຊອບ ແລະ ເປັນເຈົ້າການຈັດຕັ້ງປະຕິບັດ ເປັນຂະບວນກວ້າງຂວາງ ແລະ ເລິກເຊິ່ງ;
- ຮັບປະກັນການຂະຫຍາຍຕົວຂອງເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ມີຄຸນນະພາບ ເພື່ອສ້າງສະພາບຄ່ອງໃນລະບົບການເງິນ-ງົບປະມານຂອງລັດ;
- ດຳເນີນການປະຕິຮູບ ເພື່ອສ້າງສະພາບຄ່ອງໃນລະບົບການເງິນ-ງົບປະມານຂອງລັດ ດ້ວຍການສຳຫຼວດຖານໃຫ້ຖືກຕ້ອງຊັດເຈນ, ປັບປຸງລະບົບການເກັບທຸກລາຍຮັບງົບປະມານຕາມກົດໝາຍກຳນົດໃຫ້ຄົບຖ້ວນ, ຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານດ້ວຍເຄື່ອງມືທັນສະໄໝ, ປະຕິບັດມາດຕະການນຳໃຊ້ລະບົບບັນຊີຢ່າງເປັນເອກະພາບ; ຄົ້ນຄວ້າຖານລາຍຮັບໃໝ່ບາງປະເພດ ເຊັ່ນ: ອາກອນຊັບສິນຢູ່ເຂດຕົວເມືອງໃຫຍ່, ອາກອນສິ່ງແວດລ້ອມ ແລະ ອື່ນໆ. ພ້ອມກັນນີ້, ຂະຫຍາຍຖານລາຍຮັບດ້ວຍການສົ່ງເສີມໃຫ້ SME ເປັນຜູ້ຂັບເຄື່ອນ ແນໃສ່ຊຸກຍູ້ສົ່ງເສີມໃຫ້ບັນດາຜູ້ປະກອບການ ແລະ ຫົວໜ່ວຍທຸລະກິດເຂົ້າມາມີສ່ວນຮ່ວມເສດຖະກິດໃນລະບົບຫຼາຍຂຶ້ນ;
- ສືບຕໍ່ປັບປຸງພາກລາຍຈ່າຍໃຫ້ມີຄວາມຮັດກຸມ ປະຢັດມັດທະຍັດ ແລະ ຫຼີກລ້ຽງການໃຊ້ຈ່າຍທີ່ບໍ່ຈຳເປັນ ແລະ ສິ້ນເປືອງ; ຄຸ້ມຄອງການຈັດຊື້-ຈັດຈ້າງຕາມກົດໝາຍ ແລະ ປະຕິບັດວິໄນການເງິນຢ່າງເຂັ້ມງວດ;
- ປັບປຸງການບໍລິການທາງດ້ານການເງິນໃຫ້ມີຄວາມສະດວກ, ວ່ອງໄວ, ປອດໄພ ແລະ ໂປ່ງໃສ ດ້ວຍການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານທີ່ທັນສະໄໝ;
- ຄຸ້ມຄອງໜີ້ສາທາລະນະດ້ວຍກົດໝາຍການຄຸ້ມຄອງໜີ້ສາທາລະນະ ແລະ ແນໃສ່ການກູ້ຢືມທີ່ມີເງື່ອນໄຂຜ່ອນຜົນຕ່ຳ;
- ປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລັດວິສາຫະກິດດ້ວຍການຫັນໄປສູ່ຮູບແບບລັດຮ່ວມມືກັບເອກະຊົນ;
- ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນຢ່າງມີໄຫວພິບຕາມກົນໄກຕະຫຼາດ ແລະ ມີການດັດສົມຂອງລັດ, ປະຢັດການນຳໃຊ້ເງິນຕາຕ່າງປະເທດ, ກຳນົດນະໂຍບາຍເພື່ອຈູງໃຈຕໍ່ຜູ້ສົ່ງອອກໃຫ້ນຳເງິນມາຜ່ານທະນາ

ຄານ, ຄຸ້ມຄອງອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPL) ຂອງລະບົບທະນາຄານ ໃຫ້ຢູ່ໃນລະດັບບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ ແລະ ປະຕິບັດມາດຕະການເກັບກູ້ໜີ້ສິນຢ່າງເຄັ່ງຄັດ ແລະ ມີໝາກຜົນ;

- ສືບຕໍ່ນໍາໃຊ້ໜ່ວຍງານເສດຖະກິດມະຫາພາກ ແລະ ໜ່ວຍງານແກ້ໄຂໜີ້ສິນຂັ້ນສູນກາງ ໃຫ້ເຄື່ອນໄຫວປົກກະຕິ ເພື່ອຕິດຕາມສະພາບເສດຖະກິດມະຫາພາກ, ກໍານົດນະໂຍບາຍ ແລະ ມາດຕະການແກ້ໄຂໃຫ້ທັນເວລາ.
- ສ້າງກົນໄກໃນການລະດົມທຶນພາຍໃນ ເພື່ອເປັນທຶນສະສົມໃນການກໍ່ສ້າງໂຄງລ່າງສາທາລະນະທີ່ຈໍາເປັນ. ລະດົມພາກເອກະຊົນພາຍໃນ ແລະ ຕ່າງປະເທດ ດ້ວຍຮູບແບບ PPP ເພື່ອລົງທຶນໃສ່ການກໍ່ສ້າງໂຄງລ່າງພື້ນຖານ ເພື່ອເຊື່ອມຈອດ-ເຊື່ອມໂຍງເສດຖະກິດ.
- ສ້າງສະພາບແວດລ້ອມທີ່ເອື້ອອໍານວຍເພື່ອດຶງດູດການລົງທຶນພາກເອກະຊົນ ດ້ວຍສິ່ງຈູງໃຈຫຼາຍຮູບແບບ ຄຽງຄູ່ກັບການປັບປຸງ ແລະ ບັງຄັບໃຊ້ລະບຽບມາດຕະການຢ່າງມີປະສິດທິພາບ.
- ຊຸກຍູ້ ແລະ ສົ່ງເສີມການລົງທຶນໃນຂະແໜງການທີ່ເປັນທ່າແຮງຂອງຊາດ ແລະ ຂອງທ້ອງຖິ່ນ ຢ່າງມີຈຸດສຸມ ແລະ ມີປະສິດທິຜົນສູງ.
- ຊຸກຍູ້ການຜະລິດ ແລະ ການບໍລິການພາຍໃນ ຢ່າງມີຈຸດສຸມ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ ດ້ວຍການສົ່ງເສີມການນໍາໃຊ້ຜະລິດຕະພັນລາວ ແລະ ການສົ່ງອອກ ເພື່ອຫຼຸດຜ່ອນລະດັບການຂາດດຸນກັບຕ່າງປະເທດ.
- ປະຕິບັດນະໂຍບາຍ 3 ເປີດຂອງລັດຖະບານ (ເປີດໃຈ, ເປີດປະຕູ, ເປີດສິ່ງກີດຂວາງ).
- ຫັນເປັນອຸດສາຫະກໍາ ແລະ ທັນສະໄໝ ໃນຂະແໜງກະສິກໍາ-ປ່າໄມ້, ຂະແໜງທະນາຄານ, ຂະແໜງໂທລະຄົມ ແລະ ການສື່ສານ, ຂະແໜງຂົນສົ່ງ ແລະ ບໍລິການຜ່ານ ເພື່ອຍົກສູງປະສິດທິພາບ ແລະ ປະສິດທິຜົນ ຂອງການຜະລິດ ແລະ ການເອື້ອອໍານວຍຄວາມສະດວກການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ.
- ສ້າງໃຫ້ໄດ້ສໍາພັນເສດຖະກິດລະຫວ່າງຂະແໜງການ ແລະ ທ້ອງຖິ່ນດ້ວຍກັນ ເປັນຕົ້ນ: ວິສາຫະກິດກ່ຽວກັບການທ່ອງທ່ຽວຄົບວົງຈອນ, ວິສາຫະກິດປຸງແຕ່ງກະສິກໍາ.

2. **ການພັດທະນາຊັບພະຍາກອນມະນຸດ ແລະ ກໍາລັງແຮງງານ**

- ເພີ່ມທະວີທຶນເຂົ້າໃນວຽກງານພັດທະນາຊັບພະຍາກອນມະນຸດ ນັບຕັ້ງແຕ່ການສຶກສາກ່ອນໄວຮຽນ ຈົນໄປຮອດການສຶກສາຂັ້ນມະຫາວິທະຍາໄລ, ວິຊາຊີບ, ອາຊີວະສຶກສາ ແນ່ໃສ່ການສ້າງຄຸນນະພາບຂອງການຮຽນການສອນ, ປັບປຸງຫຼັກສູດໃຫ້ມີຄວາມແທດເໝາະໂດຍສະເພາະການກະກຽມຊັບພະຍາກອນມະນຸດ ໃຫ້ສາມາດແຂ່ງຂັນໄດ້ໃນຍຸກອຸດສະຫະກໍາ 4.0 ແລະ ຍຸກຂອງການພັດທະນາດີຈິຕອນ.
- ວາງແຜນການນໍາໃຊ້ທ່າແຮງຈາກຊັບພະຍາກອນໜຸ່ມນ້ອຍ ດ້ວຍການຄົ້ນຄວ້າ ແລະ ວິໄຈກ່ຽວກັບຂະແໜງທີ່ເປັນບູລິມະສິດ ເພື່ອສຸມການລົງທຶນໃສ່ຂະແໜງນັ້ນ ເປັນຕົ້ນ ຫຼັກສູດທີ່ສົ່ງເສີມໃຫ້ນັກຮຽນມີທັກສະໃນການແກ້ໄຂບັນຫາສະລັບສັບຊ້ອນ, ທັກສະໃນການເປັນຜູ້ນໍາ, ທັກສະໃນການບໍລິຫານເວລາ ແລະ ມີຫົວຄິດປະດິດສ້າງ ເຊິ່ງຈະເປັນທັກສະທີ່ຕ້ອງການຫຼາຍໃນອະນາຄົດ.
- ຫັນປ່ຽນຈິນຕະນາການຂອງຊັບພະຍາກອນມະນຸດ ໂດຍສະເພາະ ສະຕິຕໍ່ການຈັດຕັ້ງປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບ, ການຄົ້ນຄວ້າຮໍ່າຮຽນ ແລະ ອື່ນໆ ເພື່ອປະກອບສ່ວນການພັດທະນາເສດຖະກິດ-ສັງຄົມຢ່າງເຕັມສ່ວນ.
- ຮັບປະກັນວຽກງານໂພຊະນາການ, ນໍ້າດື່ມສະອາດ, ສຸຂາພິບານ, ມີອາຍຸຍືນຍາວ ແລະ ຫຼຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກລຸ່ມ 5 ປີ.
- ມີການວາງແຜນໃນໄລຍະຍາວກ່ຽວກັບແນວໂນ້ມຂອງປະຊາກອນເພື່ອໃຫ້ມີຄວາມພ້ອມໃນເວລາທີ່ສັງຄົມ ສປປ ລາວ ກ້າວເປັນ ສັງຄົມຜູ້ສູງອາຍຸ ໃນປີ 2059.

- ລົງທຶນໃສ່ການສຶກສາກ່ອນເພີ່ມເຕີມ ເພື່ອຮັບປະກັນວ່າ 1.000 ມື້ທຳອິດໃນຊີວິດຂອງເດັກທີ່ເປັນຊ່ວງໄລຍະສຳຄັນທີ່ສຸດຂອງການພັດທະນາມັນສະໝອງ ໄດ້ຮັບການສຶກສາ ແລະ ໂພຊະນາການທີ່ຄົບຖ້ວນ.
- ມີແຜນກຳນົດສ້າງຄວາມສາມາດທາງດ້ານພາສາຕ່າງປະເທດ ໃຫ້ໄວໜຸ່ມຮຸ່ນຕໍ່ໄປສາມາດມີຄວາມຮູ້ພາສາຕ່າງປະເທດໃນລະດັບທີ່ດີ.
- ເພີ່ມວິຊາຮຽນທີ່ຕິດພັນກັບສິ່ງແວດລ້ອມ ດ້ວຍການຮຽນ ແລະ ປະຕິບັດຕົວຈິງ ແນໃສ່ສ້າງຈິດສຳນຶກໃຫ້ນັກຮຽນມີຄວາມຜູກພັນກັບທຳມະຊາດແຕ່ໄວເດັກ.
- ສ້າງຄວາມສົມດຸນລະຫວ່າງຄວາມຕ້ອງການ ແລະ ການສ້າງຄວາມອາດສາມາດໃນການສະໜອງກຳລັງແຮງງານເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

**3. ສົ່ງເສີມຊີວິດການເປັນຢູ່ທີ່ດີ, ສັງຄົມທີ່ໜ້າຢູ່ ແລະ ສັງຄົມຍຸຕິທຳ**

- ເພີ່ມທະວີການລະດົມການລົງທຶນຈາກທຸກພາກສ່ວນເສດຖະກິດເຂົ້າໃສ່ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ.
- ສືບຕໍ່ຫຼຸດຜ່ອນຄວາມທຸກຍາກ, ຄວາມບໍ່ສະເໝີພາບຍິງ-ຊາຍ ແລະ ຄວາມແຕກໂຕນລະຫວ່າງຊົນນະບົດ ແລະ ຕົວເມືອງ, ຄົນຮັ່ງ ແລະ ຄົນທຸກ ເຊັ່ນ: ຄວາມບໍ່ເທົ່າທຽມທາງດ້ານການກະຈາຍລາຍໄດ້ ແລະ ການຊົມໃຊ້ຫຼຸດລົງ (Gini), ສັດສ່ວນແຮງງານຂອງເພດຍິງໃຫ້ມີການເພີ່ມຂຶ້ນ.
- ສືບຕໍ່ແກ້ໄຂບັນຫາລູກລະເບີດທີ່ບໍ່ທັນແຕກ ແນໃສ່ຫຼຸດຜ່ອນຜູ້ທີ່ໄດ້ຮັບເຄາະຮ້າຍ ແລະ ປ້ອງກັນອຸບັດຕິເຫດໃນອະນາຄົດ.
- ເພີ່ມທະວີການປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແລະ ຍຸດທະສາດແຫ່ງຊາດເພື່ອສົ່ງເສີມວຽກເຮັດງານທຳໃນຊົນນະບົດ.
- ປົກປ້ອງສິດ ແລະ ສະຫວັດດີການຂອງເດັກນ້ອຍ, ຫຼຸດຜ່ອນ ແລະ ຕໍ່ຕ້ານການທາລຸນເດັກໃນທຸກຮູບແບບສົ່ງເສີມໃຫ້ພວກເຂົາມີສ່ວນຮ່ວມຫຼາຍຂຶ້ນໃຫ້ມີສິດມີສຽງ ແລະ ສ່ວນຮ່ວມໃນຂະບວນການພັດທະນາຫຼາຍຂຶ້ນ.
- ມີນະໂຍບາຍເບິ່ງແຍງຜູ້ສູງອາຍຸ ແລະ ຜູ້ເສຍອົງຄະ ແລະ ສົ່ງເສີມໃຫ້ພວກເຂົາສາມາດມີສ່ວນຮ່ວມໃນສັງຄົມໄດ້ຫຼາຍຂຶ້ນ, ມີການສ້າງໂຄງລ່າງພື້ນຖານທີ່ຮັບໃຊ້ຜູ້ພິການ; ມີການຊ່ວຍເຫຼືອສັງຄົມ ແລະ ການກາຍະພາບບຳບັດຜູ້ພິການ.
- ມີລະບົບການປົກປ້ອງສັງຄົມທີ່ມີປະສິດທິຜົນເພື່ອສະຫວັດດີການສັງຄົມທີ່ເທົ່າທຽມກັນ ແລະ ສາມາດຮັບປະກັນແຕ່ລະໄລຍະຂອງຊີວິດແຕ່ມື້ເກີດຈົນຮອດມື້ເສຍຊີວິດ.
- ເພີ່ມຄວາມປອດໄພຢູ່ໃນສັງຄົມ, ການຂັບຂີ່ສັນຈອນມີຄວາມເປັນລະບຽບຮຽບຮ້ອຍ, ເພີ່ມທະວີສາຍດ່ວນ, ລະບົບການແກ້ໄຂບັນຫາສຸກເສີນ, ກ້ອງວົງຈອນປິດ.
- ເພີ່ມທະວີການປະສານງານ ລະຫວ່າງຂະແໜງກະສິກຳ-ປ່າໄມ້, ອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນກ່ຽວຂ້ອງຂອງຂັ້ນສູນກາງ ແລະ ທ້ອງຖິ່ນ.
- ສະໜອງທາງດ້ານເຕັກນິກ-ວິຊາການ ແລະ ງົບປະມານໃຫ້ພຽງພໍ ໃນການຊຸກຍູ້ຕິດຕາມການປູກ, ການລ້ຽງ, ສ້າງກຸ່ມການຜະລິດ ແລະ ສະຫະກອນຕາມທ່າແຮງໄດ້ປຽບຂອງແຕ່ລະທ້ອງຖິ່ນ.

**4. ປົກປັກຮັກສາສິ່ງແວດລ້ອມ ແລະ ຫຼຸດຜ່ອນຄວາມສ່ຽງຈາກຜົນກະທົບຕ່າງໆ**

- ປູກຈິດສຳນຶກໃຫ້ທຸກຄົນ ປົກປັກຮັກສາສິ່ງແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ.
- ເພີ່ມທະວີບົດບາດການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ປະຕິບັດກົນໄກ, ນິຕິກຳ ຢ່າງມີປະສິດຕິພາບ, ປະກອບສ່ວນຊຸກຍູ້ການພັດທະນາຕາມທິດສີຂຽວ ແລະ ຍືນຍົງ.

- ເພີ່ມທະວີການລາຍງານສະພາບດິນຟ້າອາກາດ, ອຸນຫະພູມ ແລະ ສະພາບອຸທົກກະສາດ ພ້ອມທັງມີການແຈ້ງເຕືອນໄພລ່ວງໜ້າສະເພາະດິນຟ້າອາກາດຕ່າງໆ ຢ່າງທັນການ ເພື່ອຍົກລະດັບຄວາມສາມາດໃນການກູ້ໄພ, ຫຼຸດຜ່ອນຜົນກະທົບ ແລະ ການຟື້ນຟູຜົນເສຍຫາຍຈາກໄພພິບັດທຳມະຊາດ.
- ສົ່ງເສີມຮູບແບບເສດຖະກິດໝູນວຽນເພື່ອຫຼຸດຜ່ອນການເອື່ອຍອີງຂະແໜງທຳມະຊາດ ແລະ ຫຼຸດຜ່ອນການທຳລາຍສິ່ງແວດລ້ອມ ເປັນຕົ້ນ: ການຫຼຸດຜ່ອນຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ, ຫຼຸດຜ່ອນມົນລະພິດທາງອາກາດ, ນ້ຳເສຍ, ມີການຈັດການ ແລະ ນຳສິ່ງເສດເຫຼືອກັບມາໃຊ້ຄືນຢ່າງຫຼວງຫຼາຍ.
- ສົ່ງເສີມທິດທາງການປະຕິບັດການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຕາມແຜນງານແຫ່ງຊາດການປະກອບສ່ວນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ. ຍົກສູງຄວາມສາມາດໃນການປັບຕົວ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ.
- ສືບຕໍ່ຄວາມພະຍາຍາມໃນການເພີ່ມເນື້ອທີ່ປ່າໄມ້ ແລະ ຟື້ນຟູປ່າ ໂດຍສະເພາະຊີວະນາໆພັນທີ່ມີຄວາມສ່ຽງຈະສູນພັນ.
- ປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງດ້ານສິ່ງແວດລ້ອມຢ່າງເຂັ້ມງວດ.

**5. ສ້າງໂຄງລ່າງທີ່ມີຄວາມທົນທານ ເພື່ອເຊື່ອມຈອດ-ເຊື່ອມໂຍງໃນທຸກລະດັບ**

- ເພີ່ມທະວີການຮ່ວມມື, ເຊື່ອມຈອດ ແລະ ເຊື່ອມໂຍງຮອບດ້ານກັບພາກພື້ນ ແລະ ສາກົນ ເປັນຕົ້ນ ການຮ່ວມມືດ້ານການຄ້າ-ການສົ່ງອອກ ເພື່ອສົ່ງເສີມການຜະລິດ ແລະ ການສົ່ງອອກ. ມີຫົວຄິດປະດິດສ້າງໃນການນຳເອົາຕະຫຼາດ (ອອນລາຍ) ໄປຫາຜູ້ຜະລິດທີ່ຢູ່ຫ່າງໄກສອກຫຼີກ.
- ກໍ່ສ້າງຕາໜ່າງເສັ້ນທາງແຫ່ງຊາດ, ທາງລົດໄຟ, ທາງນ້ຳ ແລະ ທາງອາກາດໃຫ້ມີຫຼາຍເສັ້ນຫຼາຍສາຍ ແລະ ມີຄຸນນະພາບ ເພື່ອສົ່ງເສີມການເຊື່ອມຈອດກັບຕະຫຼາດພາກພື້ນ ທີ່ມີຜົນຜະລິດ ແລະ ຕະຫຼາດຂະໜາດໃຫຍ່.
- ສົ່ງເສີມໂຄງລ່າງຂະແໜງພະລັງງານໃຫ້ມີຄວາມຍືນຍົງ, ຂຸດຄົ້ນທ່າແຮງຂອງຂະແໜງພະລັງງານໃຫ້ສາມາດຕອບສະໜອງຄວາມຕ້ອງການຊົມໃຊ້ພາຍໃນ, ພ້ອມກັນນີ້, ກໍ່ຕ້ອງສຶກສາ ແລະ ຂຸດຄົ້ນຂະແໜງອຸດສາຫະກຳອື່ນທີ່ມີຄວາມຕ້ອງການໃຊ້ພະລັງງານຫຼາຍ ເພື່ອຫຼີກລ້ຽງການຜະລິດພະລັງງານທີ່ເຫຼືອລົ້ນ ເປັນຕົ້ນ ການນຳໃຊ້ພາຫະນະໄຟຟ້າໃນອະນາຄົດ ເພື່ອຫຼຸດຜ່ອນການໃຊ້ນ້ຳມັນ ແລະ ສົ່ງເສີມການໃຊ້ໄຟຟ້າໃຫ້ຫຼາຍຂຶ້ນ.
- ເພີ່ມເນື້ອທີ່ຊົນລະປະທານທີ່ສາມາດທຳການຜະລິດໄດ້ຕະຫຼອດປີ;
- ເຊື່ອມສານວຽກງານການວາງແຜນເຄຫາຜັງເມືອງແຕ່ຫົວທີ ເພື່ອພັດທະນານະຄອນ, ຕົວເມືອງ ແລະ ຈັດສັນເຂດທີ່ຢູ່ອາໄສໃນຕົວເມືອງໃຫ້ມີຄວາມທັນສະໄໝ (ລວມທັງການສ້າງເຄຫາສະຖານທີ່ມີຄວາມປອດໄພ ແລະ ເຂົ້າເຖິງໄດ້) ເພື່ອຫຼຸດຜ່ອນຄວາມແອອັດຂອງຕົວເມືອງທີ່ເກີດຈາກການເຄື່ອນຍ້າຍຊົນນະບົດສູ່ຕົວເມືອງ.
- ນຳໃຊ້ເຄື່ອງມື ໄອທີ ທີ່ທັນສະໄໝເຂົ້າມາຊ່ວຍອຳນວຍຄວາມສະດວກໃນການເຂົ້າເຖິງ ແລະ ຄຸ້ມຄອງໂຄງລ່າງບາງປະເພດເຊັ່ນ ແອັບພິເຄຊັ້ນມືຖືສຳລັບຕາຕະລາງການສັນຈອນລົດເມ, ການຈ່າຍທຳນຽມປີ້ລົດເມດ້ວຍມືຖື.
- ເສີມຂະຫຍາຍ ແລະ ເພີ່ມທະວີການພົວພັນຮ່ວມມືກັບບັນດາປະເທດອາຊຽນ, ປະເທດເພື່ອນມິດໃນໂລກ ແລະ ອົງການຈັດຕັ້ງສາກົນ ຕາມແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ, ການຮ່ວມມືເພື່ອສ້າງກຳລັງແຮງໃນການພັດທະນາເສດຖະກິດ-ສັງຄົມ, ເປັນເຈົ້າການໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນ ການຊ່ວຍເຫຼືອໃຫ້ມີປະສິດທິຜົນສູງ.

**6. ປັບປຸງການຄຸ້ມຄອງບໍລິຫານພາກລັດ**

- ເພີ່ມທະວີຄວາມສາມັກຄີປອງດອງ, ທຸກຄົນໃນທົ່ວສັງຄົມມີສ່ວນຮ່ວມໃນການພັດທະນາ ດ້ວຍການນຳໃຊ້ຊ່ອງທາງອອນລາຍເພື່ອສັງລວມຄວາມຄິດຄວາມເຫັນກ່ຽວກັບການປັບປຸງບໍລິການພາກລັດແບບມີຫົວຄິດປະດິດສ້າງ.

- ສືບຕໍ່ປັບປຸງ ແລະ ຫຼຸດຜ່ອນຂໍ້ຄົງຄ້າງເພື່ອໃຫ້ລໍາດັບ ດັດຊະນີຄວາມໂປ່ງໃສສາກົນ ຢູ່ໃນລະດັບທີ່ດີຂຶ້ນພາຍໃນປີ 2025.
- ມີການຈັດສັນທຶນຮອນທີ່ຊັດເຈນ ແລະ ເໝາະສົມສໍາລັບຂະແໜງ ICT ແລະ ການຄົ້ນຄວ້າ ແລະ ພັດທະນາ.
- ຍົກລະດັບຄວາມຮູ້ຄວາມສາມາດຂອງບຸກຄະລາກອນ ປັບປຸງແນວຄິດຂອງຂະແໜງບໍລິການພາກລັດໃຫ້ເຂົ້າໃຈ ແລະ ມີແນວຄວາມຄິດທີ່ຖືກຕ້ອງກ່ຽວກັບການໃຫ້ບໍລິການຕໍ່ສາທາລະນະຊົນ ເພື່ອສ້າງຄວາມເຊື່ອຂອງສັງຄົມຕໍ່ພາກລັດ.
- ສຶກສາຄວາມເປັນໄປໄດ້ການນໍາໃຊ້ເຄື່ອງມື ICT ໃນການດໍາເນີນທຸລະກໍາໃນຫຼາຍຂະແໜງ ເພື່ອເປັນການປະຢັດເວລາ, ມີປະສິດທິພາບສູງ ແລະ ສາມາດຕິດຕາມໄດ້.
- ປັບປຸງການບໍລິຫານຄຸ້ມຄອງຂອງລັດ ແລະ ຂອດປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ມີປະສິດທິພາບ, ປັບປຸງການບໍລິຫານລັດໃຫ້ສາມາດກວດສອບໄດ້ ແລະ ມີຄວາມໂປ່ງໃສຫຼາຍຂຶ້ນ.
- ສືບຕໍ່ຮ່ວມມືກັບຄູ່ຮ່ວມພັດທະນາໃນການຈັດຕັ້ງຜັນຂະຫຍາຍຖະແຫຼງການວຽງຈັນ ໃຫ້ການຊ່ວຍເຫຼືອເພື່ອການພັດທະນາຢ່າງເປັນທາງການມີຄວາມສອດຄ່ອງກັບບູລິມະສິດແຫ່ງຊາດ.
- ເພີ່ມທະວີການປະສານສົມທົບລະຫວ່າງ ອົງການປົກຄອງທຸກຂັ້ນ, ສະພາປະຊາຊົນ ແລະ ຂົງເຂດຍຸຕິທໍາ ຕາມພາລະບົດບາດ ແລະ ຂອບເຂດສິດຢ່າງສອດຄ່ອງ.
- ປູກຈິດສໍານຶກສັງຄົມເຄົາລົບ ແລະ ເປັນເຈົ້າການປະຕິບັດກົດໝາຍ ແລະ ລະບຽບການ ຢ່າງເຄັ່ງຄັດ;
- ປັບປຸງ ແລະ ສ້າງກົດໝາຍ ແລະ ນິຕິກໍາໃຫ້ເປັນລະບົບຄົບຊຸດ ເພື່ອເປັນເຄື່ອງມືໃນການຄຸ້ມຄອງບໍລິຫານລັດຢ່າງມີປະສິດທິພາບ.
- ຍົກສູງຄວາມຮັບຜິດຊອບທາງດ້ານການເມືອງທຸກຂັ້ນ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ. ພ້ອມທັງ ເຂັ້ມງວດການກວດກາ ແລະ ປະຕິບັດກົດໝາຍໃຫ້ມີຄວາມເຂັ້ມແຂງ.
- ຕ້ານ ແລະ ແກ້ໄຂການສໍ້ລາດບັງຫຼວງໃນທຸກລະດັບ.
- ປັບປຸງລະບົບຂໍ້ມູນສະຖິຕິ ເພື່ອຮັບໃຊ້ການສ້າງ, ຕິດຕາມ, ປະເມີນຜົນ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ພ້ອມທັງ ຮັບປະກັນໃຫ້ມີງົບປະມານໃນການຊຸກຍູ້ ແລະ ຕິດຕາມຢ່າງເປັນລະບົບ.
- ສືບຕໍ່ຫັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ເປັນໜ້າທີ່ຂອງທົ່ວປວງຊົນ ຢ່າງແຂງແຮງກວ່າເກົ່າ ເພື່ອຮັກສາສະຖຽນລະພາບດ້ານການເມືອງ, ຄວາມສະຫງົບ ແລະ ຄວາມປອດໄພໃນສັງຄົມ.
- ບັນດາຂະແໜງການ ແລະ ທ້ອງຖິ່ນ ຕ້ອງເປັນເຈົ້າການໃນການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ຕາມສິດໜ້າທີ່ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

# II. ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

- ລັດຖະບານອອກດໍາລັດຈັດຕັ້ງປະຕິບັດ, ກະຊວງແຜນການ ແລະ ການລົງທຶນ ອອກບົດແນະນໍາດ້ານວິຊາການ ແລະ ເປັນໃຈກາງໃນການປະສານງານກັບ ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນໃນການຈັດຕັ້ງຜັນຂະຫຍາຍໃຫ້ເປັນອັນລະອຽດ, ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ.
- ບັນດາລັດຖະມົນຕີ, ເຈົ້າແຂວງ-ເຈົ້າຄອງນະຄອນຫຼວງ ຕ້ອງໄດ້ຍົກສູງຄວາມຮັບຜິດຊອບໃຫ້ຫຼາຍຂຶ້ນ ໂດຍຫັນບັນດາຄາດໝາຍ, ແຜນວຽກຈຸດສຸມໃຫ້ເປັນອັນລະອຽດຕາມພາລະບົດບາດຂອງຕົນ ໃຫ້ສອດຄ່ອງລະຫວ່າງແຜນງານ, ແຜນເງິນ ແລະ ແຜນຄົນ ໂດຍການນໍາໃຊ້ກົນໄກການຄຸ້ມຄອງຕາມທິດ 3 ສ້າງ ແຕ່ຂັ້ນສູນກາງ ຫາ ຂັ້ນ

ທ້ອງຖິ່ນຮາກຖານ ເພື່ອໃຫ້ມີຄວາມສະດວກ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີຜົນສໍາເລັດ ແລະ ປະສິດທິຜົນສູງ.

- ເພີ່ມທະວີການປະສານງານຢ່າງເປັນເຈົ້າການ ລະຫວ່າງພາກລັດດ້ວຍກັນ (ສາຍຕັ້ງ ແລະ ສາຍຂວາງ), ພາກລັດກັບເອກະຊົນກ່ຽວກັບການຈັດຕັ້ງປະຕິບັດ ແລະ ການຕິດຕາມແຜນພັດທະນາເສດຖະກິດ-ສັງຄົມ.
- ເພີ່ມທະວີກົນໄກການປະສານສົມທົບໃນການກໍ່ສ້າງ, ພັດທະນາ, ຍົກລະດັບ ດ້ານສີມືແຮງງານ ລະຫວ່າງກະຊວງ ສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ກັບສະພາການຄ້າ ແລະອຸດສາຫະກໍາ ເພື່ອຫັນເຂົ້າສູ່ການຜະລິດ-ທຸລະກິດ, ການຈ້າງງານ, ສ້າງລາຍຮັບໃຫ້ສັງຄົມ ກໍຄືຕອບສະໜອງໃຫ້ແກ່ຕະຫຼາດ ຢ່າງມີຈຸດສຸມ ແລະ ມີຄຸນນະພາບກວ່າເກົ່າ.
- ເສີມຂະຫຍາຍພາລະບົດບາດຂອງທຸກອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນ, ແນວໂຮມ, ບັນດາອົງການຈັດຕັ້ງມະຫາຊົນ, ປະຊາຊົນ, ບັນດາອົງການຈັດຕັ້ງທາງສັງຄົມ, ພາກທຸລະກິດທັງພາຍໃນ ແລະຕ່າງປະເທດເຂົ້າຮ່ວມໃນການຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີຜົນສໍາເລັດ.
- ກະຊວງແຜນການ ແລະ ການລົງທຶນ ຮ່ວມກັບ ທຸກຂະແໜງການ ແລະ ທ້ອງຖິ່ນ ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະຕາມຂອບແຜນການ 5 ປີ ແລະ ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາໃນແຕ່ລະໄລຍະ ໂດຍການນໍາໃຊ້ ແລະ ຄຸ້ມຄອງລະບົບຕິດຕາມ ແລະ ປະເມີນຜົນຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

# III. ການແບ່ງຄວາມຮັບຜິດຊອບຈໍານວນໜຶ່ງໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ:

1) ກະຊວງການເງິນ ຮີບຮ້ອນຫັນເປັນທັນສະໄໝໃນການຄຸ້ມຄອງການເກັບລາຍຮັບ ແລະ ລາຍຈ່າຍ ໃຫ້ໄວກວ່າເກົ່າ ແລະ ກວ້າງຂວາງ; ປະຕິບັດມາດຕະການໃຫ້ບັນດາຫົວໜ່ວຍທຸລະກິດນໍາໃຊ້ລະບົບບັນຊີຢ່າງເປັນເອກະພາບ ແລະ ໃຫ້ເຂົ້າຮ່ວມໃນລະບົບການເສຍອາກອນມູນຄ່າເພີ່ມ ເພື່ອເພີ່ມລາຍຮັບງົບປະມານ; ຄົ້ນຄວ້າການຫັນລັດວິສາຫະກິດທີ່ບໍ່ມີປະສິດທິຜົນໄປຮູບການອື່ນ; ສົມທົບກັບພາກສ່ວນກ່ຽວຂ້ອງ ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໂດຍກໍານົດໃຫ້ເປັນວາລະແຫ່ງຊາດ;

2) ທະນາຄານແຫ່ງ ສປປ ລາວ ສືບຕໍ່ຄຸ້ມຄອງ ແລະ ຮັກສາສະຖຽນລະພາບເງິນຕາ ໃຫ້ມີຄວາມໝັ້ນທ່ຽງຕາມຂອບແຜນທີ່ກໍານົດໄວ້, ຊຸກຍູ້ ແລະ ສ້າງເງື່ອນໄຂອໍານວຍດ້ານແຫຼ່ງທຶນ ເພື່ອສົ່ງເສີມການຜະລິດ ແລະ ການບໍລິການທີ່ມີປະສິດທິຜົນ ໃຫ້ສອດຄ່ອງກັບເປົ້າໝາຍບູລິມະສິດຂອງລັດຖະບານ, ການສ້າງຄວາມເຂັ້ມແຂງໃຫ້ພື້ນຖານການຜະລິດພາຍໃນ ແລະ ການສ້າງລາຍຮັບໃຫ້ປະເທດ; ເພີ່ມທະວີການຄຸ້ມຄອງທະນາຄານທຸລະກິດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໃຫ້ເຄື່ອນໄຫວຕາມກົດໝາຍ-ລະບຽບການຢ່າງເຄັ່ງຄັດ ຄຽງຄູ່ກັບການສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດມາດຕະການ, ນະໂຍບາຍທີ່ເໝາະສົມຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19 ຢ່າງມີປະສິດທິຜົນ ທັງຮັບປະກັນໄດ້ຄວາມໝັ້ນຄົງຂອງລະບົບສະຖາບັນການເງິນ ໃນໄລຍະກາງ-ຍາວ, ສົມທົບກັບສູນສະຖິຕິແຫ່ງຊາດ ເພື່ອຮັບປະກັນ ດ້ານຄຸນນະພາບ ແລະ ຂອບເວລາຂອງຂໍ້ມູນທີ່ຈໍາເປັນສໍາລັບວຽກງານສະຖຽນລະພາບເງິນຕາແຫ່ງຊາດ;

3) ກະຊວງແຜນການ ແລະ ການລົງທຶນ ສືບຕໍ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ປັບປຸງບັນດາລະບຽບການ, ກົນໄກໃນການດໍາເນີນທຸລະກິດ ແລະ ວຽກງານບໍລິການອອກໃບອະນຸຍາດການລົງທຶນ ແລະ ໃບອະນຸຍາດດໍາເນີນທຸລະກິດຕາມ ຄໍາສັ່ງເລກທີ 02/ນຍ ແລະ 03/ນຍ ຢ່າງມີປະສິດທິຜົນ, ຊຸກຍູ້ ແລະ ດຶງດູດການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ມີຄຸນນະພາບ ໃຫ້ຫຼາຍຂຶ້ນ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍສົ່ງເສີມການລົງທຶນ, ສືບຕໍ່ສົ່ງເສີມການລົງທຶນເຂົ້າໃນເຂດເສດຖະກິດພິເສດ;

4) ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຊອກຫາຕະຫຼາດ ແລະ ກຳນົດລາຍການສິນຄ້າ ຕາມຄວາມຕ້ອງການຕະຫຼາດພາຍໃນ ແລະ ການສົ່ງອອກສິນຄ້າ ເພື່ອເປັນບ່ອນອີງໃຫ້ພາກສ່ວນກ່ຽວຂ້ອງສ້າງແຜນການຜະລິດໃຫ້ພຽງພໍກັບຄວາມຕ້ອງການ; ກຳນົດ, ຕິດຕາມ ແລະ ຄຸ້ມຄອງ ລາຄາສິນຄ້າ ເປັນຕົ້ນແມ່ນສິນຄ້າອຸປະໂພກ ແລະ ບໍລິໂພກ ເພື່ອຮັບປະກັນບໍ່ໃຫ້ຄ່າຄອງຊີບສູງຂຶ້ນ;

5) ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຊຸກຍູ້ຂະແໜງການຜະລິດເພື່ອຊົມໃຊ້ພາຍໃນ ແລະ ການຜະລິດເພື່ອສົ່ງອອກ ໂດຍສະເພາະການຜະລິດບັນດາສິນຄ້າທີ່ມີຕະຫຼາດຮອງຮັບໃຫ້ໄດ້ມາດຕະຖານ ເປັນຕົ້ນ ໂຄຕ້າທີ່ໄດ້ຮັບ ຈາກ ສປ ຈີນ ເຊັ່ນ: ເຂົ້າ, ສັດລ້ຽງ ແລະ ພືດຈຳນວນໜຶ່ງ ເພື່ອວາງແຜນການຜະລິດ ຫຼື ໂຄງການຜະລິດໃໝ່ ເພື່ອໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດ;

6) ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເອົາໃຈໃສ່ໂຄສະນາ ແລະ ຊຸກຍູ້ສົ່ງເສີມການທ່ອງທ່ຽວ ລາວທ່ຽວລາວ ເພື່ອກະຕຸ້ນເສດຖະກິດ, ເປັນເຈົ້າການຊຸກຍູ້ແນະນຳບັນດາຫົວໜ່ວຍທຸລະກິດທ່ອງທ່ຽວ ປັບປຸງສະຖານທີ່ທ່ອງທ່ຽວ ແລະ ການບໍລິການສະຖານທີ່ພັກ-ຮ້ານອາຫານ ໃຫ້ມີຄຸນນະພາບ ແລະ ມີຄວາມຫຼາກຫຼາຍ; ສົມທົບກັບພາກສ່ວນກ່ຽວຂ້ອງແຕ່ລະຂັ້ນ ໂຄສະນາເຜີຍແຜ່ ກ່ຽວກັບມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດພະຍາດໂຄວິດ-19; ຊຸກຍູ້ ແລະ ຍົກລະດັບຂະບວນການ "ລາວທ່ຽວລາວ-ລາວຊົມໃຊ້ຜະລິດຕະພັນລາວ";

7) ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການຈັດຕັ້ງຜັນຂະຫຍາຍຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ແລະ ວຽກງານຈຸດສຸມຂອງແຜນພັດທະນາຂະແໜງສຶກສາທິການ ແລະ ກິລາ ເພື່ອຍົກສູງຄຸນນະພາບຂອງຊັບພະຍາກອນມະນຸດ, ເອົາໃຈໃສ່ປັບປຸງຫຼັກສູດການຮຽນ-ການສອນໃຫ້ມີຄຸນນະພາບໃນທຸກລະດັບ, ພ້ອມທັງສະໜອງອຸປະກອນ, ເຄື່ອງທົດລອງ ແລະ ນະໂຍບາຍທີ່ຈຳເປັນໃຫ້ແກ່ຄູ ແລະ ນັກຮຽນ ໂດຍສະເພາະໃນເຂດຫ່າງໄກສອກຫຼີກ;

8) ກະຊວງສາທາລະນະສຸກ ເພີ່ມທະວີການການຄຸ້ມຄອງ, ການຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມາດຕະການການປ້ອງກັນ, ສະກັດກັ້ນ ແລະ ການແກ້ໄຂ ການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງປົກກະຕິ ແລະ ທັນການ; ສືບຕໍ່ເອົາໃຈໃສ່ການຂະຫຍາຍຕາໜ່າງສາທາລະນະສຸກໄປຫາ ເຂດຫ່າງໄກສອກຫຼີກ ຄຽງຄູ່ກັບການຍົກລະດັບບຸກຄະລາກອນແພດໝໍໃຫ້ມີຄຸນນະພາບ ແລະ ມີຈັນຍາບັນສູງຂຶ້ນ;

9) ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການປະສານສົມທົບກັບກະຊວງສຶກສາທິການ ແລະ ກິລາ, ສູນກາງຊາວໜຸ່ມ ແລະ ສູນກາງສະຫະພັນແມ່ຍິງ ເພື່ອປັບປຸງກົນໄກການປະສານງານ ໃນການຝຶກ ແລະ ພັດທະນາສີມືແຮງງານ ໃຫ້ມີຄວາມກົມກຽວກັນ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ; ພ້ອມທັງສົມທົບກັບເຂດເສດຖະກິດພິເສດ, ໂຄງການລົງທຶນຂອງພາກເອກະຊົນ ແລະ ພາກສ່ວນອື່ນໆ ເພື່ອກຳນົດຄວາມຕ້ອງການແຮງງານ; ປັບປຸງຫຼັກສູດການຝຶກອົບຮົມ ໃຫ້ໄດ້ມາດຖານສາກົນ; ເອົາໃຈໃສ່ແກ້ໄຂບັນຫາການຫວ່າງງານ ໂດຍສະເພາະ ແຮງງານທີ່ກັບຄືນມາແຕ່ຕ່າງປະເທດ;

10) ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພີ່ມທະວີ ແລະ ເປັນເຈົ້າການຜັນຂະຫຍາຍນິຕິກຳຕ່າງໆ ໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ; ຕິດຕາມກວດກາຢ່າງເປັນລະບົບພ້ອມທັງເຝົ້າລະວັງ ແລະ ລາຍງານ-ແຈ້ງເຕືອນ ສະພາບການກ່ຽວກັບການປ່ຽນແປງດິນຟ້າອາກາດ ເພື່ອໃຫ້ສັງຄົມ ແລະ ປະຊາຊົນຮັບຮູ້ຂໍ້ມູນຂ່າວສານ ແລະ ກະກຽມຮັບມືຜົນກະທົບ ຈາກໄພພິບັດທຳມະຊາດຕ່າງໆ ຢ່າງທັນການ;

11) ຂະແໜງການ ແລະ ທ້ອງຖິ່ນ ເປັນເຈົ້າການຄົ້ນຄວ້າວາງແຜນການຜະລິດ ແລະ ການບໍລິການ ຕາມທ່າແຮງບົ່ມຊ້ອນທີ່ໄດ້ປຽບຂອງຕົນ ເພື່ອນຳໃຊ້ທາງດ່ວນ, ເສັ້ນທາງລົດໄຟລາວ-ຈີນ ຕາມແລວທາງເສດຖະກິດຕ່າງໆຢ່າງມີປະສິດທິຜົນ; ປະສານງານກັນຢ່າງກົມກຽວ ການຈັດຕັ້ງຜັນຂະຫຍາຍທິດການພັດທະນາເຂດແຄວ້ນເພື່ອສ້າງສຳພັນເສດຖະກິດທີ່ມີປະສິດທິຜົນ ແລະ ມີຈຸດສຸມ, ບໍ່ຊໍ້າຊ້ອນກັນ, ແຕ່ສະໜັບສະໜູນເຊິ່ງກັນ ແລະ ກັນ.

# IV. ການຕິດຕາມ ແລະ ປະເມີນຜົນ

- ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງ ປະສານກັບທຸກພາກສ່ວນ ທີ່ກ່ຽວຂ້ອງຮັບຜິດຊອບໃນການຄຸ້ມຄອງຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ IX ໂດຍສະເພາະແມ່ນ ໝາກຜົນລະດັບຊາດ.
- ຂະແໜງການ ແລະ ທ້ອງຖິ່ນ ສຸມໃສ່ຕິດຕາມຄວາມຄືບໜ້າຂອງການປະຕິບັດໜ້າວຽກຈຸດສຸມ ແລະ ບັນຫາທີ່ພົວພັນກັບຫຼາຍຂະແໜງການທີ່ກ່ຽວຂ້ອງກັບຂະແໜງການຕົນຢ່າງເປັນເຈົ້າການ ແລ້ວລາຍງານໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນແຕ່ລະໄລຍະ ໂດຍຜ່ານການຜັນຈັດຕັ້ງປະຕິບັດເປັນແຜນການປະຈຳປີ.
- ກະຊວງແຜນການ ແລະ ການລົງທຶນ ເຮັດໜ້າທີ່ໃນການຊີ້ນຳລວມໃນການຕິດຕາມ ແລະ ປະເມີນຜົນ ໂດຍ (i) ສັງລວມບັນດາຕົວຊີ້ບອກ, ຂໍ້ມູນປີຖານ ແລະ ຄາດໝາຍທີ່ຢູ່ໃນລະດັບໝາກຜົນທີ່ກຳນົດໄວ້ໃນແຜນ; (ii) ປະສານງານກັບຂະແໜງການ ແລະ ທ້ອງຖິ່ນ ເພື່ອສັງລວມຂໍ້ມູນກ່ຽວກັບໜ້າວຽກຈຸດສຸມຂອງແຕ່ລະພາກສ່ວນເພື່ອຊ່ວຍໃຫ້ບັນລຸໝາກຜົນໃນລະດັບຊາດ; (iii) ໃຫ້ຄຳແນະນຳແກ່ຂະແໜງການໃນການກຳນົດຕົວຊີ້ບອກ, ຂໍ້ມູນປີຖານ ແລະ ຄາດໝາຍຕ່າງໆທີ່ສຳຄັນຕໍ່ການບັນລຸແຜນ; (iv) ຕິດຕາມ-ປະເມີນໝາກຜົນໃນລະດັບຊາດ ແລະ ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ; (v) ນຳໃຊ້ຜົນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນເຂົ້າໃນການສ້າງແຜນໃນແຕ່ລະໄລຍະ.

# ເອກະສານຊ້ອນທ້າຍ

## ຕາຕະລາງຕົວເລກສະຫຼູບການຈັດຕັ້ງປະຕິບັດ ແຜນການ 5 ປີ ຄັ້ງທີ VIII (2016-2020)

## ສົມທຽບກັບມະຕິສະພາ 014/ສພຊ ວ່າດ້ວຍແຜນດັດແກ້ຕົວເລກມະຫາພາກ 4 ປີ (2017-2020)

| ລ/ດ | | ຫົວໜ່ວຍ | ປະຕິບັດປີ 2016 | ປະຕິບັດປີ 2017 | ປະຕິບັດປີ 2018 | ປະຕິບັດປີ 2019 | ຄາດຄະເນປີ 2020 | 4ປີ | ຄາດໝາຍ ດັດແກ້ 4 ປີ (2017-2020) | ປະຕິບັດ 5 ປີ | ຄາດໝາຍ ມະຕິ 09 (2016-2020) | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 | 9=5+6+7+8 | 10 | 11=4+5+6+7+8 | 12 | 13 |
| **ກ** | **ຄາດໝາຍດ້ານເສດຖະກິດ** | | | | | | | | | | | |
| 1 | **ຈຳນວນພົນລະເມືອງ** | ຄົນ | 6,787,007 | 6,916,402 | 7,012,995 | 7,111,968 | 7,214,196 | | | | | |
| 2 | **GDP ຕາມລາຄາໃນປີ (ຄິດເປັນເງິນກີບ)** | ຕື້ກີບ | 129,279 | 140,698 | 152,414 | 164,017 | 173,138 | 630,267 | 600,611 | 759,546 | | |
| | **GDP ຕາມລາຄາໃນປີ (ຄິດເປັນເງິນໂດລາ)** | ລ້ານໂດລາ | 15,901 | 17,061 | 18,129 | 18,875 | 19,779 | 73,844 | 600,611.00 | 89,745.00 | | |
| 3 | **ອັດຕາເພີ່ມຂອງ GDP** | **%** | **7.0** | **6.9** | **6.3** | **5.5** | **3.3** | **5.5** | **7.2** | **5.8** | **7.5** | |
| | - ກະສິກຳ | % | 2.80 | 2.90 | 1.30 | 1.20 | 2.30 | 1.9 | 3.40 | 2.10 | 3.2 | |
| | - ອຸດສະຫະກຳ | % | 10.50 | 11.60 | 7.80 | 5.60 | 9.80 | 8.7 | 9.30 | 9.06 | 9.3 | |
| | - ບໍລິການ | % | 7.40 | 4.50 | 6.90 | 6.90 | (1.60) | 4.2 | 8.10 | 4.82 | 8.9 | |
| | - ພາສີຂາເຂົ້າ | % | 5.30 | 7.00 | 6.20 | 5.50 | 1.80 | 5.1 | 5.00 | 5.16 | 6.0 | |
| 4 | **<u>ໂຄງປະກອບ GDP</u>** | | 100.00 | 100.00 | 100.00 | 100.00 | 100.00 | | | | | |
| | - ກະສິກຳ | % | 15.80 | 15.30 | 14.50 | 15.20 | 16.60 | | | | 19.0 | |
| | - ອຸດສະຫະກຳ | % | 33.70 | 35.20 | 35.70 | 31.40 | 33.00 | | | | 32.0 | |
| | - ບໍລິການ | % | 40.30 | 39.30 | 39.60 | 42.30 | 39.50 | | | | 41.0 | |
| | - ພາສີຂາເຂົ້າ | % | 10.20 | 10.20 | 10.20 | 11.10 | 10.90 | | | | 8.0 | |
| 5 | **GDP ຕໍ່ຫົວຄົນ** | ໂດລາ/ຄົນ | 2,025 | 2,468 | 2,585 | 2,654 | 2,664 | | 2,978 | | 3,190 | |
| 6 | **ລາຍໄດ້ແຫ່ງຊາດຕໍ່ຫົວຄົນ (GNI)** | ໂດລາ/ຄົນ | 1,904 | 1,951 | 2,043 | 2,098 | 2,106 | | 2,354.00 | | | |
| 7 | **ລາຍຮັບ-ລາຍຈ່າຍ** | | | | | | | | | | | |
| 7.1 | ລາຍຮັບທັງຫມົດ | ຕື້ກີບ | 22,288 | 23,011 | 25,772 | 26,625 | 22,975 | 98,384 | 111,670 | 120,672 | 19-20% | |
| | *- ລາຍຮັບພາຍໃນ* | *ຕື້ກີບ* | *20,367* | *20,666* | *22,843* | *23,993* | *20,410* | *87,912* | *98,312* | *108,280* | | |
| | *- ລາຍຮັບຈາກການຊ່ວຍເຫຼືອລ້າ* | *ຕື້ກີບ* | *1,921* | *2,346* | *2,929* | *2,632* | *2,565* | *10,472* | *13,358* | *12,037* | | |
| 7.2 | ລາຍຈ່າຍທັງຫມົດ | ຕື້ກີບ | 25,887 | 30,736 | 31,866 | 30,624 | 31,520 | 124,745 | 137,132 | 150,632 | | |

| ລ/ດ | | ຫົວໜ່ວຍ | ປະຕິບັດປີ 2016 | ປະຕິບັດປີ 2017 | ປະຕິບັດປີ 2018 | ປະຕິບັດປີ 2019 | ຄາດຄະເນປີ 2020 | 4ປີ | ຄາດໝາຍ ດັດແກ້ 4 ປີ (2017-2020) | ປະຕິບັດ 5 ປີ | ຄາດໝາຍ ມະຕິ 09 (2016-2020) | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| **1** | **2** | **3** | **4** | **5** | **6** | **7** | **8** | **9=5+6+7+8** | **10** | **11=4+5+6+7+8** | **12** | **13** |
| | ລາຍຈ່າຍງົບປະມານລວມ | ≤ % | | | | | | | | | 25.0 | |
| 7.3 | ຂາດດຸນງົບປະມານ | ຕື້ກີບ | (3,599) | (7,725) | (6,093) | (3,998) | (8,545) | (26,361) | (25,462) | (29,961) | | |
| | *ຂາດດຸນງົບປະມານ/GDP* | *%* | *(2.8)* | *(5.5)* | *(4.0)* | *(2.4)* | *(4.9)* | *(4.2)* | *(4.2)* | *(3.94)* | *(5.0)* | |
| | ສ້າງຄັງສະສົມແຕ່ລະປີ | % ຂອງລາຍຮັບພາຍໃນ | | | | | | | | | 2-3% | |
| **8** | **ດ້ານເງິນຕາ** | | | | | | | | | | | |
| 8.1 | ອັດຕາເງິນເຟີ້ | % | 1.60 | 0.83 | 2.04 | 3.32 | 5.07 | 2.82 | < ອັດຕາຂະຫຍາຍຕົວGDP | 2.57 | | |
| 8.2 | ອັດຕາແລກປ່ຽນ | | | | | | | | ສະຫງົບປົກກະຕິ | | | |
| | ກີບ/ໂດລາສະຫາລັດ | % | (0.36) | (2.03) | (1.56) | (3.59) | (6.23) | (3.35) | +/-5 | (2.75) | ±5 | ປີ 2020 ແມ່ນ ເດືອນ 12 |
| | ກີບ/ບາດ | % | 3.27 | (5.68) | (6.86) | (7.59) | (8.15) | (7.07) | +/-5 | (5.00) | | |
| 8.3 | ປະລິມານເງິນລວມ (M2) | % | 10.9 | 12.2 | 8.37 | 18.9 | 17.04 | 14.1 | 24%/ປີ | 13.48 | 24%/ປີ | |
| 8.4 | ຄັງສຳຮອງເງິນຕາຕ່າງປະເທດກຸ້ມການນຳເຂົ້າ | ເດືອນ | 5.26 | 4.39 | 3.23 | 3.59 | 4.81 | 4.01 | > 5 ເດືອນ | 4.26 | > 5 | ປີ 2020 ແມ່ນ ເດືອນ 12 |
| 8.5 | ເງິນຝາກ/GDP | % | 50.67 | 52.16 | 51.99 | 57.43 | 64.43 | 56.50 | 84.00 | 55.33 | | |
| 8.6 | ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPL) | % | 3.00 | 3.07 | 3.12 | 3.04 | 3.16 | 3.10 | < 3% | 3.08 | < 3% | |
| **9** | **<u>ການລົງທຶນລວມ</u>** | **ຕື້ກີບ** | **44,129.5** | **30,327.5** | **43,550.2** | **44,999.6** | **50,867.3** | **169,744.6** | **173,329.0** | **213,874.2** | | |
| | **ການລົງທຶນຂອງລັດ (PIP)** | **ຕື້ກີບ** | **9,615.0** | **13,494.5** | **12,803.2** | **12,125.5** | **8,342.8** | **46,766.0** | **55,591.0** | **56,381.0** | | |
| 9.1 | **ທຶນພາຍໃນ (ງົບປະມານລັດ)** | **ຕື້ກີບ** | **3,300.00** | **5,189.79** | **4,364.09** | **4,359.82** | **3,186.2** | **17,099.9** | **21,863.0** | **20,399.9** | **9-11%** | **12-15%** |
| | ການລົງທຶນພາຍໃນ (ບ້ວງປົກກະຕິ) | ຕື້ກີບ | 3,300.00 | 3,191.10 | 2,767.97 | 2,450.00 | 1,608.9 | 10,018.0 | 15,300.0 | 13,318.0 | | |
| | ການລົງທຶນບ້ວງຈິດຮັບ-ຈິດຈ່າຍ ແລະ ບ້ວງອື່ນໆ | ຕື້ກີບ | | 1,998.69 | 1,596.12 | 1,909.82 | 1,577.33 | 7,082.0 | 6,563.0 | 7,082.0 | | |
| 9.2 | **ການຊ່ວຍ ເຫລືອເພື່ອການພັດທະນາ (ODA)** | **ຕື້ກີບ** | **6,314.96** | **8,304.75** | **8,439.07** | **7,765.69** | **5,156.55** | **29,666.1** | **33,728.0** | **35,981.0** | **12-16%** | **15-24%** |
| | ການຊ່ວຍເຫຼືອລ້າ | ຕື້ກີບ | 1,951.00 | 2,283.00 | 2,607.76 | 1,813.35 | 3,692.0 | 10,396.1 | | **12,347.1** | | |
| | ການກູ້ຢືມ | ຕື້ກີບ | 4,464.00 | 5,893.00 | 5,831.33 | 5,300.00 | 4,433.0 | 21,457.3 | | **25,921.3** | | |
| 9.3 | **ການລົງທຶນເອກະຊົນພາຍໃນ-ຕ່າງປະເທດ (FDI)*** | **ຕື້ກີບ** | **23,639.00** | **9,033.00** | **21,984.00** | **23,086.13** | **32,024.5** | **86,127.6** | **79,462.00** | **109,766.6** | **54-57%** | **40-49%** |
| | ເປັນເງິນສົດ | ຕື້ກີບ | | | | | | | | | | |
| | ເປັນວັດຖຸ | ຕື້ກີບ | | | | | | | | | | |

| ລ/ດ | | ຫົວໜ່ວຍ | ປະຕິບັດປີ 2016 | ປະຕິບັດປີ 2017 | ປະຕິບັດປີ 2018 | ປະຕິບັດປີ 2019 | ຄາດຄະເນປີ 2020 | 4ປີ | ຄາດໝາຍ ດັດແກ້ 4 ປີ (2017-2020) | ປະຕິບັດ 5 ປີ | ຄາດໝາຍ ມະຕິ 09 (2016-2020) | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| **1** | **2** | **3** | **4** | **5** | **6** | **7** | **8** | **9=5+6+7+8** | **10** | **11=4+5+6+7+8** | **12** | **13** |
| 9.4 | **ການລົງທຶນຈາກລະບົບເງິນຕາ** | **ຕື້ກີບ** | **10,876** | **7,800** | **8,763** | **9,788** | **10,500** | **36,851.0** | **38,199** | **47,726.6** | **19-21%** | **21-23%** |
| **10** | **ຕົວເລກການຜະລິດຕົ້ນຕໍ** | | | | | | | | | | | |
| 1 | ເຂົ້າ | ໂຕນ | 4,148,800.0 | 4,055,409.0 | 3,279,110.0 | 3,534,500.0 | 3,506,812.0 | 3,593,957.8 | 4,350,000.0 | 3,704,926.2 | | |
| 2 | ສາລີແຂງ | ໂຕນ | 1,245,840.0 | 955,700.0 | 603,535.0 | 714,375.0 | 518,126.0 | 697,934.0 | | 807,515.2 | | |
| 3 | ອ້ອຍ | ໂຕນ | 2,019,000.0 | 1,764,290.0 | 1,109,360.0 | 1,807,470.0 | 1,191,240.0 | 1,468,090.0 | | 1,578,272.0 | | |
| 4 | ມັນຕົ້ນ | ໂຕນ | 2,410,000.0 | 2,083,605.0 | 3,324,290.0 | 3,127,590.0 | 4,634,436.0 | 3,292,480.3 | | 3,115,984.2 | | |
| 5 | ຄວາຍ | ໂຕ | 1,177,000.0 | 1,189,000.0 | 1,200,000.0 | 1,212,000.0 | 1,234,000.0 | 1,208,750.0 | | 1,202,400.0 | | |
| 6 | ງົວ | ໂຕ | 1,923,000.0 | 1,984,000.0 | 2,041,000.0 | 2,110,000.0 | 2,181,000.0 | 2,079,000.0 | | 2,047,800.0 | | |
| 7 | ໝູ | ໂຕ | 3,700,000.0 | 3,869,000.0 | 3,825,000.0 | 4,110,000.0 | 4,327,000.0 | 4,032,750.0 | | 3,966,200.0 | | |
| 8 | ສັດປີກ | ໂຕ | 35,150,000.0 | 36,960,000.0 | 39,218,000.0 | 43,600,000.0 | 45,799,000.0 | 41,394,250.0 | | 40,145,400.0 | | |
| 9 | ແກະ ແລະ ແບ້ | ໂຕ | 560,000.0 | 588,000.0 | 616,000.0 | 648,000.0 | 686,000.0 | 634,500.0 | | 619,600.0 | | |
| 10 | ໄຂ່ | ໂຕນ | 26,360.0 | 30,400.0 | 40,500.0 | 43,000.0 | 43,200.0 | 39,275.0 | | 36,692.0 | | |
| 11 | ປາທຳມະຊາດ | ໂຕນ | 57,401.0 | 59,050.0 | 60,508.0 | 64,701.0 | 69,770.0 | 63,507.3 | | 62,286.0 | | |
| 12 | ປາລ້ຽງ | ໂຕນ | 106,599.0 | 109,818.0 | 118,709.0 | 123,001.0 | 130,250.0 | 120,444.5 | | 117,675.4 | | |
| 13 | ການຜະລິດກະແສໄຟຟ້າ | ລ້ານກິໂລວັດໂມງ | 22,100.7 | 31,550.4 | 34,409.0 | 31,133.0 | 41,340.0 | 138,432.4 | | 160,533.1 | | |
| | ອັດຕາຂະຫຍາຍຕົວ | | | 42.8 | 9.1 | (9.5) | 32.8 | 18.8 | | 18.8 | | |
| 14 | ການຜະລິດແຮ່ທາດ | ລ້ານໂດລາ | 1,466.2 | 1,538.0 | 1,696.1 | 1,611.0 | 1,215.3 | 6,060.4 | | 7,526.5 | | |
| 15 | ການຄ້າ | ລ້ານໂດລາ | 8,455.6 | 9,672.2 | 11,258.1 | 11,639.6 | 11,951.0 | 44,520.9 | 8,933 | 52,976.4 | | |
| | - ຂາອອກ | ລ້ານໂດລາ | 4,236.2 | 4,879.8 | 5,410.2 | 5,864.1 | 6,039.0 | 22,193.1 | 3,933 | 26,429.3 | | |
| | ອັດຕາຂະຫຍາຍຕົວ | | | 15.2 | 10.9 | 8.4 | 3.0 | 9.4 | | 9.4 | | |
| | - ຂາເຂົ້າ | ລ້ານໂດລາ | 4,219.3 | 4,792.4 | 5,848.0 | 5,775.5 | 5,912.0 | 22,327.8 | 5,000 | 26,547.1 | | |
| | - ດຸນການຄ້າ | ລ້ານໂດລາ | 16.9 | 87.4 | (437.8) | 88.7 | 127.0 | (134.8) | (1,067) | (118) | | |
| | ມູນຄ່າການສົ່ງອອກຂະຫຍາຍຕົວສະເລ່ຍ | % | | | | | | | | | 15.0 | |
| | ມູນຄ່າການຄ້າຂາອອກ-ຂາເຂົ້າ/GDP | % | | | | | | | | | 70.0 | |
| 16 | ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ | ຕື້ກີບ | 8,585.0 | 8,942.0 | 10,277.6 | 12,144.6 | 12,779.0 | 44,143.2 | | 52,728.2 | | |
| | ອັດຕາຂະຫຍາຍຕົວ | % | | | | | | | | 9.2 | | |
| 17 | ມູນຄ່າຈໍລະຈອນສິນຄ້າ (ຂາຍຍົກ-ຂາຍຍ່ອຍ ແລະ ບໍລິການ) | ຕື້ກີບ | 44,908.0 | 51,688.0 | 57,613.0 | 65,596.7 | 65,347.3 | 240,245.0 | | 285,153.0 | | |

| ລ/ດ | | ຫົວໜ່ວຍ | ປະຕິບັດປີ 2016 | ປະຕິບັດປີ 2017 | ປະຕິບັດປີ 2018 | ປະຕິບັດປີ 2019 | ຄາດຄະເນປີ 2020 | 4ປີ | ຄາດໝາຍ ດັດແກ້ 4 ປີ (2017-2020) | ປະຕິບັດ 5 ປີ | ຄາດໝາຍ ມະຕິ 09 (2016-2020) | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| **1** | **2** | **3** | **4** | **5** | **6** | **7** | **8** | **9=5+6+7+8** | **10** | **11=4+5+6+7+8** | **12** | **13** |
| | ອັດຕາຂະຫຍາຍຕົວ | % | | 15.1 | 11.5 | 13.9 | (0.4) | 10.0 | | 10.2 | | |
| **ຂ** | **ຄາດໝາຍດ້ານວັດທະນາທຳ-ສັງຄົມ** | | | | | | | | | | | |
| 18 | ຈຳນວນນັກທ່ອງທ່ຽວ | ເທື່ອຄົນ | 4,239,047.0 | 3,868,838.0 | 4,186,432.0 | 4,791.065 | 886,447.0 | 2,236,627.0 | 6,000,000 | 2,637,111 | | |
| 19 | ສ້າງລາຍຮັບຈາກການທ່ອງທ່ຽວ | ລ້ານໂດລາສະຫະລັດ | 724.19 | 648.06 | 811.01 | 934.71 | 248.9 | 660.7 | 953 | 673 | | |
| 20 | ອັດຕາຄວາມທຸກຍາກໃຫ້ຫຼຸດລົງ | % | | | | 18.3 | 17.0 | | 10 | | 10.0 | |
| 21 | ອັດຕາການລອດເຫຼືອຂອງນັກຮຽນຊັ້ນປະຖົມ | % | 79.6 | 81.1 | 84.0 | 82.0 | 82.1 | | 90 | | | |
| 22 | ຫຼຸດຜ່ອນອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ | % | 4.7 | 4.4 | 4.1 | 4.3 | 4.3 | | 2 | | | |
| 23 | ອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕົ້ນ | % | 82.2 | 82.9 | 83.1 | 82.8 | 83.3 | | 85 | | | |
| 24 | ອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມປາຍ | % | 47.8 | 51.4 | 53.3 | 54.8 | 54.8 | | 60 | | | |
| 25 | ຫຼຸດຜ່ອນອັດຕາການປະລະການຮຽນຊັ້ນມັດທະຍົມຕົ້ນ | % | 8.1 | 8.3 | 9.2 | 9.5 | 10.3 | | 2 | | | |
| 26 | ຫຼຸດຜ່ອນອັດຕາການປະລະການຮຽນຊັ້ນມັດທະຍົມປາຍ | % | 5.4 | 5.8 | 7.1 | 8.0 | 8.8 | | | | | . |
| | ອັດຕາການຮູ້ໜັງສືຂອງປະຊາຊົນ ອາຍຸ 15 ປີ ຂຶ້ນໄປ | % | | | | | | | | | 95.0 | |
| 27 | ອັດຕາການຮູ້ໜັງສືຂອງປະຊາຊົນ ອາຍຸ 15-45 ປີ | % | | | | | | | 95 | | | |
| 28 | ອັດຕາການຮູ້ໜັງສືຂອງປະຊາຊົນໃນກຸ່ມອາຍຸ 15-24 ປີ | % | | | | | | | 99 | | | |
| 29 | ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ | % | 24.2 | 21.1 | 21.5 | 20.8 | 20.3 | | 20 | | 20.0 | |
| 30 | ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ລວງສູງບໍ່ໄດ້ມາດຕະຖານ | % | 35.6 | 33.0 | 33.5 | 32.7 | 32.3 | | 32 | | 32.0 | |
| 31 | ອັດຕາສ່ວນການຕາຍຂອງເດັກນ້ອຍລຸ່ມ 1 ປີ ໃຫ້ຫຼຸດລົງ | ຕໍ່ 1000 ຂອງເດັກເກີດມີຊີວິດ | | 40.0 | | 14.4 | 12.0 | | 30 | | | |
| 32 | ອັດຕາການຕາຍຂອງເດັກລຸ່ມ 5 ປີ ໃຫ້ຫຼຸດລົງ | ຕໍ່ 1000 ຂອງເດັກເກີດມີຊີວິດ | | 46.0 | | 16.6 | 13.5 | | 40 | | | ປີ 2020 ແມ່ນຕົວເລກຄາດຄະເນ 9 ເດືອນ |
| 33 | ອັດຕາສ່ວນການຕາຍຂອງແມ່ໃຫ້ຫຼຸດລົງ | ຕໍ່ 100,000 ຂອງເດັກເກີດມີຊີວິດ | | | | 68.4 | 66.4 | | 160 | | 160.0 | |
| 34 | ອັດຕາການຊົມໃຊ້ນ້ຳຂອງປະຊາຊົນ | % | | 83.9 | | 85.9 | 88.5 | | 90 | | 90.0 | |
| 35 | ປະກັນສັງຄົມ ແລະ ປະກັນສຸຂະພາບ | % | | 71.0 | | 80.0 | 94.0 | | 80 | | 80.0 | |
| 36 | ການສະໜອງແຮງງານເຂົ້າສູ່ຕະຫຼາດແຮງງານ | ຄົນ | | | | | | 559,553.0 | 716,190 | | | |
| 37 | ການຄຸ້ມຄອງ ແລະ ການພັດທະນາສີມືແຮງງານ ເພື່ອຕອບສະໜອງທັງພາຍໃນ ແລະ ຕປທ | ຄົນ | | | | | | 419,264.0 | 658,000 | | | |

| ລ/ດ | | ຫົວໜ່ວຍ | ປະຕິບັດປີ 2016 | ປະຕິບັດປີ 2017 | ປະຕິບັດປີ 2018 | ປະຕິບັດປີ 2019 | ຄາດຄະເນປີ 2020 | 4ປີ | ຄາດໝາຍ ດັດແກ້ 4 ປີ (2017-2020) | ປະຕິບັດ 5 ປີ | ຄາດໝາຍ ມະຕິ 09 (2016-2020) | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 | 9=5+6+7+8 | 10 | 11=4+5+6+7+8 | 12 | 13 |
| 38 | ປະຕິບັດນະໂຍບາຍໃຫ້ຜູ້ທີ່ມີຜົນງານຄຸນງາມຄວາມດີ | ທ່ານ | 3,026.0 | 3,311.0 | 3,452.0 | 2,921.0 | 4,775.0 | 14,459.0 | 32,204 | 17,491 | | |
| 39 | ກວດກູ້ພື້ນທີ່ອັນຕະລາຍລະເບີດບໍ່ທັນແຕກ | ຮຕ | 3,255.0 | 4,312.0 | 5,689.0 | 5,116.0 | 10,000.0 | 25,117.0 | 16,000 | | | |
| 40 | ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກ | ຄົນ | 44.0 | 281.0 | 270.0 | 78.0 | 650.0 | 1,279.0 | 1,500 | | | |
| 41 | ຄອບຄົວວັດທະນະທຳ | % ຂອງຄອບຄົວທົ່ວປະເທດ | | | | | | | 80 | | | |
| **ຄ** | **ຕົວຊີ້ວັດດ້ານສິ່ງແວດລ້ອມ** | | | | | | | | | | | |
| 42 | ຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ | ຕອນ | 78,729 | 117,772 | 132,286 | 153,020 | 107,455 | | 400,000 | 589,262 | 400,000 | |
| 43 | ຈັດສັນ, ກຳນົດເຂດ, ຟື້ນຟູ ແລະ ຂະຫຍາຍເນື້ອທີ່ປ່າໄມ້ | % | | | 58.0 | | | | 70 | | 70.0 | |
| 44 | ປັບປຸງສະຖານນີເຕືອນແຜ່ນດິນໄຫວ | ແຫ່ງ | 2 | 2 | 2 | 2 | 2 | | 2 | | | |
| 45 | ສ້າງສະຖານນີເຕືອນແຜ່ນດິນໄຫວໃໝ່ | ແຫ່ງ | 0 | 0 | 10 | 11 | 13 | | 5 | | | |
| 46 | ສ້າງຈຸດຕິດຕາມກວດກາຄຸນນະພາບນ້ຳ | ຈຸດ | 0 | 0 | 52 | 60 | 200 | | 200 | | | |
| 47 | ກວດກາ ແລະ ຄຸ້ມຄອງມົນລະພິດໃນອ່າງຮັບນ້ຳ | ອ່າງ | | | | | | | 10 | | | |
| 48 | ສ້າງແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານຢູ່ຂັ້ນເມືອງ ແລະ ແຂວງ | % | | | | | | | 50 | | | |
| 49 | ທົດລອງສ້າງຕົວແບບອຸທະຍານທາງທຳມະຊາດ | ແຫ່ງ | | | 2 | | | | 2 | | | |
| **ງ** | **ຄາດໝາຍຫຼຸດພົ້ນ LDC** | | | | | | | | | | | |
| 50 | ລວມຍອດລາຍໄດ້ແຫ່ງຊາດສະເລ່ຍຕໍ່ຫົວຄົນ (GNI) | ໂດລາ/ຄົນ | | | 1,996 | | | | | | 1,230 | |
| 51 | ດັດຊະນີດ້ານຊັບສິນມະນຸດ (HAI) | | | | 72.80 | | | | | | 66 | |
| 52 | ດັດຊະນີຄວາມບອບບາງທາງດ້ານເສດຖະກິດ (EVI) | | | | 33.70 | | | | | | < 32 | |

# ຂອບຕິດຕາມ-ປະເມີນສຳລັບ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

| GG | SDG | ລ/ດ | ຕົວຊີ້ບອກ | ຫົວໜ່ວຍ | ລະດັບວັດແທກ | ແບ່ງຕາມ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ຄາດໝາຍ 2025 | ຄວາມຖີ່ໃນການເກັບກຳຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ໝາຍເຫດ | SDG Tier |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | **ເປົ້າໝາຍທີ 1: ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ** | | | | | | | | | | | | | |
| | | **1** | GNI ຕໍ່ຫົວຄົນ | ໂດລາສະຫະລັດ | ເປົ້າໝາຍ | ລະດັບຊາດ | 1,996 | 2018 | ຂໍ້ມູນຈາກການລາຍງານ | 1,222 | 3ປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ/CDP | LDC | |
| | | **2** | EVI | % | ເປົ້າໝາຍ | ລະດັບຊາດ | 33.7 | 2018 | ຂໍ້ມູນຈາກການລາຍງານ | 32 | 3ປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ/CDP | LDC | |
| 1 | 1 | **3** | GDP ຕໍ່ຫົວຄົນຕໍ່ປີ | ໂດລາສະຫະລັດ | ເປົ້າໝາຍ | ລະດັບຊາດ | 2,664 | 2020 | ຂໍ້ມູນຈາກການລາຍງານ | 2,880 | ປະຈຳປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ | SDG 8.1.1 | I |
| | | **ແຜນວຽກຈຸດສຸມທີ 1: ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ** | | | | | | | | | | | | | |
| 2 | | 4 | ມູນຄ່າລວມຍອດຜະລິດຕະພັນພາຍໃນ (GDP) (ຕົວເລກສະສົມ 5 ປີ) | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | 759,546 | 2020 | ຂໍ້ມູນຈາກການລາຍງານ | 1,056,692 | ປະຈຳປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ | 9th NSEDP | |
| | | | ອັດຕາການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ (GDP) | % | ແຜນວຽກຈຸດສຸມ | ລະດັບຊາດ | 5.80 | 2020 | ຂໍ້ມູນຈາກການລາຍງານ | 4.82 | ປະຈຳປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ | 9th NSEDP | |
| | | 5 | ຂະຫຍາຍຕົວຂອງຂະແໜງກະສິກຳ | % | ແຜນວຽກຈຸດສຸມ | ລະດັບຊາດ | 2.10 | 2020 | ຂໍ້ມູນຈາກການລາຍງານ | 2.5 | ປະຈຳປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ | 9th NSEDP | |
| | | | ສັດສ່ວນຂະແໜງກະສິກຳໃນ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 16.60 | 2020 | ຂໍ້ມູນຈາກການລາຍງານ | 15.3 | ປະຈຳປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ | 9th NSEDP | |
| | | 6 | ຂະຫຍາຍຕົວຂອງຂະແໜງອຸດສາຫະກຳ | % | ແຜນວຽກຈຸດສຸມ | ລະດັບຊາດ | 9.06 | 2020 | ຂໍ້ມູນຈາກການລາຍງານ | 4.1 | ປະຈຳປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ | 9th NSEDP | |
| | | | ສັດສ່ວນຂະແໜງອຸດສາຫະກຳໃນ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 33.00 | 2020 | ຂໍ້ມູນຈາກການລາຍງານ | 32.3 | ປະຈຳປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ | 9th NSEDP | |
| | | 7 | ຂະຫຍາຍຕົວຂອງຂະແໜງບໍລິການ | % | ແຜນວຽກຈຸດສຸມ | ລະດັບຊາດ | 4.82 | 2020 | ຂໍ້ມູນຈາກການລາຍງານ | 6 | ປະຈຳປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ | 9th NSEDP | |
| | | | ສັດສ່ວນຂະແໜງບໍລິການໃນ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 39.50 | 2020 | ຂໍ້ມູນຈາກການລາຍງານ | 41.3 | ປະຈຳປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ | 9th NSEDP | |
| | | 8 | ການຜະລິດເຂົ້າເປືອກລວມສະເລ່ຍຕໍ່ປີ | ລ້ານໂຕນ | ແຜນວຽກຈຸດສຸມ | ລະດັບຊາດ | 3.5 | 2020 | ຂໍ້ມູນຈາກການລາຍງານ | 3.5 - 4 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 9th NSEDP | |
| | | 9 | ການຂະຫຍາຍຝູງສັດ ຕໍ່ປີ | % | ແຜນວຽກຈຸດສຸມ | ລະດັບຊາດ | 5 | 2020 | ຂໍ້ມູນຈາກການລາຍງານ | 3-4 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 9th NSEDP | |
| | | 10 | ການລ້ຽງປາ ແລະ ສັດນ້ຳ ຕໍ່ປີ | % | ແຜນວຽກຈຸດສຸມ | ລະດັບຊາດ | | 2020 | ຂໍ້ມູນຈາກການລາຍງານ | 3-4 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 9th NSEDP | |
| | | 11 | ການປູກພືດເປັນສິນຄ້າ: | | | | | | | | | | | | |
| | | | ກາເຟ | ໂຕນ | ແຜນວຽກຈຸດສຸມ | ລະດັບຊາດ | 158,190 | 2020 | ຂໍ້ມູນຈາກການລາຍງານ | 175,500 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 9th NSEDP | |
| | | | ສາລີອາຫານສັດ | ໂຕນ | ແຜນວຽກຈຸດສຸມ | ລະດັບຊາດ | 518,126 | 2020 | ຂໍ້ມູນຈາກການລາຍງານ | 636,900 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 9th NSEDP | |
| | | | ມັນຕົ້ນ | ລ້ານໂຕນ | ແຜນວຽກຈຸດສຸມ | ລະດັບຊາດ | 4.63 | 2020 | ຂໍ້ມູນຈາກການລາຍງານ | 3.6 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 9th NSEDP | |
| | | | ອ້ອຍ | ລ້ານໂຕນ | ແຜນວຽກຈຸດສຸມ | ລະດັບຊາດ | 1.19 | 2020 | ຂໍ້ມູນຈາກການລາຍງານ | 1.6 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 9th NSEDP | |
| | | | ກ້ວຍ | ໂຕນ | ແຜນວຽກຈຸດສຸມ | ລະດັບຊາດ | 728,110 | 2020 | ຂໍ້ມູນຈາກການລາຍງານ | 735,500 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 9th NSEDP | |
| | | 12 | ມູນຄ່າການສົ່ງອອກສິນຄ້າ (ຕົວເລກສະສົມ 5 ປີ) | ລ້ານໂດລາສະຫະລັດ | ແຜນວຽກຈຸດສຸມ | ລະດັບຊາດ | 26,558 | 2020 | ຂໍ້ມູນຈາກການລາຍງານ | 38,043.52 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງອຸດສາຫະກຳ ແລະ ການຄ້າ | 9th NSEDP | |
| | | | ຂະຫຍາຍຕົວສະເລ່ຍຕໍ່ປີ | % | ແຜນວຽກຈຸດສຸມ | ລະດັບຊາດ | 8.25 | 2020 | ຂໍ້ມູນຈາກການລາຍງານ | 8-10 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງອຸດສາຫະກຳ ແລະ ການຄ້າ | 9th NSEDP | |
| | | 13 | ມູນຄ່າການນຳເຂົ້າສິນຄ້າ (ຕົວເລກສະສົມ 5 ປີ) | ລ້ານໂດລາສະຫະລັດ | ແຜນວຽກຈຸດສຸມ | ລະດັບຊາດ | 25,698 | 2020 | ຂໍ້ມູນຈາກການລາຍງານ | 32,927.35 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງອຸດສາຫະກຳ ແລະ ການຄ້າ | 9th NSEDP | |
| | | | ຂະຫຍາຍຕົວສະເລ່ຍຕໍ່ປີ | % | ແຜນວຽກຈຸດສຸມ | ລະດັບຊາດ | 8.90 | 2020 | ຂໍ້ມູນຈາກການລາຍງານ | < 9 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງອຸດສາຫະກຳ ແລະ ການຄ້າ | 9th NSEDP | |
| | | 14 | ການສົ່ງອອກຜະລິດຕະພັນກະສິກຳຕໍ່ປີ | ລ້ານໂດລາສະຫະລັດ | ແຜນວຽກຈຸດສຸມ | ລະດັບຊາດ | 852 | 2020 | ຂໍ້ມູນຈາກການລາຍງານ | 1,200 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 9th NSEDP | |
| | | 15 | ການຂະຫຍາຍຕົວຂອງການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳຕໍ່ປີ | % | ແຜນວຽກຈຸດສຸມ | ລະດັບຊາດ | 9.10 | 2020 | ຂໍ້ມູນຈາກການລາຍງານ | 8-10 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງອຸດສາຫະກຳ ແລະ ການຄ້າ | 9th NSEDP | |
| | | 16 | ການຜະລິດກະແສໄຟຟ້າ (ຕົວເລກສະສົມ 5 ປີ) | ລ້ານ kWh | ແຜນວຽກຈຸດສຸມ | ລະດັບຊາດ | 161,923 | 2020 | ຂໍ້ມູນຈາກການລາຍງານ | 276,096 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງພະລັງງານ ແລະ ບໍ່ແຮ່ | 9th NSEDP | |
| | | | ມູນຄ່າການຜະລິດກະແສໄຟຟ້າ (ຕົວເລກສະສົມ 5 ປີ) | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | 78,271 | 2020 | ຂໍ້ມູນຈາກການລາຍງານ | 140,879 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງພະລັງງານ ແລະ ບໍ່ແຮ່ | 9th NSEDP | |

| | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|
| | | ສິ່ງອອກໄຟຟ້າ (ຕົວເລກສະສົມ) | ເມກາວັດ | ແຜນວຽກຈຸດສຸມ | ລະດັບຊາດ | 6,500 | 2020 | ຂໍ້ມູນຈາກການລາຍງານ | 5,000 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງພະລັງງານ ແລະ ບໍ່ແຮ່ | 9th NSEDP | |
| | 17 | ມູນຄ່າການຜະລິດແຮ່ທາດ (ຕົວເລກສະສົມ 5 ປີ) | ລ້ານໂດລາສະຫະລັດ | ແຜນວຽກຈຸດສຸມ | ລະດັບຊາດ | 7,526.5 | 2020 | ຂໍ້ມູນຈາກການລາຍງານ | 7,832.10 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງພະລັງງານ ແລະ ບໍ່ແຮ່ | 9th NSEDP | |
| | | ມູນຄ່າຈຳໜ່າຍແຮ່ທາດ (ຕົວເລກສະສົມ 5 ປີ) | ລ້ານໂດລາສະຫະລັດ | ແຜນວຽກຈຸດສຸມ | ລະດັບຊາດ | 8,092.3 | 2020 | ຂໍ້ມູນຈາກການລາຍງານ | 8,336.40 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງພະລັງງານ ແລະ ບໍ່ແຮ່ | 9th NSEDP | |
| | 18 | ສຳຫຼວດສ້າງຂໍ້ມູນພື້ນຖານທໍລະນີສາດ ແລະ ແຮ່ທາດ ມາດຕາສ່ວນ 1/200.000 | % | ແຜນວຽກຈຸດສຸມ | ລະດັບຊາດ | 68.40 | 2020 | ຂໍ້ມູນຈາກການລາຍງານ | 31.5 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງພະລັງງານ ແລະ ບໍ່ແຮ່ | 9th NSEDP | |
| | 19 | ມູນຄ່າຈໍລະຈອນສິນຄ້າ (ຂາຍຍົກ-ຂາຍຍ່ອຍ ແລະ ບໍລິການ, ສ້ອມແປງລົດຍົນ ແລະ ລົດຈັກ) ຂະຫຍາຍຕົວສະເລ່ຍຕໍ່ປີ | % | ແຜນວຽກຈຸດສຸມ | ລະດັບຊາດ | 8.87 | 2020 | ຂໍ້ມູນຈາກການລາຍງານ | 8-10 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງອຸດສາຫະກຳ ແລະ ການຄ້າ | 9th NSEDP | |
| | 20 | ລາຍຮັບຈາກຂະແໜງທ່ອງທ່ຽວ | ລ້ານໂດລາສະຫະລັດ | ແຜນວຽກຈຸດສຸມ | ລະດັບຊາດ | 231 | 2020 | ຂໍ້ມູນຈາກການລາຍງານ | 3,813 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | 9th NSEDP | |
| | | ຈຳນວນນັກທ່ອງທ່ຽວ (ຕົວເລກສະສົມ 5 ປີ) | ລ້ານເທື່ອຄົນ | ແຜນວຽກຈຸດສຸມ | ລະດັບຊາດ | 17.94 | 2020 | ຂໍ້ມູນຈາກການລາຍງານ | 15 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | 9th NSEDP | |
| | 21 | ສຳຫຼວດ, ຈັດສັນກຳນົດຂອບເຂດ, ປັກຫຼັກໝາຍ ແລະ ອອກໃບຢັ້ງຢືນຂອບເຂດແຫຼ່ງທ່ອງທ່ຽວ | ແຫ່ງ | ແຜນວຽກຈຸດສຸມ | ລະດັບຊາດ | 3 | 2020 | ຂໍ້ມູນຈາກການລາຍງານ | 30 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | 9th NSEDP | |
| | | **ແຜນວຽກຈຸດສຸມທີ 2: ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ** | | | | | | | | | | | | |
| | 22 | ລາຍຮັບງົບປະມານທັງໝົດ | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | 120,672 | 2020 | ຂໍ້ມູນຈາກການລາຍງານ | 179,500 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| 2 | | ອັດຕາສ່ວນຂອງລາຍຮັບງົບປະມານທັງໝົດ ຕໍ່ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 15.89 | 2020 | ຂໍ້ມູນຈາກການລາຍງານ | 17 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP<br>SDG 17.1.1 | I |
| 3 | 23 | ລາຍຮັບຈາກພາສີ-ອາກອນ | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | 83,928 | 2020 | ຂໍ້ມູນຈາກການລາຍງານ | 144,776 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP<br>SDG 17.1.2 | I |
| | | ອັດຕາສ່ວນລາຍຮັບຈາກພາສີ-ອາກອນຕໍ່ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 11.05 | 2020 | ຂໍ້ມູນຈາກການລາຍງານ | 14 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | 24 | ລາຍຮັບທີ່ບໍ່ແມ່ນພາສີ-ອາກອນ | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | 24,090 | 2020 | ຂໍ້ມູນຈາກການລາຍງານ | 21,977 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | | ລາຍຮັບທີ່ບໍ່ແມ່ນພາສີ-ອາກອນຕໍ່ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 3.17 | 2020 | ຂໍ້ມູນຈາກການລາຍງານ | 2 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | 25 | ລາຍຮັບຈາກການຊ່ວຍເຫຼືອລ້າ | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | 12,393 | 2020 | ຂໍ້ມູນຈາກການລາຍງານ | 12,410 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | | ລາຍຮັບຈາກການຊ່ວຍເຫຼືອລ້າຕໍ່ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 14.22 | 2020 | ຂໍ້ມູນຈາກການລາຍງານ | 1 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | 26 | ລາຍຈ່າຍງົບປະມານທັງໝົດ | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | 150,633 | 2020 | ຂໍ້ມູນຈາກການລາຍງານ | 190,000 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | | ອັດຕາສ່ວນລາຍຈ່າຍງົບປະມານທັງໝົດຕໍ່ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 19.83 | 2020 | ຂໍ້ມູນຈາກການລາຍງານ | 18.0 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | 27 | ລາຍຈ່າຍບໍລິຫານປົກກະຕິ | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | 93,905 | 2020 | ຂໍ້ມູນຈາກການລາຍງານ | 130,500 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | | ອັດຕາສ່ວນລາຍຈ່າຍບໍລິຫານປົກກະຕິຕໍ່ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 12.36 | 2020 | ຂໍ້ມູນຈາກການລາຍງານ | 12.3 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | 28 | ລາຍຈ່າຍການລົງທຶນທັງໝົດ | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | 56,727 | 2020 | ຂໍ້ມູນຈາກການລາຍງານ | 59,500 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | | ອັດຕາສ່ວນລາຍຈ່າຍການລົງທຶນທັງໝົດຕໍ່ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 7.47 | 2020 | ຂໍ້ມູນຈາກການລາຍງານ | 5.6 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | 29 | ຂາດດຸນງົບປະມານທັງໝົດ | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | - 29,960 | 2020 | ຂໍ້ມູນຈາກການລາຍງານ | - 10,500 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | | ຂາດດຸນງົບປະມານທັງໝົດ ຕໍ່ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | -3.49 | 2020 | ຂໍ້ມູນຈາກການລາຍງານ | -1 ຫຼື ≤ 2 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | 30 | ຄັງສະສົມແຫ່ງລັດ | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | 1,150 | 2020 | ຂໍ້ມູນຈາກການລາຍງານ | 1,500 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9th NSEDP | |
| | 31 | ອັດຕາເງິນເຟີ້ ( ທຽບປີຕໍ່ປີ ) | % | ແຜນວຽກຈຸດສຸມ | ລະດັບຊາດ | 3.19 | 2020 | ຂໍ້ມູນຈາກການລາຍງານ | ≤ 6 | ປະຈຳປີ | ຂໍ້ມູນຈາກການລາຍງານ | ທະນາຄານແຫ່ງ ສປປ ລາວ | 9th NSEDP | |
| | | ປະລິມານເງິນ M2 | % | ແຜນວຽກຈຸດສຸມ | ລະດັບຊາດ | 13.48 | 2020 | ຂໍ້ມູນຈາກການລາຍງານ | ≤ 20 | ປະຈຳປີ | ຂໍ້ມູນຈາກການລາຍງານ | ທະນາຄານແຫ່ງ ສປປ ລາວ | 9ະh NSEDP | |
| 4 | 32 | ອັດຕາແລກປ່ຽນແຕ່ລະປີທຽບໃສ່ເງິນໂດລາສະຫະລັດ ( ທຽບປີຕໍ່ປີ ) | % | ແຜນວຽກຈຸດສຸມ | ລະດັບຊາດ | -6.26 | 2020 | ຂໍ້ມູນຈາກການລາຍງານ | ±5 | ປະຈຳປີ | ຂໍ້ມູນຈາກການລາຍງານ | ທະນາຄານແຫ່ງ ສປປ ລາວ | 9th NSEDP<br>SDG 17.13.1 | I |
| 5 | 33 | ຄັງສຳຮອງເງິນຕາຕ່າງປະເທດ ( ໃນແຕ່ລະປີບໍ່ຫຼຸດ ) | ເດືອນ | ແຜນວຽກຈຸດສຸມ | ລະດັບຊາດ | 4.81 | 2020 | ຂໍ້ມູນຈາກການລາຍງານ | 3 | ປະຈຳປີ | ຂໍ້ມູນຈາກການລາຍງານ | ທະນາຄານແຫ່ງ ສປປ ລາວ | 9th NSEDP<br>SDG 17.13.1 | I |
| | | ອັດຕາສ່ວນຍອດເຫຼືອເງິນຝາກຂອງທະນາຄານທຸລະກິດ ຕໍ່ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 64.43 | 2020 | ຂໍ້ມູນຈາກການລາຍງານ | 60 | ປະຈຳປີ | ຂໍ້ມູນຈາກການລາຍງານ | ທະນາຄານແຫ່ງ ສປປ ລາວ | 8th NSEDP | |
| | 34 | ອັດຕາສ່ວນຍອດເຫຼືອສິນເຊື່ອຂອງຂະແໜງການທະນາຄານຕໍ່ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 48.76 | 2020 | ຂໍ້ມູນຈາກການລາຍງານ | 49 | ປະຈຳປີ | ຂໍ້ມູນຈາກການລາຍງານ | ທະນາຄານແຫ່ງ ສປປ ລາວ | 9th NSEDP | |
| | 35 | ຍອດລະດົມທຶນຜ່ານຕະຫຼາດທຶນ ຕໍ່ GDP ( ຍອດສະສົມ ) | % | ແຜນວຽກຈຸດສຸມ | ລະດັບຊາດ | | 2020 | ຂໍ້ມູນຈາກການລາຍງານ | 15-18 | ປະຈຳປີ | ຂໍ້ມູນຈາກການລາຍງານ | ທະນາຄານແຫ່ງ ສປປ ລາວ | 9th NSEDP | |
| | 36 | ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນທົ່ວລະບົບທະນາຄານ (NPL) ຕໍ່ຍອດສິນເຊື່ອທັງໝົດ ໃນແຕ່ລະປີ | % | ແຜນວຽກຈຸດສຸມ | ລະດັບຊາດ | 3.08 | 2020 | ຂໍ້ມູນຈາກການລາຍງານ | ≤ 3 | ປະຈຳປີ | ຂໍ້ມູນຈາກການລາຍງານ | ທະນາຄານແຫ່ງ ສປປ ລາວ | 9th NSEDP | |
| | | **ແຜນວຽກຈຸດສຸມທີ 3: ຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນນະພາບ ແລະ ປະສິດທິຜົນສູງ** | | | | | | | | | | | | |

| | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | 37 | ມູນຄ່າແຫຼ່ງທຶນເພື່ອການພັດທະນາ | ຕື້ກີບ | ແຜນວຽກຈຸດສຸມ | ລະດັບຊາດ | 213,874.16 | 2020 | ຂໍ້ມູນຈາກການລາຍງານ | 204,599 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ | 9th NSEDP | |
| | | | ອັດຕາສ່ວນມູນຄ່າແຫຼ່ງທຶນເພື່ອການພັດທະນາຕໍ່ GDP | % | ແຜນວຽກຈຸດສຸມ | ລະດັບຊາດ | 28.16 | 2020 | ຂໍ້ມູນຈາກການລາຍງານ | 19.4 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ | 9th NSEDP | |
| | | 38 | ອັດຕາສ່ວນການລົງທຶນຈາກງົບປະມານພາຍໃນຕໍ່ການລົງທຶນທັງໝົດ | % | ແຜນວຽກຈຸດສຸມ | ລະດັບຊາດ | 9.54 | 2020 | ຂໍ້ມູນຈາກການລາຍງານ | 11 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ | 9th NSEDP | |
| | | 39 | ອັດຕາສ່ວນການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ຕໍ່ການລົງທຶນທັງໝົດ | % | ແຜນວຽກຈຸດສຸມ | ລະດັບຊາດ | 16.82 | 2020 | ຂໍ້ມູນຈາກການລາຍງານ | 18 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ | 9th NSEDP | |
| | | 40 | ອັດຕາສ່ວນການລົງທຶນຂອງພາກເອກະຊົນ ຕໍ່ການລົງທຶນທັງໝົດ | % | ແຜນວຽກຈຸດສຸມ | ລະດັບຊາດ | 51.32 | 2020 | ຂໍ້ມູນຈາກການລາຍງານ | 49 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ | 9th NSEDP | |
| | | 41 | ອັດຕາສ່ວນການລົງທຶນອື່ນໆຕໍ່ການລົງທຶນທັງໝົດ | % | ແຜນວຽກຈຸດສຸມ | ລະດັບຊາດ | 22.32 | 2020 | ຂໍ້ມູນຈາກການລາຍງານ | 22 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ | 9th NSEDP | |
| | | **ແຜນວຽກຈຸດສຸມທີ 4: ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໄປສູ່ຄຸນນະພາບໃໝ່ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ** | | | | | | | | | | | | | |
